# ປະຫວັດຄຣິສຕະຈັກ

## ບົດທີ 1

## ການເລີ້ມຕົ້ນຄຣິສຈັກ
## ແລະການຂະຫຍາຍຕົວສູ່ຄົນຕ່າງຊາດ

ຄ.ສ.30-70

### I. ຄວາມສຳຄັນ

ປະວັດສາດຂອງຄຣິສສາສນາມີຄວາມສຳຄັນຢ່າງຍິ່ງ ເພາະວ່າພຣະເຈົ້າໄດ້ຊົງເປີດເຜີຍນ້ຳພຣະທັຍແລະພຣະປະສົງຂອງພຣະອົງໂດຍຜ່ານທາງປະວັດສາດ ໃນພຣະຄຣິສທັມຄັມພີເດີມພຣະເຈົ້າໄດ້ຊົງເປີດເຜີຍພຣະອົງຕັ້ງແຕ່ເລີ້ມຊົງສ້າງໂລກ ພຣະອົງຊົງເອີ້ນອັບຣາຮາມແລະເຊື້ອສາຍຂອງອັບຣາຮາມໃຫ້ເປັນຕົ້ນຕະກຸນຂອງປະຊາຊາດອິສຣາເອລ ໃຫ້ເປັນຊົນຊາດທີ່ນຳພຣະພອນແຫ່ງຄວາມຣອດພົ້ນມາສູ່ມວລມະນຸດ ເຫດການນີ້ຈະສຳເຣັດໄດ້ຈຳເປັນຕ້ອງອາສັຍເວລາອັນຍາວນານຕລອດປະວັດສາດຂອງຊົນຊາດອິສຣາເອລທີ່ພຣະເຈົ້າໃຊ້ ເພື່ອເປີດເຜີຍແຜນການການຊ່ວຍໃຫ້ຣອດພົ້ນຂອງພຣະເຈົ້າໃຫ້ມະນຸດໄດ້ເຂົ້າໃຈ ແລະຍອມຮັບເອົາ

ດັ່ງນັ້ນພຣະຣາຊກິດອັນຊົງອານຸພາບຂອງພຣະເຈົ້າໄດ້ຊົງປາກົດຕລອດມາໃນທຸກຍຸກທຸກສມັຍຈົນກາຍເປັນປະວັດສາດທີ່ມະນຸດສາມາດຍ້ອນກັບໄປເບິ່ງເຫດການເຫຼົ່ານັ້ນທີ່ໄດ້ເກີດຂື້ນແລ້ວ ເຮັດໃຫ້ມະນຸດເຂົ້າໃຈພຣະເຈົ້າແລະເຂົ້າໃຈແຜນການຂອງພຣະເຈົ້າທີ່ປະສົງຊ່ວຍມະນຸດໃຫ້ຣອດພົ້ນໄດ້ຫລາຍຍິ່ງຂື້ນ

ຕລອດປະວັດສາດທີ່ຜ່ານມາ ພຣະເຈົ້າໄດ້ສຳແດງຄວາມຮັກອັນໝັ້ນຄົງຂອງພຣະອົງທີ່ມີຕໍ່ມະນຸດແລະໄດ້ພຍາຍາມທຸກວິທີທາງທີ່ຈະນຳມະນຸດຫັນຈາກຄວາມບາບກັບຄືນມາຫາພຣະເຈົ້າ ແຜນການອັນຍິ່ງໃຫຍ່ນີ້ໄດ້ພົບຄວາມສຳເຣັດ ເມື່ອພຣະເຢຊູຄຣິສພຣະບຸດຂອງພຣະເຈົ້າໄດ້ສະເດັດລົງມາບັງເກີດເປັນມະນຸດແລະມີສະພາບຄືກັນກັບມະນຸດ ໃນເວລາດຽວກັນນັ້ນກໍເປັນພຣະບຸດຂອງພຣະເຈົ້າ ພຣະເຢຊູຄຣິສໄດ້ຊົງຮັບຄວາມຜິດບາບຂອງມະນຸດໂດຍການຕາຍໄຖ່ບາບມະນຸດເທິງໄມ້ກາງແຂນ ເພື່ອທຸກຄົນທີ່ຍອມຮັບເອົາການໄຖ່ໂທດບາບນີ້ຈະໄດ້ຮັບຄວາມພົ້ນ ພຣະຣາຊກິດອັນຍິ່ງໃຫຍ່ນີ້ຍັງຄົງດຳເນີນຕໍ່ໄປໂດຍພຣະວິນຍານບໍຣິສຸດແລະໂດຍບຸກຄົນຕ່າງ ໆ ທີ່ພຣະເຈົ້າຊົງເອີ້ນໃຫ້ເຂົ້າຮ່ວມເປັນຄຣິສຈັກ ອັນເປັນພຣະກາຍຂອງພຣະຄຣິສ ໃຫ້ຄຣິສຕຽນທັງຫລາຍເປັນຊົນຊາດອິສຣາເອລໃໝ່ ເປັນຜູ້ຮັບໃຊ້ທີ່ຈະນຳເອົາຂ່າວປະເສີດແຫ່ງຄວາມຣອດພົ້ນອັນແທ້ຈິງໄປສູ່ມວລມະນຸດທັງຫລາຍຈົນເຖິງທີ່ສຸດປາຍແຜ່ນດິນໂລກ

ປະວັດສາດທີ່ເຮົາກຳລັງສຶກສານີ້ເລີ້ມຕົ້ນປະມານປີ ຄ.ສ. 30 ຈາກພຣະມຫາບັນຊາ (Great Commission) ມັດທາຍ 28:18-20 ທີ່ພຣະເຢຊູຄຣິສໄດ້ສັ່ງກັບອັຄສາວົກແລະຜູ້ເຊື່ອໃນເວລານັ້ນໃຫ້ເຂົານຳເອົາຂ່າວປະເສີດແຫ່ງຄວາມພົ້ນຂອງພຣະອົງອອກໄປປະກາດເຜີຍແຜ່ແກ່ປະຊາຊາດທັງຫລາຍ ພຣະເຢຊູໄດ້ມອບສິດທິອຳນາດແກ່ຜູ້ເຊື່ອໃຫ້ໄປນຳຄົນທັງຫລາຍເປັນສາວົກຂອງພຣະອົງ ໂດຍໃຫ້ເຂົາໄດ້ເຂົ້າໃຈເຖິງຂ່າວປະເສີດ ໃຫ້ເຂົາຮັບບັພຕິສມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ສັ່ງສອນເຂົາໃຫ້ຖືຮັກສາສິ່ງຕ່າງ ໆ ທີ່ພຣະເຢຊູຄຣິສໄດ້ຊົງສັ່ງສອນໄວ້ ການຕາຍເທິງໄມ້ກາງ

ແຂນ ການເປັນຂຶ້ນມາຈາກຄວາມຕາຍຂອງພຣະອົງ ໄດ້ສຳແດງຂໍ້ພິສູດໃຫ້ເຫັນຫລາຍປະການ ຈົນບັນດາອັຄສາວົກ ແລະສານຸສິດໄດ້ເຂົ້າໃຈແຈ່ມແຈ້ງວ່າພຣະອົງຊົງເປັນພຣະເມຊີອາພຣະຜູ້ໂຜດໃຫ້ພົ້ນອັນແທ້ຈິງ (ກິຈການ 1:3, 3:26)

ພາຍຫລັງການສະເດັດຂຶ້ນສູ່ສວັນຂອງພຣະເຢຊູຄຣິສ (ກິຈການ 1:2-11) ອັຄສາວົກ ສານຸສິດ ແລະກຸ່ມຄົນຍິວທີ່ມີຄວາມເຊື່ອໃນພຣະເຢຊູຄຣິສວ່າ ພຣະອົງຊົງເປັນພຣະເມຊີອາກະສັດຜູ້ຄອບຄອງອານາຈັກຝ່າຍວິນຍານແທ້ຈິງ ບຸກຄົນເຫລົ່ານີ້ທີ່ມີຄວາມເຊື່ອຖືກເອີ້ນວ່າເປັນ "ຄຣິສຕຽນ" (ຜູ້ຕິດຕາມພຣະຄຣິສ) ຜູ້ເຊື່ອເຫລົ່ານີ້ໄດ້ເລີ້ມຕົ້ນພຣະຣາຊກິດຂອງພຣະເຈົ້າ ຕາມພຣະມຫາບັນຊາຂອງພຣະຄຣິສ ແລະໂດຍການຊົງນຳຂອງພຣະວິນຍານບໍຣິສຸດ ເຂົາໄດ້ອອກປະກາດເຜີຍແຜ່ຂ່າວປະເສີດຕາມຄຳສັ່ງຂອງພຣະເຢຊູສືບເນື່ອງຕໍ່ມາຈົນຮອດທຸກວັນນີ້

## II. ການສະເດັດມາຂອງພຣະວິນຍານບໍຣິສຸດ

ວັນເພັນເຕຄໍສະເຕ ຄື ວັນທີ່ພຣະວິນຍານບໍຣິສຸດສະເດັດລົງມາປະທັບຢູ່ກັບຜູ້ເຊື່ອ ຕາມຄຳຫມັ້ນສັນຍາຂອງພຣະເຢຊູຄຣິສທີ່ໄດ້ໃຫ້ໄວ້ກັບສາວົກທີ່ຕິດຕາມພຣະອົງ (ຢຮ 14:15-17) ເປັນວັນແຫ່ງປວັດສາດຂອງຄຣິສຈັກ ທີ່ທຸກຍຸກທຸກສມັຍບໍ່ອາດລືມໄດ້ ນັກປວັດສາດຫລາຍທ່ານຖືວ່າວັນເພັນເຕຄໍສະເຕເປັນວັນແຫ່ງການເລີ້ມຕົ້ນຄຣິສຈັກຍຸກສາກົນຂອງພຣະຄຣິສ ໃນພຣະທັມກິຈການ ບົດທີ 2 ໄດ້ບັນທຶກເຫດການອັນຫນ້າອັສຈັນກ່ຽວກັບວັນເພັນເຕຄໍສະເຕ ຊຶ່ງເກີດຂຶ້ນໃນລະດູໃບໄມ້ປົ່ງປີ ຄ.ສ.30 ຫລັງຈາກທີ່ພຣະເຢຊູຄຣິສຊົງເປັນຂຶ້ນຈາກຄວາມຕາຍແລ້ວຫ້າສິບມື້ (ເພາະວ່າພຣະອົງຊົງເປັນຂຶ້ນຈາກຄວາມຕາຍແລ້ວຢູ່ກັບອັຄສາວົກ 40 ມື້ແລ້ວ ພຣະອົງຂຶ້ນສູ່ສວັນ ຫລັງຈາກນັ້ນສິບມື້ເປັນວັນເພັນເຕຄໍສະເຕ) ໃນວັນເພັນເຕຄໍສະເຕຂນະເຫລົ່າສານຸສິດແລະຜູ້ທີ່ເຊື່ອໃນພຣະເຢຊູຄຣິສຈຳນວນຮ້ອຍຊາວຄົນກຳລັງຊຸມນຸມອ້ອນວອນອະທິຖານກັນຢູ່ ໃນທັນໃດນັ້ນພຣະວິນຍານບໍຣິສຸດໄດ້ສະເດັດລົງມາເທິງເຂົາເຫລົ່ານັ້ນ ຄືກັບແປວໄຟລັກສນະຄືລີ້ນປາກົດແກ່ເຂົາກະຈາຍຢູ່ເທິງຫົວເຂົາຫມົດທຸກຄົນ (ກິຈການ 2:2-4)

### ຜົນຂອງການສະເດັດມາຂອງພຣະວິນຍານບໍຣິສຸດ

1, ອັຄສາວົກແລະເຫລົ່າຜູ້ເຊື່ອເກີດຄວາມເຂົ້າໃຈໃຫມ່ ກ່ຽວກັບແຜ່ນດິນຂອງພຣະເຈົ້າ ວ່າບໍ່ແມ່ນເປັນອານາຈັກທາງການເມືອງ ແຕ່ເປັນອານາຈັກຝ່າຍວິນຍານຢູ່ພາຍໃຕ້ການຄອບຄອງຂອງພຣະວິນຍານບໍຣິສຸດ

2, ຜູ້ເຊື່ອມີຊີວິດປະກອບດ້ວຍຣິດອຳນາດຂອງພຣະວິນຍານບໍຣິສຸດ ມີໃຈຮ້ອນຮົນໃນການປະກາດຂ່າວປະເສີດ ມີຄົນຈຳນວນນັບເປັນພັນ ໆ ຄົນໄດ້ເຂົ້າມາເປັນຄຣິສຕຽນ

3, ພຣະວິນຍານບໍຣິສຸດໄດ້ຊົງສະຖິດແລະນຳພາຄຣິສຈັກ ໃຫ້ດຳເນີນພຣະຣາຊກິດຕາມພຣະປະສົງຂອງພຣະອົງ

4, ພຣະວິນຍານບໍຣິສຸດຊົງນຳພາຜູ້ເຊື່ອໃຫ້ເກີດຄວາມເປັນອັນນຶ່ງອັນດຽວກັນ ແລະກໍ່ຕັ້ງຄຣິສຈັກຄັ້ງທຳອິດໃນກຸງເຢຣູຊາເລັມ

ຄຳເທສນາຂອງທ່ານເປໂຕໃນວັນເພັນເຕຄໍສະເຕໄດ້ນຳຄົນສາມພັນຄົນມາຮັບເຊື່ອ ເຫດການນີ້

ເກີດຂຶ້ນໂດຍພຣະວິນຍານບໍຣິສຸດນຳພາໃຫ້ເກີດຄວາມກະຕືລືລົ້ນ ຄຣິສຕຽນໄດ້ແຜ່ພາຍອອກໄປເຖິງປະຊາຊົນຫລາຍຊາດຫລາຍພາສາ ຫາກແຕ່ວ່າເມື່ອຄຣິສຕຽນແຜ່ຂື້ນຫລາຍເທົ່າໃດກໍຍິ່ງໄດ້ຮັບຄວາມລັງກຽດແລະຮັບການຂົ່ມເຫັງຈາກພວກຢິວ ໂດຍສະເພາະຢ່າງຍິ່ງແມ່ນພວກເຮເລນນິສຕິກ ການຕາຍຂອງທ່ານສະເຕຟາໂນ ໃນກິຈການບົດທີ 6 ເປັນລາງບອກເຫດລ່ວງໜ້າເຖິງການຂົ່ມເຫງທີ່ຈະມີມາຕລອດປວັດສາດທີ່ຈະມາເຖິງ

## III. ຄຣິສຈັກທຳອິດໃນກຸງເຢຣູຊາເລັມ

ອັຄສາວົກສິບສອງຄົນ ແລະນ້ອງຊາຍຂອງພຣະເຢຊູຄຣິສ ຮ່ວມກັນເປັນກຸ່ມ ປະຊຸມຄ້າຍຄືກັນກັບການປະຊຸມໃນທັມສາລາຂອງພວກຢິວ ແຕ່ການປະຊຸມຂອງຄຣິສຕຽນມີຄວາມແຕກຕ່າງກັນກັບການປະຊຸມໃນທັມສາລາຂອງຊາວຢິວດັ່ງນີ້:

1, ໃນເວລາທີ່ຊາວຢິວທົ່ວໄປກຳລັງເຝົ້າລໍຄອຍການສະເດັດມາຂອງພຣະເມຊີອາຢູ່ນັ້ນ ພວກຄຣິສຕຽນເຊື່ອວ່າ ພຣະເມຊີອາໄດ້ສະເດັດມາແລ້ວແມ່ນພຣະເຢຊູຄຣິສໄທນາຊາເຣັດ ພຣະອົງຖືກຕຶງທີ່ເທິງໄມ້ກາງແຂນ ພຣະອົງໄດ້ຊົງເປັນຂຶ້ນມາຈາກຄວາມຕາຍ ແລະພຣະອົງໄດ້ຊົງສະເດັດສູ່ສວັນ

2, ຜູ້ທີ່ເຂົ້າມາຮ່ວມເປັນສມາຊິກໃນຄຣິສຈັກໃໝ່ນີ້ ຕ້ອງຮັບບັພຕິສມາຕາມແບບຢ່າງພຣະເຢຊູຄຣິສທີ່ເຄີຍໄດ້ຮັບຈາກທ່ານໂຢຮັນຜູ້ໃຫ້ຮັບບັພຕິສມາ (ມັດທາຍ 3: 13-17) ການຮັບບັພຕິສມານີ້ມີຄວາມໝາຍໃໝ່ຄື ຜູ້ເຊື່ອເຂົ້າສ່ວນຮ່ວມກັບການຕາຍແລະການເປັນຂຶ້ນມາໃໝ່ຂອງພຣະເຢຊູຄຣິສແລະຮັບເອົາການສະເດັດມາຂອງພຣະວິນຍານບໍຣິສຸດ ພຣະອົງຊົງປະທັບຢູ່ໃນຈິດໃຈຂອງຜູ້ເຊື່ອທຸກ ໆຄົນ ເຮັດໃຫ້ຜູ້ເຊື່ອທຸກຄົນໄດ້ເຂົ້າສ່ວນເປັນປະຊາຊົນຂອງພຣະເຈົ້າ

3, ບັນດາພວກສານຸສິດແລະຜູ້ເຊື່ອທັງຫລາຍໄດ້ມີການຮັບປະທານອາຫານຮ່ວມກັນທຸກວັນຊຶ່ງເປັນການກະທຳຕາມແບບຢ່າງ ໃນການລ້ຽງມື້ສຸດທ້າຍ

ພຣະທັມກິຈການຕັ້ງແຕ່ບົດທີນຶ່ງຈົນຮອດບົດທີຫົກ ໄດ້ກ່າວເຖິງຄຣິສຈັກທີ່ກໍ່ຕັ້ງຂຶ້ນໃນຄັ້ງທຳອິດໂດຍມີອັຄສາວົກເປໂຕເປັນຜູ້ນຳຄຣິສຈັກ ໂດຍມີທ່ານໂຢຮັນ ຢາໂກໂບ ແລະອັຄທູດຄົນອື່ນ ໆ ໄດ້ຮ່ວມງານຄຽງຂ້າງກັບທ່ານເປໂຕ ໃນການບຸກເບີກຄຣິສຈັກຄັ້ງທຳອິດນີ້ສມາຊິກຂອງຄຣິສຈັກເຕັມໄປດ້ວຍຄວາມເຊື່ອຟັງການຊົງນຳຂອງພຣະວິນຍານບໍຣິສຸດ (ກິຈການ 6:3) ອັຄສາວົກໄດ້ຮັບຄວາມນັບຖືແລະໄວ້ວາງໃຈຈາກຜູ້ເຊື່ອທຸກຄົນໃນເວລານັ້ນ ນີ້ສະແດງໃຫ້ເຫັນວ່າອັຄສາວົກມີຄວາມຜູກພັນເປັນອັນນຶ່ງອັນດຽວກັນ ແລະຜູ້ເຊື່ອກໍໃຫ້ຄວາມເຄົາຣົບນັບຖືຕໍ່ກັນແລະກັນ

## IV. ຄຣິສຈັກຍຸກທຳອິດມີຫລັກຄວາມເຊື່ອເປັນມູລຖານ

1, ເຊື່ອວ່າພຣະເຢຊູໄທນາຊາເຣັດເປັນພຣະຄຣິສເປັນພຣະເມຊີອາທີ່ອິສຣາເອລພາກັນລໍຄອຍມາແຕ່ດົນນານແລ້ວ

2, ພຣະເຢຊູຊົງຕາຍໄຖ່ໂທດບາບມະນຸດ ຊົງເປັນຂຶ້ນຈາກຄວາມຕາຍ ແລະໄດ້ສະເດັດຂຶ້ນສູ່ສວັນ ພຣະອົງຊົງປົກຄອງອານາຈັກຝ່າຍວິນຍານ ໂດຍຣິດອຳນາດຂອງພຣະວິນຍານບໍຣິສຸດ

3, ພຣະເຢຊູຈະສະເດັດມາອີກເມື່ອເຖິງກຳນົດເວລາ ເພື່ອພິພາກສາມະນຸດ ແລະຮັບເອົາຜູ້ເຊື່ອເຂົ້າໃນພຣະສະງ່າຣາສີຂອງພຣະອົງ ຜູ້ເຊື່ອຈະໄດ້ຮັບເອົາແຜ່ນດິນສວັນເປັນມໍຣະດົກ

ອັຄສາວົກແລະຜູ້ເຊື່ອໃນເວລານັ້ນມີຄວາມຮ້ອນຮົນ ແລະເປັນພຍານເຣື້ອງຂ່າວປະເສີດຂອງພຣະເຢຊູຄຣິສ ໄດ້ປະກາດຂ່າວປະເສີດຢ່າງສຸດຈິດສຸດໃຈ ຍອມເສັຽສລະຊີວິດ ແລະມີຄວາມເປັນອັນນຶ່ງອັນດຽວກັນ ບໍ່ມີການແບ່ງແຍກວ່າເປັນສິດຫລືເປັນອາຈານ ບໍ່ເຫັນແກ່ຜົນປະໂຍດສ່ວນຕົວ ບໍ່ມີກົດລະບຽບແລະຂໍ້ບັງຄັບຫລາຍ ຕ່າງຄົນຕ່າງຖວາຍເຮື່ອແຮງຮັບໃຊ້ໃນຄຣິສຈັກດ້ວຍຄວາມເຕັມໃຈ (ກິຈການ 2:43-47)

ໃນຣະຫວ່າງເວລາຂອງການເລີ້ມຕົ້ນຄຣິສຈັກຕອນທຳອິດນັ້ນ ການປະກາດຂ່າວປະເສີດຍັງຄົງຈຳກັດຢູ່ໃນກຸງເຢຣູຊາເລັມ ແລະໃນບໍຣິເວນຮອບ ໆ ເທົ່ານັ້ນ ສາວົກຂອງພຣະເຢຊູຕ່າງກໍເປັນພຍານຢ່າງເຂັ້ມແຂງໃນທີ່ສາທາຣະນະ ໃນສາລາທັມແລະຕາມບ້ານ ມີການຊຸມນຸມອ້ອນວອນຢູ່ບໍ່ໄດ້ຂາດ

## V. ການຕາຍຂອງທ່ານສະເຕຟາໂນປະມານປີ ຄ.ສ.35

ສະເຕຟາໂນເປັນຜູ້ນຶ່ງ ໃນຈຳນວນເຈົ້າໜ້າທີ່ທັງເຈັດ ທີ່ໄດ້ຮັບການເລືອກໃຫ້ປະຕິບັດໜ້າທີ່ໃນຄຣິສຈັກຍຸກທຳອິດ (ກິຈການ 6:1-6) ທ່ານເປັນຜູ້ທີ່ມີຄວາມເຊື່ອກ້າຫານ ໄດ້ເທສນາຖາມກາງປະຊາຊົນແລະກ່າວປະນາມຊາວຢິວທີ່ປະຕິເສດພຣະເຢຊູຄຣິສ ເຮັດໃຫ້ພວກຢິວເກີດມີຄວາມຄຽດແຄ້ນຫລາຍ (ກິຈການ 6:8-15) ພວກຢິວບໍ່ພໍໃຈໃນຄຳເທສນາຂອງທ່ານສະເຕຟາໂນ ຈຶ່ງໄດ້ຮ່ວມກັນຂ້າສະເຕຟາໂນ ໂດຍການເອົາຫີນຄວ່າງຈົນກະທັ້ງທ່ານສະເຕຟາໂນເຖິງແກ່ຄວາມຕາຍ (ກິຈການ 7:57-60) ການກະທຳນີ້ເປັນການຜິດຕໍ່ກົດໝາຍລະບຽບປົກຄອງຂອງອານາຈັກໂຣມັນ ແຕ່ເຖິງປານນັ້ນການຂົ່ມເຫັງຄຣິສຕຽນຍິ່ງໄດ້ເພີ່ມທວີຫລາຍຂຶ້ນ ຈົນເປັນເຫດໃຫ້ຄຣິສຕຽນແຕກກະຈາຍໜີອອກໄປຈາກກຸງເຢຣູຊາເລັມ ແລະນຳຄວາມເຊື່ອຂອງຕົນອອກໄປຍັງບ່ອນຜູ້ຄົນທີ່ບໍ່ເຄີຍໄດ້ຍິນໄດ້ຟັງມາກ່ອນ (ກິຈການ 8:4) ຈະເຫັນໄດ້ວ່າ ອັຄສາວົກແລະພວກຜູ້ເຊື່ອໃນເວລານັ້ນມີຄວາມກ້າຫານແລະບໍ່ຢ້ານຕໍ່ຄວາມຕາຍ ມີໃຈຮ້ອນຮົນໃນການປະກາດຂ່າວປະເສີດທຸກວັນ ເພາະພວກເຂົາເຫລົ່ານັ້ນຕ່າງກໍມີຄວາມຫວັງວ່າພຣະຄຣິສຈະສະເດັດຄືນມາໂດຍໄວໃນຍຸກທຳອິດນີ້ ຄວາມຕ້ອງການຝ່າຍໂລກນີ້ ຕົວຢ່າງເຊັ່ນ ຊັບສົມບັດ ເງິນຄຳ ຈຶ່ງຖືວ່າບໍ່ເປັນສິ່ງສຳຄັນໃນເວລານັ້ນ ພວກເຂົາໄດ້ຂາຍຊັບສົມບັດສ່ວນຕົວແລ້ວເອົາມາຮວມເປັນຂອງກາງ ແຕ່ເຖິງຢ່າງໃດກໍຕາມ ໃນກິຈການບົດທີ 5:1-11 ໄດ້ກ່າວເຖິງຄວາມບໍ່ສັດຊື່ຂອງອານາເນັຽແລະຊັບຟີຣາ ທີ່ໄດ້ໝິ່ນປະມາດຕໍ່ພຣະວິນຍານບໍຣິສຸດ

## VI. ການກັບໃຈໃໝ່ຂອງທ່ານໂຊໂລ ປະມານ ຄ.ສ.35

ທ່ານໂຊໂລ(ໂປໂລ)ເປັນຜູ້ນຶ່ງທີ່ບໍ່ມັກຄຣິສຕຽນ ທ່ານໄດ້ມີບົດບາດຫລາຍຂຶ້ນໃນການຂົ່ມເຫັງຄຣິສຕຽນທັງຫລາຍ ທ່ານເດີນທາງຈາກກຸງເຢຣູຊາເລັມໄປຍັງເມືອງດາມາເຊ ເພື່ອຈະຈັບຄຣິສຕຽນທັງຊາຍແລະຍິງເອົາໄປຂັງໄວ້ໃນຄຸກ (ກິຈການ 8:3)

ການຕາຍຂອງຊາເຕຟາໂນ ເປັນເຫດໃຫ້ສາວົກທັງຫລາຍເກີດການຫວັ່ນໄຫວຢ້ານກົວ ແລະສະເທືອນໃຈຫລາຍ ແຕ່ເຖິງປານນັ້ນຂ່າວປະເສີດຂອງພຣະເຢຊູຄຣິສກໍຍັງແຜ່ອອກໄປ ຄຣິສຕຽນຍິ່ງເຂັ້ມແຂງຫລາຍຂຶ້ນ ເຫດການນີ້ພຣະເຈົ້າຊົງເສັຽພຣະທັຍຫລາຍ ທີ່ເຫັນຄຣິສຕຽນໄດ້ຮັບການຂົ່ມເຫັງຊັ້ນນັ້ນ ປຽບເຫມືອນວ່າພຣະອົງໄດ້ຮັບການຂົ່ມເຫັງໂດຍກົງ (ກິຈການ 9:4)

ທ່ານໂຊໂລ(ໂປໂລ)ເປັນອາຈານຫນຸ່ມ ເກີດໃນເມືອງຕາໂຊ ແຂວງກິລິເກັຽ ອັນເປັນຫົວເມືອງຂຶ້ນຂອງອານາຈັກກຣີກ ທ່ານເປັນລູກຫລານຊາວຢິວທີ່ເຂົ້າໄປຕັ້ງຖິ່ນຖານ ທີ່ມີສິດທິຄືກັນກັບຊາວກຣີກ ແຕ່ຖືສັນຊາດໂຣມັນ ທ່ານເກີດໃນຕະກຸນສູງຮູ້ຈັກພາສາກຣີກເປັນຢ່າງດີ ໄດ້ຮັບການສຶກສາທີ່ກຸງເຢຣູຊາເລັມ ທ່ານເປັນສິດຂອງທ່ານອາຈານຄາມາລີເອັນ (ກິຈການ 22:3) ທ່ານໂຊໂລເປັນຄົນທີ່ເຂັ້ມແຂງໃນຫມູ່ພວກຟາຣີຊາຍ ທີ່ຖືຫມັ້ນບັນຍັດຂອງສາສນາຢິວຢ່າງເຄັ່ງຄັດ ພຣະທັມກິຈການ 9:4,6,16, 26:12-18 ໄດ້ກ່າວເຖິງເຫດການເຣື່ອງການກັບໃຈໃຫມ່ຂອງທ່ານໂຊໂລວ່າ ພຣະເຢຊູຄຣິສໄດ້ຊົງສຳແດງພຣະອົງຕໍ່ທ່ານໂຊໂລຜູ້ເປັນສັດຣູຂອງຄຣິສຕຽນ ການປາກົດອັນຫນ້າອັສຈັນຂອງພຣະເຢຊູນີ້ເປັນເຫດນຳທ່ານໂຊໂລໃຫ້ກັບໃຈໃຫມ່ແລະຍອມຮັບວ່າພຣະຄຣິສເປັນອົງພຣະຜູ້ເປັນເຈົ້າ ທ່ານປ່ຽນແປງຈາກການເປັນສັດຣູຂອງພຣະຄຣິສ ມາຍອມຖວາຍຕົວເປັນທາສຜູ້ຮັບໃຊ້ອັນສັດຊື່ "ໂຊໂລ" (ມາຈາກຊື່ກະສັດທີ່ຍິ່ງໃຫຍ່ອົງແຣກຂອງອິສຣາເອລຄື "ກະສັດຊາອູນ" ພາສາເດີມເປັນຊື່ດຽວກັນ) ໄດ້ປ່ຽນຊື່ມາເປັນ "ໂປໂລ" (ແປວ່າຜູ້ເລັກນ້ອຍ) ແລະເອີ້ນຕົວທ່ານເອງວ່າ"ໂປໂລອັຄສາວົກຂອງພຣະເຢຊູຄຣິສ" ໂດຍທີ່ທ່ານຖືວ່າພຣະເຢຊູຄຣິສໄດ້ຊົງເອີ້ນຮຽນທ່ານໂດຍກົງໃຫ້ເປັນອັຄສາວົກ ນີ້ເປັນເຫດໃຫ້ປວັດສາດຂອງຄຣິສຈັກໄດ້ປ່ຽນແປງຢ່າງໃຫຍ່ຫລວງ ເພາະການຖວາຍຊີວິດຂອງທ່ານໂປໂລເຮັດໃຫ້ຂ່າວປະເສີດຂອງພຣະເຢຊູຄຣິສຂຍາຍອອກຢ່າງກວ້າງຂວາງເຖິງຊາວຕ່າງຊາດ

## VII. ການປະຊຸມເຣື່ອງການຮັບຄົນຕ່າງຊາດເຂົ້າເປັນຄຣິສຕຽນ ປະມານ ຄ.ສ.50

ຄຣິສຈັກໃນຍຸກທຳອິດ ຊາວຢິວທີ່ເປັນຄຣິສຕຽນຍັງຄົງເຊື່ອຫມັ້ນວ່າ ຄວາມຣອດພົ້ນເປັນຂອງຄົນທີ່ເປັນຊົນຊາດອິສຣາເອລເທົ່ານັ້ນບໍ່ໄດ້ເປັນຂອງຊາວຕ່າງຊາດ ດັ່ງນັ້ນຊາວຕ່າງຊາດທີ່ປາຖນາຢາກເປັນຄຣິສຕຽນ ຕ້ອງຮັບພິທີຕັດຕາມຮີດຄອງຊາວຢິວເສັຽກ່ອນ ເພື່ອເປັນເຄື່ອງຫມາຍວ່າໄດ້ແປງເປັນຄົນຢິວແລ້ວ ຄວາມເຊື່ອດັ່ງກ່າວນີ້ເຮັດໃຫ້ເກີດຄວາມຂັດແຍ້ງກັນ ແລະເຮັດໃຫ້ຄຣິສຕຽນໃນຍຸກເລີ່ມຕົ້ນນີ້ມີຄວາມຄິດເຫັນແຕກຕ່າງກັນເປັນ 2 ຝ່າຍ ຝ່າຍທ່ານໂປໂລແລະທ່ານບາຣະນາບາທີ່ຖືວ່າຂ່າວປະເສີດມີໄວ້ສຳລັບຊາວຢິວແລະຊາວຕ່າງຊາດຄືກັນ ທຸກຄົນມີຄວາມສເມີພາບກັນ ຊາວຕ່າງຊາດສາມາດຮັບຂ່າວປະເສີດແຫ່ງຄວາມຣອດພົ້ນໄດ້ເທົ່າທຽມກັນກັບຊາວຢິວ ໂດຍບໍ່ຕ້ອງຖືຮັກສາບັນຍັດຂອງຢິວກ່ອນ ດັ່ງທີ່ອັຄສາວົກບາງຄົນໄດ້ໂຕ້ຖຽງວ່າ ຊາວຕ່າງຊາດຕ້ອງຮັບພິທີຕັດແລະຖືຮັກສາບັນຍັດຂອງຊາວຢິວເສັຽກ່ອນ ໃນທີ່ສຸດຂໍ້ຂັດແຍ້ງນີ້ ພວກອັຄສາວົກ ແລະຜູ້ເຊື່ອທີ່ເປັນຜູ້ອາວຸໂສເຖົ້າແກ່ຮ່ວມກັບທ່ານໂປໂລ ທ່ານບາຣະນາບາ ທ່ານເປໂຕ ທ່ານຢາໂກໂບ ໄດ້ປະຊຸມກັນ ເພື່ອຫາຂໍ້ຕົກລົງໃນການຮັບຄົນຕ່າງຊາດເຂົ້າເປັນຄຣິສຕຽນສຳລັບຄຣິສຈັກຍຸກທຳອິດນີ້ (ກິຈການ 11:1-18) ການປະຊຸມໄດ້ເກີດຂຶ້ນໃນກຸງເຢຣູຊາເລັມປະມານ ຄ.ສ 50 ຜົນການປະຊຸມໄດ້ສລຸບດັ່ງນີ້

1, ຄຣິສສາສນາບໍ່ແມ່ນກົດບັນຍັດຊຸດໃຫມ່ ດັ່ງນັ້ນສມາຊິກຄຣິສຈັກທີ່ເປັນຄົນຢິວກໍຍັງຄົງປະຕິບັດຕາມພຣະບັນຍັດຂອງຢິວຕໍ່ໄປ

2, ຄຣິສສາສນາເປັນຂອງທຸກຄົນ ທຸກຊາດ ທຸກເພດ ແລະທຸກຊົນຊັ້ນໃນສັງຄົມ ເພາະສະນັ້ນ

ຄົນຕ່າງຊາດສາມາດມາເຂົ້າມາຮັບຄວາມຮອດພົ້ນໃນພຣະເຢຊູຄຣິສໄດ້ໂດຍກົງ ແລະດຳລົງຊີວິດໃຫມ່ຕາມແບບຄຣິສຕຽນ ໂດຍບໍ່ຕ້ອງຖືຮັກສາພຣະບັນຍັດຂອງຢິວກ່ອນແລະບໍ່ຕ້ອງເຂົ້າພິທີຕັດກ່ອນຈຶ່ງຈະມາເປັນຄຣິສຕຽນ

3, ຄຣິສຕຽນຍອມຮັບພຣະຄັມພີຂອງຊາວຢິວ (ພຣະຄັມພີພາກພັນທະສັນຍາເດີມ) ແຕ່ຈະເລີກພິທີທາງສາສນາແລະຂໍ້ປະຕິບັດຂອງຢິວບາງປະການ

ຂໍ້ຕົກລົງທີ່ໄດ້ສລຸບມາແລ້ວເບື້ອງຕົ້ນ ເຮັດໃຫ້ຄຣິສຈັກໃນຍຸກທຳອິດນີ້ມີອິສຣະພາບທີ່ຈະທຳການອັນຍິ່ງໃຫຍ່ ເປີດໂອກາດໃຫ້ຂ່າວປະເສີດແລະແຜ່ນດິນຂອງພຣະເຈົ້າແຜ່ຂຍາຍອອກໄປໄດ້ຢ່າງກວ້າງຂວາງ ເຖິງທຸກເຊື້ອຊາດ ທຸກປະເທດຈົນສຸດປາຍແຜ່ນດິນໂລກດັ່ງ ພຣະທັມກິຈການ 1:8 ແລະມັດທາຍ 28:19-20

ຄຣິສສາສນາໄດ້ແຜ່ອອກໄປສູ່ຄົນຕ່າງຊາດ ທົ່ວໄປໃນຣາຊອານາຈັກໂຣມັນ ເຮົາສາມາດສຶກສາເຖິງເຫດການທີ່ເກີດຂື້ນໃນເວລາຊາວປີຄື ຫລັງຈາກການປະຊຸມທີ່ກຸງເຢຣູຊາເລັມໂດຍອາສັຍການສຶກສາພຣະທັມກິຈການແລະຈົດຫມາຍຂອງທ່ານໂປໂລ ທີ່ຂຽນເຖິງຄຣິສັຈັກຕ່າງ ໆ ທີ່ຢູ່ໃນທົ່ວເມືອງຮອບ ໆທະເລເມດິເຕອເຣນຽນແລະເອເຊັຽນ້ອຍ ນອກຈາກນັ້ນພຣະທັມ 1 ເປໂຕ ຕອນຕົ້ນກໍໄດ້ເວົ້າເຖິງອານາເຂດ ແລະເມືອງຕ່າງ ໆ ທີ່ຂ່າວປະເສີດຂອງພຣະເຢຊູຄຣິສໄດ້ເຜີຍແຜ່ຂຍາຍໄປ ຈົນມີຜູ້ເຊື່ອແລະມີຄຣິສຈັກເກີດຂື້ນໃນບໍຣິເວນເຫລົ່ານີ້ (2 ເປໂຕ 1:1-2)

ຜູ້ນຳເດັ່ນໃນຊ່ວງເວລາທີ່ຄຣິສຈັກໄດ້ຂຍາຍອອກໄປສູ່ຄົນຕ່າງຊາດນີ້ ແມ່ນທ່ານໂປໂລ ເປັນຜູ້ທີ່ເດັ່ນທີ່ສຸດ ບໍ່ມີຜູ້ໃດຫລືສພາບການອັນໃດທີ່ຈະຢັບຢັ້ງທ່ານໄວ້ໄດ້ ທ່ານຖວາຍຊີວິດເດີນຫນ້າໄປຈົນຮອດທົ່ວແຂວງເອເຊັຽນ້ອຍແລະແຂວງອື່ນ ໆ ທ່ານເປັນຜູ້ກໍ່ຕັ້ງຄຣິສຈັກ ທ່ານໂປໂລໄດ້ຂຽນຈົດຫມາຍທັມສານໄປເຖິງຄຣິສຈັກຕ່າງ ໆ ເຮັດໃຫ້ຄຣິສຕຽນເຂົ້າໃຈເຖິງການສຳແດງແລະນ້ຳພຣະທັຍຂອງພຣະເຈົ້າ ທີ່ຊົງປະທານພຣະເຢຊູຄຣິສເປັນພຣະຜູ້ຊ່ວຍໃຫ້ຮອດພົ້ນໄດ້ແຈ່ມແຈ້ງຍິ່ງຂື້ນ ເຮັດໃຫ້ເປັນຄຣິສຈັກທົ່ວໂລກມີຄວາມເຊື່ອອັນດຽວກັນ ຊຶ່ງເຮົາເອີ້ນຄຣິສຈັກທົ່ວໂລກນີ້ວ່າ ເປັນ "ຄຣິສຈັກສາກົນ" (Orthodox Church) ທີ່ຮັບນ້ຳພຣະທັຍ ແລະພຣະປະສົງຂອງພຣະເຈົ້າແລະແຜ່ຂຍາຍອານາຈັກຝ່າຍວິນຍານອອກໄປທົ່ວທຸກມຸມໂລກແລະແກ່ມະນຸດທຸກຊາດພາສາ

ທ່ານເປໂຕເປັນອີກທ່ານນຶ່ງທີ່ໄດ້ຮັບການຍົກຂຶ້ນວ່າ ທ່ານເປັນຜູ້ນຳຫລັກໃນຈຳນວນອັຄສາວົກ ມີຫລັກຖານທີ່ໄດ້ກ່າວອ້າງອີງວ່າທ່ານເປັນຜູ້ຂຽນພຣະທັມເປໂຕສບັບຕົ້ນແລະສບັບທີ່ສອງ ທ່ານຖືກປະຫານຊີວິດທີ່ກຸງໂຣມ ປະມານ ຄ.ສ. 67

ທ່ານຢາໂກໂບນ້ອງຂອງອົງພຣະພຣະເຢຊູຄຣິສ ເປັນຜູ້ນຳຄຣິສຈັກທີ່ກຸງຢາຣູຊາເລັມອັນປະກອບດ້ວຍສມາຊິກສ່ວນຫລາຍເປັນຊາວຢິວ ທ່ານເປັນຄຣິສຕຽນທີ່ເຄັ່ງຄັດໃນທັມບັນຍັດຂອງຢິວ ທ່ານສອນວ່າຄຣິສຕຽນບໍ່ພຽງແຕ່ມີຊີວິດດ້ວຍຄວາມເຊື່ອເທົ່ານັ້ນ ແຕ່ຕ້ອງມີການປະຕິບັດນຳ ຈົນມີຜູ້ເອີ້ນນາມທ່ານວ່າ "ຜູ້ທ່ຽງທັມ" ເຊື່ອກັນວ່າ ທ່ານເປັນຜູ້ຂຽນພຣະທັມຢາໂກໂບ ທ່ານຖືກຂ້າຕາຍປະມານ ຄ.ສ. 62

ນອກເຫນືອຈາກທ່ານໂປໂລ ທ່ານເປໂຕ ທ່ານຢາໂກໂບຍັງມີຜູ້ນຳອື່ນ ໆ ທີ່ຍອມຖວາຍຊີວິດຂອງຕົນ ເພື່ອເປັນຜູ້ຮັບໃຊ້ຂອງພຣະເຢຊູຄຣິສ ດັ່ງປາກົດໃນກິຈການ 12:2,3 ກະສັດເຮໂຣດໄດ້ອອກຄຳສັ່ງຂ້າທ່ານຢາໂກໂບ ຜູ້ເປັນອ້າຍຂອງທ່ານໂຢຮັນ ປະມານ ຄ.ສ. 42-43



ເຄື່ອງໝາຍຂອງພຣະເຢຊູຄຣິສຊົງເປັນຂຶ້ນຈາກຄວາມຕາຍ ໃນສມັຍທຳອິດໄດ້ຖືກແຕ້ມຂຶ້ນເປັນພາບຂອງໂຢນາອອກຈາກທ້ອງປາ ເພາະວ່າ ພຣະທັມມັດທາຍໄດ້ກ່າວວ່າ ໂຢນາຢູ່ໃນທ້ອງປາສາມວັນສາມຄືນສັນໃດພຣະເຢຊູ ກໍຈະຕ້ອງຖືກຝັງໄວ້ສາມວັນສາມຄືນ ຈົນກວ່າພຣະອົງໄດ້ເປັນຂຶ້ນຈາກຄວາມຕາຍ (ມັດທາຍ 12:40)

# ບົດທີ 2

## ຄຣິສຈັກໃນເງົາແຫ່ງຄວາມມືດມົວ

ຄ.ສ.70-100



### I. ຄວາມໝາຍ

ຄຳວ່າ "ຄຣິສຈັກໃນເງົາແຫ່ງຄວາມມືດມົວ" ນີ້ ບໍ່ໄດ້ໝາຍຄວາມວ່າ ຄຣິສຈັກຕົກຢູ່ໃນຄວາມມືດ ແຕ່ໝາຍຄວາມວ່າ ນັກປວັດສາດຜູ້ສຶກສາຫາຄວາມເຂົ້າໃຈກ່ຽວກັບປວັດສາດໃນຍຸກນັ້ນບໍ່ໄດ້ຫລາຍ ເພາະເອກສານທີ່ຈາລຶກເຖິງເຣື່ອງຣາວຂອງຄຣິສຈັກໃນຍຸກນີ້ບໍ່ມີຫລາຍແລະບໍ່ແຈ່ມແຈ້ງ ດັ່ງນັ້ນປວັດສາດຄຣິສຈັກຕອນນີ້ຄືກັບວ່າຢູ່ໃນເງົາມືດມົວ ຄຣິສຈັກໃນຍຸກນີ້ໄດ້ຮັບການຂົ່ມເຫງຕາມທີ່ພຣະເຢຊູຊົງກ່າວເຕືອນເຂົາໄວ້ລ່ວງໜ້າແລ້ວ (ມັດທາຍ 24:9, ມາຣະໂກ 13:9-13) ອັຄສາວົກໄດ້ຕາຍໄປທີລະຄົນສອງຄົນ ຄຣິສຕຽນທັງຫລາຍກໍຢູ່ໃນຄວາມຢ້ານກົວ ການປະຊຸມຂອງຄຣິສຕຽນໄດ້ຊຸມນຸມກັນຢ່າງລັບ ໆ ແຕ່ເຖິງຢ່າງໃດກໍຕາມຄຣິສຈັກຂອງພຣະຄຣິສບໍ່ໄດ້ຢຸດເຊົາລົງຫລືມິດຫາຍໄປ ແຕ່ຍິ່ງເຮັດໃຫ້ຄຣິສຕຽນມີຄວາມເຂັ້ມແຂງແລະຂຍາຍອອກໄປດ້ວຍການຊົງນຳຂອງພຣະວິນຍານບໍຣິສຸດ ຄຣິສຕຽນມີຄວາມຈົ່ງຮັກພັກດີ ຄວາມສັດຊື່ ແລະມີຄວາມແຂງແຮງຕື່ມອີກ ພວກຄຣິສຕຽນໄດ້ຖວາຍຊີວິດຮັບໃຊ້ ແລະປະກາດຂ່າວປະເສີດອອກໄປຢ່າງບໍ່ຢຸດຢັ້ງ ສາເຫດອີກປະການນຶ່ງທີ່ປວັດສາດຄຣິສຈັກໃນຍຸກນີ້ບໍ່ແຈ່ມແຈ້ງນັ້ນກໍເພາະວ່າ ນັກປວັດສາດຫາຂໍ້ອ້າງອີງຈາກເອກສານອື່ນ ໆ ບໍ່ໄດ້ຫລາຍ ເພາະພຣະທັມກິຈການ ບໍ່ໄດ້ກ່າວເຖິງການຮັບໃຊ້ຂອງອັຄສາວົກໃນຍຸກນີ້ ເຮົາໄດ້ຮັບຮູ້ແຕ່ພຽງການງານຂອງທ່ານຕີໂມທຽວ ອະໂປໂລ ຕີໂຕ ແລະຄຣິສຕຽນອື່ນ ໆ ພຽງແຕ່ເລັກ ໆ ນ້ອຍ ໆ ເທົ່ານັ້ນ ບາງເທື່ອກໍມີແຕ່ການກ່າວເຖິງຊື່ຂອງບຸກຄົນເຫລົ່ານີ້ບ້າງໃນຈົດໝາຍຝາກ ພຣະທັມເຫລັ້ມຕ່າງ ໆ ຊຶ່ງເຮົາເອົາມາອ້າງອີງຕໍ່ກັນແລະກັນພໍຈະໃຫ້ຄວາມເຂົ້າໃຈໄດ້ເປັນບາງສ່ວນ ວ່າມີຜູ້ໃດແດ່ທີ່ເຮັດການຮັບໃຊ້ໃນຍຸກນີ້ ດັ່ງທີ່ໄດ້ກ່າວມາແລ້ວວ່າການຕາຍຂອງອັຄສາວົກເຮັດໃຫ້ປວັດສາດໃນຍຸກນີ້ມືດມົວໄປດ້ວຍ ອັຄສາວົກຜູ້ທີ່ມີອາຍຸຍືນຍາວກວ່າໝູ່ ແມ່ນທ່ານໂຢຮັນ ທ່ານຕາຍໃນປະມານ ຄ.ສ. 100

## II. ກຸງເຢຣູຊາເລັມແຕກໃນ ຄ.ສ.70

ອຳນາດຂອງຣາຊອານາຈັກໂຣມັນໄດ້ຂຍາຍຕົວປົກຄອງອອກໄປຢ່າງກວ້າງຂວາງ ພວກຢິວໂດຍສະເພາະໃນແຂວງຢູດາຍມີຄວາມຂົມຂື່ນເສັຽໃຈ ເພາະເຫດທີ່ປະເທດອິສຣາເອລຕ້ອງຕົກເປັນເມືອງຂຶ້ນຂອງຈັກກະພັດໂຣມັນມາເປັນເວລາດົນນານຫລາຍຮ້ອຍປີ ຊາວຢິວໄດ້ເຊື່ອຖືແລະຕີຄວາມໝາຍພຣະຄັມພີຈາກພຣະທັມຂອງຜູ້ປະກາດພຣະຄຳ ວ່າພຣະເຈົ້າໄດ້ເລືອກເອົາອິສຣາເອລ ໃຫ້ເປັນປະເທດທີ່ໄດ້ຮັບພຣະພອນ ແລະມີອຳນາດທາງການເມືອງເໜືອກວ່າປະເທດອື່ນ ໆ ແຕ່ພວກຢິວເຫລົ່ານີ້ເຂົ້າໃຈພຣະປະສົງຂອງພຣະເຈົ້າຜິດໄປ ເພາະວ່າພຣະເຈົ້າໄດ້ປະທານຄວາມສຳເຣັດອັນຍິ່ງໃຫຽ່ນີ້ໃຫ້ແກ່ພຣະເຢຊູຄຣິສທີ່ເທິງໄມ້ກາງແຂນ ຄືການທີ່ພຣະອົງຊົງຊນະຄວາມບາບແລະຄວາມຕາຍ ອານາຈັກຝ່າຍວິນຍານກຳລັງຂຍາຍຕົວອອກໄປຢ່າງສງົບ ແຕ່ຍິ່ງໃຫຽ່ແລະສຳຄັນ ຄຣິສຈັກໄດ້ຮັບການຊົງນຳພາໂດຍພຣະວິນຍານບໍຣິສຸດແລະໂດຍຄຣິສຕຽນທັງຫລາຍທີ່ຖວາຍຊີວິດຮັບໃຊ້ດ້ວຍຄວາມສັດຊື່ ແຕ່ພວກຢິວທີ່ບໍ່ເປັນຄຣິສຕຽນບໍ່ເຂົ້າໃຈໃນຄວາມໝາຍຝ່າຍວິນຍານແລະການສະເດັດມາຂອງພຣະເຢຊູນີ້ ແຕ່ຫັນໄປມີຄວາມຫວັງທາງດ້ານການເມືອງໂດຍກະບົດຕໍ່ຣັຖບານໂຣມັນ

ໃນປີ ຄ.ສ.66 ພວກຢິວ (ພວກຢິວທົ່ວໄປບໍ່ແມ່ນຢິວຄຣິສຕຽນ) ໄດ້ທຳການກະບົດຕໍ່ຣັຖບານໂຣມັນຈຶ່ງເກີດການປະຕິວັດຂຶ້ນ ຣັຖບານໂຣມັນໄດ້ສົ່ງທະຫານນຳໂດຍແມ່ທັບມີຊື່ວ່າ ໄທຕັສ ໂອຣົດຂອງຈັກກະພັດ ເວສາເປຊຽນ ເຂົ້າລ້ອມກຸງເຢຣູຊາເລັມ ເຮັດໃຫ້ປະຊາຊົນໄດ້ຮັບຄວາມທຸກຍາກລຳບາກຢ່າງໃຫຽ່ຫລວງ ແຕ່ພວກຄຣິສຕຽນໄດ້ຮັບຄຳສອນຈາກພຣະເຢຊູຄຣິສ ເຕືອນກ່ຽວກັບກຸງເຢຣູຊາເລັມ ເຮັດໃຫ້ຢິວຄຣິສຕຽນສ່ວນຫລາຍໄດ້ຫລົບໜີໄປຈາກກຸງເຢຣູຊາເລັມກ່ອນ ໄປຫລົບພັຍຢູ່ໃນຫວ່າງເຂົາຈຳແດນແຖບເມືອງ ເພລລາ ກ່ອນທີ່ກຸງເຢຣູຊາເລັມຈະແຕກຢ່າງຢ່ອຍຢັບໃນປີ ຄ.ສ.70 ຊາວຢິວຖືກຂ້າຕາຍຖືກຈັບໄປເປັນຊະເລີຍເສິກ ຍັງມີຫລັກຖານທີ່ປາກົດຢູ່ຄື ສະໜາມກິລາໃນກຸງໂຣມຖືກສ້າງຂຶ້ນໂດຍພວກຢິວທີ່ເປັນຊະເລີຍເສິກ ສະພາບຂອງກຸງເຢຣູຊາເລັມທີ່ຖືກທຳລາຍລົງນັ້ນ ບໍ່ສາມາດທີ່ຈະບູຣນະສ້າງສາໃຫ້ກັບຄືນສູ່ສະພາບເດີມໄດ້ຈົນຮອດປັດຈຸບັນນີ້

ເຫດການກະບົດຂອງຊາວຢິວທີ່ມີຕໍ່ຣັຖບານໂຣມັນ ແລະການຕໍ່ສູ້ກັນເອງລະຫວ່າງຢິວກັບຢິວ ຈົນເປັນເຫດໃຫ້ກຸງເຢຣູຊາເລັມຖືກທຳລາຍໄດ້ສົ່ງຜົນສະທ້ອນ **ເຮັດໃຫ້ສາສນາຢູດາຍແລະສາສນາຄຣິສຕັດຂາດອອກຈາກກັນຢ່າງເດັດຂາດ** ຊຶ່ງແຕ່ເດີມນັ້ນພົລເມືອງສ່ວນໃຫຽ່ຍັງເຂົ້າໃຈວ່າ ຄຣິສຈັກເປັນສາຂານິກາຍນຶ່ງຂອງສາສນາຢິວ ໃນເວລານັ້ນສາສນາຢິວເປັນສາສນາທີ່ຖືກຕ້ອງຕາມກົດໝາຍຂອງຣາຊອານາຈັກໂຣມັນ ຕອນທຳອິດຊາວໂຣມບໍ່ເຫັນຄວາມແຕກຕ່າງຣະຫວ່າງຄຣິສຈັກກັບສາສນາຢິວ ຊາວຢິວລົບກວນຂົ່ມເຫງຄຣິສຕຽນ ເຈົ້າໜ້າທີ່ໂຣມກໍ່ໄດ້ປົກປ້ອງຄຣິສຕຽນບ້າງ ຕົວຢ່າງທ່ານໂປໂລໄດ້ຍື່ນຄຳອຸທອນຮ້ອງຂໍຕໍ່ຈັກກະພັດໂຣມັນ ເພື່ອຊ່ວຍໃຫ້ທ່ານພົ້ນຈາກການທຳຮ້າຍຂອງພວກຢິວ (ກິຈການ 25:6-12) ຕາມພຣະທັມກິຈການທ່ານລູກາໄດ້ຂຽນເຖິງເຫດການທີ່ທ່ານໂປໂລໄດ້ຮັບການປ່ອຍຕົວໃຫ້ພົ້ນຂໍ້ຫາ ເພາະວ່າຄຣິສຕຽນບໍ່ມີຄວາມຜິດໃດ ໆ ທີ່ຈະກ່າວຫາໃສ່ໂທດໄດ້ (ກິຈການ 26:30-32, 28:30-31) ພາຍຫລັງກຸງເຢຣູຊາເລັມແຕກແລ້ວຄຣິສຕຽນໄດ້ເພີ່ມເຕີມມີຈຳນວນຫລາຍຂຶ້ນ <u>ແລະເຫັນໄດ້ແຈ່ມແຈ້ງຍິ່ງຂຶ້ນວ່າສາສນາຄຣິສກັບສາສນາຢິວແຕກຕ່າງກັນຢ່າງເດັດຂາດ</u> ຣັຖບານໂຣມເຫັນວ່າຄຣິສຕຽນເປັນລັດທິໃໝ່ທີ່ທົວແຂງເປັນອັນຕລາຍຕໍ່ການປົກຄອງ ແລະມີຄວາມເຊື່ອແຜ່ຂຍາຍໄປຍັງຄົນຕ່າງຊາດໄດ້ໄວຫລາຍທີ່ສຸດ ເມື່ອທ່ານໂປໂລຕິດຄຸກໃນກຸງໂຣມທີ່ນັ້ນໄດ້ມີຄົນກັບໃຈມາເປັນຄຣິສຕຽນຈົນເຖິງໃນຣາຊວັງຊີຊາ (ຟີລິປອຍ 1:13, 4:22)

## III. ຄຣິສຕຽນຖືກຂົ່ມເຫັງຕລອດມາ

ການຂົ່ມເຫັງຄຣິສຕຽນໄດ້ເກີດຫລາຍຂຶ້ນຕລອດມາ ເກີດຈາກພວກປ໊ອທີ່ມັກໃສ່ຮ້າຍປ້າຍສີຄວາມຜິດໃຫ້ຄຣິສຕຽນ ການຂົ່ມເຫັງໄດ້ເພີ່ມທວີຫລາຍຂຶ້ນ ເມື່ອຈັກກະພັດຂອງໂຣມບາງອົງມີຄວາມເສັຍຈິດຄິດແຜນການຊົ່ວ ແລະປ້າຍຄວາມຜິດເຫລົ່ານັ້ນໃສ່ຄຣິສຕຽນ ວ່າຄຣິສຕຽນເປັນຜູ້ກະທຳຜິດ ຕົວຢ່າງໃນປະມານ ຄ.ສ.64 ເກີດເພີງໄຟໄໝ້ຢ່າງໃຫຍ່ຫລວງທີ່ກຸງໂຣມ ມີຫລັກຖານທີ່ໜ້າເຊື່ອຖືກັນວ່າຈັກກະພັດອົງນຶ່ງຊື່ວ່າ ນີໂຣ (NERO) ຜູ້ເສັຍຈິດເປັນຜູ້ວາງເພີງໃນຄັ້ງນີ້ ເພາະຢາກເຫັນວ່າຖ້າຈຸດໄຟໃຫ້ໄໝ້ກຸງໂຣມຢ່າງສວ່າງສໄຫວແລ້ວຄົງຈະໜ້າຕື່ນເຕັ້ນຫລາຍ ພາຍຫລັງເຫດການໄຟໄໝ້ເກີດຂຶ້ນແລ້ວກໍ່ໃຫ້ເກີດຄວາມເສັຍຫາຍຢ່າງໃຫຍ່ຫລວງ ເປັນເຫດໃຫ້ປະຊາຊົນຄຽດແຄ້ນ ແລະຮັບຄວາມທຸກຍາກລຳບາກ ເມື່ອເປັນດັ່ງນັ້ນຈັກກະພັດ ນີໂຣ ກໍ່ມີຄວາມຢ້ານວ່າປະຊາຊົນຈະຮູ້ຈັກຄວາມຈິງ ວ່າຕົນເປັນຜູ້ວາງເພີງໃຫ້ໄໝ້ກຸງໂຣມ ຈຶ່ງໄດ້ອອກຂ່າວຊ່າລືວ່າພວກຄຣິສຕຽນເປັນຜູ້ວາງເພີງໄຟໄໝ້ ນອກຈາກນີ້ຄຣິສຕຽນຍັງເປັນຜູ້ທີ່ຖືກຂໍ້ຫາວ່າເປັນພວກຊົ່ວຮ້າຍ ຖືໃສຍະສາດອັນໜ້າລັງກຽດ ຄຣິສຕຽນມັກມີການປະຊຸມກັນຢ່າງລັບ ໆ ມີເຄື່ອງໝາຍໄມ້ກາງແຂນອັນເປັນເຄື່ອງໝາຍແຫ່ງຄວາມຕາຍ (ຊຶ່ງຣັຖບາລໂຣມຜູ້ທີ່ຖືກໃສ່ໂທດໂດຍຄຶງໄວ້ເທິງໄມ້ກາງແຂນເປັນຜູ້ທີ່ມີໂທດໜັກທີ່ສຸດ) ຂ່າວຊ່າລືວ່າຄຣິສຕຽນປະຊຸມກັນ ມີການກິນເນື້ອຄົນ ແລະດື່ມເລືອດຮ່ວມກັນເປັນປະຈຳ ແທ້ຈິງນັ້ນພິທີຣະລຶກເປັນພິທີທີ່ຄຣິສຕຽນຖືປະຕິບັດຕາມຄຳສັ່ງການລ້ຽງຄັ້ງສຸດທ້າຍຂອງພຣະເຢຊູຄຣິສ ພຣະອົງກ່າວວ່າ "ນີ້ແຫລະ ຄືກາຍຂອງເຮົາຊຶ່ງໃຫ້ສຳລັບພວກເຈົ້າ ຈົ່ງເຮັດຢ່າງນີ້ໃຫ້ເປັນທີ່ຣະລຶກເຖິງເຮົາ ... ຈອກນີ້ຄືຄຳສັນຍາໃໝ່ໂດຍເລືອດຂອງເຮົາ ເມື່ອເຈົ້າດື່ມຈາກຈອກນີ້ເວລາໃດຈົ່ງດື່ມເປັນທີ່ຣະລຶກເຖິງເຮົາ" (1ໂກຣິນໂທ 11:24-25) ບໍ່ແມ່ນເປັນການກິນເລືອດເນື້ອກັນຈິງ ໆ

ທ່ານເທຊິຕັສ ຜູ້ໃສ່ຮ້າຍຄຣິສຕຽນ ໄດ້ຂຽນໃນໜັງສືຈາຣຶກວ່າພວກຄຣິສຕຽນເຮັດຊົ່ວສົມຄວນຂ້າໃຫ້ຕາຍ ດັ່ງນັ້ນການຂົ່ມເຫັງຈຶ່ງເກີດຫລາຍຂຶ້ນ ຄຣິສຕຽນຈຳນວນຫລວງຫລາຍກາຍເປັນເຄື່ອງຫລິ້ນໃນສນາມກິລາອັນໜ້າເພີດເພີນສນຸກສນານຂອງຊາວໂຣມັນ ພວກໂຣມັນຈັບຄຣິສຕຽນໃຫ້ນຸ່ງເຄື່ອງຂົນສັດແລ້ວເອົາລົງໄປໃນສະນາມກິລາ ໃຫ້ໝາຈິ້ງຈອກຫລືສິງໂຕທີ່ຫິວກະຫາຍກັດສີກເນື້ອເປັນຊິ້ນ ໆ ຄຣິສຕຽນບາງຄົນຖືກຈັບໄປມັດຕິດໄວ້ກັບເສົາເອົານ້ຳມັນຖອກໃສ່ໃຫ້ປຽກ ແລ້ວເອົາໄຟຈູດເຜົາທັງເປັນ ເຮັດໃຫ້ເກີດແສງສວ່າງໃນພຣະຣາຊວັງໃນຍາມກາງຄືນ ຈັກກະພັດນີໂຣແລະອີກຫລາຍ ໆ ຈັກກະພັດມີຄວາມໂຫດຮ້າຍທາລຸນມັກສນຸກສນານກັບກິລາເຫລົ່ານີ້ແລະເກີດຄວາມພູມໃຈທີ່ເຫັນຄຣິສຕຽນຖືກເຜົາໄຟໃຫ້ຕາຍທັງເປັນ ຄວາມໂຫດຮ້າຍນີ້ແມ້ກະທັ້ງຜູ້ທີ່ກຽດຊັງຄຣິສຕຽນ ຮູ້ສຶກທົນບໍ່ໄຫວ ແລະມີຄວາມເຫັນໃຈຄຣິສຕຽນ ພ້ອມກັນນັ້ນກໍ່ເຫັນວ່າ ຈັກກະພັດນີໂຣບໍ່ໄດ້ເຮັດປະໂຍດອັນໃດໃຫ້ແກ່ປະຊາຊົນ (ອີງຕາມໜັງສື Tacitus, Annals ເຫລັ້ມ 16 ບົດທີ 44)

ເຊື່ອກັນວ່າທ່ານເປໂຕ ແລະທ່ານໂປໂລໄດ້ຖືກຂົ່ມເຫງ ແລະຖືກປະຫານຊີວິດທີ່ກຸງໂຣມ ທ່ານ **ຄາລແມນ**ແຫ່ງກຸງໂຣມ ໄດ້ຂຽນຈົດໝາຍເຖິງຊາວເມືອງ ໂກຣິນໂທໃນປະມານ ຄ.ສ.96 ວ່າ ທ່ານເປໂຕ ແລະທ່ານໂປໂລໄດ້ຮັບການຂົ່ມເຫັງ *"ເຖິງວ່າ ທ່ານເປໂຕຈະຖືກການຂົ່ມເຫັງ ອິສສາໃສ່ຮ້າຍປານໃດກໍຕາມ ທ່ານໄດ້ອົດທົນຕໍ່ສູ້ກັບຄວາມຍາກລຳບາກບໍ່ແມ່ນແຕ່ເທື່ອນຶ່ງຫລືສອງເທື່ອ ແຕ່ຈົນນັບຄັ້ງບໍ່ໄດ້ ເມື່ອທ່ານໄດ້ເປັນພະຍານເພື່ອພຣະຄຣິສແລ້ວ ທ່ານກໍໄດ້ໄປຍັງບ່ອນທີ່ມີສງ່າຣາສີຂອງພຣະເຈົ້າຕາມ*

*ທີ່ທ່ານໄດ້ຖວາຍຊີວິດເພື່ອພຣະອົງ ທ່ານໂປໂລຄືກັນ ໄດ້ເປັນຕົວຢ່າງແກ່ພວກເຮົາໃນເຣື້ອງການອົດທົນ ທ່ານໂປໂລຖືກຂັງຢູ່ໃນຄຸກເຖິງເຈັດເທື່ອ ຖືກໄລ່ອອກຈາກເມືອງ ຖືກຄວ່າງດ້ວຍກ້ອນຫີນ ທ່ານອອກໄປປະກາດ ສັ່ງສອນທາງທິດຕາວັນອອກ ທິດຕາວັນຕົກ ແລະໄດ້ຮັບຊື່ສຽງດີເພາະຄວາມເຊື່ອຂອງທ່ານ ທ່ານສັ່ງສອນເຣື້ອງຄວາມຊອບທັມໄປທັງໂລກ ໄດ້ເດີນທາງໄປໄກສຸດໂລກຜ່ານຕະວັນຕົກ ທ່ານເປັນພະຍານຕໍ່ບັນດາເຈົ້າເມືອງແລ້ວທ່ານໄດ້ຈາກໂລກນີ້ໄປສູ່ທີ່ບໍຣິສຸດ ທັງໄດ້ພິສູດຕົວເອງວ່າໄດ້ເປັນແບບຢ່າງອັນຍິ່ງໃຫຍ່ໃນເຣື້ອງຄວາມອົດທົນດົນນານ" [1]*

**ໄດໂອນີຊຽດ**ແຫ່ງເມືອງໂກຣິນໂທຂຽນໄວ້ເມື່ອ ຄ.ສ.170 ເປັນຫລັກຖານອ້າງອີງໃຫ້ເຮົາຮູ້ວ່າ *"ໃນເມືອງໂກຣິນໂທຂອງເຮົາ ທັງສອງທ່ານ (ເປໂຕແລະໂປໂລ) ໄດ້ແນະນຳເຮົາໃນເຣື້ອງພຣະເຈົ້າ ແລະສອນເຮົາທັງຫລາຍຢ່າງດຽວກັນກັບ ທີ່ທ່ານໄດ້ກະທຳໃນອີຕາລີ ແລະທ່ານທັງສອງໄດ້ເສັຍຊີວິດເພື່ອພຣະເຢຊູຄຣິສເຈົ້າທີ່ນັ້ນໃນເວລາອັນໄລ່ເລັ່ຽກັນ" (ໃນປະມານ ຄ.ສ.67-68) [2]*

## IV. ການຂຽນພຣະທັມຄັມພີພາກພຣະສັນຍາໃຫມ່

ຄວາມຈິບຫາຍຂອງກຸງເຢຣູຊາເລັມໃນປີ ຄ.ສ.70 ນີ້ເອງ ເປັນຫົວລ້ຽວຫົວຕໍ່ທີ່ສຳຄັນ ທີ່ສະແດງໃຫ້ເຫັນວ່າ ບັດນີ້ໃນສມັຍຂອງຄຣິສຈັກຍຸກອັຄສາວົກກຳລັງສິ້ນສຸດລົງ ແລ້ວອັຄສາວົກທີ່ມີຊື່ສຽງສາມທ່ານ ຄື ທ່ານຢາໂກໂບ ທ່ານເປໂຕ ແລະທ່ານໂປໂລກໍໄດ້ຕາຍໄປແລ້ວ ຄຣິສຈັກກໍໄດ້ແຍກຕົວອອກຈາກສາສນາຢິວມາເປັນອີກສາສນານຶ່ງຕ່າງຫາກຢ່າງເດັດຂາດ ແຕ່ບຸກຄົນຜູ້ທີ່ຮູ້ຈັກພຣະເຢຊູຄຣິສເມື່ອພຣະອົງຍັງມີຊີວິດຢູ່ໃນໂລກນີ້ກໍຍັງມີຊີວິດຢູ່ອີກຫລາຍຄົນ ທ່ານໂຢຮັນລູກຂອງເຊເບດາຍ ຢູ່ທີ່ເມືອງເອເຟໂຊ ຈົນເຖິງອາຍຸແກ່ເຖົ້າ ແລະຍັງມີຫນັງສືໃນພຣະສັນຍາໃຫມ່ອີກຫລາຍເຫລັ້ມທີ່ຍັງບໍ່ໄດ້ຂຽນຂຶ້ນ ແຕ່ວ່າໃນປີ ຄ.ສ.70 ພຣະທັມຈົດຫມາຍຝາກຂອງທ່ານໂປໂລໄດ້ 13 ສບັບຂຽນຂຶ້ນແລ້ວ ມີຜູ້ເກັບຮວບຮວມໄວ້ ແລະສົ່ງວຽນໄປໃຫ້ກັນແລະກັນອ່ານໃນຕອນແຣກ ໆ ຖ້າຫາກພຣະທັມຢາໂກໂບເປັນທ່ານຢາໂກໂບນ້ອງຊາຍຂອງພຣະເຢຊູຄຣິສເປັນຜູ້ຂຽນແລ້ວ ກໍຕ້ອງຂຽນກ່ອນທ່ານຖືກຂ້າຕາຍເມື່ອປີ ຄ.ສ.62 ແລະກໍຄົງຂຽນຂຶ້ນກ່ອນປະມານ 10 ປີ ຫລືຫລາຍກວ່ານັ້ນ ພຣະທັມເປໂຕສບັບຕົ້ນຄົງຂຽນທີ່ກຸງໂຣມໃນຣະຍະປີ ຄ.ສ.64 ກ່ອນທ່ານເປໂຕຈະຖືກປະຫານຊີວິດ ພຣະທັມເຮັບເຣີຊຶ່ງບໍ່ຮູ້ຈັກຊື່ຜູ້ຂຽນນັ້ນກະວ່າເວລາການຂຽນຄົງປະມານ ຄ.ສ.67 ທີ່ກຳຫນົດໄວ້ດັ່ງນີ້ເພາະເຫດຜົນຕ່າງ ໆ ທີ່ອ້າງໃນພຣະທັມເຮັບເຣີກ່ຽວກັບເຣື້ອງພຣະວິຫານແລະການຖວາຍເຄື່ອງບູຊານັ້ນ ບໍ່ໄດ້ເວົ້າເຖິງວ່າພຣະວິຫານຖືກທຳລາຍລົງ ແລະບໍ່ໄດ້ເວົ້າການຖວາຍເຄື່ອງບູຊາວ່າໄດ້ເລີກລົ້ມໄປແລ້ວ

ຣາວ ຄ.ສ. 70 ນີ້ ເປັນທີ່ເຫັນພ້ອງຕ້ອງກັນວ່າ ພຣະທັມມາຣະໂກເປັນພຣະທັມຂ່າວປະເສີດທີ່ຂຽນຂຶ້ນເປັນເຫລັ້ມທຳອິດ ທ່ານມາຣະໂກເປັນຜູ້ທີ່ມີບົດບາດໃກ້ຊິດພຣະເຢຊູແລະໃຫຍ່ໃນຄອບຄົວຄຣິສຕຽນທີ່ກຸງເຢຣູຊາເລັມ ການລ້ຽງມື້ສຸດທ້າຍຂອງພຣະເຢຊູກັບເຫລົ່າອັຄສາວົກກໍໄດ້ຈັດການລ້ຽງຢູ່ໃນເຮືອນຂອງແມ່ທ່ານມາຣະໂກ ທ່ານມາຣະໂກເປັນຜູ້ສົນໃຈໄດ້ຮູ້ໄດ້ເຫັນເຫດການແລະຟັງຄຳສອນຂອງພຣະເຢຊູຢ່າງໃກ້ຊິດ (ມາຣະໂກ 14:51-52) ທ່ານຄົງໄດ້ຈົດບັນທຶກລົງໄວ້ ຄອບຄົວຂອງທ່ານມາຣະໂກມີຄວາມກະຕືອຣືລົ້ນໃນການອະທິຖານຕລອດຄືນ ເພື່ອທ່ານເປໂຕຈົນປະຕູຄຸກເປີດອອກຢ່າງອັສຈັນ (ກິຈການ 12:12)

ຣາວ ຄ.ສ. 80-85 ພຣະທັມຂ່າວປະເສີດມັດທາຍໄດ້ຂຽນຂຶ້ນສຳເດັດ

ຣາວ ຄ.ສ. 85-90 ພຣະທັມຂ່າວປະເສີດລູກາໄດ້ຂຽນຂຶ້ນສຳເຣັດ

ຣາວ ຄ.ສ. 90-95 ພຣະທັມຂ່າວປະເສີດໂຢຮັນ ແລະພຣະທັມພຣະນິມິດໄດ້ຂຽນຂຶ້ນສຳເຣັດ

ຣາວ ຄ.ສ. 95-100 ພຣະທັມຈົດຫມາຍໂຢຮັນທັງ 3 ສບັບໄດ້ຂຽນຂຶ້ນສຳເຣັດ

ຣາວ ຄ.ສ. 100-130 ພຣະທັມຕີໂມທຽວສບັບຕົ້ນແລະສບັບສອງ ແລະພຣະທັມຕີໂຕໄດ້ຂຽນຂຶ້ນສຳເຣັດ

ຣາວ ຄ.ສ. 130-150 ພຣະທັມຢູດາ ແລະພຣະທັມເປໂຕສບັບສອງໄດ້ຂຽນຂຶ້ນສຳເຣັດ

(ຫມາຍເຫດ ຄ.ສ. ທີ່ກ່າວໄວ້ທາງເທິງນັ້ນ ມີຕຳຣາຫລາຍ ໆ ສບັບໃຫ້ຄວາມຄິດເຫັນຕ່າງ ໆ ກັນ ແລ້ວແຕ່ວ່າຜູ້ຂຽນແຕ່ລະຄົນຈະສືບຊອກເອົາຫລັກຖານແລະຂໍ້ເທັດຈິງກ່ຽວກັບຜູ້ຂຽນພຣະທັມເຫລົ່ານີ້ ຈຶ່ງເຣັດໃຫ້ມີການສລູບເຣື້ອງວັນທີ່ແຕກຕ່າງກັນອອກໄປ)

## V. ຄຣິສຈັກເລີ້ມຕົ້ນເກີດຂຶ້ນໃນເຮືອນຂອງຜູ້ເຊື່ອ

ເຫດການສຳຄັນທີ່ປາກົດໃນພຣະຄຳພີຫລາຍຕອນ ດັ່ງຕົວຢ່າງການລ້ຽງຄັ້ງສຸດທ້າຍ (ມາຣະໂກ 14:12-26) ການປາກົດຕົວຂອງພຣະເຢຊູແກ່ອັຄສາວົກພາຍຫລັງເປັນຂຶ້ນຈາກຄວາມຕາຍ (ໂຢຮັນ 20:19-29) ການສະເດັດມາຂອງພຣະວິນຍານບໍຣິສຸດ (ກິຈການ 2 ) ເຫດການເຫລົ່ານີ້ໄດ້ເກີດຂຶ້ນໃນເຮືອນຂອງຜູ້ເຊື່ອທີ່ຢູ່ໃນກຸງເຢຣູຊາເລັມ ຊຶ່ງກ່າວເຖິງຫ້ອງຊັ້ນເທິງ ແລະອາດຈະເປັນເຮືອນຫຼັງດຽວກັນ ເມື່ອເຮົາເບິ່ງເຫດການທີ່ເກີດຂຶ້ນຄົງຈະເປັນຫ້ອງໃຫຍ່ທີ່ສາມາດບັນຈຸຄົນໄດ້ເຖິງ 120 ຄົນດັ່ງປາກົດໃນ (ກິຈການ 1:15)

ກິຈການບົດ 12 ໄດ້ຈາລຶກເຖິງເຮືອນຫລັງນຶ່ງທີ່ຄຣິສຕຽນໄປຊຸມນຸມອະທິຖານຢ່າງຮ້ອນຮົນ ເຫດການອັນຫນ້າອັສຈັນໄດ້ເກີດຂຶ້ນເມື່ອພຣະເຈົ້າເປີດປະຕູຄຸກປ່ອຍເປໂຕອອກຈາກທີ່ຄຸມຂັງ ຝ່າຍເປໂຕໄດ້ອອກຄຸກມາຢູ່ໃນເຮືອນຫລັງນັ້ນ ແລະຫລົບຊ້ອນຕົວຢູ່ທີ່ນັ້ນ ຍິງສາວຊື່ນາງໂຣດາຈຳສຽງຂອງທ່ານເປໂຕໄດ້ ນີ້ສະແດງໃຫ້ເຫັນວ່າເຮືອນນັ້ນຄົງໄດ້ເຄີຍໃຊ້ເປັນທີ່ປະຊຸມມາຫລາຍເທື່ອຈົນນາງສາມາດຈຳສຽງຂອງທ່ານເປໂຕໄດ້ ພວກທີ່ປະຊຸມກໍໄດ້ພາກັນຂອບຄຸນພຣະເຈົ້າທີ່ໄດ້ເຫັນຣິດອຳນາດຂອງພຣະເຈົ້າ ແລະຕອບຄຳອະທິຖານຂອງພວກເຂົາ

ເຮືອນດັ່ງກ່າວແມ່ນເຮືອນໃຜ ແມ່ນເປັນເຮືອນຂອງນາງມາເຣັຍ ແມ່ຂອງມາຣະໂກຜູ້ຂຽນພຣະທັມມາຣະໂກ ຄຣິສຕຽນຢຸກທຳອິດຄົງໄດ້ເຮືອນນີ້ເປັນທີ່ປະຊຸມເຫມືອນຄຣິສຈັກ ເພາະວ່າຍັງບໍ່ມີວິຫານຫລືອາຄານເປັນຂອງຄຣິສຕຽນເອງ ນອກຈາກເຮືອນທີ່ກ່າວມາແລ້ວ ພຣະຄັມພີໄດ້ຂຽນເຖິງຄຣິສຈັກໂດຍໃຊ້ເຮືອນຂອງຜູ້ເຊື່ອ ເປັນສະຖານທີ່ຊຸມນຸມແລະນມັສການ ຕົວຢ່າງຕາມເມືອງເຫລົ່ານີ້

| | | | |
|---|---|---|---|
| ກຸງໂຣມ | (ໂຣມ 16:14,16:14-15) | ເມືອງເອເຟໂຊ | (1 ຕທ 16:19) |
| ເມືອງ Laodicea | (ໂກໂລຊາຍ 4:15) | ເມືອງ Colossac | (ຟີເລໂມນ 1:2) |
| ເມືອງຟີລິປອຍ | ( ກິຈການ 16:40) | ເມືອງໂກຣິນໂທ | (ກິຈການ 18:7) |

ຄຣິສຈັກໄດ້ເກີດຂຶ້ນໃນເຮືອນຂອງຜູ້ເຊື່ອ ແລະໃຊ້ເປັນທີ່ນມັສການດັ່ງກ່າວຂ້າງຕົ້ນນັ້ນໄດ້ກ່າວເຖິງນາມຂອງຜູ້ເປັນເຈົ້າຂອງເຮືອນນີ້ ເຮືອນຂອງແມ່ຍິງແລະບາງຄົນກໍເປັນແມ່ຫມ້າຍ ບາງເຮືອນໄດ້ກ່າວນາມຂອງສາມີນຳ ແລະໄດ້ກ່າວເຖິງນາມຂອງສມາຊິກທີ່ເຂັ້ມແຂງບາງຄົນດ້ວຍ ການໃຊ້ເຮືອນ

ເປັນສຖານນມັສການນັ້ນບໍ່ໄດ້ມີແຕ່ສມັຍທຳອິດທີ່ຖືກຈາລຶກໃນພຣະຄັມພີເທົ່ານັ້ນ ແຕ່ຍັງຄົ້ນພົບວ່າໃນສັຕວັດທີ 2 ແລະ 3 ອັນເປັນຍຸກຂອງການຂົ່ມເຫັງຄຣິສຈັກຈາກພວກໂຣມັນ ຄຣິສຕຽນຍັງຄົງຊຸມນຸມກັນຕາມບ້ານເຮືອນ ໃນເວລາທີ່ສາສນາອື່ນ ໆ ຂອງຊາວໂຣມັນມີວິຫານສຳລັບເທວະຮູບ ສ່ວນພວກຍິວທີ່ຖືສາສນາຢິວກໍມີສາລາທັມ ພວກຄຣິສຕຽນເປັນກຸ່ມຊົນໃຫມ່ທີ່ຍັງບໍ່ໄດ້ຮັບການຍອມຮັບຈາກຣັຖບານໂຣມັນ ສົມບັດອັນດຽວທີ່ຊາວຄຣິສຕຽນເລີ້ມຕົ້ນມີໄວ້ຄື ທີ່ດິນອັນເປັນສຸສານຝັງສົບຂອງຜູ້ເຊື່ອ

ໃນປະມານ ຄ.ສ.250 ເຮົາພົບວ່າ ຄຣິສຈັກຖືກສ້າງຂຶ້ນບາງແຫ່ງເຊັ່ນ ທີ່ເມືອງພອນຕັສ (Pontus) ໃນເອເຊັຍນ້ອຍ ຊີເຣັຍ ແລະອີຢິບແຕ່ໃນເວລາດຽວກັນຄຣິສຈັກກໍຕ້ອງຖືກຂົ່ມເຫັງແລະທຳລາຍໄປໂດຍອຳນາດຂອງພວກໂຣມັນ

ທີ່ເມືອງ Dura Europos ຊາຍແດນຂອງອາຈັກໂຣມັນມີເຮືອນຫຼັງນຶ່ງຖືກໃຊ້ເປັນຄຣິສຈັກເພື່ອຊຸມນຸມນມັສການກັນ ແລະຍັງຄົງປາກົດຢູ່ຈົນເຖິງປັຈຈຸບັນນີ້ ນັກບູຮານຄະດີໄດ້ພົບເຮືອນນີ້ໃນ ຄ.ສ. 1934 ຊຶ່ງຝັງຢູ່ໃຕ້ດິນຊາຍ ແລະເຊື່ອວ່າເຮືອນນີ້ຄົງສ້າງຂຶ້ນໃນປະມານ ຄ.ສ.100 ແລະຖືກດັດແປງໃຫ້ເປັນທີ່ປະຊຸມໃນພາຍຫລັງໂດຍການຮື້ຝາກັ້ນຫ້ອງອອກ ຮວມເອົາສອງຫ້ອງເປັນຫ້ອງດຽວ ມີທັມມາສຂ້າງຫນ້າທີ່ປະຊຸມ ນອກຈາກນັ້ນຫ້ອງຖັດໄປພົບວ່າໄດ້ຈັດຕຽມໄວ້ສຳລັບບັບຕິສມາ ໂດຍໃຫ້ຄົນຍື່ນ ແລະເອົານ້ຳຫົດຫົວແລະທັງຕົວ ແລະມີຄຳຂຽນໄວ້ທີ່ຝາຫ້ອງວ່າ **ບາບຂອງທ່ານຖືກຍົກເສັຽແລ້ວ** ພ້ອມກັນນີ້ຍັງມີຮູບຂອງພຣະເຢຊູຊົງຮັກສາຄົນງ່ອຍ ຮູບຂອງພຣະເຢຊູຊົງຊ່ວຍລູກແກະຈາກສຸນັກປ່າ (ຕາມໂຢຮັນ 10:14-16) ແລະຮູບອື່ນ ໆ ຕາມຂໍ້ພຣະຄັມພີຕ່າງ ໆ ຢູ່ເທິງຝາຫ້ອງ

ຄຣິສຕຽນຍຸກທຳອິດມີສະພາບຄວາມເປັນຢູ່ໂດຍການຊົງນຳຂອງພຣະວິນຍານບໍຣິສຸດ ເພື່ອຮວບຮວມເອົາຜູ້ເຊື່ອກໍ່ຕັ້ງຄຣິສຈັກຂຶ້ນ ອັນເປັນການຮວມເອົາຜູ້ເຊື່ອມານມັສການ ແລະເພື່ອຊຸມນຸມຮ່ວມກັນເພື່ອການດີ ແລະເພື່ອພຣະຣາຊະກິດຕາມນຳພຣະທັຍຂອງພຣະເຈົ້າ ແຕ່ວ່າເຮົາຕ້ອງຄິດເຖິງວ່າ ເມື່ອມີຄົນຫລາຍ ໆ ຄົນທີ່ມີນິສັຍ ຄວາມຄິດເຫັນ ຄວາມສາມາດຕ່າງກັນມາຮ່ວມກັນເຂົ້າກໍຍ່ອມນຳໃຫ້ເກີດບັນຫາ ຄວາມຜິດພາດ ຄວາມທໍ້ຖອຍ ແລະການແຕກແຍກຢູ່ນຳ ໂດຍສະເພາະຢ່າງຍິ່ງ ເມື່ອມີເຂົ້ານົກປົນເຂົ້າດີ (ມັດທາຍ 13:25) ກໍຍ່ອມກໍ່ໃຫ້ເກີດບັນຫາຢ່າງທີ່ພວກເຮົາມີໃນປັດຈຸບັນຄືກັນ ແຕ່ວ່າຄວາມແຕກຕ່າງຫລືບັນຫາ ບໍ່ຄວນເປັນຊຶ່ງທີ່ເຮັດໃຫ້ເຮົາທໍ້ໃຈແລະລະຖິ້ມການຮັບໃຊ້ ຄວນເສີມສ້າງຄຣິສຈັກຂອງພຣະອົງຈົນກວ່ານ້ຳພຣະທັຍ ແລະພຣະປະສົງຂອງພຣະອົງສຳເຣັດ

---

## ຂໍ້ອ້າງອີງ

[1] ເຄລເມນຕ໌ແຫ່ງໂຣມ ທັມສານເຖິງຊາວໂກຣິນໂທບົດທີ 5 ຄຳວ່າ "ໄກລສຸດໂລກຕາວັນຕົກ" ຫມາຍເຖິງປະເທດສະເປນ (ທຽບກັບ ໂຣມ 15:24)

[2] ໃນພຣະທັມ 1 ໂຄຣິນໂທ 1:12 ຄົງຫມາຍຄວາມວ່າທ່ານເປໂຕເຄີຍໄປເມືອງໂກຣິນໂທ ເຮົາບໍ່ຮູ້ວ່າ ທ່ານໄປເຖິງກຸງໂຣມແຕ່ເມື່ອໃດ ຄົງບໍ່ແມ່ນກ່ອນເວລາທີ່ທ່ານໂປໂລຖືກຈຳຄຸກຮາວ ຄ.ສ.

60-62 ແຕ່ໃນພຣະທັມ 1 ເປໂຕ 5:13 "ບາບີໂລນ" ໝາຍເຖິງ "ກຸງໂຣມ" ຈຶ່ງເຂົ້າໃຈວ່າ ທ່ານເປໂຕຣຂຽນຈົດໝາຍສບັບນີ້ຂຶ້ນ (ອ້າງອີງ ຈາກເປຊູຊາເລັມສູ່ນິວເດລຣີ 1989, ຫົວຂໍ້ເຣື້ອງ ການຂົ່ມເຫັງຄັ້ງແຣກຂອງຣັຖບາລໂຣມ, ກຸງເປຣູຊາເລັມແຕກ ໜ້າ 9)

# ບົດທີ 3

## ຍຸກຂົ່ມເຫັງຄຣິສຈັກ ແລະການເກີດລັດທິນອກຣີດ

ຄ.ສ. 100-313



### I. ຍຸກຂົ່ມເຫັງຄຣິສຈັກ

ປະວັດສາດຄຣິສຈັກໃນຍຸກນີ້ ນັບຕັ້ງແຕ່ການຕາຍຂອງທ່ານອັຄສາວົກໂຢຮັນ ໃນຣາວຄ.ສ. 100 ໄປຈົນເຖິງ ຄ.ສ.313 ນັບເປັນຣະຍະເວລາຮວມກັນແລ້ວປະມານ 200 ປີ ທີ່ຣາຊອານາຈັກໂຣມັນມີຄວາມສງົບສຸກທາງດ້ານການເມືອງບໍ່ມີເສິກສົງຄາມຫລາຍ ຈັກກະພັດທັງຫລາຍໄດ້ວາງຮູບແບບການປົກຄອງ ແລະແຕ່ງຕັ້ງສຖາປານາຜູ້ທີ່ສືບຣາຊວົງອົງຕໍ່ໄປ ເພື່ອດຳລົງຕຳແໜ່ງເຈົ້າຊີວິດ ດັ່ງນັ້ນການແຍ້ງຊິງອຳນາດຈຶ່ງລົດນ້ອຍລົງ ແລະເປັນທີ່ໜ້າສັງເກດວ່າ ເມື່ອການເມືອງສງົບສຸກປະເທດຊາດບໍ່ມີເສິກສົງຄາມ ຄວນຈະເປັນໂອກາດດີແກ່ຄຣິສຈັກແລະຄຣິສຕຽນທັງຫລາຍ ທີ່ຈະມີອິສຣະພາບໃນການປະກາດຄວາມເຊື່ອ ແຕ່ໃນທາງກົງກັນຂ້າມ ພວກຈັກກະພັດເຫລົ່ານັ້ນ ວ່າງຈາກການເສິກ ກັບຫັນມາສົນໃຈຈັບຜິດຄຣິສຕຽນຫລາຍຂຶ້ນ ຈັກກະພັດຕ່າງ ໆ ໄດ້ຂົ່ມເຫັງຄຣິສຈັກ ຫາກວ່າຄຣິສຕຽນຜູ້ໃດທີ່ມີໜ້າທີ່ຫລືຕຳແໜ່ງໃນຣາຊການ ອາດຖືກຈັບ ຖືກທຳຮ້າຍ ຫລືຖືກຂ້າໃນຍາມໃດກໍ່ເປັນໄດ້ ຣັຖບານໂຣມັນຍັງບໍ່ໄດ້ຍອມຮັບສາສນາຄຣິສຢ່າງເປັນທາງການຖືກຕ້ອງຕາມກົດໝາຍ ດັ່ງນັ້ນຈຶ່ງບໍ່ມີກົດໝາຍທີ່ໃຫ້ການຄຸ້ມຄອງແກ່ຄົນທີ່ເອີ້ນຕົວເອງວ່າ "ເປັນຄຣິສຕຽນ"

**ສາເຫດທີ່ຄຣິສຕຽນຕ້ອງຖືກຂົ່ມເຫັງຢ່າງໜັກ**

1. **ຖືພຣະເຈົ້າອົງດຽວ** ຄຣິສຕຽນບໍ່ຍອມອ່ອນກັບພິທີໃດ ໆ ເຊັ່ນ ການຂາບໄຫວ້ບູຊາຕໍ່ເທວະຮູບຂອງຈັກກະພັດຫລືຮູບປັ້ນຂອງຈັກກະພັດ ໃນສມັຍນັ້ນຣັດຖບານໂຣມໄດ້ອອກຄຳສັ່ງໃຫ້ ປະຊາຊົນສະແດງຄວາມຈົ່ງຮັກພັກດີຕໍ່ຈັກກະພັດ ໂດຍການໂຮຍເຄື່ອງຫອມ ຕໍ່ຮູບຂອງຈັກກະພັດ ແລະໃຫ້ຂາບໄຫວ້ຮູບ

ປັ້ນຈັກກະພັດນັ້ນ ຄືກັນກັບພຣະເຈົ້າ ຄຣິສຕຽນບໍ່ຍອມກະທຳຕາມແບບນັ້ນ ບໍ່ຍອມເຂົ້າພິທີບໍ່ຍອມຂາບໄຫວ້ ເພາະຖືວ່າພຣະເຈົ້າຜູ້ທ່ຽງແທ້ມີແຕ່ພຣະອົງດຽວຄື ພຣະຢາໂຮວາຜູ້ສູງສຸດ  ດັ່ງນັ້ນຄຣິສຕຽນຈຶ່ງຖືກຂໍ້ຫາວ່າ ທໍລະຍົດເປັນກະບົດ ບໍ່ຈົ່ງຮັກພັກດີຕໍ່ຈັກກະພັດຂອງຊາວໂຣມັນ  ພວກຢິວທີ່ຖືສາສນາຢິວ ກໍ່ມີບັນຫາຄືກັນກັບຄຣິສຕຽນ  ຕ່າງກັນແຕ່ວ່າພວກຢິວບໍ່ຍອມຮ່ວມປະປົນກັບຊາວຕ່າງຊາດ  ດົນ ໆ ຈຶ່ງມີຄົນຕ່າງຊາດເຂົ້າມາຖືທັມບັນຍັດ ຕາມສາສນາຢິວ ສ່ວນຄຣິສຕຽນເປັນພວກທີ່ມີໃຈກ້າຫານ ປະກາດຂ່າວປະເສີດຂອງພຣະເຢຊູຄຣິສບໍ່ໄດ້ຢຸດຢັ້ງ  ມີຊາວຕ່າງຊາດກັບໃຈເຂົ້າມາເປັນຄຣິສຕຽນຈຳນວນຫລາຍ ຊາວຕ່າງຊາດທີ່ມາເປັນຄຣິສຕຽນໄດ້ປ່ຽນຊີວິດ  ແຕ່ຍັງຄົງປະປົນຢູ່ຮ່ວມກັບປະຊາຊົນໂດຍທົ່ວໄປ ຈຶ່ງເຫັນໄດ້ຢ່າງຊັດເຈນວ່າ ຄຣິສຕຽນບໍ່ຍອມທຳພິທີຕາມສາສນາອື່ນ ໆ ແລະບໍ່ຍອມຂາບໄຫວ້ຮູບປັ້ນຈັກກະພັດ ເລີຍກາຍເປັນທີ່ລັງກຽດ ເຮັດໃຫ້ຖືກຂົ່ມເຫັງແລະຖືກທຳຮ້າຍ

2. **ການປະຊຸມຂອງຄຣິສຕຽນ** ເພາະວ່າເມື່ອຄຣິສຕຽນຍິ່ງຖືກຂົ່ມເຫັງຫລາຍຂຶ້ນ ຄຣິສຕຽນກໍຕ້ອງພຍາຍາມປະຊຸມກັນຢ່າງລັບ ໆ ຕາມບ້ານຕາມຖ້ຳ ຕ້ອງປະຊຸມແຕ່ຕອນເຊົ້າມືດຂອງວັນອາທິດ ຫລືໃນຕອນກາງຄືນ ມີເຄື່ອງຫມາຍທີ່ບອກກັບຜູ້ອື່ນ ຂຽນໄວ້ທີ່ກຳແພງຫລືຕາມທາງ ເພື່ອເປັນປ້າຍບອກເຖິງສະຖານທີ່  ທີ່ຄຣິສຕຽນເຕົ້າໂຮມຊຸມນຸມກັນ ເມື່ອພວກຣັດຖບານໂຣມັນເຫັນແລ້ວກໍ່ຄິດວ່າ  ນີ້ເປັນການປະຊຸມຂອງລັດທິລຶກລັບ ຫລືສະມາຄົມລັບທີ່ອາດຈະກໍ່ການກະບົດ ຈຶ່ງໄດ້ພຍາຍາມຢ່າງສຸດ ທີ່ຈະທຳລາຍພວກຄຣິສຕຽນໃຫ້ຫມົດສິ້ນ

3. **ການຖືພິທີຣະລຶກເຖິງພຣະເຢຊູຄຣິສ** (ຫລືພິທີມະຫາສະນິດ) ພວກຄຣິສຕຽນບໍ່ຍອມໃຫ້ຄົນທີ່ບໍ່ເປັນຄຣິສຕຽນເຂົ້າຮ່ວມໃນພິທີນີ້  ດ້ວຍເຫດນີ້ພວກສັດຕູກໍໄດ້ສວຍໂອກາດປ່າວຂ່າວວ່າ  ການປະຊຸມຂອງຄຣິສຕຽນທຸກເທື່ອມີການຂ້າຄົນ ມີການກິນເລືອດ ແລະກິນເນື້ອ ເພາະວ່າໃນເວລາທຳພິທີ  ຄຣິສຕຽນຈະໃຊ້ຄຳວ່າ "ນີ້ຄືກາຍຂອງເຮົາ ນີ້ຄືໂລຫິດຂອງເຮົາ ຈົ່ງກິນເພື່ອຣະລຶກເຖິງເຮົາ"

4. **ຄຣິສຕຽນໃຫ້ທຸກຄົນມີສິດທິສເມີພາບກັນ**  ພວກຄຣິສຕຽນໃຫ້ກຽດແກ່ທຸກ ໆ ຄົນ  ດັ່ງນັ້ນຄຣິສຕຽນຈຶ່ງມີການປົດປ່ອຍ ຜູ້ທີ່ເປັນທາດຂອງຕົນ ແລະບາງເທື່ອໄດ້ຍົກຍ້ອງທາດໃຫ້ເປັນເຈົ້າຫນ້າທີ່ຄຣິສຈັກຕາມການຊົງຮຽກຂອງພຣະເຈົ້າ ພວກເຈົ້ານາຍແລະພວກທີ່ຖືຍົດສັກຕຳແຫນ່ງ ແລະພວກຂຸນນາງຂ້າຣາຊການຖືວ່າ ການກະທຳຂອງຄຣິສຕຽນເປັນການທຳລາຍຊັ້ນວັນນະຍົດຖາບັນດາສັກ ເຮັດໃຫ້ຜິດໄປຈາກຣະບຽບຂອງສັງຄົມໃນເວລານັ້ນ  ອາດຈະເຮັດໃຫ້ທາດອື່ນ ໆ ແຂງຂໍ້ຕໍ່ສູ້ ເຫດນີ້ຄຣິສຕຽນກໍປຽບເຫມືອນກັບວ່າເປັນຜູ້ທຳລາຍລະບຽບສັງຄົມແລະການປົກຄອງ

5. **ຄຣິສຕຽນເພີ່ມເຕີ່ມຫລາຍຂຶ້ນ** ເຖິງວ່າໃນເວລານັ້ນຄຣິສຕຽນຈະຖືກຂ້າຫລືຂົ່ມເຫັງທຳລາຍກໍຕາມ ແຕ່ວ່າຄຣິສຕຽນກໍເພີ່ມເຕີ່ມຫລາຍຂຶ້ນ ເພາະມີຄວາມແຂງແຮງໃນການປະກາດຂ່າວປະເສີດ ຈົນເປັນເຫດໃຫ້ການຄ້າຂາຍຮູບປັ້ນຂອງພວກຊ່າງປັ້ນຮູບພຣະ ຊ່າງແກະສະຫລັກ ຊ່າງກໍ່ສ້າງວິຫານຂອງເທວະຮູບ (ຫລືຮູບປັ້ນ) ນັ້ນບໍ່ພໍໃຈ ເພາະວ່າຄຣິສຕຽນເທສນາຕໍ່ຕ້ານສິ່ງເຫລົ່ານັ້ນ ເຮັດໃຫ້ພໍ່ຄ້າເຫລົ່ານີ້ເສັຽຜົນປະໂຍດ ຈຶ່ງຫາເຫດຜົນມາຂົ່ມເຫັງຄຣິສຕຽນ  ດັ່ງຕົວຢ່າງທີ່ທ່ານໂປໂລຕ້ອງຕົກຢູ່ໃນອັນຕລາຍເກືອບຕາຍທີ່ເມືອງເອເຟໂຊ

ການຂົ່ມເຫງໃນສັດຕະວັດທີ່ 2 ແລະທີ່ 3 ນີ້ຮວມເປັນເວລາປະມານໄດ້ 200 ປີ ມີຣະຍະເວລາສັ້ນ ໆ ເປັນບາງເທື່ອທີ່ຄຣິສຈັກແລະຄຣິສຕຽນຢູ່ໂດຍບໍ່ຖືກຂົ່ມເຫັງຢ່າງຮຸນແຮງ ຊຶ່ງເປັນຣະຫວ່າງເວລາອັນສງົບສຸກ ທີ່ຄຣິສຈັກໄດ້ຂະຫຍາຍອອກໄປ ແຕ່ເຖິງປານນັ້ນ ຄຣິສຕຽນທັງຫລາຍກໍຕ້ອງຣະວັງຕົວຢູ່ສເມີເພາະບໍ່ຮູ້ຈັກວ່າການຂົ່ມເຫັງອາດຈະເກີດຂຶ້ນໃນຍາມໃດກໍໄດ້ ໃນຣະຍະເວລາອັນສງົບສຸກນີ້ ມີແຕ່ພຽງສັ້ນ ໆ ເທົ່ານັ້ນ ແລ້ວການຂົ່ມເຫັງໄດ້ເກີດຂຶ້ນມີມາອີກຢ່າງໂຫດຮ້າຍແລະທາຣຸນຫລາຍ ຊຶ່ງຕໍ່ເນື່ອງກັນເປັນເວລານານເປັນສິບປີແລະເປັນຮ້ອຍປີ ຄຣິສຕຽນຖືກຂ້າ ຖືກກັກຂັງ ຖືກໂຍນໃຫ້ສັດຮ້າຍກິນ ຖືກທຳລາຍໂດຍບັງຄັບໃຫ້ລະຖິ້ມຄວາມເຊື່ອ ພຣະຄັມພີກໍຖືກຈູດໄຟເຜົາຖິ້ມ ແຕ່ວ່າການທຳລາຍທີ່ມາຈາກສັດຕູຂອງພຣະເຢຊູຄຣິສບໍ່ສາມາດທຳລາຍຄຣິສຈັກໄດ້ ດັ່ງທີ່ພຣະເຢຊູໄດ້ຕັດໄວ້ໃນພຣະຄັມພີ ວ່າຄວາມຕາຍຈະບໍ່ສາມາດທຳລາຍຄຣິສຈັກໄດ້ ຄຣິສຈັກຂອງພຣະຄຣິສແຮງກັບຈະເຣີນຮຸ່ງເຮືອງຫລາຍຂຶ້ນ ຍິ່ງເຕີບໃຫຍ່ແຜ່ຜາຍອອກໄປ ພຣະຄັມພີຖືກຈູດໄຟຫລາຍ ໆ ເທື່ອກໍຍັງບໍ່ຫມົດ ພຣະວິນຍານບໍຣິສຸດຊົງປົກປ້ອງຮັກສາເຫລົ່າວິນຍານຈິດຂອງຜູ້ເຊື່ອ (ໃນຕອນທ້າຍບົດທ່ານຈະໄດ້ພົບລາຍຊື່ກະສັດບາງອົງທີ່ເປັນຜູ້ທຳລາຍຄຣິສຕຽນຢ່າງໂຫດຮ້າຍ) ປວັດສາດໄດ້ຈາຣຶກເຖິງຄຣິສຕຽນບາງທ່ານທີ່ໄດ້ຮັບການຂົ່ມເຫງ ດັ່ງຕົວຢ່າງ

**ທ່ານຊີໂມນ** (ມາຣະໂກ 6:3) ຜູ້ຮັບຕຳແຫນ່ງຕໍ່ຈາກທ່ານຢາໂກໂບ ນ້ອງຊາຍຂອງພຣະເຢຊູຄຣິສ ທ່ານມີອາຍຸຍືນຍາວເຖິງຮ້ອຍຊາວປີ ທ່ານຖືກຜູກມັດຕາຍເທິງກາງແຂນ ທີ່ປາເລສໄຕນ໌ດ້ວຍຄຳສັ່ງຂອງຂ້າຫລວງໂຣມັນ ໃນປະມານ ຄ.ສ.107

**ທ່ານອີສເນຕິອຸສ** ເປັນບິຊອບຫລືເຈົ້າອະທິການ ເປັນຕຳແຫນ່ງຄືກັນກັບສິດຍາພິບາລໃຫຍ່ປະຈຳແຂວງຫລືເຈົ້າອາວາສຂອງຄຣິສຈັກ ອັນຕິໂອເກັຽ ໃນປະເທດຊີເຣັຽ ທ່ານເຕັມໃຈໃຫ້ຖືກປະຫານຊີວິດຢ່າງທາຣຸນ ຖືວ່າເປັນກຽດແລະສັກສີອັນໃຫຍ່ຫລວງ ທີ່ໄດ້ຕາຍເພື່ອພຣະນາມຂອງພຣະຄຣິສ ແລະຖືກຖິ້ມລົງໃຫ້ສັດຮ້າຍກິນ ໃນປະມານ ຄ.ສ.108 ຫລື 110

**ທ່ານໂປຣີຂາບ** ເປັນສິດຂອງທ່ານໂຢຮັນ ເປັນເຈົ້າອະທິການໃນຄຣິສຈັກຊະມູຣະນາໃນເອເຊັຍນ້ອຍ ທ່ານຮັບໃຊ້ຢູ່ທີ່ນັ້ນມານານຫລາຍກວ່າຫ້າສິບປີແລ້ວ ທ່ານຖືກນຳຕົວໄປຕໍ່ຫນ້າຂ້າຫລວງໂຣມັນ ທ່ານຖືກສັ່ງໃຫ້ສາບແຊ່ງພຣະນາມຂອງພຣະເຢຊູຄຣິສ ແຕ່ທ່ານໂປຣີຂາບໄດ້ກ່າວຕອບຂ້າຫລວງ ແລະຕໍ່ຄົນທັງປວງວ່າ "ຂ້າພະເຈົ້າຮັບໃຊ້ພຣະເຈົ້າມາໄດ້ນານ 86 ປີ ແລ້ວ ພຣະອົງບໍ່ເຄີຍໃຫ້ການຖ່ອຍຮ້າຍຕໍ່ຂ້າພະເຈົ້າຈັກເທື່ອ ຂ້າພະເຈົ້າມີແຕ່ໄດ້ຮັບພຣະຄຸນທີ່ມາຈາກພຣະອົງ ຂ້າພະເຈົ້າຈະສາບແຊ່ງພຣະອົງຜູ້ຊ່ວຍໃຫ້ຣອດພົ້ນໄດ້ຢ່າງໃດ" ທ່ານໂປຣີຂາບຖືກລົງໂທດໂດຍຖືກເຜົາທັງເປັນ ແຕ່ເນື່ອງຈາກລົມພະຍຸແຮງໄຟຈຶ່ງພັດອອກໄປ ບໍ່ສາມາດເຜົາຕົວທ່ານໄດ້ ໃນທີ່ສຸດທະຫານໄດ້ເອົາມີດແທງທ່ານ ເພື່ອໃຫ້ທ່ານສິ້ນໃຈຕາຍ ໃນ ຄ.ສ. 155

**ທ່ານໂປທິນຸສ** ເປັນເຈົ້າອາທິການຄຣິສຈັກທີ່ເມືອງຣິອອງ ທ່ານອາຍຸໄດ້ 90 ປີແລ້ວ ທ່ານມີສຸຂພາບອ່ອນແອ ແລະທ່ານຖືກຈັບໄປທໍຣະມານ ທີ່ເມືອງຣິອອງໃນປະມານ ຄ.ສ.177 ໃນຈຳນວນຜູ້ຖືກທໍຣະມານນັ້ນມີຍິງທາດຄົນນຶ່ງຊື່ ບະລັນດິນາ ໄດ້ຖືກທໍຣະມານຢ່າງແສນສາຫັດ ເພື່ອສາຣະພາບ ວ່າຄຣິສຕຽນຂ້າຄົນ ກິນຄົນ ກິນເລືອດຄົນ ນາງຕອບວ່າ "ຄຣິສຕຽນຈະຂ້າຄົນໄດ້ຢ່າງໃດ ໃນເມື່ອຄຣິສສາສນາຫ້າມຄຣິສຕຽນບໍ່ໃຫ້ກິນເລືອດສັດເປັນອາຫານ"

**ທ່ານຢຸສຕິນມາເຕີ** ເປັນອາຈານຜູ້ສິດສອນໃຫ້ສຖາບັນສຳຄັນ ໆ ແລະເປັນຜູ້ຂຽນປະວັດສາດ ທ່ານໄດ້ກັບໃຈມາເປັນຄຣິສຕຽນ ທ່ານເປັນຜູ້ມີສະຕິປັນຍາໃນການສິດສອນ ມີຊື່ສຽງໃນສະໄໝຂອງທ່ານ ທ່ານໄດ້ຂຽນໜັງສືເປັນຫລັກຖານອັນມີຄຸນຄ່າ ໃຫ້ເຮົາໄດ້ຮູ້ຈັກເຖິງເຣື່ອງຣາວຂອງປະວັດສາດຄຣິສຈັກໃນສັດຕະວັດທີ່ສອງ ທ່ານຖືກຂ້າຕາຍທີ່ກຸງໂຣມໃນ ຄ.ສ. 166

**ທ່ານໄຊປຣຽນ** ມີອາຊີພເປັນນັກກົດໝາຍ ທ່ານໄດ້ເປັນເຈົ້າອະທິການປະຈຳຄຣິສຈັກໃນເມືອງຄາເທັກຫລັງຈາກທີ່ຮັບເຊື່ອເປັນຄຣິສຕຽນໄດ້ພຽງສອງປີ ຕໍ່ມາໃນຣາຊການຂອງເຈົ້າຊີວິດດີຊຽນ ຫລືດີຊີອຸສ ໃນປະມານ ຄ.ສ.250 ໄດ້ເລີ້ມການຂົ່ມເຫັງຢ່າງຮ້າຍແຮງຂຶ້ນອີກ ທ່ານໄຊປຣຽນຈຶ່ງຫລົບໜີໄປຊ່ອນຕົວເປັນເວລານຶ່ງປີ ຫລັງຈາກນັ້ນການຂົ່ມເຫັງໄດ້ສງົບລົງ ທ່ານໄຊປຣຽນຈຶ່ງຄິດທັນກັບມາສະແດງຕົວຍອມຮັບຄວາມທຸກທໍຣະມານໃນເຂດປົກຄອງຂອງທ່ານ ເປັນບ່ອນທີ່ທ່ານໄດ້ເປັນສັງຄະຣາດຢູ່ໃນເວລານັ້ນ ທ່ານຖືກປະຫານຊີວິດຕາຍໃນ ຄ.ສ.295

**ການຖືກຕັດສິດທິອອກຈາກຄວາມຣອດພົ້ນ**

ສາເຫດຄືວ່າເມື່ອທ່ານໄຊປຣຽນຜູ້ຊຶ່ງໄດ້ໜີການຂົ່ມເຫງ ແລະຫລົບຊ້ອນຕົວເປັນເວລານຶ່ງປີໄດ້ຄືນມາຍອມຮັບການຂົ່ມເຫັງ ແຕ່ວ່າພວກຄຣິສຕຽນທີ່ເຂັ້ມແຂງຮູ້ສຶກບໍ່ພໍໃຈຕໍ່ການຫລົບໜີຂອງທ່ານ ເໝືອນກັບວ່າທ່ານໄດ້ປະຕິເສດພຣະເຢຊູຄຣິສ ແລະເມື່ອທ່ານຄືນມາໃໝ່ຈຶ່ງເກີດບັນຫາໂຕ້ຖຽງກັນວ່າຄວາມຣອດພົ້ນຂອງທ່ານສູນເສັຽໄປຫລືບໍ່ ໃຜຈະເປັນຜູ້ຕັດສິນຄືນຄວາມຣອດພົ້ນໃຫ້ແກ່ທ່ານ ພາຍຫລັງເຖິງແມ່ນວ່າໃນທີ່ສຸດທ່ານໄຊປຣຽນໄດ້ຖືກປະຫານຊີວິດກໍຕາມ ແຕ່ການຕາຍຂອງທ່ານໄຊປຣຽນກໍເປັນຣະຍະເວລາທີ່ຄຣິສຈັກໄດ້ຮັບຄວາມສງົບສຸກ ບໍ່ມີການຂົ່ມເຫັງເປັນເວລານານພໍສົມຄວນ ຄຣິສຕຽນຈຳນວນຫລວງຫລາຍທີ່ເຄີຍລະຖິ້ມຄຣິສສາສນາ ເພາະສາເຫດທີ່ບໍ່ສາມາດອົດທົນຕໍ່ການຂົ່ມເຫງໃນກາລກ່ອນນັ້ນ ໄດ້ພາກັນກັບໃຈໃໝ່ ຫັນກັບເຂົ້າມາຫາຄຣິສຈັກ ແລະສາຣະພາບບາບ ເພື່ອຮັບຄວາມຣອດພົ້ນໃໝ່ອີກ ຄືກັບທ່ານໄຊປຣຽນໄດ້ເຮັດມາ ມີບັນຫາຢູ່ວ່າ ໃຜຈະເປັນຜູ້ມີອຳນາດໃຫ້ອະພັຍບາບແລະຮັບຄົນເຫຼົ່ານັ້ນຄືນມາເປັນສມາຊິກຂອງຄຣິສຈັກອີກ ໃນທີ່ສຸດໄດ້ຕົກລົງວ່າ ພວກສັງຄະຣາດເຈົ້າອະທິການຫລືຜູ້ປົກຄອງ ເປັນຜູ້ມີສິດທິອຳນາດໃນການຮັບຄຣິສຕຽນເຫລົ່ານີ້ກັບຄືນເປັນສມາຊິກໃນຄຣິສຈັກໄດ້ອີກ ໂດຍສິດທິອຳນາດຄືກັນທີ່ພວກສັງຄະຣາດຫລືເຈົ້າອະທິການສາມາດຮັບຄຣິສຕຽນກັບຄືນມານັ້ນເອງ ຈຶ່ງເປັນເຫດໃຫ້ສາມາດຕັດສິດສມາຊິກຄຣິສຕຽນຜູ້ນຶ່ງຜູ້ໃດໃຫ້ອອກຈາກຄຣິສຈັກໄດ້ ແລະຖ້າຜູ້ໃດຖືກຕັດສິດອອກຈາກການເປັນສມາຊິກແລ້ວ ໝາຍຄວາມວ່າຜູ້ນັ້ນກໍຈະ**ສູນເສັຽຄວາມຣອດພົ້ນທີ່ໄດ້ຈາກພຣະເຢຊູຄຣິສ ອຳນາດທີ່ສັງຄະຣາດແລະພວກເຈົ້າອາທິການໄດ້ຮັບນີ້ເຮັດໃຫ້ເກີດການຫລົງອຳນາຈຢ່າງໃໝ່ ແລະເປັນເຫດກໍ່ໃຫ້ເກີດຄວາມຍຸ້ງຍາກໃນການປົກຄອງຄຣິສຈັກ ໃນສັດຕະວັດ ຕໍ່ ໆ ມາ** ເພາະວ່າໃນການທີ່ຜູ້ນຳມີອຳນາດຫລາຍເກີນໄປສາມາດຕັດສິດຫລືໃຫ້ຄວາມຣອດພົ້ນແກ່ສມາຊິກໄດ້ຕາມໃຈຊອບ ເຮັດໃຫ້ຂ່າວປະເສີດຂອງພຣະເຢຊູຄຣິສຖືກບິດເບືອນກາຍຄວາມໝາຍອັນແທ້ຈິງໄປ ຄວາມໝາຍເຣື່ອງການຕາຍໄຖ່ບາບຂອງພຣະເຢຊູເທິງໄມ້ກາງແຂນຈຶ່ງນ້ອຍລົງ ແຕ່ອຳນາດຂອງສັງຄະຣາດມີຫລາຍຂຶ້ນ ເພາະວ່າມີສິດຈະໃຫ້ຄວາມຣອດພົ້ນຜູ້ໃດກໍໄດ້ ແລະຖ້າສັງຄະຣາດຫລືຜູ້ນຳບໍ່ມັກຜູ້ໃດເປັນການສ່ວນຕົວ ກໍ່ສາມາດສັ່ງຖອນເອົາຄວາມຣອດພົ້ນອອກຈາກຜູ້ນັ້ນ ໂດຍພຽງແຕ່ໄລ່ຜູ້ນັ້ນອອກຈາກການເປັນສມາຊິກຂອງຄຣິສຈັກເທົ່ານັ້ນ ອັນນີ້ເປັນຄວາມຜິດ

ພລາດຢ່າງໃຫຍ່ຫລວງ ທີ່ນຳພາໃຫ້ຄຣິສຈັກຂອງພຣະຄຣິສຕ້ອງເສົ້າໝອງໄປນານເປັນພັນປີ

## II. ລັດທິນອກຣີດ ສາສນາລຶກລັບ ທີ່ມີອິດທິພົນປຽ່ນຫລັກຄວາມເຊື່ອຂອງຄຣິສຈັກ

ໃນສັຕວັດທີ່ສອງແລະທີ່ສາມ ຄຣິສຈັກບໍ່ພຽງແຕ່ຖືກການຂົ່ມເຫງເທົ່ານັ້ນ ແຕ່ຍັງຕ້ອງຕໍ່ຕ້ານກັບການຮັບຫລັກຄຳສອນຫລືຫລັກຄວາມເຊື່ອແປກ ໆ ຈາກພວກສາສນານອກຣີດແລະສາສນາລຶກລັບໂບຮານ (Mythology) ທີ່ມີຢູ່ໃນທ້ອງຖິ່ນຕ່າງ ໆ ມາແລ້ວເປັນເວລາພັນ ໆ ປີ ໃນຄັ້ງທຳອິດຄຣິສຈັກຈະເຣີນເຕີບໃຫຍ່ໂດຍມີເຫລົ່າອັຄສາວົກແລະມີຜູ້ນຳຄຣິສຕຽນຢິວເປັນຜູ້ນຳພາ ດັ່ງນັ້ນຄວາມຄິດເຫັນແປກ ໆ ຂອງສາສນາອື່ນ ໆ ນີ້ຈຶ່ງບໍ່ສາມາດເຂົ້າມາປະປົນກັບຄວາມເຊື່ອແທ້ຂອງຄຣິສຕຽນໄດ້ ອີກປະການນຶ່ງຄຳສອນຂອງພຣະເຢຊູຄຣິສຍັງຄົງແຈ່ມແຈ້ງຢູ່ໃນຄວາມຈື່ຈຳ ແລະຄວາມເຂົ້າໃຈຂອງເຫລົ່າຜູ້ເຊື່ອໃນເວລານັ້ນ ພາຍຫລັງຕໍ່ມາຄຣິສສາສນາໄດ້ແຜ່ຂະຍາຍອອກໄປສູ່ດິນຕ່າງຊາດ ໂດຍສະເພາະຄຣິສສາສນາໄດ້ເຂົ້າໄປຍັງປະເທດທີ່ບໍ່ມີອັຄສາວົກຫລືບໍ່ມີຄຣິສຕຽນທີ່ໄດ້ຮັບຄຳສອນໂດຍກົງຢ່າງແທ້ຈິງ ອີກທັງບໍ່ມີພຣະຄັມພີໃຫມ່ເປັນຮູບເຫລັ້ມຢ່າງສົມບູນ ຢ່າງທີ່ພວກເຮົາມີໃນປັດຈຸບັນ ດັ່ງນັ້ນຈຶ່ງບໍ່ມີຄຳສອນອັນຫຽ່ງແທ້ທີ່ຈະເອົາໃວ້ເປັນບັນທັດຖານ (Cannon) ສຳລັບວັດວ່າຄຳສອນອື່ນ ໆ ນັ້ນວ່າຖືກຫລືຜິດ ຈະຮັບເຂົ້າມາຣວມກັບຄວາມເຊື່ອຂອງຄຣິສຕຽນໄດ້ຫລືບໍ່ ຄຣິສຕຽນໃນປະເທດທີ່ຢູ່ຫ່າງໄກອອກໄປໄດ້ຖືກອິດທິພົນຂອງສາສນາເກົ່າ ຄຳສອນເກົ່າແລະປະເພນີເກົ່າໃນທ້ອງຖິ່ນນັ້ນເຂົ້າແຊກແຊງ ໂດຍສະເພາະຢ່າງຍິ່ງແມ່ນແຄວັນຊີເຣັຍໃນເອເຊັຍນ້ອຍ ແລະຊາວກຣີກທີ່ມີຄວາມຄິດຜິດແປກ ໄດ້ນຳເອົາຄຳສອນເກົ່າເຂົ້າມາປະປົນໄປກັບຄວາມເຊື່ອຂອງຄຣິສຕຽນ ດັ່ງນັ້ນຫລັກຂໍ້ເຊື່ອແລະການປະຕິບັດຫລາຍແນວໃນຄຣິສຈັກ ຈຶ່ງຖືກປຽ່ນຮູບໄປຈົນສຸດຄວາມສາມາດທີ່ຈະຢັບຢັ້ງໄດ້ ແລະເມື່ອມີຫລາຍຂຶ້ນກໍແຍກຕົວອອກໄປເປັນຫລາຍກຸ່ມເປັນນິກາຍໃຫມ່ ແລະຕັ້ງຊື່ນິກາຍຕາມນາມຂອງຜູ້ກໍ່ຕັ້ງຫລືຕັ້ງຊື່ຕາມຫລັກຄວາມເຊື່ອຂອງສາສນາເດີມນຳ

**ລັດທິນອສຕິຄ** (Gnosticism ແປວ່າຄວາມຮູ້ (Know) ຫລືການຮູ້ແຈ້ງດ້ວຍສະຕິປັນຍາ)

ພວກນອສຕິຄສອນວ່າ ວັດຖຸ ແລະຮ່າງກາຍ ເນື້ອຫນັງເປັນສິ່ງຊົ່ວ ຄວາມຣອດພົ້ນທາງຝ່າຍຈິດວິນຍານນັ້ນຕ້ອງອາສັຍຄວາມຮູ້ແຈ້ງໂດຍການເຂົ້າເຖິງທາງທັມ ໂດຍອາສັຍສມາທິຕັດກິເລສຕັນຫາແລະຄວາມຮູ້ສຶກທັ້ງມວລອອກຫມົດ ຫນີຈາກໂລກຫນີຈາກສັງຄົມ **ທ່ານວາເລນໄທນັສ** ຜູ້ເປັນອາຈານສອນລັດທິນອສຕິຄ ທີ່ມີຊື່ສຽງໃນກຸງໂຣມ ໃນປະມານ ຄ.ສ. 136 ເຖິງ 165 ທ່ານສອນວ່າ ວັດຖຸຕ່າງ ໆ ໃນໂລກເກີດມາຈາກພຣະອຳມະຕະ ຊື່ ເປລໂຣມາ ໂດຍພຣະອຳມະຕະປາກົດເປັນຄູ່ ໆ ພຣະອຳມະຕະອົງທີ່ຕ່ຳສຸດ ຄືພຣະໂຊໄຟອາ (ແປວ່າ ຮູ້ຫລາຍຫລືປັນຍາ) ຊຶ່ງໄດ້ກະທຳຄວາມຜິດເພາະຢາກຮູ້ ຢາກເຫັນຫລາຍເກີນໄປ ພຣະແມ່ໂຊໄຟອາເປັນມານດາຂອງພຣະເດມິເອັຊ ເປັນພຣະຊັ້ນຕ່ຳແລະເປັນຜູ້ສ້າງໂລກນີ້ ຄືພຣະຢາໂຮວາໃນພຣະຄຳພີເດີມນັ້ນເອງ ດັ່ງນັ້ນວິນຍານທີ່ຖືກສ້າງໃນໂລກນີ້ຈຶ່ງຫລົງໄຫລສິ່ງຕ່ຳຄືວັດຖຸສິ່ງຂອງ **ວິນຍານຈະຮັບຄວາມຣອດພົ້ນໂດຍພຣະຄຣິສຜູ້ມາຈາກສວັນຊັ້ນສູງ ພຣະຄຣິສນີ້ໄດ້ສະເດັດລົງມາປະທັບໃນມະນຸດຜູ້ນຶ່ງ "ຊື່ເຢຊູ" ໃນເວລາທີ່ຮັບບັບຕິສມາ**

ພວກນອສຕິຄສອນຕໍ່ໄປອີກວ່າ ພຣະເຈົ້າສູງສຸດໄດ້ແຕກຕົວອອກເປັນອົງເລັກອົງນ້ອຍ ຈຳນວນຫລາຍ ໆ ບາງອົງກໍ່ເປັນພຣະດີ ບາງອົງກໍ່ເປັນພຣະຊົ່ວ ທັງພຣະດີແລະພຣະຊົ່ວໄດ້ສ້າງໂລກນີ້ຂຶ້ນດັ່ງນັ້ນໂລກຈຶ່ງມີຄວາມດີແລະຄວາມຊົ່ວປົນກັນ ແລະເຊື່ອວ່າພຣະຄຣິສເປັນພຣະດີ ພວກນອສຕິຄໄດ້ອະ

ທີບາຍພຣະຄັມໄປໃນທຳນອງເລົ່ານິທານ   ໄດ້ແປງຄວາມໝາຍຂອງພຣະຄັມພີໄປຕາມທີ່ພວກເຂົາເຫັນຊອບ   ລັດທິນອສຕິຄນີ້ ໄດ້ຫາຍສາບສູນໄປໃນສັຕວັດທີ່ສອງ

**ພວກລັດທິອີໂບໄນ**   (ຈາກພາສາເຮັບເຣີ ແປວ່າ ພວກຍາກຈົນ)

ພວກນີ້ເປັນຊາວຢິວທີ່ເປັນຄຣິສຕຽນ ເປັນພວກທີ່ຍັງຄົງຍຶດໝັ້ນໃນທັມບັນຍັດຂອງຢິວຢ່າງເຂັ້ມແຂງ   ພວກນີ້ບໍ່ຍອມຮັບຂໍ້ຂຽນຂອງອັຄສາວົກໂປໂລ ເພາະທ່ານໂປໂລຍອມຮັບເອົາຊາວຕ່າງຊາດເປັນຄຣິສຕຽນໄດ້ ໃນທີ່ສຸດພວກອີໂບໄນ ຖືກຄົນຢິວດ້ວຍກັນກຽດຊັງ ເພາະພວກເຂົາໄດ້ຖິ້ມສາສນາຢິວມາເປັນຄຣິສຕຽນ ແລະຖືກຊາວຕ່າງຊາດຊຶ່ງມີຈຳນວນຫລາຍກວ່າຮັງກຽດຄືກັນ ພວກນີ້ບໍ່ໄດ້ຮັບການຍ້ອງຍໍຈາກໃຜເລີຍ ໃນທີ່ສຸດພວກອີໂບໄນໄດ້ຫາຍສາບສູນໄປໃນສັຕວັດທີ່ສອງ

**ລັດທິແມນີຄຽນ** (ມີຕົ້ນກຳເນີດມາຈາກຊາວເປີເຊັຽ)

ລັດທິນີ້ກໍ່ຕັ້ງໂດຍທ່ານແມນີຄຽນ   ທ່ານຖືກປະຫານຊີວິດໂດຍຣັຖບານເປີເຊັຍ ຄ.ສ.276 ທ່ານແມນີຄຽນສອນວ່າ   ສາກົນໂລກນີ້ມີສອງອານາຈັກ ອານາຈັກນຶ່ງສວ່າງ ອານາຈັກນຶ່ງມືດ ຝ່າຍສວ່າງແລະຝ່າຍມືດຄອບຄອງຮ່ວມກັນໃນທັມມະຊາດ ແລະໃນຕົວມະນຸດ ພວກນີ້ມີຄວາມເຊື່ອວ່າ ຄວາມຣອດພົ້ນນັ້ນ ຈະໄດ້ມາຕ້ອງອາສັຍການທໍຣະມານຕົນ ບໍ່ແຕ່ງງານບໍ່ມີຄູ່ຄອງ ຕ້ອງແຍກຕົວອອກຈາກສັງຄົມໄປຢູ່ໂດດດ່ຽວ ເໝືອນພວກລີສີຊີໄພ   ພວກນີ້ຖືກຂົ່ມເຫັງຈາກຈັກກະພັດຫລາຍອົງ ທ່ານອອກັສຕິນນັກສາສນາສາດຄຣິສຕຽນຜູ້ມີຊື່ສຽງຍິ່ງໃຫຍ່ທີ່ສຸດ   ໄດ້ເຄີຍເຂົ້າຮ່ວມແລະຖືລັດທິແມນີຄຽນມາກ່ອນທີ່ຈະກັບໃຈເປັນຄຣິສຕຽນໃນພາຍຫລັງ

ນັກປວັດສາດບໍ່ສາມາດບອກໄດ້ວ່າ ຄຳສອນເຫລົ່ານີ້ເຂົ້າມາປະປົນກັບຄຳສອນໃນຄຣິສຈັກໄດ້ໂດຍວິທີໃດ   ໜ້າຈະເປັນໄດ້ວ່າ ຄົນທ້ອງຖິ່ນເຫລົ່ານີ້ໄດ້ເຂົ້າມາເປັນຄຣິສຕຽນແລ້ວ ໄດ້ເອົາຄຳສອນເຫລົ່ານີ້ມາໃຊ້ໃນຄຣິສຈັກເພື່ອອະທິບາຍຄວາມເຊື່ອຂອງຄຣິສຕຽນ   ຈົນກະທັ່ງກາຍເປັນຄວາມເຊື່ອໃໝ່ທີ່ຜິດໄປຈາກຄວາມເຊື່ອແທ້ຂອງຄຣິສຕຽນ   ເມື່ອພວກນອກຮີດມີສມາຊິກຫລາຍຂຶ້ນກໍເລີຍກາຍໄປເປັນກຸ່ມໃໝ່ ແລະຖືກເອີ້ນຊື່ຕາມລັດທິຫລຣຕາມຊື່ຜູ້ນຳທີ່ເຜີຍລັດທິນັ້ນ ໆ

ຈາກປວັດສາດທີ່ເຮົາໄດ້ສຶກສາມານີ້   ໄດ້ເປັນຂໍ້ເຕືອນໃຈວ່າ ເຫດການທີ່ເກີດຂຶ້ນແລ້ວໃນການກ່ອນ ອາດຈະຍ້ອນກັບຄືນມາເກີດຂຶ້ນໃນປັດຈຸບັນໄດ້ອີກ   ຖ້າເຮົາສຶກສາໃຫ້ລຶກຊຶ້ງຈະພົບວ່າ ການຮັບລັດທິຫລືຄຳສອນຂອງສາສນາເກົ່າມາໃຊ້ໃນຄຣິສຈັກນັ້ນ   ມັກເນື່ອງມາຈາກຄວາມຄິດທີ່ວ່າປະເພນີຄຳສອນເກົ່ານັ້ນມີເຫດຜົນບໍ່ຢາກປະຖິ້ມແລະລຶ້ງເຄີຍ   ຊຶ່ງເບິ່ງໂດຍທົ່ວໄປແລ້ວ ດູເໝືອນວ່າບໍ່ຜິດຫລືເສັຽຫາຍຫຍັງ  ທີ່ຈະນຳເຂົ້າມາປະປົນສອນຮ່ວມກັນໃນຄຣິສຈັກ   ແຕ່ເມື່ອລອງຄິດເບິ່ງດູໃຫ້ລັກແນ່ແລ້ວຈະພົບວ່າເມື່ອຄຳສອນຕົ້ນເດີມແລະປະເພນີຣີດຄອງເກົ່າ  ຊຶ່ງຕັ້ງຢູ່ໃນບົນພື້ນຖານສາສນາເດີມໄດ້ຖືກນຳມາໃຊ້  ແລະຖືກເນັ້ນຄວາມສຳຄັນຢູ່ໃນຄຣິສຈັກຫລາຍເກີນໄປ  ຈົນກະທັ່ງປິ່ນຄວາມເຊື່ອແທ້ໃນພຣະເຢຊູຄຣິສໃຫ້ຈືດຈາງລົງ  ເຮັດໃຫ້ເກີດການເນັ້ນເຣື່ອງຄວາມຣອດພົ້ນວ່າ ເປັນການທຳດີຫລືໂດຍການຖືສິນກິນທານ  ຫຼືໂດຍອາສັຍພິທີຣີຕອງແຕ່ເທົ່ານັ້ນ  ຣິດອຳນາດການໄຖ່ບາບຂອງພຣະເຢຊູຄຣິສເທິງໄມ້ກາງແຂນ

ກໍຖືກປິດບັງ ບໍ່ໄດ້ຖືກປະກາດໃຫ້ແຈ່ມແຈ້ງ ເຮັດໃຫ້ຜູ້ເຊື່ອບໍ່ກັບໃຈບັງເກີດໃຫມ່ ແລະບໍ່ໄດ້ຮັບພຣະວິນຍານບໍຣິສຸດ ເຂົ້າມາໃນຊີວິດຈິດໃຈ ດັ່ງນັ້ນຈຶ່ງບໍ່ສາມາດເປັນຄຣິສຕຽນຢ່າງເຂັ້ມແຂງໄດ້

ຄຣິສຈັກໃນປັດຈຸບັນນີ້ຈໍາເປັນຕ້ອງພິຈາຣະນາຄິດເບິ່ງໃຫ້ລະອຽດແລະຄົບຖ້ວນວ່າ ປະເພນີຣີດຄອງແລະຄວາມເຊື່ອຖືເດີມທີ່ເຮົາເອົາມາໃຊ້ ນັ້ນອາດສິ່ງຜົນສະທ້ອນໄປໃນທາງທີ່ບໍ່ກົງກັບຄວາມເຊື່ອອັນແທ້ຈິງຕາມພຣະຄໍາຂອງພຣະເຈົ້າ ດັ່ງທີ່ປາກົດມາແລ້ວໃນປວັດສາດ ເຮົາສົມຄວນຕ້ອງຣະວັງຢ່າໃຫ້ຄວາມເຊື່ອຜິດແປກອອກໄປ ເພາະວ່າໃນປັດຈຸບັນພວກເຮົາມີພຣະຄັມພີສົມບູນແບບໄວ້ເປັນມາຕາຖານແຫ່ງຫລັກຄວາມເຊື່ອຢູ່ແລ້ວ ຈຶ່ງບໍ່ສົມຄວນເອົາຄວາມເຊື່ອຖືຣີດຄອງເກົ່າມາບົດບັງພຣະຄໍາຂອງພຣະເຈົ້າໃຫ້ປ່ຽນແປງໄປ

ຈະເຫັນໄດ້ວ່າຄຣິສຕຽນທີ່ແທ້ຈິງນັ້ນຕ້ອງພົບກັບຄວາມລໍາບາກຍາກຫລາຍ ເພາະວ່າບໍ່ພຽງແຕ່ຈະຖືກຂົ່ມເຫັງເທົ່ານັ້ນ ແຕ່ຍັງຕ້ອງຕໍ່ສູ້ຍືນຫຍັດຕາມຄວາມຈິງແທ້ຂອງພຣະເຈົ້າ ແລະບໍ່ຍອມອ່ອນຕາມຄໍາສອນຜິດນໍາອີກ ທັງຍັງຕ້ອງອົດທົນປະກາດຂ່າວປະເສີດ ແລະຮັບໃຊ້ພຣະເຈົ້າຈົນກວ່າພຣະອົງຈະສະເດັດກັບມາອີກ ຢ່າງໃດກໍຕາມຄຣິສຕຽນຜູ້ນໍາຕັ້ງແຕ່ຍຸກແຣກ ແລະເຫລົ່າອັຄສາວົກຍອມເສັຽສລະຊີວິດຂອງຕົນເພື່ອຂ່າວປະເສີດຂອງພຣະເຢຊູຄຣິສ ແລະຄວາມເຊື່ອອັນຫມັ້ນຄົງນີ້ໄດ້ຕົກທອດລົງມາທຸກຍຸກທຸກສມັຍຈົນເຖິງປັດຈຸບັນກໍຍັງມີຄົນທີ່ສັດຊື່ແລະຕັ້ງອົກຕັ້ງໃຈຮັບໃຊ້ຢ່າງບໍ່ທໍ້ຖອຍ ແມ່ນວ່າຈະຍາກລໍາບາກປານໃດກໍຕາມ ບຸກຄົນຜູ້ເສັຍສລະເຫລົ່ານີ້ແຫລະ ຄືຜູ້ທີ່ຈະໄດ້ຮັບມົງກຸດແລະພວງມາລັຍຊີວິດໃນວັນສຸດທ້າຍທີ່ພຣະເຢຊູສະເດັດມາ (ຢາໂກໂບ 1: 12)

# ບົດທີ 4

## ພຣະຣາຊອົງການແຫ່ງມິລານ
## ເຖິງການປະຊຸມໃນຊີນເທື່ອທີ 2
## ຄ.ສ. 313-381



### ນຶ່ງ. ພຣະຣາຊອົງການ ແຫ່ງມິລານໂດຍຈັກກະພັດຄອນສະແຕນຕິນ

ສາມຮ້ອຍປີທີ່ໄດ້ຜ່ານໄປນັ້ນ ຄຣິສຈັກໄດ້ຖືກຂົ່ມເຫັງຢ່າງຮ້າຍແຮງມາໂດຍຕະລອດ ຕາມສາຍຕາທີ່ເບິ່ງແລະຕາມຄວາມຮູ້ສຶກນຶກຄິດຂອງມະນຸດແລ້ວ ຄິດວ່າຄຣິສຈັກຄົງຈະບໍ່ມີຫຍັງເຫລືອອີກ ຜູ້ຄົນອາດສີຢ້ານ ບໍ່ມີໃຜກ້າຫານທີ່ຈະມາເປັນຄຣິສຕຽນເພາະຢ້ານຖືກຂົ່ມເຫັງ ແຕ່ໃນທາງກົງກັນຂ້າມຄຣິສຈັກເຮງຈະເຣີນເຕີບໃຫຍ່ແລະແຜ່ຂຍາຍໄປຢ່າງລັບ ໆ ຄຣິສຕຽນໄດ້ຮັບການຊຳຣະຈາກພຣະເຈົ້າ ຄຣິສຕຽນຍິ່ງຖືກຂົ່ມເຫັງກໍຍິ່ງເຂັ້ມແຂງຕື່ມ ພຣະເຈົ້າໄດ້ເລືອກສັນບຸກຄົນທີ່ມີຄວາມເຊື່ອແທ້ຈິງ ໃຫ້ມີຄວາມກ້າຫານຍອມເສັຽສະລະຊີວິດຂອງຕົນ ເພື່ອໃຫ້ແຜ່ນດິນແລະອານາຈັກຂອງພຣະຄຣິສແຜ່ຂຍາຍອອກໄປ ໂດຍການນຳພາຂອງພຣະວິນຍານບໍຣິສຸດຢ່າງບໍ່ຂາດສິ້ນສຸດ

ໃນປີ ຄ.ສ.313 ມີພຣະຣາຊໂອງການແຫ່ງ ມິລານ ໂດຍຈັກກະພັດ ຄອນສແຕນຕິນໄດ້ປະກາດຢ່າງເປັນທາງການວ່າ ໃຫ້ການຂົ່ມເຫັງຄຣິສຕຽນນັ້ນສິ້ນສຸດລົງຢ່າງເດັດຂາດ ພຣະຣາຊອົງການນີ້ໄດ້ປະກາດຢ່າງແຈ່ມແຈ້ງວ່າ ໃຫ້ຣັຖບານໂຣມຍອມຮັບເອົາສາສນາຄຣິສຕຽນເປັນສາສນາປະຈຳຊາດ ຊຶ່ງນຳຄວາມປິຕິຍິນດີມາສູ່ຄຣິສຈັກຢ່າງໃຫຍ່ຫລວງ ພຣະຣາຊອົງການນີ້ໄດ້ຕັ້ງໝັ້ນຄົງຢູ່ໃນອານາຈັກຂອງໂຣມັນຕໍ່ໄປເປັນເວລາຍາວນານເຖິງ 1500 ປີ ແລະມີຜົນສະທ້ອນຕລອດມາຈົນເຖິງປັດຈຸບັນນີ້

## ສອງ. ສາສນາຄຣິສຕຽນໄດ້ຮັບການຮັບຮອງຈາກຣັຖບານໂຣມັນ

ຣັຖບານໂຣມັນໄດ້ປະກາດໃຫ້ສາສນາຄຣິສເປັນສາສນາປະຈໍາຊາດໂຣມັນຢ່າງເປັນທາງການ ແລະຖືກຕ້ອງຕາມກົດຫມາຍ ເຫດການນີ້ໄດ້ນໍາໃຫ້ເກີດຂໍ້ດີ ແລະຂໍ້ເສັຽດັ່ງນີ້

**ປະການທໍາອິດ ຂໍ້ດີ ຄື**

* ການຂົ່ມເຫັງການທາລຸນໂຫດຮ້າຍຕໍ່ຄຣິສຕຽນໄດ້ສິ້ນສຸດລົງ ຄຣິສຈັກໄດ້ຮັບການຍົກຍ້ອງໃຫ້ເດັ່ນແລະສູງກວ່າສາສນາອື່ນ ໆ ຜູ້ຄົນຫລັ່ງໄຫລກັນເຂົ້າມາເປັນຄຣິສຕຽນຢ່າງສະດວກສະບາຍ ໂດຍບໍ່ຕ້ອງຢ້ານວ່າຈະຖືກຂົ່ມເຫັງອີກ
* ໂບດວິຫານຖືກສ້າງຂຶ້ນຫລາຍແຫ່ງ ຢ່າງສະງ່າງາມ ເປັນການຖວາຍກຽດແກ່ພຣະເຈົ້າ ຄຣິສຕຽນໄດ້ມີການປະຊຸມນມັສການຢ່າງເປີດເຜີຍ ແລະເຊີດຫນ້າຊູຕາ ຊຶ່ງກົງກັນຂ້າມຈາກແຕ່ເກົ່າກ່ອນໃນຍຸກທີ່ຖືກຂົ່ມເຫັງ ຄຣິສຕຽນຕ້ອງປະຊຸມຢ່າງລັບ ໆ
* ພຣະຄຣິສທັມຄັມພີຖືກຈາລຶກລົງໃນແຜ່ນຫນັງຢ່າງດີ ແລະຖືວ່າເປັນຫນັງສືພຣະທັມສັກສິດ ມີສິດທິອໍານາດສູງສຸດ ບໍ່ມີໃຜກ້າດູຫມິ່ນຫລືທໍາລາຍໄດ້
* ສັງຄະຣາດແລະເຈົ້າອະທິການທັງຫລາຍ ໄດ້ຈັດລະບຽບການປົກຄອງຄຣິສຈັກຢ່າງມີລະບົບລະບຽບ ແລະຖືວັນອາທິດເປັນວັນຢຸດຣາຊການຢ່າງເປັນທາງການ ເພື່ອປະຊາຊົນຈະໄດ້ໄປນມັສການພຣະເຈົ້າໂດຍພ້ອມພຽງກັນ
* ຫລັກຂໍ້ເຊື່ອຂອງຄຣິສຕຽນມີອິດທິພົນ ໃນການປ່ຽນແປງກົດຫມາຍຂອງຣັຖບານໂຣມັນ ເຮັດໃຫ້ຈາຣິຍະທັມຂອງຊາວໂຣມັນມີມາຕາຖານດີຂຶ້ນ ຕົວຢ່າງ ຫ້າມການຫລິ້ນກິລາທີ່ຕໍ່ສູ້ກັນຈົນເຮັດໃຫ້ຝ່າຍນຶ່ງຝ່າຍໃດຕ້ອງເສັຽຊີວິດ ຫ້າມການໂຍນນັກໂທດໃຫ້ສັດຮ້າຍກິນ ຫ້າມການມີພັຣຍາຫລາຍຄົນ ຖືວ່າການສົມຣົດເປັນສິ່ງທີ່ບໍຣິສຸດຖາວອນ ພວກບ່າວທາດກໍໄດ້ຮັບການຍົກໃຫ້ມີຖານະເປັນຢູ່ດີຂຶ້ນກວ່າເກົ່າ ແລະໄດ້ຮັບການຮັບຮອງໃນຄຣິສຈັກໃຫ້ຢູ່ຮ່ວມ ໃນຖານະອ້າຍນ້ອງໃນພຣະຄຣິສ ມີການສ້າງໂຮງພະຍາບານ ແລະສຖານສົງເຄາະຜູ້ທຸຂຍາກອື່ນ ໆ

**ປະການທີ່ສອງ ຂໍ້ເສັຽ ຄື**

ການທີ່ສາສນາຄຣິສໄດ້ຮັບການຮັບຮອງຈາກຣັຖບານໂຣມັນໃຫ້ເປັນສາສນາປະຈໍາຊາດໄດ້ຢ່າງເປັນການຖາວອນໄດ້ຮັບຜົນດີຢ່າງຫລວງຫລາຍ ແລະເຮັດໃຫ້ຂ່າວປະເສີດແຜ່ຂຍາຍອອກໄປກວ້າງຂວາງໃນພິບພາດຽວ ໂດຍໄດ້ຮັບການສນັບສນຸນສົ່ງເສີມຈາກຣັຖບານ ແລະບໍ່ມີຄວາມຍາກລໍາບາກແຕ່ປະການໃດ ແຕ່ໃນທາງກົງກັນຂ້າມການຂຍາຍຄຣິສຈັກອອກໄປໂດຍໄວ ແລະການທີ່ຣັຖບານໂຣມເປີດມອບອໍານາດໃຫ້ແກ່ຄຣິສຈັກນັ້ນ ກັບນໍາຄວາມເສັຽຫາຍມາສູ່ຄຣິສຈັກ ຢ່າງໃຫຍ່ຫລວງຄືກັນ ຕົວຢ່າງ

* ປະຊາຊົນເຂົ້າມາເປັນຄຣິສຕຽນ ເພື່ອຜົນປະໂຍດທາງການເມືອງ ເຂົ້າມາຮັບບັພຕິສມາໂດຍບໍ່ມີຄວາມເຊື່ອ ຫລືຄວາມເຂົ້າໃຈໃນສາສນາອັນແທ້ຈິງ ບໍ່ໄດ້ເນັ້ນເຖິງການປ່ຽນແປງຊີວິດ ການບັງເກີດໃຫມ່ ເຮັດໃຫ້ມາຕາຖານການດໍາເນີນຊີວິດແບບຄຣິສຕຽນໄດ້ລົດນ້ອຍຖອຍລົງ ເພາະວ່າຄົນເປັນຄຣິສຕຽນແຕ່ຊື່ເທົ່ານັ້ນ
* ພວກສັງຄະຣາດຫລືເຈົ້າອະທິການຊຶ່ງແຕ່ກ່ອນໄດ້ຮັບການຂົ່ມເຫັງ ບັດນີ້ມີຄວາມຮັ່ງມີ ມີກຽດ

ມີສິດທິຜົນປະໂຍດຝ່າຍໂລກ ຈຶ່ງເປັນສິ່ງທີ່ຍົວະຍວນໃຫ້ເກີດຄວາມຫລົງ ເກີດຄວາມມັກໃຫຍ່ໃຝ່ສູງໃນທາງທີ່ຜິດນຳການເສື່ອມເສັຽມາສູ່ການປົກຄອງຄຣິສຈັກ ແລະນຳຄວາມຫນ້າອາຍມາສູ່ຄຣິສຈັກດ້ວຍ

★ ສັງຄະຣາດໄດ້ຮັບສິດທິອຳນາດເທົ່າທຽມຫລືສູງກວ່າຈັກກະພັດ ເພາະຖືວ່າພວກສັງຄະຣາດໄດ້ຮັບເອົາອຳນາດທີ່ມາຈາກພຣະເຈົ້າ ຝ່າຍຈັກກະພັດກໍໄດ້ຖືໂອກາສໃຊ້ຄຣິສຈັກໃຫ້ເປັນຜົນປະໂຍດ ເພື່ອຄວາມປະສົງຂອງຕົນເອງ ດັ່ງນັ້ນຍາມໃດທີ່ຄຣິສຈັກຕົກຢູ່ໃນກຳມືຂອງຈັກກະພັດທີ່ດີ ແລະມີສັງຄະຣາດທີ່ດີ ກໍມີການເນັ້ນຄວາມເຊື່ອແລະນຳປະຊາຊົນໄປໃນທາງດີ ຍາມໃດຄຣິສຈັກຕົກຢູ່ໃນກຳມືຂອງສັງຄະຣາດແລະຈັກກະພັດຊົ່ວ ຫລັກຂໍ້ເຊື່ອຂອງຄຣິສຈັກກໍຖືກປຣັບແປງໄປ ຕາມເລ້ຫຼ່ຽມ ແລະຄວາມເຫັນແກ່ຕົວຂອງພວກຈັກກະພັດແລະພວກເຈົ້າຂຸນມູນນາຍທັງຫລາຍ ຫລືບໍ່ດັ່ງນັ້ນ ກໍເກີດການສູ້ຣົບຢ່າງໃຫຍ່ຣະຫວ່າງຈັກກະພັດກັບສັງຄະຣາດ

ຢ່າງໃດກໍຕາມ ແມ່ນວ່າຄຣິສຈັກຕ້ອງຕົກຢູ່ໃນກຳມືຂອງຜູ້ທີ່ມີຄວາມເຊື່ອທີ່ຫລົງຜິດໄປ ພຣະວິນຍານບໍຣິສຸດຂອງພຣະເຈົ້າກໍໄດ້ນຳພາຄຣິສຈັກບໍ່ໃຫ້ຕາຍຫາຍໄປ ແຕ່ພຣະອົງຍັງໄດ້ໃຊ້ຄວາມຜິດພາດຂອງມະນຸດໃຫ້ເປັນບົດຮຽນ ແລະນຳພາຄຣິສຈັກໃຫ້ຢູ່ຣອດປອດພັຍ ໃນເວລາທີ່ມີຜູ້ເຊື່ອທີ່ຫລົງຜິດ ພຣະເຈົ້າກໍໄດ້ຊົງເອີ້ນຜູ້ຮັບໃຊ້ທີ່ສັດຊື່ຂອງພຣະອົງ ໃຫ້ອອກມາທຳການປ່າວປະກາດ ເຮັດໃຫ້ພຣະຣາຊກິຈແຜນການຂອງພຣະອົງເປັນໄປຕາມພຣະປະສົງ

**ສາມ. ຈັກກະພັດຄອນສແຕນຕິນ** (Constantine)

ຈັກກະພັດຄອນສະແຕນຕິນຊົງເປັນຜູ້ອອກພຣະຣາຊອົງການ ໃຫ້ການຂົ່ມເຫັງຄຣິສຕຽນສິ້ນສຸດລົງໃນ ຄ.ສ.313 ພຣະອົງໄດ້ຂຶ້ນຄອງຣາຊຕໍ່ຈາກຈັກກະພັດໄດໂອເຄລທຽນ (Dio Cletian) ໃນສມັຍຂອງຈັກກະພັດໄດໂອເຄລທຽນນັ້ນຊົງເຫັນວ່າ ມະຫາອານາຈັກໂຣມັນໃຫຍ່ໂຕເກີນໄປ ເຈົ້າຊີວິດອົງດຽວບໍ່ອາດສາມາດປົກຄອງດູແລໃຫ້ທົ່ວເຖິງໄດ້ ດັ່ງນັ້ນໄດໂອເຄລທຽນ ຈຶ່ງໄດ້ແບ່ງອານາເຂດດິນແດນການປົກຄອງອອກເປັນສ່ວນ ໆ ແລະໄດ້ແຕ່ງຕັ້ງເຈົ້າຊີວິດອົງນ້ອຍ ໆ ຂຶ້ນຫລາຍອົງ ເພື່ອປົກຄອງດູແລໃນແຕ່ລະເຂດ ເມື່ອສິ້ນຣາຊການຂອງຈັກກະພັດໄດໂອເຄລທຽນແລ້ວ ເຈົ້າຊີວິດອົງນ້ອຍ ໆ ທີ່ເປັນຜູ້ຊ່ວຍຕ່າງກໍຕັ້ງຕົວເອງເປັນໃຫຍ່ ແລະເກີດການສູ້ຣົບແຍ້ງຊີງອຳນາດກັນ



ຈັກກະພັດຄອນສແຕນຕິນເປັນໂອຣົດຂອງເຈົ້າຊີວິດອົງນ້ອຍຜູ້ຊ່ວຍອົງນຶ່ງ ທ່ານໄດ້ຄອບຄອງແຄວ້ນບຣິເຕນ (Britain) ແມ່ນອັງກິດໃນປະຈຸບັນ ແລະແຄ້ວນ ກອລ (Gual) ແມ່ນຝຣັ່ງເສດໃນປັດຈຸບັນແຕ່ສ່ວນແມກຊີມິນອຸສ (Meximinus) ເປັນໂອຣົດຂອງເຈົ້າຊີວິດອົງນ້ອຍອີກອົງນຶ່ງ ຊຶ່ງທ່ານໄດ້ຄອບຄອງ ອີຕາລີ ແລະກຸງໂຣມ ກ່າວກັນວ່າ ຄອນສແຕນຕິນ ໄດ້ຍົກທັພໄປຕີກັບເຈົ້າຊີວິດອົງອື່ນ ໆ ໃນເວລາທີ່ຍົກທັບໄປນັ້ນ ວັນນຶ່ງທ່ານໄດ້ເຫັນພາບເປັນນິມິດໝາຍ ຄືຣັສມີເປັນຮູບໄມ້ກາງແຂນແຈ້ງກະຈ່າງເທິງດວງອາທິດທີ່ກຳລັງຈະຕົກໃນຕອນແລງ ແລະມີຂໍ້ຄວາມວ່າ (HOC SIGNO VINCES) ຊຶ່ງແປວ່າ **ໂດຍເຄື່ອງໝາຍນີ້ ທ່ານຈະໄດ້ໄຊຊະນະ** ດັ່ງນັ້ນຄອນສແຕນຕິນຈຶ່ງເຊື່ອວ່າ ພຣະເຈົ້າຂອງຄຣິສຕຽນມີຣິດອຳນາດນຳໄຊຊະນະມາສູ່ທ່ານໄດ້ ຈຶ່ງໄດ້ຕັດສິນໃຈນັບຖືພຣະເຈົ້າຂອງຄຣິສຕຽນແລະໄດ້ທຳກາງແຂນໄວ້ທີ່ທຶງນຳໜ້າກອງທັພ ແລະທີ່ໂລ່ ຄອນສແຕນຕິນໄດ້ຊະນະເສິກ ປາບກອງທັພຂອງແມກຊິມິນອຸສ ຊຶ່ງແຕກຖອຍຂ້າມແມ່ນ້ຳໄທເບີ້ (Tibir) ຝ່າຍແມກຊິມິນອຸສຖືກໂຈມຕີເທິງຂົວ ມິລວຽນ (Milvian) ແລະຈົມນ້ຳຕາຍທີ່ນັ້ນ ໃນຣາວ ຄ.ສ.312 ເສິກຄັ້ງນີ້ໄດ້ຖືກເອີ້ນວ່າ **ການເສິກແຫ່ງຂົວມິລວຽນ** ຄອນສແຕນຕິນໄດ້ຮັບໄຊຊະນະ ແລະສະຖາປານາຕົນເອງເປັນຈັກກະພັດຜູ້ຍິ່ງໃຫຍ່ແຕ່ພຣະອົງດຽວ ທຳການປາບປາມເຈົ້າຊີວິດອົງນ້ອຍທັງຫລາຍຈົນໝົດ ເຂດແຄວ້ນໃດທີ່ຢຶດເຂົ້າມາຄອບຄອງໄດ້ແລ້ວການຂົ່ມເຫັງຄຣິສຕຽນໃນແຄວ້ນນັ້ນກໍໝົດໄປ ເມື່ອພຣະອົງໄດ້ໄຊຊະນະຢ່າງສົມບູນແລ້ວ ຈັກກະພັດຄອນສແຕນຕິນຈຶ່ງໄດ້ຕັ້ງເອົາຄຣິສສາສນາມາເປັນສາສນາປະຈຳຊາດມຫາອານາຈັກໂຣມັນ ເຮັດໃຫ້ຄຣິສສາສນາໄດ້ຮັບການຊູເດັ່ນສູງເໜືອສາສນາອື່ນ ໆ ໃນມຫາຣາຊອານາຈັກໂຣມັນ

ຈັກກະພັດຄອນສແຕນຕິນໄດ້ປະກາດຕົວເປັນຄຣິສຕຽນ ແຕ່ໂດຍຄວາມຈິງແລ້ວທ່ານບໍ່ໄດ້ເປັນຄຣິສຕຽນທີ່ສົມບູນແບບ ເຖິງແມ່ນວ່າທ່ານຈະເປັນຜູ້ປະກາດໃຫ້ສາສນາຄຣິສຕຽນເປັນສາສນາປະຈຳຊາດກໍຕາມ ແຕ່ພຣະອົງຍັງອຸປຖັມສາສນາອື່ນ ໆ ແລະອານຸຍາດໃຫ້ສາສນາອື່ນ ໆ ດຳເນີນການຕໍ່ໄປຢູ່ ຫາກແຕ່ວ່າ ໄດ້ຍົກເລີກເຣື້ອງການຂາບໄຫວ້ຮູບປັ້ນຈັກກະພັດ ຈັກະພັດຄອນສແຕນຕິນບໍ່ໄດ້ຮັບບັບຕິສມາຕັ້ງແຕ່ຕົ້ນທີ່ປະກາດຕົວເປັນຄຣິສຕຽນ ແຕ່ໄດ້ລໍຖ້າຈົນເຖິງເວລາໄກ້ຈະສິ້ນຊີວິດ ເພາະໃນສມັຍນັ້ນມີຄຳສອນໂດຍທົ່ວໄປວ່າ ຄວນຈະລໍຖ້າການຮັບບັພຕິສມາໄວ້ຈົນກວ່າໄກ້ຈະຕາຍຈຶ່ງຈະຮັບ ເພື່ອຈະໄດ້ລົບລ້າງບາບທີ່ໄດ້ເຮັດມາຈົນໝົດສິ້ນ ຢ່າງໃດກໍຕາມຈັກກະພັດຄອນສແຕນຕິນໄດ້ຊົງກະທຳຫລາຍຢ່າງທີ່ດີເພື່ອຄຣິສຈັກ

## ສີ່. ການຍ້າຍເມືອງຫລວງໃໝ່ ຈາກກຸງໂຣມໄປຍັງກຸງຄອນສະແຕນຕິໂນເປີລ

ຈັກກະພັດຄອນສະແຕນຕິນເຫັນວ່າ ກຸງໂຣມນັ້ນເປັນທີ່ຕັ້ງຂອງສາສນາດັ້ງເດີມ ອັນບໍ່ໄດ້ນັບຖືພຣະເຈົ້າມີຮູບປັ້ນໂບດວິຫານຂອງເທວະຮູບຫລວງຫລາຍ ຫລາຍກວ່ານັ້ນອີກ ຄືວ່າກຸງໂຣມມີຈຸດອ່ອນທາງການເສິກ ກຸງໂຣມຕັ້ງຢູ່ທີ່ຮາບອັນກວ້າງໃຫຍ່ ຊຶ່ງເປັນບ່ອນທີ່ງ່າຍຕໍ່ການໂຈມຕີຈາກສັດຕູ ຕາມປວັດສາດກຸງໂຣມໄດ້ຖືກລ້ອມແລະຖືກໂຈມຕີຫລາຍເທື່ອ ດັ່ງນັ້ນພຣະອົງຈຶ່ງໄດ້ຍ້າຍເມືອງຫລວງໃໝ່ໂດຍການເລືອກເອົາເມືອງເກົ່າຂອງກຣີກຄື **ໄບແຊນຕີອັມ** (Byzantium) ອັນເປັນເມືອງທີ່ຕັ້ງຢູ່ໄດ້ນານກວ່າ 1000 ປີແລ້ວແລະເປັນຈຸດທີ່ຢູ່ຣະຫວ່າງກາງ ສະດວກຕໍ່ການປົກຄອງອານາຈັກທັງສອງພາກຄືອານາຈັກພາກຕາວັນອອກແລະອານາຈັກພາກຕາວັນຕົກ ອີກທັງເປັນສູນກາງລະຫວ່າງຢູໂຣບແລະເອເຊັຽເປັນເມືອງຫລວງທີ່ມີພູມປະເທດທີ່ດີ ອັນຍາກຕໍ່ການໂຈມຕີຂອງສັດຕູ ພຣະອົງຊົງສ້າງເມືອງຫລວງໃໝ່ນີ້ໃຫ້ນາມໃໝ່ວ່າ "**ຄອນສະແຕນຕິໂນເປີລ**" (Constantinople) ຊຶ່ງປັດຈຸບັນຄື ເມືອງອິສຕັນບູລ

(Istanbul) ຈັກກະພັດຄອນສະແຕນຕິນໄດ້ສ້າງພຣະວິຫານໃຫມ່ຂຶ້ນຫລາຍແຫ່ງ ຮວມທັງພຣະວິຫານ **"ຊັງຕາໂຊເຟັຍ"** (Sancta Sophia) ຊຶ່ງແປວ່າ "ພຣະປັນຍາບໍຣິສຸດ" ທີ່ເມືອງຄອນສແຕນຕິນໂນເປີລ ໂດຍມີ **"ທ່ານເປໄຕອາຄ"** (Patriarch) ເປັນຕໍາແໜ່ງສັງຄະຣາດແຫ່ງຄອນສແຕນຕິໂນເປີລໃນເວລາຕໍ່ມາ ສ່ວນທາງກຸງໂຣມນັ້ນບໍ່ໄດ້ເປັນເມືອງຫລວງອີກຕໍ່ໄປ ບໍ່ມີຈັກກະພັດປະທັບປົກຄອງຢູ່ ຈຶ່ງໄດ້ມອບໃຫ້ສັງຄະຣາດແຫ່ງກຸງໂຣມ (Pope) ເປັນຜູ້ສືບອໍານາດແທນ

**ພຣະວິຫານຊັງຕາໂຊເຟັຍ** (Sancta Sophia)



ນັກປວັດສາດໄດ້ໃຫ້ຂໍ້ຄິດເຫັນວ່າ ຈັກກະພັດຄອນສແຕນຕິນ ມີສະຕິປັນຍາອັນຫລັກແຫລມ ທີ່ໄດ້ເລືອກເອົາເມືອງຫລວງໃຫມ່ ແລະໄດ້ແຕ່ງຕັ້ງສາສນາຄຣິສຕຽນຂຶ້ນເປັນສາສນາປະຈໍາຊາດ ເພື່ອຄວາມຫວັງວ່າຈະໄດ້ນໍາເອົາມຫາອານາຈັກໂຣມັນຮວມເຂົ້າດ້ວຍກັນຢ່າງໝັ້ນຄົງແລະສງົບສຸກໂດຍອາສັຍສາສນາຄຣິສຕຽນເປັນຕົວເຊື່ອມສໍາພັນລະຫວ່າງອານາຈັກຝ່າຍຕາວັນອອກ ແລະອານາຈັກຝ່າຍຕາວັນຕົກ ແຕ່ຄວາມຫວັງນີ້ກໍ່ບໍ່ໄດ້ປາກົດເປັນຈິງ ແມ່ນວ່າມີຄົນເຂົ້າມາເປັນຄຣິສຕຽນຢ່າງໄວ ຈໍານວນຫລວງຫລາຍ ແຕ່ບໍ່ໄດ້ເຮັດໃຫ້ຄຣິສຈັກເຂັ້ມແຂງໃນດ້ານຄວາມເຊື່ອ ເພາະວ່າຄຣິສຈັກໄດ້ເກີດການຕໍ່ສູ້ກັນເອງ ແລະແຕກແຍກອອກເປັນຄຣິສຈັກຝ່າຍຕາວັນອອກແລະຝ່າຍຕາວັນຕົກໃນພາຍຫລັງ ເນື່ອງຈາກວ່າຜູ້ນໍາຄຣິສຈັກໄດ້ຫລົງອໍານາຈ ແລະບໍ່ມີຄວາມເຊື່ອອັນແທ້ຈິງ

## **ຫ້າ. ຂໍ້ຂັດແຍ້ງໃນເຣື້ອງຫລັກຄວາມເຊື່ອ**

ຜູ້ນໍາຄຣິສຕຽນໄດ້ເກີດການໂຕ້ແຍ້ງກັນ ໃນເຣື້ອງຕຣີເອການຸພາບກ່ຽວກັບຄວາມສັມພັນຣະຫວ່າງພຣະບິດາ ພຣະເຢຊູຄຣິສ ແລະພຣະວິນຍານບໍຣິສຸດ ຄຣິສຕຽນສ່ວນຫລາຍໃນເວລານັ້ນເຫັນພ້ອມວ່າພຣະເຈົ້າຊົງເປັນອົງພຣະຜູ້ເປັນເຈົ້າອົງດຽວ ແຕ່ມີຄໍາຖາມວ່າ ພຣະຄຣິສມີຄວາມກ່ຽວຂ້ອງກັບພຣະເຈົ້າຢ່າງໃດ? ພຣະຄຣິສໄດ້ຊົງມີຊີວິດຢູ່ໃນໂລກນີ້ໃນສະພາບເນື້ອໜັງອັນແທ້ຈິງ ຊົງທົນທຸກທໍຣະມານແລະສິ້ນ

ພຣະຊິນ ຊຶ່ງເປັນຂຶ້ນຈາກຕາຍຢ່າງແທ້ຈິງ ຊຶ່ງນຳຊີວິດໃຫມ່ມາສູ່ຜູ້ທີ່ເຊື່ອວາງໃຈໃນພຣະອົງ ດັ່ງນັ້ນ ຈຶ່ງມີຜູ້ສເນີວ່າ ພຣະອົງຕ້ອງມີສະພາບເຫນືອກວ່າມະນຸດທັມດາສາມັນ ແຕ່ມີປັນຫາວ່າ ຖ້ານັບພຣະເຢຊູຄຣິສເປັນພຣະເຈົ້າ ຈະບໍ່ກາຍເປັນວ່າມີພຣະເຈົ້າສອງອົງຫລື! ແລ້ວພຣະວິນຍານບໍຣິສຸດຊຶ່ງເປັນພຣະເຈົ້າຫລືບໍ່ ຖ້າເປັນພຣະເຈົ້າ ຈະບໍ່ກາຍເປັນພຣະເຈົ້າສາມອົງດອກຫລື ! ຂໍ້ໂຕ້ແຍ້ງນີ້ໄດ້ລຸກລາມໄປຫລາຍເຕີບ

ທີ່ເມືອງອາເຣັກຊັນເດັຍ (Alexandria) ປະເທດເອຢິບ ໃນເມືອງນັ້ນ ຊຶ່ງເປັນສູນກາງຂອງຄຣິສສາສນາທາງພາກຕາວັນອອກ ມີເຈົ້າອະທິການຜູ້ເຖົ້າທ່ານນຶ່ງມີນາມວ່າ **ອາຣິອຸສ** (Arius) ທ່ານສອນວ່າ **ພຣະເຢຊູຄຣິສມີສະພາບເຫນືອກວ່າມະນຸດ ແຕ່ຕ່ຳກວ່າພຣະເຈົ້າ** ແລະບໍ່ໄດ້ເປັນຢູ່ຕັ້ງແຕ່ຕົ້ນເດີມຈົນເຖິງສຸດປາຍ ດັ່ງທີ່ພຣະເຈົ້າຊຶ່ງເປັນຢູ່ ທ່ານອາຣິອຸສໄດ້ອ້າງຄຳສອນຂອງອັຄສາວົກໂປໂລ ໃນ 1 ໂກຣິນໂທ 15:23 ວ່າ **ພຣະເຢຊູຄຣິສເປັນຜົນແຣກແຫ່ງການຊົງສ້າງ** ດັ່ງນັ້ນພຣະເຢຊູຄຣິສຈຶ່ງຖືກສ້າງຂຶ້ນໂດຍພຣະເຈົ້າ ຈຶ່ງບໍ່ໄດ້ເປັນຢູ່ຮ່ວມກັບພຣະເຈົ້າ ຕັ້ງແຕ່ຕົ້ນເດີມ

ຂໍ້ໂຕ້ແຍ້ງນີ້ຂອງທ່ານອາຣິອຸສໄດ້ແຜ່ຂຍາຍທົ່ວ ໆ ໄປໃນຄຣິສຈັກ ເຮັດໃຫ້ທ່ານ **ອາທານາຊິອຸສ** (Athanasius) ຜູ້ເປັນຜູ້ບໍວລະບັດ (ຫລື ມັຄນາຍົກ) ໃນເມືອງດຽວກັນນັ້ນໄດ້ໂຕ້ຕອບຄືນ ໂດຍທ່ານມີຄວາມເຫັນວ່າຄຳສອນນີ້ຜິດ ແລະບໍ່ຍອມຮັບຄຳສອນດັ່ງກ່າວ ທ່ານໂຕ້ແຍ້ງວ່າ ຖ້າພຣະເຢຊູຄຣິສຊົງສະພາບເຫນືອກວ່າມະນຸດ ແຕ່ຕ່ຳກວ່າພຣະເຈົ້າແລ້ວ ພຣະເຢຊູຄຣິສຈະບໍ່ໄດ້ເປັນມະນຸດແລະບໍ່ເປັນພຣະເຈົ້າຄືກັນ ທ່ານອາທານາຊິອຸສສອນຕໍ່ໄປອີກວ່າ **ມີແຕ່ພຣະເຈົ້າອົງດຽວ ພຣະຄຣິສໄດ້ຊົງຮ່ວມສະພາບໃນພຣະເຈົ້າເຕັມບໍຣິບູນ** ດັ່ງນັ້ນພຣະເຈົ້າອົງດຽວ ແຕ່ມີສາມພາກສ່ວນຮ່ວມສະພາບດຽວກັນເປັນນຶ່ງຢ່າງສົມບູນ

ໃນເມື່ອມີປັນຫາດ້ານຫລັກຄວາມເຊື່ອເກີດຂຶ້ນດັ່ງນີ້ແລ້ວ ຈັກກະພັດຄອນສແຕນຕິນໄດ້ເອີ້ນໃຫ້ເຫລົ່າສັງຄະຣາດແລະເຈົ້າອະທິການທັງຫລາຍເຂົ້າມາປະຊຸມທີ່ເມືອງໄນເຊັຽ (Niceae) ໃກ້ກຸງຄອນສແຕນຕິໂນເປີລ ໃນ ຄ.ສ.325 ເພື່ອຕົກລົງຄວາມເຊື່ອທີ່ແຕກແຍກອອກເປັນສອງກຸ່ມນັ້ນ ໃຫ້ມີຂໍ້ສລຸບແນວດຽວກັນ ການປະຊຸມສະພາສັງຄະຣາດນີ້ມີຄວາມຍິ່ງໃຫຍ່ທີ່ສຸດໃນປວັດສາດ ມີຜູ້ນຳຄຣິສຈັກຈາກທົ່ວໂລກນັບຕັ້ງແຕ່ ອາຟຣິກາ ຊີເຣັຽ ເມໂຊໂປຕາເມັຽ ເປີເຊັຽ ປອນຕຸສ ຄາລາເຕັຽ ປາງຟີເຣັຽ ຊີຣີເກັຽ ຟຣີເຈັຽ ມາກາໂດເນັຽ ອາເຄຍາ ສເປນ ທາຣາເຊ ຮວມທັງກຸງໂຣມດ້ວຍ ໄດ້ເຂົ້າປະຊຸມເພື່ອຕົກລົງໃນເຣື່ອງຫລັກຂໍ້ເຊື່ອຂອງຄຣິສຕຽນ

**ຫົກ. ຜົນການຕົກລົງຈາກສະພາໄນຊີນ** (The Council of Nicene)

ການໂຕ້ແຍ້ງໃນເຣື່ອງຄວາມເປັນພຣະເຈົ້າຂອງພຣະເຢຊູຄຣິສ ໃນທີ່ສຸດການປະຊຸມຂອງສັງຄະຣາດແລະເຈົ້າອະທິການທັງຫລາຍທີ່ເມືອງໄນຊີນ ໄດ້ສລຸບຫລັກຄຳສອນເຣື່ອງຕຣີເອການຸພາບເປັນຄັ້ງທຳອິດ ເອີ້ນວ່າຫລັກຄຳສອນ **ໄນຊີນ** (Nicene Creed) ຊຶ່ງໄດ້ຄັດລອກແປອອກມາດັ່ງນີ້

ຂ້າພະເຈົ້າເຊື່ອໃນພຣະເຈົ້າ ພຣະບິດາຜູ້ຊົງສະຖິດໃນທີ່ສູງສຸດ ຜູ້ຊົງສ້າງສັພສິ່ງທັງປວງທີ່ເບິງເຫັນໄດ້ແລະເບິງເຫັນບໍ່ໄດ້ ຂ້າພະເຈົ້າເຊື່ອໃນອົງພຣະຜູ້ເປັນເຈົ້າແຕ່ພຣະອົງດຽວ ຄືພຣະເຢຊູຄຣິສພຣະບຸດອົງດຽວຂອງພຣະເຈົ້າ ຜູ້ຊົງບັງເກີດແຕ່ພຣະບິດາກ່ອນໂລກທັງປວງ ພຣະເຈົ້າແຫ່ງພຣະເຈົ້າແລະແສງສວ່າງແຫ່ງແສງສວ່າງ ພຣະເຈົ້າອັນແທ້ແຫ່ງພຣະເຈົ້າອັນແທ້ ຜູ້ຊົງໄດ້ຮັບພຣະຣາຊກຳເນີດແລະບໍ່ໄດ້ຖືກສ້າງຂຶ້ນຊົງຮ່ວມສະພາບດຽວກັນກັບພຣະບິດາເຈົ້າ ຜູ້ຊົງສ້າງສັພສິ່ງທັງປວງ ໂດຍເຫັນແກ່ມະນຸດຊາດແລະເພື່ອຄວາມຣອດພົ້ນຂອງເຮົາທັງຫລາຍ ຊົງສະເດັດລົງມາແຕ່ສວັນ ປະຕິສົນທິໃນຄັນຂອງມາຣີຍຽງພົມຈາຣີໂດຍຣິດເດດພຣະວິນຍານບໍຣິສຸດໄດ້ບັງເກີດເປັນມະນຸດ ແລະຖືກຕຶງເທິງໄມ້ກາງແຂນ ພາຍໃຕ້ອຳນາດປົນຕິປີຣາດ ເພື່ອເຮົາທັງຫລາຍ ຊົງທົນທຸກທໍຣະມານແລະຖືກຝັງໄວ້ ແລະໃນວັນທີສາມພຣະອົງຊົງກັບຄືນພຣະຊົນຕາມທີ່ໄດ້ກ່າວໄວ້ໃນພຣະຄັມພີ ແລະຊົງສະເດັດຂຶ້ນສູ່ສວັນ ຊົງນັ່ງເບື້ອງຂວາພຣະຫັດຂອງພຣະບິດາ ແລະພຣະອົງຈະສະເດັດຄືນມາອີກ ດ້ວຍສະງ່າຣາສີຂອງພຣະອົງ ເພື່ອພິພາກສາຄົນເປັນ ແລະຄົນຕາຍ ພຣະຣາຊອານາຈັກຂອງພຣະອົງຈະບໍ່ຮູ້ສິ້ນສຸດ ແລະຂ້າພະເຈົ້າເຊື່ອໃນພຣະວິນຍານບໍຣິສຸດອົງພຣະຜູ້ເປັນເຈົ້າ ຜູ້ຊົງປະທານຊີວິດ ຜູ້ຊົງສະເດັດມາແຕ່ພຣະບິດາແລະພຣະບຸດ (ພຣະວິນຍານຂອງພຣະເຈົ້າມາເຖິງເຮົາໂດຍກົງ ຈາກພຣະເຈົ້າແລະໂດຍທາງພຣະຄຣິສດ້ວຍ) ຜູ້ໄດ້ຊົງຮັບການນມັສການນຳດ້ວຍພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດທີ່ໄດ້ຕັດຜ່ານທາງສາສດາພຍາກອນ (ຫລືຜູ້ເຜີຍພຣະຄຳໃນພຣະຄັມພີເດີມ) ແລະຂ້າພະເຈົ້າເຊື່ອໃນຄຣິສຈັກສາກົນແຫ່ງອັຄສາວົກ ຂ້າພະເຈົ້າເຊື່ອໃນພິທີແຫ່ງບັພຕິສມາດຽວສຳຫລັບການຊຳຣະບາບ ຂ້າພະເຈົ້າຊອກຫາການທີ່ຕາຍກັບຄືນຊີພ ແລະໂລກໜ້າທີ່ຈະມາເຖິງ




ສະພາໄນຊີນ ໄດ້ສເໜີຜົນການປະຊຸມທີ່ຕົກລົງໄວ້ນີ້ແກ່ຈັກກະພັດຄອນສແຕນຕິນ ແຕ່ວ່າມີສມາຊິກ 5 ທ່ານຣວມທັງທ່ານອາຣິອຸສ ບໍ່ຍອມລົງນາມໃນຜົນການປະຊຸມນີ້ ທັງ 5 ທ່ານຈຶ່ງຖືກເນລະເທດອອກໄປແຕ່ການປະຊຸມນີ້ບໍ່ໄດ້ແກ້ບັນຫາອັນຫຍຸ້ງຍາກ ເພາະວ່າການໂຕ້ແຍ້ງຄົງດຳເນີນໄປຍາວນານຕລອດປວັດສາດ ເຖິງແມ່ນວ່າສັງຄະຣາດອາຣິອຸສໄດ້ຖືກເນລະເທດອອກໄປແຕ່ຕອນທຳອິດ ແຕ່ພາຍຫລັງໄດ້ກັບຄືນມາໃໝ່ ແລະເຮັດໃຫ້ອານາທາຊີອຸສກັບຖືກເນລະເທດອອກໄປແທນໃນ ຄ.ສ.337 ຄືໃນເວລາທີ່ຈັກກະພັດຄອນສະແຕນຕິນສິ້ນພຣະຊົນ

ຈັກກະພັດຄອນສະແຕນຕິນ ມີໂອຣົດສາມອົງ ໂອຣົສທັງສາມຕ່າງໄດ້ແຍ່ງຊີງອຳນາດກັນ ຈົນເຮັດໃຫ້ຣາຊອານາຈັກໂຣມັນຖືກແບ່ງອອກເປັນສາມສ່ວນ

**ຄອນສະແຕນຕິນທີ່ 2** (Constantine II) ໂອຣົດອົງໃຫຍ່ໄດ້ອານາຈັກຕອນປາຍຂອງທິດຕາວັນຕົກ ຍຶດຖືຫລັກຄຳສອນໄນຊີນ (Nicene) ຄອງຣາຊໄດ້ພຽງສອງປີສິ້ນພຣະຊົນໃນປີ ຄ.ສ.340

**ຄອນສະແຕນ** (Constans) ໂອຣົດອົງທີ 2 ໄດ້ອານາຈັກພາກຕາວັນອອກ ຍຶດຫລັກຄຳສອນຝ່າຍໄນຊີນ ( Nicene) ທຳໃຫ້ຄຣິສຈັກຝ່າຍໄນຊີນຈະເຣີນຮຸ່ງເຮືອງ ພຣະອົງຊິ້ນພຣະຊົນເພາະຖືກລອບຂ້າໃນປີ ຄ.ສ.350

**ຄອນສະແຕນຕິອຸສ** (Constantius) ໂອຣົດອົງທີ 3 ໄດ້ປົກຄອງອານາຈັກທັງຫມົດ ຍຶດຫລັກຄຳສອນຂອງອາຣິອຸສ (Arius) ທຳໃຫ້ຄຣິສຈັກຝ່າຍອາຣິອຸສໄດ້ອຳນາດທີ່ອານາຈັກໂຣມັນ ດັ່ງນັ້ນຜູ້ນຳຄຣິສຕຽນຝ່າຍໄນຊີນຈຶ່ງຖືກຂົ່ມເຫັງ ແລະຖືກຂັບໄລ່ອອກໄປຈາກອານາຈັກໂຣມັນ ຄອນສະແຕນຕິອຸສຊິ້ນພຣະຊົນໃນປະມານປີ ຄ.ສ.361

**ຈູລຽນ** (Julian) ຂຶ້ນເປັນຈັກກະພັດໃນ ຄ.ສ.361 ທ່ານເປັນຫລານທ່າງ ໆ ຂອງຈັກກະພັດຄອນສະແຕນຕິນ ທ່ານເຄີຍຮັບການສຶກສາແບບຄຣິສຕຽນແຕ່ບໍ່ມີຄວາມເຊື່ອ ຫັນກັບໄປນັບຖືວິນຍານຊົ່ວແລະສາສນາເກົ່າຂອງໂຣມັນ ອີກທັງນິຍົມ ນີໂອເພລໂຕນິຊຶມ (Neoplatonism) ເພື່ອຣິດອຳນາດຄຣິສຈັກຂອງຝ່າຍອາຣິອຸສລົງ ຊຶ່ງໃນເວລານັ້ນກຳລັງເຮືອງອຳນາດຫລາຍ ແມ່ນວ່າຄອນສະແຕນຕິອຸສໂອຣົດທີສາມໄດ້ຊິ້ນຊີວິດໄປແລ້ວ ຈູລຽນໄດ້ຂົ່ມເຫັງທາຣຸນຄຣິສຕຽນຢ່າງໂຫດຮ້າຍ ແລະຕິຕຽນຈັກກະພັດຄອນສະແຕນຕິນວ່າ ລົ້ມເຫລວບໍ່ຖືກຕ້ອງ ທີ່ເອົາສາສນາຄຣິສຂຶ້ນມາເປັນສາສນາປະຈຳຊາດ ເພາະວ່າສາສນາຄຣິສຕໍ່ສູ້ກັນເອງ ແລະຂັດແຍ້ງໃນເຣື່ອງຫລັກຄວາມເຊື່ອ ແລະບໍ່ສາມາດນຳໃຫ້ອານາຈັກຝ່າຍຕາວັນອອກແລະຝ່າຍຕາວັນຕົກຣວມເຂົ້າກັນໄດ້ ເຖິງຢ່າງໃດກໍຕາມຄຣິສຈັກໄດ້ຮັບຄວາມກະທົບກະເທືອນບໍ່ຫລາຍປານໃດ ເພາະວ່າຈັກກະພັດຈູລຽນໄດ້ຂຶ້ນຄອງຣາຊພຽງສອງປີເທົ່ານັ້ນແລະຕາຍໃນ ຄ.ສ.363

**ທີໂອໂຣຊີອຸສທີນຶ່ງ** (Theolosiusi I) ຂຶ້ນຄອງຣາດໃນ ຄ.ສ.379-395 ເປັນຈັກກະພັດຄຣິສຕຽນທີ່ເຂັ້ມແຂງ ໄດ້ອອກກົດຫມາຍລົງໂທດປະຊາຊົນທີ່ນັບຖືສາສນາອື່ນ ໆ ແລະຕັດສິດທິຫລາຍແນວຕໍ່ຄົນທີ່ບໍ່ເປັນຄຣິສຕຽນ ຈັກກະພັດທີໂອໂລຊີອຸສໄດ້ຍົກຫລັກຂໍ້ເຊື່ອໄນຊີນ (Nicene Creed) ຂຶ້ນມາໃຫມ່ອີກເທື່ອນຶ່ງ ໂດຍໄດ້ຈັດໃຫ້ມີການປະຊຸມເທື່ອທີສອງ ທີ່ກຸງຄອນສະແຕນຕິໂນເປີລໃນ ຄ.ສ.381 ເອີ້ນການປະຊຸມນີ້ວ່າ The Second Ecumenical Council ແລະໄດ້ສັ່ງຂັບໄລ່ຄຣິສຈັກຝ່າຍອາຣິອຸສ ຊຶ່ງກຳລັງມີອຳນາດທີ່ວມທາອານາຈັກອອກໄປຈົນຫມົດສິ້ນ

ຈາກການສຶກສາປວັດສາດຄຣິສຈັກໃນບົດທ່ານຜ່ານມານີ້ ໄດ້ໃຫ້ບົດຮຽນແກ່ເຮົາໃນປັດຈຸບັນຢ່າງຫລວງຫລາຍ ເມື່ອເຮົາເບິ່ງໃນປວັດສາດອາດເຫັນວ່າ ການກະທຳຂອງຜູ້ນຳຄຣິສທີ່ຫລົງອຳນາດແຍ່ງຊີງການເປັນໃຫຍ່ນັ້ນ ເປັນເຣື່ອງຫນ້າທີ່ວ ບໍ່ຫນ້າທີ່ຈະປ່ອຍໃຫ້ເກີດການຕໍ່ສູ້ກັນເອງຫລາຍເຖິງປານນັ້ນ ແຕ່ແທ້ທີ່ຈິງຫາກວ່າເຮົາເບິ່ງເຖິງເຫດການໃນປັດຈຸບັນ ການຕໍ່ສູ້ກັນເອງກໍຍັງບໍ່ໄດ້ສິ້ນສຸດລົງ ການຕໍ່

ສູ້ຍັງຄົງມີຢູ່ໃນທຸກບ່ອນທີ່ມີຜູ້ຊອກຫາອຳນາດ ຊຶ່ງຄຣິສຕຽນຣະດັບຜູ້ນຳຄວນຈະໄດ້ພິຈາຣະນາຕົນເອງຕໍ່ພຣະເຈົ້າ ແລະຫາຄວາມເຂົ້າໃຈໃໝ່ ພ້ອມເບິ່ງເຫັນເປົ້າໝາຍທີ່ແຈ່ມແຈ້ງວ່າ ພຣະເຈົ້າຊົງເອີ້ນເຮົາມາໃຫ້ຖ່ອມໃຈຮັບໃຊ້ ບໍ່ແມ່ນຫາອຳນາດຫລືຕຳແໜ່ງສັກສີເພື່ອຄວາມໂດ່ງດັງຂອງຕົນເອງ ແມ່ນເປັນຄວາມຈິງຢູ່ວ່າ ຫາກມີຄຳສອນຜິດເກີດຂຶ້ນເຮົາຍ່ອມບໍ່ສາມາດປ່ອຍປະລະເລີຍ ຫລືນິ່ງເສີຍຢູ່ໄດ້ ເຮົາຈຳເປັນຕ້ອງຢືນຫຍັດຕາມຈິງໃນພຣະເຈົ້າຕາມຄຳສອນຂອງພຣະຄັມພີ ແຕ່ວ່າການຕໍ່ສູ້ແລະຢືນຫຍັດຄວາມຈິງດ້ວຍບໍຣິສຸດໃຈ ບໍ່ແມ່ນເພື່ອການແຍ່ງຊີງຕຳແໜ່ງຫລືອຳນາດຊື່ສຽງ ນອກຈາກນີ້ປຶດຣຽນນີ້ຍັງໄດ້ສອນເຮົາອີກວ່າ ຄຣິສຈັກທີ່ຕ້ອງປະສົບຄວາມຍາກລຳບາກແລະການຂົ່ມເຫັງນັ້ນ ຄຣິສຕຽນກັບຕັ້ງໝັ້ນໃນຄວາມເຊື່ອກະທັ່ງຍອມຕາຍເພື່ອພຣະນາມຂອງພຣະເຢຊູຄຣິສ ແຕ່ເມື່ອຄຣິສຈັກໄດ້ຮັບການຮັບຮອງມີຄວາມສະດວກສບາຍໃນການເຂົ້າເປັນຄຣິສຕຽນ ໂດຍບໍ່ໄດ້ສົນໃຈວ່າການມີຄວາມເຊື່ອແທ້ ການກັບໃຈບັງເກີດໃໝ່ ການປ່ຽນແປງຊີວິດເປັນສິ່ງສຳຄັນແລ້ວ ຈະເຮັດໃຫ້ຄຣິສຈັກອ່ອນແອໃນຄວາມເຊື່ອ ແມ່ນວ່າມີຄົນຈຳນວນຫລວງຫລາຍກໍຈິງຢູ່ ແຕ່ອາດນຳພາຄຣິສຈັກອອກນອກລູ່ນອກທາງ ກາຍຫ່າງອອກໄປຈາກຄຳສອນອັນຖືກຕ້ອງ ອັນນີ້ໜ້າຈະເປັນຂໍ້ຊູໃຈຜູ້ນຳຄຣິສຈັກທີ່ມີຄົນຈຳນວນນ້ອຍແລະຕ້ອງປະສົບກັບຄວາມຍາກລຳບາກໂດຍບໍ່ຕ້ອງທໍ້ໃຈ ແຕ່ໃຫ້ສ້າງຄວາມເຂັ້ມແຂງໃຫ້ເກີດຂຶ້ນໃນຄຣິສຈັກທີ່ຕົນເອງຮັບຜິດຊອບຢູ່ໂດຍການເຊື່ອວາງໃຈໃນພຣະເຈົ້າ ແລະຂໍການນຳພາກຈາກອົງພຣະວິນຍານບໍຣິສຸດ ເອເມນ

# ບົດທີ 5

## ສູ່ແດນກັນດານ
## ເຖິງການຂຍາຍອາຣາມເຂຕ

ຄ.ສ. 285 - 910



ເມື່ອມະຫາອານາຈັກໂຣມັນເປັນຄຣິສຕຽນເກືອບຫມົດແລ້ວ ຄຣິສຈັກເກີດຂື້ນຫລວງຫລາຍເຕັມຣາຊອານາຈັກ ອັນເປັນສິ່ງທີ່ນ່າຍິນດີ ມີການສ້າງຕຶອາຄານງານເດັ່ນ ຫາກແຕ່ວ່າເປັນການຈະເຣີນທາງວັດຖຸຫລາຍກວ່າຄວາມເຊື່ອຝ່າຍຈິດວິນຍານ ຄຣິສຈັກໄດ້ຄົນເຂົ້າມາເປັນສມາຊິກຈຳນວນຫລາຍ ແຕ່ຜູ້ນຳຄຣິສຕຽນກັບຫັນມາຜິດຖຽງກັນເອງໃນເຣື້ອງຫລັກຄຳສອນຂອງຄຣິສຈັກ ພວກສັງຄະຣາດແລະເຈົ້າອະທິການແບ່ງເປັນພັກເປັນພວກຄົນລະຝ່າຍ ເພາະຕ້ອງການເປັນໃຫຽ່ ຝ່າຍນຶ່ງຢຶດອຳນາດໄດ້ກໍຂັດຂວາງຜົນປະໂຍດຂອງອີກຝ່າຍນຶ່ງ ຫລືຂັບໄລ່ເນລະເທດຝ່າຍກົງຂ້າມໃຫ້ອອກໄປ ແລ້ວຝ່າຍທີ່ຖືກຂັບໄລ່ອອກໄປແຕ່ກ່ອນນັ້ນເມື່ອໄດ້ຮັບອຳນາດຄືນມາຈາກເຈົ້າຊີວິດອົງໃຫມ່ ກໍໄດ້ຄືນເມືອມາໃຫມ່ແລະຖືໂອກາດລົ້ມອຳນາດຝ່າຍທີ່ຢູ່ກ່ອນ ແລະຂັບໄລ່ຝ່າຍກົງກັນຂ້າມອອກໄປ ເປັນດັ່ງນີ້ກັບໄປກັບມາຫລາຍເທື່ອ ພວກຄຣິສຕຽນທີ່ມີຄວາມເຊື່ອເຂັ້ມແຂງແທ້ຈິງ ໂດຍສະເພາະຢ່າງຍິ່ງພາກຕາວັນອອກ ຊຶ່ງມີຄຣິສຕຽນເຂັ້ມແຂງຕົກທອດມາແຕ່ສມັຍທຳອິດຮູ້ສຶກເບື່ອຫນ່າຍຕໍ່ການຕໍ່ສູ້ຜິດຖຽງກັນ ເບື່ອຫນ່າຍຕໍ່ຜູ້ນຳຄຣິສຈັກ ເບື່ອຫນ່າຍສັງຄະຣາດຫລືເຈົ້າອາທິການທີ່ຫວັງແຕ່ລາບຍົດ ຄຣິສຕຽນທົ່ວໄປທີ່ບໍ່ມີຄວາມເຊື່ອເຂັ້ມແຂງໄດ້ດຳເນີນຊີວິດຢູ່ຝ່າຍໂລກບໍ່ເອົາຈິງເອົາຈັງກັບການເຊື່ອຟັງພຣະຄັມພີ ຫລືບັງເກີດໃຫມ່ແທ້ຈິງ ດັ່ງນັ້ນພວກຄຣິສຕຽນທີ່ເຄັ່ງຄັດຄິດວ່າຈະເຮັດຢ່າງໃດຈຶ່ງຈະໄດ້ຊີວິດແຫ່ງຄວາມຣອດພົ້ນແທ້ຈິງ ບາງຄົນຕອບວ່າ **"ໃຫ້ເຮົາອອກໄປຈາກບ້ານເມືອງເຂົ້າໄປໃນປ່າ ໄປຍັງທົ່ງໄຮ່ທົ່ງນາ ເພື່ອຈະໄດ້ຍິນແຕ່ສຽງຊາວບ້ານຮ້ອງເພັງສັນເສີນພຣະເຈົ້າ ຫນີຈາກຈັກກະພັດຜູ້ໂລບ ແລະໂຫດຮ້າຍທີ່ເຂົ້າຂ້າງຄຣິສຕຽນຝ່າຍນຶ່ງແລະຂ້າທຳລາຍຄຣິສຕຽນອີກຝ່າຍນຶ່ງ ໃຫ້ພວກເຮົາຫນີຈາກສັງຄະຣາດ ເຈົ້າອາທິການທີ່ຜິດສິນຄິດກົງຫລົງອຳນາດ ຫນີໄປຈາກຄົນທັງປວງທີ່ໃຊ້ຊີວິດຟູມເຟືອຍຢູ່ໃນສັງຄົມ ເພື່ອເຮົາຈະມີຊີວິດສຸກສະງົບຕາມລຳ**

ພົງ ເພື່ອວິນຍານຈິດຂອງພວກເຮົາຈະໄດ້ສູງຂຶ້ນ" ໂດຍສະເພາະຢ່າງຍິ່ງພວກຄຣິສຕຽນທີ່ຮັບອິດທິພົນຄຳສອນນອກຮີດແລະຕາມຄວາມເຊື່ອຂອງຄົນໃນທ້ອງຖິ່ນ ຈຶ່ງເກີດມີແນວຄິດໃໝ່ກາຍເປັນຄຣິສຕຽນນັກບວດ ດັ່ງທີ່ຈະກ່າວຕໍ່ໄປນີ້

**ຄຣິສຕຽນແບບລືສີຊີໄພ, ນັກບວດ** (Hermit, Monks)

ເມື່ອການກົດຂີ່ຂົ່ມເຫັງຄຣິສຕຽນສິ້ນສຸດລົງ ຄົນສາມັນທົ່ວໄປຈຳນວນຫລາຍໄດ້ເຂົ້າມາເປັນຄຣິສຕຽນຢ່າງງ່າຍ ໆ ດັ່ງນັ້ນຄຣິສຕຽນສ່ວນຫລາຍຈຶ່ງດຳເນີນຊີວິດຕາມໂລກແລະສັງຄົມ ຫລາຍຄົນຮູ້ສຶກວ່າຄຣິສສາສນາສະດວກແລະງ່າຍເກີນໄປໃນເຣື່ອງການຮັບຄວາມຣອດພົ້ນ ເພາະພຣະອົງຮັບແຕ່ປາກວ່າເຊື່ອເທົ່ານັ້ນກໍຈະພົບຄວາມຣອດພົ້ນ ຈຶ່ງມີຄວາມຄິດວ່າ ຜູ້ທີ່ຕ້ອງການເປັນຄຣິສຕຽນທີ່ເຄັ່ງຄັດຕ້ອງພາກັນອອກໄປຢູ່ໃນປ່າຢ່າງໂດດດ່ຽວ ຢູ່ໃນທີ່ກັນດານ ຕາມປ່າຕາມພູ ຫລືໃນຖ້ຳ ເພື່ອສແວງຫາຈິດວິນຍານທີ່ສູງຂຶ້ນຕາມຄວາມເຊື່ອຂອງລັດທິທີ່ມີຢູ່ໃນສມັຍບູຮານ ຊຶ່ງແຕ່ເດີມໄດ້ແບ່ງອອກເປັນສອງພວກໃຫຍ່ ໆ ຄື **ພວກລືສີ** (Hermit) ແລະ **ພວກນັກບວດ** (Monks) ຊຶ່ງເປັນພວກທີ່ມີມາກ່ອນຍຸກນີ້ (ພວກນີ້ໄດ້ແປງຄວາມຄິດຈາກພວກນອສຕິກ) ນອກຈາກນີ້ຍັງມີພວກຜູ້ຍິງທີ່ເປັນຊີ ໃນຕອນທຳອິດພວກລືສີຫມາຍເຖິງພວກທີ່ຢູ່ຕາມແດນກັນດານ ສ່ວນນັກບວດຫມາຍເຖິງຜູ້ຢູ່ໂດດດ່ຽວ ແຕ່ຕໍ່ມາພາຍຫລັງພວກລືສີຫມາຍເຖິງຜູ້ຢູ່ໂດດດ່ຽວຢ່າງແທ້ຈິງ ແລະພວກນັກບວດຫມາຍເຖິງຜູ້ທີ່ສລະຈາກໂລກຈາກບ້ານເມືອງ ແລະຄອບຄົວໄປຢູ່ເປັນຫມູ່ ໆ ດັ່ງນັ້ນພວກຄຣິສຕຽນທີ່ບໍ່ມີຄວາມເຂົ້າໃຈແທ້ຈິງ ໄດ້ຖືເອົາຄວາມຄິດຂອງພວກລືສີນີ້ ພາກັນສລະໂລກອອກບວດ ແລະອອກໄປຢູ່ໃນແດນກັນດານ ເພື່ອສແວງຫາວິນຍານຈິດທີ່ສູງຂຶ້ນ ແຕ່ຄວາມຈິງແລ້ວກັບບໍ່ໄດ້ພົບຄວາມສຸຂສງົບແລະບໍ່ເກີດປໂຍດແຕ່ນ້ອຍ

**ຄວາມເຊື່ອຂອງພວກຜູ້ສລະໂລກ**

ພວກລືສີແລະນັກບວດທີ່ສລະໂລກແລະສັງຄົມອອກໄປຢູ່ໃນແດນກັນດານ ຖືຫລັກຄຳສອນເຫມືອນພວກນອສຕິກ (Gnostic) ພວກນີ້ມີຄວາມເຊື່ອວ່າໂລກນີ້ຊົ່ວຊ້າ ຮ່າງກາຍເນື້ອຫນັງເປັນກິເລດຕັນຫາ ສົມຄວນຕ້ອງທໍລະມານເພື່ອທຳລາຍບາບຊົ່ວແລະຄວາມຕ້ອງການຂອງເນື້ອຫນັງ ດ້ວຍເຫດນີ້ຈຶ່ງ



ພາກັນໄປອາສັຍຢູ່ຕາມຖ້ຳ ນອນເທິງຫີນຜາ ແລະກິນອາຫານແຕ່ພໍເລັກນ້ອຍເພື່ອຢັງຊີພ ບາງເທື່ອກໍກິນແຕ່ຜົນຫມາກໄມ້ ຫົວຜັກກາດ ບາງຄົນອົດນອນຈົນບໍ່ມີເຮື່ອແຮງ ມີເຣື່ອງເລົ່າກັນວ່າບາງຄົນກຳລັງກິນຢູ່ກໍຍັງປ່ອຍໃຫ້ອາຫານຫລຸດຈາກປາກແລະຕົກຫລົ່ນໄປເສັຽ ມີການແຂ່ງກັນວ່າໃຜຈະທົນທຸກທໍຣະມານໄດ້ຫລາຍກວ່າກັນ ນັກບວດບາງຄົນຢືນຂາດຽວເຫມືອນນົກຍາງ ຈົນກະທັ້ງເປັນລົມລົ້ມບາງຄົນຂຶ້ນໄປຢູ່ເທິງເສົາສູງ 60 ຟຸດກວ້າງ 4 ຟຸດຕ້ອງມີຄົນສົ່ງອາຫານຂຶ້ນໄປຈຶ່ງຈະໄດ້ກິນ ນັກບຸນເທິງເສົາທີ່ມີຊື່ສຽງຫລາຍທີ່ສຸດ ແມ່ນນັກບຸນ ຊີໂມນ ສໄຕໄລຕິສ ຄ.ສ.390 -459 ໃນຮູບພາບ ນັກບວດບາງພວກເຄັ່ງຄັດຫລາຍ ບໍ່ຫລຽວເບິ່ງສັຕຣີໃດ ໆ ກະທັ້ງແມ່ຫລືຍາດພີ່ນ້ອງຂອງຕົນ ແຍກຕົວອອກ

ຢູ່ຕາມລຳພັງ ໄຮ້ຍາດຂາດມິດແລະບໍ່ເຮັດການງານອັນໃດ ຊຶ່ງເປັນແນວນີ້ບໍ່ເປັນປະໂຍດຕໍ່ໃຜ ພວກລືສີແລະນັກບວດບໍ່ຍອມພົບຫລືເວົ້ານຳໃຜ ຢູ່ໂດດດ່ຽວຕາມລຳພັງຈົນກະທັ້ງ ເກີດຕາຝາດວາດຣະແວງ ວ່າມີຜີປີສາດເຝົ້າຄອຍລົບກວນ

**ນັກບຸນແອນໂທນີ** (Anthony)

ປະມານ ຄ.ສ.285 ໄດ້ຊື່ວ່າເປັນບິດາຂອງກຸ່ມລືສີ ທີ່ເກີດຂຶ້ນໃນປະເທດ ອີຢິບ ທ່ານແຍກຕົວອອກໄປຢູ່ຕາມລຳພັງໃນທະເລຊາຍຂອງປະເທດອີຢິບໃຊ້ເວລາສ່ວນຫລາຍໃນການທໍລະມານຕົນ ແລະຕໍ່ສູ້ກັບຜີປີສາດທີ່ມາທົດລອງຈິດໃຈ ມີຄົນເປັນຈຳນວນພັນ ໆ ເອົາຕາມນັກບວດແອນໂທນີ ໄປອາສັຍຢູ່ໃນຖ້ຳຕາມລຳພັງຜູ້ດຽວເປັນເວລາຫລາຍປີໃນປະເທດອີຢິບ ພວກນີ້ເປັນທີ່ຮູ້ຈັກກັນຢ່າງກວ້າງຂວາງ ແລະໄດ້ຮັບຄວາມນັບຖືວ່າເປັນຜູ້ທີ່ສະອາດ ແລະເປັນຢູ່ແບບງ່າຍ ໆ

**ລັດທິອາຣາມເຂດ** (Monasticism)

ການແຍກຕົວອອກໄປຢູ່ປ່າຕາມລຳພັງບໍ່ແຕ່ງງານ ບໍ່ມີຍາດມິດສະຫາຍ ບໍ່ໄດ້ເຮັດວຽກງານບໍ່ໄດ້ເວົ້ານຳໃຜ ແທນທີ່ຈະມີຈິດໃຈທີ່ສງົບແທ້ຈິງ ກັບບໍ່ເປັນດັ່ງນັ້ນ ພວກນີ້ບໍ່ສາມາດຕັ້ງຈິດໃຈໃຫ້ເປັນສະມາທິໄດ້ດັ່ງຈຸດປະສົງທີ່ສລະໂລກອອກມາເປັນລືສີ ແຕ່ກັບມີຄວາມຮູ້ສຶກຕັນຫາທາງເນື້ອຫນັງ ນຶກຄິດວາດພາບລາມົກໃນຈິດໃຈ ບາງຄົນມີຄວາມຮູ້ສຶກທາງເພດຢ່າງຮຸນແຮງ ກໍຍິ່ງທໍລະມານຕົນຫລາຍຂຶ້ນໂດຍຕັດອະວັຍວະທາງເພດອອກ ແຕ່ຈິດໃຈຍັງຄິດວຸ້ນວາຍບັງຄັບຕົວບໍ່ໄດ້ ບໍ່ສາມາດມີສະມາທິໄດ້ ບາງຄົນທໍລະມານຕົນຢ່າງຮຸນແຮງ ໂດຍການຕັດນິ້ວອອກເທື່ອລະນິ້ວ ເພື່ອງົດເວັ້ນຄວາມຮູ້ສຶກທາງເພດ ແຕ່ກໍຍັງບໍ່ສາມາດເອົາຊະນະຈິດໃຈຂອງຕົນເອງໄດ້ ດັ່ງນັ້ນພວກລືສີເຫລົ່ານັ້ນເຫັນວ່າການຢູ່ຕາມລຳພັງບໍ່ໄດ້ເກີດປໂຍດບໍ່ເຮັດໃຫ້ຈິດວິນຍານສູງຂຶ້ນ ຈຶ່ງໄດ້ປ່ຽນວິທີໃຫມ່ໂດຍການມາ ຢູ່ຮ່ວມກັນເປັນກຸ່ມ ຮ້ອງວ່າການຢູ່ອາຣາມເຂດ (Monastic) ພວກລືສີເຫລົ່ານີ້ຫັນເຂົ້າມາຮ່ວມກັນເປັນຫມູ່ເປັນເຫລົ່າ ເພື່ອສຶກສາພຣະຄັມພີ ອ້ອນວອນອະທິຖານແລະຊ່ວຍປະຊາຊົນໃນການເພາະປູກ ພວກລືສີແລະນັກບວດເຫລົ່ານີ້ຫັນເຂົ້າມາສຶກສາພຣະຄຣິສທັມຄັມພີຢ່າງຈິງຈັງຮຽນຮູ້ພາສາເຮັບເຣີ ແລະເຂົ້າໃຈພຣະຄັມພີຫລາຍຂຶ້ນໄດ້ສ້າງຄຸນປໂຍດຫລວງຫາຍ ຕໍ່ຄຣິສຈັກໃນພາຍຫລັງຕໍ່ມາ

ການຢູ່ອາຣາມເປັນຫມູ່ ໆ ຊ່ວຍໃຫ້ພວກລືສີເຫລົ່ານີ້ມີຈິດໃຈສງົບ ມີສມາທິ ມີຄວາມເຂົ້າໃຈພຣະຄັມພີຫລາຍຂຶ້ນ ແລະເຊົາຄວາມຮູ້ສຶກທາງເພດ ແລະຄວາມວາດລະແວງພວກຜີປີສາດ ອີກທັງໄດ້ສ້າງປໂຍດແກ່ປະຊາຊົນແລະຊາວບ້ານ ເມື່ອເຖິງຄາວປະສົບພັຍທຸກຍາກ ແຫ້ງແລ້ງຫລືສົງຄາມ ພວກນັກບວດເຫລົ່ານີ້ໄດ້ເຂົ້າໄປໃນເມືອງເພື່ອຂໍບໍຣິຈາກອາຫານ ແລະສິ່ງຂອງໄປຊ່ວຍຜູ້ທຸກຍາກ ຊຶ່ງນັບວ່າການໃຊ້ຊີວິດແບບນັກບວດໃນອາຣາມນີ້ ມີຄຸນປະໂຍດຫລາຍກວ່າການໄປທໍລະມານຕົວແຕ່ພຽງຜູ້ດຽວ ມີລືສີບາງອົງໄດ້ຮັບຄວາມນັບຖືຫລາຍ ຄຣິສຈັກຈຶ່ງມັກເຊີນເອົາໄປເປັນສັງຄະຣາດ ແລະເຈົ້າອາທິການຢູ່ໃນເມືອງ ເຖິງປານນັ້ນລືສີ ຫລືນັກບວດເຫລົ່ານີ້ກໍຍັງໃຊ້ຊີວິດສັນໂດດຢູ່ຕາມເດີມ ຈຶ່ງເປັນເຫດໃຫ້ຄຣິສຈັກເອົາແບບຢ່າງ ໂດຍຄຣິສຕຽນໄດ້ເຂົ້າມາເປັນນັກບວດ ແລະນາງຊີຢູ່ໃນຄຣິສຈັກໃນພາຍຫລັງຕໍ່ມາ ແລະເອີ້ນເປັນບາດຫລວງຫລື ຄຸນພໍ່ (Father) ແລະຊິສເຕີ (Sister)

**ນັກບວດສຳຄັນໃນປະວັດສາດ**

ເຈີໂຣມ (Jerome) ຄ.ສ.340-420 ທຳອິດທ່ານເປັນລີສີຢູ່ໃນທະເລຊາຍຊີເຣັຽເປັນເວລາດົນນານ ແລະເຫັນວ່າການຢູ່ໂດດດ່ຽວຖ້າມກາງສັດປ່ານັ້ນ ໃນຈິດໃຈຂອງທ່ານຄິດເຖິງແຕ່ນາງບຳເລີໃນກຸງໂຣມ ເຖິງວ່າທ່ານຈະທໍລະມານກາຍໂດຍເອົາຫີນທຸບເອິກ ແຕ່ຕັນຫາທີ່ຢູ່ໃນຄວາມຄິດກໍຍັງເຝົ້າຫລອກຫລອນທ່ານຢູ່ບໍ່ນານຕໍ່ມາທ່ານຍົກເລີກການທໍລະມານຕົນ ແລະຫັນກັບໄປ ສຶກສາພຣະຄັມພີຢ່າງເຄັ່ງຄັດ ເຮັດໃຫ້ຕັນຫາ ແລະຄວາມ



ຕ້ອງການທາງເພດລົດນ້ອຍລົງ ເລີຍຕັດສິນໃຈຄືນໄປຢູ່ໃນເມືອງແລະສອນພຣະຄັມພີແກ່ຄຣິສຕຽນ ແກ່ພວກຜູ້ຍິງ ແລະເຈົ້າອາທິການບາງຄົນທ່ານໄດ້ນຳເອົາສິງໂຕຕົວນຶ່ງ ທີ່ຈົງຮັກພັກດີຕໍ່ທ່ານໄປຢູ່ນຳ

ທ່ານເຈີໂຣມເປັນນັກສຶກສາທີ່ຍິ່ງໃຫຽ່ ທ່ານຮຽນຮູ້ຈັກພາສາເຮັບເຣີ ແລະໄດ້ແປພຣະຄັມພີເດີມຈາກພາສາເຮັບເຣີເປັນພາສາລາຕິນອີກ ທັງແປພຣະຄັມພີໃຫມ່ຈາກພາສາກຣີກເປັນພາສາລາຕິນ ເອີ້ນວ່າພຣະຄັມພີສບັບ **ໂວລເກດ**(Vulgate,ແປວ່າພຣະຄັມພີພາສາສາມັນ) ຊຶ່ງໃນຄຣິສຈັກໂຣມັນຄາທໍຣິກໄດ້ໃຊ້ຢູ່ຈົນເຖິງປັດຈຸບັນນີ້ ຕໍ່ມາພາຍຫລັງເຈົ້າຊີວິດເຈມສ໌ແຫ່ງອັງກິດໄດ້ນຳເອາພຣະຄັມພີສບັບໂວລເກດນີ້ແປເປັນສບັບພາສາອັງກິດ ອັນເປັນສບັບທີ່ມີພາສາຫນ້າອ່ານທີ່ສຸດຊື່ວ່າ ພຣະຄັມພີສບັບຄິງເຈມສ໌ (King James's Holy Bible) ແລະຈາກສບັບພາສາອັງກິດນີ້ໄດ້ຖືກແປຖືກແປເປັນພາສາຕ່າງ ໆ ທົ່ວໂລກ

ທ່ານເຈີໂຣມບໍ່ເຄັ່ງຄັດເຫມືອນນັກບວດພວກກ່ອນ ໆ ໃນອາຣາມທີ່ຢູ່ໃນເມືອງເບດເລເຮັມມີສຸພາບສັຕຣີຜູ້ມີກຽດແຫ່ງກຸງໂຣມໄດ້ມາຕັ້ງສຳນັກຊີຢູ່ໃກ້ກັບອາຣາມຂອງທ່ານ ແມ່ຊີພວກນີ້ໄດ້ຊ່ວຍທ່ານແປພຣະຄັມພີ

ທ່ານເຈີໂຣມ ສົນໃຈວັນຄະດີກຣີກ ແລະໂຣມັນ ນິຍົມຄຳສອນຂອງຊີຊີໂລ (Cicero) ຊຶ່ງເປັນນັກປຣາດຊາວກຣີກ ເຈີໂຣມເປັນທ່ວງຄຣິສຈັກຝ່າຍຕາວັນຕົກ ແຕ່ໃນທີ່ສຸດເມື່ອພວກຊາວປ່າ (Babarians) ໄດ້ບຸກລຸກລົງມາຕາມທາງເພື່ອຍຶດກຸງໂຣມ ເຮັດໃຫ້ປະຊາຊົນຈຳນວນຫລາຍຕ້ອງລີບຫນີພັຍເຂົ້າໄປຍັງອາຣາມຂອງທ່ານເຈີໂຣມ ທ່ານໄດ້ສົງເຄາະດູແລ ໃຫ້ຄວາມຊ່ວຍເຫລືອຜູ້ຫລີ້ພັຍເຫລົ່ານັ້ນຢ່າງເຕັມທີ່

**ຄຣິສອອສຊຸ້ມ** (Chrysosom) ຫລືຄຣິສອອສຕົມ ຄ.ສ. 345-407

ທ່ານເປັນນັກບວດທີ່ສຳຄັນອີກຜູ້ນຶ່ງຢູ່ທາງເໜືອຂອງເມືອງອັນຕິໂອເກັຽ (Antioch) ແຂວງຊີເຣັຽ ທ່ານຕ້ອງການອອກບວດແຕ່ຄັ້ງຍັງໜຸ່ມຫາກແຕ່ມານດາຫ້າມໄວ້ ທ່ານໄດ້ບົວຣະບັດເບິ່ງແຍງຈົນກະທັ້ງມານດາສິ້ນຊີວິດຈຶ່ງໄດ້ອອກບວດ ທ່ານມີຄວາມເຫັນວ່າໜ້າທີ່ການເປັນສັງຄະຣາດນັ້ນສຳຄັນຫລາຍແລະໜ້າຍົກຍ້ອງຫລາຍທີ່ສຸດ ສັງຄະຣາດຄວນຈະເປັນຜູ້ລ້ຽງຫລືດູແລສັ່ງສອນຄຣິສຕຽນໃຫ້ຮູ້ຈັກດຳເນີນຊີວິດທີ່ດີໃນໂລກນີ້ ທ່ານເອງພຍາຍາມປະຕິບັດໜ້າທີ່ຢ່າງດີທີ່ສຸດ ທ່ານເທສນາສັ່ງສອນເຕືອນສຕິ ປອບເລົ້າໂລມໃຈ ແລະຊ່ວຍເຫລືອຜູ້ຕົກທຸກໄດ້ຍາກ ທ່ານຖືວ່າເປັນງານທີ່ຍາກກວ່າການທໍລະມານຕົນ ຫລືນອນໃນທີ່ນອນແຂງກະດ້າງ ບໍ່ອາບນ້ຳຊຳລະກາຍ ຊຶ່ງບໍ່ເປັນປໂຍດອັນໃດ ທ່ານໄດ້ຮັບນາມວ່າ
10 ນັກເທດ **ລີ້ນທອງ** ຫລື **ປາກທອງ** ທ່ານຄຣິສອອສຊຸ້ມບໍ່ຢ້ານທີ່ຈະເທສນາຕໍ່ວ່າສັງຄົມ ຫລືພວກແມ່ຍິງເອົາແຕ່ແຕ່ງຕົວຟຸມເຟືອຍ ທ່ານຕໍ່ວ່າພວກຜູ້ຊາຍທີ່ມັກແຂ່ງມ້າ ທ່ານບໍ່ຍອມໃຫ້ຄົນທີ່ບໍ່ມີຊີວິດອັນສົມຄວນເຂົ້າຮັບພິທີມຫາສນິດ ປະຊາຊົນຊາວອັນຕິໂອເກັຽ ຮັກນັບຖືທ່ານຫລາຍແລະທ່ານໄດ້ເປັນເຈົ້າອະທິການຢູ່ທີ່ນັ້ນ

ໃນປີຄ.ສ.398 ຕຳແໜ່ງເປໄຕອາທ (Patriarch) ແຫ່ງກຸງຄອນສະແຕນຕິໂນເປີລກຳລັງວ່າງຢູ່ ຄຣິສອອສຊຸ້ມ ໄດ້ຖືກລັກພາຕົວມາຈາກ ອັນຕິໂອເກັຽ ເພື່ອມາຮັບຕຳແໜ່ງນີ້ ເນື່ອງຈາກວ່າແຕ່ເດີມນັ້ນຊາວອັນຕິໂອເກັຽບໍ່ຍອມໃຫ້ທ່ານໄປເປັນສັງຄະຣາດທີ່ອື່ນ ແຕ່ເປັນທີ່ໜ້າເສົ້າເສັຽໃຈເພາະວ່າ ເມື່ອທ່ານມາເປັນສັງຄະຣາດທີ່ກຸງຄອນສະແຕນຕິໂນເປີລນັ້ນ ໄດ້ຢູ່ໃກ້ຈັກກະພັດ ແລະຄົນໃນພຣະຣາຊວັງໃນວັນພິທີແຕ່ງຕັ້ງທ່ານໄດ້ເທສນາປະນາມພຣະມະເຫສີ (ເມັຽເຈົ້າຊີວິດ) ປະດັບຕົວດ້ວຍເພັດນິນຈິນດາວ່າ ຄວນຈະເອົາໄປຊ່ວຍຄົນຍາກຈົນຈະດີກວ່າ ໄດ້ເຮັດໃຫ້ເກີດຄວາມບໍ່ພໍໃຈໃນຫລາຍຝ່າຍ ອີກທັງເຈົ້າອະທິການແຫ່ງອາເລັກຊານເດັຽມັກຢາກໄດ້ຕຳແໜ່ງເປໄຕອາທຢູ່ແລ້ວ ເມື່ອເວລາທີ່ຄຣິສອອສຊຸ້ມ ພຍາຍາມຈະປ່ຽນແປງຣະບຽບຄະນະສົງໃຫມ່ເຮັດໃຫ້ທຸກຝ່າຍບໍ່ພໍໃຈຫລາຍຂຶ້ນ ທຸກຝ່າຍຈຶ່ງພາກັນຂັບໄລ່ຄຣິສອອສຊຸ້ມອອກໄປຕົກທຸກໄດ້ຍາກ ແລະທ່ານໄດ້ເສັຽຊີວິດ ຄ.ສ.407 ໃນຣະຫວ່າງການຖືກເນລະເທດນັ້ນ ຕໍ່ມາພາຍຫລັງສົບຂອງທ່ານໄດ້ຖືກນຳມາຍັງກຸງຄອນສະແຕນຕິໂນເປີລ ແລະຝັງໄວ້ຢ່າງມີກຽດ ໄດ້ຮັບການຍົກຍ້ອງວ່າເປັນນັກເທສນາຜູ້ກ້າຫານ

11 ໃນສມັຍຂອງຄຣິສອອສຊຸ້ມນີ້ເອງ ຄຣິສຈັກໄດ້ກຳໜົດວັນຄຣິສມາສເປັນວັນທີ 25 ທັນວາ ຊຶ່ງແຕ່ກ່ອນວັນຄຣິສມາສ ໄດ້ສະຫລອງກັນໃນວັນທີ 6 ມົກຣາ ແລະໃນສມັຍຂອງທ່ານໄດ້ມີການຂຽນພາບພຣະກຸມມາຣໃນຣາງຫຍ້າເປັນພາບແລກ ໂດຍມີໂຫຣາຈານທັງສາມກຳລັງເບິ່ງດວງດາວທາງດ້ານຊ້າຍແລະກຳລັງຖວາຍເຄື່ອງບັນນາການທາງດ້ານຂວາ



**ນັກບຸນແອມບຣົສແຫ່ງມີລານ** (St.Ambrose of Milan) ຄ.ສ.339-397

ທ່ານເປັນນັກເທດທີ່ຮູ້ຈັກພາສາລາຕິນຫລາຍ ມີປະສົບການສູງ ທ່ານພຍາຍາມທີ່ຈະເຮັດໃຫ້ຄຣິສຈັກທຸກຝ່າຍເປັນອັນນຶ່ງອັນດຽວກັນ ເພື່ອຈະມີການເລືອກຕັ້ງສັງຄະຣາດທີ່ເມືອງມີລານ ແຕ່ບໍ່ໄດ້ຮັບຜົນສຳເຣັດ ໃນທີ່ສຸດຄຣິສຕຽນທີ່ຖືຫລັກຂໍ້ເຊື່ອໄນຊີນ ແລະຝ່າຍອາຣິອຸສໄດ້ສເນີແຕ່ງຕັ້ງໃຫ້ ທ່ານແອມບຣົສເປັນສັງຄະຣາດເສັຽເລີຍ ທ່ານໄດ້ຮັບບັບຕິສມາ ແລະຮັບພິທີແຕ່ງຕັ້ງໃນເວລາໃກ້ ໆ ກັນ ທ່ານຂຽນ

ຫລັກຂໍ້ເຊື່ອອາທານາຊຽດ ຫລື Quicunque Vult ແລະແຕ່ງເພງນມັສການພາສາລາຕິນຫລາຍເພງ ທີ່ມີຊື່ສຽງຄື "O Spendour of God's Glory Bright" ຊຶ່ງພິມໄວ້ໃນໜັງສືຄູ່ມືການອ້ອນວອນຂອງຄຣິສຈັກ ຄນະແອງກລິເກິລ (Anglican Church)

**ນັກບຸນອອກັສຕິນແຫ່ງຮິບໂປ** (St.Augustine of Hippo) ຄ.ສ.354-430

ທ່ານເກີດໃນປີ ຄ.ສ.354 ທີ່ພາກເຫນືອຂອງອາຟຣິກາ ພໍ່ເປັນພວກນອສຕິກ ແຕ່ແມ່ເປັນຄຣິສຕຽນມີຊື່ວ່າ ມໍນິກາ (Monica) ທ່ານອອກັສຕິນເປັນນາຍຄຣູຢູ່ທີ່ເມືອງ ຄາເທັກ (Carthage) ໃນປີ ຄ.ສ.383 ແລະໄດ້ອົພຍົບມາຢູ່ກຸງໂຣມ ແລ້ວໄປຢູ່ທີ່ເມືອງມິລານ ແຕ່ກ່ອນທີ່ທ່ານຈະມາເປັນຄຣິສຕຽນ ທ່ານເປັນຜູ້ທີ່ຮັກສັງຄົມ ດຳເນີນຊີວິດຕາມໂລກ ທ່ານບໍ່ຍອມເປັນຄຣິສຕຽນຕາມຢ່າງແມ່ຂອງທ່ານ ແຕ່ກັບໄປສົນໃຈລັດທິມະນາຄີ (Manichaeism) ຢູ່ບໍ່ນານ ເພາະທ່ານບໍ່ເຫັນດ້ວຍກັບຫລັກຄຳສອນຂອງລັດທິ້ ທ່ານອອກັສຕິນ**ໄດ້ກັບໃຈໃຫມ່ເນື່ອງຈາກໄດ້ຟັງຄຳເທສນາຂອງທ່ານແອມບຣົສ** ແລະຮັບບັພຕິສມາທີ່ມິລານໃນ ຄ.ສ.387 ຕໍ່ມາທ່ານໄດ້ເດີນທາງກັບຄືນເມືອງອາຟຣິກາເຫນືອແລະໄດ້ດຳລົງຕຳແຫນ່ງເຈົ້າອະທິການແຫ່ງເມືອງຮິບໂປ (Bishop of Hippo) ຊຶ່ງຫ່າງຈາກແຫລມບອນ (Cape Bon) ປະມານ 130 ໄມລ໌ (ຫລັງຈາກສົງຄາມໂລກຄັ້ງທີສອງ ຫົວເມືອງນີ້ໄດ້ຖືກທຳລາຍໄປ) ທ່ານອອກັສຕິນເປັນບຸກຄົນສຳຄັນໃນຄຣິສຈັກພາກຕາວັນຕົກທີ່ໃຊ້ພາສາລາຕິນ ທ່ານໄດ້ຂຽນປວັດການກັບໃຈໃຫມ່ຂອງຕົວທ່ານເອງ ຊຶ່ງເປັນໜັງສືກ່ຽວກັບຄວາມເຊື່ອໃນຄຣິສສາສນາ ອັນເປັນໜັງສືຄຣິສຕຽນເຫລັ້ມທຳອິດທີ່ຂຽນຂຶ້ນ ຫລັງຈາກພຣະຄັມພີພາກພັນທະສັນຍາໃຫມ່

**ອິດທິພົນຂໍ້ຂຽນຂອງອອກັສຕິນ** ຄຳສອນແລະໜັງສືຊີວະປວັດຂອງຕົວທ່ານອອກັສຕິນເອງໄດ້ທຳໃຫ້ຄຣິສຕຽນເຂົ້າໃຈແຈ່ມແຈ້ງຂຶ້ນ ໃນເຣື່ອງຄວາມບາບຂອງມະນຸດ ທ່ານກ່າວວ່າ ຕົວທ່ານບໍ່ສາມາດເປັນຜູ້ບໍຣິສຸດໄດ້ດ້ວຍຕົນເອງ ແມ້ວ່າພຣະເຈົ້າໄດ້ປະທານໃຈສຳນຶກຜິດຊອບ ແລະຄວາມມີສິນທັມໃນຈິດໃຈແກ່ມະນຸດກໍຕາມ ເພາະວ່າ ການທີ່ອາດາມໄດ້ຝ່າຝືນ ເປັນກະບົດຕໍ່ພຣະເຈົ້ານັ້ນ ເປັນບາບທີ່ຕົກທອດມາເຖິງມະນຸດທຸກຄົນທຸກຍຸກທຸກສມັຍ ເຮັດໃຫ້ຄວາມສຳນຶກຜິດຊອບແລະຈິດໃຈທີ່ມີສິນທັມຂອງມະນຸດສູນເສັຽໄປ ມະນຸດຈຶ່ງເປັນຜູ້ມີບາບຫນາ ແລະຖ້າມະນຸດບໍ່ໄດ້ອາສັຍພຣະຄຸນຂອງພຣະເຈົ້າ ໂດຍຜ່ານທາງພຣະເຢຊູຄຣິສມາຊ່ວຍແລ້ວ ຜູ້ນັ້ນຈະບໍ່ສາມາດກັບມາຫາພຣະເຈົ້າໄດ້ ຄວາມຣອດພົ້ນຂອງມະນຸດນັ້ນເນື່ອງມາຈາກການຊົງເລືອກຂອງພຣະເຈົ້າ ແມ້ແຕ່ເດັກທາລົກນ້ອຍ ໆ ກໍຕ້ອງຮັບໂທດຄວາມບາບນີ້ ຫາກວ່າເຂົາຕາຍໄປແຕ່ນ້ອຍໂດຍບໍ່ໄດ້ຮັບບັພຕິສມາ



ນັກບຸນອອກັສຕິນແຫ່ງຮິບໂປ

AUGUSTINE, BISHOP OF HIPPO
—Religious News Service

ກໍຈະຕົກໃນນາລົກ  ຄຣິສຈັກຝ່າຍຕາວັນຕົກໄດ້ມີຜູ້ນຳຄຣິສຕຽນຫລາຍທ່ານ ບໍ່ເຫັນດ້ວຍກັບຄຳສອນຂອງອອກັສຕິນ  ນອກຈາກນັ້ນຍັງພາກັນໂຕ້ແຍ້ງໃນເຣື່ອງຫລັກຄຳສອນກ່ຽວກັບມະນຸດ  ເຣື່ອງຄວາມບາບຕົ້ນເດີມແລະເຣື່ອງການທຳໃຫ້ຄືນດີກັນກັບພຣະເຈົ້າ ເຣື່ອງສະພາບຂອງພຣະເຈົ້າ ແລະຄວາມເປັນມະນຸດຂອງພຣະຄຣິສວ່າຈະເປັນອັນນຶ່ງອັນດຽວກັນກັບພຣະເຈົ້າໄດ້ຢ່າງໃດ

ຂໍ້ຂຽນຂອງອອກັສຕິນ ທີ່ສຳຄັນແລະມີຊື່ລືຊາໄດ້ແກ່ **"ຄຳສາຣະພາບ"** ຂອງທ່ານອອກັສຕິນ (Augustine's *Confessions*) ໄດ້ບັນລະຍາຍຄວາມເຊື່ອຈາກຊີວິດຈິດໃຈຂອງທ່ານ ທີ່ໄດ້ປະສົບມາ  ຂໍ້ຂຽນອີກສບັບທີ່ມີຊື່ລືຊາແລະເປັນທີ່ຮູ້ຈັກຂອງນັກສຶກພຣະຄັມພີ **"ນະຄອນຂອງພຣະເຈົ້າ"** (The City of God)  ຂໍ້ຂຽນນີ້ໄດ້ສແດງເຖິງຫລັກຄວາມເຊື່ອຂອງທ່ານອອກັສຕິນໄດ້ແຈ່ມແຈ້ງທີ່ສຸດ ທ່ານອອກັສຕິນໄດ້ຂຽນຂຶ້ນເນື່ອງຈາກໃນປີ ຄ.ສ.410 ກະສັດແອລາຣິກ (Alaric) ຊາວວິຊິໂກທ (Visigoth) ເປັນພວກອນາຣຍຊົນ (ຊາວປ່າເຖື່ອນ, Barbarians) ໄດ້ບຸກຍຶດກຸງໂຣມນີ້ເປັນເທື່ອແຣກໃນຣະຍະເວລາ 800 ປີ ທີ່ກຸງໂຣມຕ້ອງປາຊັຍໃຫ້ກັບສັຕຣູຕ່າງຊາດ  ເຮັດໃຫ້ບັນດາປະເທດອາຣຍຊົນທັງຫລາຍ (civilized world) ຕົກໃຈຢ້ານກົວ  ເຮັດໃຫ້ບາງຄົນກ່າວວ່າເຫດທີ່ກໍ່ໃຫ້ເກີດຄວາມພິນາດນັ້ນ ເພາະຊາວໂຣມັນລະຖິ້ມພຣະເຈົ້າດັ້ງເດີມຂອງຕົນ  ດັ່ງນັ້ນຈຶ່ງເປັນເຫດໃຫ້ທ່ານຂຽນຂໍ້ຂຽນທີ່ເປັນຫນັງສືມີຊື່ວ່າ **"ນະຄອນຂອງພຣະເຈົ້າ"**  ເພື່ອເປັນການປະຕິເສດຄວາມຄິດເຫັນຂອງປະຊາຊົນ  ທ່ານອອກັສຕິນໄດ້ບັນລະຍາຍວ່າ **"ນະຄອນຂອງພຣະເຈົ້າ"** ເປັນສັງຄົມຂອງພຣະເຈົ້າຊຶ່ງມີຄຣິສຈັກໃນໂລກນີ້ເປັນຕົວແທນ  ແລະຣວມທັງທູຕສວັນແລະວິນຍານຂອງຄົນຊອບທັມປະກອບກັນໂດຍສົມບູນ  ຄຣິສຈັກໃນໂລກນີ້ມີສພາບຕ່າງກັບຣັຖ(ບາລ)  ແຕ່ສິດທິອຳນາດຂອງຣັຖມາຈາກພຣະເຈົ້າ ແລະສັນຕິສຸຂທີ່ຣັຖຄວນຈະເຮັດນັ້ນເປັນປໂຍດແກ່ຄຣິສຈັກດ້ວຍ  ດັ່ງນັ້ນຄຣິສຕຽນຈຶ່ງເປັນພົນເມືອງຢູ່ສອງນະຄອນ ຄື "ກຸງໂຣມອັນເປັນທີ່ຮັກ" ກັບ "ນະຄອນຂອງພຣະເຈົ້າ" ຄວາມເຊື່ອນີ້ອາດຈະມີອິດທິພົນຕໍ່ຄວາມຈະເຣີນແລະຄວາມເຕີບໃຫຍ່ຂອງອານາຈັກໃນສມັຍກາງ ທີ່ເອີ້ນວ່າ "ຈັກກະວັດໂຣມອັນສັກສິດ" (Holy Roman Empire)

**ການໃຫ້ທາລົກນ້ອຍຮັບບັບຕິສມາ**

ເຊື່ອກັນວ່າຄຳສອນຂອງອອກັສຕິນມີອິດທິພົນເຮັດໃຫ້ເກີດຄວາມເຊື່ອ ແລະພິທີການໃຫ້ທາລົກນ້ອຍຮັບບັບຕິສມາ ຊຶ່ງເກີດຂຶ້ນໃນພາກຕາວັນອອກກ່ອນ  ການໃຫ້ຮັບບັບຕິສມາແກ່ຜູ້ໃຫຍ່ໂດຍວິທີຈຸ່ມນັ້ນ ໄດ້ຖືປະຕິບັດກັນຕາມຫລັກຄຳສອນໃນພຣະຄຣິສທັມຄັມພີພັນທະສັນຍາໃຫມ່  ເບິ່ງຄືວ່າໃນຍຸກອັຄສາວົກມີການໃຫ້ລູກຫລານ ແລະເດັກນ້ອຍໄດ້ຮັບບັບຕິສມານຳດ້ວຍ ທ່ານໄດ້ອ້າງອີງພຣະຄັມພີໃຫມ່ຈາກ 1 ໂກຣິນໂທ 1:16 ຊຶ່ງມີການໃຫ້ບັບຕິສມາທັງຄອບຄົວ ຄົງຈະຕ້ອງຣວມທັງເດັກນ້ອຍດ້ວຍ  ນອກຈາກນີ້ທຳນຽມຂອງຄົນຢິວ ເດັກຊາຍອາຍຸ 8 ວັນນັບຕັ້ງແຕ່ວັນເກີດຕ້ອງເຂົ້າຮັບພິທີຕັດ  ເພື່ອເຂົ້າເປັນສມາຊິກເປັນປະຊາກອນແຫ່ງພັນທະສັນຍາຂອງພຣະເຈົ້າ ທຳນຽມເຫລົ່ານີ້ອາດເປັນຕົວຢ່າງ ນຳໃຫ້ຄຣິສຕຽນໃນຍຸກນັ້ນເລີ້ມໃຫ້ບັບຕິສມາແກ່ທາລົກນ້ອຍ ແຕ່ວ່າໃນຍຸກຕໍ່ ໆ ມາພາຍຫລັງເມື່ອເກີດການປະຕິຮູບຄຣິສຈັກໃນສມັຍກາງມີຫລາຍກຸ່ມທີ່ບໍ່ເຫັນນຳໃນເຣື່ອງນີ້  ໂດຍໃຫ້ເຫດຜົນວ່າເດັກນ້ອຍບໍ່ສາມາດເຂົ້າໃຈເຣື່ອງຄວາມຣອດພົ້ນແລະບໍ່ສາມາດຕັດສິນໃຈ  ດັ່ງນັ້ນຈຶ່ງມີຫລາຍ ໆ ກຸ່ມໄດ້ເອົາພິທີຖວາຍບຸດນ້ອຍເຂົ້າແທນການໃຫ້ທາລົກນ້ອຍຮັບບັບຕິສມາ

**ອາຣາມເຂດພາກຕາວັນຕົກ** (Western Monasticism)

ຄຣິສຕຽນທີ່ມີຄວາມເຊື່ອເຂັ້ມແຂງພາກຕາວັນຕົກ ໄດ້ມີການພັດທະນາການ ເຣື້ອງການຢູ່ອາຣາມເຂດຄືກັນ ທາງພາກຕາວັນອອກໂດຍການນຳພາຂອງນັກບຸນແອນໂທນີ (St.Antony) ໃນປະມານ ຄ.ສ.285 ສ່ວນພາກຕາວັນຕົກໂດຍການນຳພາຂອງນັກບຸນເບນເນດິກ (St.Benedict) ໃນປະມານ ຄ.ສ.480

ພວກນັກບວດ ຫລື ລືສີ ເຫລົ່ານີ້ໄດ້ພາກັນມາຢູ່ວັດວາອາຣາມແທນການຢູ່ຕາມປ່າແລະເທເລຊາຍ ມີລະບຽບຂອງການຢູ່ວັດຢ່າງເຄັ່ງຄັດ ແລະໃຊ້ຊີວິດໂດຍການອອກໄປສັ່ງສອນປະຊາຊົນ ຊ່ວຍເຫລືອເຮັດວຽກໃຫ້ແກ່ຊຸມຊົນທຸກ ໆ ວັນເປັນປະຈຳ ເພາະໃນພຣະທັມມັດທາຍ 19:21 ພຣະເຢຊູຊົງຕອບວ່າ "ຖ້າທ່ານປາຖນາຢາກເປັນຜູ້ດີຄົບຖ້ວນ ຈົ່ງໄປຂາຍບັນດາສິ່ງຂອງຊຶ່ງທ່ານມີຢູ່ ແຈກທານແກ່ຄົນອະນາຖາ ແລ້ວທ່ານຈະມີຊັບສົມບັດໃນສວັນ ແລະຈົ່ງຕາມເຮົາມາເສັຽ" ເປັນຂໍ້ຄວາມທີ່ຮຽກຮ້ອງຜູ້ເຊື່ອໃນເວລານັ້ນຮຽກຮ້ອງໃຫ້ຖິ້ມຊີວິດຝ່າຍໂລກ ອອກໄປໃຊ້ຊີວິດທີ່ອຸທິດຖວາຍແດ່ພຣະເຈົ້າຢ່າງເຕັມໃຈ ຈຶ່ງມີຄຣິສຕຽນທີ່ອອກບວດຫລາຍແລະເກີດອາຣາມຫລາຍຂຶ້ນ

**ຄະນະເບນເນດິກ (Benedictines) ໂດຍນັກບຸນເບນເນດິກ** (St.Benedict)

ຄ.ສ. 480-540 ໃນປະເທດອິຕາລີ

ທ່ານເບນເນດິກໄດ້ຕັ້ງກົດວິນັຍຂອງນັກບວດໃຫມ່ໃຫ້ເປັນແບບເອົາໃຈໃສ່ຕໍ່ຄວາມທຸກສຸກຂອງປະຊາຊົນ ໃນຍາມທີ່ຊາວປ່າບຸກລຸກອານາຈັກພາກຕາວັນຕົກ ທ່ານໄດ້ຈັດສຖານທີ່ປອດພັຍໄວ້ສຳລັບຜູ້ລີ້ພັຍ ໂດຍສ້າງອາຣາມຂອງທ່ານໄວ້ເທິງຍອດພູສູງ ສຖານທີ່ນັ້ນເອີ້ນວ່າ "ມອງເຕຄັສຊິໂນ" (Monte Cassino) ກົດວິນັຍທີ່ທ່ານເບນເນດິກໄດ້ຕັ້ງໄວ້ ຕໍ່ມາໄດ້ກາຍເປັນກົດບັງຄັບສຳລັບພຣະອາຣາມໃນພາກຕາວັນຕົກ ບາງຂໍ້ກໍເປັນກົດເກົ່າເຊັ່ນ ນັກບວດຈະຕ້ອງບໍ່ແຕ່ງງານ ແລະຕ້ອງຖືຄວາມຍາກຈົນ ແລະນົບນ້ອມ ສ່ວນກົດໃຫມ່ ຄື ນັກບວດຈະຕ້ອງຢູ່ໃນທີ່ອາສັຍຂອງຕົນເປັນຫລັກແຫລ່ງ ເພາະແຕ່ເດີມພວກລືສີນັກບວດໄດ້ທ່ອງທ່ຽວໄປ ເຮັດໃຫ້ເກີດຄວາມລຳບາກເດືອດຮ້ອນແກ່ຕົວເອງ ນັກບວດໃນກຸ່ມຂອງທ່ານເບເນດິກ ຈະໄປໃສມາໃສຕ້ອງໄດ້ຮັບອະນຸຍາດເສັຽກ່ອນ ດ້ວຍເຫດນີ້ພຣະອາຣາມຈຶ່ງຕ້ອງຈັດອຳນວຍປັດໃຈແຫ່ງການດຳລົງຊີວິດຢ່າງຄົບຖ້ວນ ມີທັງໄຮ່ນາ ໂຮງທຳແປ້ງຈີ່ ແລະໂຮງຄົວ ນັກບວດຈະຕ້ອງເຮັດວຽກທຸກຢ່າງ ຕັ້ງແຕ່ທຳໄຮ່ໄຖນາ ຕັດຕົ້ນໄມ້ ແລະຈັດອາຫານ ໄດ້ແບ່ງເວລາວັນນຶ່ງ ໆ ອອກເປັນເວລາສຳລັບເຮັດການທີ່ທຳດ້ວຍມື ເວລາສຳລັບອ້ອນວອນຕາມລຳພັງ ເວລາຮ້ອງເພງ ແລະອ່ານຫນັງສືພ້ອມ ໆ ກັນ ເວລາສຶກສາຫາຄວາມຮູ້ ກຳນົດເວລາປະຈຳວັນກໍປ່ຽນແປງຕາມຣະດູການ ເຊັ່ນຕົວຢ່າງ

2:00-4:00 ໂມງ ອະທິຖານອ້ອນວອນ (Prayer)
4:00-4:15 ໂມງ ຄິດພິຈາຣະນາ (Meditation)
4:15-6:00 ໂມງ ອ້ອນວອນອີກ (Prayer)
6:00-9:00 ໂມງ ສຶກສາຫາຄວາມຮູ້ (Study)
9:00-12:00 ໂມງ ທຳງານກາງແຈ້ງໃນໄຮ່ນາເຖິງທ່ຽງ

ຫລັງຈາກນັ້ນຈຶ່ງຈະໄດ້ຮັບປະທານອາຫານ ຣະຫວ່າງຮັບປະທານອາຫານນັກບວດເຫລົ່ານີ້ຕ້ອງງຽບສງົບ ໂດຍມີສມາຊິກຄົນນຶ່ງທີ່ຮັບປະທານກ່ອນອ່ານຫນັງສືດີ ໆ ໃຫ້ຟັງ ຖ້ານັກບວດຄົນໃດຢາກໄດ້ສິ່ງ

ໃດເທິງໂຕະອາຫານກໍໃຫ້ຂໍໂດຍພາສາໃບ້ ຄືທຳເຄື່ອງໝາຍທີ່ຮູ້ກັນ ເຊັ່ນຢາກໄດ້ແອບເປີລເອົາມືກຳນິ້ວທີວແມ່ມືຂອງຕົນເອງ ໂບກໄປມາຂ້າງໜ້າ ຖ້າຢາກໄດ້ນ້ຳນົມ ກໍເອົານິ້ວມືຂວາບີບປາຍນິ້ວກ້ອຍຂອງມືຊ້າຍໃນອາການທີ່ເຂົາຣີດນົມງົວ ຖ້າຢາກໄດ້ມັສຕາດ (ແນວເຜັດຊະນິດນຶ່ງ) ກໍເອົາຫລັງກຳປັ້ນຂວາຂອງຕົນເຊັດດັງຂອງຕົນເອງ ຖ້າຢາກໄດ້ເກືອກໍເອົານິ້ວທີວແມ່ມືແລະນິ້ວຊີ້ຂວາຂີບທີວແມ່ມືຊ້າຍ ຫລັງຈາກຮັບປະທານແລ້ວ ມີເວລາພັກເຊົາຢູ່ນ້ອຍນຶ່ງ ແລ້ວຈຶ່ງອອກໄປເຮັດວຽກກາງທົ່ງອີກ ພໍອາທິດຕົກເຖິງເວລາຮ້ອງເພັງແລ້ວຕ່າງກໍແຍກຍ້າຍກັນໄປນອນ ນັກບວດບໍ່ມີຊັບສິນບັດເປັນຂອງຕົວເອງ ແຕ່ຈະໄດ້ຮັບແຈກທີ່ນອນ ຜ້າຫົ່ມ ແລະເສື້ອຜ້າທັງຊັ້ນນອກແລະຊັ້ນໃນທຸກຄົນ ຈະໄດ້ຮັບມີດໃຫຈເຂັມເຢັບຜ້າ ແລະປາກກາຂົນນົກ ສຳລັບຂຽນໜັງສື ສຳລັບອາຫານທີ່ຮັບປະທານຄືທັມດາສາມັນນານ ໆ ຈຶ່ງຈະມີອາຫານດີພິເສດຈັກຄັ້ງນຶ່ງ ເມື່ອມີແຂກຜູ້ມາຢາມ ຈະຈັດອາຫານພິເສດລ້ຽງຕ້ອນຮັບໂດຍມີທ່ານສົມພານພໍ່ວັດ (Abbot) ນັ່ງຮັບປະທານຢູ່ດ້ວຍ ທ່ານເປັນເໝືອນຄຸນພໍ່ຂອງອາຣາມຈິງ ໆ ຄຳວ່າ Abbot ມາຈາກ Abba ໃນພາສາເຮັບເຣີແປວ່າ ພໍ່ ກົດວິນັຍພຣະອາຣາມມີວ່າ ສົມພານພໍ່ວັດຈະຕ້ອງບໍ່ເປັນຄົນເຈົ້າວິຕົກກັງວົນທັງຕ້ອງບໍ່ສັ່ງການຈູ້ຈີ້ຈູກຈິກ ຫລືມີຈິດໃຈດື້ລັ້ນຫລືເຈົ້າລະແວງສົງສັຍຈົນເກີນໄປ ນັກບວດທຸກຄົນຕ້ອງນົບນອບເຊື່ອຟັງສົມພານພໍ່ວັດທຸກສິ່ງ ນັກບວດທຸກຄົນຈະຕ້ອງປົງບາບສາຣພາບຜິດຕໍ່ທີ່ປະຊຸມຂອງນັກບວດໃນທຸກຄັ້ງທີ່ເຮັດຜິດວິນັຍ

ອາຣາມເຫລົ່ານີ້ໄດ້ສ້າງຂຶ້ນດ້ວຍຈຸດປະສົງ ເພື່ອເປັນທີ່ສງົບ ລະຈາກໂລກທີ່ວຸ້ນວາຍ ເພື່ອແຕ່ລະບຸກຄົນຈະໄດ້ບຳເພັນຕົນມຸ້ງຫາທາງໄປສວັນ ພຣະອາຣາມເປັນທີ່ພັກອາສັຍຂອງຜູ້ເດີນທາງຢ່າງດີທີ່ສຸດ ນັກບວດທັງຫລາຍຍັງຮັບໃຊ້ໂລກໃນທາງອື່ນອີກຄື ໂດຍການອະທິຖານຈາກຈິດໃຈ ແລະເຮັດວຽກຈາກມືຂອງຕົນ ຕໍ່ມາການສ້າງພຣະອາຣາມກໍບໍ່ໄດ້ສ້າງຂຶ້ນຕາມເທິງເກາະ ຫລືຍອດເຂົາອັນເປັນທີ່ປອດພັຍ ແຕ່ສ້າງກັນໃນທ່າມກາງພວກຊາວປ່າ ນັກບວດທັງຫລາຍມີໂອກາດໄດ້ສອນປະຊາຊົນເຫລົ່ານັ້ນໃຫ້ຮູ້ຈັກການໄຖຄາດຟັນດິນ ການສ້າງຖນົນແລະຂົວ ນັກບວດຍັງຮັບໜ້າທີ່ໂອບໂຮມສັ່ງສອນ ໃຫ້ການສຶກສາແກ່ເດັກນ້ອຍ ແລະມີໜ້າທີ່ຄັດລອກໜັງສືຕ່າງ ໆ ໜັງສືທຸກເຫລັ້ມຕ້ອງຂຽນດ້ວຍມື ໃນໜັງສືກໍເຮັດເປັນລວດລາຍຮູບພາບຫຼືອັກສອນຕອນຕົ້ນຂອງບົດ ດັ່ງພາບອັກສອນຕົວ Q ທີ່ປະດິສເປັນຮູບນັກບວດ



**ຂບວນການຄູນີ** (Cluniacs) ຄ.ສ.910

ຂບວນການຄູນີເປັນອາຣາມເຂດທີ່ຮັກສາກົດວິນັຍແບບເບນເນດິກ ແຕ່ເຂັ້ມງວດຫລາຍກວ່າ ທ່ານເບີໂນ (Berno) ເປັນສົມພານຄົນແຮກຂອງກຸ່ມຄູນີ ຊຶ່ງພວກນີ້ໄດ້ເລືອກຕັ້ງກັນເອງ ເພື່ອປະຈຳວັດຂອງຕົນ ໂດຍບໍ່ຍອມໃຫ້ພວກຂຸນນາງ ຫລືຜູ້ມີຍົດສັກທາງການເມືອງມາມີອິດທິພົນເໜືອເລືອກຕັ້ງ ທ່ານໂອໂດ (Odo) ເປັນສົມພານວັດຜູ້ທີສອງໄດ້ທ່ອງທ່ຽວໄປຍັງວັດຕ່າງ ໆ ເພື່ອໃຫ້ວັດເຫລົ່ານັ້ນເຮັດຕາມຣະບຽບຂອງພວກຄູນີ ຈຸດປະສົງໃຫຍ່ຂອງຂບວນການປະຕິຮູບຄູນີນີ້ ເພື່ອຈະໃຫ້ບັນດານັກບວດແລະເຈົ້າອະທິການສັງຄະຣາດທັງຫລາຍບໍ່ໃຫ້ໄປຫຍຸ້ງກ່ຽວຊີວິດຝ່າຍໂລກແລະການເມືອງ ແຕ່ໃຫ້ສຳນຶກວ່າຕົນເອງເປັນຜູ້ຮັບໃຊ້ເປັນທາດຂອງພຣະເຢຊູຄຣິສແທ້ຈິງ ແລະຍັງໄດ້ເປັນຜູ້ສັ່ງສອນໃຫ້ພວກຂຸນນາງ ຫລືເຈົ້າຊີວິດໃຫ້ຫັນໄປສົນໃຈການປົກຄອງໃຫ້ປະຊາຊົນໄດ້ຢູ່ເຢັນເປັນສຸກ ບໍ່ຕ້ອງມາຫຍຸ້ງກ່ຽວອຳນາດຝ່າຍຄຣິສຈັກ ເພື່ອປັບປຸງການຊື້ຂາຍຕຳແໜ່ງໃນຄຣິສຈັກ ຂບວນການນີ້ໄດ້ເຕີບໃຫຍ່ ແລະມີອິດທິພົລຕໍ່ ສັນ

ຕະປາປາເກກໍຣີທີ 7 (Gregary VII) ຫລືອີກນາມນຶ່ງຮ້ອງວ່າ ຮິລດາແບຣັນ (Hildebrand) ຄ.ສ. 1021-1085

ເມື່ອນັກສຶກສາໄດ້ສຶກສາໃນບົດນີ້ແລ້ວ ຄົງຈະພົບວ່າຄຣິສຈັກແລະຄວາມເຊື່ອຂອງຄຣິສຕຽນໄດ້ແປ ຜັນກາຍໄປຈາກຍຸກຂອງອັຄສາວົກທີ່ປາກົດໃນພຣະຄັມພີກິຈການ ແລະໃນຈົດໝາຍຝາກຂອງທ່ານໂປໂລ ທ່ານເປໂຕ ແລະທ່ານໂຢຮັນທີ່ໄດ້ຂຽນຈົດໝາຍຝາກໄປຍັງຄຣິສຈັກໃນເມືອງຕ່າງ ໆ ໃນຍຸກສມັຍທຳອິດ ມາບັດນີ້ຄຣິສຈັກໄດ້ຂຍາຍອອກໄປຢ່າງກວ້າງຂວາງ ຕັ້ງແຕ່ອາຟຣິກາເໜືອຈົນຮອດຢຸໂຣປ ເມື່ອເປັນ ດັ່ງນີ້ແລ້ວ ຄຣິສຈັກຕົກໄປຢູ່ບ່ອນໃດກໍມັກຈະມີອິດທິພົນການປະຕິບັດຂອງສາສນາເດີມ ຫລືຄວາມເຊື່ອເດີມ ເຂົ້າມາປະປົນ ເຮັດໃຫ້ຄວາມເຊື່ອແທ້ກາຍໄປ ແມ້ກະທັ່ງປັດຈຸບັນ ເຮົາກໍສາມາດເຫັນໄດ້ວ່າ ຄຣິສ ຈັກລາວຫລາຍບ່ອນໄດ້ເອົາ ຮີດຄອງແບບສາສນາເກົ່າເຂົ້າມາປະປົນ ເຮັດໃຫ້ຂ່າວປະເສີດບໍ່ແຈ່ມແຈ້ງ ກາຍເປັນຂອງຜສົມ ເປັນໄປຕາມຄວາມສະດວກໃຈຂອງສມາຊິກ ດັ່ງນັ້ນບົດຮຽນນີ້ນ່າຈະເປັນບົດຮຽນ ອັນສຳຄັນແລະມີຄຸນຄ່າ ທີ່ຜູ້ນຳຄຣິສຈັກຄວນຈະໄປສຶກສາແລະພິຈາຣະນາ ເພື່ອຈະເປັນບົດຮຽນແກ່ເຮົາ ທັງຫລາຍທີ່ຈະບໍ່ເຮັດໃຫ້ສາສນາຄຣິສກາຍເປັນຂອງກົ່ງຜສົມໄປ ດັ່ງທີ່ໄດ້ເກີດຂຶ້ນແລ້ວໃນປວັດສາດ

Snd 12-13-95

# ບົດທີ 6

## ຍຸກມືດ
## ການບຸກຮຸກຂອງຊາວປ່າ ເຖິງກຸງໂຣມລົ້ມ
ຄ.ສ. 410-476

**ບົດນໍາ**

ໃນບົດຮຽນບົດນີ້ ຈະໄດ້ກ່າວເຖິງຍຸກສໍາຄັນທີ່ສຸດຍຸກນຶ່ງຂອງປວັດສາດຄຣິສຈັກ ທີ່ຮ້ອງກັນວ່າເປັນ **"ຍຸກມືດ"** ອັນມີສາເຫດເນື່ອງຈາກການບຸກຮຸກຂອງຊົນຊາວປ່າຫລືທີ່ເອີ້ນວ່າ **"ພວກອານາຣະຍະຊົນ"** (Barbarians) ຊຶ່ງເປັນຊົນເຜົ່າເຢັຽຣະມັນຫລາຍ ໆ ເຜົ່າ ໄດ້ລົງມາຈາກທາງເໜືອເຂົ້າບຸກຮຸກຢຶດເອົາດິນແດນດ້ານຕະວັນຕົກຂອງມະຫາຣາຊອານາຈັກໂຣມັນ ແລະໃນທີ່ສຸດໄດ້ບຸກເຂົ້າຍຶດກຸງໂຣມອັນເປັນສູນກາງຂອງຄຣິສສາສນາໃນເວລານັ້ນ

ໃນຣະຫວ່າງເວລາຂອງປວັດສາດຍຸກນີ້ ຄືຕັ້ງແຕ່ສັຕວັດທີຫ້າເປັນຕົ້ນໄປ ຊົນເຜົ່າຕ່າງ ໆ ທົ່ວທຸກມຸມໂລກ ຕ່າງໄດ້ອອກສແວງຫາລ່າດິນແດນທີ່ມີຄວາມອຸດົມສົມບູນໃນການທໍາມາຫາກິນ ມີການເຄື່ອນຍ້າຍ ມີການອົພຍົບ ຫລືເຂົ້າບຸກຮຸກໂຈມຕີຂັບໄລ່ຊົນເຜົ່າອື່ນ ໆ ທີ່ຢູ່ແຕ່ກ່ອນໃຫ້ລົ່ນຫນີຖອຍໄປ ຊົນເຜົ່າໃດທີ່ມີກໍາລັງເຂັ້ມແຂງກວ່າກໍສາມາດເອົາຊນະຊົນອີກເຜົ່ານຶ່ງທີ່ອ່ອນແອກວ່າຕົວ ພວກທີ່ອ່ອນແອກວ່າຈໍາເປັນຕ້ອງລົ່ນຖອຍຫນີໄປຕັ້ງຫລັກໃນບ່ອນໃຫມ່ ເພື່ອກໍ່ຕັ້ງຕົວຂຶ້ນເປັນກຸ່ມປະເທດບ້ານເມືອງຕໍ່ໄປ

ເຫດການສໍາຄັນຂອງປວັດສາດຄຣິສຈັກໃນຍຸກນີ້ຄືກັນ ມີເຫດການທີ່ປາກົດຂຶ້ນ ຄືວ່າ ພາຍຫລັງຈາກຄຣິສສາສນາໄດ້ເປັນສາສນາປະຈໍາມະຫາຣາຊອານາຈັກໂຣມັນແລ້ວ ກຸງໂຣມໄດ້ເປັນສູນກາງຂອງສາສນາຄຣິສແທນກຸງເຢຣູຊາເລັມ ມະຫາຣາຊອານາຈັກໂຣມັນມີຄວາມຈະເຣີນຮຸ່ງເຮືອງ ມີຄວາມອຸດົມສົມບູນ ປະຊາຊົນມີຄວາມຢູ່ດີກິນດີ ປະຊາຊົນຈໍານວນຫລາຍມີຄວາມເຊື່ອເຂັ້ມແຂງ ແຕ່ກໍມີຄົນສ່ວນຫລາຍຄືກັນທີ່ບໍ່ໄດ້ສົນໃຈ ຫລືເຂົ້າໃຈພຣະເຈົ້າຢ່າງແທ້ຈິງ ໄດ້ເປັນຄຣິສຕຽນແບບຕາມ ໆ ກັນໄປ ປະຊາຊົນໂດຍທົ່ວໄປບໍ່ສົນໃຈການນໍາພາປະເທດຊາດໃຫ້ເກີດຄວາມເຂັ້ມແຂງ ເພາະຄິດວ່າມີຄວາມຮຸ່ງເຮືອງຫລາຍແລ້ວ ສິລທັມໄດ້ເສື່ອມລົງ ເຮັດໃຫ້ມະຫາຣາຊອານາຈັກໂຣມັນເກີດຄວາມອ່ອນແອໃນດ້ານການເມືອງ ໄດ້ສູນເສັຽດິນແດນພາກຕະວັນຕົກແກ່ຊາວປ່າເຜົ່າຕ່າງ ໆ ທີ່ບຸກເຂົ້າມາຍຶດເອົາດິນແດນໄປ ແລະກໍ່ຕັ້ງເປັນປະເທດອິສຣະຂຶ້ນໃນຢູໂຣບ (Europe) ແລະອັຟຣິກາ (Africa)

**ການບຸກຮຸກຂອງພວກອານາຣະຍະຊົນ** (ຊາວປ່າ Barbarians)

ສັຕວັດທີ 5 ນີ້ ຄືປະມານ ຄ.ສ.410 ຈົນຮອດກຸງໂຣມລົ້ມໃນ ຄ.ສ.476 ເປັນປວັດສາດທີ່ກ່ຽວຂ້ອງກັບການເສື່ອມອໍານາດລົງຂອງຣາຊອານາຈັກຝ່າຍຕາວັນຕົກ ເຮົາເອີ້ນຣະຫວ່າງເວລາຂອງສັຕວັດທີ່ 5 ເຖິງສັຕວັດທີ່ 10 ວ່າ **ຍຸກມືດ** ເພາະວ່າເປັນຍຸກທີ່ເກີດການບຸກຮຸກຂອງຊົນຊາວປ່າທີ່ຂາດ

ອາລະຍະທັມຂາດຄວາມຈະເຣີນ ຫລືຂາດຄວາມສີວິໄລ ເຫດທີ່ຊາວໂຣມັນເອີ້ນພວກນີ້ວ່າເປັນພວກຊາວປ່າ ເພາະວ່າເປັນຊົນເຜົ່າຕ່າງ ໆ ທີ່ຕັ້ງຖິ່ນຖານເປັນເຜົ່າຕາມປ່າແລະເທິງພູ ເປັນພວກນັບຖືຜີ ແລະບໍ່ມີສາສນາຫລືຄໍາສອນອັນແທ້ຈິງ ພວກນີ້ເປັນນັກຣົບໂຫດຮ້າຍ ນອກເຫນືອຈາກທີ່ໄດ້ກ່າວມາແລ້ວ ຊາວໂຣມັນມັກເອີ້ນຊົນຊາດອື່ນ ໆ ທີ່ບໍ່ແມ່ນຊົນຊາດໂຣມັນວ່າ **ຊາວປ່າ** ເພາະເຫດວ່າໃນເວລານັ້ນ ມະຫາຣາຊອານາຈັກໂຣມັນມີຄວາມຮຸ່ງເຮືອງຫລາຍ ຊາວໂຣມັນຈຶ່ງມັກຄິດວ່າຊົນເຜົ່າອື່ນເປັນຄົນປ່າ ຂາດອາລະຍະທັມໂດຍສະເພາະຢ່າງຍິ່ງ ທີ່ໄດ້ເຫັນຄົນປ່າເຫລົ່ານີ້ບຸກຣຸກເຂົ້າຍຶດກຸງໂຣມຢ່າງໂຫດຣ້ຽມ ຈຶ່ງຮ້ອງພວກທີ່ບຸກຣຸກເຂົ້າມາວ່າ **"ຊາວປ່າ"** ຫລື **"ອານາຣະຍະຊົນ"** (Barbarians)

## ກຸງໂຣມລົ້ມໃນປີ ຄ.ສ.476

ຜູ້ນໍາຊົນເຜົ່າເຢັຽຣະມັນ ມີຊື່ວ່າ ເຮີຣູລີ (Heruli) ໄດ້ເຂົ້າຍຶດກຸງໂຣມ ແລະຖອນເອົາເຈົ້າຊີວິດຜູ້ທີ່ມີອາຍຸຍັງນ້ອຍທີ່ມີຊື່ວ່າ ໂຣມຸສລັສອໍກັສຕັສ (Romuslus Augustus) ອອກຈາກບັນລັງແລ້ວ ຕັ້ງເຈົ້າຊີວິດອົງໃຫມ່ຂຶ້ນຄື ໂອໂດເອເຊີ (King Odoacer) ເປັນເຈົ້າຊີວິດ ໆ ອີຕາລີ ດັ່ງນັ້ນຕັ້ງແຕ່ປີ ຄ.ສ.476 ມະຫາອານາຈັກໂຣມັນຝ່າຍຕາວັນຕົກກໍຫມົດສິ້ນໄປ ນັບຕັ້ງແຕ່ກຸງໂຣມຖືກຕັ້ງຂຶ້ນ ຈົນເຖິງກຸງໂຣມລົ້ມລົງຢ່າງເດັດຂາດ ນັບເປັນເວລາທັງຫມົດ ນຶ່ງພັນສອງຮ້ອຍປີ

ແມ່ນວ່າອານາຈັກຝ່າຕາວັນຕົກໄດ້ລົ້ມໄປແລ້ວ ແຕ່ວ່າອານາຈັກໂຣມັນຝ່າຍຕາວັນອອກຊຶ່ງມີກຸງຄອນສະແຕນຕິໂນເປີລເປັນເມືອງຫລວງຂອງຣາຊອານາຈັກໂຣມັນໃນເວລານັ້ນກໍຍັງຄົງຕັ້ງຢູ່ຕໍ່ໄປອີກພັນປີຄືຈົນເຖິງ ຄ.ສ. 1453

ຊາວປ່າເຜົ່າຕ່າງ ໆ ທີ່ໄດ້ບຸກຣຸກເຂົ້າມານັ້ນ ເກືອບທັງຫມົດເປັນພວກນອກສາສນາມາແຕ່ດິນແດນເດີມຂອງຕົນ ແຕ່ວ່າພວກໂກທສ໌ (Goths) ພວກນີ້ເປັນຄຣິສຕຽນນິກາຍອາຣຽນ (ຖືຕາມຄໍາສອນຂອງອາຣິອຸສ) ແລະໄດ້ແປ ພຣະຄຣິສທັມຄັມພີ (Bible) ເປັນພາສາຂອງຕົນເອງ ຄັມພີຂອງພວກໂກທໄດ້ເປັນອັກສອນສາດໂບຮານຂອງພວກ ທິວຕັນ (Tueton) ມາຈົນເຖິງປັດຈຸບັນ ແລະຍັງມີຫລັກຖານປາກົດຢູ່ໃນມະຫາວິທຍາລັຍອັປສາລາ (Appsala University) ຊຶ່ງໄດ້ກ່າຍພຣະຄັມພີຂອງພວກໂກທສ໌ມາໃສ່ໄວ້ໃນແຜ່ນເງິນ

ຊົນຊາວປ່າເຫລົ່ານີ້ ພາຍຫລັງໄດ້ກັບໃຈເປັນຄຣິສຕຽນໃນສາຍອາຣຽນ ຊຶ່ງເປັນກຸ່ມທີ່ເນັ້ນມັກເຣື້ອງພິທີກັມທາງສາສນາຫລາຍກວ່າການຖືຫລັກຂໍ້ເຊື່ອ ຢ່າງໃດກໍຕາມຄຣິສຕຽນຊາວປ່ານີ້ ມີແຕ່ພຽງເລັກນ້ອຍທີ່ຮັບຫລັກຄວາມເຊື່ອແບບໄນເຊັຽ (Nicea) ຊຶ່ງເນັ້ນເຣື້ອງຫລັກຂໍ້ເຊື່ອຫລາຍກວ່າພິທີທາງສາສນາ ແລະຊົນຊາວປ່ານີ້ເມື່ອໄດ້ກໍ່ຕັ້ງເປັນປະເທດແລ້ວ ໄດ້ຍອມຢູ່ໃຕ້ອໍານາດແລະການນໍາພາຂອງຄຣິສຕຈັກໃນກຸງໂຣມ

## ສາເຫດທີ່ກຸງໂຣມຕ້ອງຕົກຢູ່ໃນມືຂອງຊາວປ່າ

ຕັ້ງແຕ່ຕົ້ນສັຕວັດທີ່ 5 ຊາວປ່າໂກທຕາວັນຕົກຫລືທີ່ເອີ້ນວ່າ ວິຊິໂກທສ໌ (Visigoths) ໄດ້ຕັ້ງຕົ້ນເຂົ້າປຸ້ນແລະພຍາຍາມຍຶດເອົາດິນແດນຂອງມະຫາຣາຊອານາຈັກໂຣມັນໃນເວລານັ້ນ ມີນັກຂຽນຊາວລາຕິນຜູ້ນຶ່ງໃຫ້ຄວາມຄິດເຫັນວ່າພຣະເຈົ້າໄດ້ໃຊ້ພວກໂກທສ໌ (Goths) ແລະຕໍ່ມາພາຍຫລັງແມ່ນພວກຮັນສ໌ (Huns) ເປັນດັ່ງແສ້ຂອງພຣະເຈົ້າທີ່ໃຊ້ຂ້ຽນຕີຣາຊອານາຈັກໂຣມັນ ເພາະເຫດວ່າຊາວໂຣມັນ

ບໍ່ໄດ້ຢຶດໝັ້ນໃນຄວາມເຊື່ອຢ່າງແທ້ຈິງ ແຕ່ວ່າຊາວໂຣມັນບາງຄົນມີຄວາມຄິດວ່າ ເພາະເຫດວ່າຊາວໂຣມັນປະຖິ້ມເທວຮູບດັ້ງເດີມຂອງພວກຕົນໄປເປັນຄຣິສຕຽນ ເທວຮູບເລີຍໃຫ້ໂທດເປັນເຫດໃຫ້ກຸງໂຣມຕ້ອງພົບກັບພັຍວິບັດ ນອກຈາກນີ້ຍັງມີອີກຜູ້ນຶ່ງຊື່ **ກິບບັນ** ຂຽນໄວ້ໃນໜັງສືເຣື້ອງ "ການເສື່ອມອຳນາດແລະຄວາມພິນາດຂອງມະຫາຣາຊອານາຈັກໂຣມັນ" ທ່ານໃຫ້ຄວາມຄິດເຫັນວ່າ ສາສນາຄຣິສເປັນຕົ້ນເຫດໃຫ້ອຳນາດຂອງມະຫາຣາຊອານາຈັກໂຣມັນຕ້ອງເສື່ອມລົງ ເພາະວ່າຄຣິສສາສນາສອນໃຫ້ຄົນຊອກຫາແຕ່ຄວາມຣອດພົ້ນໃນຊີວິດຫລັງຄວາມຕາຍ ສົນໃຈແຕ່ການອອກບວດ ສວດອ້ອນວອນບໍ່ສົນໃຈໃນການເສິກຫລືການທຫານ ເຮັດໃຫ້ພົລເມືອງບໍ່ຮັກປະເທດຊາດ ບໍ່ສົນໃຈເປັນທຫານ ບໍ່ສົນໃຈຕໍ່ຄວາມສຳຄັນຂອງວັທນະທັມກຣີກ-ໂຣມັນໂບຣານ ແຕ່ວ່າແທ້ຈິງແລ້ວການເສື່ອມອຳນາດຂອງຣາຊອານາຈັກໂຣມັນ ແມ່ນຫຽັງເປັນສາເຫດອັນແທ້ຈິງ

ສາເຫດທີ່ແທ້ຈິງຂອງການສູນເສັຽອຳນາດຂອງຣາຊອານາຈັກໂຣມັນ ພ້ອມເສັຽດິນແດນດ້ານຕາວັນຕົກໄປນັ້ນ ບໍ່ແມ່ນຄຣິສຕຽນເປັນເຫດ ແຕ່ເນື່ອງມາຈາກຄວາມອ່ອນແອຂອງຊາວໂຣມັນເອງຕ່າງຫາກ ທຫານຂອງໂຣມັນອ່ອນແອທາງດ້ານວິນັຍແລະກົດຂໍ້ບັງຄັບ ມີເສິກການເມືອງແຍ້ງຊີງບັນລັງກັນບໍ່ຂາດ ຈົນກະທັ່ງຊາວໂຣມັນເອງເບື່ອໜ່າຍ ບໍ່ສົນໃຈຢາກເປັນທຫານ ເປັນເຫດໃຫ້ຕ້ອງເອີ້ນກອງທຫານຈາກຊາຍແດນ ຊຶ່ງສ່ວນໃຫຍ່ເປັນຊາວປ່າທີ່ເຂົ້າມາຮັບຈ້າງເປັນທຫານຂອງຣັຖບານໂຣມັນ ແລະພວກຊາວປ່ານີ້ເອງທີ່ມີພລັງ ມີກຳລັງຮ່າງກາຍເຂັ້ມແຂງ ແລະກ້າຫານຫລາຍກວ່າ ຈຶ່ງເປັນການງ່າຍທີ່ຈະເຂົ້າຢຶດອານາຈັກຝ່າຍຕາວັນຕົກໃນພາຍຫລັງ ດັ່ງນັ້ນການທີ່ກຸງໂຣມລົ້ມ ຈຶ່ງບໍ່ສົມຄວນໃສ່ໂທດສາສນາຄຣິສແຕ່ຢ່າງດຽວ ໂດຍຄວາມຈິງແລ້ວມີຫລາຍສາຍເຫດທີ່ນຳໃຫ້ອານາຈັກຝ່າຍຕາວັນຕົກຂອງໂຣມັນຕ້ອງລົ້ມລົງ

ມີຜູ້ກ່າວໄວ້ວ່າ "ທຸກສິ່ງທີ່ເກີດຂຶ້ນໃນໂລກນີ້ ລ້ວນແລ້ວແຕ່ເກີດຈາກນ້ຳພຣະທັຍແລະພຣະປະສົງຂອງພຣະເຈົ້າ" ບາງເທື່ອມະນຸດຜູ້ມີຄວາມເຂົ້າໃຈໃນພຣະເຈົ້າບໍ່ຫລາຍ ເມື່ອຕ້ອງປະສົບກັບພັຍພິບັດ ເສິກສົງຄາມຫລືຄວາມທຸກຍາກລຳບາກ ມັກຈະໂທດຫລືໂຍນຄວາມຜິດໃຫ້ແກ່ພຣະເຈົ້າ ນັກປວັດສາດໄດ້ຂຽນບັນທຶກເຖິງເຫດການທີ່ເກີດຂຶ້ນໃນປວັດສາດອັນເປັນຫລັກການຊັດເຈັ້ງທີ່ຊີ້ໃຫ້ເຮົາເຫັນວ່າ ມະນຸດມັກເປັນຜູ້ເຮັດໃຫ້ເກີດເຫດການຮ້າຍແລະຄວາມເສັຽຫາຍ ແຕ່ພຣະເຈົ້າຊົງແກ້ໄຂສິ່ງເສັຽຫາຍທີ່ມະນຸດເຮັດໄວ້ໃຫ້ກາຍເປັນດີ ມະນຸດໃນທຸກຍຸກທຸກສມັຍມັກແຍ່ງຊີງອຳນາດແລະເກີດການທຳລາຍຊຶ່ງກັນແລະກັນ ແຕ່ພຣະເຈົ້າຜູ້ຊົງທ່ຽງທັມໄດ້ກູ້ເອົາເຫດການຮ້າຍໃຫ້ກາຍເປັນດີສເມີ

ໃນເວລານັ້ນຄຣິສຕຽນຊາວໂຣມັນທີ່ເຂັ້ມແຂງມີຄວາມເສັຽໃຈຫລາຍທີ່ເຫັນກຸງໂຣມຕ້ອງປະສົບກັບພັຍທາງການເມືອງ ແລະຕົກຢູ່ໃນມືຂອງຊາວປ່າ ເຮັດໃຫ້ເກີດຄວາມທໍ້ອົກທໍ້ໃຈຢ່າງຫລວງຫລາຍ ໂດຍຄິດວ່ານະຄອນອັນສັກສິດຂອງພຣະເຈົ້າ ຄືກຸງໂຣມໄດ້ຖືກທຳລາຍແລ້ວ ເຮັດໃຫ້ໝົດຫວັງ ແຕ່ວ່າທ່ານ **ທ່ານອໍກັສຕິນ** (Augustine)ໄດ້ຂຽນໜັງສືເຣື້ອງ "ນະຄອນຂອງພຣະເຈົ້າ" (The City of God) ເພື່ອປະຕິເສດຄວາມຄິດຂອງຊາວໂຣມັນວ່າ ສາຍເຫດທີ່ກຸງໂຣມຖືກຢຶດນັ້ນ ບໍ່ແມ່ນຍ້ອນເທວຮູບຫລືພຣະດັ້ງເດີມຂອງຊາວໂຣມັນທີ່ບໍ່ພໍໃຈ ແລະບໍ່ແມ່ນຄຣິສຕຽນເປັນສາເຫດ ທ່ານອໍກັສຕິນສອນວ່າ ໂລກນີ້ມັກຕ້ອງປະສົບພົບກັບພັຍພິບັດສເມີ ເພາະເນື່ອງຈາກຄວາມບາບຂອງມະນຸດ ທີ່ມັກແຍ່ງຊີງອຳນາດເຮັດໃຫ້ເກີດເສິກ ແຕ່ທ່ານຂຽນໜູນໃຈຄຣິສຕຽນໃນກຸງໂຣມວ່າ ຢ່າຝັງໃຈຕິດຢູ່ກັບກຸງໂຣມທີ່ຢູ່ໃນໂລກນີ້ ເພາະວ່າຣາຊອານາຈັກໃນໂລກນີ້ບໍ່ຍັ່ງຍືນນານ ມີວັນຮຸ່ງເຮືອງແລະມີວັນຕົກຕ່ຳດັບສູນໄປ ບໍ່ມີ

ອຳນາຈໃດໃນໂລກທີ່ຈະຄົງຢູ່ຕລອດໄປ ເວັ້ນໄວ້ແຕ່ຣາຊອຳນາດຂອງພຣະເຈົ້າ ຄຣິສຕຽນສົມຄວນຄິດເຖິງນະຄອນອັນສັກສິດຂອງພຣະເຈົ້າຫລາຍກວ່າ ຄືນະຄອນຝ່າຍວິນຍານ ທ່ານອໍກັສຕິນໄດ້ກ່າວເຖິງນະຄອນຂອງພຣະເຈົ້າວ່າ ເປັນສັງຄົມອັນບໍຣິສຸດ ທີ່ມີຄຣິສຈັກໃນໂລກນີ້ເປັນຕົວແທນ ມີທູຕສວັນແລະວິນຍານຂອງຜູ້ຊອບທັມຮ່ວມຄົບບໍຣິບູນຢູ່ໃນນະຄອນນັ້ນ ດັ່ງນັ້ນທ່ານຈຶ່ງຫນູນໃຈໃຫ້ຄຣິສຕຽນມີຄວາມຫວັງໃຫມ່ວ່າ **ຄຣິສຕຽນເປັນພົລເມືອງຂອງສອງນະຄອນ ຄືກຸງໂຣມອັນເປັນທີ່ຮັກແລ້ວ ເຮົາຍັງຕ້ອງຄິດເຖິງ "ນະຄອນຂອງພຣະເຈົ້າ"** ອັນເປັນນະຄອນທີ່ບໍຣິສຸດສົມບູນທີ່ເຮົາຄວນຮັກຄືກັນ ຫນັງສືຂອງທ່ານໄດ້ມີອິດທິພົນຕໍ່ຄວາມຈະເຣີນເຕີບໂຕຂອງອານາຈັກໂຣມັນໃນສມັຍກາງທີ່ເອີ້ນວ່າ **ຣາຊອານາຈັກໂຣມັນອັນສັກສິດບໍຣິສຸດ**

**ການເປັນຄຣິສຕຽນຂອງຊາວປ່າ**

ໃນ ຄ.ສ.410 ແອລາຣິກ (Alaric) ຊາວວີຊີໂກທສ໌ (Sivigoths) ເມື່ອໄດ້ເຂົ້າຢຶດກຸງໂຣມ ທ່ານບໍ່ໄດ້ທຳລາຍພວກບາດຫລວງຂອງຄາທໍລິກ ຫລືພວກບາດຫລວງຂອງເອຣຽນ (ພວກອາຣິອຸສ) ແລະບໍ່ໄດ້ທຳລາຍສົມບັດຂອງໂບດວິຫານ ຊຶ່ງຄວາມຈິງປາກົດວ່າພວກນີ້ທີ່ຖືກຮ້ອງວ່າເປັນຊາວປ່າຂາດຄວາມສີວິໄລ (ອາຣະຍະທັມ) ນັ້ນ ບໍ່ເປັນຄວາມຈິງສຳລັບພວກນີ້ ເພາະວ່າພວກນີ້ໄດ້ເປັນຄຣິສຕຽນໃນສາຍຂອງເອຣຽນ (Arians) ມາດົນນານແລ້ວ ເພາະວ່າພວກເອຣຽນໄດ້ມີໂອກາດຄອງຣາຊອານາຈັກໂຣມັນມາເປັນເວລານານ ຈຶ່ງມີຜູ້ປະກາດຂ່າວປະເສີດຫລືມິຊຊັ່ນນາຣີເຂົ້າໄປເຖິງຊາວປ່າເຫລົ່ານີ້ແລະເຜີຍແຜ່ຂ່າວປະເສີດໃຫ້ແກ່ພວກເຂົາບຸກຄົນທີ່ສຳຄັນແມ່ນ ທ່ານ ຍູຟີລາສ (Ulfilas) ທ່ານເປັນເຊື້ອສາຍຂອງຊາວຣັ້ນ ເມື່ອເຈົ້າຊີວິດແອລາຣິກເຂົ້າຢຶດກຸງໂຣມບໍ່ໄດ້ນານ ທ່ານກໍສິ້ນຊີພ

ພວກວີຊີໂກທສ໌ (ຊາວໂກທຕາເວັນຕົກ) ກໍຍັງຄົງທຳເສິກບຸກຣຸກຕໍ່ໄປ ແລະໄດ້ໃຊຊະນະພວກກອລ (ຝຣັ່ງ) ແລະໄດ້ຊັຍ ພວກສະເປນ ສາມາດຕັ້ງອານາຈັກຢູ່ໄດ້ນານເຖິງ 300 ປີ ພວກຊີວີໂກທໄດ້ຂັບໄລ່ພວກແວນດັລສ໌ ໃຫ້ຫນີຖອຍໄປເຖິງອາຟຣິກາ ໃນເວລາທີ່ພວກແວນດັລສ໌ຖອຍຫນີໄປນັ້ນຈຳເປັນຕ້ອງໄດ້ທຳເສິກກັບຊາວພື້ນເມືອງອັຟຣິກາ ພວກແວນດັລສ໌ສາມາດເຂົ້າລ້ອມແລະຢຶດເມືອງຮິບໂປ (Hippo) ໄດ້ໃນ ຄ.ສ.430 ຊຶ່ງເປັນປີດຽວກັບທ່ານອໍກັສຕິນສິ້ນຊີພ ພວກແວນດັນສ໌ສາມາດເຂົ້າຢຶດກຸງໂຣມໄດ້ໃນ ຄ.ສ.478 ແຕ່ກໍຮັກສາບໍ່ໄດ້ນານກໍຕ້ອງເສັຽຄືນໃຫ້ແກ່ຜູ້ນຳຊາວໂກທສ໌ຄື ທີໂອໂດຣິກ (Theodoric) ໃນ ຄ.ສ.487-526 ທ່ານເປັນຊາວໂກທຕາວັນຕົກເຊື້ອສາຍອອສໂຕໂກທສ໌ຫລືທີ່ເອີ້ນວ່າຊາວໂກທຕາວັນອອກ (Osthogoths) ທ່ານໄດ້ຊັຍຊນະທັງຫມົດ ແລະຂຶ້ນປົກຄອງ ອີຕາລີ ຊິຊີລີ ກັບປະເທດຂ້າງຄຽງ ທ່ານໄດ້ເຮັດໃຫ້ອານາຈັກເກີດການຟື້ນຟູຕົວຂຶ້ນ ແລະຄຣິສຈັກຂອງຊາວໂກທສ໌ຍັງນິຍົມຫລັກຄວາມເຊື່ອສາຍເອຣຽນ ແຕ່ປະຊາຊົນສ່ວນໃຫຍ່ນັບຖືຄຣິສສາສນາສາຍຄາທໍລິກ ແຕ່ກະນັ້ນຍັງໄດ້ພຍາຍາທາທາງເພື່ອທັງສອງຝ່າຍເຂົ້າກັນໄດ້ ແລະຍອມຮັບນິກາຍຄາທໍລິກວ່າ ເປັນນິກາຍທີ່ດີຂອງໂຣມ ພວກໂກທສ໌ມີຮີດຄອງປະເພນີແລະກົດຫມາຍຂອງຕົນເອງ ຢ່າງໃດກໍຕາມທ່ານທີໂອໂດຣິກສິ້ນພຣະຊົນໃນ ຄ.ສ.526 ແລະບໍ່ມີທາຍາດເປັນຜູ້ສືບບັນລັງຕໍ່

ການບຸກຣຸກຂອງຊາວປ່າຫລາຍເຜົ່າປ່ຽນກັນບຸກຣຸກແລະຢຶດກຸງໂຣມເປັນຣະຣອກ ໆ ເມື່ອເຜົ່ານຶ່ງຢຶດກຸງໂຣມໄດ້ແລ້ວ ອີກເຜົ່າກໍບຸກຣຸກຂັບໄລ່ເຜົ່າທີ່ຢູ່ກ່ອນແລ້ວໃຫ້ອອກໄປ ຊຶ່ງແຕ່ລະເຜົ່າໄດ້ຢຶດກຸງໂຣມໄວ້ບໍ່ໄດ້ນານກໍຕ້ອງເສັຽແກ່ເຜົ່າອື່ນ ໆ ຕໍ່ໄປ ຕາມທີ່ເຮົາໄດ້ພາກັນສຶກສາມານັ້ນ ແມ່ນຍຸກທີ່ເຮັດໃຫ້ອານາຈັກໂຣມັນຝ່າຍຕາວັນຕົກແລະກຸງໂຣມຕ້ອງສູນເສັຽດິນແດນແກ່ຊາວປ່າ ແລະຖືກເອີ້ນວ່າເປັນ **ຍຸກມືດ** ແຕ່ຢ່າງນ້ອຍທີ່ສຸດກໍຍັງມີ **ແສງສວ່າງ** ແຫ່ງຄວາມຍິນດີ ທີ່ໄດ້ເຫັນຊາວປ່າເຫລົ່ານີ້ໄດ້ກັບໃຈເປັນຄຣິສ

ຕຽນ ແລະບັງເກີດຊົນຊາດໃໝ່ ໆ ຂຶ້ນໃນອັຟຣິກາແລະຢູໂຣບ ໂດຍສະເພາະຢ່າງຍິ່ງໃນທວີບຢູໂຣບ ຄຣິສຈັກໄດ້ເກີດຂຶ້ນຈຳນວນຫລາຍ ມີຄວາມຮຸ່ງເຮືອງໃນສັດຕະວັດຫລັງ ໆ ຕໍ່ມາ ຊຶ່ງເປັນພລັງສົ່ງເສີມອຳນາດຂອງສັນຕະປາປາຫລາຍຂຶ້ນ ໂດຍເຫດນີ້ ແມ່ນວ່າອານາຈັກຝ່າຍຕາວັນຕົກລົ້ມລົງ ແລະໝົດອຳນາດທາງການເມືອງກໍຈິງຢູ່ ແຕ່ຄຣິສຈັກກໍຍັງຄົງຍືນຍົງຕໍ່ໄປ ແລະປະເທດທີ່ເກີດໃໝ່ໃນດິນແດນພາກຕາວັນຕົກຂອງມະຫາຣາຊອານາຈັກໂຣມັນກໍມີຄວາມເຂັ້ມແຂງ ແລະມີຄວາມເຊື່ອໃນສາສນາຄຣິສ ໄດ້ສົ່ງເສີມອຳນາດຂອງສັນຕະປາປາແລະກໍ່ໃຫ້ເກີດການສົ່ງມິຊຊັ່ນນາຣີອອກໄປທົ່ວໂລກ

ເນື່ອງຈາກການສຶກສານີ້ເປັນວິຊາປວັດສາດຄຣິສຈັກ ບໍ່ແມ່ນການສຶກສາປວັດສາດຂອງຣາຊອານາຈັກໂຣມັນ ດັ່ງນັ້ນຈຶ່ງຕ້ອງກ່າວແຕ່ສັ້ນ ໆ ດັ່ງນີ້ວ່າ ສາຍເຫດສຳຄັນຂອງການບຸກຣຸກຂອງຊາວປ່າ (ຊົນເຜົ່າຕ່າງຂອງເຢັຽມັນ) ເພື່ອຈະໄດ້ນຳເອົາຊົນເຜົ່າຂອງຕົນ ໃຫ້ຫລຸດພົ້ນຈາກອຳນາດຂອງໂຣມັນ ແລະຕັ້ງຕົວເອງເປັນປະເທດອິສຣະຫລາຍປະເທດ ຊຶ່ງພໍສລູບໄດ້ສັ້ນ ໆ ດັ່ງນີ້

| | |
|---|---|
| **ກະສັດອັດຕິລາ** (King Attila) | ເປັນຜູ້ນຳຊາວປ່າເອເຊັຽ ທີ່ເອີ້ນວ່າຮັ້ນ(Huns)ເປັນພວກດຸຮ້າຍທີ່ສຸດ ໄດ້ບຸກຣຸກທຳລາຍເຖິງກຸງໂຣມ ອີຕາລີ ອັດຕິລາຕາຍ ໃນ ຄ.ສ.451 ທີ່ສນາມຮົບພາກເໜືອຂອງຝຣັ່ງເສດ (ຟຣັງເຊັຍ) ເຮັດໃຫ້ອຳນາດຂອງພວກຮັ້ນສິ້ນສຸດລົງ |
| **ເຈນເຊີຣິກ** (Genseric) | ຜູ້ນຳຊາວປ່າແວນດັນສ໌ (Vandals) ໄດ້ນຳທັພຂ້າມຝຣັ່ງເສດ (ຟຣັງເຊັຍ) ແລະຂ້າມສະເປນເຂົ້າອັຟຣິກາເໜືອ ປາບປາມເມືອງຕ່າງ ໆ ພາຍຫລັງໄດ້ກາຍເປັນປະເທດຕ່າງ ໆ ແຖບອັຟຣິກາ |
| **ຊົນເຜົ່າເບີກັນດຽນສ໌** (Burgundieans) | ໄດ້ຂ້າມແມ່ນ້ຳໄຣ (Rhine River) ແລ້ວ ເຂົ້າຢຶດແລະປົກຄອງຕອນໃຕ້ຂອງແມ່ນ້ຳໄຣໂດຍມີເມືອງສະຕາສເບີກ (Strassburg) ເປັນສູນກາງ ທີ່ຢູ່ທາງຕາວັນອອກຊຽງໃຕ້ຂອງຝຣັ່ງເສດ |
| **ຊົນເຜົ່າວິຊິໂກທສ໌** (Visigoths) | (ຫລື ໂກທສ໌ຕາວັນຕົກ, Western Goths) ໂດຍທ່ານແອລາຣິກ (Alaric) ໄດ້ເປັນຜູ້ນຳກໍ່ຕັ້ງ ປະເທດສະເປນ |
| **ຊົນເຜົ່າອໍສໂຕໂກທສ໌** (Ostrogoths) | (ຫລືໂກທສ໌ຕາວັນອອກ, Eastern Goths) ຊົນເຜົ່ານີ້ແລະພວກລອມບາດ (Lombard) ແຍກຕົວເປັນປະເທດອີຕາລີ |
| **ຊົນເຜົ່າແຟງສ໌** (Franks) | ຊົນເຜົ່ານີ້ບຸກຂ້າມແມ່ນ້ຳໄຣແລະຢຶດເອົາດິນແດນຕອນໃຕ້ຂອງແມ່ນ້ຳໄຣ ແລ້ວຮ້ອງຊື່ດິນແດນນັ້ນວ່າ ຟຣັງເຊັຍ (ຝຣັ່ງເສດ) ແລະກໍ່ຕັ້ງເປັນປະເທດຝຣັ່ງເສດ ເຈົ້າຊີວິດໂຄລວິສ (Clovis) ຂອງຟຣັງເຊັຍໄດ້ກັບໃຈເປັນຄຣິສຕຽນ ທ່ານໄດ້ນຳໃຫ້ພົລເມືອງເປັນຄຣິສຕຽນ |

ດ້ວຍພວກແຟງສ໌ໄດ້ນຳໃຫ້ປະຊາຊົນໃນຢູໂຣບພາກເໜືອກາຍເປັນຄຣິສຕຽນແຕ່ສ່ວນຫລາຍເປັນໄປໂດຍການຖືກບັງຄັບ ບໍ່ໄດ້ສມັກໃຈຫລືກັບໃຈໃໝ່

**ພວກແອງໂກ-ແຊກຊັ່ນສ໌ (Anglo-Saxaons)** ພວກນີ້ເປັນຊົນເຜົ່າເຢັຽຣະມັນອີກເຜົ່ານຶ່ງທີ່ມາຈາກດິນແດນທາງພາກເໜືອ ໄດ້ບຸກເຂົ້າຢຶດດິນແດນບຣິເຕນ (Britain) ທີ່ພວກໂຣມັນປະຖິ້ມໄວ້ ແລະຕັ້ງເປັນປະເທດອັງກິດ (England) ພວກນີ້ແມ່ນບັນພະບຸຣຸດຂອງຄົນອັງກິດໃນສມັຍນີ້ ຕອນທຳອິດພວກນີ້ບໍ່ໄດ້ເປັນຄຣິສຕຽນເມື່ອບຸກຮຸກເຂົ້າມາໄດ້ທຳລາຍຄຣິສຕຽນ ກະທັ້ງພາຍຫລັງຕໍ່ມາພົລເມືອງຈຶ່ງໄດ້ກັບໃຈໃໝ່ໂດຍມີພວກມິຊຊັ່ນນາຣີ (Missionary) ທີ່ມາຈາກກຸງໂຣມໄດ້ໄປປະກາດຂ່າວປະເສີດທີ່ນັ້ນ ເຮັດໃຫ້ພົລເມືອງທົ່ວປະເທດອັງກິດກັບໃຈເປັນຄຣິສຕຽນທີ່ເຂັ້ມແຂງໃນສັຕວັດຕໍ່ ໆ ມາ

# ພາກເພີ້ມພູນການສຶກສາ (Appendix)

ນັກສຶກສາບາງທ່ານອາດຈະບໍ່ລຶ້ງເຄີຍກັບຊື່ຂອງຊົນເຜົ່າຕ່າງ ໆ ທີ່ມີປາກົດໃນບົດຮຽນຂ້າງຕົ້ນ ດັ່ງນັ້ນໃນພາກນີ້ຈຶ່ງຂໍຖືໂອກາດອະທິບາຍຢ່າງສລູບເຖິງຊົນເຜົ່າຕ່າງ ໆ ທີ່ເຂົ້າບຸກຮຸກດິນແດນພາກຕາວັນຕົກຂອງມະຫາຣາຊອານາຈັກໂຣມັນ

**ພວກທິວຕັນສ໌** (Teutons) ເປັນຊາວປ່າເຜົ່າເຢັຽຣະມັນຫລາຍ ໆ ເຜົ່າທີ່ອາສັຍຢູ່ໃນດິນແດນແຖບເຢັຽຣະມັນແລະສະແກນດິເນເວັຽ (Scandinavia ຢູ່ທາງຕອນເໜືອຂອງຢູໂຣບ) ພວກນີ້ເວົ້າພາສາອິນໂດຢູໂຣບ ອັນເປັນພາສາຫລາຍ ໆ ພາສາຂອງຢູໂຣບ ພາສາຝຣັ່ງ ພາສາອັງກິດ ແລະພາສາເຢັຽຣະມັນໃນປັດຈຸບັນກໍນັບຮ່ວມຢູ່ໃນພາສາອິນໂດຍຢູໂຣບຄືກັນ

**ຮັ້ນສ໌** (Huns) ເປັນຊົນຊາວປ່າເອເຊັຽອີກເຜົ່ານຶ່ງ ທີ່ໂຫດຮ້າຍມາຈາກທາງພາກຕາວັນອອກຄືບໍຣິເວນດິນແດນປະເທດຈີນໃນປັດຈຸບັນ ໃນສມັຍນັ້ນພວກຮັ້ນສ໌ໄດ້ທຳການບຸກຮຸກເພື່ອຊອກຫາບ່ອນອຸດົມສົມບູນ ພວກນີ້ທາຣຸນໂຫດຮ້າຍກວ່າໝູ່ ພວກຮັ້ນສ໌ໄດ້ໂຈມຕີຂັບໄລ່ພວກໂກທສ໌ (Goths) ເປັນເຫດໃຫ້ພວກໂກທສ໌ຕ້ອງຖອຍໜີໄປທາງຕາວັນຕົກ ເຂົ້າໄປຢຶດໄດ້ດິນແດນເຢັຽຣະມັນ ໂປແລນດ໌ ແລະຣັຖເຊັຽທີ່ຕິດກັບຢູໂຣບ ສ່ວນພວກຮັ້ນສ໌ໄດ້ທຳການບຸກຮຸກຈາກເອເຊັຽເຂົ້າໃນທະວີປຢູໂຣບຈົນຮອດກຸງໂຣມພາຍໃຕ້ການນຳພາຂອງທ່ານອັຕຕິລາ (Attila) ໃນສັຕວັດທີ 5 ແລະສິ້ນສຸດອຳນາດລົງເມື່ອຜູ້ນຳຮັ້ນສ໌ ຄືທ່ານອັຕຕິລາຕາຍໃນປີ ຄ.ສ. 451

**ໂກທສ໌** (Goths) ເປັນຊາວປ່າທີ່ເຄີຍຢູ່ທາງປະເທດໂຊວຽດຣັດເຊັຍທີ່ຕິດກັບຢູໂຣບທາງຕອນໃຕ້ຕາມລຸ່ມແມ່ນ້ຳດານິສເຕີ (Daniester) ແລະແມ່ນ້ຳດານູບ (Danube) ແທ້ຈິງພວກໂກທຕ້ອງ

ຖອຍໜີລົງມາທາງໃຕ້ ເພາະຖືກພວກຮັ້ນສ໌ບຸກຮຸກຈຶ່ງຕ້ອງຖອຍໜີ ຕັ້ງແຕ່ສັດຕະວັດທີ່ 3 ພວກໂກທສ໌ໄດ້ແຕກແຍກອອກ ແລະເຂົ້າບຸກຮຸກເຂດແດນທາງຕະວັນຕົກຂອງອານາຈັກໂຣມັນ ຄືດິນແດນຕອນໃຕ້ຂອງແມ່ນໍ້າໄຣ (Rhine) ແລະແມ່ນໍ້າດານູບ (Danube) ພວກໂກທສ໌ນີ້ມີອາຣະຍະທັມແລະສິລປະທາງດ້ານການກໍ່ສ້າງອາຄາຣ (Architectural) ຊຶ່ງມີຄວາມສາມາດຫລາຍແລະມີຊື່ສຽງທາງດ້ານແກະສລັກແລະການວາດພາບ ມີສິລປະທີ່ຈະເຣີນຮຸ່ງເຮືອງສູງສຸດໃນສມັຍກາງ ຄືປະມານສັດຕະວັດທີ່ 12 ເຖິງສັດຕະວັດທີ່ 15

**ຊົນເຜົ່າແວນດັນສ໌** (Vandals) ເປັນຊາວປ່າເຊື້ອສາຍເຢັຽຣະມັນຕະວັນອອກຕ້ອງຖອຍໜີລົງໃຕ້ແລະເຂົ້າບຸກຮຸກພາກໃຕ້ຂອງຢູໂຣບ ເນື່ອງຈາກພວກຊາວປ່າຮັ້ນແລະພວກໂກທໄດ້ຂັບໄລ່ໂຈມຕີພວກແວນດັລສ໌ ພວກແວນດັລສ໌ມີຄວາມປ່າເຖື່ອນໄດ້ທຳລາຍໜັງສືແລະໂບຣານວັດຖຸໃນຢູໂຣບໃຫ້ເກີດຄວາມເສັຽຫາຍຢ່າງໃຫຍ່ຫລວງ ກະທັ່ງປັດຈຸບັນຄວາມພາສາອັງກິດຍັງໄດ້ໃຊ້ຊື່ຂອງພວກຊົນເຜົ່ານີ້ເປັນສ່ວນນຶ່ງຂອງຄຳສັພວ່າ Vandalism ອັນມີຄວາມໝາຍເຖິງການທຳລາຍຂອງດີດ້ວຍຄວາມປ່າເຖື່ອນແລະຂາດອາຣະຍະທັມ

## ໝາຍເຫດສຳລັບແຜນທີ່

✱ **ແຜນທີ່ແນວທາງການບຸກຢຶດດິນແດນຂອງຊາວປ່າ** ສະແດງໃຫ້ເຫັນວ່າພວກໂກທສ໌ໄດ້ບຸກຢຶດດິນແດນຕ່າງ ໆ ໃນປະເທດຢູໂຣບແນວໃດບ້າງ ກ່ອນທີ່ປະເທດຕ່າງ ໆ ຈະໄດ້ຕັ້ງຖິ່ນຖານແລະມີຊື່ດັ່ງທີ່ເຮົາໄດ້ຮູ້ຈັກກັນໃນປັດຈຸບັນນີ້

✱ **ແຜນທີ່ແນວທາງການບຸກຢຶດດິນແດນຂອງພວກຮັ້ນສ໌ແລະພວກໂກທສ໌** ສະແດງໃຫ້ເຮົາເຫັນວ່າພວກຮັ້ນສ໌ໄດ້ແຕກອອກເປັນສີ່ສາຍໃນການບຸກຢຶດດິນແດນໃນເອເຊັຽເປັນສ່ວນໃຫຍ່ ສ່ວນພວກໂກທສ໌ໄດ້ແບ່ງການບຸກຢຶດດິນແດນອອກເປັນສອງແນວສູ່ດິນແດນໃນປະເທດຢູໂຣບເປັນສ່ວນໃຫຍ່


ແຜນທີ່ແນວທາງການບຸກຍຶດດິນແດນຂອງຊາວປ່າ
Barbarian Invasions
ທະເລເໜືອ
NORTH SEA
ແອງໂກ
ແຊກຊັນສ໌
ANGLO-SAXONS
ໂກທສ໌
GOTHS
ແມ່ນ້ຳໄຣ
RHINE RIVER
ແຟງສ
FRANKS
ເບີກັນດຽນສ
BURGUNDIANS
ອໍສໂຕໂກທສ໌
OSTROGOTHS
ແມ່ນ້ຳດານູບ
DANUBE RIVER
ATLANTIC OCEAN
ສະເປນ
SPAIN
ວິຊີໂກທສ໌
VISIGOTHS
ໂຣມ
ROME
ຣາຊອານາຈັກໂຣມັນ
ຕາວັນອອກ
ກຸງຄອນສະແຕນຕິນໂນເປິລ
CONSTANTINOPLE
EASTERN ROMAN
EMPIRE
ແວນດັນສ໌
VANDALS
MEDITERRANEAN SEA


ແຜນທີ່ແນວທາງການບຸກຍຶດດິນແດນຂອງພວກຮັ້ນສ໌ແລະພວກໂກທສ໌
THE HUN'S AND GOTH'S INVASION ROUTES
ໂກທສ໌
GOTHS
ຮັ້ນສ໌
HUNS
ເຢັຍຣະມັນ
GERMANY
ແມ່ນ້ຳໄຣ
RHINE RIVER
ກອລ
GAUL
ແມ່ນ້ຳດານູບ
DANUBE RIVER
ສະເປນ
SPAIN
ໂຣມ
ກຸງຄອນສະແຕນຕິນໂນເປີລ
CONSTANTINOPLE
ມົງໂກເລັຍ
MONGOLIA
ກຳແພງເມືອງຈີນ
Great Wall
ຈີນ
CHINA
ເປີເຊັຍ
PERSIA
ຫິມະໄລ
Himalayas
ອາຣາເບັຍ
ARABIA
ອິນເດັຍ
INDIA
ໄທຍ/ລາວ
THAILAND/LAOS
ອັຟຣິກາ
AFRICA



The writings of Augustine (354–430), bishop of Hippo, laid an ecclesiastical framework for the medieval church and a doctrinal foundation that still influences both Protestants and Roman Catholics. (Billy Graham Center)



Jerome (c. 345–c. 419), an early monastic leader, is best known as a Greek and Hebrew language scholar who produced the Vulgate translation. (Billy Graham Center)



Ambrose (c. 339–397) pioneered in the development of preaching and influenced the custom of congregational singing in Christian worship. (Billy Graham Center)

# A MEDIEVAL MONASTERY

This artist's reconstruction is based on the monastery built at St Gall about 820.

1 Church 2 Dormitory
3 Refectory 4 Stables
5 Kitchen 6 Bakery
7 Workshops 8 Guesthouse



The great city of
Constantinople has become
the modern city of Istanbul.



ສົ່ງ ວັດ 1-3-96

# ບົດທີ 7

## ການເຮືອງອຳນາດຂອງໂພພ
## ເຖິງການເສື່ອມອຳນາດລົງຂອງໂພພ

ຄ.ສ. 440-1414

**<u>ຄຳນຳ</u>**

ໃນບົດນີ້ນັກສຶກສາຈະໄດ້ຮຽນຮູ້ເຖິງບັນຫາຂອງຄຣິສຈັກທີ່ເກີດຂຶ້ນຕັ້ງແຕ່ສັຕວັດທີ່ 5 ເຖິງສັຕວັດທີ່ 15 ໃນຣະຍະເວລາປະມານ 1000 ປີນີ້ ຜູ້ນຳຄຣິສຈັກທີ່ບໍ່ສັດຊື່ຕໍ່ພຣະເຈົ້າໄດ້ນຳພາຄຣິສຈັກໃຫ້ອອກນອກເສັ້ນທາງອັນປະເສີດຂອງພຣະເຈົ້າ ອັນເປັນເຫດໃຫ້ຄຣິສຈັກຕ້ອງຫລົງໃນຄວາມຜິດບາບແລະຫລົງຢູ່ໃນ ຄວາມມືດມົນ ປະວັດສາດຄຣິສຈັກໃນຍຸກນີ້ໄດ້ເກີດຂຶ້ນຈິງ ແລະເປັນຍຸກສມັຍແຫ່ງຄວາມມືດມົນໃນຄວາມເຊື່ອ ແມ່ນວ່າເບິ່ງດູພາຍນອກແລ້ວ ຄຣິສຈັກໄດ້ເຕີບໂຕເຜີຍແຜ່ອອກໄປທົ່ວໂລກ ແລະມີອຳນາດສູງສຸດກຸມໄປເຖິງການປົກຄອງ ການເມືອງ ກະທັ່ງມີອຳນາດເໜືອເຈົ້າຊີວິດຫລາຍ ໆ ອົງໃນຫລາຍປະເທດ

ເຮົາຈະເຫັນໄດ້ວ່າໃນສັຕວັດທີ່ດິ່ງເຖິງຕອນຕົ້ນຂອງສັຕວັດທີ່ 4 ນັ້ນ ຄຣິສຈັກໄດ້ຮັບການຂົ່ມເຫັງມາໂດຍຕລອດ ຕັ້ງແຕ່ພຣະເຢຊູຄຣິສຖືກຕຶງບົນໄມ້ກາງແຂນ ອັຄສາວົກຫລາຍທ່ານຍອມເສັຽສລະຊີວິດເພື່ອຂ່າວປະເສີດ ຜູ້ຮັບໃຊ້ພຣະເຈົ້າຈຳນວນຫລາຍທີ່ອຸທິດຊີວິດຂອງຕົນເພື່ອຮັກສາຄວາມເຊື່ອ ເພື່ອຮັກສາຄຣິສຈັກຂອງພຣະຄຣິສໃຫ້ບໍຣິສຸດ ເບິ່ງດູສະພາບການໃນເວລານັ້ນທີ່ຕ້ອງຮັບການຂົ່ມເຫັງຄືວ່າເຕັມໄປດ້ວຍຄວາມທຸກຍາກລຳບາກ ແຕ່ວ່າຜູ້ເຊື່ອກໍມີຈິດໃຈອົດທົນໂດຍຄວາມເຊື່ອ ໂດຍຄວາມຫວັງ ແລະໂດຍຄວາມຮັກພັກດີໃນອົງພຣະຜູ້ເປັນເຈົ້າ ພຣະວິນຍານບໍຣິສຸດຈຶ່ງສາມາດນຳພາໃຫ້ຄຣິສຈັກ ແລະຊີວິດຝ່າຍວິນຍານຂອງຜູ້ເຊື່ອໃຫ້ເກີດຄວາມເຂັ້ມແຂງ

ແຕ່ວ່າ ເມື່ອມາເຖິງຍຸກນີ້ຄືຣາວ ຄ.ສ. 440 ຈົນເຖິງ ຄ.ສ. 1414 ນັ້ນ ຄຣິສຈັກຝ່າຍກາຍຝ່າຍວັຕຖຸມີຄວາມຮຸ່ງເຮືອງ ແລະມີສິດທິອຳນາດເໜືອການເມືອງການປົກຄອງ ແຕ່ດ້ານຄວາມເຊື່ອແລະຝ່າຍວິນຍານກັບຈືດຈາງລົງບໍ່ເຂັ້ມແຂງ ພຣະຄຳຂອງພຣະເຈົ້າຖືກປິດບັງໄວ້ ຂ່າວປະເສີດບໍ່ໄດ້ຖືກເປີດເຜີຍໃຫ້ແຈ່ມແຈ້ງ ບໍ່ຄືກັບສມັຍຂອງອັຄສາວົກຫລືຄຣິສຈັກໃນຍຸກທຳອິດ ຄືວ່າພວກສັງຄະຣາຊເຈົ້າອະທິການໃນຍຸກທີ່ກຳລັງສຶກສາຢູ່ນີ້ໄດ້ຫລົງໄປຈາກຄວາມຈິງຂອງພຣະເຈົ້າ ບໍ່ຍອມພິຈາຣະນາເບິ່ງຫລືຫັນຫາພຣະເຈົ້າ ບໍ່ໄດ້ກັບໃຈບັງເກີດໃໝ່ຢ່າງແທ້ຈິງ ແຕ່ກັບຫລົງອຳນາດແລະຍອມໃຫ້ມານມາບຽດບັງຕາເຮັດໃຫ້ເຫັນຜິດເປັນຖືກ ບໍ່ເຂົ້າໃຈຄຳສອນອັນທ່ຽງແທ້ທີ່ປາກົດໃນພຣະຄັມພີ ແລະໜັກຫລາຍກວ່ານັ້ນອີກຄື ພວກສັງຄະຣາຊແລະຜູ້ນຳຄຣິສຈັກຍັງບໍ່ຍອມໃຫ້ຜູ້ເຊື່ອໂດຍທົ່ວໄປເປີດພຣະຄັມພີອ່ານ ເພາະຖືວ່າພຣະຄັມພີສັກສິດ ສັງຄະຣາຊ ເຈົ້າອະທິການເທົ່ານັ້ນທີ່ສາມາດເປີດອອກອ່ານແລະຕີຄວາມໝາຍໄດ້ ເຮັດໃຫ້ຜູ້ເຊື່ອໂດຍທົ່ວໄປໝົດໂອກາດທີ່ຈະໄດ້ຮັບຄວາມເຂົ້າໃຈອັນແທ້ຈິງທີ່ປາກົດຢູ່ໃນພຣະຄຳຂອງພຣະເຈົ້າ

ການສຶກສາບັນຫາໃນຍສັດວັດທີ່ 5 ຈົນຮອດສັດວັດທີ່ 15 ນີ້ ເພື່ອຈະຮຽນຮູ້ແລະເຂົ້າໃຈເຖິງຄວາມຜິດພລາດຂອງຜູ້ນຳຝ່າຍສາສນາຊຶ່ງຍັງເປັນມະນຸດແລະມີຄວາມອ່ອນແອຕາມຢ່າງມະນຸດ ແຕ່ວ່າຄວາມເຊື່ອຂອງຜູ້ທີ່ເຂັ້ມແຂງນັ້ນຄື ຜູ້ທີ່ປັກຕາເບິ່ງຫາຄວາມຊ່ວຍເຫລືອຈາກພຣະເຈົ້າ ບໍ່ແມ່ນມອງຫາຄວາມຜິດຂອງມະນຸດ ແຕ່ໃຫ້ເຮົາເບິ່ງດູພຣະເຈົ້າ ການສຶກສາປວັດສາດເປັນການຮຽນຮູ້ຈັກເຖິງສາເຫດແຫ່ງຄວາມຜິດພລາດທີ່ໄດ້ເກີດຂຶ້ນແລ້ວໃນປວັດສາດ ເພື່ອຈະນຳມາແກ້ໄຂປັບປຸງຄຣິສຈັກຂອງເຮົາໃນປັດຈຸບັນ ເພື່ອບໍ່ໃຫ້ເກີດຄວາມຜິດພລາດຊ້ຳຮອຍເດີມອີກ ຫາກວ່ານັກສຶກສາໄດ້ພົບບັນຫາໃນຄຣິສຈັກ ນັກສຶກສາຈຳເປັນຕ້ອງອົດທົນໄຫວ້ວອນຮ້ອງຂໍພຣະເຈົ້າດ້ວຍຄວາມເຊື່ອແລະຖ່ອມໃຈ ແລະຊ່ວຍແກ້ໄຂບັນຫາຄຣິສຈັກດ້ວຍຄວາມຮັກ ບໍ່ແມ່ແມ່ນການທຳຮ້າຍກັນຫລືການແຍ່ງຊີງອຳນາດຄວາມເປັນໃຫຍ່ອັນເປັນສິ່ງນ່າອາຍຕໍ່ຊາວໂລກ ເພາະວ່າພວກເຮົາຮູ້ແລ້ວວ່າພຣະເຈົ້າຊົງຮ່ວມກັບຄົນທັງຫລາຍທີ່ຮັກພຣະອົງ ເພື່ອໃຫ້ເກີດຜົນດີໃນທຸກສິ່ງ ຄືຄົນທັງປວງທີ່ພຣະອົງໄດ້ຊົງເອີ້ນໄວ້ຕາມພຣະປະສົງຂອງພຣະອົງ (ຣມ 8:28)

## ຄຣິສຈັກໃນກຸງໂຣມຂຍາຍອຳນາດ

ເມື່ອຈັກກະພັດຄອນສະແຕນຕິນໄດ້ແຕ່ງຕັ້ງສຖາປນາໃຫ້ກຸງຄອນສະແຕນຕິໂນເປີລໄດ້ເປັນເມືອງຫລວງແທນກຸງໂຣມ ເຮັດໃຫ້ກຸງໂຣມໝົດອຳນາດທາງການເມືອງ ແຕ່ວ່າຄຣິສຈັກໃນກຸງໂຣມຍັງຄົງຮຸ່ງເຮືອງ ແລະດຳຣົງສິດທິອຳນາດຝ່າຍຄຣິສຈັກ ຕລອດຣະຍະເວລາ 1000 ປີຂອງຍຸກນີ້ຄຣິສຈັກໂຣມໄດ້ຊື່ສຽງ ແລະອຳນາດຂຶ້ນເລີຍ ໆ ພວກເຈົ້າອະທິການ ແລະສັງຄະຣາຊແຫ່ງກຸງໂຣມບັດນີ້ໄດ້ຕຳແໜ່ງເປັນໂພພ (Pope) ແລະປະກາດຕົວຖືອຳນາດເໜືອຄຣິສຈັກທັງຫລາຍ ຖືວ່າເປັນປະມຸກ (ເຈົ້າເໜືອຄຣິສຈັກທັງໝົດ) ບັດນີ້ໃຫ້ເຮົາພິຈາຣະນາເບິ່ງເຫດການຕ່າງ ໆ ທີ່ສົ່ງເສີມຄວາມເຄື່ອນໄຫວນີ້ ອັນເປັນເຫດໃຫ້ຄຣິສຈັກໂຣມມີອຳນາດຫລາຍຂຶ້ນ

ການປົກຄອງຄຣິສຈັກຕາມທີ່ໄດ້ດຳເນີນຢູ່ໃນຍຸກນີ້ ມີຮູບແບບການປົກຄອງຄ້າຍຄືກັບການປົກຄອງທາງການເມືອງ ໂດຍມີຈັກກະພັດເປັນເຈົ້າຊີວິດຖືອຳນາດສູງສຸດ ບັງຄັບບັນຊາຈາກເບື້ອງສູງແຕ່ຜູ້ດຽວໂດຍບໍ່ຍອມໃຫ້ປະຊາຊົນຜູ້ຢູ່ເບື້ອງລ່າງມີສິດອອກສຽງ ການປົກຄອງຄຣິສຈັກໄດ້ໃຊ້ລະບົບດຽວກັນຄືສັງຄະຣາຊຜູ້ຢູ່ເບື້ອງເທິງຖືອຳນາດສັ່ງບັງຄັບບັນຊາຄຣິສຈັກທັງຫລາຍ ແຕ່ບັນຫາມີຢູ່ວ່າສັງຄະຣາຊອົງໃດຈະເປັນສັງຄະຣາດອົງສູງສຸດ ເພື່ອມີສິດອຳນາດບັງຄັບບັນຊາປົກຄອງສັງຄະຣາຊອົງອື່ນ ໆ ໃນເມືອງໃຫຍ່ ໆ ຫລືໃນເມືອງຫລວງສັງຄະຣາດເຫລົ່ານັ້ນໄດ້ຮັບເອີ້ນວ່າເປັນ **ມະຫາສັງຄະຣາຊ** ຫລື**ເພທຣິອາທ** (Patriarch) ອັນເປັນນາມທີ່ໃຊ້ເອີ້ນຕຳແໜ່ງສັງຄະຣາຊທີ່ຢູ່ໃນກຸງຄອນສະແຕນຕິໂນເປີລ ແລະຍັງມີສັກຄະຣາດທີ່ຢູ່ໃນເມືອງແອນຕິໂອເກັຍ ໃນເມືອງອາເລັກຊານເດັຍແລະທີ່ກຸງເຢຣູຊາເລັມ ແຕ່ຝ່າຍກຸງໂຣມເອີ້ນຕຳແໜ່ງມະຫາສັງຄະຣາຊວ່າ "ປາປາ" (Pa Pa) ແປວ່າ "ບິດາ" ພາຍຫລັງສຽງພ້ຽນກາຍເປັນ **"ໂພບ"**(Pope) ໃນຣະຫວ່າງສັງຄະຣາຊທັງ 5 ນີ້ມີການແຍ້ງຊີງອຳນາດກັນຢູ່ຕລອດເວລາເພື່ອຈະໄດ້ເປັນຜູ້ບັງຄັບບັນຊາສູງສຸດ ການແຍ້ງຊີງອຳນາດນີ້ໃນທີ່ສຸດໄດ້ຕົກຢູ່ຣະຫວ່າງສອງຝ່າຍ ຄືເພທຣິອາທແຫ່ງກຸງຄອນສະແຕນຕິໂນເປີລແລະໂພພແຫ່ງກຸງໂຣມ ຈະເຫັນໄດ້ວ່າເມື່ອສາສນາຄຣິສຮຸ່ງເຮືອງເປັນສາສນາປະຈຳຊາດມະຫາຣາຊອານາຈັກໂຣມັນແລ້ວ ແທນທີ່ວ່າຄວາມເຊື່ອຈະສູງເດັ່ນຂຶ້ນ ແຕ່ກັບກາຍເປັນເຣື້ອງທາງການເມືອງແລະການຍຶດອຳນາດກັນ ອັນເປັນສິ່ງທີ່ນຳມາເຖິງຄວາມໜ້າອາຍແລະສ້າງຄວາມເສັຽຫາຍແກ່ຄຣິສຈັກຢ່າງຫລວງຫລາຍ

## ໂພພ (Pop) ອ້າງສິດອຳນາດ

**ມີສາຍເຫດ 5 ປະການທີ່ສົ່ງເສີມອຳນາດຂອງໂພພໃນກຸງໂຣມ**

1. ໂພພແຫ່ງໂຣມອ້າງວ່າຕົນໄດ້ຮັບມອບສິດອຳນາດຈາກອັຄສາວົກທັງເປໂຕ ແລະໂປໂລຜູ້ໄດ້ກໍ່ຕັ້ງຄຣິສຈັກແຫ່ງກຸງໂຣມ ແລະເຊື່ອວ່າເປໂຕເປັນໂພພອົງທຳອິດຂອງຄຣິສຈັກໂຣມ ຖືວ່າເປັນຜູ້ບັງຄັບບັນຊາສູງສຸດເຫນືອຄຣິສຈັກທັງຫລາຍ ອຳນາຈນີ້ຈຶ່ງຕົກທອດລົງມາຕັ້ງແຕ່ສມັຍຂອງທ່ານອັຄສາວົກເປໂຕຈົນເຖິງຕຳແຫນ່ງໂພພໃນປັດຈຸບັນ ແລະຕໍ່ ໆ ລົງມາ ໂດຍທີ່ຂໍ້ອ້າງໃນເຣື້ອງນີ້ເກີດຂຶ້ນຈາກການຕີຄວາມຫມາຍພຣະຄັມພີຢ່າງບໍ່ຖືກຕ້ອງ ທີ່ນຳມາຈາກຂໍ້ພຣະຄັມພີສອງຂໍ້ຄືຈາກພຣະທັມຂ່າວປະເສີດມັດທາຍ 16: 18 "ຝ່າຍເຮົາບອກທ່ານທັງຫລາຍວ່າທ່ານຄືເປໂຕ ແລະເທິງສີລານີ້ເຮົາຈະສ້າງຄຣິສຈັກຂອງເຮົາຂຶ້ນ ແລະປະຕູແຫ່ງແດນມໍຣະນາຈະມີຊັຍຕໍ່ຄຣິສຈັກນັ້ນບໍ່ໄດ້" ອີກຂໍ້ນຶ່ງຄື ໂຢຮັນ 21:17 ພຣະອົງຊົງກ່າວກັບເປໂຕເປັນເທື່ອທີສາມວ່າ "ຊີໂມນລູກໂຢຮັນເອີຍ ເຈົ້າຮັກແພງເຮົາຫລື" ເປໂຕກໍເປັນທຸກໃຈທີ່ພຣະອົງຊົງຖາມທ່ານເທື່ອທີສາມວ່າ "ເຈົ້າຮັກແພງເຮົາຫລື" ເປໂຕຈຶ່ງທູນຕອບວ່າ "ພຣະອົງເຈົ້າເອີຍ ພຣະອົງຊົງຊາບທຸກສິ່ງ ພຣະອົງຊົງຊາບວ່າຂ້າພຣະອົງຮັກພຣະອົງ" ພຣະເຢຊູສັ່ງທ່ານວ່າ "ຈົ່ງລ້ຽງລູກແກະເຮົາເນີ" ຜູ້ສືບຕຳແຫນ່ງໂພພຕໍ່ມາຈຶ່ງຖືອຳນາດຈາກຂໍ້ອ້າງອີງນີ້ຕໍ່ ໆ ມາ (ນັກສຶກສາຄວນຈະສຶກສາຂໍ້ພຣະຄັມພີນີ້ຈາກວິຊາພຣະຄັມພີໃຫມ່ ເພື່ອຄວາມເຂົ້າໃຈໃນການຕີຄວາມຫມາຍອັນຖືກຕ້ອງຕໍ່ໄປ)

2. ກຸງໂຣມເຄີຍເປັນເມືອງຫລວງມານານ ໄດ້ເຄີຍປົກຄອງເຫນືອມະຫາອານາຈັກມາກ່ອນ ມີຣະບົບສັກດີນາ ຣະບົບຊົນຊັ້ນການປົກຄອງ ເຫລົ່າໂພພຜູ້ກ່ອນ ໆ ທີ່ມີຄວາມສາມາດແລະວາງຣະບົບການປົກຄອງໃຫ້ເກີດຄວາມຢຳເກງທີ່ວຄຣິສຈັກ ຄຣິສຈັກໃນກຸງໂຣມມີພື້ນຖານຄຳສອນອັນເຂັ້ມແຂງຢູ່ກ່ອນແລ້ວຕັ້ງແຕ່ສມັຍອັຄສາວົກ ມີຄວາມຮັ່ງມີຫລາຍກວ່າ ໄດ້ຖືປະຕິບັດຄຳສອນເອົາໃຈໃສ່ຕໍ່ຄົນຍາກຈົນ ດັ່ງນັ້ນເຫລົ່ານິກາຍໃຫມ່ແລະພວກນອກຮີດ ຫລືພວກນອກສາສນາຈຶ່ງບໍ່ມີອິດທິພົນເຫນືອຄຣິສຈັກໂຣມ ສ່ວນທາງກຸງຄອນສະແຕນຕິນໂນເປີລນັ້ນຍັງເປັນກຸງໃຫມ່ ພົລເມືອງຍັງບໍ່ທັນເຂັ້ມແຂງ ດັ່ງນັ້ນຈຶ່ງເປັນການງ່າຍຕໍ່ການທີ່ຈະອ່ອນນ້ອມຕໍ່ຄຣິສຈັກໃນກຸງໂຣມ ອັນເປັນຜົນໃຫ້ຄຣິສຈັກໃນກຸງໂຣມມີອຳນາດຫລາຍຕື່ມຂຶ້ນ

3. ການຍ້າຍເມືອງຫລວງຈາກກຸງໂຣມໄປສູ່ກຸງຄອນສະແຕນຕິໂນເປີລ ແທນທີ່ຈະລົດອຳນາດຂອງໂຣມ ແຮງເພີ່ມອຳນາດແລະອິດທິພົລໃຫ້ແກ່ໂພພ (ຕໍ່ໄປຈະເອີ້ນວ່າສັນຕະປາປາ) ເພາະວ່າທີ່ກຸງໂຣມບໍ່ມີຈັກກະພັດນັ່ງບັນລັງຢູ່ ແຕ່ສັນຕະປາປາຫລືໂພພໄດ້ຂຶ້ນນັ່ງບັນລັງຂອງຄຣິສຈັກ ແລະເຮືອງອຳນາດແທນ ຄຣິສຈັກທົ່ວໂລກຍອມຮັບນັບຖືວ່າຄຣິສຈັກໂຣມມີສິດອຳນາດເດັດຂາດເຫນືອຄຣິສຈັກທົ່ວໄປ ຈະເຫັນໄດ້ວ່າປີ ຄ.ສ.471 ໃນການປະຊຸມສະພາແຫ່ງຄັລຊີໂດນໃນເອເຊັຍນ້ອຍ ສັນຕະປາປາແຫ່ງໂຣມໄດ້ນັ່ງທີ່ນັ່ງອັນດັບນຶ່ງ ເພທຣິອາຫແຫ່ງຄອນສະແຕນຕິໂນເປີລນັ່ງອັນດັບສອງ ຊຶ່ງເປັນການເປີດທາງຄືການຍອມຮັບສິດອຳນາດຂອງສັນຕະປາປາແຫ່ງໂຣມຢ່າງເປີດເຜີຍ

4. ເຈົ້າຊີວິດທັງຫລາຍໃນມະຫາຣາຊອານາຈັກໂຣມັນນັ້ນ ເມື່ອຈະຂຶ້ນຄອງບັນລັງຕ້ອງໄດ້ຮັບການເຫັນຊອບ ແລະຮັບການເຈີມແຕ່ງຕັ້ງສຖາປນາໃຫ້ເປັນເຈົ້າຊີວິດຈາກສັນຕະປາປາ ອັນນີ້ເປັນເຫດໃຫ້ອຳນາດຂອງສັນຕະປາປາຍິ່ງສູງເດັ່ນຫລາຍຂຶ້ນ ເພາະເຫດວ່າຫາກສັນຕະປາປາບໍ່ມັກເຈົ້າຊີວິດຜູ້ໃດຜູ້ນັ້ນກໍຈະບໍ່ໄດ້ຮັບການເຈີມແຕ່ງຕັ້ງໃຫ້ເປັນເຈົ້າຊີວິດ ເຮັດໃຫ້ຜູ້ທີ່ຮັບຂຶ້ນເປັນເຈົ້າຊີວິດນັ້ນຕ້ອງຍອມອ່ອນ

ນ້ອມ ແລະມອບອຳນາຈສູງສຸດແກ່ສັນຕະປາປາແຫ່ງກຸງໂຣມ

5. ເກີດມີເອກສານປອມແປງຂຶ້ນ ເອກສານນີ້ໄດ້ຖືກອ້າງວ່າ ເປັນໃບມອບອຳນາດຂອງອັຄສາວົກເປໂຕທີ່ມອບໃຫ້ແກ່ສັນຕະປາປາແຫ່ງກຸງໂຣມໃຫ້ມີອຳນາຈເໜືອຄຣິສຈັກທັງມວນ

ຈະເຫັນໄດ້ວ່າຜູ້ນຳຄຣິສຈັກໃນເວລານັ້ນໄດ້ຕີຄວາມໝາຍພຣະຄັມພີຢ່າງບໍ່ຖືກຕ້ອງ ການທີ່ພຣະເຢຊູຊົງກ່າວວ່າ "ບົນເທິງສີລານີ້ ເຮົາຈະສ້າງຄຣິສຈັກຂອງເຮົາຂຶ້ນ" ຂໍ້ນີ້ມີຄວາມໝາຍທີ່ຖືກຕ້ອງຄືວ່າ **ພຣະເຢຊູຊົງເປັນພຣະສີລາ** ຊົງເປັນຮາກຖານຂອງຄຣິສຈັກ ແລະໂດຍທີ່ຄຣິສຈັກມີພຣະເຢຊູຜູ້ເປັນພຣະສີລາແລະເປັນຮາກຖານຂອງຄຣິສຈັກນີ້ເອງຄຣິສຈັກຈະຖືກສ້າງຂຶ້ນຢ່າງຖາວອນ ຄວາມຕາຍຈະບໍ່ສາມາດມີຊັຍຕໍ່ຄຣິສຈັກໄດ້ ບໍ່ແມ່ນທ່ານເປໂຕເປັນຮາກຖານຂອງຄຣິສຈັກ ແຕ່ວ່າຄຳຕອບຂອງທ່ານເປໂຕເປັນຄຳຕອບທີ່ຖືກຕ້ອງຄືວ່າ **"ພຣະເຢຊູຊົງເປັນພຣະຄຣິສ ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່"** ຄຳຕອບອັນຖືກຕ້ອງນີ້ແຫລະເປັນຮາກຖານຂອງຄຣິສຈັກ ເປັນຄຳຕອບທີ່ຜູ້ເຊື່ອທຸກຄົນສົມຄວນຈະໄດ້ຮັບ ສົມຄວນຈະຮູ້ຈັກແລະເຂົ້າໃຈໄວ້ໃຫ້ແຈ່ມແຈ້ງ ເພາະວ່າການທີ່ພຣະເຢຊູຊົງເປັນພຣະຄຣິສພຣະບຸດຂອງພຣະເຈົ້າ ພຣະອົງຊົງເປັນຮາກຖານແຫ່ງຄວາມເຊື່ອ ຮາກຖານແຫ່ງການກັບໃຈບັງເກີດໃໝ່ຂອງຜູ້ເຊື່ອ ແລະຈະເປັນຮາກຖານທີ່ເຂັ້ມແຂງຂອງຄຣິສຈັກຕລອດໄປ ດັ່ງທີ່ປາກົດໃນພຣະຄັມໂຢຮັນ 20:31 ໃນຕອນສຸດທ້າຍວ່າ "ກໍເພື່ອທ່ານທັງຫລາຍຈະໄດ້ເຊື່ອວ່າພຣະເຢຊູຊົງເປັນພຣະຄຣິສ ພຣະບຸດຂອງພຣະເຈົ້າ ແລະເມື່ອມີຄວາມເຊື່ອແລ້ວທ່ານກໍຈະມີຊີວິດໂດຍພຣະນາມຂອງພຣະອົງ"

ໃນປະການຕໍ່ມາທີ່ພຣະເຢຊູຊົງຕັດສັ່ງທ່ານເປໂຕວ່າ "ຈົ່ງລ້ຽງແກະຂອງເຮົາເນີ" ດັ່ງທີ່ປາກົດໃນໂຢຮັນ 21:17 ນັ້ນ ການເປັນຜູ້ລ້ຽງແກະໝາຍເຖິງການເປັນຜູ້ຮັບໃຊ້ເປັນຜູ້ເອົາໃຈໃສ່ເບິ່ງແຍງຜູ້ເຊື່ອບໍ່ໃຫ້ຫລົງໄປໃນທາງອັນບໍ່ຖືກຕ້ອງ ແຕ່ຜູ້ລ້ຽງຕ້ອງແປງທາງ ແລະນຳພາໄປໃນທາງຂອງອົງພຣະຜູ້ເປັນເຈົ້າແລະຕາມນໍ້າພຣະທັຍພຣະເຈົ້າ ບໍ່ແມ່ນຕາມໃຈປາຖນາຂອງຕົນເອງ ຫລືເພື່ອຫວັງອຳນາດລາບຍົດ ກຽດ ຊື່ສຽງ ແຕ່ເພື່ອໃຫ້ແຜ່ນດິນຂອງພຣະເຈົ້າມາຕັ້ງຢູ່ ເພື່ອໃຫ້ນໍ້າພຣະທັຍຂອງພຣະເຈົ້າມາສຳເຣັດໃນໂລກນີ້ ດັ່ງຄຳອະທິຖານຂອງພຣະເຢຊູ ໃນມັດທາຍ 6:9-13 ແລະໃນໂຢຮັນ 10:11 ຜູ້ລ້ຽງຕ້ອງເປັນຜູ້ທີ່ຍອມເສັຽສລະ ຍອມເສັຽປ່ຽບ ແລະຕ້ອງຮັບພາຣະໜ້າທີ່ອັນໜັກ ເພື່ອເບິ່ງແຍງລູກແກະຂອງພຣະເຈົ້າ ດັ່ງນີ້ແລ້ວສມາຊິກໂດຍທົ່ວໄປທີ່ມີຄວາມເຂັ້ມແຂງແລ້ວຈົ່ງສົມຄວນຊ່ວຍເຫລືອຮັບແບກພາຣະຂອງສິດຍາພິບາລຂອງອາຈານໃນຄຣິສຂອງຕົນ ເພາະວ່າມີວຽກການຫລາຍແນວ ທີ່ຕ້ອງຮັບການເອົາໃຈໃສ່ ບໍ່ຕ້ອງປະໄວ້ໃຫ້ເປັນພາຣະໜັກຂອງສິດຍາພິບາລແຕ່ຜູ້ດຽວ

<u>ມະຫາອານາຈັກດ້ານຕາວັນຕົກສູນເສັຽອຳນາດຝ່າຍການເມືອງ</u>

ມະຫາຣາຊອານາຈັກໂຣມັນມີຄວາມເຂັ້ມແຂງ ໄດ້ເຮືອງອຳນາດຄອບຄອງດິນແດນກວ່າເຄິ່ງໂລກມາເປັນເວລາກວ່າພັນປີ ແຕ່ຕ້ອງມາສູນເສັຍດິນແດນດ້ານຕາວັນຕົກຂອງຣາຊອານາຈັກແກ່ຊາວປ່າທີ່ບຸກຣຸກເຂົ້າມາ ນັບຕັ້ງແຕ່ຈັກກະພັດຄອນສະແຕນຕິນສິ້ນຊີພໃນປີ ຄ.ສ. 337 ການແຍ້ງຊີງຣາຊບັນລັງເປັນອີກສິ່ງນຶ່ງທີ່ທຳລາຍຄວາມໝັ້ນຄົງຂອງຊາດ ການແຕກແຍກຂອງຄຣິສຈັກມີສ່ວນທຳລາຍຄວາມເປັນອັນນຶ່ງອັນດຽວກັນຂອງປະຊາຊົນ ຊາຍແດນຕາວັນຕົກເລີ້ມມີການແຂງຂໍ້ ແລະຝູງຄົນຊາວປ່າເລີ້ມຣຸກລານເຂົ້າມາ ຍຶດເອົາດິນແດນ ແລະກໍ່ຕັ້ງແຜ່ນດິນປົກຄອງດິນແດນແຕ່ລະສ່ວນເປັນອິດສຣະ ໃນເວລາບໍ່ເຖິງ

ຮ້ອຍສີ່ສິບປີ ມະຫາອານາຈັກໂຣມັນດ້ານຕາເວັນຕົກຊຶ່ງດໍາລົງມາເປັນເວລາພັນປີເລີ້ມອ່ອນແອແລະລົ້ມລົງ ໃນທີ່ສຸດ ພົລເມືອງບໍ່ພໍໃຈຕໍ່ລະບົບການປົກຄອງເຮັດໃຫ້ສູນເສັຽຄວາມຮ່ວມມືຣະຫວ່າງປະຊາຊົນທີ່ມີຕໍ່ຣັຖ ບານ ຄວາມຮັກປະເທດຊາດກໍລົດນ້ອຍຖອຍລົງ ປະການຕໍ່ມາຄື ຄວາມຍິ່ງໃຫຽ່ ຄວາມຮັ່ງມີຂອງມະຫາ ຣາຊອານາຈັກໂຣມັນ ໄດ້ເປັນເປົ້າສາຍຕາຂອງຊາວປ່າທີ່ຈະເຂົ້າປຸ້ນເພື່ອຫວັງຍຶດເອົາດິນແດນ ດັ່ງນັ້ນ ງານໃຫຽ່ຂອງເຫລົ່າຈັກກະພັດ ຄືການປ້ອງກັນຊາຍແດນໃຫ້ຮອດພົ້ນຈາກການໂຈມຕີຂອງພວກສັດຕູ ທີ່ ເປັນຊາວປ່າຫລາຍ ໆ ເຜົ່າທີ່ພາກັນບຸກເຂົ້າມາທຸກດ້ານຈົນບໍ່ອາດສາມາດຮັກສາດິນແດນໄວ້ໄດ້

## <u>ການແບ່ງແຍກຄຣິສຈັກຝ່າຍຕາວັນອອກແລະຝ່າຍຕາວັນຕົກ</u>

ພວກຊາວປ່າທີ່ບຸກລົງມາຈາກທາງເໜືອ ເຮັດໃຫ້ຣາຊອານາຈັກໂຣມັນຕ້ອງແຕກແຍກອອກເປັນ ຫລາຍ ໆ ສ່ວນ ແລະເປັນເຫດໃຫ້ຄຣິສສາສນາມາເຖິງຈຸດເລີ້ມຕົ້ນແຫ່ງຍຸກໃໝ່ ກຸງໂຣມຊຶ່ງເຄີຍເປັນ ສູນກາງຂອງໂລກມາແຕ່ກ່ອນ ແຕ່ວ່າຫລັງຈາກຖືກຍຶດໂດຍພວກຊາວປ່າແລ້ວກໍກາຍເປັນພົມແດນຣະຫວ່າງ ໂລກໃໝ່ສອງໂລກທີ່ເກີດຂຶ້ນຄື **"ອານາຈັກໂຣມັນຕາວັນຕົກ"**ແລະ**"ອານາຈັກໂຣມັນຕາວັນອອກ"** ອານາ ຈັກຝ່າຍຕາວັນອອກຍັງຄົງເອີ້ນຕົວເອງວ່າ ມະຫາຣາຊອານາຈັກໂຣມັນແລະປະຊາຊົນໃນດິນແດນແຖບນີ້ກໍ ເອີ້ນຕົນເອງວ່າເປັນຄົນໂຣມັນ ແຕ່ວ່າພາສາທີ່ໃຊ້ເປັນພາສາກຣີກ ສ່ວນອານາຈັກຝ່າຍຕາວັນຕົກໃຊ້ພາ ສາລາຕິນ ເຖິງວ່າອານາຈັກໂຣມັນຖືກແຍກອອກ ແຕ່ວ່າຄຣິສຈັກຍັງຄົງຢືນຢູ່ຮ່ວມກັນ ເມື່ອເວລາຜ່ານ ໄປດົນຫລາຍຮ້ອຍປີ ການແບ່ງແຍກດິນແດນຂອງຣາຊອານາຈັກໂຣມັນ ໄດ້ເຮັດໃຫ້ຄຣິສຈັກຖືກແຍກອອກ ໄປດ້ວຍ ດ້ານຕາວັນຕົກກາຍເປັນດິນແດນຝ່າຍລາຕິນ ດ້ານຕາວັນອອກເປັນດິນແດນຝ່າຍກຣີກ **ຝ່າຍລາ ຕິນເອີ້ນວ່າຄຣິສຈັກໂຣມັນຄາທໍລິກ** (Roman Catholic Church) ແປວ່າ *ຄຣິສຈັກສາກົນ* ແລະ ດິນແດນຝ່າຍກຣີກເອີ້ນວ່າ **ຄຣິສຈັກອໍທໍດອກ** (Orthodox Church) ຊຶ່ງແປວ່າ *"ຄຣິສຈັກແຫ່ງຄໍາ ສອນທີ່ຖືກຕ້ອງ"* ດ້ວຍເຫດນີ້ຄຣິສຈັກໂຣມັນຄາທໍລິກແລະຄຣິສຈັກອໍທໍດອກຈຶ່ງໄດ້ເກີດຂຶ້ນ ນອກ ຈາກນີ້ແລ້ວ ພາຍຫລັງຍັງໄດ້ເກີດຄຣິສຈັກຄາທໍລິກອັງກິດທີ່ເອີ້ນວ່າ **"ແອງໂກຄາທໍລິກ"** (Church of England) ຢ່າງທີ່ປາກົດຢູ່ໃນປະເທດອັງກິດໃນປັດຈຸບັນ ແຕ່ວ່າຝ່າຍອໍທໍດອກກໍມີກຣີກອໍທໍດອກ ແລະ ຣັສຊຽນອໍທໍດອກ

## <u>ຄຣິສຈັກອໍທໍດອກແຫ່ງຣາຊອານາຈັກໂຣມັນຕາວັນອອກ</u> (Orthodox Church)

ດັ່ງທີ່ກ່າວມາແລ້ວນັ້ນຣາຊອານາຈັກໂຣມັນຝ່າຍຕາວັນອອກໂດຍມີກຸງຄອນສະແຕນຕິໂນເປີລໄດ້ ເປັນເມືອງຫລວງແລະມີຄຣິສຈັກກຣີກອໍທໍດອກ ພົລເມືອງໄດ້ໃຊ້ພາສາກຣີກເປັນພາສາຣາຊການ ດັ່ງທີ່ ກ່າວມາແລ້ວ ແຕ່ກໍບໍ່ແມ່ນວ່າຈະໃຊ້ພາສາກຣີກໝົດຣາຊອານາຈັກ ໃນອານາຈັກນີ້ນອກຈາກພາສາກຣີກ ແລ້ວຍັງມີຊົນຊາດອື່ນ ໆ ທີ່ຕົກເປັນເມືອງຂຶ້ນ ເຊັ່ນ **ພວກອາຣາມານຽນ ພວກຊີຣຽນ ແລະພວກເອທີໂອ ປຽນ** ພວກເຫລົ່ານີ້ຕ່າງມີພາສາຂອງຕົນເອງ ແລະບໍ່ຖືກຕ້ອງປອງດອງກັບພວກກຣີກອີກ ທັງບໍ່ມັກຈັກກະ ພັດຂອງກຣີກ ບາງພວກບໍ່ສາມາດເວົ້າພາສາກຣີກໄດ້ ຈຶ່ງໄດ້ແຍກໄປຕັ້ງຄຣິສຈັກຂອງຕົນຂຶ້ນ ແລະໃຊ້ພາ ສາຂອງແຕ່ລະພວກ ແຕ່ວ່າຍັງຄົງມີແບບນມັສການເປັນແບບຄຣິສຈັກຝ່າຍຕາວັນອອກ

ຄຣິສສາສນາໄດ້ແຜ່ເຂົ້າໄປໃນປະເທດເປີເຊັຽ ເພາະເຫດວ່າ ຊົນຊາດເປີເຊັຽໃນເວລານັ້ນ ກໍາລັງສູ້ຮົບກັບຣາຊອານາຈັກກຣີກ ຈຶ່ງບໍ່ຍອມຮັບສາສນາທີ່ພວກກຣີກນິຍົມເຫລື້ອມໃສ ແຕ່ເມື່ອພວກກຣີກ

ຂັບໄລ່ພວກຄຣິສຕຽນຊາວຊຸຣຽນ ບາງພວກຄືພວກທີ່ເອີ້ນກັນວ່າ ເນສໂຕຣຽນ (Nestorians) ອອກຈາກປະເທດຂອງຕົນ ແລະໜີເຂົ້າຫລົບພັຍໃນປະເທດເປີເຊັຽ ແລ້ວພວກຄຣິສຕຽນເຫລົ່ານີ້ ກໍໄດ້ຮັບການຮັບຕ້ອນຢ່າງດີໃນດິນແດນເປີເຊັຽ ພວກເນສໂຕຣຽນນີ້ເອງ ໄດ້ມີໂອກາດຊ່ວຍໃຫ້ຄົນເປີເຊັຽເປັນຈຳນວນຫລາຍກັບໃຈມາຫາພຣະເຈົ້າ ຕໍ່ມາພວກເນສໂຕຣຽນບາງພວກໄດ້ອົພຍົບເຂົ້າໄປຈົນເຖິງປະເທດຈີນ ເປັນເຫດໃຫ້ສາສນາຄຣິສເຜີຍແຜ່ເຂົ້າສູ່ປະເທດຈີນຄືກັນ

<u>ຈັກກະພັດຈັສຕິນຽນຜູ້ຟື້ນຟູຄຣິສຈັກຝ່າຍຕາວັນອອກ</u>

ຄ.ສ.527-565 ຈັກກະພັດທີ່ດີຂອງພວກກຣີກຫຼາຍອົງໄດ້ອົດສາພຍາຍາມຈະຣວບຣວມເອົາຄຣິສຈັກທີ່ແຕກແຍກກັນແລ້ວນັ້ນໃຫ້ກັບຄືນດີເຂົ້າຫາກັນ ຈັກກະພັດຈັສຕິນຽນພຍາຍາມຈະເອົາຊະນະພວກຊາວປ່າໃນດິນແດນຕາວັນຕົກ ເພື່ອຈະຟື້ນຟູປະເທດຊາດຂຶ້ນມາໃໝ່ ຈັກກະພັດຈັສຕິນຽນ ແມ່ນຜູ້ທີ່ປະສົບຜົນສຳເຣັດໃຫຍ່ຫລວງ ຄືຊົງສາມາດຕີຄືນເອົາອານາຈັກແລະດິນແດນສ່ວນໃຫຍ່ ຄືນມາຈາກພວກຊາວປ່າໃນຊົ່ວລະຍະເວລາອັນສັ້ນ ແລະໄດ້ສ້າງສາຜົນປະໂຍດຢ່າງນ້ອຍສອງສິ່ງຄື

1. ການບູຣະນະສ້າງວິຫານເຊນໂຊເຟັຍອັນງົດງາມຂຶ້ນອີກຄັ້ງນຶ່ງ ຊຶ່ງຍັງຄົງຕັ້ງເດັ່ນຢູ່ໃນກຸງຄອນສະແຕນຕິໂນເປີລຈົນເຖິງທຸກມື້ນີ້ ວິຫານເຊນໂຊເຟັຍນີ້ຄັ້ງແຣກໄດ້ສ້າງຂຶ້ນໂດຍຈັກກະພັດຄອນສະແຕນຕິນ



ແຕ່ພາຍຫຼັງສ່ວນປະກອບໂຄງສ້າງຂອງຕົວໂບດຖືກໄຟເຜົາທຳລາຍລົງຈົນໝົດສິ້ນຫຼັງຈາກໄຟໃໝ້ສີ່ສິບວັນ ຈັກກະພັດຈັສຕິນຽນຊົງສັ່ງໃຫ້ສ້າງພຣະວິຫານນີ້ຂຶ້ນໃໝ່ ໃນການສ້າງຕ້ອງໃຊ້ຄົນງານເຖິງໝື່ນຄົນ ທີ່ເລືອກໄວ້ຢ່າງດີ ເຈົ້າຊີວິດຈັສຕິນຽນເອງຊົງສລອງພຣະອົງຂອງກະສັດສະເດັດໄປຢູ່ທ່າມກາງພວກຄົນງານເພື່ອເປັນກຳລັງໃຈ ແລະເປັນມິ່ງຂວັນແກ່ຄົນງານທັງຫລາຍ ຜົນຂອງແຮງງານຈຳນວນມະຫາສານນີ້ ເຣັດໃຫ້ສາມາດສ້າງຄຣິສຈັກຂຶ້ນໃໝ່ສຳເຣັດໃນຫ້າປີ ສິບເອັດເດືອນສິບວັນ ນັບຕັ້ງແຕ່ມື້ແຣກທີ່ວາງສີລາເລີດ ໄດ້ທຳພິທີອຸທິດຖວາຍພຣະວິຫານໃນວັນຄຣິສມາສ ໃນປີ ຄ.ສ.437 ຮູບຮ່າງຂອງຕົວໂບດບໍ່ເໝືອນແບບບາຊີລິກາທີ່ມີໂດມເລັກ ໆ ຮຽງຣາຍຢູ່ຮອບ ໆ ແບບໃໝ່ນີ້ເອີ້ນວ່າແບບໄບແຊນທິນ (Byzantine) ມາຈາກ Byzantium ອັນເປັນນາມເດີມຂອງກຸງຄອນສະແຕນຕິໂນເປີລ ສ່ວນຍອດແຫລມສູງທີ່ເຫັນໃນຮອບຂ້າງ ໆ ຂອງຮູບເອີ້ນວ່າມີນາເຣັທສ ສິ່ງນີ້ຫາກໍ່ສ້າງຂຶ້ນພາຍຫລັງໂດຍພວກອິສລາມທີ່ເຂົ້າລຸກລານຕີກຸງໄດ້ແລະໄດ້ປ່ຽນຄຣິສຈັກເປັນສຸເຫລົ່າ ເມື່ອບໍ່ນານມານີ້ພວກເຕີຣກີ້ ໄດ້ແປງເປັນພິພິທພັນສຖານຈົນເຖິງປັດຈຸບັນ

2. ຈັກກະພັດຈັສຕິນຽນໄດ້ຣວບຣວມແລະຈຳແນກກົດໝາຍຕ່າງ ໆ ຂອງຣາຊອານາຈັກໂຣມັນຕາວັນອອກໃຫ້ສົມບູນຂຶ້ນ ເປັນແບບທີ່ເອີ້ນກັນວ່າ "ບົດບັນຍັດຂອງເຈົ້າຊີວິດຈັສຕິນຽນ" ບາງສ່ວນຂອງກົດໝາຍກ່ຽວຂ້ອງກັບຄຣິສສາສນາແລະຄຣິສຈັກ

ເມື່ອສິ້ນສມັຍເຈົ້າຊີວິດຈັສຕິນຽນແລ້ວ ອານາຈັກທາງຕາວັນຕົກທີ່ໄດ້ຍຶດຄືນມາຈາກພວກຊາວປ່ານັ້ນ ກໍຕ້ອງສູນເສັຽໄປອີກ ແລະອານາເຂດຝ່າຍຕາວັນອອກກໍຕ້ອງເສັຽແກ່ພວກອາຫຣັບ ທີ່ລຸກລານຈູ່ໂຈມ

ເຂົ້າມາຈາກອາຣາເບັຽ ເຄື່ອງໝາຍຂອງຜູ້ຮຸກລານພວກໃໝ່ນີ້ຄື **"ຮູບພຣະຈັນເຄິ່ງດວງ"** ພວກນີ້ຮ້ອງປະກາດວ່າ **"ມີພຣະເຈົ້າແຕ່ອົງດຽວຄື ພຣະອັລເລາະ (ຫລືພຣະອັລຫລ່າ, Allah)"** ສາສດາຫລືຜູ້ນຳຂອງພວກນີ້ ແມ່ນ **ມະຫະໝັດ** (Mahammed) ຄືນພວກນີ້ຄືພວກນັບຖືສາສນາມຸສລິມ ຫລືທີ່ເອີ້ນວ່າ "ອິສລາມ" ນັ້ນເອງ ທ່ານມະຫະໝັດໄດ້ໃຊ້ຄຳສອນທີ່ໂຈມຕີການບູຊາຮູບເຄົາຣົບ ແລະໃຫ້ນັບຖືນມັສການພຣະເຈົ້າອົງດຽວຄືພຣະອັລເລາະແທນ ພວກນີ້ປະກາດສາສນາດ້ວຍສົງຄາມແລະຄວາມຮຸນແຮງ

<u>ຄຣິສຈັກໂຣມັນຄາທໍລິກແຫ່ງອານາຈັກໂຣມັນຕາວັນຕົກ</u> (Roman Chatholic Church)

ເຮົາໄດ້ສຶກສາເຖິງຄຣິສຈັກແຫ່ງອານາຈັກໂຣມັນຕາວັນອອກໄປພຽງເລັກນ້ອຍ ເພື່ອໃຫ້ເກີດຄວາມເຂົ້າໃຈເຖິງເຣື່ອງການແຕກແຍກຂອງມະຫາອານາຈັກໂຣມັນ ບັດນີ້ຕ້ອງໄດ້ສຶກສາເຖິງຄຣິສຈັກແຫ່ງອານາຈັກໂຣມັນຕາວັນຕົກນຳ ເພາະວ່າຄຣິສຈັກໂຣມັນຝ່າຍຕາວັນຕົກນີ້ເອງທີ່ໄດ້ຂຍາຍອຳນາດເຕີບໃຫຍ່ ແລະມີອິດທິພົລຫລາຍຕໍ່ການຂຍາຍອຳນາດຂອງໂພພ ແລະການເຜີຍແຜ່ຄຳສອນທຽມເທັດຂອງໂພພ ໄດ້ກໍ່ໃຫ້ເກີດຄວາມເສັຽຫາຍຢ່າງຫລວງຫລາຍໃນປວັດສາດຄຣິສຈັກ ແຕ່ວ່າໃນອີກດ້ານນຶ່ງຄຣິສຈັກໂຣມັນຕາວັນຕົກຫລືທີ່ເອີ້ນໃນປັດຈຸບັນວ່າຄຣິສຈັກໂຣມັນຄາທໍລິກນີ້ ໄດ້ສ້າງຄຸນຄວາມດີແລະແຜ່ຂຍາຍຂ່າວປະເສີດຂອງພຣະເຢຊູອອກໄປເຖິງຊົນຊາດຕ່າງ ໆ ທົ່ວໂລກ

ຢ່າງໃດກໍຕາມ ການເຮືອງອຳນາດຂອງພວກໂພພທີ່ເກີດຂຶ້ນໃນປວັດສາດໄດ້ສົ່ງເສີມມີອຳນາດເພີ່ມຂຶ້ນໃນຕົວເອງ ບໍ່ພຽງແຕ່ມີອຳນາດເໜືອຄຣິສຈັກເທົ່ານັ້ນ ແຕ່ຍັງມີອຳນາດເໜືອການເມືອງ ແລະການປົກຄອງຄືກັນ ການເຮືອງອຳນາດຂອງໂພພໄດ້ມີຜົນດີແລະຜົນເສັຽດັ່ງນີ້

**ຜົນດີ**

1. ການຮຸ່ງເຮືອງອຳນາດຂອງໂພບມີປໂຍດໃນການຊ່ວຍເຫລືອໃຫ້ມະຫາອານາຈັກໄດ້ຮັບຄວາມສະງົບ ແລະພັກເຊົາການເສິກສົງຄາມຫລາຍເທື່ອ ເຮັດໃຫ້ປະຊາຊົນທີ່ຕ້ອງປະສົບຄວາມທຸກຍາກໄດ້ມີໂອກາດຢູ່ຢ່າງສັນຕິສຸກໃນການປະກອບອາຊີພປະຈຳວັນ

2. ການເຮືອງອຳນາດຂອງພວກໂພບ ໄດ້ເປີດໂອກາດໃຫ້ຄຣິສສາສນາແຜ່ພາຍອອກໄປເຖິງຊົນຊາວປ່າທີ່ກຳລັງຕັ້ງຕົວເປັນປະເທດອິສຣະຈາກມະຫາອານາຈັກໂຣມັນ ເຮັດໃຫ້ຊົນຊາວປ່າເຫລົ່ານີ້ໄດ້ຮັບຂ່າວປະເສີດແຫ່ງຄວາມຣອດພົ້ນໂດຍພຣະເຢຊູຈາກພວກມິຊຊັ່ນນາຣີ ທີ່ພວກໂພພສົ່ງອອກໄປປ່າວປະກາດເປັນເຫດໃຫ້ປະເທດຕ່າງ ໆ ໂດຍສະເພາະໃນແຖບຢູໂຣບໄດ້ກັບໃຈເປັນຄຣິສຕຽນ ແລະສິ່ງຜົນອັນຍິ່ງໃຫຍ່ຕໍ່ປວັດສາດຄຣິສຈັກ ເພາະວ່າໃນພາຍຫລັງຕໍ່ມາ ຈົນເຖິງສັຕວັດທີ່ 18-19 ພວກຢູໂຣບໄດ້ເປັນຄຣິສຕຽນທີ່ເຂັ້ມແຂງ ແລະໄດ້ສົ່ງມິຊຊັ່ນນາຣີໄປສູ່ປະຊາຊາດທົ່ວໂລກ

**ຜົນເສັຽ**

1. ເກີດການແຍ່ງຊິງຕຳແໜ່ງໂພພເພື່ອສແວງຫາອຳນາດ ໂດຍຝ່າຍທີ່ຕ້ອງການຍຶດອຳນາດໄດ້ຫາທາງກັ່ນແກ້ງທຳລາຍ ເພື່ອຂັບໄລ່ໂພພທີ່ຢູ່ກ່ອນນັ້ນໃຫ້ອອກຈາກຕຳແໜ່ງ

2. ພວກທີ່ຂັບໄລ່ໂພພອົງກ່ອນນັ້ນໄດ້ຕັ້ງຕົວເອງຂຶ້ນ ເພື່ອຊອກຫາອຳນາດແກ່ຕົນເອງຫລາຍຕື່ມບໍ່ໄດ້ຄິດເຖິງຄວາມສັດຊື່ຕໍ່ພຣະເຈົ້າ ແລະບໍ່ໄດ້ເຫັນແກ່ຂ່າວປະເສີດຂອງພຣະເຢຊູຄຣິສທີ່ຈະປະກາດແກ່ຜູ້ຫລົງຫາຍ

3. ເກີດການຫລົງຫາຍໄປຈາກພຣະຄຳຂອງພຣະເຈົ້າ ຄຳສອນອັນຖືກຕ້ອງຈາກພຣະຄັມພີຖືກປິດມິດໄປ ເກີດຫລັກຄຳສອນໃຫມ່ຈາກພວກນັກບຸນ ເກີດຣີດຄອງພິທີຣີຕອງແນວໃຫມ່ ໆ ແລະເພີ່ມເຕີມກົດຣະບຽບຄວາມເຊື່ອແນວໃຫມ່ ຫັນໄປສົນໃຈເຣື້ອງຄວາມຮັ່ງມີຂອງຄຣິສຈັກຫລາຍກວ່າເຣື້ອງຄວາມຣອດພົ້ນອັນແທ້ຈິງຈາກພຣະເຢຊູຄຣິສ

**ການຂະຫຍາຍອຳນາດຂອງໂພພຫລາຍອົງ**

**ໂພພ ລີໂອທີ 1 (Leo I) ຄ.ສ.440-461** ເປັນຜູ້ທີ່ບຸກເບີກອຳນາດໃຫ້ແກ່ເຫລົ່າໂພພຫລືສັນຕະປາປາອົງຕໍ່ ໆ ມາ ສັນຕະປາປາລີໂອໄດ້ອ້າງຕຳແຫນ່ງສູງສຸດນີ້ ຖືອຳນາດປົກຄອງຄຣິສຈັກຕັ້ງແຕ່ອັຟຣິກາເຖິງສະເປນແລະແຄ້ວນກອລ ໄດ້ຈັດໃຫ້ມີການປະຊຸມສະພາຄຣິສຈັກທີ່ ແຄລຊີດອນໃນປີ ຄ.ສ. 451 ທ່ານມີອຳນາດສັ່ງໃຫ້ຊາວປ່າ **ຮັ້ນ** ຖອຍທັພໃນ ຄ.ສ.452 ແລະເຣັດໃຫ້ຊາວປ່າ **ແວນດັນ** ຍອມຜ່ອນຜັນຄວາມທາຣຸນໂຫດຮ້າຍຕໍ່ປະຊາຊົນ ຕໍ່ຜູ້ຍິງ ເດັກ ແລະພວກນັກບວດ ເມື່ອເຂົ້າບຸກຣຸກກຸງໂຣມໃນປີ ຄ.ສ.455 ໂດຍສາຍເຫດທາງສາສນານີ້ເອງຈຶ່ງເຣັດໃຫ້ຊາວປ່າເຫລົ່ານີ້ຍອມເຊື່ອຟັງໂພພ

**ໂພພເກໂກຣີທີ່ 1** (Gregory I) ທ່ານໄດ້ຮັບການແຕ່ງຕັ້ງໃຫ້ເປັນສັງຄະຣາຊແຫ່ງກຸງໂຣມໃນປີ ຄ.ສ.590 ແລະປະກາດຕົນເອງວ່າເປັນ **ໂພພ** ຜູ້ຍິ່ງໃຫຍ່ ທຳການປົກຄອງຄຣິສຈັກຝ່າຍຕາວັນຕົກ ແລະອ້າງອຳນາດຄອບຄອງເຖິງຝ່າຍຕາວັນອອກຄືກັນ ແມ່ນວ່າຄຣິສຈັກຝ່າຍຕາວັນອອກຈະບໍ່ເຫັນດ້ວຍ ແຕ່ບໍ່ມີຜູ້ໃດຂັດຂືນ ຫລືກ້າຕໍ່ສູ້ຢ່າງເປີດເຜີຍ

ເກໂກຣີທີ່ 1 ໄດ້ເຄີຍດຳລົງຕຳແຫນ່ງເຈົ້າເມືອງໂຣມໃນປີ ຄ.ສ.573 ທ່ານເປັນຜູ້ມີຄວາມສາມາດຫລາຍ ມີຊື່ສຽງ ແລະມີຫມູ່ສຫາຍຫລາຍ ຈຶ່ງໄດ້ຮັບເລືອກໃຫ້ເປັນສັງຄະຣາຊໃນຂນະທີ່ທ່ານຍັງເປັນຜູ້ບົວລະບັດ(Deacon)ຢູ່ ຫລັງຈາກທີ່ທ່ານໄດ້ຂຶ້ນເປັນໂພບ ທ່ານເກໂກຣີທີ່ 1 ໄດ້ຍຶດອຳນາດທາງການເມືອງໂດຍໄລ່ເຈົ້າເມືອງ **ຣາເວນນາ** ແຫ່ງອີຕາລີ ຊຶ່ງເປັນຜູ້ຕ່າງຫນ້າຈາກຈັກກະພັດ ແລະເພາະວ່າການເມືອງໃນເວລານັ້ນອ່ອນແອຫລາຍ ເມື່ອທ່ານໄລ່ເຈົ້າເມືອງອອກໄປແລ້ວ ທ່ານໄດ້ທຳຫນ້າທີ່ປົກຄອງຢ່າງເຂັ້ມແຂງ ແລະສາມາດນຳປະຊາຊົນໃຫ້ພົ້ນພັຍຈາກການເມືອງແລະການສູ້ຣົບ ພວກເຈົ້າເມືອງ ເຈົ້າຊີວິດຊຶ່ງເປັນຊາວປ່າທີ່ຫາກໍບຸກເຂົ້າມາຍຶດດິນແດນຂອງມະຫາອານາຈັກໂຣມັນນັ້ນ ໄດ້ຍອມຢູ່ໃຕ້ອຳນາດຂອງທ່ານເກໂກຣີທີ່ 1 ໃຫ້ທ່ານປົກຄອງເຫນືອຄຣິສຈັກ ເພາະເຫດວ່າເຈົ້າຊີວິດເຫລົ່ານີ້ຕ້ອງການຜົນປະໂຍດໃນການປ້ອງກັນອານາເຂດປະເທດນ້ອຍ ໆ ຂອງຕົນ ແລະກຳລັງຕັ້ງຕົວຂຶ້ນເປັນປະເທດອິສຣະຈາກອຳນາດຂອງຣາຊອານາຈັກໂຣມັນ ທ່ານເກໂກຣີທີ່ 1ໄດ້ໃຊ້ຄວາມສາມາດຫລາຍປະການນຳໃຫ້ເຈົ້າຊີວິດປະເທດນ້ອຍ ໆ ຫລາຍອົງມາເປັນຄຣິສຕຽນ ແລະໄດ້ສົ່ງມີຊຊັ່ນນາຣີໄປປະກາດຍັງປະເທດເຫລົ່ານັ້ນ ຊຶ່ງນັບວ່າເປັນຜົນດີຕໍ່ປະຊາຊົນ

ຢ່າງໃດກໍຕາມ ທ່ານເກໂກຣີທີ່ 1 ໄດ້ຫລົງອຳນາດໃນທາງທີ່ບໍ່ຖືກຕ້ອງບາງປະການ ຕົວຢ່າງທ່ານໄດ້ຍົກເອົາຄົນທີ່ບໍ່ມີຄວາມເຊື່ອເຂົ້າມາປົກຄອງແລະມີອຳນາຈ ໃຊ້ອຳນາດເພື່ອສົ່ງເສີມໃຫ້ຄຣິສຈັກເກີດຄວາມຮັ່ງມີ ໂດຍການອະນຸຍາດໃຫ້ຄຣິສຕຽນຮັບການລ້າງບາບຂຶ້ນສວັນໄດ້ ຫາກວ່າຜູ້ນັ້ນຖວາຍເງິນແກ່ຄຣິສຈັກ ຊຶ່ງພາຍຫລັງຕໍ່ມາກາຍເປັນຄວາມເຊື່ອທີ່ຜິດແລະເກີດການຂາຍ **ໃບລ້າງບາບ** ອັນເປັນຫນັງສືຢັ້ງຢືນວ່າຜູ້ນັ້ນໄດ້ຮັບຄວາມຣອດພົ້ນແລ້ວ ດ້ວຍວ່າໄດ້ຊື້ໃບລ້າງບາບ ແລະບາດຫລວງໃນຄຣິສຈັກໄດ້ອະທິຖານຍົກບາບແລ້ວ ທ່ານເກໂກຣີທີ່ 1 ຍັງໄດ້ປະກາດຕົວວ່າ ທ່ານເປັນຜູ້ແທນຂອງພຣະເຈົ້າມີອຳນາດ



(19)

ໄຂປະຕູສວັນ ແລະສາມາດຍົກບາບໂທດຂອງຄົນເປັນແລະຄົນຕາຍ ສາມາດສົ່ງວິນຍານຜູ້ບໍ່ເຊື່ອໄປສູ່ນຣົກໄດ້ຄືກັນ ການໃຊ້ອຳນາດແບບນີ້ເຮັດໃຫ້ປະຊາຊົນຢ້ານແລະບໍ່ມີໂອກາດເຂົ້າໃຈເຣື່ອງຄວາມຣອດພົ້ນອັນແທ້ຈິງໄດ້ ເຈົ້າຊີວິດທັງຫລາຍຢ້ານກົວຕົກນຣົກ ແຮງເຮັດໃຫ້ອຳນາດຂອງພວກໂພພເຕີບໃຫຍ່ເພີ່ມອີກ ແລະມີອຳນາດສືບຕໍ່ເນື່ອງກັນມາເປັນເວລາຫລາຍຮ້ອຍປີ

**<u>ອຳນາດສັນຕະປາປາກ້າວໜ້າສູງສຸດ ລະຫວ່າງ ຄ.ສ. 1073 -1216</u>**

ຄືໃນສມັຍຂອງໂພພເກໂກຣີທີ່ 7 ຫລືມີອີກນາມນຶ່ງວ່າ ຮິລດາແບຣັນ (Hildebrand) ແລະໂພພອີກອົງນຶ່ງຄື ອິນໂນເຊນທີ່ 3 (Innocent III) ໂພບທັງ 2 ອົງນີ້ໄດ້ນຳໃຫ້ຄຣິສຈັກອອກຈາກອຳນາດການປົກຄອງຂອງຣັຖບານໂຣມັນ ແຕ່ວ່າທ່ານທັງສອງກັບມີອຳນາດເໜືອເຈົ້າຊີວິດທັງຫລາຍ ບໍ່ແຕ່ເທົ່ານັ້ນ ອິນໂນເຊນທີ່ 3 ໄດ້ກ່າວໃນພິທີຮັບຕຳແໜ່ງວ່າ "ອັຄສາວົກເປໂຕເປັນຄົນກາງຣະຫວ່າງມະນຸດກັບພຣະເຈົ້າ ຊຶ່ງມີຖານະຕ່ຳກວ່າພຣະເຈົ້າ ແຕ່ສູງກວ່າມະນຸດ" ດັ່ງນັ້ນໃນຖານະທີ່ທ່ານສືບຕຳແໜ່ງຕໍ່ຈາກອັຄສາວົກເປໂຕ ທ່ານຈຶ່ງໄດ້ຮັບສິດອຳນາດເໜືອຄຣິສຈັກທັງປວງ ແລະເໜືອເຈົ້າຊີວິດທັງຫລາຍໃນໂລກດ້ວຍ ເຮັດໃຫ້ຄຣິສຈັກຫລຸດອອກຈາກອຳນາດຂອງຣັຖບານຢ່າງໝົດສິ້ນ ແຕ່ວ່າຄຣິສຈັກກັບມີອຳນາດຫລາຍຂຶ້ນເໜືອຣັຖບານເໜືອປະຊາຊົນ ແລະປະເທດຕ່າງ ໆ ທີ່ວຢູໂຣບ

**<u>ອຳນາດສັນຕະປາປາເສື່ອມລົງ</u>**

ໂດຍທົ່ວໄປແລ້ວໃນເວລານັ້ນ ອຳນາດຂອງຄຣິສຈັກມີປໂຍດເພື່ອຮັກສາຄວາມຊອບທັມ ແລະເປັນປໂຍດບັນເທົາທຸກຂອງປະຊາຊົນ ອີກທັງເປັນການຖ່ວງອຳນາດການປົກຄອງຂອງຈັກກະພັດບາງອົງທີ່ທາຣຸນໂຫດຮ້າຍ ແຕ່ວ່າໃນທາງກົງກັນຂ້າມ ເມື່ອອຳນາດຂອງຄຣິສຈັກມີຫລາຍເກີນໄປ ເຮັດໃຫ້ໂພພທີ່ຊົ່ວຮ້າຍບາງອົງເຫັນແກ່ປໂຍດສ່ວນຕົວໄດ້ອ້າງເອກສານທຽມເທັດ ປະກາດໃຫ້ປະຊາຊົນແລະເຈົ້າຊີວິດທັງຫລາຍຢ້ານກົວຕໍ່ອຳນາດສູງສຸດນີ້ ຄຳສັ່ງທຽມເທັດໄດ້ອ້າງມີຢູ່ວ່າ ມີເອກສານໄດ້ຈາຣຶກໄວ້ວ່າ ຈັກກະພັດຄອນສະແຕນຕິນ ຜູ້ປະກາດໃຫ້ສາສນາຄຣິສເປັນສາສນາປະຈຳຊາດນັ້ນ ໄດ້ມອບຖວາຍອຳນາດສູງສຸດເໜືອມະຫາຣາຊອານາຈັກແກ່ໂພພ ຫລືໃນເວລານັ້ນຍັງຄົງເອີ້ນວ່າ ບິຊອບແຫ່ງໂຣມ ຄື ບິຊອບຊີສເວສເຕີທີນຶ່ງ ຄ.ສ.314 ເຖິງ 335 ແລະໂດຍການຕີຄວາມໝາຍທີ່ວ່າ ເປໂຕອັຄສາວົກຜູ້ໄດ້ຮັບອຳນາດສູງສຸດນີ້ສາມາດເປີດ ຫລືປິດ ຫລືສົ່ງຜູ້ໃດໄປລົງນຣົກກໍໄດ້

ເອກສານປອມເຫລົ່ານີ້ໄດ້ເຮັດໃຫ້ຄຣິສຈັກຕ້ອງເປັນມົນທິນ ແລະເສັຽຫາຍຢ່າງຫລວງຫລາຍເພາະຄວາມຊົ່ວຮ້າຍຂອງຜູ້ນຳຄຣິສຈັກ ໃນເວລານັ້ນໄດ້ຫລົງຜິດແລະເຮັດບາບທີ່ພຣະຜູ້ເປັນເຈົ້າຕ້ອງເສັຽພຣະທັຍຢ່າງໃຫຍ່ຫລວງ ແຕ່ວ່າຄວາມບາບຊົ່ວຂອງມະນຸດບໍ່ສາມາດມີຊັຍຕໍ່ຄວາມຈິງຂອງພຣະເຈົ້າໄດ້ ໃນທີ່ສຸດ ຄ.ສ.1414 ທີ່ປະຊຸມລົງມະຕິເດັດຂາດວ່າ ຄຳສັ່ງອ້າງທຽມເທັດເຫລົ່ານັ້ນ ບໍ່ເປັນຄວາມຈິງ ທີ່ປະຊຸມໄດ້ປະກາດໃຫ້ມີໂພບປະຈຳກຸງໂຣມຕໍ່ໄປ ແຕ່ໃຫ້ໝົດອຳນາດບັງຄັບບັນຊາຕາມໃຈຊອບ

ມະນຸດເປັນຜູ້ຫລົງຜິດເຮັດບາບເປັນເຫດໃຫ້ຄຣິສຈັກຮັບມົນທິນແລະຄວາມມືວໝອງ ແຕ່ພຣະເຈົ້າຜູ້ຊົງເມດຕາກະຣຸນາໄດ້ກູ້ເອົາຄຣິສຈັກຄືນມາຈາກພວກຜູ້ບ້າອຳນາດ ຜູ້ຫລົງລາບຍົດ ກຽດ ຊື່ສຽງ ບຸກຄົນເຫລົ່ານີ້ໄປໄດ້ບໍ່ໄກລ ດັ່ງພຣະທັມຢາໂກໂບ 4:6 2 "ພຣະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງ ແຕ່ຊົງປະທານພຣະຄຸນແກ່ຄົນທີ່ຖ່ອມໃຈລົງ" (ສຶກສາທຽບ ສຸພາສິດ 3:34)

# ບົດທີ 8

# ສາສນາອິສລາມບຸກຣຸກອານາຈັກໂຣມັນ ເຖິງສົງຄາມຄຣູເສດ

ຄ.ສ.610-1272

**ບົດນຳ**

ປວັດສາດຄຣິສຈັກໃນບົດນີ້ຈະໄດ້ກ່າວເຖິງເຣື້ອງການເກີດສາສນາອິສລາມ ການບຸກຣຸກຍຶດເອົາດິນແດນຂອງຣາຊອານາຈັກໂຣມັນໂດຍສາສນາອິສລາມ ສາເຫດທີ່ຈຳເປັນຕ້ອງໄດ້ຈາຣຶກເຖິງເຫດການຂອງຍຸກນີ້ເຂົ້າໄວ້ໃນປວັດສາດຄຣິສຈັກ ກໍເນື່ອງມາຈາກເຫດຜົນຫລາຍປະການຄື

1. ສາສນາອິສລາມເປັນສາສນາທີ່ເກີດໃຫມ່ໃນປະມານ ຄ.ສ.610
2. ສາສນາອິສລາມໄດ້ອ້າງອີງເຖິງພຣະເຈົ້າອົງດຽວຄື ພຣະອັລເລາະ ຫລື ອັລຫລ່າ (ສາສນາຄຣິສອ້າງເຖິງພຣະເຢໂຮວາ)
3. ສາສນາອິສລາມໄດ້ໃຊ້ພຣະຄັມພີເດີມຂອງຊາວຢິວດັ່ງທີ່ຄຣິສຕຽນໄດ້ໃຊ້
4. ສາສນາອິສລາມໄດ້ເຂົ້າບຸກຣຸກ ແລະບັງຄັບປະຊາຊົນໃນດິນແດນເຫລົ່ານັ້ນ ສ່ວນຫລາຍເປັນຂອງຣາຊອານາຈັກໂຣມັນ ທີ່ມີສາສນາຄຣິສເປັນສາສນາປະຈຳຊາດ
5. ຄຣິສຕຽນໄດ້ຕໍ່ສູ້ເພື່ອປ້ອງກັນດິນແດນ ຈຶ່ງເກີດເສິກທີ່ເອີ້ນວ່າ "ສົງຄາມຄຣູເສດ" (Crusades)

ການສຶກສາໃນບົດນີ້ບໍ່ໄດ້ມີຈຸດປະສົງເພື່ອໂຈມຕີສາສນາອິສລາມ ແຕ່ວ່າຈຳເປັນຕ້ອງໄດ້ກ່າວເຖິງຫລັກຄວາມເຊື່ອຂອງສາສນາອິສລາມ ເພື່ອເຮົາຈະໄດ້ເຂົ້າໃຈເຖິງຄວາມແຕກຕ່າງ ແລະຫລັກການທີ່ສາສນາອິສລາມໄດ້ໃຊ້ສົງຄາມເພື່ອຂຍາຍດິນແດນ ແລະເຜີຍແຜ່ສາສນາດັ່ງທີ່ຍັງມີປາກົດຢູ່ໃນປັດຈຸບັນ

ໃນບົດຮຽນນີ້ໄດ້ສະແດງໃຫ້ເຫັນອີກເຫດຜົນນຶ່ງຄື ເນື່ອງຈາກສະພາບອັນຈຳເປັນທີ່ຜູ້ນຳຄຣິສຕຽນຈຳເປັນຕ້ອງໄດ້ປ້ອງກັນດິນແດນສັກສິດຄືກຸງເຢຣູຊາເລັມ ແລະເຂດແດນຂອງຣາຊອານາຈັກໂຣມັນ ເຮັດໃຫ້ເກີດການຕັດສິນໃຈໄປໂດຍຂາດການນຳພາຈາກພຣະເຈົ້າ ໂດຍທີ່ຜູ້ນຳໃນເວລານັ້ນຄິດວ່າເປັນການເຮັດເສິກເພື່ອພຣະເຈົ້າ ໄດ້ໂຕ້ຕອບຄືນໂດຍເຮັດເສິກກັບອິສລາມ ເຮັດໃຫ້ເກີດການເສັຽຫາຍຢ່າງຫລວງຫລາຍ ແທ້ຈິງການໂຕ້ຕອບກັນໂດຍເສິກສົງຄາມທີ່ຝ່າຍອິສລາມໄດ້ບຸກຣຸກທຳລາຍຄຣິສຕຽນ ກໍຍັງດຳເນີນມາຈົນເທົ່າທຸກມື້ນີ້ບໍ່ທັນເຊົາເທື່ອ ບັນຫາແນວນີ້ເກີດຂຶ້ນມາແຕ່ໃນອາດີດໄດ້ສ້າງຄວາມທຸກຄວາມແຄ້ນໃຈກັນ ເກີດການທຳລາຍກັນຢ່າງບໍ່ສິ້ນສຸດ ເບິ່ງແລ້ວຄຣິສຕຽນມັກເປັນຝ່າຍທີ່ຍອມເສັຽປຽບຢູ່ສເມີ ແຕ່ວ່າກໍຕ້ອງຈຳເປັນໄດ້ຕໍ່ສູ້ເພື່ອປ້ອງກັນຕົນເອງ ບັນຫາເຫລົ່ານີ້ໄດ້ເກີດຂຶ້ນແລ້ວ ແລະຍັງຄົງຈະເດີນຕໍ່ໄປຢ່າງບໍ່ສິ້ນສຸດ ແຕ່ຄວາມຫວັງຂອງຄຣິສຕຽນສົມຄວນທີ່ຈະຕັ້ງຫມັ້ນຄົງໃນພຣະຄຳຂອງພຣະເຈົ້າ ດັ່ງພຣະທັມເສຄາຣິຍາ 4:6 ກ່າວວ່າ "ນີ້ເປັນພຣະວັຈນະຂອງພຣະເຈົ້າທີ່ໃຫ້ໄວ້ກັບເສຣຸບາເບລວ່າ ບໍ່

ແມ່ນດ້ວຍກຳລັງ ບໍ່ແມ່ນດ້ວຍຣິດທານຸພາບ ແຕ່ດ້ວຍພຣະວິນຍານ ພຣະເຈົ້າຈອມໂຍທາຕັດດັ່ງນີ້ແຫລະ"

ຢ່າງໃດກໍຕາມໃຫ້ເຮົາຫັນມາສຶກສາເຖິງປວັດຄຣິສຈັກທີ່ມີເຫດການຮ້າຍໄດ້ເກີດຂຶ້ນ ແລະຫວັງວ່າເຮົາຈະໄດ້ຮຽນຮູ້ຈັກຜົນຂອງມັນ ເພື່ອເຮົາຈະໄດ້ຮູ້ຈັກພິຈາຣະນາເບິ່ງຄຣິສຈັກຂອງເຮົາໃນປັດຈຸບັນ

**<u>ສາສນາອິສລາມ</u>**

ສາສນາອິສລາມ ຫລືທີ່ຮ້ອງວ່າຊາວມຸສລິມ ຜູ້ກໍ່ຕັ້ງແມ່ນ ທ່ານໂມຫະໜັດ (Mohammed) ເກີດໃນປີ ຄ.ສ.570 ທີ່ເມືອງເມກກະ (Mecca) ໃນອາຣາເບັຍ ຄ.ສ.610 ເມື່ອທ່ານໂມຫະໜັດອາຍຸໄດ້ 40 ປີ ໄດ້ຕັ້ງຕົ້ນສັ່ງສອນ ແລະອ້າງຕົນເອງເປັນສາສດາພຍາກອນແລະຜູ້ປະຕິຮູບ ຕອນທຳອິດທ່ານໄດ້ສານຸສິດມາເທື່ອລະນ້ອຍ ແຕ່ເມື່ອຖືກຂົ່ມເຫັງຈຶ່ງໜີຈາກເມືອງເມກກະໃນປີ ຄ.ສ.622 ແລະໄດ້ຕັ້ງເອົາປີນັ້ນເປັນປີຕັ້ງຕົ້ນສັກຣາດສາສນາໃໝ່ຂອງທ່ານ ເອີ້ນວ່າ ເຮກີຣາ ທ່ານໂມຫະໜັດໄດ້ຮວບຮວມເອົາຊາວອາຫຣັບເຜົ່າຕ່າງ ໆ ທີ່ແຕກກະຈັດກະຈາຍຢູ່ ຊຶ່ງໄດ້ຖືກກົດຂີ່ຂົ່ມເຫັງໂດຍຈັກກະພັດກຣີກ ແລະຊາວໂຣມັນ ຊາວອາຫຣັບເຜົ່າຕ່າງ ໆ ເຫລົ່ານີ້ຍິນດີເຂົ້າຮ່ວມເປັນພວກດຽວກັນກັບທ່ານໂມຫະໜັດເຮັດໃຫ້ເກີດເປັນກອງທັບອັນຍິ່ງໃຫຍ່ດ້ວຍຄຳສອນທີ່ວ່າ ທະຫານເຫລົ່ານີ້ເປັນພົນໂຍທາຂອງພຣະອັລຫລ່າ ທ່ານໂມຫະໜັດສິ້ນຊີພປະມານປີ ຄ.ສ.632 ແຕ່ວ່າກຳລັງກອງທະຫານອັນເຂັ້ມແຂງໄດ້ບຸກຣຸກຢຶດເອົາດິນແດນ ປາເລສໄຕລ ອາຟຣິກາເໜືອ ສະເປນ ຕລອດໄປເຖິງຊາຍແດນຝຣັ່ງເສດ ຊຶ່ງໃຊ້ເວລາການບຸກຣຸກພຽງຮ້ອຍປີກໍໄດ້ດິນແດນອັນກວ້າງໃຫຍ່ຂອງມະຫາອານາຈັກໂຣມັນ ກວ້າງຂວາງອອກເປັນຮູບດວງຈັນເຄິ່ງດວງ ໄດ້ຕັ້ງສູນກາງສາສນາທີ່ **ກຸງແບກແດດ** (Baghdad ເມືອງຫລວງ Iraq ໃນປັດຈຸບັນ)

ທ່ານໂມຫະໜັດເລີ້ມຕົ້ນສັ່ງສອນສາສນາອິສລາມໂດຍມີສັນຕິ ແຕ່ພາຍຫລັງປ່ຽນເປັນຄວາມໂຫດຮ້າຍ ໃຊ້ດາບ ແລະອາວຸດ ຢຶດດິນແດນແລະປາບປາມຜູ້ບໍ່ເຊື່ອ ດ້ວຍວ່າຄົນອາຫຣັບທີ່ເຂົ້າມາຮ່ວມນັ້ນເປັນພວກທີ່ໂຫດຮ້າຍມັກຂ້າ ກ້າຫານໃນການຕີເສິກຕິດຕາມຜູ້ພຍາກອນຂອງເຂົາດ້ວຍຄວາມຮ້ອນຮົນ ເມື່ອພວກອິສລາມບຸກຢຶດດິນແດນໃດໄດ້ ຊາວບ້ານຕ້ອງເສັຽສ່ວຍແກ່ພວກເຂົາ ຫາກຜູ້ໃດຂັດຂືນຕ້ອງໂທດເຖິງຕາຍ ທ່ານມະຫະໜັດມີຜູ້ສືບຕຳແໜ່ງຕໍ່ຄື ພວກ**ກາຫລິບ** (ດັ່ງໃນຮູບ) ກາຫລິບເປັນຜູ້ນຳກອງທະຫານອິສລາມອັນກ້າຫານບໍ່ຢ້ານຕາຍ ໄດ້ຖືກເລືອກຂຶ້ນມາເປັນຮຸ້ນ ໆ ທຳການສ້າງມະຫາອານາຈັກຂອງ



ອິສລາມໂດຍໃຊ້ຄົມດາບເປັນອາວຸດ ເພື່ອບຸກຢຶດເອົາດິນແດນແລະຂຍາຍອານາເຂດພ້ອມກັບສາສນາຂອງຕົນ ພວກອິສລາມເຊື່ອວ່າພວກເຂົາຂ້າທຳລາຍເພື່ອປາບປາມອະທັມຕາມນ້ຳພຣະທັຍພຣະເຈົ້າ ແລະພວກເຂົາຈຳເປັນຕ້ອງເຮັດໃຫ້ສຳເຣັດດ້ວຍຊີວິດ ຖືວ່າເປັນສົງຄາມສັກສິດເພື່ອພຣະອັລຫລ່າຊຶ່ງເປັນພຣະເຈົ້າຂອງອິສລາມ ພວກຂອງມະຫະໜັດເຊື່ອວ່າ ຜູ້ທີ່ເປັນທະຫານຫາກວ່າຕາຍໃນສນາມຮົບ ຫລືວ່າຜູ້ໃດກໍຕາມທີ່ຖືກພວກເຂົາຂ້າດ້ວຍໃຫ້ຄົມດາບຕາຍໃນສໜາມຮົບກໍຈະໄດ້ເຂົ້າໃນສວັນທັນທີ ພວກເຂົາທຳລາຍສຖານທີ່ສັກສິດ ແລະພຣະວິຫານຂອງຄຣິສຕຽນໄດ້ຖືກຍຶດໄປເປັນສຸເຫລົ່າ (ວັດຂອງອິສລາມ) ດິນແດນສ່ວນໃຫຍ່ຂອງຣາຊອານາຈັກໂຣມັນຊຶ່ງໄດ້ຖືສາສນາຄຣິສຕຽນ ຕ້ອງຕົກຢູ່ພາຍໃຕ້ການປົກຄອງຂອງພວກອິສລາມ ພວກຄຣິສຕຽນ

ທີ່ຍອມອ່ອນນ້ອມ ກໍໄດ້ຮັບອານຸຍາດໃຫ້ໄປນມັສການພຣະເຈົ້າໄດ້ພາຍໃຕ້ກົດຂໍ້ບັງຄັບອັນເຄັ່ງຄັດ ທາງດ້ານຕາວັນອອກພວກອິສລາມໄດ້ເຣັດເສິກຢຶດດິນແດນໄດ້ດັ່ງນີ້ຄື

ຄ.ສ.635 ຢຶດດາມັສກັສ

ຄ.ສ.636 ຢຶດຊີເຣັຍ

ຄ.ສ.638 ຢຶດເຢຣູຊາເລັມ

ຄ.ສ.642 ຢຶດອີຢິບ

ຄ.ສ.652 ຢຶດເປີເຊັຍຈີນເຖິງອິນເດັຽແລະໃນທີ່ສຸດໄດ້ເຂົ້າໄປເຖິງບາງສ່ວນຂອງປະເທດຈີນ

ຄໍາວ່າ "ອິສລາມ" ແປວ່າ "ຍອມອ່ອນນ້ອມ" ແຕ່ແທ້ຈິງແລ້ວພວກນີ້ບໍ່ໄດ້ຍອມອ່ອນນ້ອມແຕ່ນ້ອຍ ມີຫລັກຂໍ້ເຊື່ອວ່າ ມີພຣະເຈົ້າແຕ່ພຣະອົງດຽວ ຜູ້ມີນາມວ່າອັລຫລ່າ (Allah) ຊຶ່ງຕາມພາສາເຮັບເຣີ້ຮ້ອງວ່າ ເອໂລຮິມ (ໃນພຣະຄັມພີເດີມຂອງຢິວ ແລະຄຣິສຕຽນ) ເຊື່ອວ່າພຣະເຈົ້າໄດ້ປະທານຜູ້ພຍາກອນຫລາຍຄົນມາເຖິງມະນຸດ ໃນຈໍານວນຜູ້ພຍາກອນນັ້ນມີຜູ້ຍິ່ງໃຫຍ່ຢູ່ 4 ທ່ານຄື ອາດາມ ໂມເຊ ພຣະເຢຊູ ແລະພຣະໂມຫະຫມັດ ຊຶ່ງພຣະໂມຫະຫມັດເປັນໃຫຍ່ກວ່າຫມູ່ໃນຈໍານວນຜູ້ພຍາກອນທັງຫລາຍໃນພຣະຄຣິສທັມຄັມພີ ແລະອັຄສາວົກທຸກຄົນທີ່ມີຊີວິດຢູ່ກ່ອນພຣະໂມຫະຫມັດ ຖືວ່າເປັນຜູ້ພຍາກອນຂອງຊາວມຸສລິມດ້ວຍ ພວກເຂົາເຊື່ອອີກວ່າຕໍ່ໄປພາຍຫນ້າຈະມີການເປັນຂຶ້ນຈາກຄວາມຕາຍເປັນຄັ້ງສຸດທ້າຍແລະມີການພິພາກສາລົງໂທດ ມີສວັນນິນຣົກສໍາລັບທຸກຄົນ ສາສນາອິສລາມ ມີຄໍາສອນງ່າຍ ໆ ບໍ່ມີຄວາມຍຸ້ງຍາກໃນເຣື້ອງຫລັກຂໍ້ເຊື່ອ ຈຶ່ງບໍ່ເປັນເຫດໃຫ້ເກີດບັນຫາແຕກແຍກໃນເຣື້ອງຄວາມຄິດກ່ຽວກັບພຣະເຈົ້າ ໂມຫະຫມັດໄດ້ສອນໃຫ້ເຊື່ອພຣະເຈົ້າອົງດຽວບໍ່ໃຫ້ນັບຖືຮູບເຄົາຣົບອື່ນໃດ ຊຶ່ງມີຄວາມເຄັ່ງຄັດຫລາຍກວ່າພວກຄຣິສຕຽນ ເພາະວ່າເມື່ອສາສນາຄຣິສຕຽນເຂົ້າຄອບຄອງເປັນສາສນາປະຈໍາຊາດໂຣມັນກໍເກີດການເອົາແບບຢ່າງຂອງຊາວກຣີກທີ່ມັກຂາບໄຫວ້ຮູບປັ້ນ ໂດຍເຮັດຮູບປັ້ນຂອງນາງມາເຣັຽ ໂຢເຊຟແລະຮູບປັ້ນຂອງນັກບຸນນັກບວດທັງຫລາຍ ແລະໄດ້ເອົາເຂົ້າໄປໄວ້ຈົນເຕັມຄຣິສຈັກໃນສມັຍນັ້ນ

ທ່ານໂມຫະຫມັດໄດ້ສອນສາວົກຂອງທ່ານໃຫ້ທໍາລາຍຮູບປັ້ນເຄົາຣົບ ແລະຫ້າມການແຕ້ມຮູບຫລືຄວັດຮູບມະນຸດໄວ້ໃນສຸເຫລົ່າຊຶ່ງເປັນວັດຫລືວິຫານຂອງພວກມຸສລິມ ຜູ້ທີ່ນັບຖືສາສນາອິສລາມຈະຕ້ອງອະທິຖານວັນລະ 5 ເທື່ອ ໂດຍຫັນຫນ້າໄປສູ່ກຸງເມກກະອັນເປັນສະຖານສັກສິດໂບຮານແຫ່ງຄວາມເຊື່ອຄວາມສັດທາຂອງຊາວມຸສລິມ ທ່ານໂມຫະຫມັດສັ່ງສອນໃຫ້ສາວົກຂອງທ່ານຕໍ່ສູ້ເພື່ອພຣະອັລຫລ່າ ຜູ້ຈະຊົງປະທານຣາງວັນແກ່ພວກເຂົາໃນສວັນ ເມື່ອພວກເຂົາຍັງຢູ່ໃນໂລກ ເຂົາຈະຕ້ອງບໍ່ດື່ມເຫລົ້າຫລືສິ່ງມືນເມົາເລີຍ ຄໍາສອນຂອງທ່ານມະຫະຫມັດໄດ້ຣວມໄວ້ເປັນຄັມພີເອີ້ນວ່າ **ຄັມພີໂກຫຣ່ານ** ນັກຮົບຂອງພຣະອັລຫລ່າໄດ້ບັງຄັບຊົນຊາດທີ່ຕົນຮົບຊະນະໃຫ້ນັບຖືຄັມພີໂກຫຣ່ານ ຫລືບໍ່ເປັນເຊັ່ນນັ້ນກໍຕ້ອງເສັຽສ່ວຍພາສີອາກອນໃຫ້ແກ່ຕົນ ຫລືບໍ່ເປັນເຊັ່ນນັ້ນກໍຈະຖືກຂ້າເສັຽ

ສາສນາອິສລາມຍອມຮັບພຣະຄັມພີເດີມຂອງສາສນາຢິວຫລາຍກວ່າພຣະຄັມພີໃຫມ່ ພວກອິສລາມຄິດວ່າ ພຣະເຈົ້າໂຫດຮ້າຍທາຣຸນຄືກັນກັບຈັກກະພັດຊາວຕາວັນອອກທີ່ມັກເຣັດເສິກ ແລະເຂົ້າໃຈວ່າພຣະເຈົ້າບໍ່ມີຄວາມຮັກຕໍ່ຄົນທີ່ບໍ່ຖືສາສນາອິສລາມ ທ່ານໂມຫະຫມັດເຊື່ອວ່າພຣະຄັມພີເດີມໄດ້ທໍານວຍເຖິງງານຂອງທ່ານໄວ້ລ່ວງຫນ້າແລ້ວ

ສາສນາອິສລາມບໍ່ຍອມຮັບພຣະເຢຊູຄຣິສໃນຖານະພຣະບຸດຂອງພຣະເຈົ້າ ອັນມີສພາບຂອງຄວາມເປັນພຣະເຈົ້າແທ້ ບໍ່ຍອມຮັບວ່າພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ຣອດ ແຕ່ລົດສັກສີຂອງພຣະເຢຊູມາເປັນພຽງຜູ້ພຍາກອນຂອງຊາດຢິວຄົນນຶ່ງ ຊຶ່ງຕ່ຳກວ່າພຣະໂມຫະໝັດໃນທຸກດ້ານ ແລະເອີ້ນນາມຂອງພຣະເຢຊູວ່າ ອີຊັຍ ຊຶ່ງມາຈາກຊື່ຂອງເອຊາວບໍ່ແມ່ນເຢຊູ

ສາສນາອິສລາມມີຄວາມຄິດເຣື່ອງສວັນວ່າ ເປັນສະຖານທີ່ຢູ່ຂອງຜູ້ມີບຸນ ມີໄວ້ສຳລັບຊີວິດໃນໂລກໜ້າ ບໍ່ແມ່ນເປັນບ່ອນສງົບສຸກຂອງວິນຍານ ແຕ່ເປັນຊີວິດທີ່ເຕັມໄປດ້ວຍຣາຄະຕັນຫາ ອັນເປັນຫລັກຄຳສອນທີ່ບໍ່ສູງ ແລະບໍ່ບໍຣິສຸດ

ຫລັກຄຳສອນທີ່ຕົກຕ່ຳອີກປະການນຶ່ງຄື ລົດຖານະຂອງສະຕຣີ ຖືວ່າສະຕຣີເປັນພຽງທາດຫລືເປັນເຄື່ອງຫລິ້ນຂອງຊາຍ ເມື່ອພວກມຸສລິມໄດ້ຊັຍຊະນະເມືອງໃດຫາກວ່າຄົນໃນເມືອງນັ້ນເກີດການຕໍ່ຕ້ານ ພວກຜູ້ຊາຍຕ້ອງຖືກຂ້າຕາຍ ພວກຜູ້ຍິງຕ້ອງຖືກນຳມາເປັນນາງບຳເຣີ ພວກເດັກນ້ອຍຈະຖືກນຳໄປລ້ຽງໃນດິນແດນຫ່າງໄກໃຫ້ເປັນຜູ້ຫລົງໄຫລໃນສາສນາອິສລາມ ແລະຝຶກໃຫ້ເປັນທະຫານກ້າຕາຍ

## ສາສນາອິສລາມມີຊື່ສຽງໃນດ້ານອັກສອນສາດ

ພວກອາຫຣັບໄດ້ຄິດກຳນົດຕົວເລກສາກົລ 1 2 3 4 ແກ່ໂລກສາກົນຕາມທີ່ເຮົາໄດ້ໃຊ້ຢູ່ຈົນກະທັ້ງເຖິງປັຈຈຸບັນນີ້ ຊຶ່ງເປັນຕົວເລກທີ່ນິຍົມໃຊ້ຫລາຍກວ່າຕົວເລກໂຣມັນ I II III IV ສ່ວນໃນດ້ານດາຣາສາດ ພວກອາຫຣັບໄດ້ເຮັດແບບວົງຈອນໝູນວຽນຂອງດວງດາວຊຸດທຳອິດຂຶ້ນ ສຳນັກຣາຊວັງຂອງກາຫລິບ (ຜູ້ສືບຕຳແໜ່ງຈາກພຣະມະຫະໝັດ) ໃນກຸງແບກແດດ ເປັນສູນກາງທາງດ້ານອັກສອນສາດ ພວກອິສລາມເຜົ່າຊາຣາເຊນໃນປະເທດສະເປນເປັນພວກທີ່ມີວັທນະທັມແລະອາຣະທັມສູງກວ່າພວກອິສລາມທີ່ເປັນເຜົ່າເຕີກ ຫລືເອີ້ນວ່າ "ເຕີຣກີ" (Turkey ໃນປັດຈຸບັນ) ແຕ່ວ່າ ຄວາມກ້າວໜ້າທາງດ້ານອັກສອນສາດແລະວັທນະທັມຂອງພວກອິສລາມຕ້ອງເສື່ອມເສັຽໄປ ເພາະເຫດວ່າເມື່ອເຜົ່າເຕີຣກີໄດ້ໃຊ້ອຳນາດອັນໂຫດຮ້າຍຂາດມະນຸດສະຍະທັມເຂົ້າທຳລາຍ ແລະມັກສນັບສນຸນໃຫ້ຊາວອິສລາມມີຄວາມກຽດຊັງຫລາຍກວ່າຄວາມຮັກ ດັ່ງນັ້ນຄວາມຈະເຣີນທາງດ້ານວັທນະທັມແລະອັກສອນສາດຂອງອິສລາມຈຶ່ງໄດ້ເສື່ອມສູນໄປ

#6

## ສາເຫດທີ່ອິສລາມໄດ້ຊັຍຊະນະຢ່າງໃຫຍ່ຫລວງ

ຕັ້ງແຕ່ສັຕວັດ ທີ 7 ສາສນາອິສລາມໄດ້ກຳເນີດເກີດຂຶ້ນມາ ແລະໄດ້ຊັຍຊະນະຄອບຄອງດິນແດນຢ່າງກວ້າງຂວາງ ພວກອິສລາມ ຊຶ່ງສ່ວນຫຼາຍເປັນຊາວອາຫຣັບທີ່ໂຫດຮ້າຍ ແລະມັກການເສິກມັກຂ້າທຳລາຍ ຍອມຕາຍດີກວ່າຈະເສັຽຕໍ່ສັຕຣູ ໄດ້ບຸກຣຸກແລະທຳລາຍຄຣິສຈັກຢ່າງທີ່ບໍ່ເຄີຍປາກົດມາກ່ອນ ສາເຫດທີ່ນຳໃຫ້ອິສລາມໄດ້ຊັຍຊະນະ

1. ຄວາມອ່ອນແອແລະການຫລົງອຳນາດຂອງຜູ້ນຳຄຣິສຈັກ ຮູບແບບແລະຄວາມເຊື່ອອັນແທ້ຈິງໄດ້ຖືກແປງໄປຈາກຄວາມເຊື່ອອັນຖືກຕ້ອງ ບໍ່ຄືກັບຄຣິສຈັກໃນຍຸກທຳອິດ
2. ຄຣິສຕຽນເປັນແຕ່ໃນນາມເທົ່ານັ້ນ ຄືພາກັນມາເປັນຄຣິສຕຽນເພາະວ່າເປັນສາສນາເອກຂອງຣາຊອານາຈັກໂຣມັນ ຈຶ່ງບໍ່ມີຄວາມຮັກແພງໃນພຣະເຈົ້າຜູ້ທ່ຽງແທ້

3. ການນະມັສການມີແຕ່ພິທີກັນຫລາຍກວ່ານະມັສການພຣະເຈົ້າດ້ວຍຈິດວິນຍານແລະຄວາມຈິງ ແລະຍັງມີການນະມັສການຮູບປັ້ນ ນັກບຸນໃນຄຣິສຈັກອີກນຳ
4. ຄຣິສຕຽນບໍ່ມີພຣະຄັມພີໄວ້ສຳລັບສຶກສາຄວາມຈິງຂອງພຣະເຈົ້າ ຈຶ່ງບໍ່ເຂົ້າໃຈເຖິງການມີຊີວິດຄຣິສຕຽນທີ່ແທ້ຈິງ
5. ຄຣິສສາສນາເປັນຂອງຄົນເມືອງຫລວງໃນຣາຊອານາຈັກໂຣມັນທີ່ເວົ້າພາສາລາຕິນແລະພາສາກຣີກ ແຕ່ເມື່ອຊາວປ່າທັນມາເປັນຄຣິສຕຽນ ສ່ວນຫລາຍເວົ້າພາສາຕາມເຜົ່າຂອງຕົນ ເຮັດໃຫ້ບໍ່ສາມາດເຂົ້າໃຈຄຳສອນອັນທ່ຽງແທ້ໄດ້
6. ຊາວປ່າທັນມາເປັນຄຣິສຕຽນສາຍອອຣຽນໄດ້ຕໍ່ສູ້ກັບຄຣິສຈັກຄາທໍລິກໃນດ້ານຫລັກຂໍ້ເຊື່ອ ເຮັດໃຫ້ຄຣິສຕຽນອ່ອນແອແລະແຕກແຍກກັນມາຕລອດ
7. ພວກອິສລາມເຂັ້ມແຂງຫລາຍໃນການເສິກ ຍຶດດິນແດນໄດ້ໂດຍໄວ ແລະໃຊ້ວິທີທີ່ໂຫດຮ້າຍໃນການຍຶດຄອງດິນແດນ ແລະບັງຄັບໃຫ້ຄົນເຂົ້ານັບຖືສາສນາອິສລາມ
8. ຄຣິສຕຽນບໍ່ເຂັ້ມແຂງຢູ່ແລ້ວ ຈຶ່ງເປັນການງ່າຍທີ່ຈະປ່ຽນສາສນາຕາມທີ່ຕົນຖືກບັງຄັບ
9. ອານາເຂດຂອງຣາຊອານາຈັກໂຣມັນກວ້າງຂວາງໃຫຍ່ເກີນກວ່າທີ່ຈະຮັກສາໄວ້ໄດ້
10. ຣາຊອານາຈັກໂຣມັນອ່ອນແອຢູ່ແລ້ວ ເນື່ອງຈາກການບຸກຣຸກຂອງຊາວປ່າ ແລະທະຫານໂຣມັນອິດເຫນື່ອຍຕໍ່ການປ້ອງກັນດິນແດນ

<u>ອານາຈັກໄບແຊນທຽມ</u> (Bizentium)

ສັຕວັດທີ 7 ແລະທີ 8 ນີ້ ສາສນາອິສລາມໄດ້ຢຶດອຳນາດ ແລະຄອບຄອງດິນແດນສ່ວນຫລາຍ ເຮັດໃຫ້ອານາຈັກໂຣມັນເຫລືອດິນແດນພຽງນ້ອຍດຽວ ຈຶ່ງໄດ້ປ່ຽນນາມໃຫມ່ຈາກ **ມະຫາອານາຈັກໂຣມັນ** ມາເປັນ **ຣາຊອານາຈັກໄບແຊນທຽມ** ຊຶ່ງມີກຸງຄອນສະແຕນຕິໂນເປີລເປັນເມືອງຫລວງໂດຍມີອານາເຂດເອເຊັຍນ້ອຍ ກຣີກ ແລະດິນແດນອື່ນ ໆ ອີກແຕ່ພຽງນ້ອຍດຽວ ຕໍ່ມາໃນປີ ຄ.ສ. 717-718 ພວກອິສລາມພຍາຍາມໂຈມຕີກຸງຄອນສະແຕນຕິໂນເປີລ ແຕ່ບໍ່ສາມາດເຂົ້າຢຶດໄດ້ ເພາະພູມີປະເທດແລະທັມຊາດລ້ອມຮອບໄດ້ຊ່ວຍປ້ອງກັນກຸງໄວ້ໄດ້ ເຖິງຢ່າງໃດກໍຕາມ ແມ້ວ່າຣາຊອານາຈັກໄບແຊນທຽມຈະມີອານາເຂດບໍ່ກວ້າງຂວາງ ແຕ່ກໍມີຄວາມຈະເຣີນຫລາຍທີ່ສຸດໃນຍຸກນັ້ນ ເພາະວ່າມີວັທນະທັມກຣີກໂບຮານ ແລະມີຣະບົບການປົກຄອງ ຊຶ່ງໄດ້ຮັບການພັທນາມາເປັນເວລາດົນນານແລ້ວ

ທາງດ້ານຄວາມສັມພັນຣະຫ່ວາງຄຣິສຈັກກັບ ຈັກກະພັດແຫ່ງຣາຊອານາຈັກໄບແຊນທຽມ ຍັງຢູ່ໃນສະພາບການເດີມຄື ຈັກກະພັດມີອຳນາດເຫນືອຄຣິສຈັກຕາວັນອອກ ສ່ວນທາງຕາວັນຕົກໂພບຄຸມອຳນາດເຫນືອຄຣິສຈັກ ແລະມີການຕໍ່ສູ້ອຳນາດກັບພວກເຈົ້າຊີວິດທັງຫລາຍທີ່ຢູ່ໃນປະເທດຕ່າງ ໆ ທີ່ຫາກໍ່ເກີດໃຫມ່ ຄຣິສຈັກຝ່າຍຕາວັນຕົກນັ້ນນິຍົມນະມັສການຮູບປັ້ນໃນຄຣິສຈັກ ສ່ວນຄຣິສຈັກທາງຝ່າຍຕາວັນອອກມັກນະມັສການຮູບພາບສັກສິດແທນ

<u>ຣາຊອານາຈັກໂຣມັນບໍຣິສຸດ</u> (Holy Roman Empire)

ຫລັງຈາກທີ່ຊາວປ່າເຜົ່າຕ່າງ ໆ ເຂົ້າຢຶດດິນແດນດ້ານຕາວັນຕົກຂອງມະຫາອານາຈັກໂຣມັນ ແລະໄດ້ຕັ້ງຕົວເປັນປະເທດຕ່າງ ໆ ຂຶ້ນ ທາງຝ່າຍຄຣິສຈັກໄດ້ທຳຫນ້າທີ່ອັນດີຊຶ່ງເປັນຜົນງານທີ່ສຳຄັນຄື

ໄດ້ພະຍາຍາມຮວມເອົາຊົນຊາວປ່າທີ່ເປັນປະເທດນ້ອຍ ໆ ເຫລົ່ານັ້ນໃຫ້ເຂົ້າກັນ ໂດຍການສົ່ງນັກບວດມິຊຊັນນາຣີ (Missionary) ອອກໄປປະກາດຂ່າວປະເສີດທົ່ວແວ້ນແຄວ້ນຢຸໂຣປ ເຮັດໃຫ້ເກີດຄວາມເຊື່ອໃນຄຣິສສາສນາ ແລະໃຫ້ຮຽນຮູ້ຈັກພາສາລາຕິນ ເພື່ອເກີດຄວາມເປັນອັນນຶ່ງອັນດຽວກັນ ເພາະວ່າຍຸກນີ້ຊາວປ່າຕ່າງກໍຕັ້ງຕົວປົກຄອງຕົນເອງແລະເກີດເສິກສົງຄາມຢູ່ເລີຍ ໆ ໃນເວລາດຽວກັນ ອານາເຂດທາງດ້ານຕາວັນອອກຂອງມະຫາອານາຈັກໂຣມັນກຳລັງຖືກພວກອິສລາມບຸກຣຸກຢຶດເອົາດິນແດນໄປເປັນຈຳນວນຫລາຍ

ອານາເຂດຢຸໂຣປ ຄືດິນແດນດ້ານຕາວັນຕົກຂອງມະຫາອານາຈັກໂຣມັນ ໄດ້ມີການເຄື່ອນໄຫວເພື່ອໃຫ້ດິນແດນແຖບນີ້ມີສັນຕິພາບ ເປັນປຶກແຜ່ນເຂັ້ມແຂງຫລາຍຂຶ້ນ ໂດຍການຮວມຕົວກັນເປັນສຫະພັນປະເທດ ເພື່ອວ່າແຕ່ລະປະເທດຈະໄດ້ປົກຄອງຕົນເອງຢ່າງສງົບສຸກ ບໍ່ຢາກໃຫ້ມີການທຳເສິກ ຫລື ແຍ້ງຊີງດິນແດນ ຂອງກັນແລະກັນ ດັ່ງນັ້ນຈຶ່ງໄດ້ເກີດນາມໃຫມ່ວ່າ **ຣາຊອານາຈັກໂຣມັນບໍຣິສຸດ** (Holy Roman Empire) ທັງຄຣິສຈັກແລະປະເທດ ນ້ອຍ ໆ ເຫລົ່ານີ້ໄດ້ອາສັຍອຳນາດຂອງກັນແລະກັນເຮັດໃຫ້ຢຸໂຣປເປັນຣາຊອານາຈັກໂຣມັນບໍຣິສຸດ ທີ່ຕັ້ງຢູ່ໄດ້ເປັນຣະຍະເວລານຶ່ງ ໂດຍທາງຄຣິສຈັກມີອຳນາດສັ່ງສອນປະຊາຊົນໃຫ້ໃຊ້ພາສາດຽວກັນ ເຈົ້າຊີວິດຂອງແຕ່ລະປະເທດໄດ້ໃຫ້ການຄຸ້ມຄອງແລະສ້າງປໂຍດຕໍ່ຄຣິສຈັກ ໂພບກໍຈະສວມມົງກຸດແລະມອບອຳນາດໃຫ້ແກ່ເຈົ້າຊີວິດເຫລົ່ານັ້ນ ໃຫ້ເປັນຈັກກະພັດເຫມືອນດັ່ງໃນພຣະຄັມພີເດີມ ທີ່ວ່າພຣະເຈົ້າໄດ້ມອບອຳນາດແກ່ຜູ້ເຜີຍພຣະວັຈນະຊາມູເອລ ໃຫ້ເປັນຜູ້ອອກໄປເຈີມແຕ່ງຕັ້ງດາວິດໃຫ້ເປັນເຈົ້າຊີວິດເຫນືອແຜ່ນດິນ ດັ່ງນັ້ນໂພບຈຶ່ງອາສັຍອຳນາດນີ້ເປັນຜູ້ສວມມົງກຸດຫລືເຈີມແຕ່ງຕັ້ງເຈົ້າຊີວິດທັງຫລາຍ ແຕ່ເມື່ອທັງສອງຝ່າຍຕ່າງມີອຳນາດເຕັມທີ່ ແລະຂັດຜົນປໂຍດຂອງກັນແລະກັນແລ້ວ ກໍເກີດການແຊກແຊງອຳນາດ ຫາທາງທຳລາຍກັນອີກ

ຈະເຫັນໄດ້ວ່າ ຄຣິສຈັກບໍ່ໄດ້ສັ່ງສອນພຣະຄຳຂອງພຣະເຈົ້າ ເຮັດໃຫ້ຄວາມເຊື່ອໃນພຣະເຈົ້າຈືດຈາງລົງແລະເກີດຜົນເສັຍຕໍ່ຄຣິສຈັກ ເພາະເຫດວ່າ ຜູ້ນຳຄຣິສຈັກ ຫລືໂພບຫລົງອຳນາດທາງການເມືອງແລະລືມຫນ້າທີ່ອັນແທ້ຈິງທີ່ພຣະເຈົ້າມອບໃຫ້ ຄຣິສຕຽນໂດຍທົ່ວໄປພ້ອມນັກບວດແລະຊາວບ້ານສ່ວນຫລາຍມີຄວາມເຊື່ອບໍ່ເຂັ້ມແຂງ ຄວາມຈົງຮັກພັກດີແທ້ຈິງໃນອົງພຣະຜູ້ເປັນເຈົ້າຈຶ່ງອອກມາໃນຮູບແບບຂອງພິທີສິນແລະການສວດອ້ອນວອນຫລາຍກວ່າ ແຕ່ເຖິງຢ່າງໃດກໍຕາມ ອຳນາດຂອງພວກໂພບໄດ້ມີປໂຍດໃນການຖ່ວງດຶງອຳນາດອັນຊົ່ວຮ້າຍຂອງເຈົ້າຊີວິດບາງອົງທີ່ມັກການເສິກ ອຳນາດຂອງສັນຕະປາປາຊ່ວຍບັນຄວາມເທົ່າທຸກຂອງປະຊາຊົນ ແລະຊ່ວຍໃຫ້ຢຸໂຣປໄດ້ສ້າງຣະບຽບໃນດ້ານສັງຄົມ ແລະການປົກຄອງຈົນເຖິງປັດຈຸບັນ

<u>ຊາຣາເມງມະຫາຣາຊ</u> (Charlemagne) ຄ.ສ.742-814

ເຈົ້າຊີວິດ Pepin ແຫ່ງຝຣັ່ງເສດໄດ້ສິ້ນຊີວິດໃນປີ ຄ.ສ.768 ຊາລາເມງຜູ້ເປັນໂອຣົດໄດ້ຂຶ້ນຄອງຣາຊເປັນເຈົ້າຊີວິດ ແລະທຳການປາບປາມພວກລອມບາດ ແລະຢຶດເອົາກຸງໂຣມຄືນມາໄດ້ ຊາລາເມງເປັນນັກຣົບທີ່ກ້າຫານ ສາມາດຢຶດດິນແດນເກືອບທັງຫມົດຂອງຢຸໂຣປດ້ານຕາວັນຕົກ ແລະໄດ້ຊ່ວຍໃຫ້ໂພບລີໂອທີສາມໃຫ້ອອກຈາກທີ່ຄຸມຂັງ ດັ່ງນັ້ນເພື່ອເປັນການຕອບແທນໃນ ຄ.ສ. 800

ຊາລາແມງໄດ້ໄປຢາມກຸງໂຣມ ໃນວັນຄຣິສມາດ ໂພບລີໂອທີສາມໄດ້ສວມມົງກຸດ ແລະປະກາດໃຫ້ ຊາລາແມງເປັນ **ອໍກັສຕັສ** ແຫ່ງຣາຊອານາຈັກໂຣມັນບໍຣິສຸດ ຖືວ່າເປັນມະຫາຣາຊທີ່ສືບຕຳແໜ່ງຕໍ່ຈາກ ຈັກກະພັດຄອນສະແຕນຕິນ

ຊາລາແມງມະຫາຣາຊຜູ້ຂຽນພາສາລາຕິນບໍ່ໄດ້ແລະອ່ານບໍ່ອອກ ມັກໃຫ້ຜູ້ມີການສຶກສາສູງມີຄວາມ ຮູ້ແລະສະຕິປັນຍາເປັນທີ່ປຶກສາ ແລະມັກໃຫ້ຜູ້ມີຄວາມຮູ້ອ່ານໜັງສືໃຫ້ທ່ານຟັງ ໂດຍສະເພາະຢ່າງຍິ່ງທ່ານ ມັກຟັງຂໍ້ຂຽນຂອງທ່ານອໍກັສຕິນ ທ່ານສນັບສນຸນຄຣິສຈັກແລະຄວາມເຊື່ອຂອງຄຣິສຕຽນ ການປົກຄອງຂອງ ຊາລາແມງມະຫາຣາຊໄດ້ນຳຄວາມສງົບສຸກມາສູ່ດິນແດນຕາວັນຕົກດ້ວຍຄວາມສາມາດອັນແທ້ຈິງ ສະແດງ ໃຫ້ເຫັນເຖິງການເພິ່ງພາອາສັຍຊຶ່ງກັນແລະກັນ ຣະຫວ່າງອຳນາດຂອງຈັກກະພັດແລະອຳນາດຂອງໂພບ

ເປັນທີ່ໜ້າເສັຽດາຍວ່າຫລັງຈາກສມັຍຂອງຊາລາແມງມະຫາຣາຊ ຜູ້ສືບຣາຊການຕໍ່ຈາກທ່ານ ເປັນຜູ້ອ່ອນແອບໍ່ມີຄວາມສາມາດ ແລະຣາຊອານາຈັກປະກອບດ້ວຍປະເທດນ້ອຍຫລາຍ ໆ ປະເທດໃຊ້ ພາສາພື້ນເມືອງທີ່ແຕກຕ່າງກັນ ແລະແຕ່ລະປະເທດຕ່າງກໍ່ຕ້ອງການເປັນອິສຣະປົກຄອງຕົນເອງ ດັ່ງນັ້ນ ຈັກກະພັດແຫ່ງຣາຊອານາຈັກໂຣມັນບໍຣິສຸດ ຈຶ່ງປົກຄອງແຕ່ໃນນາມເທົ່ານັ້ນ ມີອຳນາດແທ້ຈິງພຽງແຕ່ໃນ ເຢັຽຣະມັນເທົ່ານັ້ນ ຈຶ່ງໄດ້ຮັບນາມໃໝ່ວ່າ **"ຣາຊອານາຈັກເຢັຽຣະມັນບໍຣິສຸດ"** ຫລືພາຍຫລັງເອີ້ນວ່າ ສຫະພັນເຢັຽຣະມັນ ຊຶ່ງປົກຄອງໂດຍການເລືອກຕັ້ງເອົາເຈົ້າຊີວິດອົງນຶ່ງຂຶ້ນຈາກປະເທດຕ່າງ ໆ ໃນຢຸ ໂຣປມາເປັນຈັກກະພັດແຫ່ງຣາຊອານາຈັກ ແລະປົກຄອງແຕ່ພຽງໃນນາມເທົ່ານັ້ນ ບໍ່ມີອຳນາດອັນແທ້ຈິງ ແຕ່ລະປະເທດມີອຳນາດປົກຄອງຕົວເອງ ການແຍ້ງຊີງຕຳແໜ່ງເພື່ອສືບທອດຕໍ່ຈາກຊາລາແມງມະຫາ ຣາຊມີຢູ່ສເມີຈົນກະທັ້ງໄດ້ຮັບການເຍາະເຢີ້ຍວ່າເປັນ **ຣາຊອານາຈັກເຢັຽຣະມັນບໍ່ບໍຣິສຸດບໍ່ເປັນໂຣມັນ ແລະບໍ່ເປັນຣາຊອານາຈັກອີກຕໍ່ໄປ** ການສືບຕຳແໜ່ງອໍກັສຕັສໄດ້ສິ້ນສຸດລົງໃນ ຄ.ສ. 1806 ເມື່ອ ນະໂປລຽນມະຫາຣາຊຂຶ້ນຄອງອຳນາດສູງສຸດ

## <u>ການແຕກແຍກຂອງຄຣິສຈັກກຣີກ (ອອທໍດອຊ) ແລະຄຣິສຈັກລາຕິນ (ຄາໂທຣິກ)</u>

ຄຣິສຈັກຕາວັນອອກຮຽກວ່າຄຣິສຈັກກຣີກ (ອອທໍດອຊ) ສ່ວນຄຣິສຈັກຕາເວັນຕົກຮຽກວ່າ ຄຣິສ ຈັກລາຕິນຫລືຄາທໍລິກ **ການແຕກແຍກຂອງຄຣິສຈັກໄດ້ເລີ້ມຕົ້ນຕັ້ງແຕ່ ການຍ້າຍເມືອງຫລວງຈາກກຸງໂຣມ ໄປຍັງກຸງຄອນສະແຕນຕິໂນເປີລ ໂດຍທີ່ໂພບແຫ່ງກຸງໂຣມອ້າງວ່າມີອຳນາດເໜືອຄຣິສຈັກທັງປວງ ແຕ່ ວ່າຄຣິສຈັກຕາວັນອອກບໍ່ຍອມຢູ່ໃຕ້ອຳນາດຂອງສັນຕະປາປາແຫ່ງກຸງໂຣມ** ພຽງແຕ່ຍອມຮັບວ່າໂພບມີ ຖານະເທົ່າທຽມກັບສັງຄະຣາຊອົງອື່ນ ໆ ຄວາມແຕກແຍກນີ້ໄດ້ດຳເນີນມາໂດຍຕລອດຈົນເຖິງ ຄ.ສ. 1054 ສັນຕະປາປາແຫ່ງກຸງໂຣມໄດ້ສົ່ງຜູ້ແທນ ພ້ອມສານຕັດສັມພັນທະໄມຕຣີມາຍັງວິຫານເຊັນໂຊເຟັຽ ຢ່າງເປັນທາງການ ຝ່າຍຄຣິສຈັກທາງຕາວັນອອກອັນມີເພທຣິອາທ (Patriarch) ເປັນຜູ້ນຳ ກໍ່ສົ່ງ ສານຕັດສັມພັນທະພາບເປັນການຕອບແທນ ຕັ້ງແຕ່ນັ້ນມາຄຣິສຈັກກຣີກແລະຄຣິສຈັກລາຕິນກໍບໍ່ໄດ້ກ່ຽວ ຂ້ອງກັນອີກ ຄວາມແຕກຕ່າງກັນໃນຫລັກຄວາມເຊື່ອ ຣະບຽບນມັສການ ແລະກິດວິນັຍຂອງນັກບວດຣະ ຫວ່າງຄຣິສຈັກຕະວັນອອກແລະຄຣິສຈັກຕາວັນຕົກມີດັ່ງນີ້

| ຄຣິສຈັກກຣີກ (ຕາວັນອອກ) | ຄຣິສຈັກລາຕິນ (ຕາວັນຕົກ) |
|---|---|
| - ພຣະວິຍານບໍຣິສຸດມາຈາກພຣະບິດາ | - ພຣະວິຍານບໍຣິສຸດມາຈາກພຣະບິດາ ພຣະບຸດ |
| - ນັກບວດສົມຣົດໄດ້ເວັ້ນແຕ່ຜູ້ທີ່ເປັນສັງຄະຣາດ ສົມຣົດບໍ່ໄດ້ | - ບໍ່ຍອມໃຫ້ນັກບວດສົມຣົດ |
| - ບູຊາຮູບພາບ | - ບູຊາຮູບປັ້ນ |
| - ໃຊ້ແປ້ງຈີ່ທັມມະດາໃນພິທີມະຫາສນິທ | - ພິທີມະຫາສນິທ ໃຊ້ແປ້ງຈີ່ບໍ່ມີເຊື້ອ |
| - ບໍ່ມີສິລອົດອາຫານ | - ຖືສິລອົດອາຫານວັນເສົາພາຍຫລັງປ່ຽນເປັນວັນສຸກ |
| - ໄວ້ໜວດ | - ໂກນໜວດ |
| - ມີແທ່ນບູຊາດຽວ | - ມີຫລາຍແທ່ນບູຊາ |
| - ພິທີເຈີມນ້ຳມັນແຕ່ບໍ່ໄດ້ວາງມືໃສ່ເທິງຫົວ | - ພິທີວາງມືເທິງຫົວ ແລະເຈີມນ້ຳມັນຮຽກວ່າ ສິລກຳລັງ |

ສາຍເຫດອີກປະການນຶ່ງ ທີ່ເຮັດໃຫ້ຄຣິສຈັກກຣີກ ແລະຄຣິສຈັກລາຕິນແຍກອອກຈາກກັນນັ້ນກໍ່ຽວຂ້ອງກັບການເມືອງ ເພາະວ່າເມື່ອຊາວປ່າບຸກຮຸກດິນແດນສ່ວນຫລາຍທາງຕາວັນຕົກໄດ້ແຍກຕົວອອກເປັນປະເທດຕ່າງ ໆ ໃນຍຸໂຣບ ໂດຍສະເພາະຢ່າງຍິ່ງເມື່ອຣາຊອານາຈັກໂຣມັນບໍຣິສຸດໄດ້ຖືກສຖາປານາຂຶ້ນໂດຍຈັກກະພັດຊາລາແມງ (Charlemagne) ເຮັດໃຫ້ແຍກຕົວເປັນອິສຣະຈາການປົກຄອງຂອງຈັກກະພັດຕາວັນອອກແຫ່ງກຸງຄອນສະແຕນຕິໂນເປິລ ເປັນເຫດໃຫ້ຄຣິສຈັກແຍກຕົວອອກມາດ້ວຍ ແລະມາຕົກພາຍໃຕ້ອິດທິພົລແລະຄຳສຳອ້າງອຳນາດສູງສຸດຂອງ ໂພບແຫ່ງກຸງໂຣມ

<u>ສົງຄາມຄຣູເສດ</u> (Crudsades)

ຄຳວ່າ "ຄຣູເສດ" ມາຈາກຄຳວ່າ Cross ຊຶ່ງໝາຍເຖິງໄມ້ກາງແຂນ ຫລືແປລຕາມຕົວອັກສອນວ່າຕິດດ້ວຍເຄື່ອງໝາຍກາງແຂນ ພວກນັກຣົບໄດ້ເອົາຜ້າສີຕ່າງກັນ ຍິບຕິດທີ່ແຂນເສື້ອເປັນຮູບໄມ້ກາງແຂນ ມີອາວຸດຄົບຖ້ວນ ອາສາສມັກຈາກທົ່ວຣາຊອານາຈັກໂຣມັນເພື່ອທຳເສິກສັກສິດ ໃນນາມຂອງພຣະເຈົ້າ ຫວັງຈະຢຶດເອົາກຸງເຢຣູຊາເລັມແລະອຸໂມງວ່າງເປົ່າຂອງພຣະເຢຊູຄຣິສກັບຄືນມາຈາກພວກອິສລາມ ນັກຣົບທັງຫລາຍປະກອບດ້ວຍປະຊາຊົນຄົນສາມັນ ນັກບວດ ຄົນໜຸ່ມ ທະຫານ ຮວມທັງເຈົ້າຊີວິດຫລາຍ ໆ ອົງໄດ້ອອກເສິກ ແລະຍອມເສັຽສລະຊີວິດຂອງຕົນເພື່ອຫວັງວ່າຈະເອົາດິນແດນສັກສິດຊຶ່ງແຕ່ເດີມເປັນຂອງຄຣິສຕຽນ ທີ່ພວກຄຣິສຕຽນໄດ້ພາກັນໄປສແວງບຸນຍັງກຸເຢຣູຊາເລັມ ແລະຍາມອຸໂມງສັກສິດຂອງພຣະເຢຊູມາຕັ້ງແຕ່ສັຕວັດທີ 4 ໃນສມັຍຂອງຈັກກະພັດຄອນສະແຕນຕິນ

ສົງຄາມຄຣູເສດໄດ້ເກີດຂຶ້ນໃນສັຕວັດທີ 11 ແລະເກີດຂຶ້ນຫລາຍເທື່ອເປັນເວລາຍາວນານໂດຍຄຳສັ່ງຂອງໂພບ ແລະເຈົ້າຊີວິດຫລາຍອົງ ໂດຍມີສາຍເຫດສລຸບໄດ້ດັ່ງນີ້

1. ຄ.ສ.1000 ມີຜູ້ໄປຈາຣິກບຸນຍັງກຸເຢຣູຊາເລັມເພີ້ມຈຳນວນຂຶ້ນຢ່າງຫລວງຫລາຍ ເພາະມີຄວາມເຊື່ອກັນວ່າເປັນເວລາໃກ້ຈະສິ້ນໂລກ ພຣະຄຣິສກຳລັງຈະສະເດັດມາ

2. ພວກທີ່ໄປຈາຣິກບຸນໄດ້ຮັບຄວາມຍາກລຳບາກຫລາຍ ເພາະຖືກໂຈຣປຸ້ນ ແລະຖືກທຳຮ້າຍ

3. ກຸງເຢຣູຊາເລັມຖືກຢຶດໂດຍພວກອິສລາມຊາວເຕີຣກີເຜົ່າແຊລຈຸກທີ່ໂຫດຮ້າຍທີ່ສຸດ ໃນເວລາດຽວກັນອານາຈັກຕາວັນອອກກໍອ່ອນແອ ບໍ່ສາມາດຮັກສາກຸງເຢຣູຊາເລັມໄວ້ໄດ້

4. ຈັກກະພັດ ອາເລັກຊິນ ໄດ້ຂໍຮ້ອງໃຫ້ສັນຕາປາປາເອີບັນທີ 2 ຮຽກຮ້ອງໃຫ້ຄຣິສຕຽນທຳເສິກເພື່ອພຣະເຈົ້າຕໍ່ສູ້ອິສລາມ ດັ່ງນັ້ນຂບວນນັກຮົບຈຶ່ງຮວມຕົວກັນເຂົ້າເປັນກອງພົບແຫ່ງໄມ້ກາງແຂນ

<u>ສົງຄາມຄຣູເສດໄດ້ເກີດຂຶ້ນລວມທັງໝົດ 7 ຄັ້ງດັ່ງນີ້</u> (ບໍ່ນັບຄັ້ງຍ່ອຍ ໆ)

- ຄຣູເສດ ຄັ້ງທີ 1 ຄ.ສ. 1095-1099 ນຳໂດຍ ກອດແຟງແຫ່ງບູລຍອງ
- ຄຣູເສດ ຄັ້ງທີ 2 ຄ.ສ. 1147-1149 ນຳໂດຍ ຫລຸຍທີ 7 ຄອນຣາດທີ 3
- ຄຣູເສດ ຄັ້ງທີ 3 ຄ.ສ. 1189-1191 ນຳໂດຍ ເຟດເດອຣິກ, ຟີລິບ, ຣິນາຣິດ
- ຄຣູເສດ ຄັ້ງທີ 4 ຄ.ສ. 1201-1204 ນຳໂດຍ ເວັດເວີດ, ນັກບຸນຫລຸຍ
- ຄຣູເສດ ຄັ້ງທີ 5 ຄ.ສ. 1228-1229 ນຳໂດຍ ເຟດເດອຣິກທີ 2
- ຄຣູເສດ ຄັ້ງທີ 6 ຄ.ສ. 1248-1254 ນຳໂດຍ ຫລຸຍທີ 9
- ຄຣູເສດ ຄັ້ງທີ 7 ຄ.ສ. 1270-1272 ນຳໂດຍ ຫລຸຍທີ 9

**ສົງຄາມຄຣູເສດທັງ 7 ຄັ້ງມີໄຊຊະນະພຽງນ້ອຍດຽວ ແຕ່ມີຄວາມເສັຽຫາຍຫລາຍກວ່າຜົນທີ່ໄດ້ຮັບ**

| <u>ຄວາມເສັຽຫາຍ</u> | <u>ຜົນທີ່ໄດ້</u> |
|---|---|
| 1. ກຸງເຢຣູຊາເລັມຢູ່ຫ່າງໄກປ້ອງກັນໄວ້ໄດ້ຍາກ | 1. ພວກຈາຣິກບຸນໄດ້ຮັບການຄຸ້ມຄອງ |
| 2. ຜູ້ນຳແຕກແຍກຜິດກັນເອງ | 2. ຫຍຸດຢັ້ງການຮຸກຮານຂອງພວກອິສລາມ |
| 3. ທະຫານຈຳນວນຫລາຍຕ້ອງຕາຍ | 3. ເກີດຄວາມຮ່ວມມືຣະຫວ່າງຊາດ |
| 4. ຊາວປາເລສໄຕຕ້ອງຖືກຂົ່ມເຫັງ | 4. ເກີດການຕິດຕໍ່ຄ້າຂາຍຣະຫວ່າງຊາດ |
| 5. ຜູ້ນຳຄຣູເສດຫາຜົນປໂຍດໃສ່ຕົວເອງ | 5. ຄຣິສຈັກມີອຳນາດຫລາຍຂຶ້ນ |

ສົງຄາມຄຣູເສດແມ່ນວ່າຈະບໍ່ໄດ້ໄຊຊະນະຢ່າງເດັດຂາດ ຜູ້ນຳບໍ່ໄດ້ວາງແຜນການລ່ວງໜ້າໄວ້ຢ່າງຮອບຄອບຕາມທີ່ສົມຄວນ ແຕ່ບົດຮຽນຈາກສົງຄາມຄຣູເສດໄດ້ສະແດງໃຫ້ເຮົາເຫັນວ່າ ການໃຊ້ອຳນາດຂອງຄຣິສຈັກແລະເຮັດເສິກໃນນາມຂອງພຣະເຈົ້ານັ້ນ ບາງເທື່ອຜູ້ນຳຄຣິສຈັກໄດ້ຕີຄວາມໝາຍໄປຕາມຄວາມປະສົງຫລືຄວາມຄິດຂອງຕົວເອງ ໂດຍອ້າງອີງພຣະນາມຂອງອົງພຣະຜູ້ເປັນເຈົ້າມາເຮັດເສິກ ຫລືຂັດຂວາງກັນ ຊຶ່ງການກະທຳແນວນັ້ນມັກຈະສົ່ງຜົນເສັຽແກ່ຄຣິສຈັກໃນເວລາຕໍ່ມາ ເຖິງຢ່າງໃດກໍຕາມ ພຣະເຈົ້າຊົງມີຄວາມຮັກແລະຄວາມຫ່ວງໃຍຕໍ່ມະນຸດສເມີ ແມ່ນວ່າຜູ້ນຳຄຣິສຈັກໃຊ້ອຳນາດໄປໃນທາງທີ່ຜິດພຽງໃດກໍຕາມ ແຕ່ເມື່ອພິຈາຣະນາໃຫ້ດີ ໆ ແລ້ວເຮົາບໍ່ເຫັນອົງການອື່ນໃດໃນໂລກ ທີ່ໄດ້ພຍາຍາມຮັກສາຄວາມດີ ຄວາມຊອບທັມຂອງມະນຸດໂລກໄດ້ດີເທົ່າທຽມກັບອົງການຄຣິສຈັກ ຊຶ່ງຢ່າງນ້ອຍທີ່ສຸດຄຣິສຈັກໄດ້ພຍາຍາມຢ່າງເຕັມທີ່ ທີ່ຈະເປັນເກືອແລະແສງສວ່າງຂອງໂລກ ແມ່ນວ່າບາງເທື່ອຜູ້ນຳຄຣິສຈັກໄດ້ເຂົ້າໃຈຜິດ ໄດ້ນຳພາຄຣິສຈັກໃຫ້ຫລົງໄປແລະພົບກັບຄວາມເສັຽຫາຍພຽງໃດກໍຕາມ ແຕ່ວ່າພຣະເຈົ້າຜູ້ຊົງທ່ຽງທັມໄດ້ຮຽກຜູ້ຮັບໃຊ້ຂອງພຣະອົງທີ່ສັດຊື່ເຂົ້າມາຮັບໃຊ້ ເພື່ອຮັກສາແລະດຳຣົງໄວ້ຊຶ່ງຄວາມບໍຣິສຸດຂອງຄຣິສຈັກໃນແຕ່ລະຍຸກແຕ່ລະສມັຍ

ຄວາມສຳຄັນຂອງບົດຮຽນນີ້ໄດ້ເຕືອນສະຕິຂ້າພະເຈົ້າແລະທ່ານວ່າ ສັນຕິພາບບໍ່ແມ່ນການຊນະເສິກສົງຄາມ ແທ້ຈິງແລ້ວສັນຕິພາບເກີດຂຶ້ນຈາກການຮ່ວມມືຮ່ວມໃຈກັນແກ້ບັນຫາ ການຍອມຫັນໜ້າເຂົ້າປຶກສາແລະການໃຫ້ຄຳແນະນຳແກ້ໄຂບັນຫາດ້ວຍບໍຣິສຸດໃຈ ເພື່ອໃຫ້ເກີດຄວາມເຂົ້າໃຈດີຕໍ່ກັນແລະກັນ ແລະສາມາດແບ່ງສັນປັນສ່ວນອຳນາດຫລືຜົນປໂຍດໃຫ້ແກ່ກັນແລະກັນດ້ວຍຄວາມທ່ຽງທັມ ໃຫ້ເຮົາຮັບໃຊ້ພຣະເຈົ້າດ້ວຍຄວາມສັດຊື່ ໂດຍເບິ່ງຕາມແບບຢ່າງຂອງພຣະຄຣິສ ພຣະອົງຍອມເສັຽສລະຕົວຂອງພຣະອົງເພື່ອໄຖ່ບາບຂອງມະນຸດ ຂໍໃຫ້ເຮົາຢ່າໄດ້ຕິກລົງໄປໃນການຫລົງອຳນາດ ຫລືເຫັນແກ່ປໂຍດສ່ວນຕົວ ຊຶ່ງເປັນເຫດສ້າງຄວາມເສັຽຫາຍໃຫ້ແກ່ຄຣິສຈັກ ແຕ່ໃຫ້ເຮົາຖວາຍກຽດແລະຜົນປໂຍດທັງສິ້ນແດ່ພຣະເຈົ້າ ອາເມນ



ຄ.ສ.1095 ທີ່ເຄີມອນ (Clermont) ໃນປະເທດຝຣັ່ງເສສ ໂພພເອີບັນທີ 2 (Urban II) ໄດ້ປະກາດເສີກຄຣູເສດຄັ້ງທີ 1 ເພື່ອຢຶດດິນແດນສັກສິດ (Holy Land) ທີ່ກຸງເຢຣູຊາເລັມຈາກພວກ ເຕີຣ໌ກ (Turks)

# ບົດທີ 9

## ຣາຊອານາຈັກໂຣມັນເສື່ອມອຳນາດໄປ ການຢູ່ອາຣາມຂຍາຍໃຫຍ່ຂື້ນ

ໃນຣະຫວ່າງເວລາທີ່ຣາຊອານາຈັກໂຣມັນກຳລັງເສື່ອມອຳນາດລົງ ແລະກຸງໂຣມໄດ້ເສັຽດິນແດນແກ່ຊາວປ່າທີ່ບຸກຣຸກລົງມາຈາກທາງເໜືອ ດັ່ງນັ້ນດິນແດນອັນກວ້າງຂວາງຂອງຣາຊອານາຈັກໂຣມັນຈຶ່ງໄດ້ຖືກແບ່ງເຂດອອກເປັນປະເທດເລັກປະເທດນ້ອຍຕ່າງ ໆ ກັນ ເຈົ້າຊີວິດແຕ່ລະອົງຕ້ອງທຳເສິກເພື່ອຍຶດຄອງດິນແດນ ຫລືປ້ອງກັນດິນແດນຂອງຕົນເອງໄວ້ ແລະຫັນມາສົນໃຈສ້າງປະເທດຂອງຕົນໃຫ້ເຂັ້ມແຂງຫລາຍຂື້ນ ຝ່າຍໂພພແລະສັງຄະຣາດທັງຫລາຍກໍຫັນມາສົນໃຈອຳນາດທາງການເມືອງຫລາຍກວ່າການສິດສອນພຣະຄັມພີ ໂດຍເຂົ້າໜຸນຫລັງເຈົ້າຊີວິດຂອງປະເທດຕ່າງ ໆ ຫລືບໍ່ດັ່ງນັ້ນກໍເປັນສັດຕູກັບເຈົ້າຊີວິດເຫລົ່ານັ້ນຫາກວ່າເຈົ້າຊີວິດອົງໃດບໍ່ເຊື່ອຟັງ ຝ່າຍສາສນາອິສລາມກໍເຂົ້າບຸກຍຶດດິນແດນແລະຄອບຄອງປະຊາຊົນຫລາຍ ໆ ປະເທດ ບັງຄັບໃຫ້ຫັນໄປນັບຖືສາສນາອິສລາມ ໃນຣະຫວ່າງເວລາອັນສັບສົນວຸ້ນວາຍນີ້ເອງ ປະຊາຊົນຈຶ່ງຫັນໄປເພິ່ງວັດວາອາຣາມຂອງຄຣິສຕຽນ ອັນເປັນບ່ອນທີ່ຄຣິສຕຽນທັງຫລາຍພາກັນອອກບວດ ແລະເຕົ້າໂຮມກັນ ເພື່ອສຶກສາພຣະຄຳຂອງພຣະເຈົ້າ ປະຊາຊົນບໍ່ຢາກສົນໃຈການເມືອງ ແຕ່ຫລົບໜີຈາກຄວາມວຸ້ນວາຍທັງຫລາຍ ໂດຍເຂົ້າໄປຢູ່ໃນອາຣາມ ດັ່ງນັ້ນຈະເຫັນໄດ້ວ່າອຳນາດຂອງມຫາຣາຊອານາຈັກໂຣມັນກຳລັງໝົດສິ້ນໄປ ແຕ່ການຢູ່ອາຣາມຂອງຄຣິສຕຽນແຮງຂຍາຍຕົວໃຫຍ່ຂື້ນໄປກວ່າເກົ່າ

ຄວາມເຊື່ອຂອງຄຣິສຕຽນໂດຍສະເພາະຢ່າງຍິ່ງການຢູ່ອາຣາມຂອງພວກນັກບວດຄຣິສຕຽນ ໄດ້ຂຍາຍຂອບເຂດເຕີບໃຫຍ່ຫລາຍຂື້ນ ມີນັກບວດກຸ່ມຕ່າງ ໆ ເກີດຂື້ນ ວັດວາອາຣາມຂອງຄຣິສຕຽນໄດ້ເປັນສຖານທີ່ ໆ ນຳເອົາຄວາມສງົບສຸກ ເປັນສຖານທີ່ໃຫ້ການສຶກສາ ແລະມີອິດທິພົນຕໍ່ຄວາມເຊື່ອຂອງຄຣິສຕຽນ ເຖິງວ່າໃນເວລານັ້ນຈະບໍ່ເຂັ້ມແຂງໃນເຣື່ອງຄວາມເຂົ້າໃຈໃນພຣະຄັມພີຫລາຍກໍຕາມ ແຕ່ວ່າການຢູ່ອາຣາມຂອງຄຣິສຕຽນມີຄວາມເຂັ້ມແຂງຫລາຍໃນເຣື່ອງການໄຫວ້ວອນ ທ່ອງຈຳບົດສຳຄັນ ໆ ໃນພຣະຄັມພີເຊັ່ນ ຄຳອ້ອນວອນຂອງພຣະເຢຊູໃນ ມັດທາຍ 6:9-15 ຮວມເຖິງບົດເພງສັຣເສີນແລະບົດສວດອື່ນ ໆ ທີ່ພວກນັກພວດໄດ້ຂຽນຂື້ນມາພາຍຫລັງ ນອກຈາກນີ້ແລ້ວອາຣາມຂອງຄຣິສຕຽນຍັງໄດ້ເປັນບ່ອນຫລົບພັຍຂອງປະຊາຊົນໃນຍາມເສິກສົງຄາມ ເປັນສຖານທີ່ບັນເທົາຄວາມທຸກຍາກລຳບາກຂອງປະຊາຊົນໃນຍາມຂັດສົນບໍ່ມີບ່ອນເພິ່ງພາອາສັຍ ພວກນັກບວດໄດ້ສ້າງໂຮງໝໍ ສ້າງທາງເດີນ ການຣະບາຍນໍ້າ ຊ່ວຍປະຊາຊົນໃຫ້ຮູ້ຈັກການເພາະປູກແລະລ້ຽງຊີບ ສິ່ງສຳຄັນອັນໃຫຍ່ທີ່ສຸດຄື ໄດ້ພັທນາການສຶກສາໃຫ້ຈະເຣີນກ້າວໜ້າ ວັດວາອາຣາມຄຣິສຕຽນເປັນສູນຮວມຂອງວັທນະທັມ ບົດເພັງ ບົດປະພັນ ຫລັກປັດຍາ ຊຶ່ງໄດ້ຖືກບັນທຶກໄວ້ເປັນຫລັກຖານ ແລະເປັນປວັດສາດທີ່ເຮົາສາມາດນຳມາສຶກສາໄດ້ຈົນເຖິງປັດຈຸບັນ

## <u>ສຳນັກອາຣາມຄຣິສຕຽນໃນສັຕວັດທີ 3 ທີ 4</u>

### ສຳນັກຄູນີ (Cluny, ຄ.ສ. 909)

ດັ່ງທີ່ເຮົາໄດ້ສຶກສາມາແລ້ວແຕ່ເລັກນ້ອຍໃນບົດທີ 5 ຄວາມເຊື່ອຂອງພວກນັກບວດຄູນີເປັນພວກທີ່ບໍ່ເນັ້ນໜັກໃນເຣື່ອງຫລັກຂໍ້ເຊື່ອ ບໍ່ເນັ້ນໜັກໃນເຣື່ອງການສຶກສາພຣະຄັມພີ ແລະບໍ່ເນັ້ນໜັກໃນເຣື່ອງການໄຫວ້ວອນອະທິຖານເຂົ້າເຝົ້າພຣະເຈົ້າ ພວກນັກບວດຄູນີມັກເນັ້ນໜັກໃນເຣື່ອງການສົງເຄາະຊ່ວຍເຫລືອຜູ້ທຸກຍາກຫລາຍກວ່າ ແລະຖືວ່າເປັນວຽກການຫລັກໃນການຮັບໃຊ້ພຣະເຈົ້າ

ພວກນັກບວດຄຣິສຕຽນແບບຄູນີ ມີຄຳສອນເນັ້ນວ່າ ຄຣິສຈັກມີສິດອຳນາດໃນຕົວເອງ ໃນການປົກຄອງ ໃນການຈັດຣະບຽບບໍຣິຫານຄຣິສຈັກ ແລະມີອິສຣະພາບໃນການເລືອກຜູ້ນຳຄຣິສຈັກ ຄືສິດຍາພິບາລຫລືເຈົ້າອະທິການໄປຈົນເຖິງສັນຕະປາປາ ພວກຄູນີເນັ້ນໜັກວ່າຄຣິສຈັກຕ້ອງແຍກຕົວອອກຈາກອຳນາດທາງການເມືອງຢ່າເດັດຂາດ ໂດຍບໍ່ໃຫ້ເຈົ້າຊີວິດຫລືພວກຂຸນນາງມາມີອຳນາດເໜືອຄຣິສຈັກ

ອາຣາມຄຣິສຕຽນຂອງນັກບວດຄູນີໄດ້ສ້າງບ່ອນພັກເຊົາສຳລັບຜູ້ເດີນທາງໄປຕ່າງເມືອງ ໂດຍບໍ່ໄດ້ຮຽກຮ້ອງເງິນຄຳເປັນຄ່າຕອບແທນ ໂດຍຫວັງວ່າຜູ້ມາພັກອາສັຍຄ້າງຄືນຈະມີໃຈສັດທາທີ່ຈະບໍຣິຈາກຊັບຕາມໃຈ

ໃສສັດທາ ແຕ່ວ່າສຳນັກຄູນີຕ້ອງປະສົບກັບບັນຫາການລົດທຸນຢ່າງຫລວງຫລາຍ ເພາະວ່າຜູ້ມາພັກອາສັຍເອົາປຽບ ບໍ່ຖວາຍຊັບຊ່ວຍເຫລືອຄ່າໃຊ້ຈ່າຍ ດັ່ງນັ້ນພວກຄູນີຈຶ່ງຕ້ອງເອີ້ນຫາຜູ້ຮັ່ງມີແລະພວກຂຸນນາງມາບໍຣິຈາກຊັບ ເຖິງກະນັ້ນສຳນັກຄູນີກໍຍັງຄົງໂຈມຕີຕໍ່ວ່າ ພວກເຈົ້າຂຸນມູລນາຍວ່າໃຊ້ອຳນາດຫລາຍໃນການກົດຂີ່ຂົ່ມເຫັງ ແລະເອົາປຽບປະຊາຊົນຄົນສາມັນແລະຜູ້ທຸກຍາກ ສຳນັກຄູນີໄດ້ມີບົດບາດໃນການຮຽກຮ້ອງໃຫ້ເຈົ້າຊີວິດແລະພວກຂ້າຣາຊການ ໃຫ້ເອົາໃຈໃສ່ເບິ່ງແຍງຜູ້ທຸກຍາກໂດຍບໍ່ຕ້ອງສແວງຫາອຳນາດໃນເຣື່ອງການປົກຄອງຄຣິສຈັກ ສຳນັກຄູນີມີຣະບຽບກົດເກນໃຫ້ນັກບວດຖືຕົວເປັນໂສດ ແລະບໍ່ໃຫ້ນັກບວດຫລິ້ນການເມືອງ ບໍ່ໃຫ້ໃຊ້ອິດທິພົນຫລືຫາຊື້ຕຳແໜ່ງໜ້າທີ່ການເປັນຜູ້ນຳຄຣິສຈັກ ແຕ່ກົດຣະບຽບເຫລົ່ານີ້ກໍໄດ້ກາຍໄປໃນພາຍຫລັງ ພວກສຳນັກຄູນີຮູ້ນຫລັງ ໆ ກັບເຂົ້າຫາການເມືອງຈົນລືມຈຸດປະສົງຕົ້ນເດີມເສັຽ

### ກຸ່ມນັກບວດຄຣິສຕຽນຊິສເຕີຊຽນ (Cistercians, ຄ.ສ.1098)

ຄນະນີ້ກໍຕັ້ງຂຶ້ນ ເພື່ອສົ່ງເສີມຄວາມເຂັ້ມແຂງໃນກົດວິນັຍຂອງພວກເບເນດິກແລະພວກຄູນີ ທີ່ກຳລັງອ່ອນແອ ກຸ່ມນີ້ໄດ້ນາມມາຈາກເມືອງໄຊທ໌ອກ (Citeaux) ໃນຝຣັ່ງເສດຊຶ່ງເປັນຕົ້ນກຳເນີດຂອງນັກບວດຄຣິສຕຽນກຸ່ມນີ້ ພວກນີ້ນຸ່ງຫົ່ມຊຸດຂາວດ້ວຍແພ (ຜ້າດິບ) ຈົນຖືກເອີ້ນວ່າ **ນັກບວດຊຸດຂາວ** ນັກບວດພວກນີ້ອຸທິດຕົວໃນການອະທິຖານສຶກສາພຣະຄັມພີແລະເຮັດໄຮ່ນາຫລາຍຂຶ້ນ ກຸ່ມນັກບວດຄຣິສຕຽນຊິສເຕີຊຽນໄດ້ໂຈມຕີພວກນັກບວດຄູນີວ່າ ຫລິ້ນການເມືອງແລະສົນໃຈແຕ່ງານສົງເຄາະຄົນທຸກຍາກ ມັກຊອກຫາກຽດແລະຊື່ສຽງເພື່ອສະແດງວ່າໄດ້ເຮັດສິ່ງດີງາມຕໍ່ສັງຄົມ ພວກຄູນີບໍ່ມັກອະທິຖານໄຫວ້ວອນ ບໍ່ມັກສຶກສາພຣະຄັມພີ ບໍ່ເຮັດວຽກໄຮ່ນາ ແຕ່ມັກມີອິດທິພົນແລະຫລິ້ນການເມືອງເຂົ້າພວກກັບພວກຂຸນນາງທົ່ວຢຸໂຣບ ດັ່ງນັ້ນພວກນັກບວດຄຣິສຕຽນຊິສເຕີຊຽນຈຶ່ງໄດ້ປ່ຽນແປງຣະບຽບການຄອງຕົວຂອງພວກນັກບວດຄຣິສຕຽນເສັຽໃໝ່ ໃຫ້ເປັນພວກທີ່ສົນໃຈອ່ານພຣະຄັມພີ ສົນໃຈການໄຫວ້ວອນຫລາຍຂຶ້ນ ແລະໄດ້

ເຮັດໄຮ່ເຮັດນາແລະລ້ຽງສັດ ເພື່ອເປັນການສົງເຄາະຊ່ວຍຊາວບ້ານ ຈົນໄດ້ມີຜູ້ມອບຖວາຍທີ່ດິນເປັນຈຳນວນຫລາຍ ມີການຂະຫຍາຍກິຈການຄ້າຂາຍຂົນແກະຈົນເກີດຮັ່ງມີ ແລະຕ້ອງກ່ຽວຂ້ອງກັບທຸຣະກິຈການຄ້າໄປໃນທີ່ສຸດ ຊຶ່ງຜິດໄປຈາກເປົ້າຫມາຍເດີມທີ່ຕ້ອງການອອກບວດໄປຢູ່ໃນອາຣາມອັນເປັນບ່ອນສັນໂດດ

**ນັກບວດຄຣິສຕຽນເບີນາດ** (Burnard, 1090-1153)

ທ່ານເບີນາດເຄີຍເປັນຫົວຫນ້າສຳນັກບວດຄຣິສຕຽນຊິສເຕີຊຽນ ແຕ່ທ່ານໄດ້ແຍກຕົວອອກມາຕັ້ງສຳນັກຂອງຕົນເອງ ທ່ານເບີນາດເປັນນັກບວດຫນຸ່ມທີ່ມີອິດທິພົລນຳເອົາຄົນຫນຸ່ມ ໆ ເຂົ້າບວດຈຳນວນຫລາຍ ກຸ່ມນັກບວດຂອງທ່ານໄດ້ສົນໃຈທາງດ້ານສິລປະ ການກໍ່ສ້າງ ແລະອັນະກັມຕ່າງ ໆ ໄດ້ດັດແປງບົດເພງພາສາລາຕິນອອກເປັນພາສາຕ່າງ ໆ ແລະຄັດລອກຫນັງສືໂບຮານ

ທ່ານເບີນາດເປັນຜູ້ເຄັ່ງສາສນາມາແຕ່ຍັງນ້ອຍ ແລະໄດ້ອຸທິດຕົວຕໍ່ພຣະແມ່ມາຣີອາເພື່ອຮັບໃຊ້ພຣະເຈົ້າ ທ່ານເກີດໃນຄອບຄົວທີ່ຮັ່ງມີຢູ່ທາງຕອນໃຕ້ຂອງຝັ່ງເສດ ເມື່ອທ່ານເຂົ້າເປັນນັກບວດຄຣິສຕຽນນັ້ນ ໄດ້ມີຫມູ່ສຫາຍຕິດຕາມເຂົ້າບວດນຳທ່ານຫລາຍກວ່າ 30 ຄົນ ທ່ານຈຶ່ງໄດ້ຮັບຕຳແຫນ່ງເປັນຫົວຫນ້າສຳນັກຂອງຄນະຊິດເຕີຊຽນໂດຍໄວ ທ່ານໄດ້ຂຍາຍອາຣາມອອກໄປຫລາຍບ່ອນ ທ່ານມີຊື່ສຽງ ມີອິດທິພົນ ທ່ານເປັນຜູ້ທີ່ມີຄວາມສາມາດຫລາຍ ແຕ່ໃນທີ່ສຸດກໍຫລີບຫນີເຣື້ອງການເມືອງບໍ່ພົ້ນ ທ່ານໄດ້ເຂົ້າພວກກັບສັນຕະປາປາອິນໂນເຊນທີ 2 (Innocent II) ແລະໃຊ້ອິດທິພົນທາງສາສນາເຂົ້າບີບບັງຄັບແລະທຳລາຍຜູ້ນຳບາງຄົນ ຈະເຫັນໄດ້ວ່າ ແມ່ນວ່າທ່ານເບີນາດຕັ້ງໃຈແຕ່ເດັກທີ່ຈະຮັບໃຊ້ພຣະເຈົ້າ ແລະແຍກຕົວອອກຈາກຄວາມຍຸ່ງຍາກຂອງສັງຄົມ ແຕ່ເມື່ອໄດ້ອຳນາດແລະມີອິດທິພົນແລ້ວກໍເກີດຫລົງຕົວເຂົ້າໄປໃນເຣື້ອງການເມືອງອີກ ອັນນີ້ຫນ້າຈະເປັນບົດຮຽນແກ່ເຮົາທີ່ເປັນຜູ້ນຳໃນປັດຈຸບັນວ່າຫາກວ່າມີຊື່ສຽງແລະອິດທິພົນແລ້ວກໍຕາມ ເຮົາຍັງຕ້ອງຖ່ອມໃຈຖວາຍກຽດແດ່ພຣະເຈົ້າ ແລະບໍ່ຕ້ອງເສັຽຕົວແກ່ການເມືອງເປັນເດັດຂາດ

**ກຸ່ມນັກບວດຄຣິສຕຽນແຟນຊິສແຄນ** (Franciscans)

ກຸ່ມສຳນັກແຟນຊິສແຄນ ໄດ້ກໍ່ຕັ້ງຂຶ້ນໂດຍນັກບວດຜູ້ມີນາມວ່າ ແຟນຊິສແຫ່ງອັສຊີຊີ (Francis of Assisi) ທ່ານເກີດໃນ ຄ.ສ.1181 ແລະສິ້ນຊີວິດໃນ ຄ.ສ.1226 ບິດາຂອງທ່ານພໍ່ຄ້າຜ້າແພທີ່ຮັ່ງມີໃນເມືອງອັສຊີຊີ ເມື່ອຕອນທີ່ທ່ານແຟນຊິສຍັງເປັນຫນຸ່ມຢູ່ ທ່ານຮັ່ງມີຫລາຍແລະໄດ້ໃຊ້ຊີວິດເອົາແຕ່ກິນດື່ມມ່ວນຊື່ນ ເສເພ ແຕ່ເມື່ອເວລາຜ່ານໄປແລ້ວກໍຮູ້ສຶກເບື່ອຫນ່າຍຊີວິດທີ່ບໍ່ມີຄວາມຫມາຍ ແມ່ນວ່າມີງານລ້ຽງຢູ່ຕໍ່ຫນ້າກໍບໍ່ເຮັດໃຫ້ອີ່ມໃຈ ບໍ່ນານຕໍ່ມາໄດ້ມີສຫາຍພົບລາວນັ່ງຢູ່ແຄມທາງ ເມົາແລະຈົ່ມເສັຽໃຈເບື່ອຫນ່າຍຕໍ່ຊີວິດຂອງຕົນ ແລະຕໍ່ມາທ່ານໄດ້ຕັດສິນໃຈເຂົ້າບວດໃນສຳນັກບວດຄຣິສຕຽນ ທ່ານໄດ້ຍ້າຍໄປຢູ່ຫລາຍສຳນັກ ແຕ່ກໍບໍ່ໄດ້ເຮັດໃຫ້ທ່ານສະງົບສຸກທາງໃຈ ເພາະເຫັນແຕ່ຄົນຫລິ້ນການເມືອງແລະແຍ່ງຊີງອຳນາດກັນ ໃນທີ່ສຸດທ່ານຈຶ່ງມາຕັ້ງສຳນັກບວດຄຣິສຕຽນຂອງຕົນເອງ

ສຳນັກບວດແຟນຊິສແຄນໄດ້ເນັ້ນຫນັກເຖິງກົດຣະບຽບການໃຊ້ຊີວິດຂອງນັກບວດ ໃຫ້ຢູ່ຢ່າງຍາກຈົນທີ່ສຸດ ບໍ່ໃຫ້ຄອບຄອງສົມບັດ ບໍ່ມີສຳນັກຫລືອາຣາມງາມ ໆ ແຕ່ອາສັຍຕາມຂ້າງແຄມທາງ ແລະມັກ

ໄປອາສັຍໃນເຮືອນຮ້າງທີ່ຢູ່ນອກເມືອງ ມັກອອກຂໍທານລ້ຽງຊີພໄປມື້ນຶ່ງ ໆ ຂໍທານໄປຊ່ວຍຄົນທຸກ ງານຫລັກຂອງນັກບວດແຟນຊິສກັນ ຄື ຊ່ວຍຮັກສາເບິ່ງແຍງຄົນເຈັບ ຄົນໂຣຄເຮື້ອນ ຄົນຂ້າງຖນົນ ທີ່ບໍ່ມີບ່ອນຢູ່ ບໍ່ມີອາຫານກິນ ໂດຍການໄປຂໍທານ ແລະຊ່ວຍເກັບສົບຄົນຕາຍບໍ່ມີຍາດໄປຝັງ ຈົນໄດ້ຮັບນາມເອີ້ນພວກນີ້ວ່າ "ນັກບຸນຊຸດເທົາ" ເພາະວ່າມັກນຸ່ງຊຸດສີເທົາເກົ່າ ໆ ພວກນັກບວດກຸ່ມນີ້ເນັ້ນເຣື່ອງການອ້ອນວອນຈາກຈິດໃຈ ດັ່ງຕົວຢ່າງ "ຄໍາອະທິຖານຂອງທ່ານແຟນຊິສແຫ່ງອັສຊີຊີ" ທີ່ມີຊື່ສຽງຫລາຍທີ່ສຸດ ແລະເປັນທີ່ຮູ້ຈັກກັນຈົນເຖິງທຸກມື້ນີ້

### "ຄໍາອະທິຖານຂອງທ່ານແຟນຊິສແຫ່ງອັສຊີຊີ"

*ຂ້າແຕ່ພຣະເຈົ້າ ຂໍຊົງປັ້ນຂ້ານ້ອຍໃຫ້ເປັນເຄື່ອງມືແຫ່ງສັນຕິສຸກ*
*ບ່ອນໃດມີຄວາມກຽດຊັງ ຂໍຂ້ານ້ອຍຫວ່ານຄວາມຮັກ*
*ບ່ອນໃດມີຄວາມບາດຫມາງ ຂໍຂ້ານ້ອຍຫວ່ານການຍົກໂທດ*
*ບ່ອນໃດມີການແຕກຮ້າວ ຂໍຂ້ານ້ອຍຫວ່ານການສາມັກຄີທັມ*
*ບ່ອນໃດມີການເຂົ້າໃຈຜິດ ຂໍຂ້ານ້ອຍຫວ່ານຄວາມຈິງ*
*ບ່ອນໃດມີການສົງສັຍ ຂໍຂ້ານ້ອຍຫວ່ານຄວາມເຊື່ອ*
*ບ່ອນໃດມີຄວາມທໍ້ໃຈ ຂໍຂ້ານ້ອຍຫວ່ານຄວາມຫວັງ*
*ບ່ອນໃດມີຄວາມມືດ ຂໍຂ້ານ້ອຍຫວ່ານຄວາມສວ່າງ*
*ບ່ອນໃດມີຄວາມເສົ້າໂສກ ຂໍຂ້ານ້ອຍຫວ່ານຄວາມຍິນດີ*
*ຂໍຢ່າໃຫ້ຂ້ານ້ອຍສແວງຫາຄວາມຮັກ ແຕ່ໃຫ້ຂ້ານ້ອຍຮູ້ຈັກຮັກຜູ້ອື່ນ*
*ໃຫ້ຂ້ານ້ອຍຮູ້ຈັກເສັຍສລະໃຫ້ຜູ້ອື່ນ ດັ່ງທີ່ຂ້ານ້ອຍໄດ້ຮັບຈາກພຣະອົງ*
*ໂດຍກາຍຍົກໂທດຜູ້ອື່ນ ຂ້ານ້ອຍຈຶ່ງໄດ້ຮັບການຍົກໂທດຈາກພຣະອົງ*
*ແລະໂດຍການເສັຽສລະຕົວເອງຍອມຕໍ່ພຣະອົງ ຂ້ານ້ອຍຈຶ່ງໄດ້ຊີວິດທີ່ຖາວອນເປັນນິດ*

ອາເມນ

Lord, make me an instrument of Thy peace.
Where ther is hate, may I bring love;
Where offense, May I bring pardon;
May I bring union in place of discord;
Truth, replacing error;
Faith, where once there was doubt;
Hope, for despair;
Light, where was darkness;
Joy to replace sadness.
Make me not to so crave to be loved as to love.
Help me to learn that in giving I may received;
In forgetting self, I may find life eternal. Amen.

St. Francis of Assisi

## ກຸ່ມນັກບວດຄຣິສຕຽນໂດມິນິແຄນ (Dominican)

ນັກບວດກຸ່ມນີ້ໄດ້ກໍ່ຕັ້ງຂຶ້ນໂດຍທ່ານໂດມິນິກ (Dominic, ຄ.ສ.1170-1221) ທ່ານເປັນຊາວສະເປນ ທີ່ມາຈາກຕະກູນຂຸນນາງທີ່ຮັ່ງມີແລະມີການສຶກສາສູງ ທ່ານເຫັນວ່ານັກບວດຄຣິສຕຽນສຳນັກອື່ນ ໆ ບໍ່ມີຄວາມຮູ້ ບໍ່ສົນໃຈຮຽນ ທ່ານຈຶ່ງໄດ້ຕັ້ງສຳນັກບວດຂອງທ່ານຂຶ້ນມາ ໂດຍເນັ້ນເຣື່ອງການສຶກສາເປັນເອກ ທັງວິຊາຄວາມຮູ້ຝ່າຍໂລກແລະຝ່າຍສາສນາ ດັ່ງນັ້ນຈຶ່ງເຫັນໄດ້ວ່ານັກບວດຄຣິສຕຽນໂດມິນິແຄນມັກຈະເປັນຄຣູອາຈານຢູ່ທົ່ວຢູໂຣບ ມັກຕັ້ງໂຮງຮຽນແລະວິທຍາລັຍທົ່ວໄປ ກິດວິນັຍຂອງສຳນັກໂດມິນິແຄນໄດ້ແຜ່ຜາຍອອກໄປທົ່ວຢູໂຣປ ແລະນັກບວດໂດມິນິແຄນນີ້ມັກທ່ອງທ່ຽວໄປ ເພື່ອເທສນາໃຫ້ຄົນກັບໃຈແລະດຳເນີນຊີວິດໃນຄວາມເຊື່ອຢ່າງເຄັ່ງຄັດທີ່ສຸດ ພວກນີ້ນຸ່ງຫົ່ມຊຸດດຳ ຈຶ່ງໄດ້ຮັບນາມວ່າ **ນັກບວດຊຸດດຳ** ມີພວກແມ່ຍິງເຂົ້າມາບວດນຳໃນກຸ່ມນີ້

ນັກບວດຂອງກຸ່ມແຟນຊິສແຄນ ແລະໂດມິນິແຄນໄດ້ຮັບການຂະໜານນາມວ່າ **ສະຫາຍນ້ອຍຂອງຄົນທຸກ** (Friars) ໂດຍມີຄຳຂວັນກ່າວກັນວ່າ **ຜູ້ທຸກຍາກຢູ່ທີ່ໃດສະຫາຍນ້ອຍຈະໄປບັນເທົາທຸກຢູ່ທີ່ນັ້ນ**

## ຜົນດີຜົນເສັຽຂອງການຂຍາຍອາຣາມຄຣິສຕຽນ

ເຮົາຕ້ອງຍອມຮັບວ່າ ໃນຣະຫວ່າງເວລາແຫ່ງຄວາມສັບສົນທາງການເມືອງ ການກໍ່ຕັ້ງປະເທດຂຶ້ນໃໝ່ຂອງຊາວປ່າ ທີ່ບຸກຍຶດເອົາດິນແດນແຫ່ງຣາຊອານາຈັກໂຣມັນໄວ້ໄດ້ ແລະການສູນເສັຽດິນແດນແກ່ພວກອິສລາມ ໃນຍາມນີ້ເອງຄຣິສຕຽນຜູ້ຢູ່ອາຣາມ ຕ່າງເປັນນັກບວດທີ່ສລະໂລກແລ້ວ ເປັນພວກດຽວທີ່ເປັນຜູ້ອອກໄປປະກາດຂ່າວປະເສີດຂອງພຣະເຢຊູຄຣິສ ຜົນງານແລະຄຸນຄວາມດີມີຫລວງຫລາຍສັນຕະປະປາທີ່ດີບາງອົງກໍໄດ້ສົ່ງເສີມ ໂດຍສົ່ງນັກບວດເຫລົ່ານີ້ ໃຫ້ເປັນມິຊຊັນນາຣີອອກໄປປະກາດຕາມປະເທດຕ່າງ ໆ ທີ່ຫາກໍເພິ່ງເກີດຂຶ້ນໃໝ່ ນັກບວດເຫລົ່ານີ້ໄດ້ຊ່ວຍປະຊາຊົນ ຄົນຊາວບ້ານທີ່ທຸກຍາກຈົນກະທັ່ງປະເທດທັງຫລາຍໃນຢູໂຣປໄດ້ເປັນປະເທດຄຣິສຕຽນອັນເຂັ້ມແຂງ ແລະສົ່ງຜົນສະທ້ອນໂດຍການສົ່ງມິຊຊັນນາຣີໄປປະເທດຕ່າງ ໆ ທົ່ວໂລກ ຈົນເຖິງເອເຊັຽ ອາເມຣິກາເໜືອ ແລະອາເມຣິກາໃຕ້ ຍ້ອນຜົນມາຈາກຄວາມຕັ້ງໃຈຈິງແລະການຍອມເສັຽສລະຂອງນັກບວດຄຣິສຕຽນທັງຫລາຍ

ເຖິງວ່າຄຸນຄວາມດີຂອງການຢູ່ອາຣາມຄຣິສຕຽນ ໄດ້ສົ່ງຜົນດີຫລາຍປະການຕໍ່ແຜ່ນດິນຂອງພຣະເຈົ້າ ຕໍ່ຄຣິສຈັກແລະປະຊາຊົນທັງຫລາຍ ແຕ່ວ່າຊີວິດການຢູ່ອາຣາມຂອງພວກນັກບວດກໍສົ່ງຜົນເສັຽຄືກັນຂໍ້ເສັຽກໍຄືການຍ້ອງຍໍຊີວິດທີ່ເປັນຄົນໂສດ ບໍ່ແຕ່ງງານວ່າ ເປັນຊີວິດທີ່ສູງ ບໍຣິສຸດ ໜ້ານັບຖືກວ່າຊາວບ້ານທີ່ມີຄອບຄົວ ອັນເປັນສິ່ງຜິດຕໍ່ທັມຊາດ ແລະພຣະປະສົງຂອງພຣະເຈົ້າ ຊີວິດການຢູ່ອາຣາມໄດ້ຊັກນຳໃຫ້ຄົນຈຳນວນຫລາຍປະຖິ້ມຄອບຄົວ ຖິ້ມການຮັບຜິດຊອບຕໍ່ປະເທດຊາດ ມີຄົນຈຳນວນຫລາຍທີ່ເຂົ້າບວດຢູ່ໃນອາຣາມເພາະຄວາມຄ້ານ ຂາດການຮັບຜິດຊອບຕົວເອງ ຫລືບໍ່ຢາກທຳມາຫາກິນ ເພາະວ່າໃນສມັຍຕໍ່ ໆ ມາ ວັດອາຣາມຄຣິສຕຽນມີສົມບັດຫລາຍ ເພາະວ່າປະຊາຊົນໄດ້ອຸທິດ ແລະຍົກທີ່ດິນໃຫ້ເພື່ອຜົນບຸນແກ່ຄົນທີ່ຕາຍໄປ ນອກຈາກນີ້ແລ້ວພວກນັກບວດບາງຄົນຄ້ານຫລາຍ ບໍ່ຍອມເຮັດວຽກງານອ້າງຕົວວ່າເປັນນັກສຶກສາທາງທັມ ແຕ່ບາງຄັ້ງກໍເລີ້ມເຮັດບາບ ມີການງົດເວັ້ນການເສັຽພາສີ ເຮັດໃຫ້ເກີດເປັນພາຣະທາງສັງຄົມ ຫລືຊາວບ້ານທີ່ຕ້ອງເສັຽພາສີຫລາຍຂຶ້ນເພື່ອຮັກສາບຳຣຸງວັດອາຣາມເຫລົ່ານີ້ ເປັນ

ເຫດໃຫ້ປະຊາຊົນເລີ່ມຂາດຄວາມເຫລື້ອມໃສສັດທາ ແລະມາຈົນເຖິງສັດຕະວັດທີ 15, 16 ຈະເຫັນໄດ້ວ່າອາຣາມຄຣິສຕຽນມີຄວາມຕົກຕໍ່າທີ່ສຸດ ເພາະວ່າໄດ້ໃຊ້ວິທີການບີບບັງຄັບ ແລະເອົາປຽບປະຊາຊົນໃນທຸກດ້ານ ໂດຍສະເພາະຢ່າງຍິ່ງໃນຢູໂຣບພາກເຫນືອ ຈົນກະທັ້ງການປະຕິຮູປສາສນາຄຣິສໄດ້ເລີ້ມກໍ່ຕົວຂຶ້ນ ເຮັດໃຫ້ການຢູ່ອາຣາມແບບຄຣິສຕຽນນີ້ຈາງຫາຍໄປ

**ເຣື້ອງນັກບຸນ** (Saints)

ຄໍາອ້າງອີງເຣື້ອງນັກບຸນນັ້ນໄດ້ມາຈາກ 3 ແຫລ່ງດ້ວຍກັນ ຄື

1. ມີຜູ້ອ້າງອີງເອົາພຣະຄັມພີມາສອນວ່າ ພຣະຄັມພີໄດ້ເວົ້າເຖິງເຣື້ອງນັກບຸນຊຶ່ງໃນພຣະຄັມພີສບັບພາສາອັງກິດໃຊ້ຄໍາວ່າ Saints ຕາມທີ່ຄຣິສຈັກຄາທໍລິກໄດ້ແປເປັນພາສາໄທຍວ່າ "**ນັກບຸນ**" ແຕ່ພາຍຫລັງໄດ້ມີການແປໃຫມ່ໂດຍຄຣິສຈັກໂປເທັສເຕັນ ດັ່ງນັ້ນຄໍາໃນພຣະຄັມພີພາສາໄທຍໄດ້ໃຊ້ຄໍາວ່າ "**ທັມມິກຊົນ**" ແທນຄໍາວ່ານັກບຸນ ຫລືຕາມຢ່າງໃນພາກພາສາລາວໃຊ້ຄໍາວ່າ "**ຊອບທັມ**" ແລະ "**ໄພ່ພົນຂອງພຣະເຈົ້າ**" ແທນຄໍາວ່າ "ນັກບຸນ" ຕົວຢ່າງໃນພຣະຄັມພີທີ່ມີຜູ້ອ້າງອີງເຖິງເຣື້ອງນັກບຸນ ຄືປະຖົມການ 18:16-31 ບົດເພງສັນລະເສີນ 31:23 ກິຈການ 9:32, 41 ແລະຍັງອ້າງອີງວ່າອາຈານໂປໂລໄດ້ໃຊ້ຄໍາວ່າ "ນັກບຸນ" (Saints) ຄືກັບຕົວຢ່າງໃນເອເຟໂຊ 2:19 ເປັນຕົ້ນ ຂໍ້ຄວາມຄິດເຫັນນີ້ເນື່ອງມາຈາກການແປຄໍາໃນພາສາຕ່າງ ໆ ຫລາຍກວ່າເປັນຫລັກສາສນາສາດຫລືຄໍາສອນອັນແທ້ຈິງ ຄໍາແປພາສາລາວທີ່ວ່າ "ຜູ້ຊອບທັມ" ນັ້ນຄວນຈະເປັນຄໍາທີ່ຖືກຕ້ອງ ກົງກັນກັບຄວາມຫມາຍອັນດັ່ງເດີມທີ່ພຣະຄັມພີກ່າວເຖິງ

2. ຄວາມເຊື່ອຖືເຣື້ອງນັກບຸນ ຕາມຄວາມຄິດຂອງຄຣິສຈັກໂຣມັນຄາທໍລິກແລ້ວ ຖືວ່າເປັນພວກນັກບວດຫລືຜູ້ຮັບໃຊ້ພຣະເຈົ້າຢ່າງສັດຊື່ ທີ່ຍອມເສັຽສລະເປັນແບບຢ່າງແກ່ມະນຸດໃນໂລກນີ້ ໂດຍການເຮັດຄຸນງາມຄວາມດີຢ່າງມີມາຕາຖານສົມຄວນແກ່ການເຄົາຣົບນັບຖື ຄຣິສຕຽນຄາທໍລິກຖືວ່າພວກນັກບຸນທີ່ຕາຍໄປນັ້ນຈະໄດ້ຢູ່ໃກ້ກັບພຣະເຈົ້າທີ່ສຸດ ແລະຈະເປັນຜູ້ທູລຂໍອ້ອນວອນຕໍ່ພຣະເຈົ້າເພື່ອມະນຸດໃນໂລກນີ້ ແລະທູນຂໍເພື່ອວິນຍານມະນຸດທີ່ຕົກໄປໃນໄຟຊໍາຣະ (Purgatory) ຄວາມເຊື່ອຖືໃນພວກນັກບຸນນີ້ໄດ້ແຜ່ຂຍາຍຂຶ້ນເລີຍ ໆ ຈົນກະທັ່ງບໍ່ສາມາດແຍກອອກຈາກການນມັສການພຣະເຈົ້າ ແລະໄດ້ມີການປັ້ນແຕ່ງຮູບປັ້ນຂອງນັກບຸນເອົາເຂົ້າມາໄວ້ໃນຄຣິສຈັກຢູ່ນໍາຮູບປັ້ນຂອງພຣະເຢຊູ ຮູບປັ້ນນາງມາເຣັຽ ຮູບປັ້ນໂຢເຊຟ ແລະຮູບປັ້ນອັກສາວົກຜູ້ສໍາຄັນ ໆ ຫລາຍທ່ານ ເຮັດໃຫ້ມີເປັນຮູບປັ້ນເຄົາຣົບຢູ່ໃນຄຣິສຈັກຄາທໍລິກ ຄວາມເຊື່ອຖືຕາມແບບຄາທໍລິກນີ້ ສັນນິຖານວ່າມາຈາກຄວາມຄິດຂອງຊາວປ່າທີ່ກາຍມາເປັນຄຣິສຕຽນ ດ້ວຍວ່າແຕ່ເດີມນັ້ນພວກຊາວປ່າໄດ້ເຊື່ອຖືເຣື້ອງເທພເຈົ້າຫລາຍອົງ ແລະເມື່ອມາເປັນຄຣິສຕຽນຈຶ່ງຍັງມີຄວາມຄິດແນວເກົ່າຕິດມາ ແລະແຕ່ງຕັ້ງນັກບຸນຂຶ້ນ ເພື່ອຕົນຈະໄດ້ໄຫວ້ວອນຂໍ ຈົນບໍ່ອາດສາມາດແຍກອອກຈາກກັນຣະຫວ່າງການນມັສການພຣະເຈົ້າ ກັບການນັບຖືນັກບຸນວ່າມີຄວາມແຕກຕ່າງກັນຫລາຍທີ່ສຸດ

3. ຕາມແນວຄວາມເຊື່ອຂອງຝ່າຍໂປເທັສເຕັນນັ້ນ ຜູ້ຊອບທັມຫລືວິສຸດທິຊົນແມ່ນບຸຄຄົນທີ່ພຣະເຈົ້າໄດ້ຕາຍໄຖ່ບາບແລະຊ່ວຍໃຫ້ຣອດພົ້ນ ດັ່ງນັ້ນຄຣິສຕຽນທີ່ຮັບການໂຜດໃຫ້ພົ້ນໂດຍຮັບການຊໍາຣະຈາກພຣະໂລຫິດຂອງພຣະເຢຊູຄຣິສ ຈຶ່ງເປັນຜູ້ຊອບທັມ ຫລືເປັນຜູ້ບໍຣິສຸດໃນທາງຂອງພຣະເຈົ້າ ບຸກຄົນ

ເຫລົ່ານີ້ຈະເຣີນແລະໃຫຍ່ຂຶ້ນຕາມແບບຢ່າງຂອງພຣະເຢຊູ ເຊື່ອຟັງພຣະຄຳແລະຮັບການຊົງນຳຈາກອົງພຣະວິນຍານບໍຣິສຸດ ເປັນໄພ່ພົນ (Saints) ຂອງພຣະເຈົ້າ ດັ່ງນີ້ແລ້ວໃນຄວາມຄິດຂອງໂປເຕັສເຕັນທຸກຄົນທີ່ເຊື່ອກໍເປັນຄົນຮັບການຊຳຣະແລ້ວ (Sanctification) ແລະເປັນໄພ່ພົນອັນຊອບທັມ (Saints) ຂອງພຣະເຈົ້າ (ໂຣມ 1:7) ຣວມໄປເຖິງຜູ້ທຸກຍາກທັງຫລາຍທີ່ເຊື່ອໃນພຣະເຢຊູຄຣິສກໍເປັນໄພ່ພົນອັນບໍຣິສຸດ (Saints) ຂອງພຣະເຈົ້າຄືກັນ ໂຣມ 15:26 ອີກທັງຜູ້ທີ່ຮັບໃຊ້ບົວຣະບັດຜູ້ອື່ນ 2 ໂກຣິນໂທ 8:4 ແລະຜູ້ທີ່ຕັ້ງໝັ້ນຄົງໃນຄວາມບໍຣິສຸດ ຈົນກວ່າພຣະເຢຊູຈະສະເດັດກັບຄືນມາໃຫມ່ພ້ອມກັບພວກໄພ່ພົນ (Saints) ທັງໝົດຂອງພຣະອົງ

ດັ່ງນີ້ໃນຄວາມເຊື່ອຂອງໂປເຕັສເຕັນ Saints ຫລືນັກບຸນ ຈຶ່ງເປັນໄພ່ພົນຂອງພຣະເຈົ້າ ເປັນຜູ້ໄດ້ຮັບການຊົງໄຖ່ບາບຊຳຣະແລ້ວ ບໍ່ແມ່ນຜູ້ມີສິດທິເທົ່າທຽມກັບພຣະເຈົ້າ ເຮົາຈຶ່ງບໍ່ຂາບໄຫວ້ວັນມັສການນັກບຸນ (Saints) ແຕ່ເຮົາຍັງອງຍໍເຫັນຄຸນຄວາມດີ ທີ່ຄຣິສຕຽນເຫລົ່ານັ້ນຍອມເສັຽສລະແລະຮັບໃຊ້ພຣະເຈົ້າດ້ວຍຄວາມສັດຊື່ ແລະເຮົາຮຽນຮູ້ຈັກເອົາໄວ້ເປັນແບບຢ່າງຫລາຍກວ່າການທີ່ຈະອ້ອນວອນເຖິງນັກບຸນແທນພຣະເຈົ້າ ເພາະວ່າຄຳອ້ອນວອນຂອງເຮົາສາມາດໄປເຖິງພຣະເຈົ້າໄດ້ໂດຍກົງໂດຍຜ່ານທາງພຣະເຢຊູຄຣິສເຈົ້າ ອາເມນ

**ມະຫາວິທຍາລັຍ ແລະຣະບົບປຣັຊຍາ**

ມະຫາວິທຍາລັຍໄດ້ເກີດຂຶ້ນໃນຍຸກກາງນີ້ ອັນເປັນຜົນຈາກຄວາມຈະເຣີນກ້າວໜ້າດ້ານການສຶກສາຂອງພວກນັກບວດຄຣິສຕຽນທີ່ຢູ່ອາຣາມ ຊຶ່ງເຮົາໄດ້ຮູ້ຈັກແລ້ວວ່າໂຮງຮຽນໄດ້ເກີດຂຶ້ນມາເປັນເວລາດົນນານຢູ່ໃນອາຣາມຄຣິສຕຽນ ແລະມີອິດທິພົລຕໍ່ການສຶກສາ ມີອິດທິພົນຕໍ່ຄວາມຄິດ ຄວາມເຊື່ອຂອງຄຣິສຕຽນພ້ອມກັບນັກປັຊຍາທັງຫລາຍ

ມະຫາວິທຍາລັຍທັງຫລາຍ ໄດ້ເກີດເລີ້ມຕົ້ນຈາກສຖາບັນການສຶກສາຂອງຄຣິສຈັກ ໂດຍທີ່ນັກສຶກສາເຫລົ່ານັ້ນມີຈຸດປະສົງຕ້ອງການເປັນນັກເທດ ເປັນເຈົ້າອະທິການ ຫລືເປັນສິດຍາພິບາລ ຕໍ່ມາພາຍຫລັງການສຶກສາໄດ້ຮຸ່ງເຮືອງຫລາຍຂຶ້ນ ມີຜູ້ນິຍົມເຫລື້ອມໃສອຸທິດເງິນຄຳສ້າງຕຶກອາຄານຮຽນ ແລະມີການຈັດຣະບຽບວິນັຍມີນັກສຶກສາເຂົ້າມາຢູ່ປະຈຳ ຄືກັນກັບການເຂົ້າມາຢູ່ອາຣາມຄຣິສຕຽນໃນສມັຍກ່ອນໂດຍທີ່ຜູ້ຮຽນບໍ່ຕ້ອງເປັນນັກບວດ ແຕ່ເປັນຄົນສາມັນທັມດາ

ໃນສັຕວັດທີ 12 ນີ້ ພວກກຸ່ມນັກປຣາຊ ຄຣູອາຈານທີ່ບໍ່ໄດ້ກ່ຽວຂ້ອງກັບອາຣາມຄຣິສຕຽນ ກໍໄດ້ຣວມຕົວກັນກໍ່ຕັ້ງມະຫາວິທຍາລັຍຂຶ້ນໃນຢຸໂຣປ ແຫ່ງທຳອິດຄື ມະຫາວິທຍາລັຍ ປາຣີສ ຕໍ່ມາແມ່ນມະຫາວິທຍາລັຍອັອກຊ໌ຟອດ ໃນອັງກິດ ນອກຈາກນີ້ຍັງມີມະຫາວິທຍາລັຍທີ່ເກີດຂຶ້ນໃນອີຕາລີ ຊຶ່ງເນັ້ນໜັກການສຶກສາດ້ານກົດໝາຍຂອງໂຣມັນ ແລະມະຫາວິທຍາລັຍອື່ນ ໆ ອີກ ໄດ້ໃຫ້ປຣິນຍາທາງດ້ານອັກສອນສາດໂດຍທີ່ນັກສຶກສາຕ້ອງຮຽນພາສາລາຕິນ ໄວຍາກອນ ສິລປະການປາກເວົ້າ ການປະພັນ ວັນນະຄະດີ ແລະຕັກກະວິທຍາ (ວິຊາເວົ້າດ້ວຍເຫດດ້ວຍຜົນ) ສ່ວນປຣິນຍາທີ່ສູງຂຶ້ນໄປກວ່ານີ້ ຕ້ອງຮຽນວິຊາເລກເລຂາຄະນິຕ ດົນຕີ ແລະດາຣາສາດ ຜູ້ທີ່ຈະສຳເຣັດການສຶກສາຕ້ອງຕັ້ງຫົວຂໍ້ອະພິປາຍສະແດງປາຖະກະຖາຈົນເປັນທີ່ພໍໃຈຂອງຄະນະອາຈານ ຈຶ່ງຈະສາມາດຮັບປຣິນຍາໂທໄດ້ ເມື່ອຈົບປຣິນຍາໂທກໍສາມາດເລືອກຮຽນສາຍໃດສາຍນຶ່ງ ເພື່ອຮັບປະຣິນຍາເອກ ຄື

ປຣິນຍາເອກ ທາງ ຄຣິສສາສນາສາດ ເພື່ອເປັນນັກເທດໃນຄຣິສຈັກ
ປຣິນຍາເອກ ທາງ ກົດຫມາຍ ເພື່ອເປັນນັກການເມືອງ
ປຣິນຍາເອກ ທາງ ວິຊາແພດ ເພື່ອເປັນນາຍຫມໍ

ຈະເຫັນໄດ້ວ່າການສຶກສາໄດ້ເລີ້ມຕົ້ນຂຶ້ນມາ ເນື່ອງຈາກຄຣິສຕຽນສຶກສາ ເພື່ອທີ່ຈະໃຫ້ມີສຶກສາພຣະຄັມພີ ແລະຕໍ່ມາເພື່ອຄຣິສຕຽນຜູ້ນຳຕ້ອງການຮຽນເປັນນັກເທດ ຈຶ່ງມີວິຊາຣຄຣິສສາສນາສາດເປັນພື້ນຖານເກີດຂຶ້ນກ່ອນສາຂາວິຊາອື່ນໃດທັງຫມົດ ແຕ່ເມື່ອມຫາວິທຍາລັຍໄດ້ຂຍາຍເຕີບໃຫຽ່ຂຶ້ນ ກໍມີວິຊາປຣັຊຍາອັນເປັນວິຊາທີ່ກ່ຽວຂ້ອງກັບເຣື້ອງຄວາມຄິດຂອງຊີວິດມະນຸດ ແລະພາຍຫລັງຕໍ່ມາໄດ້ຂຍາຍອອກເປັນມະຫາວິທຍາລັຍສອນວິຊາທົ່ວໄປ ດັ່ງທີ່ກ່າວມາແລ້ວນັ້ນ ຍັງມີວິຊາສາຂາວິທຍາສາດ ຟີສິກ (ວັຕຖຸ) ການບໍຣິຫານ ການປົກຄອງ ການແພດ ແລະວິຊາອື່ນ ໆ ອີກ ໂດຍມອບປຣິນຍາຕີ ປຣິນຍາໂທ ປຣິນຍາເອກໃຫ້ແກ່ຜູ້ຮຽນຈົບ ເມື່ອເປັນດັ່ງນີ້ແລ້ວ ວິຊາສາສນາສາດຈຶ່ງຖືກແຍກອອກມາຕ່າງຫາກໄປຄົນລະສາຍກັບວິຊາທົ່ວໄປ

## ສິລປະກັມແລະສະຖາປັຕຍະກັມໃນສຖານນມັສການຂອງອົງພຣະຜູ້ເປັນເຈົ້າ

ນັກສຶກສາທີ່ສົນໃຈສຶກສາປວັດສາດ ຈະພົບວ່າສິລປະແລະສະຖາປັຕຍະກັມ (ການອອກແບບອາຄານ) ຂອງແຕ່ລະຍຸກແຕ່ລະສມັຍນັ້ນ ມີຄວາມແຕກຕ່າງກັນ ໃນການຮຽນປວັດສາດຄຣິສຈັກຄືກັນ ເຮົາພົບວ່າໄດ້ມີການສະແດງອອກເຖິງສິລປະກັມຂອງຄຣິສຕຽນເປັນພາບຂຽນເຣື້ອງຣາວໃນພຣະຄັມພີ ຫລືຮູບປັ້ນບຸກຄົນຕ່າງ ໃນປວັດສາດຄຣິສຈັກແຕ່ລະຍຸກແຕ່ລະສມັຍອອກໄປຄົນລະຮູບແບບ ໂດຍສະເພາະຢ່າງຍິ່ງທີ່ເຫັນໄດ້ເດັ່ນທີ່ສຸດແມ່ນ ເຣື້ອງຕຶອາຄານຂອງໂບດ ຫລືພຣະວິຫານຊຶ່ງຖືກສ້ອງຂຶ້ນມາຕາມສິລປະແລະສະຖາປັຕຍະກັມທີ່ເດັ່ນດັງທີ່ສຸດຂອງຍຸກນັ້ນ ໆ ຄື ມີການອອກແບບຕຶອາຄານຍອດຫລັງຄາ ການຄວັດສລັກຕາມເສົາ ຫລືຝາພຣະວິຫານ ຮວມເຖິງພາບວາດທີ່ສະແດງອອກແຕກຕ່າງກັນອອກໄປຕາມຍຸກຕາມສມັຍ

ຕັ້ງແຕ່ພຣະຄັມພີເດີມນັ້ນ ຊາວຢິວອອກຈາກການເປັນທາດໃນປະເທດອີຢິປໄດ້ມີການສ້າງພລັບພລາຫລືເຕັນ (Tabernacle) ເປັນທີ່ນັດພົບກັບພຣະເຈົ້າ (ອພຍ 33:7-11) ໂດຍມີຫີບພັນທະສັນຍາຂອງພຣະເຈົ້າເປັນສູນຮວມການນມັສການທີ່ສຳຄັນທີ່ສຸດ ຕໍ່ມາໄດ້ມີການຈັດຣະບຽບການສ້າງ ໃຫ້ສົມພຣະກຽດຂອງພຣະເຈົ້າ ຄືໃນສມັຍຕໍ່ມາມີການສ້າງພຣະວິຫານ ອັນເປັນຈຸດຮວມຂອງຊົນຊາດອິສຣາເອລ (ເລີ້ມຕົ້ນໂດຍກະສັດດາວິດ ພຣະວິຫານໄດ້ສ້າງສຳເຣັດໃນສມັຍຂອງກະສັດໂຊໂລມອນບຸດກະສັດດາວິດ) ແລະເມື່ອອິສຣາເອລຕົກໄປເປັນສະເລີຍສຶກໃນບາບີໂລນນັ້ນ ຊາວອິສຣາເອລບໍ່ມີບ່ອນນມັສການເພາະຕ້ອງຕົກຢູ່ໃນດິນແດນຂອງຊາວຕ່າງຊາດ ຈຶ່ງເກີດມີໂຮງທັມຫລືທັມມະສາລາເກີດຂຶ້ນ ເພື່ອໃຊ້ເປັນສຖານທີ່ນມັສການພຣະເຈົ້າ ແຕ່ເມື່ອກລັບຄືນຖິ່ນຈາກການເປັນສະເລີຍສຶກແລ້ວ ຊາວອິສຣາເອລເລີ່ງເຄີຍກັບການນມັສການໃນໂຮງທັມ ແລະດ້ວຍສາເຫດທີ່ບາງບ່ອນຢູ່ຫ່າງໄກຈາກພຣະວິຫານໃນກຸງເຢຣູຊາເລັມ ຈຶ່ງເກີດມີໂຮງທັມຕາມຊຸມຊົນຕ່າງ ໆ ທີ່ຢູ່ນອກກຸງເຢຣູຊາເລັມ ແລະເປັນທີ່ນິຍົມກັນຈົນກະທັ້ງສມັຍຂອງພຣະເຢຊູຄຣິສ ພຣະອົງກໍໄດ້ເຂົ້າໄປນມັສການໃນທັມສາລາເປັນປະຈຳ ສ່ວນພຣະວິຫານໃນກຸງເຢຣູຊາເລັມນັ້ນ ເປັນສູນກາງຂອງການນມັສການຂອງຊາວອິສຣາເອລໃນເທສການສຳຄັນ ໆ ເຊັ່ນເທສການຕັ້ງທັບອາສັຍ ເທສການສລອງພຣະວິຫານ ເທສການປັສຄາ ແລະເທສການລ້ຽງສລອງການເກັບກ່ຽວ ຈະເຫັນໄດ້ວ່າໃນພຣະທັມຂ່າວປະເສີດຄອບຄົວຂອງພຣະເຢຊູ ຄືໂຢເຊຟ ນາງມາຣີອາໄດ້ພາ

ພຣະກຸມານເຢຊູໄປພຣະວິຫານຫລາຍເທື່ອ ເພື່ອປະກອບພິທີທາງສາສນາ (ລກ 2:21-22, 41-52)

ໃນຍຸກຂອງອັຄສາວົກ ຄຣິສຕຽນໄດ້ແຍກຕົວອອກຈາກສາສນາຢິວຫລາຍຂຶ້ນ ຄຣິສຕຽນຍຸກທຳອິດໄດ້ນມັສການກັນຕາມເຮືອນຂອງຜູ້ເຊື່ອ ເມື່ອຄຣິສສາສນາເຜີຍແຜ່ໄປຍັງຄົນຕ່າງຊາດນັ້ນ ກໍໄດ້ນມັສການກັນໃນທັມສາລາຂອງຄົນຢິວບ້າງ ລາງເທື່ອກໍຖືກໄລ່ອອກເພາະຄົນຢິວທີ່ເຄັ່ງໃນສາສນາຢິວບໍ່ມັກຄຣິສຕຽນຖືວ່າ ສາສນາຄຣິສມີຄວາມແຕກຕ່າງໄປຈາກຄວາມເຊື່ອຂອງສາສນາຢິວ ຄຣິສຕຽນຕ່າງຊາດກໍໄດ້ນມັສການໃນເຮືອນຂອງຜູ້ເຊື່ອຢ່າງລັບ ໆ ເພາະຢ້ານການຂົ່ມເຫັງ ໃນສັຕວັດທີ 2 ແລະ 3 ໄດ້ໃຊ້ເຮືອນແປງເປັນອາຄານສຳລັບນມັສການ ແລະມີບ່ອນສຳລັບພິທີບັພຕິສມາທີ່ປາກົດໃຫ້ເຫັນ ຢ່າງໃດກໍຕາມຄຣິສຕຽນຮັບຄວາມຍາກລຳບາກຢູ່ຫລາຍກວ່າ 300 ປີ ຈົນຮອດ ຄ.ສ. 313 ເມື່ອເຈົ້າຊີວິດຄອນສະແຕນຕິນໄດ້ປະກາດໃຫ້ສາສນາຄຣິສເປັນສາສນາເອກປະຈຳຊາດຂອງມະຫາອານາຈັກໂຣມັນແລ້ວ ຄຣິສຈັກຈຶ່ງຖືກສ້າງຂຶ້ນໂດຍມີພຣະວິຫານສງ່າງາມສູງໃຫຍ່ໃນກຸງໂຣມ ຊຶ່ງເປັນສິລປະກັມແລະສະຖາປັຕຍະກັມແບບກຣີກ-ໂຣມັນ ແລະມີພຣະວິຫານຊົງຕາໂຊເຟັຽໃນກຸງຄອນສະແຕນຕິໂນເປີ້ລສ້າງຂຶ້ນແບບສິລປະກັມແລະສະຖາປັຕຍະກັມແບບໄບແຊນໄທ (Byzantine)

ເຮົາພົບວ່າມີການໃຊ້ສຖານທີ່ເປັນບ່ອນນມັສການພຣະເຈົ້າທີ່ເອີ້ນຊື່ແຕກຕ່າງກັນອອກໄປ ຕາມຍຸກຕາມສມັຍ ແລະຕາມຄວາມຈຳເປັນແລະໂອກາສທີ່ອຳນວຍໃຫ້ ດັ່ງນີ້

1. ພລັບພລາ (Tabernacle)
2. ພຣະວິຫານ (Temple)
3. ໂຮງທັມ (Synagogue)
4. ເຮືອນຜູ້ເຊື່ອ (believer's house)
5. ຄຣິສຈັກ (Church)
6. ສາລາທັມ (Chaple)
7. Cathedral (ເປັນວິຫານໃຫຍ່ແບບຄຣິສຈັກຄາທໍລິກ)

## ສິລປະກັມ ສະຖາປັຕຍະກັມແບບໂກທິກ (Gothic)

ໃນຍຸກກາງນີ້ ປະມານ ຄ.ສ 1050 ສິລປະກັມ ແລະສະຖາປັຕຍະກັມທີ່ເດັ່ນທີ່ສຸດແມ່ນສິລປະກັມແບບໂກທິກ ເປັນສິລປະກັມທີ່ໄດ້ພັທນາຂຶ້ນໃຫມ່ໃນຝຣັ່ງເສດແລະອັງກິດ ອັນແຕກຕ່າງໄປຈາກສິລປະຂອງກຣີກ ໂຣມັນ ແລະໄບແຊນໄທ (Byzantine) ເຮົາຈະສຶກສາພົບໃນສັຕວັດທີ 12, 13 ໂບດວິຫານໃນຍຸໂຣປ ນັບແຕ່ພາກໃຕ້ຂອງຝຣັ່ງເສດຈົນຮອດພາກເຫນືອຂອງອັງກິດ ໂບດວິຫານຈາກເຢັຽຣະມັນຕາວັນອອກຮອດສເປນ ໄດ້ຖືກກໍ່ສ້າງຂຶ້ນໃຫມ່ດ້ວຍສີມືອັນຫນ້າປະຫລາດອັສຈັນ ຈາກສິລປະຂອງພວກໂກທຫລືທີ່ເອີ້ນວ່າສິລປະແບບໂກທິກ ຕົວອາຄານຂອງວິຫານມີຫລັງຄາສູງເທົ່າກັບຂນາດຕຶກປັດຈຸບັນເຖິງ 30-40 ຊັ້ນ ມີຄວາມໃຫຍ່ໂຕກວ້າງຂວາງ ພາຍໃນຕົວອາຄານສາມາດບັນຈຸຄົນເຂົ້າປະຊຸມໄດ້ເປັນຫລາຍ ໆ ພັນຄົນ ມີຄວາມແຂງແຮງ ມີຄວາມງາມມີສງ່າຣາສີສູງສຸດ ເພື່ອຖວາຍກຽດຕິຍົດແດ່ພຣະເຈົ້າ ຊຶ່ງບໍ່ອາດຈະຫາສະຖາປັຕຍະກັມຍຸກໃດມາເທົ່າທຽມໄດ້ແມ້ກະທັ້ງປັດຈຸບັນ

ແທ້ຈິງຄຣິສຈັກຍຸກທຳອິດ ໄດ້ເລີ້ມນມັສການພຣະເຈົ້າຂຶ້ນຕາມເຮືອນຂອງຜູ້ເຊື່ອ ບໍ່ມີຕົວຕຶກຫລືອາຄານ ແຕ່ວ່າໃນສັຕວັດ ທີ 4 ຫລັງຈາກພຣະຣາຊອົງການຂອງຈັກກະພັດຄອນສະແຕນຕິນໄດ້ປະກາດໃຫ້ຄຣິສສາສນາເປັນສາສນາເອກຂອງຣາຊອານາຈັກໂຣມັນ ຄຣິສຈັກທາງດ້ານຕາເວັນຕົກໄດ້ຖືກສ້າງຂຶ້ນ

ຕາມແບບສິລປະກັມຂອງຊາວກຣິກ ແລະສິລປະກັມຂອງຊາວໂຣມັນ ຄືມີລັກສະນະຕືວອາຄານເປັນສີ່ຫລ່ຽມໃຫຽ່ ມີເສົາຕັ້ງຢູ່ຫນ້າຕືວຕືກຫລາຍ ໆ ຕົ້ນ ເພື່ອຮັບນໍ້ານັກຂອງຕືວອາຄານ ສ່ວນຄຣິສຈັກທາງດ້ານຕາເວັນອອກນັ້ນ ໄດ້ຖືກສ້າງຂຶ້ນຕາມສິລປະ ແບບໄບແຊນໄທ ຕືວຕືກຮູບກົມຫນາມີດທຶບ ຄືຖໍ້າແລະມີຍອດໂດມແຫລມສູງ

ແຕ່ວ່າການພັທນາສິລປະກັມແລະສະຖາປັຕຍະກັມແບບໂກທິກນີ້ ໄດ້ເກີດການສ້າງຄຣິສຈັກໂດຍຕືວອາຄານໄດ້ຖືກອອກແບບໃຫ້ມີລັກສນະມີຄວາມສູງໃຫຍ່ກວ້າງຂວາງ ມີແສງສະວ່າງຈາກທາງເທິງຫລັງຄາປ່ອງຢ້ຽມມີກະຈົກສີທີ່ມີຮູບພາບທີ່ແຕ້ມຈາກເຣື້ອງຣາວໃນພຣະຄັມພີຢູ່ເທິງສູງເພື່ອຮັບແສງສວ່າງໂດຍຮອບມີເສົາສູງໃຫຽ່ໂຄ້ງຮັບນໍ້າຫນັກຂອງຫລັງຄາທີ່ສູງໂປ່ງຂຶ້ນໄປ ສິລປະກັມແນວນີ້ ເປັນການສແດງໃຫ້ເຫັນເຖິງຫລັກຄວາມເຊື່ອຂອງຄຣິສຕຽນໃນຍຸກນັ້ນ ໃນເຣື້ອງທີ່ວ່າ ຄຣິສຈັກເປັນສຖານທີ່ຕິດຕໍ່ຣະຫວ່າງມະນຸດກັບພຣະເຈົ້າ ດັ່ງນັ້ນ ການສ້າງວິຫານເຫລົ່ານີ້ຈຶ່ງໄດ້ພະຍາຍາມສ້າງໃຫ້ສູງທຽມຟ້າ ເພື່ອຕອບສນອງຄວາມເຊື່ອ ທີ່ວ່າຈະໄດ້ຕິດຕໍ່ກັບສວັນໄດ້ໂດຍກົງ (ນັກສຶກສາສາມາດສຶກສາຕໍ່ໄດ້ຈາກຫ້ອງສມຸດຕ່າງ ໆ ເພື່ອເບິ່ງຮູບພາບຕືວອາຄານ ຕືວຕືກທີ່ສ້າງຂຶ້ນຕາມແບບຂອງກຣີກ ຂອງໂຣມັນ ຂອງໄບເຊນໄທ ແລະແບບໂກທິກ)

ສ໌ 6-3-95

# ບົດທີ 10

## ຄວາມເຊື່ອແລະຄຳສອນ ທີ່ນຳໃຫ້ຄຣິສຈັກຫລົງຜິດ ເຖິງ ການເລີ້ມກໍ່ຕົວຂອງພວກປະຕິຮູບສາສນາ ແລະກຸງຄອນສະແຕນຕິໂນເປີລົ້ມ

### ນຶ່ງ. ຄວາມເຊື່ອແລະຄຳສອນທີ່ນຳຄຣິສຈັກຫລົງຜິດ

ຄຣິສຈັກໃນສມັຍຍຸກແຮກນັ້ນ ແມ່ນວ່າຄຣິສຕຽນແລະຜູ້ນຳຄຣິສຕຽນໄດ້ຮັບການຂົ່ມເຫັງຢ່າງຫລວງຫລາຍ ໄດ້ຮັບການທົນທຸກ ແລະຫລາຍທ່ານຕ້ອງເສັຍສລະຊີວິດ ເພື່ອຮັກສາຄວາມເຊື່ອອັນແທ້ຈິງທີ່ມີຢູ່ໃນພຣະເຢຊູຄຣິສ ເຖິງວ່າພຣະຄັມພີຍັງບໍ່ທັນໄດ້ຖືກພິມ ຫລືຖືກແຈກຢາຍອອກໄປ ແຕ່ພຣະຄຳຂອງພຣະເຈົ້າໄດ້ຖືກເປີດເຜີຍ ແລະແຜ່ຜາຍອອກໄປຢ່າງກວ້າງຂວາງ ຜູ້ເຊື່ອມີນ້ຳໃສໃຈຈິງໃນການນມັສການພຣະເຈົ້າໃນການອ້ອນວອນ ໃນການຫັກຂ້າວຈີ່ເພື່ອຣະລຶກເຖິງພຣະເຢຊູຄຣິສ ແລະສາມາດເຂົ້າໃຈຄວາມຫມາຍອັນແທ້ຈິງຂອງການເປັນຄຣິສຕຽນ ທີ່ຍອມໃຫ້ພຣະວິນຍານບໍຣິສຸດຂອງພຣະເຈົ້ານຳພາໃຫ້ເກີດການປ່ຽນແປງຊີວິດ ແຕ່ວ່າຄວາມເຊື່ອອັນແທ້ຈິງແບບຄຣິສຕຽນໃນຍຸກທຳອິດໄດ້ຈືດຈາງຫາຍໄປຈາກຄຣິສຈັກ ໃນສມັຍກາງນີ້ຄວາມເຊື່ອຕາມແບບອັກສາວົກຫລືຫລັກຂໍ້ເຊື່ອໄນຊີນ ໄດ້ຖືກດັດແປງໄປຕາມໃຈມັກຂອງເຫລົ່າສັນຕະປາປາແລະນັກເທສທັງຫລາຍທີ່ໂລບ ມັກເຫັນແກ່ຕົວ ໄດ້ສອນເຣື້ອງຣາວອັນເປັນແນວແປກ ໆ ທີ່ເຮັດໃຫ້ຄຣິສຕຽນຢ້ານກົວ ແລະຫລົງງົມງາຍໃນໄສຍສາດຢ່າງບໍ່ມີເຫດຜົນ ຫລືບໍ່ມີມູລຄວາມຈິງ ໃດ ໆ ຈາກພຣະຄັມພີ

ມີຄຳສອນເຣື້ອງບາບຈົບຫາຍເຈັດປະການ ເກີດຂຶ້ນໃນຍຸກສມັຍກາງ ຄື

1, ຄວາມຍິ່ງທະນົງຕົວ

2, ຄວາມໂລບ

3, ຄວາມຟຸ້ມເຟືອຍ

4, ຄວາມອິດສາຣິສຍາ

5, ຄວາມມັກກິນມັກໄດ້

6, ຄວາມໂກດ

7, ຄວາມທໍ້ແທ້

ແລະຍັງມີຄວາມບາບອື່ນ ໆ ບໍ່ຮ້າຍແຮງເທົ່າບາບທັງເຈັດປະການນີ້ ຕົວຢ່າງ ການຕົວະຄວາມມັກຢ້ານ ຄວາມໂງ່ເຂົາ ແລະອື່ນ ໆ ອີກ

ນອກເຫນືອຈາກບາບຈີບຫາຍທັງເຈັດປະການແລ້ວ ຍັງມີຄຳສອນເຣື້ອງຄຸນນະທັມເຈັດປະການເປັນຕົ້ນ ຄຳສອນເຫລົ່ານີ້ເປັນທີ່ນິຍົມຟັງຂອງປະຊາຊົນ ແລະພາກັນຢຶດຫມັ້ນປະຕິບັດຕາມ ເຮັດໃຫ້ຄຣິສຕຽນອອກຫ່າງຈາກຄຳສອນແລະຂ່າວປະເສີດແທ້ຂອງພຣະເຢຊູຄຣິສ ຂ່າວປະເສີດອັນຖືກຕ້ອງນັ້ນໃຫ້ຄວາມຫມາຍແທ້ເຣື້ອງການໄຖ່ບາບ ແລະກັບໃຈໃຫມ່ຕັ້ງຕົ້ນຊີວິດໃຫມ່ ແຕ່ວ່າພວກຄຣິສຈັກໃນສະມັຍກາງສັບສົນໃຈເຣື້ອງການຖືສິນ ແລະການທຳດີແລະການຍ້ານກົວການຖືກລົງໂທດໃນນະຣົກ ພວກເຈົ້ານາຍທີ່ມີອຳນາດຫລາຍກໍເກີດຍ້ານກົວບາບເພາະຕົວເອງເອົາປຽບແລະເຮັດບາບຫລາຍ ຈຶ່ງໄດ້ໃຊ້ວິທີການແກ້ບາບໂດຍຖວາຍເງິນຄຳແລະທີ່ດິນແກ່ຄຣິສຈັກ ເພື່ອລຶບລ້າງບາບໂທດຂອງຕົວແທນການລະຖິ້ມບາບຫັນຫາພຣະເຈົ້າ ແລະຍັງບໍ່ກັບໃຈບັງເກີດໃຫມ່

ໃນສມັຍກາງນີ້ເອງ ມີບົດລະຄອນອັນມີຊື່ສຽງຂອງດານເຕ (Dante) ທ່ານເປັນຊາວອີຕາລີໃນແຄວ້ນຟລອເຣັນ ປະມານ ຄ.ສ.1300 ທ່ານໄດ້ແຕ່ງປະພັນເຣື້ອງຣາວເປັນລະຄອນ **ກຽ່ວກັບແດນໄຟຊຳຣະ** (Purgatory) ໄດ້ມີການສະແດງໃຫ້ປະຊາຊົນເບິ່ງ ແລະເຮັດໃຫ້ປະຊາຊົນເຂົ້າໃຈຜິດເຖິງເຣື້ອງ ການຊົດໃຊ້ບາບໃນໄປນໍຣົກ ໃນເນື້ອນັຍຂອງເຣື້ອງພໍສລຸບໄດ້ວ່າ ການພິພາກສາຂອງພຣະເຈົ້ານັ້ນ ຄືວ່າ ຄົນດີຈະໄດ້ໄປສວັນ ຄົນຊົ່ວໄປນະຣົກ ສຳລັບຄົນດີແດ່ບໍ່ດີແດ່ຕ້ອງຕົກໄປຢູ່ໃນ **ແດນໄຟຊຳຣະ** ແລະຊົດໃຊ້ບາບຢູ່ທີ່ນັ້ນຈົນຫມົດເວຣຫມົດກຳຫມດບາບຂອງຕົນ ຈຶ່ງຈະໄດ້ຂຶ້ນສວັນ ປະຊາຊົນພາກັນເຊື່ອຕາມເນື້ອເຣື້ອງທີ່ທ່ານ ດານເຕ ໄດ້ແຕ່ງຂຶ້ນ ແທນທີ່ຄຣິສຈັກຈະແກ້ໄຂຄຳສອນເສັຍໃຫມ່ ຫລືສອນເຣື້ອງຈາກພຣະຄຳຂອງພຣະເຈົ້າແທນ ແຕ່ກັບຫັນໄປສອນສິ່ງທີ່ປະຊາຊົນມັກຟັງ ແລະເພື່ອເປັນການເອົາໃຈພວກສັງຄະຣາດໄດ້ມີຄຳສອນເກີດຂຶ້ນໃຫມ່ວ່າ **ການທີ່ມະນຸດຈະສາມາດກະທຳຄຸນທັມທັງ 7 ໄດ້ນັ້ນຕ້ອງອາສັຍການຊ່ວຍເຫລືອ** ຄຣິສຈັກສາມາດຊ່ວຍໃຫ້ປະຊາຊົນມີຄວາມເຂັ້ມແຂງໃນການທຳດີໄດ້ ໂດຍທີ່ສມາຊິກຕ້ອງຖືສິນ ສາຣະພາບບາບຕໍ່ນັກບວດຫລືເຈົ້າອະທິການ ເພື່ອວ່າທ່ານຈະໄດ້ແກ້ບາບໃຫ້ຫລຸດ ແຕ່ວ່າບາບນັ້ນມີຫລາຍແບບ ບາງແບບແກ້ໄດ້ງ່າຍ ຕົວຢ່າງ ການລັກຂະໂມຍສິ່ງຂອງກໍໃຫ້ເອົາຂອງໄປຄືນເຈົ້າຂອງ ແຕ່ບາບບາງແບບແກ້ຢາກຫລືແກ້ໂດຍຕົງບໍ່ໄດ້ ຕົວຢ່າງ ຄວາມທະນົງຕົວ ຄວາມອິດສາ ຄົນເຫລົ່ານັ້ນຕ້ອງໄປທຳຄຸນທັມເຈັດປະການ ຫລືບໍ່ດັ່ງນັ້ນ ກໍຕ້ອງໄປຢາມກຸງເຢຣູຊາເລັມດິນແດນອັນສັກສິດຈຶ່ງຈະຫາຍບາບ ຫລືຖວາຍເງິນຄຳຫລາຍ ໆ ໃຫ້ແກ່ຄຣິສຈັກ ເຮົາເຫັນໄດ້ວ່າຄຳສອນເຫລົ່ານີ້ ບໍ່ໄດ້ມີມູນຄວາມຈິງຫລືຫລັກຖານຈາກພຣະຄັມພີ

ໃນສມັຍກາງຍັງມີຄຳສອນອີກວ່າ ພຣະເຈົ້າຊົງເປັນຜູ້ພິໂຣດຫລາຍ ແລະບໍ່ຍອມຍົກບາບໂທດແກ່ຜູ້ໃດໂດຍງ່າຍ ນອກຈາກວ່າຜູ້ນັ້ນຈະຕ້ອງອ້ອນວອນຫລາຍ ໆ ຕໍ່ພຣະບຸດຄືພຣະເຢຊູຄຣິສ ແຕ່ເພາະວ່າພຣະບຸດກໍມີຄວາມຍຸຕິທັມຫລາຍ ຈຶ່ງບໍ່ສາມາດຍົກໂທດແກ່ຜູ້ໃດໄດ້ງ່າຍຄືກັນ ດັ່ງນັ້ນຄຣິສຕຽນຈຶ່ງຕ້ອງອ້ອນວອນຕໍ່ພຣະມານດາ ຄືນາງມາຣີອາ ຜູ້ມີຄວາມເມດຕາຫລາຍກວ່າແລະໂຜດວິນຍານຈິດຂອງຄົນທຸກຊັ້ນວັນນະ ດ້ວຍເຫດນີ້ການອ້ອນວອນຜ່ານທາງມາຣີອາຈຶ່ງເລີ້ມເກີດຂຶ້ນມາ ເພາະວ່ານາງມາຣີອາຢູ່ໃກ້ພຣະເຢຊູຄຣິສ ແລະນາງຈະໄດ້ອ້ອນວອນຕໍ່ພຣະເຢຊູຄຣິສໄດ້ຜົນຫລາຍກວ່າ ຄວາມຄິດເຫັນແລະຄຳສອນເຫລົ່ານີ້ໄດ້ຖືກເພີ້ມເຕີມຂຶ້ນມາໃນສມັຍກາງ ໃນຍຸຄອັກສາວົກບໍ່ໄດ້ມີຄວາມເຊື່ອແບບນີ້ ແລະໄດ້ສອນຜິດໄປຈາກພຣະຄັມພີ ເພາະພຣະຄັມພີສອນວ່າ "ສິ່ງໃດທີ່ທ່ານທັງຫລາຍຈະຂໍໃນນາມຂອງເຮົາ ເຮົາກໍຈະເຮັດສິ່ງນັ້ນ ເພື່ອວ່າພຣະບິດາຈະຊົງຮັບກຽດຕິຍົດດ້ວຍພຣະບຸດ ຖ້າທ່ານທັງຫລາຍຂໍສິ່ງໃດກັບເຮົາໃນນາມຂອງເຮົາ ຝ່າຍເຮົາກໍຈະເຮັດສິ່ງນັ້ນ" (ຢຮ 14:13-14)

ຄຳສອນເຫລົ່ານີ້ໄດ້ຖືກນຳມາສອນແກ່ປະຊາຊົນເປັນບົດລະຄອນ ໂດຍການສະແດງ ດົນຕີ ແລະໃນຮູບແບບອື່ນ ໆ ຮວມທັງການເທສນາຊຶ່ງປະຊາຊົນມັກນິຍົມຟັງ ເພາະເຫດວ່າສະພາບການຂອງປະຊາຊົນໃນສມັຍກາງນັ້ນ ພວກເຈົ້ານາຍ ພວກມີຍົດສັກ ໄດ້ພາກັນເອົາປຽບ ຂົ່ມເຫັງແລະມີອຳນາດເຫນືອປະຊາຊົນໃນທຸກ ໆ ດ້ານ ດັ່ງນັ້ນຄຣິສຈັກຈຶ່ງມັກສະແດງທັມເທສນາປະນາມຕໍ່ວ່າພວກຜູ້ມີອຳນາດ ແລະເຈົ້ານາຍທັງຫລາຍວ່າຈະຕ້ອງຮັບໂທດ ຮັບການທໍຣະມານໃນວັນສຸດທ້າຍທີ່ພຣະຄຣິສສະເດັດມາ (ຄຳສອນແນວນີ້ເບິ່ງ ຄືວ່າຖືກຕ້ອງດີ ຫາກແຕ່ວ່າຖືກເນັ້ນຫລາຍເກີນໄປຈົນລືມຄວາມເຊື່ອແທ້ທີ່ມີຢູ່ໃນຂ່າວປະເສີດຂອງພຣະເຢຊູຄຣິສ) ຄຳສອນເຫລົ່ານີ້ໄດ້ຖືກນຳມາດັດແປງເສີມແຕ່ງ ຊຶ່ງບໍ່ໄດ້ເປັນຄຳສອນໂດຍກົງ ຈາກພຣະຄັມພີ ທ່ານ**ຊາວອນນາໂຣລາ** ເປັນນັກບວດນິກາຍໂດມີນິກັນໃນແຄວ້ນຟລອເຣັນ ທ່ານມັກເທສນາເຖິງການພິພາກສາໃນວັນສຸດທ້າຍ ແລະຕຳນິຕິຕຽນຄວາມບາບຂອງເຫລົ່າສັງຄະຣາດກັບພວກຮັ່ງມີທັງຫລາຍ ຊຶ່ງຄຳເທສນາຂອງທ່ານຖືກໃຈປະຊາຊົນຄົນຟັງ ແຕ່ພວກເຮົາຕ້ອງລະວັງໃນເຣື່ອງນີ້ ຈຶ່ງຢູ່ທີ່ປະຊາຊົນມັກຟັງ ຫາກແຕ່ວ່າເຮົານຳໃຫ້ຜູ້ຟັງຫລົງໄປຈາກທາງແຫ່ງຄວາມຈິງຂອງພຣະຄັມພີຫລືບໍ່ ຄິດເບິ່ງໃຫ້ດີ ຄວາມຜິດບາບນັ້ນ ມະນຸດມີກັນທຸກຄົນບໍ່ແມ່ນວ່າຈະເປັນຄົນຣະດັບໃດ ຈະເປັນຄົນຊະນິດໃດ ເພດໃດ ເຮົາຕ່າງເປັນຄົນບາບຜູ້ຜິດຕໍ່ພຣະເຈົ້າ ແລະອາສັຍຢູ່ໃນໃຕ້ຮົ່ມພຣະຄຸນຂອງພຣະເຢຊູຄຣິສ ໂດຍເພິ່ງອາສັຍການໄຖ່ໂທດບາບເທິງໄມ້ກາງແຂນ ບໍ່ແມ່ນເຮົາເອົາເງິນຊື້ໄດ້ ດັ່ງທີ່ປາກົດໃນສມັຍກາງນີ້ ຄືຖວາຍເງິນເພື່ອລົບລ້າງບາບ ແຕ່ແທ້ຈິງແລ້ວໂລຫິດຂອງພຣະເຢຊູຕ່າງຫາກທີ່ລົບລ້າງບາບຂອງເຮົາ ເຮົາກັບໃຈບັງເກີດໃຫມ່ ຖວາຍຊັບດ້ວຍໃຈທີ່ສຳນຶກເຖິງພຣະຄຸນແລະຄວາມຮັກຂອງພຣະອົງ

ສິ່ງທີ່ດີໃນສມັຍກາງນີ້ຄື ໂບດ ວິຫານເປັນສູນກາງຊີວິດຂອງປວງຊົນ ໂດຍມີອາຄານ ຕົວຕຶກງົດງາມ ມີສຽງເພງມ່ວນປລອບຈິດປລອບໃຈປະຊາຊົນ ມີສຽງລະຄັງດັງຮຽກໃຫ້ປະຊາຊົນມາປະຊຸມໂດຍພ້ອມພຽງກັນ ປະຊາຊົນສ່ວນຫລາຍພ້ອມໃຈກັນເຊື່ອຟັງນັກບວດ ເຈົ້າອະທິການ ສັງຄະຣາດຜູ້ມີອຳນາດທາງດ້ານຣັຖບານກໍສນັບສນຸນຄຣິສຈັກ ປະຊາຊົນມີອິສຣະພາບນມັສການພຣະເຈົ້າ ປະຊາຊົນພາກັນອອກເງິນຄຳ ອອກແຮງງານສ້າງວິຫານອັນໃຫຍ່ໂຕ ເພາະວິຫານເປັນສູນຮວມແຫ່ງຈິດໃຈຂອງປວງຊົນ ເຫດການເຫລົ່ານັ້ນເປັນສະພາບການອັນງົດງາມແລະມີສງ່າຣາສີທີ່ອຸທິດຖວາຍແກ່ພຣະເຈົ້າ ມີຂໍ້ເສັຽຢູ່ທີ່ວ່າພວກນັກບວດ ເຈົ້າອະທິການ ແລະສັງຄະຣາດທັງຫລາຍໄດ້ຖືໂອກາດເອົາປຽບ ແລະສະແຫວງຫາແຕ່ຄວາມຍິ່ງໃຫຍ່ ຄວາມສຸກຮັ່ງມີໄວ້ເພື່ອຕົນເອງ

## ສອງ. ບາບໃຫຍ່ເຂົ້າສູ່ຄຣິສຈັກ

ຄວາມເຊື່ອຂອງຄຣິສຈັກໃນສມັຍກາງໄດ້ຕົກຕ່ຳລົງ ເຖິງແມ່ນວ່າຄຣິສຈັກຈະມີພຣະວິຫານອັນງົດງາມສູງສງ່າແຂງແຮງກໍຕາມ ຄວາມບາບອັນໃຫຍ່ຫລວງໄດ້ກ້າວເຂົ້າມາສູ່ຄຣິສຈັກດັ່ງນີ້

1. **ຄວາມໂລບ** ຄຣິສຈັກມີຄວາມໂລບໃນເງິນຄຳ ແລະສົມບັດທີ່ດິນ ພວກສັງຄະຣາດ ສັນຕະປາປາ ພາກັນຮັ່ງມີ ໃຊ້ວິທີການຫລາຍແນວເພື່ອຈະໄດ້ເງິນແລະສົມບັດຂອງຣັດ ຝ່າຍເຈົ້າຊີວິດທັງຫລາຍຮູ້ສຶກອິດສາທີ່ເຫັນວິຫານນັ້ນຄັ້ງຮັ່ງມີ ສັນຕະປາປາມີອຳນາດເຫນືອຜູ້ປົກຄອງ ເຈົ້າຊີວິດທັງຫລາຍຈຶ່ງ ໄດ້ພຍາຍາມຫາທາງຕໍ່ສູ້ໂດຍການຂັບໄລ່ ເນລະເທດສັນຕະປາປາໃຫ້ອອກຈາກຕຳແຫນ່ງ ຝ່າຍສັນຕະປາປາໄດ້ຕອບໂດຍແກ້ແຄ້ນແທນຄືນ ເຮັດໃຫ້ເກີດເສິກຕໍ່ສູ້ກັນຕລອດເວລາ ນຳຄວາມເສັຽຫາຍມາທັງສອງຝ່າຍ

2. **ການຂາຍເຄື່ອງໃບບຸນແກ້ບາບ** (Indulgences) ໃບບຸນນີ້ຄຣິສຈັກໄດ້ເຮັດຂຶ້ນເປັນໃບອະນຸຍາດລົດກຳໜົດເວລາຂອງຜູ້ຕາຍທີ່ຕ້ອງທົນທຸກຢູ່ໃນແດນໄຟຊຳລະ (Purgatory) ເພາະມີຄຳສອນເຕີມເຂົ້າມາຄືເຣື່ອງໄຟຊຳລະທີ່ວ່າ ຄົນທີ່ເປັນຄົນດີແດ່ຊົ່ວແດ່ ເມື່ອຕາຍຕ້ອງຕົກໄປຢູ່ໃນແດນໄຟຊຳລະ ຮັບການທົນທຸກຈົນໝົດກຳໜົດເວນ ຈຶ່ງຈະໄດ້ຂຶ້ນສວັນ ດັ່ງນັ້ນແລ້ວຍາດຜູ້ຕາຍຕ້ອງຊື້ໃບບຸນນີ້ໂດຍມີຄວາມເຊື່ອວ່າສັນຕະປາປາຈະເປັນຜູ້ແຜ່ບຸນກຸສົນ ແລະຊ່ວຍຈິດວິນຍານຜູ້ຕາຍໃຫ້ຂຶ້ນສວັນໂດຍໄວ ບໍ່ຕ້ອງຮັບການທົນທຸກໃນແດນໄຟຊຳລະເປັນເວລານານເກີນໄປ

3. **ການເກັບຄ່າທັມມຣຽມ** ສັນຕະປາປາ John ທີ 22 ແຫ່ງເມືອງອາວິນຍອງ ໄດ້ຮຽກເກັບຄ່າທັມມຣຽມໃນພິທີຮັບບັພຕິສະມາ ພິທີແຕ່ງງານ ແລະງານສົພ ເບິ່ງຄືວ່າບໍ່ມີບັນຫາໃນເຣື່ອງນີ້ ເພາະວ່າຜູ້ເປັນນັກເທສຈຳເປັນຕ້ອງມີຄ່າໃຊ້ຈ່າຍເມື່ອເຮັດພິທີໃດ ໆ ດັ່ງນັ້ນແລ້ວສມາຊິກຕ້ອງຮູ້ຈັກຮັບຜິດຊອບໂດຍການຕອບແທນນັກໂທດ ອັນນີ້ເບິ່ງຄືບໍ່ມີບັນຫາຫຼັງ ແຕ່ວ່ານັກເທດທີ່ຮຽກຮ້ອງເງິນຄຳ ເພື່ອຄວາມຮັ່ງມີເປັນເຫດໃຫ້ເກີດບັນຫາ ນອກຈາກນີ້ຍັງມີກົດເກນວ່າເຈົ້າອະທິການທີ່ຖືກຍ້າຍໄປປະຈຳເມືອງໃໝ່ຈະຕ້ອງຍອມອຸທິດເງິນເດືອນປີທຳອິດໃຫ້ແກ່ສັນຕະປາປາ ໂດຍວິທີການນີ້ສັນຕະປາປາເລີຍຖືໂອກາດສັ່ງຍ້າຍພວກເຈົ້າອະທິການຢູ່ເລື້ອຍ ໆ ອັນເປັນວິທີການຂອງການໄດ້ເງິນມາຢ່າງບໍ່ຖືກຕ້ອງ

4. **ຄວາມຍິ່ງທະນົງ ແລະຄວາມໂກດ** ຄວາມອວດຕົວ ຟຸ່ມເຟືອຍຫຼູຫຼາໃນວິຫານ ການປະດັບດ້ວຍພາບວາດ ກະຈົກສີງາມຕາມໜ້າຕ່າງ ການລັຽງສລອງ ການຈັດຫາເສື້ອຜ້າຣາຄາສູງເພື່ອກະບວນພິທີອັນຫຼູຫຼາ ສັນຕະປາປາມີວິສ່ວນຕົວນັ້ງໃຫ້ຄົນແບກໄປໄສມາໄສ ມີບ່ອນຢູ່ຄືວັງຂອງເຈົ້າຊີວິດສິ່ງເຫລົ່ານີ້ບໍ່ສົມຄວຣເລີຍ ທີ່ຜູ້ຮັບໃຊ້ຈະຫລົງຮັບເອົາໄວ້ບຳຣຸງເນື້ອໜັງສ່ວນຕົວຈົນເກີນສົມຄວນ

ພວກນັກບວດນິກາຍແຟນຊິສກັນທີ່ອຸທິດຕົວເພື່ອຜູ້ທຸກຍາກ ໄດ້ກ່າວປະນາມຕິຕຽນສັນຕະປາປາ John ທີ 22 ຢ່າງໜັກວ່າເປັນພວກຄິດຄົດສອນໃນທາງທີ່ຜິດ (Heretic) ສັນຕະປາປາເກີດຄຽດຫລາຍ ຈຶ່ງສັ່ງລົງໂທດພວກນັກບວດນິກາຍແຟນຊິສກັນຫລາຍຄົນ ເຫດການແບບນີ້ເກີດຂຶ້ນຫລາຍເທື່ອ ຄືວ່າ ສັນຕະປາປາບາງອົງຄຽດບໍ່ພໍໃຈຜູ້ນຳກຸ່ມໃດຫລືເຈົ້າຊີວິດອົງໃດ ກໍສັ່ງກອງທັບໄປເຮັດເສິກແລະທຳລາຍຜູ້ນັ້ນ ເມື່ອໄດ້ຊັຍຊນະກໍຈະຮຽກເກັບສ່ວຍອາກອນໜັກຈາກຜູ້ນັ້ນເຖິງຮ້ອຍລະ 67

5. **ຄວາມເຊື່ອຕົກຕ່ຳ** ປະຊາຊົນທົ່ວໄປບໍ່ເຂົ້າໃຈຄວາມເຊື່ອໃນສາສນາຢ່າງແທ້ຈິງ ບໍ່ໄດ້ອ່ານພຣະຄັມພີ ເພາະຖືວ່າພຣະຄັມພີສັກສິດຄົນທົ່ວໄປຈັບຕ້ອງບໍ່ໄດ້ ສັນຕະປາປາເທົ່ານັ້ນຈຶ່ງຈະອ່ານໄດ້ ດັ່ງນັ້ນແລ້ວຄວາມເຊື່ອຈຶ່ງຕົກຕ່ຳ ແລະຫລົງໄຫລເຣື່ອງການປະພົມນ້ຳມົນສັກສິດ (Holy Water) ຫລົງໄຫລໃນເວດມົນປະຕິຫານ ມີຄຳສອນພາໃຫ້ເຊື່ອວ່າພິທີມະຫາສນິທເປັນເຣື່ອງປະຕິຫານຖືວ່າ ເມື່ອສັງຄະຣາດເສກມົນໃສ່ເຂົ້າຈີ່ກໍຈະກາຍເປັນເນື້ອແທ້ ໆ ຂອງພຣະເຢຊູ ແລະນ້ຳລະແຊງກໍຈະກາຍເປັນເລືອດແທ້ຂອງພຣະເຢຊູຄຣິສ ປະຊາຊົນບໍ່ໄດ້ຮັບຄຳສອນໂດຍກົງຈາກພຣະຄັມພີ ເຮັດໃຫ້ຄວາມເຊື່ອກາຍຫລົງໄປທາງອື່ນ ບໍ່ໄດ້ເຊື່ອໃນຂ່າວປະເສີດແທ້ຈິງ ວັດອາຣາມຄຣິສຕຽນແລະຄຣິສຈັກທັງຫລາຍອ່ອນແອໃນຄວາມເຊື່ອ ບໍ່ໄດ້ຢຶດໝັ້ນຄວາມເຊື່ອແທ້ຈິງ ບໍ່ຄືກັບພວກຄຣິສຕຽນໃນສມັຍທຳອິດ

**ສາມ. ການເລີ້ມກໍ່ຕົວຂອງພວກປະຕິຮູບສາສນາ**

ເຫດການທີ່ເກີດການຫລົງຜິດຢ່າງໃຫຍ່ຫລວງຂອງຜູ້ນຳຄຣິສຈັກໃນສມັຍກາງນີ້ ກຸ່ມນັກປຣາດ ແລະຜູ້ນຳທີ່ດີທີ່ມີຄວາມເຂົ້າໃຈອັນຖືກຕ້ອງໄດ້ຢືນຂຶ້ນ ເພື່ອຢືນຢັນຄວາມເຊື່ອ ແລະຄຳສອນອັນແທ້ຈິງ ຈາກພຣະຄັມພີ ບຸກຄົນສຳຄັນ ໆ ດັ່ງຕໍ່ໄປນີ້ ໄດ້ຮັບການຂົ່ມເຫັງຈົນເສັຍຊີວິດຈາກພວກຜູ້ນຳຄຣິສຈັກ ຈາກສັນຕະປາປາ ເຫດການເຫລົ່ານີ້ໄດ້ເກີດຂຶ້ນໃນສມັຍກາງ ເພື່ອຕໍ່ສູ້ຄຳສອນຜິດທີ່ເກີດຂຶ້ນໃນຄຣິສຈັກ ອັນເປັນການເລີ້ມກໍ່ຕົວຂອງການປະຕິຮູປສາສນາທີ່ກ້າວໜ້າໃຫຍ່ຂຶ້ນ ຜູ້ນຳທີ່ມີບົດບາດເຮັດໃຫ້ເກີດການ ກໍ່ຕົວໃນການປະຕິຮູບສາສນາ ດັ່ງມີຕົວຢ່າງຕໍ່ໄປນີ້

1. **ອອລບີເຈນ** (Albigenses) ເປັນຜູ້ນຳໃນກຸ່ມ ພຽວຣິຕັນ (Puritans) ຢູ່ໃນ ພາກໃຕ້ຂອງຝຣັ່ງເສດປະມານ ຄ.ສ.1170 ກຸ່ມພຽວຣິຕັນໄດ້ຕ້ານຄວາມເຊື່ອອັນງົມງາຍ ຄື ຕຳນານ ຄຳສອນເຣື້ອງໄຟຊຳຣະ ເຣື້ອງການມີຮູບປັ້ນໃນຄຣິສຈັກ ຕໍ່ຕ້ານຄຳຕົວະຈາກພວກສັນຕະປາປາ ກຸ່ມ ພຽວຣິຕັນ ໄດ້ນຳເອົາພຣະຄັມພີໃໝ່ຂຶ້ນມາໃຊ້ຢ່າງເຄັ່ງຄັດ ແລະຍອມຮັບເອົາພຣະຄັມພີເດີມ ສັນຕະ ປາປາອິນໂນເຊນທີ 3 ໄດ້ປາບປາມຂ້າຄົນກຸ່ມນີ້ໂດຍບໍ່ມີຄວາມຜິດເປັນຈຳນວນຫລາຍໃນປະມານ ຄ.ສ. 1208 ອັນເປັນເຫດໃຫ້ເກີດການກໍ່ຕົວເພື່ອການປະຕິຮູປສາສນາຫລາຍຍິ່ງຂຶ້ນ

2. **ປີເຕີ ວອລໂດ** (Peter Waldo) ເປັນພໍ່ຄ້າແຫ່ງເມືອງລີອົງ(Lyons) ຢູ່ໃນຝຣັ່ງເສດ ໄດ້ປະຖິ້ມຄວາມຮັ່ງມີ ໄດ້ອອກບວດ ໃຊ້ຊີວິດເປັນຄົນຂໍທານ ແລະຊ່ວຍຄົນທຸກ ທ່ານໄດ້ຕັ້ງກຸ່ມ **ວອລເດນ ຊຽນ** (Waldensians) ກຸ່ມນີ້ໄດ້ຮັບນາມວ່າ **ຄົນທຸກແຫ່ງລີອົງ** ທ່ານໄດ້ອອກເທສນາໂດຍໃຊ້ພຣະຄັມ ພີຮຽກຮ້ອງໃຫ້ຕໍ່ຕ້ານກັບຄວາມເຊື່ອຜິດ ແລະຄຳສອນອັນຫລົງຜິດຂອງພວກໂຣມັນຄາທໍລິກ ແລະການຫລົງ ອຳນາດຂອງພວກສັນຕະປາປາ ຄຳເທສນາຂອງທ່ານປີເຕີ ວອລໂດເປັນເຫດໃຫ້ກຸ່ມວອລເດນຊຽນນີ້ຖືກ ຄັບໄລ່ອອກຈາກຝຣັ່ງເສດໄປຫລົບພັຍໃນອີຕາລີ ແລະໄດ້ຕັ້ງກຸ່ມຄັດຄ້ານຕໍ່ຕ້ານຢູ່ທີ່ນັ້ນ ເຮັດໃຫ້ເກີດນິກາຍ ໂປຣເທັສຕານໃນອີຕາລີ ພວກວອລເດນຊຽນໄດ້ມີຄວາມເຂັ້ມແຂງມານານຫລາຍຮ້ອຍປີຈົນຮອດສັຕວັດ ທີ 19 ໄດ້ມີອິດທິພົນຕໍ່ການກໍ່ຕັ້ງການປະຕິຮູບສາສນາໃນຢຸໂຣປ ແລະທະວີບອະເມຣິກາ

3. **ຈອນ ໄວຄລິຟ** (John Wyclif) ເກີດ ຄ.ສ.1324 ໃນປະເທດອັງກິດ ສຳເຣັດການ ສຶກສາຣະດັບດຸສດີບັນດິສ (ຣະດັບ Doctor) ຈາກມະຫາວິທຍາລັຍອ໊ອກຟອດ ໃນສາຂາສາສນາສາດ (Theology) ທ່ານຕິຕຽນພວກນັກບວດທີ່ມັກຢູ່ໃນອາຮາມຄຣິສຕຽນຢ່າງຮັ່ງມີ ທ່ານຄັດຄ້ານການໃຊ້ ອຳນາດຂອງສັນຕະປາປາໃນປະເທດອັງກິດ ແລະຕໍ່ສູ້ຄຳສອນເຣື້ອງ ພິທີມະຫາສນິທວ່າ ແປ້ງຈີ່ ແລະນ້ຳ ລະແຊງບໍ່ໄດ້ປ່ຽນເປັນເນື້ອພຣະກາຍແລະພຣະໂລຫິດຂອງພຣະເຢຊູຄຣິສຈິງ ໆ ແຕ່ວ່າແປ້ງຈີ່ແລະນ້ຳ ລະແຊງເປັນແຕ່ພຽງເຄື່ອງໝາຍສັນຍາລັກ ໃຫ້ເຮົາຣະລຶກເຖິງພຣະກາຍແລະພຣະໂລຫິດທີ່ພຣະເຢຊູທີ່ ໄດ້ເສັຽສລະຕາຍໄຖ່ບາບເຮົາ ທ່ານສອນວ່າ ຄຳອວດອ້າງຂອງພວກສັນຕະປາປາທີ່ວ່າ ຕົວມີອຳນາດສູງ ສຸດນັ້ນ ບໍ່ໄດ້ມີຄຳສອນຢູ່ໃນພຣະຄັມພີ ທ່ານໂຈມຕີການນມັສການນັກບຸນ ຈອນໄວຄລິຟ ຖືກໄລ່ອອກຈາກ ອັງກິດໄປໃຊ້ຊີວິດຢ່າງສງົບ ທີ່ລຸທເຕີທ ແລະໄດ້ນຳພາພວກນັກປຣາດ ແປພຣະຄັມພີໃໝ່ເປັນພາສາອັງ ກິດໄດ້ສຳເຣັດ ໃນປີ 1380 ສິດຂອງທ່ານໄດ້ຊ່ວຍແປພຣະຄັມພີເດີມຕໍ່ຈົນສຳເຣັດ ໃນປີ 1384 ອັນ ເປັນປີທີ່ທ່ານສິ້ນຊີວິດ

ການເທສນາຂອງທ່ານໄວຄລິຟ ມີອິດທິພົນກໍ່ໃຫ້ເກີດການກໍ່ຕັ້ງການປະຕິຮູບສາສນາທີ່ຍິ່ງໃຫຍ່ທີ່ສຸດ ການແປພຣະຄັມພີເປັນພາສາອັງກິດ ຊ່ວຍໃຫ້ຫລາຍຄົນໄດ້ອ່ານພຣະຄັມພີຂອງພຣະເຈົ້າໄດ້ເຂົ້າໃຈແລະ ມີຄວາມເຊື່ອອັນຖືກຕ້ອງຊັດເຈນຫລາຍຂຶ້ນ

4. **ຈອນ ຮັສ** (John Huss) ຢູ່ໃນປະເທດໂບເຮມເມັຽ ເກີດໃນ ຄ.ສ.1369 ທ່ານເປັນເຈົ້າອະທິການບໍດີຂອງມຫາວິທຍາລັຍແຫ່ງກຸງປຣ໊າກ ທ່ານເຫັນດ້ວຍກັບຄຳສອນຂອງ ຈອນໄວຄລິຟ ແລະທ່ານໄດ້ຊ່ວຍເທສນາປຸກໃຈໃຫ້ປະຊາຊົນລຸກຂຶ້ນຕໍ່ສູ້ອຳນາດຂອງສັນຕະປາປາ ສັນຕະປາປາໄດ້ປະກາດຕັດທ່ານອອກຈາກຄວາມຮອດພົ້ນ ທ່ານຈອນຮັສຈຶ່ງໄດ້ໜີໄປຫລົບຊ້ອນຕົວ ແຕ່ຍັງມີຂໍ້ຂຽນ ແລະຄຳສອນທີ່ຕໍ່ຕ້ານພວກສັນຕະປາປາອອກມາສູ່ປະຊາຊົນໃຫ້ອ່ານ ຫລັງຈາກຫລົບຊ້ອນຕົວໄດ້ສອງປີທ່ານຕັດສິນໃຈອອກມາສູ້ຄວາມກັບສັນຕະປາປາທີ່ສະພາຄອນສະແຕນໃນປີ ຄ.ສ.1414 ໂດຍຈັກກະພັດຊິກິສມຸນຮັບຮອງຄວາມປອດພັຍ ແຕ່ພົນປາກົດວ່າຖືກຈັບ ແລະຖືກຂໍ້ຫາວ່າເປັນພວກນອກຮີດ ຖືກເຜົາໄຟທັງເປັນໃນ ຄ.ສ.1415 ຈັກກະພັດບໍ່ມີສິດຊ່ວຍທ່ານໄດ້ ເພາະວ່າທ່ານຖືກຕັດອອກຈາກຄວາມຮອດພົ້ນໂດຍອຳນາດສັນຕະປາປາ ເຫດການນັ້ນກໍ່ໃຫ້ເກີດການຕໍ່ຕ້ານໃຫຍ່ຂຶ້ນ ແລະຜູ້ຕໍ່ຕ້ານສັນຕະປາປາກະຫາຍຢາກປະຕິຮູບສາສນາຄຣິສໃນປະເທດໂບເຮມເມັຽຫລາຍຂຶ້ນ ການຕໍ່ຕ້ານໄດ້ກ້າວໜ້າ ຕໍ່ໄປອີກຫລາຍຮ້ອຍປີ

5. **ເຈີໂຣມ ຊາໂວນາໂຣລາ** (Jerome Savonarola) ເກີດໃນ ຄ.ສ.1452 ເປັນນັກບວດນິກາຍໂດມິນິແຄນໃນຟລອເຣນຊ໌ ປະເທດອີຕາລີ ເປັນນັກເທສຍິ່ງໃຫຍ່ມີຜູ້ຟັງມາກມາຍ ທ່ານມັກເທສນາເຣື້ອງການພິພາກສາຄັ້ງສຸດທ້າຍ ທ່ານຕິຕຽນຄວາມບາບຂອງພວກຜູ້ນຳຄຣິສຈັກແລະຄຣິສຕຽນທັງຫລາຍທີ່ໃຊ້ເງິນຄຳໃນການຟູ່ມເຟືອຍ ແລະຕົກແຕ່ງບ້ານເຮືອນງົດງາມ ໂດຍບໍ່ສົນໃຈຄວາມທຸກສຸກຂອງປະຊາຊົນ ທ່ານໄດ້ເທສນາແລະປະຕິບັດຕາມຄຳເທສຂອງຕົວ ທ່ານຈຶ່ງເປັນທີ່ນິຍົມຫລາຍ ມີຜູ້ຕິດຕາມຄຳສອນຂອງທ່ານ ເປັນພົນໃຫ້ເກີດການຕໍ່ຕ້ານແລະກໍ່ຕົວໃຫ້ເກີດການປະຕິຮູບສາສນາ ສັນຕະປາປາໄດ້ຈັບທ່ານເຈີໂຣມໃສ່ຄຸກ ພິພາກສາແຂວນຄໍ ທ່ານທີ່ຈັສຕຸຣັສໃຫຍ່ໃນເມືອງຟລອເຣນຊ໌ຢ່າງທາຣຸນ ໃນປີ ຄ.ສ.1498 ອັນເປັນເວລາພຽງ 19 ປີກ່ອນທີ່ທ່ານມາຕິນ ລູເຕີຈະເອົາຄຳປະກາດຕໍ່ສູ້ສັນຕະປາປາໄປຕິດທີ່ປະຕູພຣະວິຫານວິເຕນເບີກ ໃນປະເທດເຢັຽຣະມັນ

## ສີ່. ສະພາຄຣິສຈັກທີ່ປີຊາ ແລະສະພາຄຣິສຈັກທີ່ຄອນສະແຕນ ຄ.ສ.1409-1418 (The Council of Pisa and The Council of Constance)

ການທີ່ສັນຕະປາປາທັງຫລາຍອ້າງອຳນາດອັນສູງສຸດວ່າ ໄດ້ຮັບມອບອຳນາດຈາກອັຄສາວົກເປໂຕ ສາມາດຕັດຄວາມຮອດພົ້ນຂອງໃຜໄດ້ໝົດ ຫລືມີອຳນາດສັ່ງເນຣະເທດຂັບໄລ່ຜູ້ນຳ ຫລືເຜົາທັງເປັນໂດຍອ້າງຂໍ້ກ່າວຫາວ່າຄົນເຫລົ່ານັ້ນເປັນພວກນອກຮີດສອນຜິດ ນອກຈາກນີ້ຍັງມີເຫດການແຕກແຍກແຍ່ງຊີງຕຳແໜ່ງສັນຕະປາປາໃນຣາວ ຄ.ສ. 1378 ເຖິງ 1417 ທີ່ເອີ້ນກວ່າ Schism ອັນເປັນເຫດການທີ່ສັນຕະປາປາແຫ່ງກຸງໂຣມ ໃນປະເທດອີຕາລີ ແຍ່ງຊີງອຳນາດກັບສັນຕະປາປາແຫ່ງ Avignon ປະເທດຝຣັ່ງ ຈາກສະພາບການນີ້ທີ່ພວກສັນຕະປາປາມັກຫລົງອຳນາດ ເຮັດໃຫ້ຄຣິສຈັກໄດ້ຕື່ນຕົວແລະໄດ້ພຍາຍາມຮວມຕົວກັນຂຶ້ນເປັນ **ສະພາ** ເພື່ອຖ່ວງດຶງອຳນາດຂອງສັນຕະປາປາທີ່ບໍ່ເປັນທັມ ຂບວນການນີ້ເອີ້ນວ່າ **ຂບວນການສະພາ** ໄດ້ຈັດໃຫ້ມີການປະຊຸມສະພາ ທີ່ **ປີຊາ** (Pisa) ໃນຄ.ສ. 1409

ໂດຍການນຳຂອງທ່ານ ປີແອ ດີ ແອລີ່ (Pierre d' Ailly) ແລະທ່ານ ຈີນ ເກອສັນ (Jean Gerson) ແຫ່ງມະຫາວິທຍາລັຍປາຣີສ ໂດຍທ່ານທັ້ງສອງມີຄວາມຫວັງວ່າ **ອຳນາດສູງສຸດຂອງຄຣິສຈັກຕ້ອງມາຈາກສຽງສ່ວນໃຫຍ່ຂອງຜູ້ແທນຄຣິສຈັກທົ່ວຣາຊອານາຈັກ ບໍ່ສົມຄວນຕົກຢູ່ໃຕ້ອຳນາດຂອງສັນຕະປາປາແຕ່ຜູ້ດຽວ**

ທີ່ປະຊຸມສະພາໄດ້ຂໍໃຫ້ສັນຕະປາປາທັງສອງລາອອກຈາກຕຳແໜ່ງ ແລະໄດ້ຕັ້ງຜູ້ທີ່ສາມຂຶ້ນມາໃຫມ່ ແຕ່ການປະຊຸມບໍ່ໄດ້ເກີດຜົນ ຄືບໍ່ມີສັນຕະປາປາຜູ້ໃດຍອມລາອອກ ຈົນກະທັ່ງປີ ຄ.ສ. 1414 ໄດ້ມີການປະຊຸມອີກເທື່ອນຶ່ງ ເອີ້ນວ່າ ສະພາຄອນສະແຕນ (The Council of Constance) ມີຜູ້ແທນຈາກຄຣິສຈັກທົ່ວຣາຊອານາຈັກ ພຣະຜູ້ໃຫຍ່ທັງຫລາຍແລະເຈົ້າຊີວິດຈາກປະເທດສຳຄັນ ໆ ໄດ້ເຂົ້າຮ່ວມປະຊຸມຕົກລົງກັນ ຂໍໃຫ້ສັນຕະປາປາທັງສາມລາອອກ ແລະສັນຕະປາປາທັງສາມໄດ້ລາອອກ ໂດຍມີຄວາມຫວັງວ່າ ຕົນຈະໄດ້ຮັບເລືອກໃຫມ່ ຜົນປາກົດວ່າທີ່ປະຊຸມໄດ້ເລືອກ ມາຕິນທີ່ 5 (Martin V) ໃຫ້ເປັນສັນຕະປາປາ ໂດຍຄວາມພຍາຍາມຂອງສະພານີ້ ເພື່ອຈະປັບປຸງອຳນາດຂອງຄຣິສຈັກ ແລະຟື້ນຟູຄຣິສຈັກໃຫມ່ ແຕ່ບໍ່ໄດ້ຮັບຄວາມສຳເຣັດອີກ ສະພາຖືກຍຸບເສັຽໃນ ຄ.ສ.1418 ໂດຍສັນຕະປາປາມາຕິນທີ 5 ຜູ້ຢຶດອຳນາດຄືນຈາກຂບວນການສະພາ ດັ່ງນັ້ນຄວາມຫວັງຂອງການຟື້ນຟູຄຣິສຈັກໂດຍສັນຕິຈຶ່ງຫມົດສິ້ນໄປ ເປັນເຫດໃຫ້ການກໍ່ຕົວຂອງພວກປະຕິຮູບສາສນາຮ້ອນຮົນຫລາຍຂຶ້ນ ແມ່ນວ່າພາຍຫລັງໄດ້ພຍາຍາມຈັດໃຫ້ມີການປະຊຸມສະພາທີ່ເບເຊີລ (Basile) ໃນປີ 1431 ແຕ່ບໍ່ໄດ້ປະສົບຜົລສຳເຣັດອັນໃດເລີຍ

**ຫ້າ. ກຸງຄອນສະແຕນຕິໂນເປິລລົ້ມ** ຄ.ສ.1453

ກຸງຄອນສະແຕນຕິໂນເປິລ ມີອີກນາມນຶ່ງຄືອານາຈັກໄບແຊນທຽມ (Byzentium) ໄດ້ຖືກຢຶດໂດຍພວກເຕີຣກີ ອອຕໂຕມັນ ເພາະເຫດຈັກກະພັດ ໄມເຄີລເປລີໂອໂລກັສ ທ່ານໄດ້ຊີ້ນພຣະຊົນອັນເປັນຈັກກະພັດອົງສຸດທ້າຍ ພຣະວິຫານ ເຊັນໂຊເຟັຽ ຖືກປ່ຽນເປັນສຸເຫລົາຂອງພວກອິສລາມ ແລະຄຣິສຈັກກຣີກອໍທອດອກຊ໌ຕ້ອງຕົກຢູ່ໃນການປົກຄອງຂອງພວກອິສລາມດ້ວຍ

ນັກປວັດສາດ ໄດ້ຖືເອົາການລົ້ມຂອງກຸງຄອນສະແຕນຕິໂນເປິລ ເປັນຈຸດສິ້ນສຸດສມັຍກາງແລະເລີ້ມຕົ້ນສມັຍປັຈຈຸບັນ ກຸງຄອນສະແຕນຕິໂນເປິລໄດ້ກາຍເປັນເມືອງຫລວງຂອງພວກເຕີຣກີຈົນກະທັ້ງ ຄ.ສ 1920

**ຫົກ. ຍຸກວິທຍາການຮຸ່ງເຮືອງ ການຟື້ນຟູສີລປະ ແລະການສຶກສາ** (Renaissance)

Renaissance ຄຳນີ້ຫມາຍເຖິງຍຸກທີ່ເກີດໃຫມ່ ຫລືການປ່ຽນແປງວັທນະທັມສູ່ສມັຍໃຫມ່ໃນຣາວ ຄ.ສ.1350-1650 ຍຸກວິທຍາການຮຸ່ງເຮືອງນີ້ເປັນຊ່ວງເວລາທີ່ເອົາວິທຍາການສມັຍກາງກາຍເຂົ້າສູ່ວິທຍາການສມັຍໃຫມ່ໃນປັຈຈຸບັນ ເປັນການຄົ້ນພົບໃຫມ່ຂອງຄວາມຮຸ່ງເຮືອງໃນວິທຍາການຕາວັນຕົກເລີ້ມຕົ້ນໃນປະເທດອີຕາລີປະມານສັຕວັດທີ 14 ແລະແຜ່ຫລາຍກ້ວາງຂວາງ ອອກໄປເປັນທົ່ວຢູໂຣບການຟື້ນຟູສີລປະການແຕ້ມພາບ ການແກະສລັກ ການກະວີແລະບົດປະພັນ ຮວມໄປເຖິງການກໍ່ສ້າງ ນັກປຣາດທັງຫລາຍພາກັນສົນໃຈສຶກສາ ຣື້ຟື້ນເອົາປວັດສາດໂບຣານຄະດີ ຄົ້ນຄ້ວາວັທນະທັມກຣີກ ໂຣມັນ ຄົ້ນຫາຫນັງສືເກົ່າ ໆ ທີ່ເສື່ອງໄວ້ໃນອາຣາມ ແລະການຄິດຄົ້ນເກີດແນວຄິດໃຫມ່ທາງດ້ານວິທຍາສາດ ໂດຍ

ສະເພາະຢ່າງຍິ່ງການຄົ້ນພົບວິທີການພິມໜັງສື ສິ່ງຕີພິມເຫຼົ່ານີ້ຊ່ວຍໃຫ້ການສຶກສາຂະຍາຍກວ້າງຂວາງຫລາຍຂຶ້ນ ເພາະມີການພິມຫລັກການແນວຄິດໄວ້ເປັນຫລັກຖານ ກໍ່ໃຫ້ເກີດການຄິດຄົ້ນທາງດ້ານວິທຍາສາດ ໄດ້ມີການປັບປຸງເພີ້ມເຕີມຕໍ່ຈາກຜູ້ທີ່ເຄີຍຄິດຄົ້ນໄວ້ແຕ່ເດີມ ເຮັດໃຫ້ເກີດຄວາມສົມບູນແບບຫລາຍຂຶ້ນ ທັງໃນດ້ານສິລປະກັມແລະວິທຍາການສມັຍໃຫມ່ ການຟື້ນຟູຄວາມຈະເຣີນກ້າວໜ້ານີ້ເປັນວິທຍາການສມັຍໃຫມ່ທາງໂລກຫລາຍກວ່າທາງສາສນາ ຫລືເຣື້ອງຂອງພຣະເຈົ້າ ແຕ່ຍຸກໃຫມ່ນີ້ການສຶກສາມີຈຸດສູນກາງຢູ່ທີ່ ມະນຸດວິທຍາ ສັງຄົມວິທຍາ ແລະການຄິດຄົ້ນຄວ້າເທຄນິກ ເຄື່ອງຈັກ ເຄື່ອງກົນ ເພື່ອຊີວິດການເປັນຢູ່ທີ່ສະດວກສະບາຍຫລາຍຂຶ້ນກວ່າເກົ່າ ຍຸກການຟື້ນຟູວິທຍາການ ແລະການຄົ້ນພົບວິທີພິມໜັງສືຊ່ວຍໃຫ້ປະຊາຊົນສາມາດມີສິ່ງພິມ ໄດ້ມີການອ່ານມີການຮຽນຫລາຍຂຶ້ນ ເຮັດໃຫ້ປະຊາຊົນອ່ານອອກຂຽນໄດ້ຫລາຍກວ່າສມັຍກາງ ດ້ວຍເຫດນີ້ເອງ ຈຶ່ງມີຄຣິສຕຽນທີ່ສາມາດອ່ານພຣະຄັມພີດ້ວຍຕົນເອງໄດ້ຫລາຍຂຶ້ນ ເຮັດໃຫ້ເກີດຄວາມເຊື່ອຄວາມເຂົ້າໃຈຕາມຄຳສອນໃນພຣະຄັມພີຫລາຍຂຶ້ນ ແລະບໍ່ຫລົງງົມງາຍຕາມຄຳສອນຂອງຜູ້ມີອຳນາດ

## ຈົບພາກນຶ່ງຕໍ່ພາກສອງ

# ບົດທີ 11

# ສາຍເຫດການປະຕິຮູບຄຣິສຈັກ ແລະ ການປະຮູບຄຣິສຈັກໃນເບັຽຣະມັນ

## ສາຍເຫດທີ່ນຳມາເຖິງການປະຮູບຄຣິສຈັກ

ສາຍເຫດທີ່ນຳມາເຖິງການປະຕິຮູບຄຣິສຈັກໃນສັດວັດທີ່ 16 ນີ້ມີຫລາຍສາເຫດນຳກັນ ດັ່ງທີ່ເຮົາໄດ້ຮຽນມາແລ້ວໃນປວັດສາດຄຣິສຈັກພາກທີ່ນຶ່ງຊຶ່ງສລຸບໄດ້ໂດຍຍໍ່ ດັ່ງນີ້ວ່າ ເມື່ອຄຣິສຈັກໄດ້ຮັບການຍ້ອງຍໍໃຫ້ເປັນສາສນາປະຈຳຊາດຂອງມະຫາອານາຈັກໂຣມັນແລ້ວ ຜູ້ນຳຄຣິສຈັກກໍໄດ້ຮັບການຍ້ອງຍໍໃຫ້ມີກຽດແລະມີຍົດສູງໃນຣັຖບານ ແລະມີອຳນາດການປົກຄອງປະເທດຊາດຕ່າງ ໆ ຮ່ວມກັບເຈົ້າຊີວິດທັງຫລາຍໂດຍສະເພາະຢ່າງຍິ່ງ ສັນຕະປາປາໄດ້ຮັບອຳນາດສູງສຸດເຫນືອການປົກຄອງໃນດິນແດນຕ່າງ ໆ ທີ່ວຢຸໂຣປ ຈະເຫັນໄດ້ວ່າເມື່ອຜູ້ນຳຄຣິສຈັກມີອຳນາດຫລາຍ ຫນ້າທີ່ຈະເປັນເຣື້ອງດີ ທີ່ເຮົາຈະພາກັນສັຣເສີນພຣະເຈົ້າ ເພາະວ່າຄຣິສຕຽນບໍ່ໄດ້ຖືກຂົ່ມເຫັງອີກຕໍ່ໄປ ແຕ່ບໍ່ເປັນດັ່ງນັ້ນ ເພາະເຫດວ່າພວກຜູ້ນຳຄຣິສຈັກເມື່ອໄດ້ຮັບອຳນາດຫລາຍແລ້ວເກີດລືມຕົວ ແລະຫລົງຢູ່ໃນລາບຍົດຂາດຄວາມເຊື່ອ ບໍ່ໄດ້ສະແຫວງການນຳພາຂອງພຣະເຈົ້າ ບໍ່ໄດ້ສົນໃຈໃນຄຳສອນອັນທ່ຽງແທ້ທີ່ມາຈາກພຣະຄັມພີ ແຕ່ກັບເຕີມແຕ່ງຄວາມເຊື່ອໄປຕາມໃຈຊອບ ເພື່ອສົ່ງເສີມອຳນາດຂອງຕົວ ແລະເພື່ອສ້າງຄວາມມັ່ນຄົງໃຫ້ແກ່ຕົນເອງໂດຍບໍ່ຄຳນຶງເຖິງຈຸດປະສົງແລະນ້ຳພຣະທັຍຂອງພຣະເຈົ້າ ດັ່ງນັ້ນພວກຄຣິສຕຽນທີ່ມີຄວາມເຂັ້ມແຂງແລະໄດ້ສຶກສາພຣະຄັມພີ ແລະໄດ້ເກີດຄວາມເຂົ້າໃຈຢ່າງລຶກແນ່ເຖິງຈຸດປະສົງແລະນ້ຳພຣະທັຍຂອງພຣະເຈົ້າທີ່ມີຕໍ່ມະນຸດ ແລະເມື່ອພວກເຂົາພົບຄວາມຈິງແທ້ໃນພຣະຄຳຂອງພຣະເຈົ້າແລ້ວກໍຍິ່ງເຮັດໃຫ້ເຫັນຊັດແຈ້ງຍິ່ງຂຶ້ນເຖິງການຫລົງຜິດຂອງພວກຜູ້ນຳຄຣິສຈັກໃນສມັຍນັ້ນ ຊຶ່ງສົນໃຈແຕ່ເຣື້ອງການເມືອງການມີອຳນາດ ແລະການມີຜົນປໂຍດ ນອກຈາກນີ້ແລ້ວຍັງມີສາຍເຫດອື່ນ ໆ ອີກຫລາຍດ້ານ ຊຶ່ງຂໍສລຸບມາພຽງ 5 ປະການຄື

1. **ປະຊາຊົນເບື່ອຫນ່າຍຕໍ່ອຳນາດຂອງສັນຕະປາປາທີ່ນຳໃຫ້ຄຣິສຈັກຫລົງຜິດ** ຕອນຕົ້ນສັຕວັດທີ 16 ນີ້ ປະຊາຊົນພາກັນຄິດວ່າ ຈະເຮັດແນວໃດຈຶ່ງຈະສາມາດນຳພາຄຣິສຈັກໃຫ້ມີການປ່ຽນແປງ ດິນແດນແຖບຕອນໃຕ້ແຄມຝັ່ງແມ່ນ້ຳ ໄຣນ໌ (Rhine) ພວກນັກບວດ ແລະປະຊາຊົນທີ່ມີຊີວິດແບບທັມມະດາພາກັນຊອກຫາ ແລະວິງວອນພຣະເຈົ້າທີ່ຈະໄດ້ຜູ້ຮັບໃຊ້ຂອງພຣະເຈົ້າທີ່ສັດຊື່ມາຟື້ນຟູປ່ຽນແປງຄຣິສຈັກ ປະຊາຊົນພາກັນເບື່ອຫນ່າຍຕໍ່ສັນຕະປາປາທີ່ຢຶດອຳນາດ ແລະທຳຕົວດັ່ງເຈົ້າຊີວິດປົກຄອງຄຣິສຈັກ ໂລບໃນລາບຍົດ ແລະມັກໄດ້ສິນບັດຂອງປະຊາຊົນຢ່າງບໍ່ສົມຄວນ ແລະບໍ່ຖືກຕ້ອງຕາມພຣະຄັມພີ ພວກອາຈານພວກນັກເທວສາດຫລືນັກສາສນາສາດ ຕ່າງພາກັນເບິ່ງວ່າເມື່ອໃດ ຜູ້ນຳຄຣິສຕຽນທີ່ດີທັງຫລາຍຈະຣວມຕົວກັນຂຶ້ນ ເພື່ອກໍ່ຕັ້ງສະພາຄຣິສຈັກຂຶ້ນໃຫມ່ອີກ ເພື່ອຖ່ວງດຶງອຳນາດຂອງສັນຕະປາປາ ແລະນຳພາໃຫ້

ຄຣິສຈັກເກີດການປົກຄອງທີ່ຖືກຕ້ອງຕາມພຣະຄັມພີຕໍ່ໄປ

2. **ຄວາມກ້າວໜ້າແລະການປ່ຽນແປງຂອງຍຸກເກົ່າເຂົ້າສູ່ສມັຍໃໝ່** (Renaissance) ການຟື້ນຟູສິລປະວັທນະທັມ ວັນນະຄະດີ ແລະຊີວິດຄວາມເປັນຢູ່ທີ່ດີຂຶ້ນຂອງສັງຄົມ ຄວາມສົນໃຈໃນວິທຍາການສມັຍໃໝ່ ໂດຍສະເພາະຢ່າງຍິ່ງ ແມ່ນຄວາມກ້າວໜ້າທາງດ້ານການປົກຄອງຂອງປະເທດຕ່າງ ໆ ໃນແຖບຢູໂຣປ ໄດ້ພະຍາຍາມພັທນາປະເທດຂອງຕົນໃຫ້ເປັນອິສຣະຈາກອຳນາດຂອງສັນຕະປາປາ ແລະຕ້ອງການຕັ້ງຕົວເອງໃຫ້ເປັນປະເທດອິສຣະຈາກອຳນາດຂອງຣາຊອານາຈັກໂຣມັນ ປະຊາຊົນທົ່ວຣາຊອານາຈັກຕ້ອງການສະໜັບສະໜູນຜູ້ນຳທາງການເມືອງໃນປະເທດໃຜລາວ ໃຫ້ເປັນຜູ້ປົກຄອງປະເທດຂອງຕົນຫລາຍກວ່າ ທີ່ຈະປ່ອຍໃຫ້ຄຣິສຈັກມີອຳນາຈເໜືອປະຊາຊົນຂອງຕົນ ຄຣິສຈັກໃນແຕ່ລະປະເທດສົມຄວນເປັນອິສຣະໃນຕົນເອງ ແລະສົມຄວນໃຊ້ພາສາຂອງຕົນເອງຕາມທີ່ປະຊາຊົນຈະສາມາດເຂົ້າໃຈໄດ້ ພຣະຄັມພີສົມຄວນຖືກແປອອກເປັນພາສາຕ່າງ ໆ ບໍ່ແມ່ນມີແຕ່ພາສາກຣີກແລະພາສາລາຕິນເທົ່ານັ້ນ ຊຶ່ງປະຊາຊົນໂດຍທົ່ວໄປບໍ່ສາມາດເຂົ້າໃຈໄດ້

3. **ການຄົ້ນພົບວິທີການພິມໜັງສື** ການຮູ້ຈັກວິທີພິມໜັງສືໃສ່ເຈັ້ຽ ເຮັດໃຫ້ສາມາດພິມໜັງສືໄດ້ຫລາຍ ໆ ເຫລັ້ມໃນເວລາອັນສັ້ນ ບໍ່ຄືຍຸກສມັຍກ່ອນທີ່ຄັດລອກຕົວໜັງສືດ້ວຍມື ເຮັດໄດ້ຊ້າ ໆ ໄດ້ແຕ່ເທື່ອລະນ້ອຍ ການພິມສາມາດຊ່ວຍໃຫ້ການສົ່ງຂ່າວສານໄດ້ແຜ່ຫລາຍໄວກວ່າຣະບອບເກົ່າ ສິ່ງທີ່ພິມສາມາດຊ່ວຍໃຫ້ປະຊາຊົນອ່ານອອກແລະຮູ້ຈັກຂຽນໄດ້ຫລາຍຂຶ້ນ ດັ່ງນັ້ນເມື່ອເກີດການກໍ່ຕົວເພື່ອການປະຕິຮູບຄຣິສຈັກ ການພິມໄດ້ຊ່ວຍໃຫ້ເກີດການແຜ່ຂ່າວແລະຄວາມຄິດເຫັນເຣື່ອງຫລັກຂໍ້ເຊື່ອ ແລະຫລັກຄຳສອນອັນຖືກຕ້ອງຂອງພຣະຄັມພີໄດ້ງ່າຍຂຶ້ນ ດັ່ງນັ້ນຂໍ້ຄວາມຄິດເຫັນທີ່ຕໍ່ສູ້ຄັດຄ້ານການສອນຜິດຂອງພວກສັນຕະປາປາ ຈຶ່ງຖືກພິມແລະໄດ້ແຜ່ຂຍາຍອອກໄປໂດຍໄວ

4. **ການສຶກສາຄົ້ນພົບຄວາມຈິງຈາກພຣະຄຣິສຕທັມຄັມພີ** ພວກຄຣິສຕຽນຜູ້ນຳການປະຕິຮູບຄຣິສຈັກແລະພວກນັກປາດຕາມມຫາວິທຍາລັຍຕ່າງ ໆ ພາກັນຮຽນຮູ້ພາສາກຣີກໂບຮານ ໄດ້ນຳພາໃຫ້ເກີດຄວາມເຂົ້າໃຈແລະສາມາດຕີຄວາມໝາຍຂອງພຣະຄັມພີໄດ້ຖືກຕ້ອງ ການທີ່ປະຊາຊົນສາມາດອ່ານໜັງສືໄດ້ຫລາຍຂຶ້ນ ເປັນເຫດໃຫ້ການສຶກສາຮຽນຮູ້ຈັກພຣະຄຳຂອງພຣະເຈົ້າໄດ້ດ້ວຍຕົນເອງ ແລະສາມາດເຂົ້າໃຈຄຳສອນຂອງພຣະເຢຊູຄຣິສໄດ້ໂດຍຕົງ ສາມາດເຂົ້າໃຈຄຳສອນຂອງອັຄສາວົກ ແລະຄວາມເຊື່ອຂອງຄຣິສຕຽນໃນຍຸກທຳອິດທີ່ເຄີຍຢູ່ໃກ້ຊິດກັບພຣະເຢຊູ ແລະຮັບປະສົບການຄຳສອນໂດຍຕົງຈາກພຣະເຢຊູ ທີ່ສຳຄັນທີ່ສຸດ ນັ້ນແມ່ນເຂົ້າໃຈເຣື່ອງຄວາມພົ້ນທີ່ຈະຣຶກໄວ້ໃນພຣະຄັມພີ ດັ່ງນັ້ນແລ້ວການຮູ້ຈັກພຣະຄຳຂອງພຣະເຈົ້າ ໄດ້ນຳພາໃຫ້ຄຣິສຕຽນທີ່ມີຄວາມເຊື່ອແທ້ຈິງ ຕ້ອງການຄັດຄ້ານຄຳສອນຜິດ ແລະຕ້ອງການປະຕິຮູບຄຣິສຈັກເພື່ອແປງຄຣິສຈັກໃຫ້ຖືກຕ້ອງຕາມພຣະຄັມພີ

5. **ປະເທດຕ່າງ ໆ ເກີດຄວາມຮັກຊາດຂອງຕົວ** ເຈົ້າຊີວິດທັງຫລາຍຕ້ອງການໃຫ້ປະເທດຂອງຕົວຫລຸດພົ້ນອຳນາຈຂອງຄຣິສຈັກ ແລະມີຣະບົບປົກຄອງທາງການເມືອງທີ່ແຍກອອກຈາກການປົກຄອງທາງສາສນາ ຝ່າຍທາງຄຣິສຕຽນທີ່ມີຄວາມເຊື່ອຖືກຕ້ອງກໍພ້ອມທີ່ຈະສນັບສນຸນຜູ້ນຳໃຫ້ເກີດການປ່ຽນແປງໃນປະເທດຊາດຂອງຕົວ ຄຣິສຕຽນທັງຫລາຍຕັ້ງຄວາມຫວັງ ທີ່ຈະໃຫ້ຄຣິສຈັກຫລຸດອອກຈາກການເມືອງ ແລະມີຜູ້ນຳຝ່າຍວິນຍານຈິດອັນແທ້ຈິງ ເພື່ອຈະນຳພາໃຫ້ຄຣິສຈັກຕັ້ງຢູ່ເທິງພື້ນຖານຄວາມຈິງຕາມ

ພຣະຄັມພີ ແລະເມື່ອຜູ້ນຳຫລາຍຄົນຈຳເປັນຕ້ອງເສັຽສະລະຊີວິດ ເພື່ອຕໍ່ສູ້ແລະຄັດຄ້ານຄຳສອນຜິດ ຄຣິສຕຽນທີ່ຮັກພຣະເຈົ້າກໍພ້ອມທີ່ຈະຢືນຂຶ້ນສນັບສນູນໃຫ້ເກີດການປະຕິຮູບ ເພື່ອປຽນແປງຄຣິສຈັກເສັຍໃໝ່

**ສລູບຄວາມ** ຈະເຫັນໄດ້ວ່າ ການແຕກແຍກໃນຕອນຕົ້ນຂອງຄຣິສຈັກນັ້ນ ໄດ້ມີມາເປັນເວລາດົນນານແລ້ວ ຄືຕັ້ງແຕ່ການແຕກແຍກຂອງຄຣິສຈັກຣະຫວ່າງຄຣິສຈັກຕະວັນຕກ (ແມ່ນຄຣິສຈັກຄາທໍລິກ) ກັບຄຣິສຈັກຝ່າຍຕະວັນອອກ (ແມ່ນຄຣິສຈັກກຣີກອອທອດອກຊ໌) ແຕ່ວ່າການແຕກແຍກໃນເທື່ອນັ້ນມີເຫດເນື່ອງຈາກການແບ່ງດິນແດນ ແລະການຍ້າຍເມືອງຫລວງຈາກກຸງໂຣມໄປສູ່ກຸງຄອນສະແຕນຕິໂນເປິລ ປະຊາຊົນໂດຍທົ່ວ ໆ ໃນເວລານີ້ກໍຍັງຄົງຖືວ່າເປັນຄຣິສຈັກດຽວກັນ ແຕ່ວ່າມາບັດນີ້ການແຕກແຍກໂດຍການປະຕິຮູບຄຣິສຈັກ ໄດ້ມີຄວາມສຳຄັນຢ່າງຫລວງຫລາຍຕໍ່ປວັດສາດຄຣິສຈັກ ເພາະວ່າ "ຄຣິສຈັກປະຕິຮູບ"(Reformed Church) ໄດ້ແຍກຕົວອອກຈາກຄຣິສຈັກຄາທໍລິກຢ່າງເດັດຂາດ ແລະຫັນຄືນໄປສູ່ຄວາມເຊື່ອແທ້ແບບຄຣິສຕຽນຍຸກທຳອິດ ຊຶ່ງພວກຄຣິສຈັກປະຕິຮູບໄດ້ແຍກຕົວອອກມາ ແລະກໍ່ຕັ້ງຄຣິສຈັກປະຕິຮູບໃໝ່ທີ່ເອີ້ນວ່າ "ຄຣິສຈັກໂປເຕັສເຕນ" ຢ່າງທີ່ເຮົາມີຢູ່ໃນປັດຈຸບັນ ແລະບໍ່ໄດ້ກ່ຽວຂ້ອງ ຫລືຢູ່ໃຕ້ການປົກຄອງຂອງຄຣິສຈັກຄາທໍລິກອີກຕໍ່ໄປ

<u>ການປະຕິຮູບຄຣິສຈັກໃນເຢັຽຣະມັນໂດຍ ທ່ານມາຕິນ ລູເທີ</u> (Martin Luther 1483-1546)

ຄຣິສຕຽນທີ່ຢູ່ຣະດັບຜູ້ນຳຂອງຄຣິສຈັກໃນຣາຊອານາຈັກໂຣມັນ ຕ່າງຕັ້ງຄວາມຫວັງອັນສູງສຸດທີ່ຈະເຫັນຄຣິສຈັກຮັບການປ່ຽນແປງແກ້ໄຂໃຫ້ຖືກຕ້ອງຕາມພຣະຄັມພີ ແລະຖືກຕ້ອງຕາມນ້ຳພຣະທັຍຂອງພຣະເຈົ້າ ໂດຍໃຊ້ວິທີການຢ່າງສັນຕິຜູ້ນຳຫລາຍຄົນທີ່ໄດ້ຄັດຄ້ານຄຣິສຈັກໃນເວລານັ້ນ ບໍ່ໄດ້ມີໃຈປາຖນາທີ່ຈະເຫັນການຕໍ່ສູ້ ທຳລາຍຊີວິດຂອງກັນແລະກັນ ບໍ່ໄດ້ມຸ້ງຫມາຍໃຫ້ຄຣິສຈັກຕ້ອງແຕກແຍກອອກຈາກກັນ ທ່ານມາຕິນ ລູເທີ ເປັນຜູ້ນຶ່ງໃນຈຳນວນຜູ້ນຳຄຣິສຕຽນທີ່ຮັກພຣະເຈົ້າ ທີ່ຕ້ອງການເຫັນຄຣິສຈັກຂອງພຣະຄຣິສເປັນຄຣິສຈັກທີ່ຖືກຕ້ອງຕາມຫລັກຄວາມເຊື່ອ ແລະຄຳສອນທີ່ມີຢູ່ໃນພຣະຄັມພີ ແຕ່ວ່າຄວາມບາບຄວາມອວດຕົວ ຄວາມໂລບຂອງຜູ້ກຳອຳນາດຄຣິສຈັກ ໃນເວລານັ້ນທັງພວກສັນຕະປາປາແລະຜູ້ທີ່ຮັບຜົນປໂຍດທັງຫລາຍ ບໍ່ຍອມໃຫ້ຄຣິສຈັກເກີດການປ່ຽນແປງຢ່າງງ່າຍ ໆ ເພາະຢ້ານວ່າຈະເສັຽຜົນປໂຍດສ່ວນຕົວ

ສັນຕະປະປາລີໂອທີ່ 10 ຕ້ອງການເງິນຄຳມາສ້າງພຣະວິຫານເຊັນປີເຕີໃນກຸງໂຣມໃຫ້ສຳເຣັດດັ່ງນັ້ນ ໃນລາວປີ ຄ.ສ. 1500 ທ່ານຈອນ ເທດແຊລ (John Tetzel) ໄດ້ອອກຂາຍໃບບູລລ໌ (Bull) ທີ່ປະເທດເຢັຽຣະມັນ ໃບບູລລ໌ນີ້ເປັນແຜ່ນເຈັ້ຽຫນັງສືຕາປະທັບ ເພື່ອເປັນບັດສະແດງວ່າຜູ້ທີ່ຊື້ໃບບູລລ໌ນີ້ໄດ້ຮັບການໂຜດໃຫ້ພົ້ນແລ້ວຈາກສັນຕະປາປາ ຫລືຫາກວ່າຜູ້ໃດໄດ້ຊື້ໃບບູລລ໌ນີ້ໃຫ້ແກ່ຍາດທີ່ໄດ້ຕາຍໄປແລ້ວກໍຈະສາມາດຊ່ວຍວິນຍານຂອງຜູ້ຕາຍນັ້ນ ໃຫ້ພົ້ນໂທດບາບໃນແດນໄຟຊຳຣະ ທ່ານຈອນເທດແຊລ ສອນວ່າ "ເມື່ອຫລຽນເງິນຂອງທ່ານຕົກລົງໄປໃນກັບໃສ່ເງິນ ແລະເກີດສຽງດັງກິ້ງ ວິນຍານຂອງຜູ້ຕາຍຈະກະໂດດຂຶ້ນສວັນທັນທີ"

ທ່ານມາຕິນ ລູເທີ (ຊາວແຊກຊອນ, Saxon) ທ່ານຮັບການສຶກສາແລະຈົບປຣິນຍາໂທຈາກມະຫາວິທຍາລັຍໃນເອຣຶຟູຕ (University of Erfurt) ໃນປະເທດເຢັຽຣະມັນປີ ຄ.ສ.1505

ທ່ານລູເທີສຶກສາທາງເພື່ອເປັນທະນາຍຄວາມ ແຕ່ແຜນການສຶກສາຕໍ່ຕ້ອງປ່ຽນໄປ ເພາະໄດ້ເຂົ້າບວດໃນຄຣິສຈັກຄາທໍລິກ ໃນວິຫານທີ່ມີຄວາມເຊື່ອຕາມທ່ານອອກັສຕິນ (Augustinian Hermits) ທ່ານໄດ້ຮັບການແຕ່ງຕັ້ງໃນເປັນນັກເທດໃນປີ ຄ.ສ.1507 ແລະເປັນອາຈານຈານສອນໃນມຫາວິທຍາລັຍ ຊື່ ວິຕແຕນເບີກ (Wittenberg) ແຄວັນແຊກຊອນນີ (Saxony) ທ່ານໄດ້ມີໂອກາສເປັນຜູ້ຕ່າງໜ້າໄປປະຊຸມທີ່ກຸງໂຣມໃນປີ ຄ.ສ.1510 ໃນເວລາດຽວກັນນັ້ນເອງທ່ານໄດ້ສຶກສາຕໍ່ທາງດ້ານສາສນາສາດ ແລະໄດ້ຈົບປຣິນຍາເອກທາງສາສນາສາດໃນປີ ຄ.ສ.1512 ຈາກມະຫາວິທຍາລັຍວິຕແຕນເບີກນັ້ນເອງ

ສາເຫດທີ່ທ່ານລູເທີອອກບວດນັ້ນ ເພາະທ່ານຮູ້ສຶກວ່າຕົນເອງເປັນຄົນບາບຫລາຍ ທ່ານຫວັງວ່າເມື່ອທ່ານໄດ້ເຂົ້າບວດແລ້ວ ແລະເມື່ອໄດ້ພະຍາຍາມເປັນນັກບວດທີ່ດີທີ່ສຸດ ໂດຍການປະຕິບັດຕາມຂໍ້ສີລທັມທຸກປະການແລ້ວ ຄົງຈະເຮັດໃຫ້ຕົນເອງຮູ້ສຶກດີຂຶ້ນ ທ່ານໄດ້ຮັບອິດທິພົນຄຳສອນຈາກຂໍ້ຂຽນຂອງທ່ານອອກັສຕິນ ທ່ານໄດ້ອ່ານແລະສຶກສາພຣະຄັມພີໃໝ່ໃນພາສາກຣີກໂດຍສົມທຽບກັບພາສາລາຕິນ ທ່ານໄດ້ສຶກສາພົບຂໍ້ຄວາມທີ່ວ່າ Poenitenta ຊຶ່ງທ່ານໄດ້ເຄີຍເຂົ້າໃຈຕາມທີ່ໄດ້ຮຽນມາຈາກພາສາລາຕິນວ່າໝາຍເຖິງ "ສີລແກ້ບາບ" (Penance) ແຕ່ເມື່ອທ່ານສຶກສາຄວາມເດີມໃນພາສາກຣີກໃຊ້ຄຳວ່າ "ເມທາໂນຍາ" (Metanoia) (ຊຶ່ງແປວ່າ ການຫັນໃຈເກົ່າເອົາໃຈໃໝ່ຫລືກັບໃຈໃໝ່) ໃນທີ່ສຸດດ້ວຍການສຶກສາຄົ້ນຄວ້າຢ່າງນັກ ທ່ານລູເທີໄດ້ເຂົ້າໃຈຄວາມໝາຍແທ້ຂອງພຣະທັມໂຣມ 3:28 ວ່າ "ໂດຍຄວາມເຊື່ອເທົ່ານັ້ນທີ່ນຳເຮົາໃຫ້ຣອດພົ້ນ ດ້ວຍຄວາມເຊື່ອນັ້ນນຳໃຫ້ເຮົາເກີດການກັບໃຈໃໝ່ ເມື່ອທ່ານລູເທີໄດ້ເຫັນວ່າ ກິຈການຂາຍໃບບູລລ໌ (Bull) ທີ່ວປະເທດເຢັຽຣະມັນເປັນສິ່ງທີ່ຫລອກລວງ ເຮັດໃຫ້ທ່ານເສັຽໃຈຫລາຍ ເພາະບັດນີ້ທ່ານໄດ້ຮູ້ຈັກຄັກແລ້ວວ່າ ໃນພຣະຄັມພີບໍ່ໄດ້ສອນເຣື່ອງແນວນີ້ໄວ້ເລີຍ ບໍ່ມີນັກບຸນຜູ້ໃດທີ່ສາມາດແຜ່ບຸນກຸສົນຂອງຕົນ ເພື່ອຊ່ວຍໃຫ້ຄົນທີ່ຕາຍແລ້ວຂຶ້ນສວັນໄວ ໆ ໄດ້ ນັກບຸນເອງກໍບໍ່ສາມາດຊ່ວຍຕົນເອງໃຫ້ພົ້ນໄດ້ຄືກັນ ມີແຕ່ຜູ້ດຽວທີ່ສາມາດໂຜດມະນຸດໃຫ້ພົ້ນນັ້ນ ແມ່ນພຣະເຢຊູຄຣິສພຣະບຸດຂອງພຣະເຈົ້າຜູ້ຊົງຕາຍໄຖ່ບາບເຮົາເທິງໄມ້ກາງແຂນ ແລະໂດຍການສຳນຶກບາບ ກັບໃຈບັງເກີດໃໝ່ຂອງເຮົານັ້ນເອງ ທີ່ເຮັດໃຫ້ເຮົາໄດ້ຮັບເອົາການຍົກໂທດໂຜດໃຫ້ພົ້ນຈາກພຣະອົງ ບໍ່ແມ່ນດ້ວຍເງິນຄຳທີ່ຈະຫາຊື້ໃບບູລລ໌ມາໂຜດ ນອກຈາກນີ້ ທ່ານລູເທີຍັງໄດ້ຮັບຮູ້ອີກວ່າ ທ່ານອັນເບີຕແຫ່ງບຣັນແດນເບີກ (Albert of Brandenburg) ອາຍຸຍັງບໍ່ທັນໄດ້ຄົບກຳນົດເປັນສັງກະຣາດ ແຕ່ວ່າທ່ານໄດ້ເປັນສັງຄະຣາດແລ້ວໃນສອງຕາແສງ ທ່ານອັນເບີຕຍັງໄດ້ຈ່າຍເງິນເຈັດພັນຫລຽນແກ່ສັນຕະປາປາ ເພື່ອອຸທິດແກ່ຄວາມບາບທັງເຈັດເປັນການຊື້ຕຳແໜ່ງສັງຄະຣາດຈາກຕາແສງທີ່ສາມ ແຕ່ວ່າສັນຕະປາປາໄດ້ຮຽກຮ້ອງເງິນຫລາຍກວ່ານັ້ນ ທ່ານອັລເບີກຈຶ່ງໄດ້ຂາຍໃບບູລລ໌ເພື່ອຫາລາຍໄດ້ໃຫ້ຄົບຈຳນວນສິບພັນຫລຽນ ເພື່ອຕອບສນອງຄຳຮຽກຮ້ອງຂອງສັນຕະປາປາ ທ່ານລູເທີຮູ້ຈັກຄວາມຊົ່ວຮ້າຍນີ້ແລະນິດຢູ່ບໍ່ໄດ້ ທ່ານເທສນາປະນາມການຂາຍໃບບູລລ໌ ທ່ານລູເທີກ່າວວ່າ ບໍ່ມີບຸນກຸສົນໃດທີ່ພວກນັກບວດຈະສາມາດແບ່ງປັນໃຫ້ຜູ້ຕາຍໄດ້ ທ່ານລູເທີປະນາມວ່າ ພຣະວິຫານເຊັນປີເຕີທີ່ສ້າງຂຶ້ນຈາກການຂາຍໃບບູລລ໌ນັ້ນ ຖືກສ້າງຂຶ້ນໂດຍການຂຸດຣີດເງິນຈາກປະຊາຊົນ ແລະເປັນການຫລອກລວງຜູ້ທຸກຍາກ

ວັນທີ່ 31 ຕຸລາ ຄ.ສ.1517 ທ່ານລູເທີໄດ້ຂຽນຂໍ້ສະເນີ 95 ຂໍ້ ເພື່ອປະຕິຮູບຄຣິສຈັກ (Church Reformation) ໂດນຳໄປຕອກຕິດປະຕູພຣະວິຫານວິກແຕນເບີກ ທ່ານມີຄວາມຫວັງວ່າຈະເປັນເຫດໃຫ້ຄຣິສຈັກເກີດການປ່ຽນ ທ່ານໄດ້ຂໍຮ້ອງໃຫ້ປະຊາຊົນ ໄປອ່ານພຣະຄັມພີ ເພື່ອຈະໄດ້

ເຂົ້າໃຈຄວາມຈິງ ທາງຣັຖບານເຢັຽຣະມັນໄດ້ພະຍາຍາມຍັບຍັ້ງການກະທຳຂອງທ່ານລູເທີ ແຕ່ວ່າທ່ານຍິ່ງມີໃຈໜັ້ນຄົງ ທີ່ຈະຕໍ່ສູ້ຄຳສອນຫລອກລວງນີ້ ທີ່ບໍ່ໄດ້ສອນໄວ້ໃນພຣະຄັມພີ ປະຊາຊົນໂດຍທົ່ວໄປບໍ່ສາມາດເຂົ້າໃຈຂໍ້ສເນີ 95 ຂໍ້ ທີ່ລູເທີຂຽນໄວ້ໄດ້ໝົດ ແຕ່ພວກເຂົາຮູ້ຈັກດີວ່າປະຊາຊົນຊາວເຢັຽຣະມັນຍາກຈົນຫລາຍ ອີກຊ້ຳຍັງຕ້ອງສົ່ງເງິນອອກນອກປະເທດໄປຊ່ວຍສ້າງພຣະວິຫານໃນກຸງໂຣມ ອັນເປັນການບໍ່ຍຸຕິທັມ

ທ່ານລູເທີໄດ້ເທສນາສອນໃຫ້ຍົກເລີກທຳນຽມແບບຄາທໍລິກຫລາຍແບບ ທ່ານໄດ້ໂຈມຕີພິທີມິຊຊາ (Mass, ຄືພິທີຣະລຶກເຖິງພຣະເຢຊູຄຣິສ ຕາມທີ່ຄຣິສຈັກຄາທໍລິກໄດ້ຖືປະຕິບັດກັນມາ) ທ່ານລູເທີສອນວ່າ ພຣະຄຣິສໄດ້ຊົງຕັດວ່າ "ນີ້ຄືກາຍຂອງເຮົາ" ຊຶ່ງມີໝາຍຄວາມວ່າ ພຣະອົງຊົງໃຊ້ເຂົ້າຈີ່ໃຫ້ເປັນຕົວແທນພຣະກາຍຂອງພຣະອົງ ດັ່ງນັ້ນຈຶ່ງບໍ່ຕ້ອງເສກມົນແປງເຂົ້າຈີ່ໃຫ້ເປັນພຣະກາຍຂອງພຣະຄຣິສ ພຣະອົງໄດ້ຊົງຕັດອີກວ່າ "ຈົ່ງດື່ມຈາກຈອກນີ້" ໝາຍເຖິງທຸກຄົນທີ່ດື່ມ ບໍ່ແມ່ນສະເພາະ ແຕ່ນັກບວດຜູ້ເຮັດພິທີເທົ່ານັ້ນ ພຣະຄຣິສບໍ່ເຄີຍຕັດວ່າຕ້ອງເຮັດພິທີຣະລຶກເຖິງພຣະອົງດ້ວຍພາສາລາຕິນ ດັ່ງນັ້ນແລ້ວຈະທຳພິທີນີ້ດ້ວຍພາສາເຢັຽຣະມັນຫລືພາສາອື່ນ ໆ ກໍບໍ່ເປັນການຜິດອັນໃດ ພຣະຄຣິສບໍ່ໄດ້ຕັ້ງສິລເຈັດປະການ ແຕ່ໄດ້ຕັ້ງໄວ້ແຕ່ສອງປະການເທົ່ານັ້ນຄື ພິທີບັພຕິສະມາ ແລະພິທີຣະລຶກ ດັ່ງນັ້ນແລ້ວຈຶ່ງສົມຄວນຍົກເລີກສິລອື່ນ ໆ ທ່ານລູເທີເຫັນວ່າພິທີແຕ່ງງານສົມຄວນຮັກສາໄວ້ ການເຂົ້າບວດເປັນນັກບວດສົມຄວນຍົກເລີກເສັຽ ພວກນັກບວດແລະນາງຊີມີອິສຣະ ທີ່ຈະແຕ່ງງານໄດ້ຕາມໃຈປາຖນາ ໃນຍຸກສມັຍກ່ອນພວກຄົນປ່າບຸກຣຸກເຂົ້າມາເກີດເສິກວຸ້ນວາຍ ເຮັດໃຫ້ຫລາຍຄົນໜີໄປບວດໃຫ້ພົ້ນໂລກ ແຕ່ໃນຍຸກນີ້ຢູໂຣປກຳລັງຈະເຣີນແລະເປັນຄຣິສຕຽນສ່ວນຫລາຍ ດັ່ງນັ້ນແລ້ວຄຣິສຕຽນຈຶ່ງສົມຄວນຢູ່ໃນສັງຄົມ ເຮັດວຽກງານຂອງຕົນຕາມທີ່ພຣະເຈົ້າໄດ້ມອບໝາຍຄວາມສາມາດໃຫ້ ບໍ່ວ່າຈະເປັນຊ່າງຕີເຫລັກ ນາຍຄຣູນັກກົດໝາຍ ຫລືທະຫານສາມາດຮັບໃຊ້ຊາດແລະປະຊາຊົນໄດ້

ສັນຕະປາປາລີໂອທີ່ 10 ເຫັນວ່າ ສົມຄວນໃສ່ໂທດທ່ານລູເທີໃນຂັ້ນເດັດຂາດ ໂດຍອອກໝາຍປະກາດໃຊ້ອຳນາດຢ່າງເປັນທາງການ ຕັດຄວາມລອດພົ້ນຂອງທ່ານມາຕິນ ລູເທີ ແລະສັ່ງໃຫ້ທ່ານເຟເດອຣິກ (Federick) ຈັບຕົວທ່ານລູເຕີມາສອບສວນ ແຕ່ວ່າທ່ານເຟເດອຣິກມີຄວາມຄິດເຫັນພ້ອງກັບຄວາມຄິດຂອງລູເທີຫລາຍກວ່າ ແລະຫັນກັບມາໃຫ້ຄວາມຊ່ວຍເຫລືອແກ່ທ່ານມາຕິນລູເທີ ຢ່າງໃດກໍຕາມ ການຕໍ່ສູ້ຂອງທ່ານລູເທີກັບສັນຕະປາປາໄດ້ຊາລືໄປທົ່ວເຢັຽຣະມັນ ແລະຢູໂຣປ

ວັນທີ່ 10 ທັນວາ 1520 ທ່ານລູເຕີໄດ້ທຳການປະທ້ວງຄົນ ໂດຍເອົາໃບບູລລ໌ ແລະສຳເນົາກົດໝາຍບາງສະບັບຂອງສັນຕະປາປາ ພ້ອມໝາຍທີ່ສັ່ງຈັບຕົວທ່ານມາເຜົາຕໍ່ໜ້າປະຊາຊົນ ຕໍ່ໜ້ານັກສຶກສາ ແລະຕໍ່ໜ້າຄະນະອາຈານຂອງມຫາວິທຍາລັຍ ເພື່ອເປັນການປະທ້ວງປະກາດຕັດສັມພັນທະພາບຢ່າງເປັນທາງການກັບຄຣິສຕຈັກຄາທໍລິກ ແລະເປັນການເລີ້ມຕົ້ນປະຕິຮູບຄຣິສຈັກໂດຍການປະທ້ວງ (Protest) ຊຶ່ງພາຍຫລັງຕໍ່ມາໄດ້ກາຍເປັນຊື່ຂອງຄຣິສຈັກນິກາຍໃໝ່ທີ່ຮ້ອງວ່າ ໂປເທັສເຕນ (Protestant, ແປວ່າການປະທ້ວງ) ທີ່ໄດ້ແຍກຕົວອອກຈາກຄຣິສຈັກຄາທໍລິກຢ່າງເດັດຂາດ ແລະກໍຕັ້ງມາເປັນຄຣິສຈັກໂປເທັສເຕນ ແມ່ນຄຣິສຈັກຂອງພວກເຮົາໃນປັດຈຸບັນນີ້ ຊຶ່ງໄດ້ແຕກຂຍາຍອອກໄປເປັນນິກາຍໂປເທັສເຕນຫລາຍ ໆ ນິກາຍ

ວັນທີ່ 17 ເມສາ 1521 ທ່ານລູເທີໄດ້ເຂົ້າສູ່ຄວາມກັບສະພາຄຣິສຈັກທີ່ດາຍເອັດ (The Church Council of Diet) ທີ່ກຸງວອມສ໌(Worms) ປະເທດເຢັຽຣະມັນ ໂດຍມີພຣະເຈົ້າຊາລທີ່ 5 (Charles V) ແລະເຈົ້າຊາຍເຟດເດອຣິກ ສັນຍາໃຫ້ຄວາມປອດພັຍ ແລະໃຫ້ເກີດຄວາມເປັນທັມແກ່ທ່ານລູເທີ ແຕ່ມີພົບພຽງສີ່ສິບວັນເທົ່ານັ້ນ ເພື່ອນຂອງທ່ານລູເທີຕັກເຕືອນວ່າ ທ່ານລູເທີອາດຕ້ອງຕາຍເຫມືອນທ່ານຈອນ ຮັສ (John Huss) ຢ່າງໃດກໍຕາມທ່ານລູເທີຕັດສິນໃຈເຂົ້າສູ່ຄວາມ ຕໍ່ສະພາທີ່ດາຍເອັດໄດ້ມີການສເນີຫນັງສືຕ່າງ ໆ ທີ່ທ່ານໄດ້ຂຽນ 3 ເຫລັ້ມ ຄື

(1) ຄຳຮ້ອງໄປຍັງຜູ້ນຳຄຣິສຈັກໃນປະເທດເຢັຽຣະມັນ

(2) ຄຣິສຈັກຂອງພຣະເຈົ້າຕົກເປັນທາດຂອງບາບີໂລນ

(3) ເສຣີພາບຂອງຄຣິສຕຽນ

ຫນັງສືທັງສາມໄດ້ນຳມາສະແດງຕໍ່ທີ່ປະຊຸມ ແລະຂໍໃຫ້ທ່ານລູເທີຖອນຄຳເວົ້າແລະຂໍ້ຄວາມທີ່ໄດ້ຂຽນໄວ້ນັ້ນ ທ່ານລູເທີຍອມຮັບວ່າຕົນເອງໄດ້ຂຽນຫນັງສືເຫລົ່ານັ້ນ ແຕ່ຈະບໍ່ຍອມຖອນຄຳເວົ້າໃດ ໆ ເພາະວ່າບໍ່ມີຄຳສອນໃດທີ່ຂັດຕໍ່ຄຳສອນຂອງພຣະຄັມພີ ທ່ານເວົ້າວ່າ "ຊີວິດຈິດໃຈຂອງຂ້າພະເຈົ້າຂື້ນຢູ່ກັບພຣະຄັມພີ ຈະຝ່າຝືນບໍ່ໄດ້ ຂໍພຣະເຈົ້າຊົງໂຜດຊ່ວຍຂ້າພເຈົ້າດ້ວຍເຖີດ ອາເມນ"

ໃນເຊົ້າວັນຕໍ່ໄປພຣະເຈົ້າຊາລທີ່ 5 ເສັຽພຣະທັຍຫລາຍ ເພາະວ່າທ່ານເປັນຄາທໍລິກ ແລະເຫັນວ່າທ່ານລູເທີໄດ້ດູຫມິ່ນຄວາມເຊື່ອຂອງຄາທໍລິກທີ່ເຊື່ອຖືກັນມາເປັນພັນປີ ທ່ານຈຳເປັນຕ້ອງປ່ອຍຕົວທ່ານລູເທີໄປຕາມຄຳສັນຍາຮັບຮອງຄວາມປອດພັຍ ແຕ່ສັ່ງວ່າຕໍ່ຈາກນີ້ໄປຫາກຜູ້ໃດພົບທ່ານລູເທີໃຫ້ຈັບກຸມຕົວສົ່ງໃຫ້ເຈົ້າຫນ້າທີ່ ທ່ານລູເທີໄດ້ຫນີໄປກ່ອນທີ່ຈະຮັບຮູ້ເຣື່ອງການປ່ອຍຕົວ ທ່ານຫນີໄປກັບເພື່ອນສອງຄົນເຂົ້າເຂດປ່າດຳ (Black Forest) ແລະທ່ານລູເທີໄດ້ຖືກລັກພາຕົວໄປໃນຣະຫວ່າງທາງ ໂດຍທະຫານຂອງເຈົ້າຊາຍເຟດເດອດິກ ແລະໄດ້ນຳຕົວທ່ານລູເທີໄປລີ້ຢູ່ໃນວັງວາຣ໌ຕເບີກ (Wartberg) ໄດ້ອອກຂ່າວລືວ່າ ທ່ານຖືກຂ້າຕາຍແລ້ວ ແຕ່ທ່ານລູເທີໄດ້ປອມຕົວເປັນຜູ້ອື່ນ ເພື່ອຫນີພັຍການເມືອງ ທ່ານໃຊ້ເວລາລີ້ຊ້ອນຕົວ ໄດ້ແປພຣະຄັມພີພາກພັນທະສັນຍາໃຫມ່ຈາກພາສາກຣີກເປັນພາສາເຢັຽຣະມັນສະບັບທຳອິດສຳເຣັດໃນປີ ຄ.ສ. 1522 ແລະແປພຣະຄັມພີຫມົດເຫລັ້ມສຳເຣັດໃນປີ ຄ.ສ. 1534

ລູກສິດຂອງທ່ານລູເທີໄດ້ກໍ່ການຈະລາຈົນປະທ້ວງ ໂດຍການເອົາຫີນຂວ້າງພວກນັກບວດ ທ່ານລູເທີເຫັນວ່າຈະປ່ອຍໃຫ້ເຫດການເປັນໄປໃນແນວນັ້ນບໍ່ໄດ້ ທ່ານຈຶ່ງໄດ້ຕັດສິນໃຈອອກມາປາກົດຕົວ ເຖິງແມ່ນວ່າ ທ່ານຢ້ານຈະຖືກຈັບເຜົາທັງເປັນກໍຕາມ ແຕ່ວ່າໃນເວລານັ້ນ ພຣະເຈົ້າຊາລທີ່ 5 ກຳລັງມີເສິກສົງຄາມຫລາຍດ້ານ ຮວມໄປເຖິງການຕໍ່ສູ້ກັບສັນຕະປາປາ ຊຶ່ງແຕ່ກ່ອນເຄີຍຍົກຍ້ອງນັບຖືສັນຕະປາປາ ບັດນີ້ພຣະເຈົ້າຊາລທີ່ 5 ຕ້ອງການຍຶດເອົາອິດຕາລີຈຶ່ງບຸກໂຈມຕີກຸງໂຣມ ແລະຈັບກຸມຕົວສັນຕະປາປາ ແຕ່ໄດ້ປ່ອຍຕົວສັນຕະປາປາພາຍຫລັງ ເຫດການນີ້ເຮັດໃຫ້ທ່ານລູເທີມີໂອກາດເປັນອິດສລະ ແລະໄດ້ສ້າງຄຣິສຈັກລູເຕີແລນ (Lutheran Church) ໂດຍຄວາມຊ່ວຍເຫລືອຈາກເຈົ້າຊາຍເຟດເດຣິກແຫ່ງແຄວັນແຊກຊອນນີ ທ່ານລູເທີໄດ້ເລີກພິທີມິຊຊາ ເລີກລົ້ມບັນຍັດພິທີສົງ ພິທີນມັສການໃນຄຣິສຈັກໄດ້ດັດແປງໃຫ້ງ່າຍຂື້ນ ໂດຍໃຊ້ພາສາເຢັຽຣະມັນແທນພາສາລາຕິນ ພວກນັກບວດ ບາງຊີໄດ້ເລີ້ມຕົ້ນຊີວິດຄອບຄົວ ດ້ວຍການແຕ່ງງານ ທ່ານລູເທີໄດ້ແຕ່ງງານກັບຍິງທີ່ເຄີຍເປັນນາງຊີ ຊື່ວ່າ ເຄທເທີຣິນ ໃນ ຄ.ສ. 1529

ແນວຄວາມຄິດຕາມຫລັກຄຳສອນຂອງທ່ານລູເທີໄດ້ແຜ່ຂະຫຍາຍອອກໄປຢ່າງໄວ ຈົນໄປເຖິງປະເທດຕ່າງ ໆ ເຊັ່ນ ແດນມາກ ນໍຣະເວ ສະວີແດນ ສວິດເຊີແລນ ແລະອັງກິດ ຢ່າງໃດກໍຕາມໃນເວລານັ້ນຄຣິສຈັກຄາທໍລິກກໍຍັງຄົງມີຄວາມເຂັ້ມແຂງຢູ່ໃນປະເທດທີ່ມີການປະຕິຮູບເຫລົ່ານັ້ນ ເພາະວ່າໄດ້ວາງພື້ນຖານມາເປັນເວລາພັນປີ ໂດຍສະເພາະຢ່າງຍິ່ງ ອີຕາລີ ສະເປນ ຝຣັ່ງເສດ ແລະໄອແລນ

ໃນຍຸກສມັຍນີ້ມັກມີການແຕ້ມຮູບພາບກາຣ໌ຕູນ  ດັ່ງຕົວຢ່າງ **ຮູບພາບທີ່ໄດ້ແຕ້ມສົມທຽບເຍາະເຍ້ຍເຣື້ອງການຂາຍໃບບູລ໌** ຮູບພາບຂ້າງລຸ່ມທາງດ້ານຊ້າຍມີພຣະເຢຊູກຳລັງຂັບໄລ່ຄົນແລກເງິນແລະຄົນມັກການຊື້ຂາຍອອກຈາກພຣະວິຫານ  ສ່ວນອີກຮູບພາບຂ້າງລຸ່ມທາງຂວາມີພວກສັນຕະປາປາກຳລັງຮຽກເກັບເງິນໃນພຣະວິຫານ



ຮູບພາບຂ້າງລຸ່ມເປັນຮູບລໍ້ລຽນຣະຫວ່າງຄຣິສຈັກໂຣມັນຄາທໍລິກກັບຄຣິສຈັກໂປເທັສເຕນ



ຮູບພາບທາງຊ້າຍມືເປັນພາບການນມັສການຂອງຂອງຄຣິສຈັກໂປເທັນຕານ ທີ່ນັກເທສໄດ້ອະທິບາຍພຣະທັມຈາກພຣະຄັມພີ  ຜູ້ຟັງໄດ້ຕັ້ງໃຈຟັງ ພ້ອມກັບສຶກສາພຣະຄັມພີທີ່ມີຢູ່ໃນມືຂອງຕົນ  ແຕ່ສ່ວນຮູບພາບທາງດ້ານຂວາມີນັກບວດໄດ້ເທສໂດຍບໍ່ໄດ້ໃຊ້ພຣະຄັມພີ  ຜູ້ຟັງກໍອິດອ່ອນກັບການສວດມົນດ້ວຍລູກປະຄັມ

# ບົດທີ 12

# ການປະຕິຮູບຄຣິສຈັກໃນປະເທດຕ່າງ ໆ ຫລັກຄວາມເຊື່ອແລະແນວປະຕິບັດ ຂອງຄຣິສຈັກປະຕິຮູບ

**ການປະຕິຮູບຄຣິສຈັກໄດ້ແຜ່ຂະຫຍາຍອອກໄປ**

ໃນສັຕວັດທີ 16 ນີ້ ເຮົາຕ້ອງຮັບຮູ້ວ່າເປັນສມັຍຂອງການປະຕິຮູບຄຣິສຈັກ ຂໍ້ຂຽນແລະຄຳສອນຂອງ ທ່ານມາຕິນ ລູເທີ ໄດ້ມີອິດທິພົນຕໍ່ຜູ້ນຳຄຣິສຈັກໃນຫລາຍ ໆ ປະເທດ ແຕ່ລະປະເທດໄດ້ທຳການປະຕິຮູບຄຣິສຈັກຂອງຕົວໃນເວລາໃກ້ຄຽງກັນ ແຕ່ວ່າໄດ້ໃຊ້ຮູບແບບວິທີການທີ່ແຕກຕ່າງກັນອອກໄປ ເຖິງຢ່າງໃດກໍຕາມ ການປະຕິຮູບຄຣິສຈັກໃນຫລາຍ ໆ ປະເທດເຖິງແມ່ນວ່າ ຕ່າງຝ່າຍຕ່າງເຮັດໃຫ້ເກີດການປະຕິຮູບໂດຍບໍ່ໄດ້ນັດຫມາຍກັນ ແຕ່ເກີດຂຶ້ນພ້ອມກັນ ເນື່ອງຈາກໄດ້ອ່ານໄດ້ຟັງຄຳສອນຂອງຝ່າຍປະຕິຮູບຄຣິສຈັກ ຈາກບົດຮຽນ ຂໍ້ຂຽນຕ່າງ ໆ ເຮັດໃຫ້ຝ່າຍປະຕິຮູບຄຣິສຈັກໃນປະເທດຕ່າງ ໆ ເຫລົ່ານັ້ນມີຫລັກຄວາມເຊື່ອພື້ນຖານຢ່າງດຽວກັນ ຄື ຕ້ອງການຮຽກຮ້ອງໃຫ້ພຣະຄັມພີມີສິດອຳນາດຕໍ່ຜູ້ເຊື່ອໂດຍຕົງ ຕ້ອງການໃຫ້ຄວາມເຊື່ອຂອງຄຣິສຕຽນວາງຢູ່ບົນຫລັກຄຳສອນຂອງພຣະຄັມພີຢ່າງແທ້ຈິງ ບໍ່ແມ່ນຂຶ້ນກັບຄຳສັ່ງຂອງສັນຕະປາປາຫລືຜູ້ນຳຄຣິສຈັກ ການປະທ້ວງຄຣິສຈັກໃນບາງປະເທດໄດ້ເກີດມີຄວາມເຂັ້ມແຂງເດັດຂາດຫລາຍກວ່າໃນປະເທດເຢັຽຣະມັນ ຜູ້ນຳການປະຕິຮູບບາງຄົນຮູ້ສຶກວ່າ ທ່ານມາຕິນລູເທີ ຍັງອ່ອນແອແລະຍອມອ່ອນນ້ອມຕາມແນວທາງເກົ່າຂອງຄຣິສຈັກຄາທໍລິກ ແຕ່ຄວາມຈິງມີຢູ່ວ່າທ່ານມາຕິນ ລູເທີ ບໍ່ເຄີຍຍົກຕົນເອງຂຶ້ນວ່າ ທ່ານເປັນຜູ້ປະຕິຮູບຄຣິສຈັກ ຫລືບໍ່ເຄີຍຖືວ່າ ແນວຄຳສອນຂອງທ່ານເປັນເຫດໃຫ້ເກີດການກໍ່ຕັ້ງຄຣິສຈັກແນວໃຫມ່ ທ່ານລູເທີຮູ້ແຕ່ວ່າທ່ານໄດ້ຄົ້ນພົບຄວາມຈິງຂອງພຣະເຈົ້າຈາກພຣະຄັມພີ ຊຶ່ງມີຢູ່ແລ້ວໃນພຣະຄັມພີຕັ້ງແຕ່ເລີ້ມຕົ້ນ ແຕ່ວ່າຄວາມຈິງທີ່ໄດ້ຂຽນໄວ້ໃນພຣະຄັມພີນັ້ນໄດ້ຖືກປິດບັງໄວ້ໂດຍຄຣິສຈັກຄາທໍລິກມາເປັນເວລາພັນປີ ທ່ານລູເທີພຽງແຕ່ເປີດເຜີຍຄວາມຈິງຂອງພຣະຄັມພີ ໂດຍສເນີໃນບົດຄວາມຂໍ້ຂຽນແລະຄຳເທສນາຂອງທ່ານ ເພື່ອຄຣິສຕຽນທັງຫລາຍຈະໄດ້ມີຄວາມເຊື່ອ ແລະຮູ້ຈັກປະຕິບັດຊີວິດໃຫ້ຖືກຕ້ອງ

**ເຫດຜົນໃຫຍ່ 2 ປະການທີ່ກໍ່ໃຫ້ຜູ້ນຳຄຣິສຈັກໃນປະເທດຕ່າງ ໆ ເກີດການປະຕິຮູບຄຣິສຈັກ ຄື**

1. ຄຣິສຕຽນສົມຄວນເລີ້ມຕົ້ນຄວາມເຊື່ອ ແລະຖືຫຼັກຄວາມເຊື່ອທີ່ວ່າ ພຣະເຈົ້າເປັນຜູ້ຊຳຣະຄົນບາບໃຫ້ຊອບທັມໂດຍຊົງປະທານພຣະເຢຊູຜູ້ເປັນພຣະບຸດໃຫ້ຕາຍໄຖ່ບາບເຮົາ

2. ພຣະຄັມພີເທົ່ານັ້ນທີ່ເຮົາຍຶດຫມັ້ນວ່າເປັນແຫຼ່ງຄວາມຈິງແຫ່ງຄຳສອນທັງຫມົດ ທີ່ຈະນຳພາໃຫ້ຄຣິສຕຽນເກີດຄວາມເຊື່ອກັບໃຈໃຫມ່ ແລະດຳເນີນຊີວິດຕາມຄວາມເຊື່ອນັ້ນ

## ການປະຕິຮູບຄຣິສຈັກໃນປະເທດສວິສເຊີແລນ

ໃນ ຄ.ສ.1517 ທີ່ເມືອງຊູຣິກ (Zurich) ພາຍໃຕ້ການນຳຂອງທ່ານ ເອອຣິກ ສວິງລີ່ (Ulrich Zwingly ຄ.ສ.1484-1531) ທ່ານເປັນນັກບວດຄາທໍລິກຢູ່ໃນເມືອງ ຊູຣິກ ໄດ້ສະແດງຕົວຕໍ່ຕ້ານຄຣິສຈັກຄາທໍລິກ ຄັດຄ້ານຄຳສອນທີ່ເຮັດໃຫ້ປະຊາຊົນຫລົງຜິດວ່າ ຕ້ອງເດີນທາງໄປນມັສການຮູບປັ້ນພຣະແມ່ມາເຣັຽ ທີ່ເມືອງແອນເຊລ ຈຶ່ງຈະໄດ້ຮັບການໂຜດຍົກໂທດບາບ ທ່ານສວິງລີ່ໄດ້ປະນາມຄຣິສຈັກຄາທໍລິກທີ່ໄດ້ຫລົງໄປຈາກຄຳສອນອັນແທ້ຈິງຂອງພຣະຄັມພີ ໂດຍແຕ່ງເຕີມຄຳສອນໃນເຣື້ອງຄວາມຣອດພົ້ນໃຫ້ຜິດໄປຈາກພຣະຄັມພີ ທ່ານສວິງລີ່ ມັກເທສນາໂດຍໃຊ້ພຣະຄັມພີໃຫມ່ສະບັບພາສາກຣີກ (Erasmus's Greek Text of The Newtestament) ວາງໄວ້ຕໍ່ຫນ້າ ທ່ານແລະອ່ານໃຫ້ສະມາຊິກຟັງ ທ່ານເນັ້ນຫນັກໃຫ້ຄຣິສຕຽນສຶກສາພຣະຄັມພີ ທ່ານສອນວ່າຄຣິສສາສນາບໍ່ໄດ້ຖືກປຽ່ນແປງຫລືຖືກປະຕິຮູບ ເພາະວ່າຄຣິສສາສນາມີຄວາມຖືກຕ້ອງຢູ່ແລ້ວໃນຕົວເອງ ແຕ່ວ່າຜູ້ເຊື່ອແທ້ໃນເວລານັ້ນກຳລັງຕື່ນຕົວແລະຫັນກັບໄປເປີດພຣະຄັມພີ ເພື່ອຄົ້ນພົບຄວາມຈິງທີ່ໄດ້ບັນທຶກໄວ້ແລ້ວນັ້ນແລະນຳເອົາມາຖືຮັກສາເປັນແນວປະຕິບັດໃຫ້ຖືກຕ້ອງກັບຄວາມເຊື່ອ ຄຣິສຕຽນບໍ່ຕ້ອງໄປຖາມຜູ້ອື່ນວ່າຈະຕ້ອງມີຄວາມເຊື່ອແບບໃດຈຶ່ງຖືກຕ້ອງ ເພາະວ່າພຣະຄັມພີໄດ້ບອກເຮົາຫມົດທຸກສິ່ງທຸກຢ່າງແລ້ວ

ຄ.ສ.1522 ທ່ານສວິງລີ່ໄດ້ນຳພາຄຣິສຈັກປະຕິຮູບ (Reformed Church) ໃນປະເທດສວິສເຊີແລນແຍກຕົວອອກຈາກຄຣິສຈັກຄາທໍລິກຢ່າງເດັດຂາດ ແຕ່ວ່າຄວາມກ້າວຫນ້າຂອງການກໍ່ຕັ້ງຄຣິສຈັກປະຕິຮູບຕ້ອງຖືກລ້າຊ້າລົງ ເພາະວ່າເກີດເສິກກາງເມືອງຣະຫວ່າງພວກຄາທໍລິກຕໍ່ສູ້ກັບພວກໂປເທັສເຕນ ທ່ານສວິງລີ່ຜູ້ກ້າຫານໄດ້ເຂົ້າຮ່ວມຕໍ່ເສິກ ແລະຖືກຂ້າຕາຍໃນ ຄ.ສ.1531 ຢ່າງໃດກໍຕາມການປະຕິຮູບໄດ້ດຳເນີນການຕໍ່ໄປໂດຍການນຳພາຂອງທ່ານ ຈອນ ຄາລວິນ (John Calvin ຄ.ສ.1509-1564) ທ່ານເປັນນັກການສຶກສາທາງດ້ານສາສນາສາດ (Theologian) ແລະເປັນຜູ້ວາງຫລັກການອັນເປັນຫລັກຄວາມເຊື່ອຂອງໂປເທັສແຕນທີ່ເຂັ້ມແຂງ ແລະມີອິດທິພົນຕໍ່ການປະຕິຮູບຄຣິສຈັກໃນຫລາຍ ໆ ປະເທດ

## ການປະຕິຮູບຄຣິສຈັກໃນປະເທດຝຣັ່ງເສດ

ໂດຍການນຳພາຂອງທ່ານແຈກເຄສ ລາເຟເວີ (Jacques Lefevre) ໃນປະມານ ຄ.ສ. 1512 ທ່ານໄດ້ຂຽນຫລັກຄວາມເຊື່ອແລະຄຳເທສນາ ເຣື້ອງຄວາມຊອບທັມໂດຍຄວາມເຊື່ອ ອັນມີອິດທິພົນຕໍ່ປະຊາຊົນຢ່າງຫລວງຫລາຍ ແລະນຳພາຄຣິສຕຽນທີ່ເຂັ້ມແຂງໃຫ້ເກີດຄວາມຄິດເຣື້ອງການປະຕິຮູບ ອີກທັງຄຳສອນແລະຫລັກຄວາມເຊື່ອຂອງທ່ານ ຈອນ ຄາລວິນ ໄດ້ແຜ່ເຂົ້າສູ່ຝຣັ່ງເສດເຮັດໃຫ້ເກີດກຳລັງການປະຕິຮູບແຮງຍິ່ງຂຶ້ນ ຈົນເກີດການຕໍ່ສູ້ກັບຄຣິສຈັກຄາທໍລິກ ເຮັດໃຫ້ການປະຕິຮູບໃນຝຣັ່ງເສດໄດ້ເປັນໄປຢ່າງໂຫດຮ້າຍ ພວກໂປເທັສເຕນທີ່ຕິດຕາມຄວາມເຊື່ອຂອງທ່ານຄາລວິນໄດ້ທຳລາຍຄຣິສຈັກຂອງຄາທໍລິກຫລາຍແຫ່ງ ແລະທຳຮ້າຍນັກບວດຄາທໍລິກດ້ວຍ ແຕ່ວ່າຝ່າຍຄາທໍລິກໄດ້ທຳຮ້າຍ ແລະຂ້າພວກໂປເທັສເຕນເປັນຈຳນວນຫລາຍພັນຄົນໃນວັນສລອງນັກບຸນບາໂທໂລມິວ ຄືວັນທີ 24 ສິງຫາ ຄ.ສ. 1572 ຫລັງຈາກນັ້ນເຈົ້າຊີວິດເຮນຣີທີ 4 ໄດ້ອອກພຣະຣາຊອົງການ ທີ່ເມືອງນັງເຕສ (Edict of Nantes) ໃນ ຄ.ສ.1598 ປະກາດໃຫ້ພວກຮິວກູໂນ (Huguenots) ຄືພວກໂປເທັສເຕນໃນຝຣັ່ງ

ເສດນິອິສຣະພາບໃນການກໍ່ຕັ້ງຄຣິສຈັກຮູບໃໝ່ຢ່າງເປັນທາງການ ເຮັດໃຫ້ເກີດຄຣິສຈັກໂປເທັສເຕນ ຝຣັ່ງເສດຕັ້ງແຕ່ນັ້ນມາ

**ການປະຕິຮູບຄຣິສຈັກໃນປະເທດເນເທີແລນ**

ມີຜູ້ນຳຫລາຍທ່ານໃນປະເທດເນເທີແລນໄດ້ຮັບອິດທິພົນຄຳສອນຈາກທ່ານ ຈອນ ຄາລວິນ ຊຶ່ງໃນເວລາດຽວກັນນັ້ນທ່ານ ວິນລຽມ (William) ໄດ້ນຳພາໃຫ້ປະເທດເນເທີແລນອອກຈາກການປົກຄອງ ແລະການຂົ່ມເຫັງຂອງປະເທດສະເປັນ ຊຶ່ງມີຜົນໃຫ້ເກີດເສຣີພາບທາງການເມືອງແລະສາສນາໃນປະມານ ຄ.ສ. 1609 ເຮັດໃຫ້ການປະຕິຮູບຄຣິສຈັກເຕີບໃຫຍ່ຂຶ້ນໃນທາງພາກເໜືອຂອງເນເທີແລນປັດຈຸບັນ ຄືພາກເໜືອຂອງຮອລແລນ ໄດ້ກາຍເປັນຄຣິສຈັກໂປເທັສເຕນ ແຕ່ທາງພາກໃຕ້ຂອງເນເທີແລນ (ປັດຈຸບັນຄືເບລຢຽມ) ຍັງຄົງເປັນຄຣິສຈັກຄາທໍລິກຢ່າງເຂັ້ມແຂງຈົນຮອດປັດຈຸບັນ

**ການປະຕິຮູບຄຣິສໃນປະເທດອັງກິດ**

ເມື່ອທ່ານສຶກສາປະວັດສາດຈະພົບວ່າ ຄວາມຄິດເຣື້ອງການປະຕິຮູບຄຣິສຈັກໃນອັງກິດໄດ້ມີມາດົນນານແລ້ວ ຕັ້ງແຕ່ສມັຍຂອງທ່ານ ຈອນ ໄວຄລິຟ (John Wyclif) ພາຍຫລັງຕໍ່ມາໃນ ຄ.ສ. 1526 ທ່ານວິນລັຽມ ທິນເດລ (William Tydale) ໄດ້ໄປຢາມທ່ານ ມາຕິນ ລູເທີ ຜູ້ປະຕິຮູບຄຣິສຈັກໃນເຢັຽມັນ ທ່ານທິນເດລຮັບອິດທິພົລຄວາມຄິດເຣື້ອງການປະຕິຮູບຄຣິສຈັກ ເມື່ອກັບມາເຖິງອັງກິດໄດ້ປ່ຽນແປງ ແລະພິມພຣະຄັມພີໃຫມ່ສະບັບພາສາອັງກິດພື້ນເມືອງ ໂດຍບໍ່ໄດ້ຮັບອະນຸຍາດ ໃນທີ່ສຸດທ່ານວິນລັຽມ ທິນເດລ ຖືກຂ້າຕາຍຢ່າງທາຣຸນທີ່ສຸດໃນປີ ຄ.ສ. 1536 ເຖິງແມ່ນວ່າການຂັດຂວາງເຣື້ອງການປະຕິຮູບຄຣິສຈັກຈະ ມີຄວາມຮຸນແຮງກໍຕາມ ແຕ່ວ່າຄວາມຄິດເຣື້ອງການປະຕິຮູບຄຣິສຈັກໄດ້ດຳເນີນໄປໂດຍຕລອດ ໂດຍທີ່ເຈົ້າຊີວິດທັງຫລາຍຂອງປະເທດອັງກິດ ກໍຍັງຄົງຖືຮັກສາແນວຄວາມເຊື່ອແບບຄາທໍຣິກດັ່ງເດີມ ແລະພະຍາຍາມສັດຊື່ຕໍ່ສັນຕະປາປາເພາະວ່າບໍ່ຢາກມີບັນຫາແຕກແຍກ ແລະບໍ່ຢາກໃຫ້ເກີດເສິກ

ໃນສມັຍຂອງເຈົ້າຊີວິດ ເຮັນຣີ ທີ 8 (Henry VIII) ແຫ່ງປະເທດອັງກິດໄດ້ມີໃຈຂັດຄືອງກັບສັນຕະປາປາເຄີລເມັ້ນ ທີ 7 (Clement VII) ເພາະວ່າ ເຈົ້າຊີວິດເຮັນຣີຕ້ອງການຢ່າຮ້າງກັບເມັຽຜູ້ມີນາມວ່າ ແຄດເທີຣິນ (Catherine) ຜູ້ເຄີຍເປັນເອື້ອຍໄພ້ມາກ່ອນ ນາຍເຄີຍເປັນເມັຽຂອງອ້າຍຄື ເຈົ້າຊີວິດ ອາເທີ (Arther) ແຕ່ອາເທີຜູ້ເປັນອ້າຍໄດ້ເສັຽຊີວິດພາຍຫຼັງແຕ່ງງານພຽງສີ່ເດືອນເທົ່ານັ້ນ ເມື່ອເຮັນຣີທີ 8 ຂຶ້ນຄອງຣາຊເປັນເຈົ້າຊີວິດອັງກິດກໍໄດ້ຮັບເອື້ອຍໄພ້ມາເປັນເມັຽ ແຕ່ວ່າພຣະນາງແຄນເທີຣິນບໍ່ສາມາດໃຫ້ບຸດຊາຍຊຶ່ງຈະເປັນຜູ້ຮັບສືບບັງລັງໃນປະເທດອັງກິດໄດ້ ເພາະວ່າບຸດຂອງນາງຕາຍຫລາຍຄົນຕັ້ງແຕ່ຍັງນ້ອຍ ເຫລືອແຕ່ບຸດຍິງຜູ້ດຽວຄືເມຣີ ຊຶ່ງເປັນລູກສາວທີ່ອ່ອນແອແລະເຈັບປ່ວຍຢູ່ສເມີ ດັ່ງນັ້ນແລ້ວເຈົ້າຊີວິດເຮັນຣີທີ 8 ຈຶ່ງຕ້ອງການຢ່າຮ້າງພຣະນາງແຄນເທີຣິນ ຝ່າຍສັນຕະປາປາເຄີລເມັ້ນທີ 7 ບໍ່ຍອມໃຫ້ເຈົ້າຊີວິດເຮັນຣີຢ່າຮ້າງ ເຈົ້າຊີວິດເຮັນຣີຈຶ່ງປະກາດແຍກຕົວອອກຈາກ ຄຣິສຈັກຄາທໍຣິກກໍ່ຕັ້ງ ຄຣິສຈັກໃໝ່ ແລະເອີ້ນວ່າ **ຄຣິສຈັກອັງກິດ** (Church of England) ຂຶ້ນ ໂດຍແຕ່ງຕັ້ງ ທ່ານ ແຄນເມີ (Cranmer) ໃຫ້ເປັນສັງຄະຣາດ ໂດຍທີ່ເຈົ້າຊີວິດເຮັນຣີໄດ້ຮັບ

ອະນຸຍາດໃຫ້ຢ່າຮ້າງໄດ້ເປັນການຕອບແທນ ແຄນເມີ ຈັດການແຕ່ງງານໃຫມ່ໃຫ້ເຈົ້າຊີວິດເຮັນຣີກັບແອນ ໂບລິນ (Anne Boleyn) ໃນປີ ຄ.ສ.1533 ຈາກເຫດການທີ່ເກີດຂຶ້ນນີ້ ທຳໃຫ້ອັງກິດມີຮູບແບບຄຣິສຈັກທີ່ແຕກຕ່າງກວ່າປະເທດອື່ນ ໆ ຄື ຄຣິສຈັກອັງກິດ ຍັງຄົງມີຄວາມເຊື່ອ ແລະແນວປະຕິບັດຄລ້າຍຄືແບບຄາທໍລິກຫລາຍທີ່ສຸດ ແຕ່ເປັນອິສຣະບໍ່ຕ້ອງຮັບອຳນາດຂອງສັນຕະປາປາໂດຍມີເຈົ້າຊີວິດເຮັນຣີ ເປັນຜູ້ກຳອຳນາດຄຣິສຈັກ ເຈົ້າຊີວິດເຮັນຣີໄດ້ຂົ່ມເຫັງ ຂ້າ ທັງຄາທໍຣິກແລະໂປເທັສຕານທີ່ຂັດຂວາງຄວາມເຊື່ອຂອງທ່ານ

ເມື່ອເຈົ້າຊີວິດເຮັນຣີສິ້ນຊີພ ແອດວອດທີ 6 (Edward VI) ໄດ້ຂຶ້ນຄອງຣາຊເມື່ອອາຍຸ 9 ປີ ໄດ້ຄອງຣາຊນານພຽງ 6 ປີ ໃນຣະຍະເວລາອັນສັ້ນນີ້ການປະຕິຮູບຄຣິສຈັກໄດ້ກ້າວຫນ້າຢ່າງໄວ ໂດຍການນຳພາຂອງທ່ານແຄນເມີ ແຕ່ເມື່ອພຣະນາງເຈົ້າແມຣີ (Queen Mary) ຂຶ້ນຄອງຣາຊ ພຣະນາງເຈົ້າເມຣີມັກຝ່າຍຕໍ່ຄຣິສຈັກຄາທໍລິກຫລາຍກວ່າ ຈຶ່ງໄດ້ຂ້າຂົ່ມເຫງພວກໂປເທັສຕານ ໄດ້ຂັບໄລ່ກຸ່ມພິວຣິຕັນ (Puritan) ຊຶ່ງເປັນກຸ່ມທີ່ຕ້ອງການໃຫ້ເກີດການຊຳຣະ (Purify) ຄຣິສຈັກອັງກິດໃຫ້ບໍຣິສຸດອັນເປັນແບບແນວດຽວກັນກັບການປະຕິຮູບຄຣິສຈັກ ພຣະນາງເຈົ້າເມຣີໄດ້ຂ້າທ່ານແຄນເມີໂດຍເຜົາທັງເປັນໃນ ຄ.ສ.1556

ມາເຖິງສມັຍຂອງພຣະນາງເຈົ້າອາຣິຊາເບັດທີ່ I (Elizabeth I) ໄດ້ຂຶ້ນຄອງຣາຊ ທ່ານເປັນຜູ້ມີສະຕິປັນຍາ ແລະໃຫ້ຄວາມເປັນປະຊາທິປະໄຕ ພວກພິວຣິຕັນຈຶ່ງໄດ້ກັບຄືນມາອັງກິດອີກ ຊຶ່ງເຮັດໃຫ້ຄຣິສຈັກອັງກິດ (Church of England) ກັບຄືນມາຮຸ່ງເຮືອງໃຫມ່

ໃນປີ ຄ.ສ. 1604 ໄດ້ມີການປະຊຸມ ຣະຫວ່າງພວກຄຣິສຕຽນພິວຣິຕັນກັບເຈົ້າຊີວິດແຫ່ງອັງກິດເຈັມສ໌ທີ 1 (James I) ຜົນຂອງການປະຊຸມຄື ໄດ້ຮັບອະນຸຍາດໃຫ້ພິມພຣະຄັມພີໃຫມ່ສະບັບຄິງເຈັມສ໌ (King James', ຫລື Authorized Version) ໃນປີ ຄ.ສ. 1611 ອັນເປັນພຣະຄັມພີສະບັບທີ່ມີຊື່ສຽງໄປທົ່ວໂລກ ແລະເປັນພາສາຊັ້ນສູງທີ່ມ້ວນທີ່ສຸດ ຊຶ່ງເປັນທີ່ນິຍົມໃຊ້ກັນຫລາຍ ໆ ສັດວັດຕໍ່ມາ

ສລຸບໄດ້ວ່າ ການປະຕິຮູບໃນອັງກິດນັ້ນ ແຕກຕ່າງຈາກປະເທດອື່ນ ໂດຍທີ່ອັງກິດໄດ້ແຍກຕົວອອກຈາກຄຣິສຈັກຄາທໍລິກ ແລະຕັ້ງເປັນຄຣິສຈັກອັງກິດ (Church of England) ທີ່ມີຣະບຽບການນມັສການແລະຄວາມເຊື່ອໃກ້ຄຽງກັບຄາທໍລິກ ແຕ່ມີອິສຣະພາບໃນການປົກຄອງ ແລະມີອິສຣະພາບໃນການຕີຄວາມຫມາຍຂອງພຣະຄັມພີ

**ການປະຕິຮູບຄຣິສຈັກໃນປະເທດສະກອຕແລນ**

ປະເທດສະກອຕແລນຢູ່ທາງພາກເຫນືອຂອງອັງກິດ ໃນສມັຍນັ້ນ ປະເທດສະກອຕແລນຍັງບໍ່ທັນຖືກຮວມເຂົ້າເປັນສ່ວນຂອງສຫະຣາຊອານາຈັກອັງກິດຈັກເທື່ອ ຝ່າຍປະເທດສະກອຕແລນໄດ້ມີພັນທະມິຕກັບປະເທດຝຣັ່ງເສດເພື່ອປ້ອງກັນຕົນເອງທາງດ້ານການເມືອງ ແຕ່ທາງດ້ານການປະຕິຮູບຄຣິສຈັກໃນປະເທດສະກອຕແລນໄດ້ມີມານານແລ້ວ ເພາະມີຫລັກຖານເປັນເອກສານ ມີຫລັກຂໍ້ເຊື່ອຂອງຝ່າຍປະຕິຮູບຄຣິສຈັກ ທີ່ຂຽນຂຶ້ນໂດຍຜູ້ນຳຄຣິສຈັກຫລາຍຄົນຊຶ່ງຍັງໄດ້ປາກົດຢູ່ ແຕ່ການປະຕິຮູບໃນຕອນຕົ້ນບໍ່ໄດ້ກ້າວຫນ້າໄປໄກໃນປະເທດສະກອຕແລນ ເພາະເຫດວ່າ ເຈົ້າຊີວິດປະເທດສະກອຕແລນຕ້ອງການຖື

ສາສນາຄາທໍລິກເປັນສະສນາປະຈຳຊາດ ເພື່ອຈະໄດ້ແຕກຕ່າງຈາກປະເທດອັງກິດ ຊຶ່ງໃນເວລານັ້ນປະເທດອັງກິດໄດ້ກໍ່ຕັ້ງຄຣິສຈັກອັງກິດ (Church of England) ຂຶ້ນ ແລະແຍກຕົວອອກຈາກອຳນາດຂອງກຸງໂຣມ ຊຶ່ງຝ່າຍຄຣິສຈັກຄາທໍລິກຖືວ່າ ຄຣິສຈັກອັງກິດເປັນຄຣິສຈັກປະຕິຮູບ ເຖິງແມ່ນວ່າຈະມີພິທີແລະທັມນຽມການນມັສການພຣະເຈົ້າຄ້າຍຄືກັບຄຣິສຈັກຄາທໍລິກກໍຕາມ

ທ່ານຈອນ ນ໊ອກ (John Knox) ເກີດໃນປີ 1505 ທີ່ເມືອງໂລແລນ (Lowlands) ທ່ານຈົບການສຶກສາຈາກມຫາວິທຍາລັຍ ເຊນ ແອນດຣູ (St. Andrew) ທ່ານເປັນນັກບວດ ແຕ່ທ່ານເປັນອາຈານສອນຫລາຍກວ່າເປັນນັກເທດ ທ່ານໄດ້ຮຽນຮູ້ຈັກຄຳສອນຂອງຄຣິສຕຽນຜູ້ເປັນນັກປະຕິຮູບຄຣິສຈັກ ຊຶ່ງນັກສຶກສາໃນສມັຍນັ້ນ ໄດ້ພາກັນອ່ານຫນັງສື ແລະຫລັກຄຳສອນຂອງການປະຕິຮູບຢ່າງລັບ ໆ ທ່ານຈອນ ນ໊ອກ ມັກອ່ານຫນັງສືຂອງພວກປະຕິຮູບຄຣິສຈັກ ແລະໄດ້ເປັນຜູ້ນຳໃນການຕໍ່ສູ້ກັບຄຣິສຈັກຄາທໍລິກ ເຮັດໃຫ້ທ່ານຖືກຈັບ ແລະຖືກໂທດ ພາຍຫລັງຕໍ່ມາເມື່ອຖືກປ່ອຍຕົວ ທ່ານໄດ້ທ່ຽວໄປຍາມຫລາຍປະເທດຈົນຮອດກຸງເຈນີວາ ແລະໄດ້ພົບພໍ້ທ່ານຈອນ ຄາວິນ ໄດ້ຮຽນແລະຮັບເອົາຄຳສອນຫລັກຂໍ້ເຊື່ອຮວມເຖິງຫລັກການປົກຄອງຄຣິສຈັກນຳທ່ານຈອນ ຄາລວິນ

ຄ.ສ.1559 ທ່ານເດີນທາງກັບຄືນສູ່ປະເທດສະກອຕແລນ ໄດ້ທຳການປະຕິຮູບຄຣິສຈັກ ແລະເກີດຜົນສຳເຣັດຫາຍທີ່ສຸດຈົນເກືອບຈະໄດ້ອຳນາດປົກຄອງປະເທດ ເພາະເຫດວ່າ ໃນປະເທດສະກອຕແລນນັ້ນ ການເມືອງແລະສາສນາກ່ຽວຂ້ອງເປັນອັນດຽວກັນເກືອບຫມົດ

ທ່ານຈອນ ນ໊ອກ ມີອິດທິພົນຫລາຍ ເຮັດໃຫ້ປະເທດສະກອຕແລນຮວມເຂົ້າເປັນສ່ວນນຶ່ງຂອງສະຫະຣາຊອານາຈັກອັງກິດ ຄຣິສຈັກທົ່ວປະເທດສກອຕແລນໄດ້ປ່ຽນເປັນຄຣິສຈັກໂປເຕັສເຕນເກືອບຫມົດ ແລະໄດ້ສະຖາປານາໃຫ້ເປັນຄຣິສຈັກເພຣສໄບທີຣຽນ (Preabyterian) ທີ່ມີລະບົບການປົກຄອງຄຣິສຈັກໂດຍເຖົ້າແກ່ (Elder) ທີ່ມີຊື່ສຽງ ແລະຖືກແຜ່ຂຍາຍໄປໃນປະເທດຕ່າງ ໆ ທ່ານຈອນ ນ໊ອກໄດ້ຮັບການຍົກຍ້ອງວ່າເປັນ **ບິດາແຫ່ງສກອຕແລນ** (The Father of Scotland) ທ່ານສິ້ນຊີວິດໃນປີ ຄ.ສ.1572 ຫລັກການປົກຄອງຄຣິສຈັກ ແລະຫລັກຄຳສອນຂອງທ່ານມີຊື່ສຽງຈົນຮອດທຸກມື້ນີ້

ເມື່ອສິ້ນສັຕວັດທີ 16 ຜົນຂອງການປະຕິຮູບໃນປະເທດຕ່າງ ໆ ນັ້ນໄດ້ປາກົດວ່າ ຄຣິສຈັກທາງພາກເຫນືອຂອງຢຸໂຣປ ແລະທາງພາກຕາວັນຕົກຂອງຣັຖເຊັຍ ໄດ້ແຍກຕົວອອກແລະກໍ່ຕັ້ງເປັນຄຣິສຈັກໂປເຕັສເຕນ ຫລືທີ່ຮຽກຕົວເອງວ່າ ຄຣິສຈັກປະຕິຮູບ (Reformed Church) ໄດ້ປົກຄອງຕົນເອງໃນແຕ່ລະປະເທດຢ່າງເປັນອິສຣະ ໂດຍບໍ່ຍອມຂຶ້ນກັບຄຣິສຈັກໂຣມ ແລະບໍ່ຢູ່ໃຕ້ອຳນາດຂອງສັນຕະປາປາ ຄຣິສຈັກປະຕິຮູບໄດ້ຍົກເລີກແນວການປະຕິບັດຂອງຄາທໍລິກຫລາຍ ໆ ຢ່າງ ເຖິງຢ່າງໃດກໍຕາມ ການປະຕິຮູບໃນແຕ່ລະປະເທດໄດ້ເກີດຂຶ້ນໃນເວລາໃກ້ຄຽງຕາມກັນຫລາຍ ແຕ່ບໍ່ໄດ້ຫມາຍຄວາມວ່າ ແຕ່ລະປະເທດໄດ້ກາຍເປັນຄຣິສຈັກໂປເຕັສເຕນຫມົດທັງປະເທດ ພຽງແຕ່ວ່າການປະຕິຮູບຄຣິສຈັກໄດ້ມີອິດທິພົນປ່ຽນແປງຄຣິສຈັກເກີດຂຶ້ນໃນແຕ່ລະພາກຂອງແຕ່ລະປະເທດເທົ່ານັ້ນ ຄຣິສຈັກຄາທໍລິກຍັງຄົງມີຄວາມເຂັ້ມແຂງແລະມີປະຊາຊົນເປັນສ່ວນຫລາຍກວ່າທີ່ເປັນສມາຊິກ ຄຣິສຈັກຄາທໍລິກມີຮາກຖານ ແລະມີຄວາມຮັ່ງມີ ມີຄວາມມັ່ນຄົງ ມີຕຶກອາຄານທີ່ໄດ້ຖືກສ້າງຂຶ້ນຢ່າງຖາວອນມາດົນນານແລ້ວ ແຕ່ຝ່າຍຄຣິສຈັກໂປເຕັສເຕນຫາກໍເພິ່ງເກີດຂຶ້ນມາໃຫມ່ ເພິ່ງຈະໄດ້ຮັບການຍອມຮັບຈາກຣັຖບານ ດັ່ງນັ້ນຈຶ່ງເປັນຝ່າຍຍາກຈົນຫລາຍກວ່າຄຣິສຈັກຄາທໍລິກ ແລະຕຶກອາຄານກໍເພິ່ງຈະຖືກສ້າງຂຶ້ນ ປະຊາຊົນສ່ວນນ້ອຍທີ່ມີຄວາມເຂົ້າໃຈໃນເຣື່ອງການປະຕິຮູບຄຣິສຈັກ ຫາກແຕ່ວ່າຜູ້ນຳເຂັ້ມແຂງແລະມີຄຳສອນທີ່ຖືກຕ້ອງຕາມ

ພຣະຄັມພີ ມີຄວາມເຊື່ອມັ່ນຄົງໃນພຣະເຈົ້າ ມີການຍອມເສັຽສລະອິດສ່າຫມັ່ນພຽຣນໃນເຣື້ອງການປະກາດຄວາມຈິງຂອງພຣະເຈົ້າ ເຮັດໃຫ້ຄຣິສຈັກໂປເຕັສເຕນຂຍາຍກ້າວຫນ້າໄປຢ່າງວ່ອງໄວ

**ຫລັກຄວາມເຊື່ອແລະຣະບຽບການປົກຄອງ ທີ່ພວກປະຕິຮູບໃຊ້ເປັນພື້ນຖານໃນຄຣິສຈັກໂປເຕັສເຕນມີດັ່ງນີ້**

1. ຄຣິສຈັກປະຕິຮູບຕ້ອງຕັ້ງຢູ່ໃນຫລັກຄຳສອນຂອງພຣະຄັມພີ ຈະເຫັນໄດ້ວ່າຄວາມຜິດພາດຂອງຄຣິສຈັກຄາທໍລິກຄືວ່າ ໄດ້ໃຫ້ສິດທິອຳນາດແກ່ຜູ້ນຳຄຣິສຈັກຫລາຍກວ່າສິດທິອຳນາດແຫ່ງຄຳສອນຂອງພຣະຄັມພີ

2. ປະຊາຊົນແລະຜູ້ເຊື່ອມີສິດໄດ້ອ່ານພຣະຄັມພີ ເພາະພວກປະຕິຮູບຄຣິສຈັກໄດ້ນຳເອົາພຣະຄັມພີແປເພື່ອມາຕີແຜ່ ແລະພິມອອກໃຫ້ແກ່ປະຊາຊົນຜູ້ສົນໃຈໄດ້ອ່ານ ເຮັດໃຫ້ຄຳສອນຂອງພຣະຄັມພີເດັ່ນຂື້ນໃນຊີວິດຂອງເຂົາ ແລະຖືເປັນກົດເກນໃນການດຳເນີນຊີວິດຄຣິສຕຽນ ຊຶ່ງແຕ່ເດີມນັ້ນພວກນັກບວດແລະສັນຕະປາປາເທົ່ານັ້ນທີ່ມີສິດອ່ານແລະແປຄວາມຫມາຍຂອງພຣະຄັມພີ

3. ຍົກເລີກພິທີສິລອື່ນ ໆ ທີ່ຄຣິສຈັກຄາທໍລິກໄດ້ເນັ້ນ ແລະເຕີ່ມເຂົ້າມາພາຍຫລັງ ຂໍ້ປະຕິບັດທີ່ປາກົດໃນພຣະຄັມພີມີແຕ່ 2 ພິທີ ຄືພິທີບັບຕິສມາ ແລະພິທີຣະລຶກເຖິງພຣະເຢຊູ (ພິທີ່ມຫາສນິທ) ສ່ວນສິລອື່ນ ໆ ທີ່ໄດ້ຖືກຕັ້ງຂຶ້ນພາຍຫລັງຕາມປະເພນີນິຍົມຂອງທ້ອງຖິ່ນຕ່າງ ໆ ທີຕາມທີ່ສັນຕະປາປາໄດ້ແຕ່ງຂຶ້ນພາຍຫລັງນັ້ນໃຫ້ຍົກເລີກເສັຽ

4. ປຣັ່ງແປງກົດວິນັຍແລະຣະບຽບການນມັສການໃຫ້ງ່າຍຂື້ນໃຫ້ສົມເຫດສົມຜົນ ຕາມຫລັກຄຳສອນຂອງພຣະຄັມພີ ແລະຕາມແນວປະຕິບັດຂອງຄຣິສຕຽນຍຸກທຳອິດ ແມ່ນຍຸກອັຄສາວົກ ໂດຍບໍ່ໃຫ້ມີພິທີກັມອັນວຸ້ນວາຍ ບໍ່ມີການເສກເຂົ້າຈີ່ຫລືນ້ຳລະແຊງ ຍົກເລີກການນມັສການຮູບປັ້ນຕ່າງ ໆ ເຊັ່ນຮູບປັ້ນນາງມາເຣັຽ ຮູບປັ້ນອັຄສາວົກເປໂຕ ຍົກເລັກການອ້ອນວອນຕໍ່ນັກບຸນທັງຫລາຍ ແຕ່ໃຫ້ອ້ອນວອນໂດຍຕົງຕໍ່ພຣະເຈົ້າໃນພຣະນາມຂອງພຣະເຢຊູຜູ້ເປັນພຣະບຸດເທົ່ານັ້ນ

5. ຜູ້ເຊື່ອສາມາດເຂົ້າເຝົ້າພຣະເຈົ້າໄດ້ໂດຍຕົງ ເປັນພາກສ່ວນຂອງແຕ່ລະຄົນທີ່ມີຄວາມເຊື່ອຄວາມສັດທາ ແລະມີສັມພັນທະພາບໂດຍຕົງກັບພຣະເຈົ້າ ໂດຍບໍ່ຈຳເປັນທີ່ຕ້ອງມີນັກບວດມາເປັນຄົນກາງຕ່າງຫນ້າແກ້ບາບເຮົາ ຫາກຜູ້ໃດມີຈິດໃຈສະແຫວງການຍົກໂທດ ຜູ້ນັ້ນຈະໄດ້ຮັບໂດຍຕົງ (1 ຢຮ 1:9) ຄຳສອນຂອງກຸ່ມປະຕິຮູບຄຣິສຈັກສອນວ່າ ຜູ້ເຊື່ອບໍ່ຕ້ອງເພິ່ງບຸນກຸສົລຂອງນັກບວດຜູ້ໃດ ແລະຄວາມຣອດພົ້ນບໍ່ສາມາດຊື້ມາໄດ້ດ້ວຍເງິນຄຳ ແຕ່ຄວາມຣອດພົ້ນຂອງມະນຸດໄດ້ມາຈາກຄວາມກະຣຸນາແລະຄວາມຮັກຂອງພຣະເຈົ້າ ໂດຍພຣະເຢຊູຄຣິສຜູ້ເປັນມຫາປຸໂຣຫິດຜູ້ຊົງໄຖ່ເຮົາໃຫ້ອອກຈາກບາບກັມ ບໍ່ແມ່ນສັງຄະຣາດອົງໃດ ໆ ທີ່ຈະມີສິດທິໄຖ່ບາບເຮົາໄດ້



MARTIN LUTHER

ທ່ານມມາຕິນ ລູເຕີ 1483 - 1546
ຜູ້ນຳການປະຕິຮູບຄຣິສຈັກໃນປະເທດເຢັຽຣະມັນ



Desiderius Erasmus

**ທ່ານເດຊິເດີຣຽສ ອີຣັສມັສ** (ຄ.ສ. 1466-1536)

ໄດ້ພິມພຣະຄຣິສທັມຄັມພີໃຫມ່ເປັນພາສາກຣີກ ສະບັບທຳອິດໃນ ຄ.ສ. 1516



**ທ່ານອູຣິຄ ສວິງລີ່** (Ulrich Zwingli ຄ.ສ. 1484-1531)

ທ່ານສວິງລີ່ເລີ້ມຕົ້ນການປະຕິຮູບຄຣິສຈັກດ້ວຍການເທສນາຈາກພຣະຄຣິສທັມຄັມພີໃຫມ່ພາສາກຣີກ ຊຶ່ງທ່ານອີຣັສມັສໄດ້ແປໄວ້ ທ່ານເນັ້ນຫນັກວ່າ ພຣະຄຣິສທັມຄັມພີນັ້ນເປັນຄຳສອນອັນສົມບູນທີ່ສຸດສຳຫຼັບຊີວິດຄຣິສຕຽນ ແລະຄັມພີເທົ່ານັ້ນທີ່ມີສິດທິອຳນາດເດັດຂາດໃນການສິດສອນມະນຸດໂລກ ຄຳສອນແລະຄວາມເຊື່ອອັນເດັດຂາດຂອງທ່ານ ໄດ້ນຳພາໃຫ້ເກີດການທຳລາຍຮູບປັ້ນຕ່າງ ໆ ໃນຄຣິສຈັກ ການນມັສການທ່ານໄດ້ຈັດໃຫ້ມີພິທີແບບງ່າຍ ໆ



Henry VIII

ເຈົ້າຊີວິດເຮັນຣີ ທີ່ 8
ຜູ້ສະຖາປານາຄຣິສຈັກອັງກິດ (Church of England)
ເພື່ອໃຫ້ພົ້ນຈາກອຳນາດຂອງກຸງໂຣມ



John Knox

ທ່ານຈອນ ນ໊ອກ 1505-1572
ຜູ້ນຳການປະຕິຣູບຄຣິສຈັກໃນປຣະເທດສກອຕແລນ
ໄດ້ຮັບການຮ້ອງວ່າເປັນບິດາແຫ່ງສກອຕແລນ (The Father of Scotland)



John Calvin

ທ່ານຈອນ ຄາລວິນ 1509-1564
ຜູ້ນຳການປະຕິຣູບຄຣິສຈັກໃນປະເທດສວິສ
ແລະໄດ້ຂຽນປຶ້ມບົດຮຽນແກ່ນັກສຶກສາພຣະຄັມພີໂປຣເທັສແຕນ
ເປັນ ສະຖາບັນສຶກສາສາສນາຄຣິສຕຽນ (Institutes of the Christian Religion)
ໂຮງຮຽນນີ້ໄດ້ກາຍເປັນມຫາວິທຍາລັຍແຫ່ງກຸງເຈນີວາ

# 5. ยุโรป ค.ศ.1519 (พ.ศ.2062)
(ต้นสมัยปฏิรูปศาสนา)



ຮີ 1-27-97

# ບົດທີ 13

## ຊີວະປະວັດບຸກຄົນສຳຄັນທີ່ໄດ້ປະຕິຮູບຄຣິສຈັກ

ໃນບົດນີ້ຈະໄດ້ເວົ້າເຖິງຊີວະປະວັດບຸກຄົນສຳຄັນ ໆ ຢ່າງຍໍ້ ໆ ທ່ານເຫລົ່ານີ້ໄດ້ທຳການປະຕິຮູບຄຣິສຈັກໃນປະເທດຕ່າງ ໆ ເພາະເຫດວ່າຕ້ອງການເປີດເຜີຍຄວາມຄິດ ຄວາມເຊື່ອ ຄວາມເຂົ້າໃຈໃຫມ່ທີ່ໄດ້ຮຽນຮູ້ຈາກພຣະຄຣິສທັມຄັມພີ ເພື່ອເປີດເຜີຍຕໍ່ຄຣິສຕຽນແລະຄຣິສຈັກທັງຫລາຍ ຊີວິດຂອງຄົນເຫລົ່ານີ້ຕ້ອງພົບກັບການຂົ່ມເຫັງຢ່າງຫນັກ ຕ້ອງຖືກເນຣະເທດ ບາງທ່ານຕ້ອງຖືກຂ້າຕາຍ ຫລືຖືກເຜົາທັງເປັນຢ່າງທາຣຸນ ຈາກອຳນາດຂອງສັນຕະປາປາ ເພາະເຫດວ່າຜູ້ນຳຄຣິສຈັກຄາທໍລິກຖືວ່າ ທ່ານເຫລົ່ານີ້ເປັນພວກນອກຮີດ ແລະເປັນພວກຕໍ່ຕ້ານອຳນາດຂອງສັນຕະປາປາ ແຕ່ວ່າຄວາມຕາຍຫລືການຂົ່ມເຫັງໃດ ໆ ກໍບໍ່ສາມາດຢຸດຢັ້ງຄຳສອນຂອງທ່ານເຫລົ່ານີ້ໄວ້ໄດ້ ເພາະວ່າເປັນຄຳສອນທີ່ຖືກຕ້ອງ ຄວາມເຊື່ອອັນແທ້ຈິງຂອງຄົນທີ່ສັດຊື່ເຫລົ່ານີ້ ໄດ້ເຮັດໃຫ້ເກີດການຊຳຣະລ້າງຄຣິສຈັກໃຫ້ສະອາດ ຊຶ່ງຄົນຮຸ້ນຫລັງຕໍ່ ໆ ມາໄດ້ຖືຮັກສາ ແລະຮັບເອົາໄວ້ເປັນແບບຢ່າງສືບທອດມາຈົນເຖິງປັດຈຸບັນ ຫວັງວ່າບົດຮຽນນີ້ຈະເປັນປໂຍດຕໍ່ທ່ານໃນການຮັບໃຊ້ພຣະອົງ

**ທ່ານເດຊິເດີຣຽສ ອີຣັສມັສ** (Desiderius Erasmas ຄ.ສ. 1466-1536)

ທ່ານອີຣັສມັສ ເກີດທີ່ເມືອງຣອດເຕີດັມ (Rotterdam)ປະເທດຮອລແລນ ທ່ານເປັນລູກຂອງນັກບວດຜູ້ນຶ່ງ ທ່ານໄດ້ເຈັບປ່ວຍຫນັກ ແລະເມື່ອຕອນທີ່ທ່ານເຈັບປ່ວຍນັ້ນ ທ່ານຖືກສົ່ງເຂົ້າໄປຢູ່ໃນອາຣາມໃນຣາວ ຄ.ສ.1486 ເພື່ອຮັກສາຕົວໃຫ້ເຊົາຈາກການເຈັບເປັນ ທ່ານອີຣັສມັສບໍ່ມັກຊີວິດທີ່ຢູ່ໃນອາຣາມ ທ່ານເຫັນວ່າພວກນັກບວດສ່ວນຫລາຍໃຊ້ຊີວິດແບບໂງ່ ໆ ແລະຄ້ານຫລາຍ ບໍ່ສົນໃຈຮຽນຮູ້ຈັກສິ່ງໃຫມ່ ໆ ທ່ານຈຶ່ງອອກຈາກອາຣາມ ມາເປັນນັກບວດອິສຣະ ແລະຫມັ່ນສຶກສາຫາຄວາມຮູ້ ທ່ານໄດ້ພິມພຣະຄຣິສທັມຄັມພີໃຫມ່ເປັນພາສາກຣີກ ສະບັບທຳອິດໃນ ຄ.ສ. 1516 ພຣະຄັມພີກຣີກສະບັບນີ້ຖືວ່າເປັນພຣະທັມທີ່ໄດ້ເປີດເຜີຍພຣະຄຳຂອງພຣະເຈົ້າ ຜູ້ນຳຫລາຍ ໆ ທ່ານໄດ້ຮຽນຮູ້ຈັກພາສາກຣີກເຮັດໃຫ້ມີໂອກາສສຶກສາພຣະຄຳຂອງພຣະເຈົ້າຢ່າງເຂົ້າໃຈ ເພາະເປັນພາສາກຣີກທີ່ຜູ້ຮຽນສາມາດເຂົ້າໃຈໄດ້ ແລະເກີດຮູ້ຈັກຄວາມຈິງວ່າ ພິທີກັມແລະແນວປະຕິບັດຂອງຄຣິສຈັກຄາທໍລິກນັ້ນບໍ່ແມ່ນຖືກຕ້ອງ ສ່ວນຫລາຍບໍ່ໄດ້ສອນໄວ້ໃນພຣະຄັມພີ

ທ່ານ ອີຣັສມັສ ໄດ້ຮັບການຍົກຍ້ອງວ່າ ເປັນນັກປຣາດທີ່ສຳຄັນໃນຍຸກກາງນີ້ ທ່ານຂຽນຫນັງສືຫລາຍເຫລັ້ມ ເຫລັ້ມທີ່ມີຊື່ສຽງແມ່ນ **ການຍ້ອງຍໍຄວາມໂງ່** ເປັນຫນັງສືວິຈານພວກນັກບວດໃນອາຣາມທີ່ໃຊ້ຊີວິດຢ່າງໂງ່ ໆ ແລະກ່າວວິຈານເຖິງຄວາມລົ້ມເຫລວຂອງຄຣິສຈັກຄາທໍລິກ

ທ່ານອີຣັສມັສບໍ່ເຄີຍເຂົ້າຮ່ວມການປະຕິຮູບຄຣິສຈັກ ແຕ່ຜົນງານອັນໃຫຍ່ຫລວງຂອງທ່ານຄື ເນື້ອນັຍຂໍ້ຂຽນ ບົດຄວາມ ແລະການສເນີແນວຄວາມຄິດເຫັນ ຕາມຫລັກຄວາມເຊື່ອຂອງທ່ານ ຊຶ່ງມັກວິພາກວິຈານຄຣິສຈັກຄາທໍລິກໄດ້ນຳພາໃຫ້ນັກປຣາດທັງຫລາຍຕື່ນຕົວ ໄດ້ມີໂອກາສພາກັນຄິດພິຈາຣະນາ ແລະສຶກສາຫາຄວາມຈິງ ທ່ານອີຣັສມັສຍັງຄົງຮັກສາຕົວເປັນຄາທໍລິກ ເຖິງແມ່ນວ່າທ່ານໄດ້ຕິຕຽນຄວາມເຊື່ອ

ຂອງຄາທໍລິກວ່າບໍ່ຖືກຕ້ອງກໍຕາມ ທ່ານຕ້ອງການເຫັນການປ່ຽນແປງໃນຄຣິສຈັກຄາທໍລິກບໍ່ແມ່ນຕ້ອງການເຫັນການແຕກແຍກຫລືການຕໍ່ສູ້ກັນ ທ່ານໄດ້ຕໍານິພວກປະຕິຮູບຄຣິສຈັກທີ່ເກີດການປະທ້ວງຢ່າງຮຸນແຮງ ທ່ານສິ້ນຊີພໃນ ຄ.ສ. 1536

**ທ່ານມາຕິນ ລູເຕີ** (Martin Luther ຄ.ສ. 1483-1546)

ເກີດວັນທີ່ 10 ເດືອນ 11 ຄ.ສ. 1483 ທີ່ເມືອງໄອສ໌ເລເບນ (Eisleben) ປະເທດເຢັຽຣະມັນ ທ່ານລູເຕີເປັນຜູ້ນໍາການປະຕິຮູບຄຣິສຈັກທີ່ມີຊື່ສຽງ ນາມຂອງທ່ານຖືກກ່າວເຖິງຫລາຍທີ່ສຸດໃນເຣື່ອງການປະຕິຮູບຄຣິສຈັກຈົນເຖິງປັດຈຸບັນນີ້

ທ່ານລູເຕີເປັນບຸດຂອງເຈົ້າຂອງເຫມືອງແຮ່ ບິດາໄດ້ລ້ຽງທ່ານຢ່າງມີຣະບຽບແລະເຂັ້ມງວດທີ່ສຸດ ເຮັດໃຫ້ທ່ານເປັນຄົນບໍ່ມີຄວາມກ້າຫານ ມັກຢ້ານ ທ່ານຮຽນບໍ່ເກັ່ງແລະມັກຖືກນາຍຄູຮ້າຍ ແລະຖືກຕີຢູ່ສະເມີ ທ່ານລູເຕີບໍ່ມີຄວາມເຂັ້ມແຂງ ຫລືຫມັ້ນໃຈໃນຕົນເອງປານໃດ ແຕ່ວ່າທ່ານມີສິ່ງນຶ່ງແມ່ນ ຄວາມສັດຊື່ໃນອົງພຣະຜູ້ເປັນເຈົ້າມາຕັ້ງແຕ່ນ້ອຍຈົນເຖິງຕາຍ

ບິດາຂອງທ່ານຕ້ອງການໃຫ້ລູເຕີເປັນທນາຍຄວາມ (Lawyer) ໄດ້ສົ່ງທ່ານເຂົ້າຮຽນໃນມະຫາວິທຍາລັຍເອີເຟີດ (Erfurt) ຈົນຮອດປີ 1505 ເມື່ອທ່ານລູເຕີອາຍຸໃນຣາວ 22 ປີ ທ່ານໄດ້ເຫັນຟ້າຜ່າໃນເວລາທີ່ຍ່າງຢູ່ຕາມແຄມທາງນ້ອຍ ໆ ໃກ້ ໆ ກັບມະຫາວິທຍາລັຍເອີເຟີດ ທ່ານຢ້ານຫລາຍຈຶ່ງອ້ອນວອນຕໍ່ນັກບຸນແອນ (St. Anne) ວ່າ ຂໍໃຫ້ໄດ້ຮັບຄວາມປອດພັຍແລ້ວຈະເຂົ້າບວດຖ້າມີຊີວິດຣອດຈາກຟ້າຜ່ານັ້ນ ຈາກນັ້ນພຽງ 3 ອາທິດ ທ່ານໄດ້ເຂົ້າບວດໃນອາຣາມອໍກັສຕິນ (Augustinan Monastery) ແລະໃນ ຄ.ສ. 1507 ທ່ານໄດ້ຮັບສຖາປນາເປັນນັກບວດແລະໄດ້ປະກອບພິທີມິຊຊາ (Mass) ເປັນເທື່ອທໍາອິດ

ທ່ານລູເຕີ ພຍາຍາມເປັນນັກບວດທີ່ດີທີ່ສຸດ ທ່ານມັກສາຣພາບບາບຢູ່ບໍ່ຂາດ ເພາະຮູ້ສຶກວ່າຕົວເອງເປັນຄົນບາບຫລາຍ ທ່ານຮັກສັດຊື່ຕໍ່ອົງພຣະຜູ້ເປັນເຈົ້າທີ່ສຸດ ແຕ່ທ່ານກໍຮູ້ສຶກຢ້ານພຣະເຈົ້າຫລາຍຄືກັນກັບທີ່ເຄີຍຢ້ານຕໍ່ບິດາມາຣດາ ແລະທີ່ເຄີຍຢ້ານຕໍ່ນາຍຄູ ເມື່ອທ່ານຕ້ອງຖືໃຫ້ປະກອບພິທີມິຊຊາ ທ່ານສັ່ນໄປທັງຕົວ ເພາະຄໍາສອນທີ່ວ່າ ເຂົ້າຈີ່ເປັນເນື້ອກາຍແທ້ ໆ ແລະນໍ້າລະແຊງແປງເປັນເລືອດແທ້ ໆ ຂອງພຣະເຢຊູ ແລະທ່ານກໍາລັງຖືຢູ່ໃນມື ເຮັດໃຫ້ທ່ານຢ້ານຫລາຍ

ທ່ານລູເຕີບໍ່ເຄີຍມີຄວາມມ່ວນໃຈເລີຍ ເພາະຄິດຢູ່ສເມີວ່າ ຄວາມດີທີ່ທ່ານເຮັດນັ້ນຍັງບໍ່ພໍຈັກເທື່ອ ແລະຢ້ານຫລາຍວ່າຈະບໍ່ໄດ້ຮັບຄວາມຣອດພົ້ນ ດັ່ງນັ້ນທ່ານລູເຕີຈຶ່ງເບິ່ງຫາພຣະເຈົ້າໂດຍການອ່ານພຣະຄໍາຂອງພຣະເຈົ້າຫລາຍຂຶ້ນ ແລະອ່ານຫນັງສືຕ່າງ ໆ ທີ່ມີຢູ່ໃນຫ້ອງສມຸດ ອັນນີ້ເຮັດໃຫ້ທ່ານເກີດຄວາມຮູ້ຄວາມເຂົ້າໃຈໃນສາສນາຄຣິສຢ່າງຫລວງຫລາຍໃນ ຄ.ສ. 1508 ທ່ານໄດ້ເປັນອາຈານສອນໃນມະຫາວິທຍາລັຍ ວິຕເຕນເບີກ (Wittenberg) ແລະທ່ານໄດ້ຮັບປຣິນຍາເອກ (Doctor Degree) ໃນເວລາຕໍ່ມາ ໃນຣະຍະເວລານີ້ເອງ ທ່ານໄດ້ສຶກສາຮ່ວມກັບນັກປຣາດຄົນອື່ນ ໆ ແລະໄດ້ພົບກັບຄວາມເຂົ້າໃຈເຣື່ອງຄວາມຣອດພົ້ນໃນພຣະເຢຊູຄຣິສໂດຍຄວາມ **ເຊື່ອ** ທ່ານເລີ້ມປະກາດແລະແຜ່ຄໍາສອນອອກໄປທົ່ວເຢັຽຣະມັນ

ທ່ານລູເຕີຕັ້ງຕົ້ນສອນຈາກພຣະຄໍາຂອງພຣະເຈົ້າ ໂດຍເລີ້ມຕົ້ນຮຽນຮູ້ຈັກພາສາກຣີກ ທ່ານມີຄວາມເຊື່ອວ່າ ພຣະຄຣິສທັມຄັມພີເທົ່ານັ້ນທີ່ຈະນໍາໃຫ້ຮູ້ຈັກແຈ້ງ ເຖິງຄວາມຈິງແທ້ຂອງພຣະເຈົ້າ ແລະນໍາພາໃຫ້ທ່ານເກີດສັນຕິສຸກໃນວິນຍານຈິດຂອງທ່ານ

ຄ.ສ. 1517 ທ່ານລູເຕີຕໍ່ຕ້ານຄຳສອນຂອງເທັດເຊລ (Tetzel) ຜູ້ຂາຍໃບບຸນເພື່ອສ້າງພຣະວິຫານເຊນປີເຕີແຫ່ງກຸງໂຣມ (ເບິ່ງບົດທີ່ 11 ໜ້າ 4-7) ທ່ານລູເຕີໄດ້ຂຽນຄຳປະທ້ວງ 95 ຂໍ້ ແຕ່ທ່ານກໍຍັງໃຫ້ຄວາມເຄົາຣົບຕໍ່ສັນຕະປາປາລີໂອທີ່ 10 ແລະກ່າວວ່າ ບາງເທື່ອສັນຕະປາປາອາຈບໍ່ຮູ້ຈັກວ່າ ຊື່ຂອງທ່ານໄດ້ຖືກນຳໄປອ້າງເພື່ອຂາຍໃບບູລເອົາເງິນ ທ່ານລູເຕີແລະນັກປຣາດອີກຫລາຍຄົນພາກັນສົງສັຍວ່າ ໃບບູລ5ນີ້ຈະມີອຳນາຈຊ່ວຍໃຫ້ວິນຍານຈິດຂອງມະນຸດໃຫ້ຫລຸດພົ້ນຈາກແດນໄຟຊຳຣະໄດ້ແນວໃດແດ່ ທ່ານລູເຕີຍັງໄດ້ຂຽນໜັງສືອີກ 3 ເຫລັ້ມ ຄື

1. ຄຳຮ້ອງໄປເຖິງຜູ້ນຳຄຣິສຈັກໃນເຢັຽຣະມັນ
2. ຄຣິສຈັກຂອງພຣະເຈົ້າຕົກເປັນທາດຂອງບາບີໂລນ
3. ເສຣີພາບຂອງຄຣິສຕຽນ

ໜັງສືເຫລົ່ານີ້ໄດ້ສເນີຄວາມຄິດເຫັນຂອງທ່ານລູເຕີວ່າ ຜູ້ເຊື່ອທຸກຄົນມີຖານະເຂົ້າເຝົ້າພຣະເຈົ້າໄດ້ທຸກຄົນບໍ່ແມ່ນສະເພາະແຕ່ນັກບວດເທົ່ານັ້ນ ທີ່ເຂົ້າເຝົ້າອ້ອນວອນຕໍ່ພຣະເຈົ້າໄດ້ ນັກບວດບໍ່ມີສິດທິພິເສດ ແຕ່ສເມີພາກເທົ່າທຽມກັບຜູ້ເຊື່ອອື່ນ ໆ ຖ້ານັກບວດບໍ່ຍອມແກ້ໄຂປຣັບແປງຄຣິສຈັກໃຫ້ຖືກຕ້ອງຕາມພຣະຄັມພີແລ້ວ ຄຣິສຕຽນໂດຍທົ່ວໄປຫລືເຈົ້ານາຍຜູ້ປົກຄອງແຄວ້ນເຢັຽຣະມັນສົມຄວນມີສິດແກ້ໄຂຄຣິສຈັກໃຫ້ຖືກຕ້ອງ ບໍ່ໃຫ້ຕົກເປັນທາດຂອງຄວາມຜິດບາບອີກຕໍ່ໄປ ທ່ານຍັງໄດ້ສອນອີກວ່າຄຣິສຕຽນຜູ້ເຊື່ອທຸກຄົນມີສິດເຂົ້າສ່ວນໃນພິທີຣະລຶກ ບໍ່ແມ່ນແຕ່ນັກບວດເທົ່ານັ້ນທີ່ຮັບເຂົ້າຈີ່ແລະນ້ຳລະແຊງໄດ້ ຄຣິສຕຽນບໍ່ຈຳເປັນຕ້ອງຖືສິລ ຫລືຊື້ໃບບູລຈຶ່ງຈະຣອດພົ້ນ ແຕ່ຄວາມພົ້ນນັ້ນເຮົາໄດ້ມາຍ້ອນ **ຄວາມເຊື່ອທີ່ເຮົາຍອມຮັບເອົາການຕາຍໄຖ່ບາບຂອງພຣະເຢຊູຄຣິສ**

ຄຳສອນຂອງທ່ານລູເຕີໄດ້ກໍ່ໃຫ້ເກີດການປະຕິຮູບຄຣິສຈັກໃນປະເທດເຢັຽຣະມັນ ທ່ານລູເຕີໄດ້ເປັນຜູ້ນຳການປະຕິຮູບ ແລະຖືກກົດດັນໃຫ້ຕັ້ງຄຣິສຈັກລູເຕີແລນ (Lutheran Churches) ຂຶ້ນ ອັນເປັນການເປີດຍຸກສມັຍໃໝ່ໃຫ້ແກ່ຄຣິສຈັກໂປເທັສເຕນ (Protestant Churches) ທີ່ໄດ້ແຜ່ຂຍາຍອອກໄປທົ່ວໂລກ (ອ່ານເພີ່ມເຕີມບົດທີ່ 11 ການປະຕິຮູບໃນເຢັຽຣະມັນ)

ທ່ານລູເຕີໄດ້ລາອອກຈາກການເປັນນັກບວດ ໄດ້ແຕ່ງງານໃນປີ ຄ.ສ. 1524 ກັບຜູ້ທີ່ເຄີຍເປັນນາງຊີມາກ່ອນ ຄື ແຄທເທີຣີນແຫ່ງບອນ (Catherine von Born) ມີລູກທັງໝົດ 6 ຄົນ ທ່ານສິ້ນຊີພໃນປີ ຄ.ສ. 1546 ຊຶ່ງເປັນເວລາທີ່ຄຣິສຈັກລູກເຕີແລນຂຍາຍໃຫຍ່ ແລະມີອິດທິພົນຕໍ່ຄວາມເຊື່ອຂອງຜູ້ນຳຄຣິສຈັກຄົນອື່ນ ໆ ຈົນເປັນເຫດໃຫ້ຄຣິສຈັກຝ່າຍໂປເທັສເຕນນີ້ຂຍາຍກວ້າງຂວາງອອກໄປ ແລະທຳການປະຕິຮູບຄຣິສຈັກໃນປະເທດຕ່າງ ໆ ແລະເກີດຄນະນິກາຍໂປເທັສເຕນຫລາຍຮູບແບບ

**ທ່ານອູຣິຄ ສວິງລີ່** (Ulrich Zwingli ຄ.ສ. 1484-1531)

ທ່ານອູຣິຄ ສວິງລີ່ເປັນຊາວສວິສ ທ່ານຜ່ານການສຶກສາດ້ານມະນຸດວິທຍາ ທ່ານເປັນໝູ່ສຫາຍກັບທ່ານອີຣັສມັສ ແລະໄດ້ຮັບການດົນໃຈຈາກຄຳສອນຂອງທ່ານລູເຕີຫລາຍ ທ່ານສວິງລີ່ ມີຄວາມຄິດຄວາມເຫັນຍອມຮັບທັສນະແນວຄິດຂອງທ່ານລູເຕີ ແຕ່ກໍມີຫລາຍຂໍ້ຫລາຍປະການທີ່ແຕກຕ່າງອອກໄປຈາກທ່ານລູເຕີ ທ່ານສວິງລີ່ມີຄວາມເດັດຂາດຫລາຍກວ່າທ່ານລູເຕີ ທ່ານຕ້ອງການປະຕິຮູບຄຣິສຈັກແບບຮຸນແຮງ ຕ້ອງການຖອນຮາກຂອງພວກຄາທໍລິກຄືບໍ່ຍອມອະລຸ້ມອະລ່ວຍ ຕ້ອງການປະຕິຮູບຄຣິສຈັກໃຫ້ອອກຈາກແນວປະຕິບັດຂອງຄາທໍລິກຈົນໝົດສິ້ນ ທັງສອງທ່ານຄື ສວິງລີ່ ແລະລູເຕີມີຄວາມເຫັນພ້ອມກັນຄືເຣື່ອງຄວາມຣອດພົ້ນນັ້ນ ມະນຸດໄດ້ຮັບຄວາມຣອດພົ້ນໂດຍພຣະເຈົ້າອົງດຽວເປັນຜູ້ປະທານໃຫ້ ບໍ່ແມ່ນ

ໂດຍການອາສັຍພຽງແຕ່ຄວາມດີທີ່ເຮົາໄດ້ເຮັດຫລືບໍ່ແມ່ນອາສັຍສິລທີ່ເຮົາຖື  ແຕ່ໂດຍພຣະຄຸນຂອງພຣະເຈົ້າທີ່ໂຜດຍົກໂທດອະພັຍບາບຊ່ວຍໃຫ້ເຮົາຣອດພົ້ນ

ທ່ານສວິງລີ່ສອນວ່າ  ພຣະເຈົ້າເປັນຕົ້ນກຳເນີດຂອງສິ່ງທັງປວງ ພຣະອົງສາມາດປະທານຄວາມຣອດພົ້ນແກ່ມະນຸດ  ໃນພິທີຣະລຶກເຖິງພຣະເຢຊູຄຣິສ (The Lord's Supper) ຜູ້ເຊື່ອທຸກຄົນສົມຄວນມີສິດເຂົ້າຮ່ວມພິທີ  ບໍ່ແມ່ນແຕ່ນັກບວດເທົ່ານັ້ນ  ເພາະວ່າພຣະເຢຊູໄດ້ຕາຍເທື່ອດຽວເພື່ອຄົນທັງຫລາຍ  ບໍ່ແມ່ນພຣະເຢຊູຕາຍທຸກເທື່ອທີ່ມີການເສກເຂົ້າຈີ່ແລະນ້ຳລະແຊງ  ສວິງລີ່ສອນອີກວ່າ ທຸກເທື່ອທີ່ເຮົາຮັບເຂົ້າຈີ່ແລະຈອກດື່ມນັ້ນ ເຮົາຮັບເອົາເຄື່ອງຫມາຍທີ່ສະແດງ **ຄວາມເປັນອັນນຶ່ງອັນດຽວກັນໃນຄວາມເຊື່ອ ຣະຫວ່າງຜູ້ເຊື່ອກັບພຣະຄຣິສ ແລະຣະຫວ່າງຜູ້ເຊື່ອກັບຜູ້ເຊື່ອອື່ນ ໆ**  ສວິງລີ່ສອນວ່າ ຈອກແລະເຂົ້າຈີ່ບໍ່ໄດ້ແປງເພດເປັນໂລຫິດ ແລະບໍ່ໄດ້ແປງເປັນພຣະກາຍແທ້ ໆ  ແຕ່ເປັນພຽງເຄື່ອງຫມາຍແທນພຣະກາຍແລະພຣະໂລຫິດ ເພື່ອຜູ້ເຊື່ອທຸກຄົນຈະຣະລຶກເຖິງການຕາຍໄຖ່ບາບຂອງພຣະຄຣິສ  ທີ່ມີຕໍ່ຜູ້ເຊື່ອນັ້ນ

ທ່ານສວິງລີ່ເລີ້ມຕົ້ນການປະຕິຮູບຄຣິສຈັກດ້ວຍການເທສນາຈາກພຣະຄຣິສທັມຄັມພີໃຫມ່ພາສາກຣີກຊຶ່ງທ່ານອີຣັສມັສໄດ້ພິມໄວ້  ທ່ານເນັ້ນຫນັກວ່າ ພຣະຄຣິສທັມຄັມພີນັ້ນເປັນຄຳສອນອັນສົມບູນທີ່ສຸດສຳລັບຊີວິດຄຣິສຕຽນ  ແລະພຣະຄັມພີເທົ່ານັ້ນທີ່ມີສິດທິອຳນາດເດັດຂາດໃນການສິດສອນມະນຸດໂລກ  ຄຳສອນແລະຄວາມເຊື່ອອັນເດັດຂາດຂອງທ່ານສວິງລີ່ ໄດ້ເຮັດໃຫ້ລູກສິດຂອງທ່ານເກີດຄວາມຮຸນແຮງຂຶ້ນ ໄດ້ເຂົ້າທຳລາຍຮູບປັ້ນຕ່າງ ໆ ໃນຄຣິສຈັກຄາທໍລິກ  ຊຶ່ງເປັນການກະທຳທີ່ບໍ່ຖືກຕ້ອງ  ທ່ານສວິງລີໄດ້ປ່ຽນການນະມັສການໃນຄຣິສຈັກຂອງທ່ານ  ໃຫ້ມີພິທີແບບງ່າຍ ໆ ແລະຮ້ອງເພັງສັລເສີນພຣະເຈົ້າຈາກຈິດໃຈໂດຍບໍ່ຍອມໃຫ້ມີເຄື່ອງດົນຕີໃດ ໆ ທັ້ງສິ້ນ  ທ່ານສວິງລີ່ໄດ້ສິ້ນຊີພໃນປີ 1531 ທີ່ຄາເປົລໃນການເສິກຣະຫວ່າງພວກຄາທໍລິກແລະພວກໂປເຕັສເຕນ

**ທ່ານຈອນ ຄາລວິນ** (John Calvin 1509-1564)

ທ່ານເກີດທີ່ເມືອງນັງຍອງ (Noyon) ປະເທດຝຣັ່ງເສດ ຈົບການສຶກສາສນະສາດຈາກ ປາຣີສ (Paris) ອໍລຽນ (Orleans) ແລະເບີເຍ (Bourges)  ໃນປີ 1528 ທ່ານຖືກຮ້ອງວ່າ ເປັນນັກສາສນາສາດຜູ້ສຳຄັນທີ່ສຸດ ເທົ່າກັນກັບທ່ານອໍກັສຕິນ ຫລັກຂໍ້ເຊື່ອແລະຄຳສອນຂອງທ່ານຄາລວິນໄດ້ຮັບການຍອມຮັບ  ແລະນຳເອົາໄປປະຕິຮູບຄຣິສຈັກໃນປະເທດສວິສເຊີແລນ ຝຣັ່ງເສດ ເນເທີແລນ ອັງກິດຈົນເຖິງອະເມຣິກາເຫນືອ  ຄຣິສຈັກຕ່າງ ໆ ທົ່ວໂລກໄດ້ຖືກກໍ່ຕັ້ງຂຶ້ນໃຫມ່ ໂດຍນຳເອົາຫລັກຄຳສອນຂອງທ່ານຄາລວິນມາເປັນແບບຢ່າງແລະຖືເປັນແນວປະຕິບັດ

ຄ.ສ. 1534 ທ່ານຖືກຈັບຕິດຄຸກໃນຝຣັ່ງເສດ ແຕ່ໃນ ຄ.ສ. 1535 ທ່ານຫນີຈາກຝຣັ່ງເສດໄປລີ້ຕົວທີ່ກຸງບເຊີລ (Basle) ໃນສວິສເຊີແລນ  ແລະໄດ້ຂຽນປຶ້ມບົດຮຽນພຣະຄັມພີ ເພື່ອໃຊ້ສອນໃຫ້ແກ່ນັກສຶກສາພຣະຄັມພີໂປເຕັສເຕນ ຄືກັນກັບໂຮງຮຽນພຣະຄຣິສທັມລາວຂອງເຮົາໃນປັດຈຸບັນ ອັນເປັນ  **ສະຖາບັນສຶກສາສາສນາຄຣິສຕຽນ** (Institutes of the Christian Religion) ພາຍຫລັງທ່ານຄາລວິນໄດ້ຮັບເຊີນໃຫ້ໄປຈັດຕັ້ງຄຣິສຈັກປະຕິຮູບໃນກຸງເຈນີວາ (Geneva) ທ່ານໄດ້ຍຶດຖືພຣະທັມເອເຟໂຊ 4:11 ທີ່ກ່າວວ່າ "ຂອງພຣະຣາຊທານຂອງພຣະອົງ ກໍຄືໃຫ້ລາງຄົນເປັນອັຄສາວົກລາງຄົນເປັນຜູ້ປະກາດພຣະທັມ  ລາງຄົນເປັນຜູ້ປະກາດຂ່າວປະເສີດ  ລາງຄົນເປັນສິດຍາພິບານແລະ

ອາຈານ" ໂດຍຖືເປັນຫລັກໃນການຈັດຕັ້ງຄຣິສຈັກ ຈົນກະທັ່ງຄຣິສຈັກແຫ່ງກຸງເຈນີວາໄດ້ເປັນທີ່ຮູ້ຈັກ ແລະຖືກນຳໄປເປັນແບບຢ່າງແກ່ຄຣິສຈັກທັງຫລາຍທົ່ວໂລກ ໂຮງຮຽນສາສນາສາດທີ່ທ່ານໄດ້ຕັ້ງຂຶ້ນເປັນ ປະໂຍດຕໍ່ການສິດສອນສິດຍາພິບາລຈາກ ຝຣັ່ງເສດ ສະກັອດແລນ ອັງກິດ ເນເທີແລນ ແລະປະເທດທາງ ຕາວັນອອກຂອງຢູໂຣບ ໃນທີ່ສຸດໂຮງຮຽນນີ້ໄດ້ກາຍເປັນມະຫາວິທຍາລັຍແຫ່ງກຸງເຈນີວາ ໂດຍເຫດທີ່ ມີຜູ້ສືບຕໍ່ທີ່ດີທີ່ເຮັດໃຫ້ໂຮງຮຽນເກີດຄວາມກ້າວໜ້າໄປ

ຄຳສອນຂອງທ່ານຄາລວິນ ມີສ່ວນຄືກັນກັບທ່ານມາຕິນ ລູເຕີ ຄນະຂອງທ່ານລູເຕີໄດ້ທຳການເຜີຍ ແຜ່ຂ່າວປະເສີດ ເພາະມີຄວາມເຊື່ອວ່າຜູ້ທີ່ເປັນຄຣິສຕຽນຕ້ອງມີຄວາມເຊື່ອ ມີຄວາມເຂົ້າໃຈໃນຂ່າວ ປະເສີດແຫ່ງຄວາມຣອດພົ້ນ (Gospel) ແລະມີຄວາມຮັກແພງຂອງພຣະເຈົ້າ ແລະຈຳເປັນຕ້ອງດຳ ເນີນຊີວິດໃຫ້ເກີດໝາກຜົນແຫ່ງຄວາມເຊື່ອດ້ວຍ (ຄືນຳຜູ້ອື່ນມາຮັບເຊື່ອ) ຫາກແຕ່ວ່າທ່ານຈອນ ຄາລ ວິນ ໄດ້ສອນເພີ່ມເຕີມອີກວ່າ ຜູ້ເຊື່ອສົມຄວນຮັບການປ່ຽນແປງ ຊີວິດແລະເກີດການກັບໃຈໃໝ່ ຕ້ອງ ດຳເນີນຊີວິດແບບຄຣິສຕຽນທັງໃນຄຣິສຈັກແລະໃນສັງຄົມດ້ວຍຄືກັນ

ທ່ານຈອນ ຄາລວິນເປັນນັກຂຽນໜັງສືຕຳຣາສາສນາສາດ ໂດຍຍົກເອົາພຣະຄັມພີເປັນພື້ນຖານ ແຫ່ງຄຳສອນທັງມວລ ຕົວຢ່າງໜັງສືຕຳຣາຄື

1. ພຣະເຈົ້າຜູ້ຊົງສ້າງ (God the Creator)
2. ພຣະຄຣິສຜູ້ໂຜດໃຫ້ພົ້ນ (Christ the Redeemer)
3. ພຣະວິນຍານບໍຣິສຸດແລະຊີວິດຄຣິສຕຽນ (The Holy Spirit and the Christian Life)
4. ຄຣິສຈັກ (The Church)

**ຄຳສິດສອນຂອງທ່ານຈອນ ຄາລວິນໃນເຣື່ອງ ຄຣິສຈັກ** (Church)

ຕາມທີ່ທ່ານມາຕິນ ລູເຕີໄດ້ເຄີຍສອນວ່າ ຄຣິສຈັກປະກອບດ້ວຍຜູ້ເຊື່ອທີ່ແທ້ຈິງ ມາເຕົ້າຮ່ວມກັນ (ແຕ່ວ່າພຣະເຈົ້າເທົ່ານັ້ນທີ່ຮູ້ຈັກວ່າໃຜແມ່ນຜູ້ເຊື່ອແທ້) ຄຣິສຈັກທີ່ເບິ່ງເຫັນດ້ວຍຕານັ້ນມີຕຶກອາຄານ ແລະມີສະມາຊິກມາຟັງ ມາອ່ານພຣະຄັມພີແລະມີການເທສນາພຣະຄຳຂອງພຣະເຈົ້າ ມີການສລອງແລະ ຖືສິລ ຄຣິສຈັກແທ້ຕ້ອງຖືກປົກຄອງໂດຍພຣະຄຣິສບໍ່ແມ່ນໂດຍມະນຸດ ທ່ານຈອນ ຄາລວິນໄດ້ສອນເຕີມ ວ່າ ຄຣິສຈັກເປັນສະຖາບັນສຳລັບສຶກສາພຣະຄຳພຣະເຈົ້າ ຜູ້ເຊື່ອໄດ້ຖືກເອີ້ນມາໃຫ້ກັບໃຈໃໝ່ ປ່ຽນ ແປງຊີວິດ ແລະດຳເນີນຊີວິດໃຫ້ສົມກັບການເປັນຄຣິສຕຽນ ດັ່ງນັ້ນຄຣິສຈັກທີ່ເບິ່ງເຫັນດ້ວຍຕານີ້ ຈຶ່ງມີ ຄວາມສຳຄັນຫລາຍ ເປັນຕົວແທນຂອງພຣະເຈົ້າໃຫ້ຜູ້ທີ່ບໍ່ເຊື່ອໄດ້ເບິ່ງເຫັນ ດັ່ງນັ້ນຄຣິສຈັກຈຳເປັນຕ້ອງ ມີການຈັດຕັ້ງຣະບຽບ ຣະບົບອົບຣົມສິດສອນຕາມພຣະຄັມພີໃໝ່ ຄຣິສຈັກທ້ອງຖິ່ນສົມຄວນມີສິດປົກຄອງ ຕົນເອງໂດຍການເລືອກຕັ້ງເຈົ້າໜ້າທີ່ຂອງຄຣິສຈັກທີ່ເປັນຜູ້ສັດຊື່ ເຊື່ອຟັງ ແລະດຳເນີນຊີວິດຄຣິສຕຽນ ໃຫ້ຖືກຕ້ອງທຸກມື້ບໍ່ຂາດ

**ພິທີຣະລຶກເຖິງພຣະເຢຊູ** (The Lord's Supper)

ມີຜູ້ເອີ້ນພິທີນີ້ໄປຕາມຫລັກຄວາມເຊື່ອຂອງແຕ່ລະນິກາຍ ຕົວຢ່າງທີ່ເອີ້ນວ່າ ພິທີຣະລຶກ ພິທີມະຫາ

ສນິທ ການລ້ຽງເທື່ອສຸດທ້າຍຂອງພຣະຄຣິສ ພິທີນີ້ຖືກເອີ້ນໃນລັກສນະທີ່ຕ່າງ ໆ ກັນ ຕາມແຕ່ຄວາມເຊື່ອຂອງແຕ່ລະຝ່າຍ ຊຶ່ງບໍ່ສາມາດຕົກລົງກັນໄດ້ ດັ່ງນັ້ນໃນປີ ຄ.ສ. 1529 ຜູ້ແທນຈາກຄຣິສຈັກຫລາຍ ໆ ຝ່າຍໄດ້ເຂົ້າປະຊຸມເພື່ອຫາຂໍ້ສລູປກ່ຽວກັບຄວາມເຊື່ອ ແລະແນວປະຕິບັດຂອງຄຣິສຈັກ ໃນທີ່ສຸດທີ່ປະຊຸມສາມາດຕົກລົງຮ່ວມກັນໄດ້ 14 ປະການທີ່ກ່ຽວຂ້ອງ ແຕ່ປະການທີ່ 15 ນັ້ນຕົກລົງບໍ່ໄດ້ ແມ່ນເຣື້ອງພິທີຣະລຶກຫລືການລ້ຽງເທື່ອສຸດທ້າຍຂອງພຣະຄຣິສ ໂດຍທີ່ແຕ່ລະຝ່າຍມີຄວາມເຊື່ອແຕກຕ່າງກັນດັ່ງນີ້

1. ຄຣິສຈັກຝ່າຍໂຣມັນຄາທໍລິກຍັງຄົງຮັກສາຄວາມເຊື່ອເດີມເຣື່ອງ "ການແປງສາຣຂອງເຂົ້າຈີ່ແລະນ້ຳລະແຊງ" (Transubstantiation) ວ່າຫລັງຈາກທີ່ນັກບວກເຮັດພິທີເສກມົນແລ້ວ ເຂົ້າຈີ່ແປງເປັນພຣະກາຍຂອງພຣະເຢຊູ ແລະນ້ຳລະແຊງແປງເປັນພຣະໂລຫິດແທ້ ໆ ຂອງພຣະເຢຊູ (ເຖິງວ່າຍັງເຫັນເປັນເຂົ້າຈີ່ແລະນ້ຳລະແຊງຢູ່ຄືເກົ່າ)

2. ທ່ານລູເຕີ (ຄຣິສຈັກລູເຕີແລນ) ເຊື່ອວ່າເຂົ້າຈີ່ແລະນ້ຳລະແຊງເປັນພຣະກາຍແລະພຣະໂລຫິດຢູ່ແລ້ວບໍ່ຕ້ອງເສກ ເພາະວ່າ ພຣະວິນຍານຂອງພຣະຄຣິສໄດ້ຊົງສຖິດຢູ່ໃນເຂົ້າຈີ່ ແລະນ້ຳລະແຊງຢູ່ແລ້ວພຣະຄຣິສຕັດວ່າ ນີ້ຄືກາຍຂອງເຮົາ ນີ້ຄືໂລຫິດຂອງເຮົາ

3. ທ່ານຄາລວິນ ສອນວ່າພຣະຄຣິສຊົງປາກົດຮ່າງເປັນຈິງຕໍ່ຜູ້ທີ່ມີຄວາມເຊື່ອ ເຂົ້າຈີ່ແລະນ້ຳລະແຊງຈະເປັນພຣະກາຍແລະພຣະໂລຫິດແທ້ໃນເມື່ອຜູ້ນັ້ນຮັບເອົາໂດຍທາງຄວາມເຊື່ອ ແລະໂດຍທາງຈິດວິນຍານ

4. ທ່ານສວິງລີ່ແລະຄນະອື່ນ ໆ ເຊື່ອວ່າ ການຮັບເຂົ້າຈີ່ແລະນ້ຳລະແຊງເປັນການຣະລຶກເຖິງການຕາຍໄຖ່ບາປຂອງພຣະຄຣິສ ເປັນໂອກາສທີ່ຈະປະກາດຄວາມເຊື່ອ ແລະສແດງເຖິງການອຸທິດຖວາຍຕົວຂອງຜູ້ເຊື່ອ

**ທ່ານຈອນຄາລວິນໄດ້ແຈ້ງເຖິງຈຸດມຸ່ງໝາຍຂອງການປະຕິຮູບຄຣິສຈັກ**

ໃນປີ ຄ.ສ. 1539 ທ່ານຄາລວິນໄດ້ຖືກເນຣະເທດອອກຈາກກຸງເຈນີວາ ປະເທດສວິສເຊີແລນດ໌ ໃນເວລານັ້ນເອງພຣະຜູ້ໃຫຍ່ຝ່າຍຄຣິສຈັກຄາທໍລິກ ໄດ້ຂຽນຈົດໝາຍຊັກນຳໃຫ້ຄຣິສຈັກໃນກຸງເຈນີວາຫັນຄືນມາເປັນຄາທໍລິກຄືເດີມ ດັ່ງນັ້ນຈຶ່ງມີຜູ້ຂໍຮ້ອງໃຫ້ທ່ານຈອນຄາລວິນໃຫ້ກັບຄືນມາ ເພື່ອຈະໄດ້ຕອບຈົດໝາຍຂອງຈາໂຄໂປ ຊາໂດເລໂຕ (Jacopo Sadoleto) ຊຶ່ງເປັນພຣະຜູ້ໃຫຍ່ຂອງຝ່າຍຄາທໍລິກ ທ່ານຈອນຄາລວິນໄດ້ຕອບຈົດໝາຍໂດຍຂຽນເຖິງສາເຫດຂອງຈຸດມຸ່ງໝາຍໃນການປະຕິຮູບຄຣິສຈັກນັ້ນ ບໍ່ແມ່ນເພື່ອຕໍ່ສູ້ຫລືທຳລາຍຄຣິສຈັກຄາທໍລິກ ແຕ່ເພາະເຫດວ່າ ແສງສວ່າງແຫ່ງພຣະຄຳຂອງພຣະເຈົ້າໄດ້ຖືກປິດບັງໄວ້ດົນນານແລ້ວ ບໍ່ໄດ້ຖືກເປີດເຜີຍ ພຣະຄຣິສຖືກເກັບໄວ້ໃນມຸມມືດໂດຍພວກຜູ້ນຳທີ່ບໍ່ມີຄວາມເຊື່ອ ບໍ່ມີຄວາມເຂົ້າໃຈ ຄຣິສຈັກຄາທໍລິກໄດ້ແຕ່ງຄຳສອນແປງໄປຕາມຄວາມຄິດຂອງຕົວເອງ ເຮັດໃຫ້ຄຣິສຈັກເສື່ອມໄປໃນດ້ານຄວາມເຊື່ອ ເຮັດໃຫ້ຂ່າວປະເສີດຂອງພຣະຄຣິສໄດ້ຖືກປະຖິ້ມໄປ ດັ່ງນັ້ນຄວາມມຸ່ງໝາຍຂອງການປະຕິຮູບຄຣິສຈັກ ກໍເພື່ອຕ້ອງການສະຖາປານາຄຣິສຈັກໃນຮູບແບບທີ່ຖືກຕ້ອງຕາມພຣະຄຳຂອງພຣະເຈົ້າ ໃຫ້ຄຣິສຈັກກັບຄືນສູ່ຄວາມເຊື່ອຕາມຢ່າງອັຄສາວົກທີ່ໄດ້ເປັນແບບຢ່າງໄວ້ ຄວາມຈິງແລ້ວຄຣິສຈັກຄາທໍລິກນັ້ນເປັນຄຣິສຕຽນ ແລະເປັນຂອງພຣະຄຣິສ ແຕ່ວ່າຈຳເປັນທີ່ຄຣິສຈັກຄາທໍລິກຕ້ອງຮັບການປ່ຽນແປງແກ້ໄຂໃຫ້ຖືກຕ້ອງຕາມພຣະຄຳຂອງພຣະເຈົ້າ ບໍ່ແມ່ນຕາມຄວາມຄິດຂອງຜູ້ທີ່ນຳພາ

ທ່ານຈອນຄາລວິນ ໄດ້ສິດສອນ ແລະໄດ້ຕໍ່ສູ້ຄັດຄ້ານຄວາມເຊື່ອຜິດ ຕົວຢ່າງ ເຣື້ອງການສາຣະພາບບາບຕໍ່ນັກບວດ (Priest) ເຣື້ອງການອ້ອນວອນຕໍ່ນັກບຸນ (Saint) ແລະຄຳສອນເຣື້ອງໄຟຊຳຣະ ທ່ານຈອນຄາລວິນໄດ້ສິດສອນຕື່ມອີກວ່າ ຄວາມຣອດພົ້ນນັ້ນມີຢູ່ທາງດຽວ ຄື ໂດຍຄວາມເຊື່ອໃນພຣະຄຣິສ ບໍ່ແມ່ນໂດຍການກຣະທຳຂອງເຮົາເອງ ແຕ່ພຣະເຈົ້າເປັນຜູ້ຈັດຕຽມໄວ້ແລ້ວສຳລັບຮູ້ທີ່ມີຄວາມເຊື່ອ (Justification by Faith) ພຣະຄຣິສໄດ້ຕາຍໄຖ່ບາບແລະໂດຍພຣະໂລຫິດຂອງພຣະອົງ ໄດ້ເຮັດໃຫ້ມະນຸດຜູ້ເປັນຄົນບາບທີ່ຫລົງທາງຈາກພຣະເຈົ້າ ໄດ້ຫັນຄືນມາຫາພຣະເຈົ້າແລະຮັບການຊຳຣະບາບ ໄດ້ຮັບການໂຜດໃຫ້ພົ້ນຄືນດີກັບພຣະເຈົ້າ

ຈະເຫັນໄດ້ວ່າຜູ້ນຳການປະຕິຮູບຄຣິສຈັກນັ້ນ ໄດ້ເຮັດການຄັດຄ້ານດ້ວຍເຈຕນາຣົມທີ່ບໍຣິສຸດ ຫາກວ່າຄຣິສຈັກຄາທໍລິກຍອມຮັບຮູ້ ແລະຮັບການປັບປຸງແກ້ໄຂໃຫມ່ໃນຕອນທຳອິດ ກໍຄົງຈະບໍ່ຕ້ອງເກີດການຕໍ່ສູ້ກັນໃຫ້ແຕກແຍກເສັຍຫາຍ ຫລືເກີດການທຳຮ້າຍຊຶ່ງກັນແລະກັນ ບົດຮຽນເຫລົ່ານັ້ນສົມຄວນທີ່ນັກສຶກສາຈະໄດ້ຮຽນຮູ້ເອົາໄວ້ໃຊ້ໃນຊີວິດ ເມື່ອເຮົາເຫັນສິ່ງທີ່ຖືກຕ້ອງສົມຄວນຕ້ອງໄດ້ຮັບການປ່ຽນແປງໃຫມ່ໃຫ້ຖືກຕ້ອງ ເຮົາສົມຄວນຮັບສິ່ງເຫລົ່ານັ້ນໄວ້ພິຈາຣະນາດ້ວຍໃຈທີ່ທ່ຽງທັມ ບໍຣິສຸດ ໂດຍບໍ່ເຫັນແກ່ປໂຍດຂອງຕົນເອງແຕ່ຝ່າຍດຽວ ບາງເທື່ອເຮົາຢ້ານເສັຍເປັຽບຫລືເສັຍກຽດ ເຮັດໃຫ້ເຮົາບໍ່ຍອມຟັງຄວາມກັນ ຊຶ່ງກາຍເປັນເຣື້ອງຂັດຜົນປໂຍດກັນ ແລ້ວກໍ່ໃຫ້ເກີດຄວາມເສັຍຫາຍຫລາຍກວ່າການສ້າງສາໃຫ້ເກີດຄວາມຈະເຣີນແລະຄວາມຖືກຕ້ອງ ຂໍໃຫ້ເຮົາທັງຫລາຍໄດ້ຍອມຟັງຊຶ່ງກັນແລະກັນດ້ວຍຄວາມຮັກ "ເພາະວ່າພຣະບັນຍັດທັງສິ້ນກໍຣວບຣວມເຂົ້າໃນຂໍ້ດຽວ ຄື 'ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ' ແຕ່ວ່າຖ້າເຈົ້າທັງຫລາຍກັດກັນແລະກິນເນື້ອກັນ ຈົ່ງລະວັງ ຢ້ານວ່າຈະພາກັນຈິບຫາຍໄປ" (ຄາລາເຕັຽ 5:14-15)

# ບົດທີ 14

# ການປະຕິຮູບພາຍໃນຄຣິສຈັກໂຣມັນຄາທໍລິກ

(ຄ.ສ. 1520)

ຈົນເຖິງ

# ເສິກສາມສິບປີ

(ຄ.ສ. 1618-1648)

## ນຶ່ງ. ການປະຕິຮູບພາຍໃນຄຣິສຈັກໂຣມັນຄາທໍລິກ

ຄຣິສຈັກໂຣມັນຄາທໍລິກໄດ້ຖືກຕໍ່ຕ້ານຈາກຄຣິສຈັກໂປເທັສເຕນວ່າ ສອນຜິດມາຕັ້ງແຕ່ຕອນຕົ້ນສມັຍກາງ ໂດຍພວກນັກປຣາດ ນັກການສຶກສາແລະນັກເທສຜູ້ມີຄວາມສາມາດ ໄດ້ຄັດຄ້ານແນວປະຕິບັດອັນບໍ່ຖືກຕ້ອງຕາມພຣະຄັມພີຂອງຄຣິສຈັກຄາທໍລິກ ແຕ່ວ່າພວກຄາທໍລິກຍັງບໍ່ທັນຍອມແກ້ໄຂຫລືປ່ຽນແປງຕາມຂໍ້ຄັດຄ້ານ ແຕ່ກັບຫັນໄປຕໍ່ສູ້ຂັບໄລ່ຂ້າແລະທຳລາຍ ເມື່ອພວກໂປເທັສເຕນໄດ້ກໍ່ຕົວເກີດຂຶ້ນເປັນນິກາຍໃໝ່ ແລະແຍກຕົວເອງອອກຈາກຄຣິສຈັກຄາທໍລິກໄປຕັ້ງຄຣິສຈັກຂອງໂປເທັສເຕນເອງ ເຮັດໃຫ້ຄຣິສຈັກຄາທໍລິກຕ້ອງສູນເສັຽສມາຊິກຢ່າງຫລວງຫລາຍ ພ້ອງທັງສູນເສັຽອຳນາດການປົກຄອງໃນປະເທດຕ່າງ ໆ ທົ່ວຢູໂຣປ

ດັ່ງນັ້ນຈຶ່ງເກີດການປະຕິຮູບພາຍໃນຄຣິສຈັກຄາທໍລິກຂຶ້ນ ໃນຣາວ ຄ.ສ. 1520 ຊຶ່ງຮ້ອງກັນວ່າ **ການປະຕິຮູບຊ້ອນ** ໂດຍທີ່ຄຣິສຈັກຄາທໍລິກມີຈຸດມຸ່ງໝາຍທີ່ຈະປ່ຽນແປງຄຣິສຈັກຄາທໍລິກໃຫ້ດີຂຶ້ນ ແລະເພື່ອຕ້ອງການກູ້ເອົາຄຣິສຈັກທີ່ແຍກຕົວອອກໄປນັ້ນໃຫ້ຫັນຄືນມາເປັນຄາທໍລິກອີກ ພວກຜູ້ນຳການປະຕິຮູບພາຍໃນຄຣິສຈັກຄາທໍລິກນີ້ເປັນພວກທີ່ຮັກແລະສັດຊື່ຕໍ່ຄວາມເຊື່ອແບບຄາທໍລິກ ບໍ່ຕ້ອງການແຍກຕົວເປັນແນວອື່ນ ແຕ່ວ່າຕ້ອງການໃຫ້ມີການປ່ຽນແປງ ມີຣະບຽບການ ແລະແນວປະຕິບັດທີ່ຈະເຮັດໃຫ້ຄາທໍລິກມີຄວາມຖືກຕ້ອງຕາມພຣະຄັມພີຫລາຍຂຶ້ນ ແລະເກີດຄວາມກ້າວໜ້າແຜ່ຂຍາຍອອກໄປ ດັ່ງນັ້ນການປະຕິຮູບພາຍໃນຄຣິສຈັກຄາທໍລິກ ຈຶ່ງເລີ້ມຕົ້ນໂດຍໃຫ້ເກີດການການຟື້ນຟູພາຍໃນຄຣິສຈັກ ຊຶ່ງດຳເນີນໄປໂດຍມີການຟື້ນຟູພາຍໃນຄຣິສຈັກ 3 ກລຸ່ມໃຫຽ່ທີ່ມີຊື່ສຽງຄື

1. ກຸ່ມຄາປູຊິນ (Capuchin)
2. ກຸ່ມລູກຍິງຜູ້ມີໃຈເມດຕາ (Daughter of Charity)
3. ກຸ່ມເຢຊູອິດ (Jesuits)

### 1. ກຸ່ມຄາປູຊິນ (Capuchin)

ໃນ ຄ.ສ. 1528 ກຸ່ມຄາປູຊິນນີ້ໄດ້ເຕີບໃຫຽ່ ແລະແຍກຕົວອອກຈາກພວກນັກບວດແຟນຊິສກັນ

ກຸ່ມຄາປູຊິນໄດ້ດຳເນີນຫລັກການຕາມແນວຄຳສອນຂອງພວກນັກບວດແຟນຊິສກັນ ກຸ່ມນີ້ແຕ່ງກາຍເປັນນັກບວດສວມຫມວກມີຍອດແຫລມ ມັກຊ່ວຍເຫລືອຄົນຍາກຈົນ ຄົນເຈັບປ່ວຍ ເບິ່ງແຍງຄາປູຊິນຜູ້ບໍ່ມີອັນຈະກິນ ເມື່ອເກີດໂຣຄຣະບາດ ກຸ່ມນີ້ກໍມັກອອກໄປຊ່ວຍບັນເທົາທຸກ ຮັກສາຄົນປ່ວຍເປັນພຍາດ ເຮັດໃຫ້ປະຊາຊົນເຫັນເຖິງຄຸນງານຄວາມດີຂອງຄຣິສຈັກຄາທໍລິກ ທີ່ມີນັກບວດສົນໃຈຊ່ວຍເຫລືອປະຊາຊົນ ກຸ່ມຄາປູຊິນນີ້ມີອາສາສະມັກອອກໄປເປັນຜູ້ປະກາດໃນດິນແດນຕ່າງ ໆ ທີ່ເຮົາຮ້ອງກັນວ່າ "ມິຊັ່ນນາຣີ" [Missionary ຊຶ່ງແປວ່າຜູ້ທີ່ເປັນຕົວແທນອອກໄປປ່າວປະກາດທັມມະໃນຕ່າງຖິ່ນ (ທັມມະທູຕ)]

## 2. ກຸ່ມລູກຍິງຜູ້ມີໃຈເມດຕາ (Daughter of Charity)

ກຸ່ມລ່ກຍິງຜູ້ມີໃຈເມດຕານີ້ໄດ້ຕັ້ງຂຶ້ນມາໂດຍ ທ່ານ ວິນເຊນ ເດີ ພອລ (Vincent de Poul) ທ່ານມັກຊ່ວຍຜູ້ຍາກຈົນ ຊ່ວຍພວກທາສແລະຄົນເຈັບ ຕົວທ່ານວິນເຊນເຄີຍເປັນຜູ້ຮັ່ງມີ ວັນນຶ່ງທ່ານໄດ້ແລ່ນເຮືອໃບໃນກາງທະເລ ແລະຖືກປຸ້ນຈາກເຮືອອື່ນ ໆ ສາມລຳຊຶ່ງເປັນຂອງພວກເຕີກີ ພວກໂຈນສລັດໄດ້ຍິງທ່ານ ແລະເອົາລູກເຮືອຂອງທ່ານໄປຫມົດ ທ່ານຕ້ອງຕົກເປັນທາສຂອງພວກໂຈຣສລັດແລະຖືກຂາຍໃນຝຣັ່ງເສດໃຫ້ເປັນທາດຂອງຊາວປະມົງ ຖືກຂາຍຕໍ່ໄປອີກຈົນຮອດມືຊາວຝຣັ່ງເສດຄົນນຶ່ງ ທີ່ເຄີຍເປັນນັກບວດໃນກຸ່ມແຟນຊິສກັນ ເປັນເຫດໃຫ້ທ່ານໄດ້ເລີ້ມຕົ້ນຮັບໃຊ້ພຣະເຈົ້າໃນກຸ່ມແຟນຊິສກັນ ທ່ານໄດ້ຈັດຫາແມ່ຍິງມາຮ່ວມງານກັບທ່ານ ເພື່ອຊ່ວຍເປັນນາງຫມໍຮັກສາຜູ້ເຈັບປ່ວຍຄຣິສຈັກຄາທໍລິກໄດ້ສິ່ງເສີມງານຂອງທ່ານແລະຍົກຍໍທ່ານວິນເຊນ ດີ ພອລໃຫ້ເປັນນັກບຸນ ພວກຍິງສາວເຫລົ່ານັ້ນທີ່ທ່ານເອີ້ອຫາມາຊ່ວຍໄດ້ຮັບໃຊ້ປະຊາຊົນດ້ວຍໃຈເມດຕາ ໂດຍບໍ່ໄດ້ເຂົ້າບວດເປັນນາງຊີ ແຕ່ວ່າແຕ່ງກາຍສະອາດລຽບ ໆ ກິນຢູ່ງ່າຍ ໆ ສລະແຮງງານຂອງຕົນອົດທົນຊ່ວຍເຫລືອຮັກສາພະຍາບາລຜູ້ເຈັບປ່ວຍດ້ວຍຄວາມເມດຕາຫຼາຍທີ່ສຸດ ກຸ່ມນີ້ຈຶ່ງໄດ້ຂຍາຍໃຫຍ່ ແລະຖືກຮ້ອງວ່າ "ລູກຍິງຜູ້ມີໃຈເມດຕາ"

## 3. ກຸ່ມເຢຊູອິດ (Jesuits)

ຄຳວ່າ "ເຢຊູອິດ" ແປວ່າ **ຕາມແບບຢ່າງຂອງພຣະເຢຊູ** ກຸ່ມເຢຊູອິຕເປັນກຸ່ມທີ່ມີບົດບາດຫລາຍທີ່ສຸດໃນການປຽນແປງຄຣິສຈັກຄາທໍລິກ ແລະໄດ້ເຜີຍແຜ່ຄວາມເຊື່ອອອກໄປຢ່າງກວ້າງຂວາງທີ່ສຸດ ກຸ່ມເຢຊູອິຕພະຍາຍາມນຳເອົາຄຣິສຈັກໂປເຕັສຕານທີ່ແຍກຕົວອອກໄປນັ້ນໃຫ້ຫັນຄືນມາເປັນຄຣິສຈັກຄາທໍລິກດັ່ງເດີມອີກ

ຜູ້ກໍ່ຕັ້ງຄນະເຢຊູອິດນີ້ແມ່ນ ທ່ານອິກເນຕີອັສ ລໍຍໍລ່າ (Ignatius Layola) ທ່ານເປັນຊາວສະເປັນ (Spain) ທ່ານຜູ້ນີ້ເຄີຍເປັນນັກຣົບຜູ້ເກັ່ງກ້າສາມາດ ແຕ່ຕ້ອງອອກຈາກທະຫານເພາະຖືກຍິງເສັຽຂາ ແລະຜ່າຕັດເຮັດໃຫ້ຂາຂ້າງນຶ່ງສັ້ນກວ່າອີກຂ້າງນຶ່ງ ໃນເວລາທີ່ທ່ານລໍຍໍລ່າກຳລັງຮັກສາຕົວຢູ່ ທ່ານໄດ້ຕັດສິນໃຈວ່າ ຈະເປັນທະຫານອັນສັດຊື່ຕໍ່ພຣະແມ່ມາເຣັຽ ເມື່ອທ່ານລໍຍໍລ່າອອກຈາກການເປັນທະຫານແລ້ວ ທ່ານໄດ້ເຂົ້າຮຽນຫນັງສືກັບເດັກນ້ອຍ ໆ ເພາະທ່ານອ່ານຫນັງສືບໍ່ອອກ ທ່ານລໍຍໍລ່າມີຄວາມອົດສາພຍາຍາມຫລາຍທີ່ສຸດ ຈົນກະທັ້ງສາມາດເຂົ້າຮຽນໃນມຫາວິທຍາລັຍ ແລະມີຄວາມຮູ້ພໍຈະເປັນນາຍຄູສອນຜູ້ອື່ນໄດ້ ທ່ານໄດ້ອອກສິດສອນປະຊາຊົນໃຫ້ຮູ້ຈັກໃຊ້ຊີວິດທີ່ດີຂຶ້ນ ແຕ່ຄຣິສຈັກຄາທໍລິກຄິດວ່າທ່ານສອນຜິດຈຶ່ງຈັບເອົາໄປໃສ່ຄຸກ ແຕ່ໄດ້ປ່ອຍຕົວພາຍຫລັງ ເພາະວ່າທ່ານບໍ່ໄດ້ເຮັດຜິດຫຍັງຕໍ່

ຄຣິສຈັກຄາທໍລິກ ທ່ານໄດ້ອອກຈາກປະເທດສະເປັນໄປຝຣັ່ງເສດຈົນຮອດກຸງປາຣີສ ທ່ານໄດ້ສິດສອນສິດຫລາຍຄົນພ້ອມໃຫ້ຄວາມຊ່ວຍເຫລືອ ສິດຄົນນຶ່ງໄດ້ຢືມເງິນຂອງທ່ານແລະຫລົບຫນີໄປ ປີຕໍ່ມາເມື່ອທ່ານຮູ້ວ່າສິດຜູ້ນັ້ນເຈັບຫນັກ ທ່ານຈຶ່ງໄດ້ເດີນທາງໄປຢາມແລະຮັກສາສິດຜູ້ນັ້ນຈົນຫາຍດີ ຄວາມມີນ້ຳໃຈຂອງທ່ານເຮັດໃຫ້ສິດທັງຫລາຍຮັກທ່ານຫລາຍທີ່ສຸດ

ທ່ານອິນເນຕີອັສ ລົຍໍລ່າ ໄດ້ຮ່ວມກັບສິດເກົ້າທ່ານ ກໍ່ຕັ້ງສມາຄົມເຢຊູອິດ (ສມາຄົມຕາມແບບຢ່າງຂອງພຣະເຢຊູ) ມີນັກບວດເຂົ້າຮ່ວມຈົນກາຍເປັນກຸ່ມທີ່ໃຫຍ່ທີ່ສຸດ ທ່ານໄດ້ສິດສອນໃຫ້ລູກສິດຂອງທ່ານຮູ້ຈັກການອ້ອນວອນພິຈາຣະນາເຖິງຕົນເອງ ແລ້ວໃຫ້ເອົາສິ່ງທີ່ຄິດໄດ້ນັ້ນອອກມາປະຕິບັດຢ່າງສຸດໃຈສຸດກຳລັງຄວາມສາມາດເພື່ອເປັນການຮັບໃຊ້ພຣະເຈົ້າ ການປະຕິບັດແລະການເຜີຍແຜ່ຂອງພວກເຢຊູອິດເກີດຜົນຫລາຍທີ່ສຸດ ພວກນັກບວດເຢຊູອິດຕ້ອງເຂົ້າຮັບການອົບຮົມຢ່າງນ້ອຍປີລະເທື່ອ ຊຶ່ງໃຊ້ເວລາຮັບການອົບຮົມພິຈາຣະນາຕົນເອງນານເຖິງສາມສິບວັນ ສັນຕະປາປາໄດ້ຮັບຮອງກຸ່ມເຢຊູອິດຢ່າງເປັນທາງການໃນ ຄ.ສ. 1540 ແລະໄດ້ໃຫ້ການສນັບສນຸນເປັນຢ່າງດີ ເຮັດໃຫ້ກຸ່ມນີ້ມີຊື່ສຽງແລະກ້າວຫນ້າແຜ່ໄປຫລາຍບ່ອນຫລາຍປະເທດ ຕົວຢ່າງ ອໍສເຕັຣຽ (Austia) ໂບເຮມເມັຽ ຮັງກາຣີ ເຢັຽຣະມັນຕອນໃຕ້ ແລະໂປແລນ ຜົນງານຂອງກຸ່ມເຢຊູອິດໄດ້ກໍ່ໃຫ້ເກີດໂຮງຮຽນອົບຮົມນາຍຄູ (Teacher Training Institution) ທີ່ມີມາຕຖານໃນການສອນໃນການອົບຮົມແລະມີຫລັກການດຳເນີນງານທີ່ຫນ້ານັບຖືທີ່ສຸດ ກຸ່ມເຢຊູອິດໄດ້ອອກໄປເຮັດການດີ ໄປເປັນມິຊຊັ່ນນາຣີປະກາດຂ່າວແກ່ຄົນທົ່ວໂລກ ໄດ້ໄປຮອດປະເທດຈີນ ແລະອິນເດັຽ ທ່ານອິນເນຕີອັສ ລົຍໍລ່າໄດ້ສິ້ນຊີພ ໃນປີ ຄ.ສ. 1556 ແລະໄດ້ຮັບສະຖາປະນາເປັນນັກບຸນ (Saint) ຂອງຄຣິສຈັກຄາທໍລິກ ໃນປີ ຄ.ສ. 1622

ໃນເມື່ອເຮົາໄດ້ກ່າວເຖິງ ກຸ່ມເຢຊູອິດ ເຮົາຈຳເປັນຕ້ອງໄດ້ກ່າວເຖິງອີກທ່ານນຶ່ງ ຊຶ່ງເປັນອີກຜູ້ນຶ່ງທີ່ມີຄວາມສຳຄັນຫລາຍທີ່ສຸດໃນການຂຍາຍງານດ້ານການປະກາດຂ່າວປະເສີດຂອງພຣະເຢຊູຄຣິສ ຜູ້ທີ່ມີຄວາມສຳຄັນຜູ້ນີ້ແມ່ນ **ແຟຣນຊິສ ເອສຊາເວັຽ** (Francis Xavier ຄ.ສ. 1506-1552)

ທ່ານເປັນຜູ້ນຳສຳຄັນໃນກຸ່ມເຢຊູອິດ ເປັນຜູ້ວາງຣະບຽບການແລະແຜນງານສົ່ງມິຊຊັ່ນນາຣີອອກໄປທົ່ວໂລກ ພວກມິຊຊັ່ນນາຣີເດີນທາງໄປເຜີຍແຜ່ຂ່າວປະເສີດແລະຂຍາຍຄຣິສຈັກຄາທໍລິກອອກໄປຢ່າງກ້ວາງຂວາງໃນປະເທດຕ່າງ ໆ ທາງຕາເວັນອອກໄກ ຕົວຢ່າງ ປຣະເທດຈີນ ອິນເດັຽ ເກາະລັງກາ ແລະຍີ່ປຸ່ນ ແຜນງານຂອງທ່ານເກີດຜົນຢ່າງຫລວງຫລາຍຈົນຮອດປັດຈຸບັນ ຊີວິດຂອງທ່ານແຟຣນຊິສ ເອສຊາເວັຽ ໄດ້ເປັນແບບຢ່າງແກ່ມິຊຊັ່ນນາຣີທັງຫລາຍ ທ່ານມີຄວາມຖ່ອມໃຈ ທ່ານມີໃຈກວ້າງຂວາງ ບໍ່ຢ້ານລົ້ມ ແຕ່ມັກສົ່ງເສີມໃຫ້ກຳລັງໃຈແກ່ຜູ້ທີ່ບຸກເບີກງານໃຫມ່ ເຖິງແມ່ນວ່າທ່ານຈະເປັນຄາທໍລິກ ແຕ່ວ່າຄຣິສຈັກໂປເຕັສເຕນໄດ້ໃຫ້ການຍົກຍ້ອງນັບຖືທ່ານດ້ວຍ ແລະຮຽນເອົາແບບຢ່າງການດຳເນີນງານດ້ານການເຜີຍແຜ່ຈາກທ່ານ

## <u>ການປະຊຸມສະພາຄຣິສຈັກຄາທໍລິກ ທີ່ເມືອງເທັຣນ (Trent) ໃນ ຄ.ສ. 1545</u>

ໃນສມັຍກ່ອນການປະຕິຮູບຄຣິສຈັກນັ້ນ ພວກສັນຕະປາປາໄດ້ພຍາຍາມຂັດຂວາງບໍ່ຍອມໃຫ້ມີການປະຊຸມສະພາຄຣິສຈັກ ເພາະຢ້ານວ່າສະພາຄຣິສຈັກຈະແຍ່ງເອົາອຳນາດໄປ ແລະສັນຕະປາປາຈະສູນ

ເສັຽອຳນາດການປົກຄອງ ແຕ່ວ່າເມື່ອໄດ້ມີການປະຕິຮູບຄຣິສຈັກເກີດຂຶ້ນແລ້ວ ພວກໂປເຕັສຕານໄດ້ແຍກຕົວອອກໄປ ເຮັດໃຫ້ຄຣິສຈັກຄາທໍລິກຕື່ນຕົວທີ່ຈະຕ້ອງມີການປຣັບປຸງແກ້ໄຂ ແລະນຳພາໃຫ້ເກີດຄວາມເປັນອັນນຶ່ງອັນດຽວກັນ ຈຶ່ງຈັດໃຫ້ມີການປະຊຸມສພາຄຣິສຈັກຄາທໍລິກ ເພື່ອຕົກລົງກັນໃນເຣື່ອງຫລັກຄວາມເຊື່ອ ແລະແນວປະຕິບັດ ຮວມທັງພິທີການນມັສການໃຫ້ຊັດແຈ້ງຂຶ້ນ ເພື່ອເອົາໄວ້ເປັນພື້ນຖານເພື່ອໃຊ້ໃນການປະຕິບັດຮ່ວມກັນຂອງຄຣິສຈັກຄາທໍລິກຕໍ່ໄປ

ສັນຕະປາປາ ພອລທີ່ 3 (Paul III) ໄດ້ຮຽກປະຊຸມສະພາສັງຄະຣາດ ເຈົ້າຄະນະແຂວງເຈົ້າອະທິການຫລືເຈົ້າອາວາສທີ່ເມືອງເທັຣນ ໃກ້ກັບເທືອກພູແອລ (Alps) ປະເທດອີຕາລີ ການປະຊຸມນີ້ມີຂຶ້ນຫລາຍເທື່ອ ຕັ້ງແຕ່ ຄ.ສ. 1545 ຮອດ 1563 ອັນເປັນເວລາເກືອບ 20 ປີ ໂດຍມີຈຸດປະສົງເພື່ອປ່ຽນແປງແກ້ໄຂຄຣິສຈັກຄາທໍລິກໃຫ້ຖືກຕ້ອງ ອີກທັງມີຄວາມຫວັງວ່າຈະໄດ້ນຳເອົາຄຣິສຈັກໂປເຕັສຕານກັບຄືນມາຮ່ວມກັບຄຣິສຈັກຄາທໍລິກອີກ ຢ່າງໃດກໍຕາມຄວາມພຍາຍາມຂອງສະພາບໍ່ສາມາດນຳພາໃຫ້ຄຣິສຈັກໂປເຕັສຕານຫັນກັບຄືນມາຮ່ວມກັນໄດ້ ແຕ່ວ່າການປະຊຸມຂອງສະພານີ້ໄດ້ນຳໃຫ້ຄຣິສຈັກຄາທໍລິກເກີດການຕົກລົງຫລາຍຂໍ້ດັ່ງນີ້

1. ທີ່ປະຊຸມໄດ້ລົງມັດຕິ ປະກາດໃຫ້ຄຣິສຈັກຄາທໍລິກໃຊ້ພຣະຄັມພີສະບັບພາສາລາຕິນໂວລເກດ (Valgate ເບິ່ງບົດທີ່ 5 ໜ້າ 34) ແລະຮວມເອົາໜັງສືອະພັກຄຣິຟາ (Apocrypha ຫລືທີ່ຮ້ອງວ່າ "ໜັງສືຫລັກລອຍ") ເຂົ້າຢູ່ໃນພຣະຄັມພີ ໃຫ້ເປັນມາດຕາຖານແຫ່ງພຣະຄຳຂອງພຣະເຈົ້າ ຊຶ່ງໂປເຕັສຕານບໍ່ຍອມຮັບເອົາໜັງສືຫລັກລອຍເຂົ້າຢູ່ໃນເປັ້ມພຣະຄັມພີ
2. ການແປຄວາມໝາຍຂອງພຣະຄັມພີຕ້ອງໄດ້ຮັບການຮັບຮອງຈາກຄຣິສຈັກແຫ່ງກຸງໂຣມ
3. ຮັບຮອງການຖືສິລວ່າມີ 7 ປະການຕາມເດີມ
4. ພິທີມິຊຊາ (Mass) ເປັນການຖວາຍບູຊາໄຖ່ບາບແລະສາມາດຊ່ວຍວິນຍານຂອງຜູ້ຕາຍໄດ້
5. ຮັບຮອງເຣື້ອງການແປສານ (Transubstantiation) ຂອງນ້ຳລະແຊງແລະເຂົ້າຈີ່ວ່າ ເຂົ້າຈີ່ໄດ້ແປງເປັນພຣະກາຍແທ້ ແລະນ້ຳລະແຊງໄດ້ແປງເປັນເລືອດແທ້
6. ຄວາມຣອດພົ້ນນັ້ນຕ້ອງກະທຳຮ່ວມກັນ ຄືພຣະເຈົ້າໄດ້ປະທານພຣະຄຸນຄວາມພົ້ນ ຮ່ວມກັບຄຸນຄວາມດີຂອງຕົວເຮົາທີ່ໄດ້ຖືຮັກສາສິລ
7. ຄວາມບາບຖືກຍົກໄດ້ໂດຍສິລສາຣະພາບຕໍ່ນັກບວດ (Sacrament of Penance)
8. ຜູ້ທີ່ເປັນຄາທໍລິກຍັງຄົງອ້ອນວອນຕໍ່ພຣະແມ່ມາເຣັຽດັ່ງເດີມ

ການປະຊຸມສະພາຄຣິສຈັກຄາທໍລິກທີ່ເມືອງເທັຣນນີ້ ໄດ້ຈັດໃຫ້ມີຫລາຍ ໆ ເທື່ອໃນທຸກ ໆ 6 ປີ ເຖິງແມ່ນວ່າຄຣິສຈັກຄາທໍລິກຈະພຍາຍາມຢ່າງຫລວງຫລາຍ ໃນການແກ້ໄຂຄວາມເຊື່ອໃໝ່ໃຫ້ດີຂຶ້ນ ແຕ່ປານນັ້ນກໍຍັງບໍ່ສາມາດນຳມາເຖິງການປ່ຽນແປງຢ່າງເດັດຂາດ ບໍ່ຄືກັນກັບຄຣິສຈັກໂປເຕັສຕານ ຄຣິສຈັກຄາທໍລິກຍັງຄົງຖືຮັກສາປະເພນີແລະຮີດຄອງທີ່ບໍ່ໄດ້ສອນໄວ້ໃນພຣະຄັມພີ ຢ່າງໃດກໍຕາມການປະຊຸມຂອງສະພາບໍ່ສາມາດນຳມາເຖິງຄວາມຈິງແຫ່ງພຣະຄຳຂອງພຣະເຈົ້າຢ່າງແທ້ຈິງ ແຕ່ກໍໄດ້ເຮັດໃຫ້ຄຣິສຈັກຄາທໍລິກຮັບການຟື້ນຟູເຂັ້ມແຂງຫລາຍຂຶ້ນ ໄດ້ສ້າງຄຸນຄວາມດີແກ່ຄົນທົ່ວໂລກ ໃນດ້ານຄວາມເຊື່ອໃນອົງພຣະຜູ້ເປັນເຈົ້າຕາມແບບການປະກາດຂ່າວປະເສີດຂອງຊາວຄາທໍລິກ ຊຶ່ງໄດ້ແຜ່ຂຍາຍອອກໄປຢ່າງກວ້າງຂວາງຈົນຮອດປັດຈຸບັນນີ້



5.4 'The Council of Trent was actually in session for parts of six years' (p. 74).
It was held on 'neutral' ground in the Church of Santa Maria Maggiore at Trento in the Italian Alps.

ທີ່ປະຊຸມສະພາຄຣິສຈັກແຫ່ງເມືອງເທຣັນ ໃກ້ເທືອກພູແອລ (Alps) ປະເທດອິດຕາລີ
ມີການປະຊຸມທຸກ ໆ 6 ປີ

## ສອງ. ສັນຍາສງົບເສິກອອກເບີກ (Peace of Augsburg)

ເສິກສົງຄາມຂຶ້ນໃນປະເທດເຢັຽຣະມັນ ເປັນເສິກລະຫວ່າງພວກຄາທໍລິກກັບໂປເທັສເຕນເປັນເວລານານ ດັ່ງນັ້ນໃນປີ ຄ.ສ. 1555 ໄດ້ມີສັນຍາສງົບເສິກອອສເບີກ (Peace of Augsburg) ອັນເປັນສັນຍາທີ່ເຮັດຂຶ້ນລະຫວ່າງເຈົ້າຜູ້ຄອງແຄວ້ນທັງຫລາຍໃນເຢັຽຣະມັນ ເປັນຂໍ້ຕົກລົງເພື່ອສງົບເສິກລະຫວ່າງພວກຄາທໍລິກກັບພວກໂປເທັສເຕນ ໂດຍມີຫລັກການວ່າ ເຈົ້າຜູ້ຄອງແຄວ້ນຕ່າງ ໆ ມີສິດທີ່ຈະເລືອກນັບຖືສາສນາຄຣິສນິກາຍໂຣມັນຄາທໍລິກ ຫລືນິກາຍໂປເທັສເຕນ ຄື ກຸ່ມລູເທີແລນ ທີ່ໄດ້ຮັບການຮັບຮອງຈາກເຢັຽຣະມັນແລະຈາກກຸງໂຣມ ມີຂໍ້ຕົກລົງໃນສັນຍານີ້ວ່າ ຫາກປະຊາຊົນຜູ້ໃດນັບຖືສາສນາຄຣິສນິກາຍ ທີ່ແຕກຕ່າງໄປຈາກເຈົ້າຜູ້ປົກຄອງແຄວ້ນ ຜູ້ນັ້ນຕ້ອງຍ້າຍໄປຢູ່ນຳໃນແຄວ້ນອື່ນ ທີ່ມີເຈົ້າຜູ້ປົກຄອງທີ່ນັບຖືນິກາຍແນວດຽວກັນກັບຕົນ ຕົວຢ່າງ ປະຊາຊົນທີ່ເປັນໂປເທັສເຕນຕ້ອງຍ້າຍອອກຈາກເມືອງຂອງເຈົ້າຜູ້ຄອງແຄ້ວນທີ່ນັບຖືນິກາຍຄາທໍລິກ ແລ້ວເຂົ້າໄປຢູ່ນຳແຄວ້ນຂອງເຈົ້າຜູ້ຄອງ ທີ່ນັບຖືສາສນາຄຣິສນິກາຍໂປເທັສເຕນທີ່ຄືກັນກັບຕົນນັບຖື ໃນລັກສນະດຽວກັນ ຫາກເຈົ້າຜູ້ຄອງແຄວ້ນໃດທີ່ເປັນຄາທໍລິກນັ້ນປ່ຽນໃຈມາເປັນໂປເທັສເຕນ ເຈົ້າຜູ້ຄອງແຄວ້ນນັ້ນຕ້ອງອອກຈາກຕຳແຫນ່ງ ແລະມອບສົມບັດທີ່ດິນຄືນແກ່ຄຣິສຈັກຄາທໍລິກ ຂໍ້ຕົກລົງນີ້ມີຜົນຖືເອົາຕັ້ງແຕ່ ຄ.ສ. 1552 ຫາກຜູ້ໃດມີການປ່ຽນໃຈມາເປັນໂປເທັສເຕນກ່ອນປີ 1552 ກໍມີສິດໃນສົມບັດທີ່ດິນຂອງຕົນ ແຕ່ຫາກຜູ້ໃດປ່ຽນໃຈມາເປັນໂປ

ເທັສເຕນພາຍຫລັງປີ 1552 ກໍຕ້ອງຖືກຍຶດຊັບສົມບັດທີ່ດິນ ສັນຍາສງົບເສິກອອສເບີກໄດ້ມີຜົນບັງຄັບ ແຕ່ກໍບໍ່ໄດ້ຊ່ວຍໃຫ້ມີເສຣີພາບໃນການຖືສາສນາຢ່າງແທ້ຈິງ ແຕ່ກັບເຮັດໃຫ້ເກີດຄວາມແຕກແຍກຫລາຍຂຶ້ນ

<u>ເສິກ 30 ປີ</u> (The Thirty Year's War ຄ.ສ. 1618-1648)

ເສິກ 30 ປີ ໄດ້ເກີດຂຶ້ນໃນປີ ຄ.ສ. 1618 ສາເຫດເນື່ອງຈາກການແຍ່ງຊີງອຳນາດຂອງຄາທໍລິກ ແລະພວກທີ່ຕ້ອງສູນເສັຽສົມບັດທີ່ດິນ ຄືເຈົ້າຜູ້ຄອງແຄວ້ນທີ່ຫັນມາເປັນໂປຣເທັສເຕນ ເສິກ 30 ປີນີ້ໄດ້ເລີ້ມຂຶ້ນ ເມື່ອຜູ້ສືບບັນລັງແຫ່ງຣາຊອານາຈັກໂຣມັນບໍຣິສຸດ (Holy Roman Empire) ຄື ເຟີດີນານແຫ່ງສຕີເຣັຽ (Ferdinan of Styria) ທ່ານເປັນພວກຄາທໍລິກທີ່ຖືຄວາມເຊື່ອຕາມກຸ່ມເຢຊູອິດຢ່າງເຄັ່ງຄັດ ທ່ານໄດ້ຮ່ວມມືກັບກຸ່ມເຢຊູອິດທີ່ມີຄວາມຄິດຣຸນແຮງ ແລະມີອິດທິພົນຫລາຍທີ່ສຸດ ຕໍ່ສູ້ກັບພວກໂປເທັສເຕນ (ເບິ່ງຫນ້າ 24 ຈະເຫັນໄດ້ວ່າ ກຸ່ມເຢຊູອິດທີ່ດີມີຜົນງານຫລາຍທີ່ສຸດ ຊ່ວຍກູ້ໃຫ້ຄາທໍລິກເຂັ້ມແຂງ ໄດ້ນຳເອົາຫລາຍບ່ອນຫລາຍເມືອງກັບຄືນມາເປັນຄາທໍລິກ ແຕ່ວ່າເຈົ້າຜູ້ຄອງແຄວ້ນຕ່າງ ໆ ທີ່ເປັນຄາທໍລິກໄດ້ອາສັຍກຸ່ມເຢຊູອິດ ເພື່ອຜົນປະໂຍດທາງການເມືອງ)

ໃນໂບເຮມເມັຽ (Bohemia) ພວກໂປຣເທັສເຕນໄດ້ຕໍ່ຕ້ານອຳນາດຂອງເຟີດີນານ ໂດຍການກໍ່ຈະຣາຈົລ ໂຍນຜູ້ສຳເຣັດຣາຊການຂອງເຟີດີນນານອອກທາງປ່ອງຢັຽມທີ່ກຸງປຣ້າກ (Prague) ແລະໄດ້ແຕ່ງຕັ້ງເຟດເດີຣິກທີ່ 5 ຊຶ່ງເປັນໂປເທັສເຕນນິກາຍຄາລວິນຂຶ້ນແທນ ທ່ານເຟີເດຣິກຄອງໄດ້ແຕ່ແຄວ້ນດຽວກໍຖືກພວກຄາທໍລິກລົ້ມອຳນາດລົງ ການເສິກຣະຫວ່າງຄາທໍລິກແລະໂປເທັສເຕນໄດ້ເກີດຂຶ້ນເປັນເວລາຍາວນານເຖິງ 30 ປີ ໂດຍອ້າງວ່າມີຈຸດປະສົງເພື່ອການສາສນາ ແຕ່ແທ້ຈິງເປັນເສິກການເມືອງຫລາຍກວ່າ ໂດຍຖືເອົາຄວາມແຕກຕ່າງດ້ານຄວາມເຊື່ອມາເປັນສາເຫດ ແລະຖືຂໍ້ອ້າງເພື່ອການເສິກ ຊຶ່ງມີທັງຫມົດ 4 ຣະຍະດັ່ງນີ້

1. ຄ.ສ. 1618-1623 ເຈົ້າຊີວິດເຟີດີນານທີ່ 2 ແຫ່ງໂບເຮັມເມັຽ ຮ່ວມກັບແມກຊີມິລຽນແຫ່ງບາວາເຣັຽ (Bavaria) ຊຶ່ງເປັນຄາທໍລິກ ຕໍ່ສູ້ກັບເຈົ້າຜູ້ຄອງແຄວ້ນພ້ອມທັງປະຊາຊົນຊາວໂບເຮມເມັຽທີ່ເປັນໂປເທັສເຕນ ຝ່າຍໂປເທັສເຕນໄດ້ຊັຍຊນະຄອງຢູ່ໃນເວລາບໍ່ນານ
2. ຄ.ສ. 1625-1629 ເຈົ້າຊີວິດຄຣິສຕຽນທີ່ 5 (Christian V) ແຫ່ງເດນມາຣ໌ກ ໄດ້ຊ່ວຍເຢັຽຣະມັນເຫນືອ ຊຶ່ງເປັນໂປເທັສເຕນຕໍ່ສູ້ກັບເຈົ້າຊີວິດເຟີດີນານທີ່ 2 ຜົນຄືວ່າ ເຈົ້າເຟີດີນານໄດ້ຊັຍຊນະ ໄດ້ຍຶດເອົາສົມບັດທີ່ດິນ ແລະຂັບໄລ່ພວກໂປຣເທັສແຕນອອກຈາກດິນແດນຂອງເຈົ້າຜູ້ຄອງແຄວ້ນທີ່ເປັນຄາທໍລິກ
3. ຄ.ສ. 1630-1634 ສະວີເດນໄດ້ຍຶດເອົາບອລຕິກ (Baltick) ແລະຊ່ວຍພວກໂປເທັສເຕນຈາກພວກຄາທໍລິກ
4. ຄ.ສ. 1035-1648 ຄາທໍລິກໃນຝຣັ່ງເສດເຂົ້າຮ່ວມກັບໂປຣເທັສເຕນ ໄດ້ຕໍ່ສູ້ກັບເຈົ້າຊີວິດສະເປັນທີ່ເປັນຄາທໍລິກ ເພື່ອຍຶດເອົາດິນແດນຄືນແກ່ຝຣັ່ງເສດ

ເສິກ 30 ປີໄດ້ຈົບລົງ ໂດຍຂໍ້ສັນຍາຕົກລົງສງົບເສິກແຫ່ງວເສຟາເລັຽ (Westphalia) ໄດ້ທຳການແບ່ງເຂດດິນແດນຂອງໂຣມັນຄາທໍລິກແລະໂປເທັສເຕນ ໄດ້ນຳໃຫ້ປະເທດຮອລແລນ ແລະ

ສະວິສເຊີແລນສາມາດເປັນໂປເທັສຕານຢ່າງອິສຣະ ຝຣັ່ງເສດ ສະວີເດນ ໄດ້ຍຶດດິນແດນສຳຄັນຄືນມາ ຝຣັ່ງເສດມີອຳນາດຫລາຍຂຶ້ນໃນຢູໂຣປ ຫລັກຄວາມເຊື່ອນິກາຍລູເຕີແລນ ແລະນິກາຍຄາລວິນໄດ້ຮັບການຮັບຮອງ ມີສິດທີ່ຈະຈັດຕັ້ງອົງການຂຶ້ນ ໄດ້ຮັບເອົາສົມບັດທີ່ດິນຄືນມາຕັ້ງແຕ່ປີ ຄ.ສ. 1624 ແລະຄາທໍລິກໄດ້ສູນເສັຽອຳນາດທາງການເມືອງຢ່າງເດັດຂາດ ນັກປວັດສາດໄດ້ນັບເອົາສັນຍາສງົບເສິກເວສຟາເລັຽ ມາເປັນເຫດການທີ່ຈົບສິ້ນຍຸກກາງ ແລະເລີ້ມຕົ້ນຍຸກໃຫມ່ ຄື ຍຸກປັດຈຸບັນນີ້

ນັກສຶກສາອາດຈະຮູ້ສຶກທໍ້ອົກທໍ້ໃຈ ເມື່ອໄດ້ສຶກສາເຖິງບົດນີ້ ທີ່ເຫັນຄຣິສສາສນາມີການຕໍ່ສູ້ກັນເອງຫລາຍເທື່ອຕລອດປວັດສາດ ຊຶ່ງບໍ່ແມ່ນເປັນແຜນການຫລືບໍ່ແມ່ນເປັນນໍ້າພຣະທັຍຂອງພຣະເຈົ້າ ຫາກວ່ານັກສຶກສາຈະພິຈາຣະນາໃຫ້ເລິກຊຶ້ງແລ້ວ ກໍຈະພົບວ່າທຸກເທື່ອທີ່ມີເສິກສົງຄາມຫລືການບາດຫມາງໃຈໃນຄຣິສຈັກ ລ້ວນແລ້ວແຕ່ເກີດຂຶ້ນຈາກຕົວຂອງມະນຸດເອງ ທີ່ຕ້ອງການເອົາຊນະກັນແລະກັນ ໂດຍຝ່າຍທີ່ຖືກຕ້ອງບໍ່ຍອມເສັຍປ່ຽບແລະບໍ່ຍອມຮັບການເປັ່ຽນແປງໃຫມ່ ເພາະວ່າຢ້ານເສັຍຜົນປໂຍດ ເສັຍອຳນາດຫລືເສັຍຕຳແຫນ່ງຫນ້າທີ່ ເຫດການຂອງການຕໍ່ສູ້ນີ້ເກີດຂຶ້ນຍ້ອນມະນຸດບໍ່ຍອມເຊື່ອຟັງພຣະເຈົ້າ ບໍ່ຍອມອ່ອນນ້ອມຖ່ອມໃຈລົງ ເພື່ອຊອກຫາຄວາມຈິງແທ້ແລະຄວາມຖືກຕ້ອງກັບພຣະເຈົ້າ ມີຫລາຍເທື່ອທີ່ຜູ້ນຳສຳຄັນຜິດ ຄິດວ່າຕົນກຳລັງເຮັດການຕໍ່ສູ້ເພື່ອຂຍາຍຣາຊອານາຈັກຂອງພຣະເຈົ້າ ແຕ່ແທ້ຈິງແລ້ວກຳລັງຂຍາຍອານາຈັກອຳນາດຄວາມຍິ່ງໃຫຍ່ໃຫ້ແກ່ຕົນເອງ ໂດຍຄິດເຖິງແຕ່ສິດທິອຳນາດທີ່ຕົນເອງຈະໄດ້ເປັນທີ່ຕັ້ງ ຫລາຍກວ່າທີ່ຈະຄິດເຖິງວ່າ ສິ່ງທີ່ດີທີ່ສຸດເພື່ອພຣະເຈົ້ານັ້ນແມ່ນເປັນສິ່ງໃດແທ້ ການບໍ່ຍອມເສັຍປ່ຽບນີ້ເປັນສິ່ງທີ່ກົງກັນຂ້າມກັບຄຳສິດສອນທີ່ພຣະເຢຊູໄດ້ຕັດສອນໄວ້ໃນລູກາບົດທີ 9 ຂໍ້ 23 "ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສັຍ ແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລ້ວຕິດຕາມເຮົາ"

# ບົດທີ 15

# ການເກີດຄຣິສຈັກນິກາຍຕ່າງ ໆ ແລະ ການເຕີບໃຫຍ່ຂຍາຍຕົວຂອງຄຣິສຈັກໃນອາເມຣິກາ

ການແຕກແຍກຣະຫວ່າງຄຣິສຈັກຄາທໍລິກແລະຄຣິສຈັກໂປເຕັສເຕນ ເຮັດໃຫ້ຕ່າງຝ່າຍອິດເຫນື່ອຍໂດຍສະເພາະເສິກສາມສິບປີ ມາໃນສັດຕະວັດທີ 17 ແລະ 18 ນີ້ ປະຊາຊົນຮູ້ສຶກວ່າ ການຕໍ່ສູ້ກັນນັ້ນເປັນການເສັຍຊີວິດໂດຍບໍ່ມີປໂຍດ ເພາະແທ້ຈິງແລ້ວບັນຫາທາງການເມືອງໄດ້ເຂົ້າກ່ຽວຂ້ອງກັບບັນຫາທາງສາສນາຈົນແຍກກັນບໍ່ອອກ ໃນຕອນທຳອິດນັ້ນ ຄຣິສຈັກໂປເຕັສເຕນບໍ່ໄດ້ມີຈຸດປະສົງຕ້ອງການແຍກຕົວອອກຈາກຄຣິສຈັກຄາທໍລິກ ແຕ່ວ່າສາເຫດທີ່ເກີດການຕໍ່ຕ້ານນັ້ນ ກໍເພື່ອຕ້ອງການຊຳຣະຄຣິສຈັກໃຫ້ບໍຣິສຸດ ໃຫ້ຫັນຄືນສູ່ຄຳສອນຂອງພຣະຄັມພີ ແຕ່ໃນທີ່ສຸດ ການຕໍ່ສູ້ຢ່າງບໍ່ຮູ້ຈັກຈົບສິ້ນເຮັດໃຫ້ຜູ້ຕໍ່ຕ້ານຕ້ອງຖືກຂົ່ມເຫັງ ແລະຕ່າງພາກັນຕັ້ງຄຣິສຈັກຂອງຕົນເອງຂຶ້ນ ຕາມຫລັກຄວາມເຊື່ອຂອງຜູ້ນຳແຕ່ລະຄົນ ທີ່ໄດ້ຄົ້ນພົບຄວາມຈິງໃນພຣະຄຳຂອງພຣະເຈົ້າ ແລະເນັ້ນຫນັກໃນດ້ານການປະຕິບັດທີ່ຕ່າງກັນອອກໄປ ເຮັດໃຫ້ການຖືຮັກສາພິທີການນມັສການ ພິທີບັພຕິສມາແລະພິທີຣະລຶກເຖິງພຣະເຢຊູແຕກຕ່າງກັນ ຮວມໄປເຖິງການບໍຣິຫານປົກຄອງຄຣິສຈັກ ການຈັດອົງການ (Or-ganization) ຊຶ່ງມີຮູບແບບທີ່ແຕກຕ່າງກັນອອກໄປດ້ວຍ

ນັກສຶກສາຫລາຍ ໆ ທ່ານໄດ້ຕັ້ງຄຳຖາມວ່າ ເຫດໃດຄຣິສຕຽນຈຶ່ງແຍກອອກເປັນຫລາຍຄະນະຫລາຍນິກາຍໃນບົດນີ້ເຮົາຈະຂໍກ່າວຢ່າງຫຍໍ້ ໆ ເຖິງຄວາມເປັນມາຂອງການທີ່ຄຣິສຕຽນໄດ້ແຍກອອກເປັນຄະນະນິກາຍຕ່າງ ໆ

## ຄຣິສຈັກໄດ້ແຍກຕົວອອກເປັນຄະນະນິກາຍຕ່າງ ໆ

ເລີ້ມຕົ້ນທີ່ພວກພຽວຣິຕັນ (Puritans) ຊຶ່ງແປວ່າ **"ຜູ້ຊຳຣະໃຫ້ບໍຣິສຸດ"** ເປັນກຸ່ມໂປເຕັສເຕນໃຫຍ່ໃນປະເທດອັງກິດ ໂດຍມີຈຸດປະສົງຕ້ອງການຊຳຣະຄຣິສຈັກອັງກິດ(Church of England) ໃຫ້ບໍຣິສຸດ ເພາະເຫດວ່າເຈົ້າຊີວິດເຮັນຣີທີ 8 (Henry VIII) ໄດ້ນຳເອົາຄຣິສຈັກອັງກິດແຍກຕົວອອກຈາກຄຣິສຈັກຄາທໍລິກໃນຣາວ ຄ.ສ. 1529-1536 ແຕ່ກໍເຮັດເພື່ອຜົນປໂຍດສ່ວນຕົວຫລາຍກວ່າໂດຍບໍ່ໄດ້ສົນໃຈທີ່ຈະຊຳຣະຄຣິສຈັກອັງກິດໃຫ້ຖືກຕ້ອງຕາມພຣະຄຳຂອງພຣະເຈົ້າ ດັ່ງນັ້ນຄຣິສຈັກອັງກິດຈຶ່ງມີຮູບແບບຄ້າຍຄືກັນກັບຄຣິສຈັກຄາທໍລິກຫລາຍຢູ່

ພວກຄຣິສຕຽນທີ່ປະຕິຮູບຄຣິສຈັກໃນອັງກິດໄດ້ຮວມຕົວກັນ ແລະຖືກເອີ້ນວ່າ **ພຽວຣິຕັນ** ເປັນກຸ່ມທີ່ມີຄວາມຮ້ອນໃຈຫລາຍ ທີ່ຕ້ອງການເຫັນການປ່ຽນແປງໃນຄຣິສຈັກອັງກິດ ພວກນີ້ບໍ່ເຫັນນຳທີ່ຄຣິສຈັກມີຄວາມຟຸ່ມເຟືອຍ ຖືຍົດສັກ ບໍ່ເຫັນນຳທີ່ຄຣິສຈັກໃຊ້ຫນັງສືຄູ່ມືການອະທິຖານ ເພາະຖືວ່າການອະທິຖານອ້ອນວອນສົມຄວນມາຈາກຈິດໃຈ ນອກຈາກນີ້ຍັງເຫັນວ່າ ຄຣິສຈັກເພຣສໄບທີຣຽນໃນສະກັອຕແລນ ຊຶ່ງນຳໂດຍທ່ານຈອນນັອກໄດ້ນຳໃຫ້ປະເທດຊາດຈະເຣີນຮຸ່ງເຣືອງ ແລະບໍ່ຕ້ອງຢູ່ໃຕ້ອຳນາຈຂອງຄຣິສຈັກກຸງ

ໂຣມ ດັ່ງນັ້ນພວກພຽວຣິຕັນຈຶ່ງໄດ້ເຂັ້ມແຂງຮ້ອນຮົນ ແລະຕ້ອງການມີອິດທິພົນໃຫ້ແກ້ໄຂເຣື້ອງການປົກຄອງໃນອັງກິດ

ພວກພຽວຣິຕັນນີ້ໄດ້ເພີ່ມຈຳນວນຫລາຍຂຶ້ນ ແລະແຕກຕົວອອກເປັນກຸ່ມ ໆ ໂດຍການຕັ້ງຊື່ແຕ່ລະກຸ່ມຕ່າງ ໆ ກັນ ດັ່ງນີ້

- ກຸ່ມແຍກຕົວອອກໄປ (Seperatist)
- ກຸ່ມບໍ່ຍອມຜ່ອນໜັກຜ່ອນເບົາ (Non-Conformists)
- ກຸ່ມອິສຣະ (Independents)
- ກຸ່ມເພສໄບທີຣຽນ (Presbyterians)
- ກຸ່ມກອງປະຊຸມນິຍົມ (Congregationalist)
- ກຸ່ມບັພຕິສ (Baptist, ຈຸ່ມທັງຕົວ)
- ກຸ່ມຮ່ວມສຫາຍ (Quakers)
- ກຸ່ມເອກພາບນິຍົມ (Unitarians Baptist)

ກຸ່ມຕ່າງ ໆ ເຫລົ່ານີ້ໄດ້ຕັ້ງຊື່ຕ່າງ ໆ ກັນໄປຕາມທີ່ຖືກເອີ້ນ ເພາະມີແນວຄວາມເຊື່ອແລະຫລັກການປະຕິບັດທີ່ເນັ້ນຕ່າງ ໆ ກັນຄົນລະແບບ ຫາກແຕ່ວ່າ ມີຄວາມເຊື່ອຫລັກທີ່ຖືໄວ້ເປັນພື້ນຖານບໍ່ໄດ້ແຕກຕ່າງກັນ ຄື ຄວາມເຊື່ອໃນສິດທິອຳນາດຂອງພຣະຄັມພີວ່າ ເປັນພຣະຄຳຂອງພຣະເຈົ້າ ຂ່າວປະເສີດແຫ່ງຄວາມຣອດພົ້ນ ແມ່ນໂດຍການຕາຍໄຖ່ບາບຂອງພຣະເຢຊູຄຣິສ ການເປັນຂຶ້ນຈາກຕາຍແລະການສະຖິດຢູ່ນຳຂອງພຣະວິນຍານບໍຣິສຸດໃນຕົວຜູ້ເຊື່ອ ສ່ວນຄວາມເຊື່ອຂໍ້ຍ່ອຍ ໆ ຫລືຫລັກການປະຕິບັດຫລືພິທີການນມັສການນັ້ນ ໄດ້ເນັ້ນແຕກຕ່າງກັນອອກໄປ

**ຄຣິສຈັກຄະນະນິກາຍຕ່າງ ໆ ມາເຕີບໃຫຍ່ໃນອາເມຣິກາ**

ການປະຕິຮູບຄຣິສຈັກໃນຍຸໂຣບເຮັດໃຫ້ເກີດຄຣິສຈັກໂປເທັສເຕນນິກາຍຕ່າງ ໆ ຊຶ່ງເກີດຂຶ້ນມາຕາມຫລັກຄວາມເຊື່ອຂອງກຸ່ມຄາລວິນແດ່ ຂອງກຸ່ມລູເຕີແດ່ ຄືກັບພວກພຽວຣິຕັນໃນປະເທດອັງກິດກໍ່ໄດ້ແຍກຕົວອອກຈາກຄຣິສຈັກອັງກິດ ແລະແຍກອອກເປັນຄນະນິກາຍຕ່າງ ໆ ເມື່ອຊາວຍຸໂຣບເຂົ້າມາຕັ້ງຖິ່ນຖານໃນອາເມຣິກາກໍ່ໄດ້ນຳເອົາສາສນາຄຣິສຕຽນຕາມນິກາຍທີ່ຕົນເຊື່ອຖືເຂົ້າມານຳດ້ວຍ ຄຣິສຈັກຄະນະນິກາຍຕ່າງ ໆ ເຫລົ່ານີ້ໄດ້ອົພຍົບເຂົ້າສູ່ດິນແດນໃຫມ່ທີ່ມີນາມວ່າ "ທວີປອາເມຣິກາ" ໄດ້ເຂົ້າມາຕັ້ງຖິ່ນຖານ ແລະໄດ້ມີອິສຣະພາບໃນການສ້າງຄຣິສຈັກຢ່າງເຂັ້ມແຂງ ແລະໄດ້ເຜີຍແຜ່ຂ່າວປະເສີດຕາມຫລັກຄວາມເຊື່ອໃນນິກາຍທີ່ຕົນເຊື່ອຖື ອັນມີນິກາຍທີ່ສຳຄັນ ໆ ຫລາຍນິກາຍຊຶ່ງໃນບົດນີ້ເຮົາຈະຂໍກ່າວເຖິງຄຣິສຈັກທີ່ເຂົ້າມາສູ່ສະຫະຣັຖອາເມຣິກາ ນັບຕັ້ງແຕ່ຄຣິສຈັກຄາທໍລິກເປັນຕົ້ນໄປ ມີດັ່ງນີ້

1. **ຄຣິສຈັກຄາທໍລິກ** (Roman Catholic Church)

ຄ.ສ. 1125 ຄຣິສຈັກຄາທໍລິກເຂົ້າສູ່ອາເມຣິກາເໜືອທີ່ກຣີນແລນ (Greenland) ສິດທິອຳນາດການປົກຄອງດູແລຍັງຄົງຂຶ້ນຢູ່ກັບຄຣິສຈັກເຊນປີເຕີ (St. Peter) ໃນກຸງໂຣມ ໂດຍມີສັນຕະປາປາເປັນຜູ້ນຳຂອງຄຣິສຈັກຄາທໍລິກ

ຄ.ສ. 1492 ເມື່ອທ່ານໂຄລັມບັສຄົ້ນພົບແຜ່ນດິນອາເມຣິກາໄດ້ເປີດໂອກາສ ແລະຄວາມຫວັງໃຫ້ແກ່ຄຣິສຈັກຄາທໍລິກໃນການປ່າວປະກາດຂ່າວປະເສີດຂອງພຣະເຢຊູຄຣິສ ຄຣິສຈັກຄາທໍລິກໄດ້ເຂົ້າໄປເຖິງອາເມຣິກາໃຕ້ ຄື ປະເທດເຮຕີ (Haiti) ແລະປະເທດເປີໂຕຣິໂກ (Puerto Rico)

ຄ.ສ. 1565 ຄຣິສຈັກຄາທໍລິກໄດ້ເຂົ້າໄປເຖິງປະເທດເມັກຊິໂກ (Mexico) ໃນຣະຍະເວລາພຽງແຕ່ 75 ປີຫລັງຈາກການຄົ້ນພົບດິນແດນໃຫມ່ຂອງທ່ານໂຄລັມບັສ ຄືທວີປອາເມຣິກາ ຄຣິສຈັກຄາທໍລິກໄດ້ຕັ້ງຮາກຖານຢ່າງໝັ້ນຄົງ ແລະເກີດຜົນຫລາຍໃນປະເທດຕ່າງ ໆ ແຖບອາເມຣິກາໃຕ້

ໃນປະມານສັຕວັດທີ 16 ແລະ 17 ພວກຝຣັ່ງເສດນິກາຍຄາທໍລິກທີ່ມີຄວາມເຂັ້ມແຂງໄດ້ເຂົ້າມາຕັ້ງຖິ່ນຖານໃນສະຫະຣັຖອາເມຣິກາຣິມຝັ່ງແມ່ນ້ຳມິສຊິສຊິປປີ້ (Missisippi) ຕລອດຮອດເຖິງລຸຍເຊັຽນ່າ (Louisiana) ໄດ້ເຜີຍແຜ່ແລະກໍ່ຕັ້ງຄຣິສຈັກຄາທໍລິກຂຶ້ນຢ່າງໝັ້ນຄົງຄືກັນ

ຄ.ສ. 1634 ຄະນະເຢຊູອິດໄດ້ປ່າວປະກາດຂ່າວປະເສີດຢ່າງເກີດຜົນ ໃນຣັຖແມຣີແລນດ໌ (Maryland) ຣັຖເພັນຊີວາເນັຽ (Pennsylvania) ຣັຖເວີຈິເນັຽ (Virginia)

ຄ.ສ. 1784 ບາດຫລວງ ຈອນ ຄາຣ໌ຣອລລ໌ (John Carroll) ໄດ້ຮັບການຍົກຍ່ອງວ່າເປັນອັຄຣທັມທູດທີ່ສົມບູນແບບຂອງຄຣິສຈັກຄາທໍລິກໃນສະຫະຣັຖອາເມຣິກາ ທ່ານໄດ້ຮັບການແຕ່ງຕັ້ງໃຫ້ເປັນເຈົ້າຄນະແຂວງ ທີ່ບາລຕິມໍ (Bishop of Baltimore) ຄຣິສຈັກຄາທໍລິກໄດ້ເກີດຜົນແລະຂຍາຍອອກໄປຢ່າງໄວ ແລະກວ້າງຂວາງຕັ້ງແຕ່ປີ 1828 ຈົນຮອດສົງຄາມໂລກຄັ້ງທີ່ນຶ່ງ

ຈາກການສຶກສາປວັດສາດຄຣິສຈັກໂຣມັນຄາທໍລິກ ນັກປວັດສາດອາດຈະເວົ້າໄດ້ວ່າ ຄຣິສຈັກໂຣມັນຄາທໍລິກໄດ້ສືບເນື່ອງມາຕັ້ງແຕ່ຍຸກອັຄສາວົກ ເຊື່ອແນ່ວ່າຄຣິສຈັກໃນກຸງໂຣມໄດ້ເລີ້ມຕົ້ນຈາກທ່ານໂປໂລແລະທ່ານເປໂຕອັຄສາວົກຄົນສຳຄັນຂອງພຣະເຢຊູຄຣິສ ຄຣິສຈັກໃນກຸງໂຣມມີອິດທິພົນຫລາຍຂຶ້ນເມື່ອເຈົ້າຊີວິດຄອນສະແຕນຕິນ ໄດ້ປະກາດໃຫ້ສາສນາຄຣິສຕຽນເປັນສາສນາປະຈຳຊາດຂອງມຫາອານາຈັກໂຣມັນ ຄຣິສຈັກຄາທໍລິກໄດ້ຂຍາຍໄປທົ່ວເອເຊັຽນ້ອຍ ທົ່ວຕາວັນອອກກາງຈົນຮອດຢຸໂຣປ ອາຟຣິກາແລະທົ່ວໂລກ ເຖິງແມ່ນວ່າຈະມີການແຕກແຍກອອກເປັນຄຣິສຈັກກຣີກ-ອອທອດອກຊ໌ ແລະຍັງໄດ້ຮັບການບຸກຮຸກທຳລາຍຈາກພວກອິສລາມ ຈົນຮອດເຖິງຍຸກກາງທີ່ມີການປະຕິຮູປ ເພື່ອຊຳຣະຄຣິສຈັກຄາທໍລິກໃຫ້ບໍຣິສຸດຖືກຕ້ອງຕາມພຣະຄັມພີກໍຕາມ ຄຣິສຈັກຄາທໍລິກໄດ້ມີການຟື້ນຟູໃຫມ່ຫລາຍເທື່ອ ແລະຕັ້ງໝັ້ນຄົງແຂງແຮງມາຕລອດບໍ່ເຄີຍລົ້ມລົງ ຈົນຮອດປັດຈຸບັນກໍ່ຍັງຄົງເປັນຄຣິສຈັກທີ່ມີລັກສນະເດັ່ນຂຍາຍອອກໄປທົ່ວໂລກ ພ້ອມທັງມີຄວາມສຳຄັນຢ່າງຫລວງຫລາຍຕໍ່ປະຊາຊົນນານາປະເທດທີ່ເປັນຊາວຄາທໍລິກ

## 2. **ຄຣິສຈັກເອພິສໂຄໂປລ** (The Episcopal Church)

ຄຣິສຈັກນີ້ມີອີກຊື່ນຶ່ງວ່າ The Protestant Episcopal Church in the United States of America ສາເຫດທີ່ມີຊື່ວ່າເປັນໂປເທັສຕານນັ້ນ ສືບເນື່ອງມາຈາກວ່າ ຄຣິສຈັກເອພິສໂຄໂປລໄດ້ແຍກອອກຈາກຄຣິສຈັກແມ່ ແມ່ນຄຣິສຈັກອັງກິດ (Church of England) ຊຶ່ງເຮົາໄດ້ສຶກສາມາແລ້ວວ່າ ເຈົ້າຊີວິດເຮັນຣີທີ່ 8 ໄດ້ນຳໃຫ້ຄຣິສຈັກອັງກິດແຍກອອກຈາກຄຣິສຈັກໂຣມັນຄາທໍລິກ ເພື່ອຜົນປໂຍດສ່ວນຕົວ ແຕ່ວ່າລັກສນະພິທີການນມັສການແລະຫລັກຂໍ້ເຊື່ອຂອງຄຣິສຈັກອັງກິດຍັງຄົງຖືຮັກສາຄ້າຍຄືກັນກັບຄຣິສຈັກຄາທໍລິກຢູ່ຫລາຍ ແຕ່ເປັນທີ່ຮູ້ຈັກໂດຍທົ່ວໄປວ່າເປັນການນມັສການແບບຄຣິສຈັກອັງກິດ ດັ່ງນັ້ນແລ້ວເມື່ອຄຣິສຈັກອັງກິດເຂົ້າມາເຖິງອາເມຣິກາເຫນືອ ການເຜີຍແຜ່ຂ່າວປະເສີດຂອງຄຣິສຈັກເອພິສໂຄໂປລຈຶ່ງມີຄວາມຍາກລຳບາກ ຍ້ອນເພາະວ່າຄຣິສຈັກຄາທໍລິກເຂັ້ມແຂງກວ່າ

ຄ.ສ. 1578 ທ່ານມາຕິນ ຟຣອບິສເຊີຣ໌ (Martin Frobisher) ເປັນສາສນາຈານປະຈຳກອງທຫານອັງກິດໄດ້ເດີນທາງມາເຖິງອ່າວຮັດສັນ (Hudson's Bay) ທາງນິວຍອຄ ແລະເປີດການນມັສການແບຄຣິສຈັກອັງກິດທີ່ນັ້ນ

ຄ.ສ. 1579 ທ່ານແຟຣນຊິສ ແດຣກ (Francis Drake) ໄດ້ເປີດການນມັສການຂອງຄຣິສຈັກອັງກິດຢູ່ທາງຊານຟານຊິສໂກ (San Francisco)

ໃນຣະຫວ່າງສັຕວັດທີ່ 18 ຄຣິສຈັກອັງກິດເກີດຂຶ້ນບໍ່ຫລາຍໃນອາເມຣິກາ ເຖິງແມ່ນວ່າທັງ 13 ຣັຖໃນເວລານັ້ນຍັງຄົງເປັນເມືອງຂຶ້ນຂອງອັງກິດກໍຕາມ ທັງນີ້ມີສາເຫດທີ່ວ່າ ຄຣິສຕຽນຈຳນວນຫລາຍໃນປະເທດອັງກິດຕ້ອງການປະຕິຮູບຄຣິສຈັກອັງກິດຄືກັນ ດັ່ງນັ້ນຈຶ່ງມີຄຣິສຕຽນປະຕິຮູບຈຳນວນຫລາຍອົບພຍົບເຂົ້າມາໃນອາເມຣິກາ ແລະພຍາຍາມກໍ່ຕັ້ງຄຣິສຈັກນິກາຍໃໝ່ຂຶ້ນ ດ້ວຍເຫດນີ້ເອງຈຶ່ງມີຄົນເຂົ້າຮ່ວມກັບຄຣິສຈັກອັງກິດນ້ອຍທີ່ສຸດ ອີກທັງໃນເວລານັ້ນອາເມຣິກາມີຊັຍຊນະອັງກິດ ແລະໄດ້ປະກາດອິສຣະພາບໃນເສິກທີ່ເອີ້ນວ່າ "Revolutionary War" ອາເມຣິກາໄດ້ປະກາດອິສຣະພາບບໍ່ຂຶ້ນກັບອັງກິດ ເຮັດໃຫ້ພວກຜູ້ນຳສາສນາຈາກຄຣິສຈັກອັງກິດຕ້ອງເມືອປະເທດຂອງຕົນ ດັ່ງນັ້ນແລ້ວການຂຍາຍຄຣິສຈັກອັງກິດຈຶ່ງເປັນໄປໄດ້ຍາກ

ຄ.ສ. 1780 ທ່ານວິນລຽ້ມ ສມິທ (William Smith) ເຫັນວ່າຄຣິສຈັກອັງກິດຈະບໍ່ກ້າວໜ້າ ຈຳເປັນຕ້ອງມີການປຽ່ນແປງໃຫ້ເຫັນເດັ່ນຊັດຂຶ້ນວ່າເປັນຄຣິສຈັກປະຕິຮູບ (Protestant) ຊຶ່ງແຕກຕ່າງອອກໄປຈາກຄຣິສຈັກຄາທໍລິກ ທ່ານວິລລຽ້ມໄດ້ຮຽກການປະຊຸມຂຶ້ນທີ່ແມຣີແລນດ໌ (Maryland) ແລະຈັດຕັ້ງອົງການຂຶ້ນໃໝ່ ດັ່ງນັ້ນໃນປີນີ້ຈຶ່ງມີການກ່າວເຖິງຊື່ຄຣິສຈັກໂປເທັນຕານເອພິສໂຄໂປລ (Protestan Episcopal) ແທນຊື່ຄຣິສຈັກອັງກິດ ໃນທີ່ປະຊຸມເປັນເທື່ອແຣກ

ຄ.ສ. 1782-1789 ໄດ້ມີຄວາມພຍາຍາມຫລາຍເທື່ອທີ່ຈະນຳໃຫ້ຄຣິສຈັກເອພິສໂຄໂປລກັບຄືນມາຮ່ວມກັບຄຣິສຈັກອັງກິດອີກ ໂດຍການປະຊຸມສພາທີ່ເອີ້ນວ່າ General Convention ໃນ ຄ.ສ. 1784 ທ່ານຊາມູເອລ ຊີເບີຣີ (Samuel Seabury) ໄດ້ຮັບການແຕ່ງຕັ້ງຈາກຄຣິສຈັກອັງກິດໃຫ້ເປັນເຈົ້າຄນະແຂວງທີ່ຄອນເນກຕິກັຕ (Connecticut) ຊຶ່ງປັດຈຸບັນນີ້ສພາຄຣິສຈັກເອພິສໂຄໂປລໄດ້ຕັ້ງຊື່ສຳນັກງານໃຫຽ່ວ່າ ບ້ານຊີເບອຣີ (Seabury House) ເພື່ອເປັນກຽດແກ່ທ່ານ ແຕ່ວ່າເມື່ອຮອດມາເຖິງການປະຊຸມສພາໃນປີ ຄ.ສ. 1789 ໄດ້ມີການຈັດຕັ້ງອົງການຂຶ້ນໃໝ່ ມີການຮັບຮອງຫລັກຂໍ້ເຊື່ອ ທັມມະນູນ ແລະຍອມຮັບນາມໃໝ່ຢ່າງເປັນທາງການວ່າ ຄຣິສຈັກເອພິສໂຄໂປລ ໃຫ້ມີອິສຣະພາບພົ້ນຈາກການຄວບຄຸມຂອງຄຣິສຈັກອັງກິດ

### 3. ຄຣິສຈັກລູເຕີແລນ (The Lutheran Church)

ຕາມທີ່ເຮົາໄດ້ສຶກສາມາແລ້ວ ຄຣິສຈັກລູເຕີແລນເກີດຂຶ້ນຈາກຜົນຂອງການປະຕິຮູບຄຣິສຈັກຂອງທ່ານມາຕິນ ລູເຕີໃນປະເທດເຢັຽຣະມັນ ການປະຕິຮູບຂອງທ່ານໄດ້ແຜ່ຂຍາຍໄປທີ່ວຢູໂຣປຢ່າງວ່ອງໄວທີ່ສຸດ ຫລັກຂໍ້ເຊື່ອຂອງທ່ານ (The Augsburge Confession) ໄດ້ເປັນທີ່ຍອມຮັບຂອງຄຣິສຈັກທົ່ວຢູໂຣບພາຍຫລັງຈາກທ່ານລູເຕີໄດ້ເສັຽຊີວິດພຽງແຕ່ 30 ປີເທົ່ານັ້ນ (ທ່ານລູເຕີເສັຽຊີວິດ ຄ.ສ. 1546) ຫລັກຂໍ້ເຊື່ອຂອງທ່ານລູເຕີຖືກແປອອກເປັນພາສາຕ່າງ ໆ ແລະຖືກອະທິບາຍໃຫ້ຄຣິສຕຽນໄດ້ເຂົ້າໃຈ ອັນເປັນການເປີດຍຸກໃໝ່ແຫ່ງການເຂົ້າໃຈພຣະຄຳຂອງພຣະເຈົ້າ <u>ຄຣິສຈັກລູເຕີແລນເປັນຄຣິສຈັກທຳອິດທີ່ໄດ້ຮັບອິສຣະພາບຈາກຄຣິສຈັກຄາທໍລິກໃນການຈັດຕັ້ງເປັນອົງການຄຣິສຈັກ</u> ແລະສາມາດ

ມີຣະບຽບການນມັສການຂອງຕົນເອງມາເປັນເວລານານ ແຕ່ເຮົາກໍຕ້ອງຍອມຮັບຄວາມເປັນຈິງວ່າ ເຖິງແມ່ນເປັນຫລັກຂໍ້ເຊື່ອອັນດຽວກັນ ແຕ່ເມື່ອຖືກນຳໄປໃຊ້ປະຕິບັດໃນຕ່າງປະເທດ ລັກສນະການນມັສການຫລືການເນັ້ນຄວາມສຳຄັນໃນບາງເຣື້ອງກໍ່ອາດມີຄວາມແຕກຕ່າງກັນອອກໄປຕາມວັທນະທັມ ປະເພນີແລະຄວາມຄິດຂອງຄົນໃນແຕ່ລະປະເທດ ດັ່ງນັ້ນແລ້ວເມື່ອຄຣິສຈັກລູເຕີແລນມາເຖິງອາເມຣິກາ ຈຶ່ງເປັນຄຣິສຈັກທີ່ມີສະມາຊິກຊາວຕ່າງຊາດ ຕ່າງພາສາກັນ ຄື ຊາວສວີເດນ ຊາວເຢັຽຣະມັນ ຊາວອອສເຕັຣຽ ຊາວຮອນແລນ ຊາວແດນມາກ ແຕ່ລະຊາດແຕ່ລະພາສາພາກັນແຍກກັນອອກໄປຕັ້ງຄຣິສຈັກລູເຕີແຣນຂອງຕົນເອງ

ຄ.ສ. 1623 ໄດ້ພົບຄຣິສຈັກລູເຕີແລນທີ່ ແມນຮັດຕັນ (Manhattan)ໂດຍຊາວຮອນແລນເປັນຜູ້ນຳໃນການກໍ່ຕັ້ງເປັນຄຣິສຈັກ

ຄ.ສ. 1638 ພົບຄຣິສຈັກລູເຕີແລນທີ່ເປັນຊາວສວີເດນໃນແດນຝັ່ງແມ່ນ້ຳເດຣາເວ (Delawar River)

ຄ.ສ. 1639 ທ່ານໂຣຣັສ ເທີຄິລລັສ (Reorus Torkillus) ເປັນສາສນາຈານຜູ້ທຳອິດທີ່ມາຕັ້ງຖິ່ນຖານໃນອາເມຣິກາ ແລະບໍ່ຊ້າຕໍ່ມາຕຶວອາຄານຄຣິສຈັກກໍຖືກສ້າງຂຶ້ນທີ່ ຟອດຄຣິສຕິນາ (Forth Christina) ແລະໃນເວລາຕໍ່ ໆ ໄປກໍໄດ້ພົບຄຣິສຈັກລູເຕີແລນໃນເພັນຊີວາເນັຽ ເວີຈິເນັຽແລະຈໍເຈັຽ

ຕອນກາງສັຕວັດທີ 18 ພົບວ່າໃນຣັຖເພັນຊີວາເນັຽແຫ່ງດຽວມີ ຄຣິສຕຽນລູເຕີແລນຫລາຍເຖິງສາມໝື່ນຄົນ

ຄ.ສ. 1748 ໄດ້ມີການປະຊຸມຫລວງຄັ້ງແລກທີ່ເພັນຊີວາເນັຽ ໂດຍການນຳພາຂອງທ່ານເຮັນຣີ້ມູເລັນເບີກ (Henry Muhlenberg) ທ່ານຜູ້ນີ້ເປັນນັກເທດ ຜູ້ປະກາດ ຜູ້ປະສານງານທີ່ດີທີ່ສຸດທ່ານໄດ້ນຳໃຫ້ເກີດມີສັນຕິພ້ອມທັງຊູໃຈຜູ້ນຳທັງຫລາຍ ການປະຊຸມໃນຄັ້ງນີ້ມີຕົວແທນນັກເທດທີກທ່ານເປັນຊາວສວີເດັນ ເຢັຽຣະມັນ ແລະຜູ້ນຳອື່ນ ໆ ອີກ 24 ທ່ານ ໄດ້ຮ່ວມກັນວາງຮູບແບບແລະແຜນງານພ້ອມທັງຈັດຕຽມໜັງສືຄູ່ມືການນມັສການ ໄດ້ມີພິທີອຸທິດຖວາຍອາຄານຄຣິສຈັກເຊັນໄມເຄີລ (St.Micheal) ແລະສະຖາປານາແຕ່ງຕັ້ງສາສນາຈານຫລາຍທ່ານ ການປະຊຸມຄັ້ງນີ້ນັບໄດ້ວ່າເປັນປວັດສາດສຳຄັນຂອງຄຣິສຈັກລູເທີແລນ

ຄ.ສ. 1762 ໄດ້ມີການຮັບຮອງທັມນູນຄຣິສຈັກ ເຖິງແມ່ນວ່າຄຣິສຈັກລູເທີແລນປະກອບດ້ວຍສມາຊິກຕ່າງຊາດຕ່າງພາສາກັນ ຫາກແຕ່ວ່າມີຄວາມເປັນອັນນຶ່ງອັນດຽວກັນດີ ໄດ້ສົ່ງເສີມໃຫ້ຄຣິສຈັກລູເຕີແລນເຂັ້ມແຂງຢູ່ໃນອາເມຣິກາຈົນເຖິງປັດຈຸບັນ ໃນປັດຈຸບັນຄຣິສຈັກລູເຕີແລນໄດ້ແບ່ງອອກເປັນອົງການໃຫຍ່ ໆ ດັ່ງນີ້

1, Lutheran Chruch in America (LCA)

2, The American Lutheran Church (ALC)

3, The Lutheran Chruch-Missouri Synod (LC-MS)

ຄ.ສ. 1982 ໄດ້ມີການຕົກລົງກັນທີ່ຈະຮ່ວມເອົາອົງການທັງໝົດຂອງຄຣິສຈັກລູເຕີແລນທັງໝົດເຂົ້າເປັນອັນນຶ່ງອັນດຽວກັນ ແລະຄາດວ່າຈະມີຜົນສຳເຣັດໃນປີ 1987 ຄຣິສຈັກລູເຕີແລນມີຄວາມເຂັ້ມແຂງ ແລະເຜີຍແຜ່ອອກໄປທົ່ວໂລກ

**ຄຣິສຈັກເມັດໂທດິສ** The Methodist Church

ຄຣິສຈັກເມັດໂທດິສໄດ້ເກີດຂຶ້ນມາເນື່ອງຈາກວ່າ ທ່ານ ຈອນ ເວສເລ່ (John Wesley) ນັກເທສຂອງອັງກິດ ກັບນ້ອງຊາຍຊື່ຊາລ ເວສເລ່ (Charles Wesley) ແລະສະຫາຍອີກຜູ້ນຶ່ງຄື ທ່ານຈ໊ອດ ໄວ້ຟີລດ໌ (George Whitefield) ທັງ 3 ທ່ານໄດ້ເຕົ້າໂຮມກັບສະຫາຍຄົນອື່ນ ໆ ເພື່ອກໍ່ຕັ້ງຊຸມນຸມກັນຂຶ້ນໃນມະຫາວິທຍາລັຍ ອອກຟອຣ໌ດ (Oxford University) ເພື່ອອະທິຖານ ອ້ອນວອນແລະອ່ານພຣະຄັມພີ ພ້ອມຖືພິທີຣະລຶກເຖິງພຣະເຢຊູຄຣິສເປັນປະຈຳ ຊຸມນຸມນີ້ໄດ້ຮ່ວມກັນຮັບໃຊ້ພຣະເຈົ້າ ແລະເປັນຄຣິສຕຽນທີ່ເຄັ່ງຄັດເຈົ້າຣະບຽບ ພວກເຂົາເຈົ້າອະທິຖານຮ່ວມກັນວັນລະສາມເທື່ອ ແລະຕ້ອງອະທິຖານໃນໃຈທຸກ ໆ ໂມງ ດັ່ງນັ້ນພວກນັກສຶກສາແລະອາຈານໃນມະຫາວິທຍາລັຍອອກຟອຣ໌ດ ຕ່າງເຫັນວ່າ ພວກເວສເລ່ເຈົ້າຣະບຽບຫລາຍໂພດ ຈຶ່ງຕັ້ງຊື່ພວກເຂົາເຈົ້າວ່າ ພວກເຈົ້າຣະບຽບເຄັ່ງຄັດສາສນາ ຕົງກັບພາສາອັງກິດວ່າ Methodist (ເມັດໂທດິສ)

ທ່ານຈອນ ເວສເລ່ແລະສະຫາຍບໍ່ໄດ້ມີຄວາມຕັ້ງໃຈທີ່ຈະແຍກຕົນເອງອອກຈາກຄຣິສຈັກອັງກິດ ເພື່ອກໍ່ຕັ້ງຄຣິສຈັກຄະນະໃຫມ່ ທ່ານພຽງຕ້ອງການຟື້ນຟູຄຣິສຈັກອັງກິດ ໃຫ້ຜູ້ເຊື່ອເປັນຄຣິສຕຽນທີ່ຈິງຈັງຫລາຍກວ່າທີ່ຈະເປັນຄຣິສຕຽນແຕ່ໃນນາມເທົ່ານັ້ນ ຄວາມພຍາຍາມຂອງທ່ານບໍ່ໄດ້ເຮັດໃຫ້ຄຣິສຈັກອັງກິດຍອມປ່ຽນແປງອັນໃດ ແຕ່ວ່າທ່ານແລະສະຫາຍໃນທີ່ສຸດຕ້ອງກໍຈຳເປັນຕ້ອງຕັ້ງຄຣິສຈັກຂຶ້ນໃຫມ່ ເອີ້ນວ່າ ເມັດໂທດິສ (Methodist)

ຄ.ສ. 1735 ທ່ານຈອນ ເວສເລ່ ແລະນ້ອງຊາຍຮ່ວມກັບສະຫາຍອີກຜູ້ນຶ່ງໄດ້ເຂົ້າມາປະກາດໃນອາເມຣິກາ ທີ່ຣັຖຈໍເຈັຽ ແຕ່ການປະກາດບໍ່ໄດ້ເກີດຜົນ ເພາະວ່າທ່ານເຄັ່ງຄັດແລະບໍ່ຍອມອ່ອນໃຫ້ກັບຄວາມເຊື່ອແນວອື່ນ

ຄ.ສ. 1738 ທ່ານຈອນ ເວສເລ່ ແລະນ້ອງຊາຍໄດ້ຕັດສິນໃຈເດີນທາງເມືອອັງກິດ ເນື່ອງຈາກງານໃນອາເມຣິກາບໍ່ເກີດຜົນ ໃນຣະຫວ່າງທາງໄດ້ພົບກັບຄຣິສຕຽນຊາວໂມເຣວຽນ (Moravian) ຊຶ່ງເປັນຄຣິສຕຽນໂປເທັສເຕນ ຈາກເມືອງໂມຣິວັຽ ທີ່ຍຶດຖືຫລັກຄຳສອນຂອງທ່ານຈອນຮັສ (John Hush) ທ່ານຈອນ ເວສເລ່ ໄດ້ຮັບການຟື້ນຟູໃຈ ເຣື່ອງການຕ້ອນຮັບພຣະເຢຊູຄຣິສ ແລະກັບໃຈບັງເກີດໃຫມ່ໂດຍສ່ວນຕົວ ປະສົບການບັງເກີດໃຫມ່ນີ້ເຮັດໃຫ້ທ່ານເກີດຄວາມເຂັ້ມແຂງໃນຝ່າຍວິນຍານຫລາຍຂຶ້ນ ແລະໄດ້ຕັ້ງຕົ້ນຂຽນບົດຄວາມ ແລະໄດ້ເທສນາ ພ້ອມທັງສນັບສນູນນ້ອງຊາຍກໍ່ຕັ້ງສະຖາບັນດົນຕຣີສາສນາສາດຂຶ້ນ ຜົນງານການແຕ່ງເພັງຂອງທ່ານຊາຣ໌ລ ເວສເລ່ໄດ້ປາກົດຢູ່ໃນບົດເພັງນມັສການຂອງຄຣິສຕຽນຫລາຍ ໆ ຄະນະຈົນເຖິງປັດຈຸບັນນີ້ ການປະຊຸມຂອງຄະນະເມັດໂທດິສມັກຮ້ອງເພັງນມັສການຫລາຍທີ່ສຸດ

ທ່ານຈອນ ເວສເລ່ ເປັນນັກເທສກາງແຈ້ງທີ່ມີຄວາມຮຸນແຮງເວົ້າຈູງໃຈໃຫ້ຜູ້ຟັງກັບໃຈບັງເກີດໃຫມ່ໂດຍພຣະວິນຍານບໍຣິສຸດ ທ່ານໄດ້ເຂົ້າໄປປະກາດກັບຄົນງານໃນເຂດອຸດສາຫະກັມ ແລະແຫລ່ງເສື່ອມໂຊມໃນກຸງລອນດອນ ເປັນບ່ອນທີ່ຜູ້ຄົນອົພຍົບມາຈາກຊົນບົດແລະຢູ່ກັນຢ່າງຫນາແຫນ້ນ ເປັນບ່ອນພັກອາສັຍໃກ້ໂຮງງານ ທ່ານໃຊ້ພາສາງ່າຍ ໆ ແລະເທສນາຈູງໃຈໃຫ້ຜູ້ຟັງບັງເກີດໃຫມ່ ຄຣິສຈັກເມັດໂທດິສໄດ້ເກີດຂຶ້ນໃນອັງກິດຢ່າງວ່ອງໄວໃນເຂດອຸດສາຫະກັມ ແລະສມາຊິກສ່ວນໃຫຍ່ເປັນຊົນຊັ້ນກັມກອນ ຄຣິສຈັກຂອງທ່ານໄດ້ແຜ່ຫລາຍອອກໄປຍັງຊົນບົດ ແລະບ່ອນຄົນຍາກຈົນ

ຄ.ສ. 1744 ຄຣິສຈັກເມັດໂທດິສໄດ້ຈັດໃຫ້ມີການປະຊຸມຫລວງເພື່ອເຕົ້າຮວມນັກເທສ ແລະຜູ້ນຳຈາກທົ່ວປະເທດເປັນຄັ້ງທຳອິດ ແລະການປະຊຸມນີ້ໄດ້ດຳເນີນຕໍ່ມາເປັນປະຈຳທຸກ ໆ ປີ

ຄ.ສ. 1784 ຄຣິສຈັກເມັດໂທດິສໄດ້ຮັບການຮັບຮອງ ໃຫ້ເປັນຄຣິສຈັກທີ່ຖືກຕ້ອງຕາມກົດຫມາຍ

ຂອງປະເທດອັງກິດ ທ່ານຈອນ ເວສເລ່ໄດ້ຕາຍໃນ ຄ.ສ. 1791 ຕລອດຊີວິດຂອງທ່ານໄດ້ເທສນາ ແລະໃຊ້ຊີວິດຄຣິສຕຽນຢ່າງເຄັ່ງຄັດ ທ່ານພຍາຍາມໃຫ້ຄຣິສຈັກອັງກິດເກີດການປ່ຽນແປງ ແຕ່ກໍບໍ່ໄດ້ຜົນ ຈົນກະທັ່ງທ່ານຖືກແຍກອອກເປັນຄຣິສຈັກຮູບແບບໃໝ່ ຄື ຄຣິສຈັກເມັດໂທດິສ

**ຄະນະເມັດໂທດິສເຜີຍແຜ່ໃນອາເມຣິກາ**

ຄ.ສ. 1784 ທ່ານຈອນເວສເລ່ໄດ້ຕັ້ງໃຫ້ທ່ານໂທມັສ ໂຄ໊ກ ເປັນຜູ້ເບິ່ງແຍງງານການປະກາດໃນອາເມຣິກາ ທ່ານໂທມັສ ໂຄ໊ກໄດ້ ແຕ່ງຕັ້ງຜູ້ຮ່ວມງານອີກທ່ານນຶ່ງ ຄື ຟຣານຊິສ ແອສເບີຣີ ຄຣິສຈັກເມໂທດິສຕ໌ໄດ້ຂຍາຍອອກໄປຢ່າງກວ້າງຂວາງ

ຄ.ສ. 1789 ທ່ານປີເຕີ ຄາທໄຣ້ (Peter Cartwright) ໄດ້ເຜີຍແຜ່ຂ່າວປະເສີດໃຫ້ແກ່ຄຣິສຈັກເມັດໂທດິສ ໂດຍໄດ້ຮັບການສນັບສນຸນຈາກສຳນັກພິມເມັດໂທດິສ (Methodist Publishing House) ແລະໄດ້ມີການຈັດຕັ້ງນັກເທສໝູນວຽນ (Circuit Riding Peacher) ເພື່ອສນັບສນຸນຄຣິສຈັກເມໂທດິສ ໃຫ້ມີການຜູກພັນເປັນອັນນຶ່ງອັນດຽວກັນໂດຍການສະເນີຂ່າວສານຄວາມຮູ້ ຄວາມເຂົ້າໃຈຕໍ່ກັນແລະກັນ ຊຶ່ງກໍໃຫ້ຄຣິສຈັກເມັດໂທດິສມີຄວາມເຂັ້ມແຂງຫລາຍ

ຄ.ສ. 1820 ພົບວ່າຄຣິສຈັກເມັດໂທດິສມີຄວາມເຂັ້ມແຂງຂຍາຍອອກໄປຢ່າງກ້ວາງຂວາງເທົ່າທຽມກັບຄຣິສຈັກບັບຕິສ ຊຶ່ງທັງເມັດໂທດິສແລະບັບຕິສໄດ້ເປັນຄະນະທີ່ໃຫຍ່ທີ່ສຸດໃນອເມຣິກາເວລານັ້ນ

ຄຳສອນຂອງຄຣິສຈັກເມໂທດິສມີອິດທິພົນໃນການພັທນາວັທນະທັມແລະການເມືອງໃນປະເທດອາເມຣິກາ ໂດຍການສນັບສນຸນໃຫ້ທຸກຄົນມີສິດທິເສຣີພາບຂອງຄວາມເປັນບຸກຄົນ (Human Right) ປັດຈຸບັນຄຣິສຈັກເມໂທດິສໄດ້ແຜ່ຂຍາຍໃນທົ່ວໂລກ ແລະເປັນຄະນະທີ່ໃຫຍ່ເປັນອັນດັບສອງໃນປະເທດອາເມຣິກາໂດຍມີນາມວ່າ The United Medthodist Churches

## 5. ຄຣິສຈັກຮ່ວມສະຫາຍ (Quakers)

ຄຳວ່າ "ຮ່ວມສະຫາຍ" ແປຕາມຕົວອັກສອນຈາກຄຳວ່າ "ແຄວ໊ກເກີ" ໝາຍເຖິງ "ສະຫາຍ" (friend) ແຕ່ວ່າເປັນທີ່ຮູ້ຈັກກັນໃນນາມ ແຄວ໊ກເກີ ນຳໂດຍທ່ານ ຈ໊ອດ ຟອກຊ໌ (George Fox) ຜູ້ເກີດໃນປີ 1624 ທີ່ປະກາດອັງກິດ ທ່ານຈ໊ອດ ແລະສະຫາຍມີຈຸດປະສົງອັນດຽວກັບພວກພຽວຣິຕັນ ຄືຕ້ອງການປ່ຽນແປງຄຣິສຈັກອັງກິດ ແລະແຍກຕົວອອກຈາກຄຣິສຈັກຄາທໍລິກ ທ່ານຍົກເລີກພິທີສົນທັງໝົດກະທັ່ງສົນບັບຕິສມາ ແລະພິທີຣະລຶກ ກໍບໍ່ຍອມຖືປະຕິບັດ ທ່ານບໍ່ຍອມຮັບຫລັກຂໍ້ເຊື່ອຂໍ້ຕົກລົງໃດ ໆ ຂອງຄຣິສຈັກຄາທໍລິກແລະຄຣິສຈັກອັງກິດ ຄຣິສຈັກຂອງທ່ານບໍ່ຍອມສາບານ ບໍ່ຍອມຂຶ້ນສານ ແລະບໍ່ຍອມເປັນທະຫານຮ່ວມການເສິກສົງຄາມໃດ ໆ ຄຣິສຈັກຂອງທ່ານບໍ່ມີການແຕ່ງຕັ້ງສາສນາຈານ ຖືວ່າຜູ້ເຊື່ອມີຄວາມສວ່າງພາຍໃນຕົວເອງ (Inner Light) ພວກນີ້ເອີ້ນຕົວເອງວ່າ **ຜູ້ຊອກຫາ** ຄື ຊອກຫາຄວາມສວ່າງ ເວລາປະຊຸມຈະນັ່ງຮຽງຮອບຢູ່ງຽບ ໆ ຣໍການດົນໃຈຈາກພຣະເຈົ້າ ແລ້ວຈະມີຜູ້ນຶ່ງຍືນຂຶ້ນເວົ້າ ໂດຍໃຫ້ຊາຍແລະຍິງມີສິດທິເທົ່າທຽມກັນ ພວກແຄ໊ວກເກີບໍ່ສົນໃຈສ້າງຕົວອາຄານຄຣິສຈັກໃຫຍ່ ພວກແຄວ໊ກເກີໄດ້ຮັບການຂົ່ມເຫງໃນອັງກິດ ທ່ານຈ໊ອດ ຟອກຊ໌ ຖືກຈຳຄຸກຫລາຍເທື່ອ ແລະເມື່ອອອກມາຈາກຄຸກກໍຕໍ່ສູ້ຣັຖບາລອັງກິດໃຫ້ປັບປຸງຄຸກໃຫ້ມີສະພາບດີຂຶ້ນ ເພາະວ່າໃນຄຸກມີຄວາມທາຣຸນ

ຜູ້ມີພຍາດຖືກຂັງຮວມກັນຄົນສບາຍດີ ທ່ານຈ໊ອດ ຟອກຊ໌ ເປັນຜູ້ກລ້າຫານບໍ່ຍ້ານຕາຍ ທ່ານປະກາດວ່າ ພ້ອມແລ້ວທີ່ຈະຕາຍເພື່ອຄວາມຈິງຂອງພຣະເຈົ້າ ທ່ານເທສນາວ່າພຣະເຈົ້າຈະລົງໂທດປະເທດອັງກິດ ເພາະວ່າຜູ້ນຳປະເທດອັງກິດບໍ່ໄດ້ເອົາຈິງເອົາຈັງກັບພຣະຄຳຂອງພຣະເຈົ້າ ມີແຕ່ການຖືພິທີສາສນາແຕ່ ເປືອກນອກ ເມື່ອກຸງລອນດອນຖືກໄຟໄຫມ້ 4 ວັນ 4 ຄືນຈົນພຣະວິຫານ ເຊັນ ພອລ (St. Paul) ຖືເຜົາໄຫມ້ເສັຽຫາຍຫມົດ ຫລາຍ ໆ ຄົນຍອມຮັບວ່າຄຳປະກາດຂອງພວກເຄວ໊ກເກີເປັນຈິງ ຫລັກຄຳ ສອນທີ່ສຳຄັນຂອງພວກເຄວ໊ກເກີ ຄື ຜູ້ເຊື່ອສາມາດຕິດຕໍ່ແລະມີສັມພັນທະພາບໂດຍຕົງກັບພຣະເຈົ້າໄດ້ ທ່ານຈ໊ອດ ຟອກຊ໌ ແລະສຫາຍເດີນທາງປະກາດເທສນາທັງອັງກິດແລະໄອຣແລນ (Ireland) ເຖິງ ເຣື້ອງຄວາມສວ່າງພາຍໃນຕົວ (Inner Light) ທ່ານຈ໊ອດ ຟອກຊ໌ຄືກັນທ່ານຈອນ ເວສເລ່ ບໍ່ໄດ້ ມີຈຸດປະສົງຕັ້ງຄະນະນິກາຍຂຶ້ນໃຫມ່ ແຕ່ວ່າຕ້ອງການນຳໃຫ້ຜູ້ເຊື່ອໄດ້ເຂົ້າເຖິງຊີວິດຝ່າຍວິນຍານແທ້ຈິງ ບໍ່ແມ່ນເຊື່ອແຕ່ປາກ ເຮັດແຕ່ພິທີ ໃນທີ່ສຸດການແຍກຕົວອອກໄດ້ກໍ່ໃຫ້ເປັນຄນະໃຫມ່ ຄື ເຄວ໊ກເກີ

ຄ.ສ. 1565 ຄະນະຮ່ວມສະຫາຍຫລື ເຄວ໊ກເກີໄດ້ເຂົ້າມາຕັ້ງຖິ່ນຖານໃນອາເມຣິກາໂດຍຍ້າ ນາງແອນ ອອສຕິນ (Ann Austin) ແລະຍ້ານາງແມຣີ ຟິສເຊີ (Mary Fisher) ທີ່ຣັຖເມຊາ ຈູເສດ (Messachusetts) ແຕ່ຖືກກ່າວຫາວ່າເປັນແມ່ມົດເລີຍຖືກສົ່ງກັບຄືນຍັງອັງກິດ ພວກເຄວ໊ກ ເກີເປັນທີ່ຣັງກຽດຂອງຄົນທົ່ວໄປ ແລະຖືກຂົ່ມເຫັງຕລອດມາ ຈົນກະທັ້ງພາຍຫລັງພົບວ່າ ມີພວກເຄວ໊ກເກີ ຊຸມນຸມຢູ່ຫລາຍບ່ອນ ໃນຣັຖໂຣດໄອແລນ (Rhode Island) ນິວຍອດ ນິວເຈີຊີ່ ແລະພົບຫລາຍ ທີ່ສຸດທີ່ຣັຖເພັນຊີວາເນັຽ ໂດຍການນຳພາຂອງທ່ານວິນລັຽມ ເພນ (William Penn) ຄະນະນີ້ບໍ່ ໄດ້ຂຍາຍອອກໄປກວ້າງໄກເຖິງທົ່ວໂລກ ແມ່ນວ່າໃນອາເມຣິກາປັດຈຸບັນພວກນີ້ກໍມີນ້ອຍລົງໄປເລື່ອຍ ໆ ຢ່າງໃດກໍຕາມຄວາມປາຖນາອັນສູງສຸດຂອງຄນະຮ່ວມສຫາຍນີ້ກໍຄືວ່າ ຕ້ອງການໃຫ້ຄຣິສຕຽນທຸກຄົນເຕີບ ໃຫຽ່ໃນຝ່າຍວິນຍານ ມີອິສຣະພາບແລະເຊື່ອຟັງພຣະສຸຣະສຽງຂອງພຣະເຈົ້າໂດຍຕົງ ອັນເປັນແສງ ສວ່າງຂອງພຣະຄຣິສທີ່ປາກົດຢູ່ພາຍໃນຈິດໃຈຂອງທຸກຄົນ ຂໍ້ພຣະຄັມພີທີ່ກຸ່ມນີ້ເນັ້ນຫນັກໃນການນມັສການ ຄື ໂຢຮັນ 4:24, 2 ກທ 3:17, 1 ກທ 14:40

## 6. ຄຣິສຈັກເພຣສໄບທີຣຽນ (The Presbyterian Churches)

ເຮົາຕ້ອງຍອມຮັບວ່າ ຄຣິສຈັກເພຣສໄບທີຣຽນເກີດຂຶ້ນຈາກຜົນຂອງການປະຕິຮູບຄຣິສຈັກຂອງ ທ່ານຈອນ ຄາລວິນ (John Calvin 1509-1564) ຜົນງານສຳຄັນຂອງທ່ານທີ່ເປັນຫນັງສືຫລັກ ຂໍ້ເຊື່ອ ແລະຫລັກການບໍຣິຫານຄຣິສຈັກ ມີອິດທິພົນຢ່າງຫລວງຫລາຍໃນການກໍ່ຕັ້ງຄຣິສຈັກໃນສັຕວັດທີ່ 16 ໂດຍສະເພາະຢ່າງຍິ່ງຫນັງສື "ສະຖາບັນສາສນາຄຣິສຕຽນ" (Institutes of the Christian Religion) ທີ່ທ່ານໄດ້ຂຽນຂຶ້ນ ໄດ້ເປີດໂອກາດໃຫ້ຜູ້ກໍ່ຕັ້ງຄຣິສຈັກໃນຍຸໂຣປໄດ້ພາກັນສຶກສາ ຄົ້ນຄ້ວທຳໃຫ້ເກີດແນວຄິດໃຫມ່ໃນການບໍຣິຫານຄຣິສຈັກ

ຄຣິສຈັກເພຣສໄບທີຣຽນເຂົ້າມາແຜ່ຫລາຍໃນອາເມຣິການັ້ນ ມີສະພາບຄືກັນກັບຄຣິສຈັກຂອງຄະ ນະອື່ນ ໆ ຄື ເກີດຈາກພວກຜູ້ທີ່ຍ້າຍເຂົ້າມາຕັ້ງຖິ່ນຖານໃນອາເມຣິກາມາຈາກ ຮອລແລນ ຝຣັ່ງເສດ ອັງກິດ ໂດຍສະເພາະຢ່າງຍິ່ງຈາກສກ໊ອດແລນ ອັນເປັນປະເທດທີ່ມີຄວາມເຂັ້ມແຂງ ແລະຖືວ່າ ຄຣິສຈັກ ເພຣສໄບທີຣຽນເປັນຄຣິສຈັກປະຈຳຊາດ

ຄ.ສ. 1611 ພົບວ່າສາສນາຈານອະເລັກຊາເດີ ໄວ໊ເທຄເກີ (Alexander Whitaker) ໄດ້ເປັນສິດຍາພິບາລທີ່ເວີຈີເນັຽ

ຄ.ສ. 1620 ພົບວ່າມີຄຣິສຈັກເພຣສໄບທີຣຽນຫລາຍແຫ່ງໃນນິວອິງແລນ ແລະທີ່ໄພລເມົ້າທ໌ (Plymouth)

ຄ.ສ. 1683 ທ່ານແຟຣນຊິສ ແມຄມີ (Francis Makemie) ໄດ້ຮັບກຽດແລະຖືກຮ້ອງວ່າ ເປັນບິດາແຫ່ງຄຣິສຈັກເພຣສໄບທີຣຽນໃນອເມຣິກາ (The Father of America Presbyterianism) ທ່ານເປັນນັກເທສແລະຮູ້ຈັກການຈັດຣະບຽບການປົກຄອງທີ່ດີທີ່ສຸດ ທ່ານໄດ້ຮວບຮວມແລະກໍ່ຕັ້ງອົງການຄຣິສຈັກເພຣສໄບທີຣຽນໃຫ້ເຂັ້ມແຂງ

ຄ.ສ. 1706 ຄຣິສຈັກເພຣສໄບທີຣຽນໄດ້ມີການປະຊຸມຫລວງທີ່ຟີລາເດລເຟັຽ ໂດຍຜູ້ແທນຈາກຣັຖຕ່າງ ໆ

ຄ.ສ. 1716 ພົບວ່າ ສມາຊິກຂອງຄຣິສຈັກເພຣສໄບທີຣຽນໄດ້ເພີ່ມຈຳນວນຫລາຍຂຶ້ນ ແລະໄດ້ມີການແບ່ງເຂດການປົກຄອງເຖິງ 4 ເຂດ

ຄ.ສ. 1729 ຄຣິສຈັກເພຣສໄບທີຣຽນໄດ້ມີການຮັບຮອງມັຕິໃນຫົວຂໍ້ທີ່ວ່າ ສາສນາຈານຂອງຄຣິສຈັກເພຣສໄບທີຣຽນທຸກທ່ານ ຕ້ອງປະກາດຄວາມເຊື່ອຂອງຕົນວ່າ ຍອມຮັບຫລັກຄວາມເຊື່ອເວສມິນສະເຕີ (Wesminster Confession of Faith and the Larger and Shorter Catechisms)

ຄ.ສ. 1728-1758 ຄຣິສຈັກເພຣສໄບທີຣຽນໄດ້ມີການແຕກແຍກອອກເປັນ 2 ຝ່າຍ ຄື ຝ່າຍຫົວເກົ່າ ແລະຝ່າຍຫົວໃຫມ່ ມາໃນປີ 1758 ທັງ 2 ຝ່າຍໄດ້ຮວມຕົວກັນໃຫມ່ໂດຍຖືເອົາຫລັກຂໍ້ເຊື່ອເວສມິນສະເຕີເປັນພື້ນຖານຄວາມເຊື່ອຂອງຄຣິສຈັກ

ຄ.ສ. 1790-1837 ສະມາຊິກຄຣິສຈັກເພຣສໄບທີຣຽນໄດ້ເພີ່ມພູນຂຶ້ນຫລາຍເຕີບ ເພາະເຫດວ່າ ມີການຟື້ນຟູຫລາຍ ມີການຫມຸນວຽນອາຈານໃຫ້ໄປຮັບໃຊ້ໃນຄຣິສຈັກຕ່າງ ໆ ອັນເປັນການເສີມສ້າງໃຫ້ຄຣິສຈັກເຂັ້ມແຂງຫລາຍຂຶ້ນ

ຄຣິສຈັກເພຣສໄບທີຣຽນໃຫ້ໂອກາດສັດຕຣີ ໄດ້ມີບົດບາດແລະສາມາດຮັບການເລືອກຕັ້ງໃຫ້ເປັນເຈົ້າຫນ້າທີ່ຫລືຜູ້ຮັບໃຊ້ຂອງຄຣິສຈັກ ແລະສາມາດຮັບການສະຖາປນາແຕ່ງຕັ້ງໃຫ້ເປັນສາສນາຈານຍິງເປັນມິຊຊັ່ນນາຣີໄປປະກາດໃນຕ່າງປະເທດ ຄຣິສຈັກເພຣສໄບທີຣຽນໄດ້ແຜ່ຂຍາຍໄປທົ່ວໂລກ ໂດຍມີບົດບາດຢ່າງລ່ວງຫລາຍໃນການກໍ່ຕັ້ງໂຮງຮຽນ ໂຮງພຍາບາລ ແລະເປັນຄຣິສຈັກທີ່ປະກອບໄປດ້ວຍສະມາຊິກທີ່ມີຄວາມຮູ້ແລະການສຶກສາສູງ

## 7. **ຄຣິສຈັກບັບຕິສ** (The Baptist Churches)

ມີຄົນກ່າວວ່າ ຮູບແບບການປົກຄອງຂອງຄຣິສຈັກບັບຕິສໄດ້ເກີດຂຶ້ນຕັ້ງແຕ່ສມັຍຂອງອັຄຣສາວົກໃນພຣະຄຣິສທັມໃຫມ່ ອັນເປັນຄຣິສຈັກທີ່ສົມບູນແບບ ຕັ້ງແຕ່ຍຸກແຣກກ່ອນທີ່ຄຣິສຈັກຄາທໍລິກຈະເກີດຂຶ້ນເສັຽອີກ ຄຣິສຈັກໃນສມັຍແຣກນັ້ນໄດ້ເກີດຂຶ້ນມາຕັ້ງແຕ່ສມັຍຂອງພຣະເຢຊູຄຣິສ ໂດຍທີ່ອັຄສາວົກຂອງພຣະອົງໄດ້ດຳເນີນວຽກງານສືບເນື່ອງຕໍ່ມາ ຕັ້ງແຕ່ຄຣິສຈັກໃນກຸງເຢຣູຊາເລັມ (ກິຈການບົດທີ 1-6) ຄຣິສຈັກທີ່ມີການປົກຄອງແບບອິສຣະນີ້ໄດ້ຂຍາຍອອກໄປຈົນເຖິງສມັຍຂອງເຈົ້າຊີວິດຄອນສະແຕນຕິນ ເຖິງແມ່ນວ່າບໍ່ໄດ້ເອີ້ນວ່າເປັນຄຣິສຈັກບັບຕິສກໍຕາມ ຄຣິສຈັກໃນເມືອງຕ່າງ ໆ ໄດ້ຖືກກໍ່ຕັ້ງຂຶ້ນໃນນາມຕ່າງ ໆ ກັນ ໂດຍມີຮູບແບບລັກສນະການປົກຄອງການດຳເນີນງານແລະຫລັກຄວາມເຊື່ອຕາມຢ່າງຄຣິສຈັກໃນສມັຍແຣກ ຮູບແບບການປົກຄອງຂອງຄຣິສຈັກຄາທໍລິກຫາກໍຈະເກີດຂຶ້ນພາຍຫລັງແລະຄ່ອຍ ໆ

ກົນກິນເອົາຮູບແບບການດຳເນີນງານ ການປົກຄອງແລະຄວາມເຊື່ອຂອງຄຣິສຈັກໃນສມັຍແຮກໃຫ້ລົບຈາງຫາຍໄປ ຈົນກະທັ່ງຄຣິສຈັກປະຕິຮູບໄດ້ເກີດຂຶ້ນເພາະວ່າຕ້ອງການປ່ຽນແປງແລະນຳເອົາຄຣິສຈັກໃຫ້ຫັນກັບຄືນໄປສູ່ຮູບແບບໃນສມັຍແຮກ

ຄຣິສຈັກບັບຕິສທີ່ເຮົາຮູ້ຈັກ ແລະປາກົດຢູ່ໃນຫລາຍ ໆ ປະເທດນັ້ນ ເປັນຜົນເກີດມາຈາກຄຣິສຈັກໃນປະເທດອັງກິດ ໂດຍຊາວອັງກິດທີ່ອົພຍົພໄປຕັ້ງຖິ່ນຖານໃນປະເທດຮອລແລນໃນຣາວ ຄ.ສ. 1608 ຜູ້ນຳໃນເວລານັ້ນ ຄື ທ່ານ ໂຣບິນສັນ (Robinson) ແລະທ່ານ ສມິທ (Smyth) ໄດ້ກໍ່ຕັ້ງຄຣິສຈັກບັບຕິສຂຶ້ນແຫ່ງແຮກໃນຮອນແລນ

ຄ.ສ. 1611 ທ່ານໂທມັສ ເຮລວິສ (Thomas Helwys) ແລະສະມາຊິກສ່ວນນຶ່ງຂອງຄຣິສຈັກທີ່ທ່ານສມິທໄດ້ກໍ່ຕັ້ງຂຶ້ນ ບໍ່ເຫັນດ້ວຍທີ່ຈະຮວມຕົວກັບຄນະເມນໂນໄນ້ (Mennonite) ຈຶ່ງພາກັນເມືອອັງກິດແລະໄດ້ຕັ້ງຄຣິສຈັກບັບຕິສແຫ່ງແຮກໃນກຸງລອນດອນ

ຄຣິສຈັກບັບຕິສທີ່ເກີດຂຶ້ນໃນອາເມຣິການັ້ນ ຄວນຈະກ່າວໄດ້ວ່າ ເກີດຂຶ້ນທີ່ ຣັຖໂຣດໄອແລນດ໌ (Rhode Island) ໂດຍການນຳພາຂອງທ່ານ ໂຣເຈີ ວິລລຽມ (Roger William) ໃນປີ ຄ.ສ.1639 ຫາກແຕ່ວ່າໃນປີດຽວກັນນັ້ນ ທ່ານຈອນ ຄລ໊າກ (John Clarke) ໄດ້ກໍ່ຕັ້ງຄຣິສຈັກເຟີສບັບຕິສ (First Baptist Church) ຂຶ້ນທີ່ ນິວພອຕ (New Port) ໃນຣັຖດຽວກັນ ເຖິງຢ່າງໃດກໍຕາມ ທ່ານໂຣເຈີ ໄດ້ມີບົດບາດຫລາຍໃນການເປັນຜູ້ນຳໃຫ້ຄະນະບັບຕິສດ໌ເກີດຄວາມເຂັ້ມແຂງຂຶ້ນໃນອາເມຣິກາ

ຄຣິສຈັກບັບຕິສນັ້ນມີຢູ່ທົ່ວໂລກ ໂດຍມີການປົກຄອງເປັນອິສຣະຂອງໃຜລາວ ແລະໄດ້ແຍກອອກໄປເປັນອົງການໃຫຍ່ໃນນາມຕ່າງ ໆ ກັນ ຕົວຢ່າງ

1. Primitive Baptist
2. United Baptist
3. General Baptist
4. Free Baptist

ແຕ່ລະຫນ່ວຍງານນັ້ນມີຄວາມເຂັ້ມແຂງ ແລະດຳເນີນງານເປັນອິສຣະຕໍ່ກັນ ໃນອາເມຣິກາມີບັບຕິສໃຫຍ່ ໆ ຊຶ່ງຮ່ວມຢູ່ດ້ວຍ ຄື ອາເມຣິກັນບັບຕິສ (Northern) ບັບຕິສພາກໃຕ້ (Southern Baptist) ເນຊັ່ນແນລແບບຕິສ (National Baptist ເປັນອາຟາຣິກັນອາເມຣິກັນ,ຄົນຜິວດຳ) ແຕ່ລະຫນ່ວຍດຳເນີນງານຢ່າງເຂັ້ມແຂງ ເມື່ອຮ່ວມພລັງເຂົ້າດ້ວຍກັນແລ້ວໄດ້ເກີດ **ບັບຕິສໂລກສັມພັນ** (Baptist World Alliance) ມີສຳນັກງານໃຫຍ່ປະຈຳຢູ່ທີ່ວໍຊິງຕັນ ດີຊີ ບັບຕິສໂລກສັມພັນໄດ້ຈັດໃຫ້ມີການປະຊຸມຫລວງທຸກ ໆ 5 ປີ ໂດຍເລືອກເອົາປະເທດໃດປະເທດນຶ່ງເປັນເຈົ້າພາບຫມູນວຽນປ່ຽນກັນໄປ ການປະຊຸມເທື່ອທີ່ 1 ທີ່ ຄ.ສ.1905 ທີ່ກຸງລອນດອນ (London) ປະເທດອັງກິດ ເທື່ອທີ່ 16 ຄ.ສ.1990 ທີ່ ໂຊລ໌ (Soul) ປະເທດເກົາຫລີ

ຈຸດເດັ່ນຂອງຄນະບັບຕິສຄື ການມີເສຣີພາບ (Liberty) ແລະຄວາມເປັນອິສຣະພາບໃນການປົກຄອງ ໂດຍທີ່ຄຣິສຈັກທ້ອງຖິ່ນມີສິດທິເສຣີພາບອິສຣະໃນການປົກຄອງບໍຣິຫານຄຣິສຈັກຂອງຕົນເອງ

# ບົດທີ 16

# ຂ່າວປະເສີດຂອງພຣະເຢຊູຄຣິສ ໄປເຖິງປະເທດຈີນ

ປະເທດຈີນ ເປັນປະເທດນຶ່ງໃນທວີປເອເຊັຽ ທີ່ເກີດຂຶ້ນມາແຕ່ໂບຮານ ເປັນປະເທດທີ່ມີອຳນາດ ແລະມີປະຊາຊົນຫຼາຍກວ່າປະເທດອື່ນ ໆ ໃນໂລກ ເປັນປະເທດທີ່ມີຄວາມຈະເຣີນໃນດ້ານວັທນະທັມແລະ ສາສນາມາເປັນເວລາພັນປີ ປະຊາຊົນຊາວຈີນປະກອບດ້ວຍຄົນຫລາຍ ໆ ເຜົ່າ ມີພາສາພື້ນເມືອງທີ່ແຕກ ຕ່າງກັນເປັນຮ້ອຍພາສາ ຫາກແຕ່ວ່າສິ່ງນຶ່ງທີ່ເຮັດໃຫ້ປະຊາຊົນຈີນສາມາດເຂົ້າໃຈກັນກໍໂດຍການໃຊ້ ພາສາຈີນກາງ (Mandarin) ເປັນພາສາຣາຊການ

ທ່ານ ໂຈເຊຟ ຈັດສັນ ເທເລີ (Joseph Judson Taylor) ໄດ້ກ່າວໄວ້ໃນຫນັງສືຂອງ ທ່ານຄື Chinese Mission ຫນ້າທີ່ 17 ທ່ານໄດ້ອ້າງອີງເຖິງພຣະທັມ ເອຊາຢາ 49:12 ວ່າ "ໄພ່ພົນຂອງເຮົາຈະມາແຕ່ໄກ ຄືມາຈາກທາງເຫນືອ ທາງຕາເວັນຕົກ ແລະຈາກເມືອງຊີເອເນ" ຄຳ ວ່າ 'ຊີເອເນ' ໃນພຣະຄັມພີສະບັບພາສາເຮັບເຣີຕົ້ນເດີມໃຊ້ຄຳວ່າ Sinim ຄຳວ່າ Sinim ນັກ ໂບຮານຄະດີອ້າງອີງວ່າເປັນປະເທດຈີນ ແລະຍັງມີເອກສານໂບຮານກ່າວອ້າງອີງເຖິງການຄ້າຂາຍ ຣະຫວ່າງປະເທດ Sinae ຫລືບາງເທື່ອໃຊ້ຄຳວ່າ ດິນແດນ Seres ຊຶ່ງຄຳນີ້ມີຄວາມຫມາຍເຖິງ ເສັ້ນໄຫມ ຫລື ຜ້າໄຫມ ປະເທດຈີນໄດ້ຮັບນາມແຕ່ໂບຮານວ່າເປັນດິນແດນແຫ່ງຜ້າໄຫມ ໃນສມັຍໂບ ຮານພວກອາຫຣັບເອີ້ນປະເທດຈີນວ່າ Sin ຫລື Tchin ຊຶ່ງເປັນຄຳທີ່ເຮົາຂຽນໃນປັດຈຸບັນວ່າ Chin ສຳລັບ China ທີ່ແປວ່າປະເທດຈີນ ດັ່ງນັ້ນແລ້ວປະເທດຈີນຈຶ່ງເປັນປະເທດເກົ່າໂບຮານ ຫາກແຕ່ ວ່າເຮົາບໍ່ສາມາດສືບຄົ້ນຊອກໄປເຖິງກ່ອນຫນ້າຍຸກປວັດສາດໄດ້ ວ່າມີຄວາມກ່ຽວຂ້ອງກັບເຣື້ອງຣາວໃນ ຕົ້ນເດີມທີ່ພົວພັນກັບບັນພະບຸຣຸດໃນພຣະຄັມພີ ມີຜູ້ອ້າງອີງວ່າ ຊາວຈີນເປັນລູກຫລານຂອງໂນອາທີ່ສືບຕະ ກູລຕໍ່ຈາກທ່ານເຊມ (ປຖກ 6:9) ອັນເປັນເຣື່ອງຣາວທີ່ຫນ້າຄົ້ນຄວ້າສຶກສາຫາຄວາມເຂົ້າໃຈກັນຕໍ່ໄປ

**ຂ່າວປະເສີດຂອງພຣະເຢຊູຄຣິສໄດ້ເຂົ້າໄປເຖິງປະເທດຈີນ**

ຕັ້ງແຕ່ຣາວ ຄ.ສ.505 ຫລືສັຕວັດທີ 6 ພວກເນສໂຕຣຽນ (Nestorians) ຊຶ່ງເປັນ ຄຣິສຕຽນຊາວຊີເຣັຽໄດ້ເດີນທາງຂ້າມທະເລຊາຍ ແລະຂ້າມພູທີ່ສູງໃຫຍ່ໄປເຖິງປະເທດຈີນ ເພື່ອເຜີຍ ແຜ່ຂ່າວປະເສີດຂອງພຣະເຢຊູຄຣິສ ຈັກກະພັດຈີນໃນເວລານັ້ນໄດ້ຕ້ອນຮັບເອົາມິຊຊັນນາຣີໄວ້ເປັນຢ່າງດີ ມີຊາວຈີນຈຳນວນຫລາຍມາຮັບເຊື່ອ ພາຍຫລັງຕໍ່ມາປະມານ 800 ປີ ນັກປວັດສາດໄດ້ສືບຄົ້ນພົບວ່າ ຂ່າວປະເສີດໄດ້ຖືກປະກາດຕໍ່ເນື່ອງກັນມາຕັ້ງແຕ່ມິຊຊັນນາຣີຣຸ່ນທຳອິດ ຄືພວກຄຣິສຕຽນເນສໂຕຣຽນ ຊາວຈີນຈຳນວນຫລາຍໄດ້ຮັບເຊື່ອຕັ້ງແຕ່ຕອນຕົ້ນສັຕວັດທີ 6 ແຕ່ວ່າຄຣິສຕຽນຊາວຈີນບໍ່ໄດ້ທຳການປະ ກາດເຜີຍແຜ່ຄວາມເຊື່ອຕໍ່ ຫລືບໍ່ໄດ້ຂຍາຍຄຣິສຈັກອອກໄປ ດັ່ງນັ້ນຄຣິສຈັກຈີນໃນຣຸ່ນທຳອິດນີ້ຈຶ່ງໄດ້ຖືກຈືດ ຈາງສູນຫາຍໄປ



**Nestorian monument at Xian (on right) commemorating the introduction of Christianity in A.D. 635**

ຄ.ສ. 1625 ໄດ້ພົບແຜ່ນຫີນຈາຣຶກທີ່ເມືອງ ຊຽນຟູ (Sian Fu) ໃນມົນທົນເຊັ່ງສີ ແຜ່ນຫີນນີ້ໄດ້ຂຽນອ້າງເຖິງສາສນາຄຣິສຕຽນວ່າໄດ້ເລີ້ມຕົ້ນໃນ ຄ.ສ. 635 ໄດ້ຈາຣຶກໄວ້ວ່າໃນປີ ຄ.ສ. 781 ຄຣິສຕຽນຊາວຈີນໄດ້ເກີດການຟື້ນຟູໃຈ ມີຊາວຈີນມາຮັບເຊື່ອເປັນພົນລະເມືອງ ຄົນ ແລະມີຜົນງານປະສົບຄວາມສໍາເຣັດ ໂດຍການນໍາພາຄຣິສຈັກຂອງພວກມິຊຊັນນາຣີຊາວຊີເຣັຽ ແຜ່ນຫີນນີ້ຍັງຄົງເກັບຮັກສາໄວ້ ແລະໄດ້ຕັ້ງສະແດງຢູ່ທີ່ພິພິທພັນເມືອງຊຽນຟູ ຈີນເຖິງປັດຈຸບັນ ດັ່ງຮູບທີ່ປາກົດໃຫ້ເຫັນ

ຣາວ ຄ.ສ.1292-1294 ຈັກກະພັດຈີນຊາວມົງໂກລຽນ ໄດ້ໃຫ້ການຕ້ອນຮັບມິຊຊັນນາຣີຊາວອີຕາລີ ຊື່ ຈອນ ເດ ມອນເທ ໂຄວີໂນ (John de Monte Corvino) ທ່ານເດີນທາງອ້ອມມາຈາກປະເທດອິນເດັຽ ເພື່ອປະກາດຂ່າວປະເສີດແກ່ຊາວຈີນແລະເກີດຜົນຫຼາຍ ມີຊາວຈີນຫຼາຍພັນຄົນຮັບບັບຕິສມາໄດ້ມີການແປພຣະຄັມພີໃຫມ່ບາງຕອນ ແລະບົດເພັງສັນລະເສີນເປັນພາສາຈີນ ຄຣິສຈັກໄດ້ຖືກປູກສ້າງຂຶ້ນ ມີການເຕົ້າໂຮມຊຸມນຸມກັນນມັສການພຣະເຈົ້າ ແຕ່ວ່າຫນ້າເສັຍໃຈຫລາຍເພາະວ່າເມື່ອມາຮອດປີ 1368 ຈັກກະພັດຣາຊວົງມິງໄດ້ຂຶ້ນຄອງບັນລັງ ແລະບໍ່ໄວ້ວາງໃຈຊາວຕ່າງຊາດ ໄດ້ທໍາການຂົ່ມເຫັງຄຣິສຕຽນຊາວຈີນ ບໍ່ໃຫ້ມີການປະກາດສາສນາຕ່າງຊາດອີກຕໍ່ໄປ ຫລັງຈາກນັ້ນມາ ຄຣິສສາສນາບໍ່ໄດ້ຮັບອະນຸຍາດໃຫ້ຖືກກ່າວເຖິງອີກໃນປະເທດຈີນເປັນເວລານານເຖິງ 200 ປີ

ຄ.ສ. 1550 ກຸ່ມເຢຊູອິດຂອງຄຣິສຈັກຄາທໍລິກໂດຍການນໍາພາຂອງທ່ານແຟນຊິສ ເອກຊາເວັຍ (Francis Xavier) ໄດ້ເຂົ້າໄປເຜີຍແຜ່ຂ່າວປະເສີດໃນປະເທດຈີນ ແຕ່ວ່າປະກາດຢູ່ບໍ່ນານເນື່ອງຈາກທ່ານແຟນຊິສເສັຽຊີວິດໃນປີ 1552

ຄ.ສ. 1580 ມີນັກບວດຄາທໍລິກຜູ້ມີນາມວ່າ ເມທທີໂອ ຣິກຊີ (Matteo Ricci) ແລະສຫາຍອີກຜູ້ນຶ່ງຊື່ໄມເຄິລ ຣັກຈີໂຣ (Micheal Ruggiero)ທີ່ເດີນທາງມາຈາກມາເກົາ (Macao) ທັງສອງທ່ານແຕ່ງກາຍຄືກັນກັບພຣະຂອງສາສນາພຸດຈີນ ໄດ້ເດີນທາງທ່ອງທ່ຽວໄປປະກາດຂ່າວປະເສີດຂອງພຣະເຢຊູຄຣິສທົ່ວປະເທດຈີນ ມີຜູ້ຕັດສິນໃຈຕິດຕາມທ່ານເປັນຈໍານວນຫລາຍ ມີການກໍ່ສ້າງຕຶວອາ

ຄາບຄຣິສຈັກຄາທໍລິກຂຶ້ນ ແລະຜູ້ເຊື່ອໄດ້ຮ່ວມກັນຢູ່ເປັນໝູ່ບ້ານຄຣິສຕຽນ ແຕ່ວ່າທ່ານທັງສອງຕ້ອງຖືກໂທດເຖິງຕາຍໂດຍຄຳສັ່ງຈາກທາງຣາຊການຈີນ

ມິຊຊັ່ນນາຣີ ກຸ່ມເຢຊູອິດ ໄດ້ເຂົ້າໄປເຜີຍແຜ່ຂ່າວປະເສີດໃນປະເທດຈີນອີກ ມິຊຊັ່ນນາຣີເຫຼົ່ານີ້ຍອມໃຫ້ຊາວຈີນທີ່ຫັນມາເປັນຄາທໍລິກ ແຕ່ຍັງຄົງກັບຄືນໄປຖືຮັກສາຮີດຄອງເດີມ ແລະເຊັ່ນໄຫວ້ບັນພະບູຣຸດດັ່ງເດີມໄດ້ ເຮັດໃຫ້ຄຣິສຈັກບໍ່ມີຄວາມເຂັ້ມແຂງ ມິຊຊັ່ນນາຣີກຸ່ມແຟນຊິສກັນ ແລະກຸ່ມໂດມີນີກັນທີ່ທຳການປະກາດຢູ່ໃນເວລານັ້ນບໍ່ເຫັນນຳກັບກຸ່ມເຢຊູອິດທີ່ຄຣິສຕຽນຈີນຖືສອງທາງ ໃນທີ່ສຸດຄວາມແຕກແຍກນີ້ໄດ້ໄປເຖິງກຸງໂຣມ ສັນຕະປາປາໄດ້ອອກຄຳສັ່ງວ່າບໍ່ໃຫ້ມີການຖືສອງທາງ ເຮັດໃຫ້ຄຣິສຕຽນຈີນຜິດໃຈກັນຢ່າງໃຫຍ່ ເຖິງຢ່າງໃດກໍຕາມ ຊາວຕ່າງຊາດແລະພວກມິຊຊັ່ນນາຣີໃນເວລານັ້ນທີ່ມີຄວາມຮູ້ຫລາຍດ້ານ ໂດຍສະເພາະດ້ານການເມືອງການປົກຄອງໄດ້ມີຊື່ສຽງເຖິງກຸງປັກກິ່ງ (Peking) ຄວາມສາມາດທາງດ້ານການເມືອງນີ້ເອງ ໄດ້ມີໂອກາດເຂົ້າໄປພົວພັນໃຫ້ຄຳແນະນຳກ່ຽວກັບການປົກຄອງໃນເມືອງຫລວງແລະໃນຣາຊວັງຈີນ ເຮັດໃຫ້ຂ້າຣາຊການຈີນບາງພວກບໍ່ມັກ ເພາະຢ້ານວ່າປະເທດຈີນອາດຖືກຢຶດຄອງ ດັ່ງນັ້ນໃນຣາວສັຕວັດທີ 18 ພວກຂ້າຣາຊການຈີນທີ່ບໍ່ພໍໃຈພວກຊາວຕ່າງຊາດຮວມໄປເຖິງມິຊຊັ່ນນາຣີດ້ວຍ ເພາະຢ້ານວ່າຈະເກີດການແຊກແຊງທາງການເມືອງ ຈຶ່ງໄດ້ເກີດການຕໍ່ຕ້ານຂັບໄລ່ທຳລາຍລ້າງຄຣິສຈັກຄາທໍລິກທົ່ວປະເທດຈີນ ເຮັດໃຫ້ຄຣິສຕຽນຈີນຕ້ອງຮັບການຂົ່ມເຫັງ ແລະມີຈຳນວນຫລາຍທີ່ປະຖິ້ມຄຣິສສາສນາເພາະຢ້ານຖືກທຳຮ້າຍ ຫລັງຈາກເຫດການເຫລົ່ານີ້ສະງົບລົງ ພວກຄາທໍລິກຍັງຄົງປະກາດຂ່າວປະເສີດຕໍ່ໄປບໍ່ໄດ້ຂາດເຖິງແມ່ນວ່າໃນ ຄ.ສ. 1724 ໄດ້ມີຣາຊໂອງການຢ່າງເປັນທາງການສັ່ງໃຫ້ມິຊຊັ່ນນາຣີ ແລະຊາວຕ່າງຊາດທັງໝົດອອກຈາກປະເທດຈີນຢ່າງເປັນທາງການ ແຕ່ວ່າຄຣິສຈັກຄາທໍລິກຍັງຄົງເຜີຍແຜ່ຕໍ່ໄປຢ່າງມິດ ໆ ຈົນຮອດແຂວງມົງໂກລັຽ ແລະຮອດດິນແດນທິເບດ (Tibet)

**ມິຊັນນາຣີ ນິກາຍໂປເຕັສແຕນເຂົ້າສູ່ປະເທດຈີນ**

ໃນສັຕວັດທີ່ 18 ມິຊຊັ່ນນາຣີຈາກຮອນແລນ (Halland) ໄດ້ພຍາຍາມເຂົ້າໄປປະກາດຂ່າວປະເສີດໃນປະເທດຈີນ ແຕ່ເຂົ້າບໍ່ໄດ້ຈຶ່ງໄດ້ຕັ້ງສຳນັກງານປະກາດຢູ່ທີ່ເກາະໄຕ້ຫວັນ (Taiwan) ສ່ວນມິຊຊັ່ນນາຣີນິກາຍອື່ນ ໆ ໄດ້ຕັ້ງສຳນັກງານທີ່ເກາະມາເກົ໊າ (Macao)

ຄ.ສ. 1807- 1834 ທ່ານໂຣເບີດ ມໍຣິສສັນ (Robert Morrisson) ໄດ້ເຂົ້າໄປຮັບໃຊ້ໃນປະເທດຈີນ ໂດຍອົງການສົ່ງມິຊັນນາຣີແຫ່ງກຸງລອນດອນ (London Missionary Society) ທ່ານໂຣເບີດ ມໍຣິສສັນ ມາຮອດມົນທົນກວາງຕຸ້ງ ແຕ່ທ່ານໄດ້ຖືກປະຕິເສດແລະບໍ່ຍອມໃຫ້ເຂົ້າປະເທດຈີນເພາະບໍຣິສັດອັງກິດອິນເດັຽ ແລະພວກເຢຊູອິດໄດ້ຕໍ່ຕ້ານທ່ານ ເປັນເຫດໃຫ້ທ່ານຕ້ອງເກັບຕົວອາສັຍຢູ່ໃນໂຮງເກັບສິນຄ້າຂອງຊາວອາເມຣິກັນທີ່ກວາງຕຸ້ງ ແລະແຕ່ງກາຍຄືກັນກັບຄົນຈີນ ທ່ານຖືກບັງຄັບບໍ່ໃຫ້ອອກນອກສຖານທີ່ ທ່ານໄດ້ຖືເອົາໂອກາດນີ້ຮຽນພາສາຈີນດ້ວຍຕົນເອງ ບໍ່ນານຕໍ່ມາທ່ານໄດ້ຖືກບັງຄັບໃຫ້ໄປຢູ່ເກາະມາເກົ໊າ (Macao) ອັນເປັນເກາະຊາວຈີນທີ່ຢູ່ໃຕ້ການປົກຄອງຂອງໂປຕຸເກສມາແຕ່ ປີ ຄ.ສ. 1557 ທ່ານໃຊ້ເວລາພຽງສອງປີກໍສາມາດຮູ້ຈັກໃຊ້ພາສາຈີນໄດ້ຢ່າງດີ ແລະໄດ້ສະມັກເຂົ້າເຮັດການເປັນນາຍລ່າມພາສາໃຫ້ແກ່ບໍຣິສັດອິນເດັຽຕາວັນອອກ ການອົດທົນຂອງທ່ານມໍຣິສສັນໄດ້ເປີດໂອກາດໃຫ້ທ່ານໄດ້ຮັບເງິນເດືອນຈາກການເປັນນາຍພາສາ ແລະມີສິດຢູ່ໃນປະເທດຈີນໄດ້ ຄວາມສາມາດຂອງທ່ານໃນການເປັນຜູ້ແປພາສາເຮັດໃຫ້ທ່ານມໍຣິສັນມີຄວາມຮູ້ໃນພາສາຈີນຢ່າງເລິກຊຶ້ງ ທ່ານໄດ້ແປພຣະຄັມ

ພີໃໝ່ສຳເຣັດໃນ ຄ.ສ.1813 ນັບຕັ້ງແຕ່ເວລາທີ່ທ່ານມາຮອດປະເທດຈີນເປັນເວລາເຈັດປີ ທ່ານຍັງບໍ່ມີໂອກາດໄດ້ປະກາດຂ່າວປະເສີດຂອງພຣະເຢຊູຄຣິສ ຈົນຮອດ ຄ.ສ. 1813 ນີ້ເອງ ທ່ານໄດ້ໃຫ້ບັບຕິສມາແກ່ຊາວຈີນ ມີນາມວ່າ ໄຕ້ອາໂກ (Tsai A-Ko) ເປັນຜູ້ທຳອິດ ໃນທີ່ສຸດພຣະຄັມພີທັງ 66 ເຫລັ້ມໄດ້ຖືກແປສຳເຣັດໃນປີ ຄ.ສ.1818 ໂດຍຄວາມຊ່ວຍເຫລືອຂອງທ່ານວິລລັຽມ ມິລນີ (William Milne) ນອກຈາກການແປພຣະຄັມພີແລ້ວທ່ານຍັງໄດ້ຈັດພິມໜັງສືໄວຍາກອນຈີນ ແລະວັຈນານຸກົມຈີນທີ່ມີຄວາມຍາວເຖິງ 4500 ໜ້າສຳເຣັດ ນັບວ່າເປັນຜົນງານທີ່ມີປະໂຍດຢ່າງຫລວງຫລາຍ

ຄ.ສ.1824 ທ່ານມໍຣິສັນໄດ້ຄືນເມືອປະເທດອັງກິດ ທ່ານໄດ້ຮັບການຍ້ອງຍໍຈາກເຈົ້າຊີວິດອັງກິດແລະຈາກຄຣິສຈັກທັງຫຼາຍວ່າເປັນຜູ້ທີ່ຍອມເສັຽສຣະຊີວິດໃນການຮັບໃຊ້ພຣະເຈົ້າທີ່ປະເທດຈີນ ທ່ານໄດ້ເດີນທາງໄປປະເທດຈີນອີກໃນປີ ຄ.ສ.1826 ທ່ານໄດ້ປະກາດຂ່າວປະເສີດຂອງພຣະເຢຊູຄຣິສຈົນກະທັ້ງຕາຍໃນ ຄ.ສ.1834 ທ່ານໃຊ້ເວລາ 27 ປີ ຮັບໃຊ້ພຣະເຈົ້າໃນປະເທດຈີນຢ່າງຍາກລຳບາກທີ່ສຸດໂດຍບໍ່ຍອມທໍ້ຖອຍ ເຖິງແມ່ນວ່າມີຊາວຈີນພຽງ ສິບປາຍຄົນມາຮັບເຊື່ອ ແລະບໍ່ໄດ້ຂຍາຍຄຣິສຈັກອອກໄປກວ້າງຂວາງແຕ່ຜົນງານການຂຽນ ແລະການພິມພຣະຄັມພີລວມເຖິງວັຈນານຸກົມພາສາຈີນໄດ້ວາງພື້ນຖານອັນສຳຄັນຍິ່ງແກ່ມິຊຊັນນາຣີພວກຫຼັງ ໆ ຕໍ່ມາ ທ່ານຈາລຶກໄວ້ໃນພຣະຄັມພີພາສາຈີນຂອງທ່ານວ່າ ແມ່ນຂ້າພະເຈົ້າຕາຍໄປແລ້ວ ແຕ່ວ່າຂ້າພະເຈົ້າຍັງຄົງເວົ້າພຣະຄຳຂອງພຣະເຈົ້າຢູ່

**ທ່ານວິລລັຽມ ມິລນີ** (William Milne) ໄດ້ຮັບໃຊ້ພຣະເຈົ້າໃນປະເທດຈີນຕັ້ງແຕ່ປີ ຄ.ສ. 1813 ທ່ານເປັນຜູ້ແລກທີ່ເຂົ້າຮ່ວມງານການປະກາດກັບທ່ານມໍຣິສັນ ແຕ່ວ່າພາຍຫລັງຕໍ່ມາໄດ້ເດີນທາງໄປຍັງມາລັກກາ (Malacca, ເມືອງທ່າເຮືອທີ່ສຳຄັນທາງຕາເວັນຕົກສ່ຽງໃຕ້ຂອງແຫຼມມາລາຍາຊຶ່ງປັດຈຸບັນເປັນປະເທດມາເລເຊັຽ) ທ່ານໄດ້ສ້າງຜົນງານດີເດັ່ນທາງດ້ານການສຶກສາ ຄືກໍ່ຕັ້ງວິທຍາລັຍແອງໂກຈີນ (Anglo-Chinese Collage) ທີ່ສອນພາສາອັງກິດແລະພາສາຈີນ ທ່ານໄດ້ກໍ່ຕັ້ງໂຮງພິມໃນມາລັກກາແລະໃນອິນໂດເນເຊັຽ ທ່ານເປັນອາຈານທີ່ສອນໃນວິທຍາລັຍແລະເທສນາຮວມທັງແປພຣະຄັມພີ ແລະພິມໜັງສືຄຣິສຕຽນຫລາຍປຶ້ມ ຜົນງານຂອງທ່ານໄດ້ເປີດໂອກາດໃນການນຳເອົາຂ່າວປະເສີດເຖິງປະເທດອື່ນ ໆ ໃນອິນໂດຈີນ ຕົວຢ່າງ ມາເລເຊັຽ ພະມ້າ ໄທຍ ແລະລາວ ນອກເໜືອຈາກທ່ານວິລລັຽມແລ້ວຍັງມີມິຊຊັ່ນນາຣີອື່ນ ໆ ເຂົ້າຮ່ວມການປະກາດຂ່າວປະເສີດ ດັ່ງນີ້

**ທ່ານ ຄາຣ໌ລ ກັສລາຟ** (Karl Gatzlaff) ເປັນມິຊັ່ນນາຣີຈາກປະເທດເນເທີແລນ ໄດ້ຮ່ວມງານກັບທ່ານມໍຣິສັນ ແລະທ່ານມິລນີ ເປັນນາຍແປພາສາ ແລະເປັນນາຍໝໍຜ່າຕັດ ທ່ານມັກແຈກປຶ້ມພຣະຄັມພີ ທ່ານຖືກຫິນຂວ້າງແລະຖືກຕຳຣວດຈີນໄລ່ຈັບຫລາຍເທື່ອ ເພາະເຫດວ່າຣັຖບານແລະປະຊາຊົນຈີນຊັງມິຊຊັ່ນນາຣີແລະພວກຄຣິສຕຽນ ແຕ່ທ່ານກໍໄດ້ຊ່ວຍເຫລືອປະເທດຈີນໃນດ້ານການຄ້າຂາຍກັບຊາວຕ່າງຊາດອັນເປັນປໂຍດຢ່າງຫລວງຫລາຍຕໍ່ປະເທດຈີນ

**ມິຊຊັ່ນນາຣີຈາກ ອາເມຣິກັນບອດ** (American Board) ຄື

**ທ່ານອີຊີ ບຣິດຈແມນ** (E.C.Bridgman) ແລະ**ທ່ານເດວິດ ອະເບລ** (David Abeel) ທັງສອງທ່ານໄດ້ໄປເຖິງປະເທດຈີນໃນ ຄ.ສ.1829 ແລະໄດ້ຂຽນໜັງສືຄຣິສຕຽນທີ່ມີຊື່ສຽງຫຼາຍເຫຼັ້ມ

**ທ່ານເອສ ເວລ ວິລລັຽມ** (Dr. S. Wells Williams) ໄດ້ເຂົ້າມາຮ່ວມງານໃນ ຄ.ສ. 1833 ໂດຍຕັ້ງກຸ່ມສຳນັກພິມໜັງສື ທ່ານໄດ້ຊ່ວຍພິມວັນນະຄະດີແລະປວັດສາດຂອງຊາດຈີນ ການສຶກສາພາສາຈີນໄດ້ເຮັດໃຫ້ທ່ານສາມາດທຳໜ້າທີ່ການທູດແກ່ໃຫ້ປະເທດຈີນໃນການຕິດຕໍ່ກັບຊາວຕ່າງຊາດຂໍ້ຂຽນຂອງທ່ານໃນໜັງສື **ຣາຊອານາຈັກກາງ** ຍັງຄົງເປັນໜັງສືອ້າງອີງທີ່ມີມາຕຖານໃນການປົກຄອງ

ຂອງຣາຊອານາຈັກຈີນ ຈີນຮອດເຖິງເວລາພວກຄອມມິວນິສ໌ໄດ້ປ່ຽນຣະບອບການປົກຄອງ

**ທ່ານປີເຕີ້ ພາກເກີ** (Peter Parker) ເປັນນາຍໝໍມິຊັນນາຣີທີ່ໄປເຖິງປະເທດຈີນໃນ ຄ.ສ.1834 ທ່ານໄດ້ກໍ່ຕັ້ງໂຮງໝໍທີ່ມີນທົນກວາງຕຸ້ງ (Hospital at Canton) ອັນເປັນສຖາບັນດ້ານການແພດແຫ່ງແລກໃນປະເທດຈີນ ແລະໄດ້ນໍາພາໃຫ້ມິຊຊັນນາຣີຜູ້ເປັນນາຍແພດຈໍານວນຫຼາຍເຂົ້າສູ່ປະເທດຈີນ ຄວາມສາມາດຂອງທ່ານໄດ້ຊ່ວຍໃຫ້ຊາວຈີນເຂົ້າໃຈແຈ່ມແຈ້ງຫລາຍຂຶ້ນໃນເຣື່ອງການຮັກສາພະຍາດ ຜົນງານດ້ານການແພດຂອງທ່ານໄດ້ໄຂປະຕູໃຫ້ແກ່ຂ່າວປະເສີດບໍ່ພຽງແຕ່ການຮັກສາພະຍາດທາງຮ່າງກາຍ ແຕ່ຫລາຍກວ່ານັ້ນອີກຄືໄດ້ຊ່ວຍຈິດວິນຍານຂອງຄົນບາບກັບໃຈມາຫາພຣະເຈົ້າ ການຮູ້ຈັກຮັກສາພຍາດຂອງທ່ານ ເຮັດໃຫ້ການກຽດຊັງການຂົ່ມເຫັງມິຊຊັນນາຣີໄດ້ລົດນ້ອຍລົງ ຄວາມເຊື່ອຖືໃນໝູ່ຊາວຈີນທີ່ມີຕໍ່ມິຊຊັ່ນນາຣີໄດ້ມີຫລາຍຂຶ້ນ

ຂອບຄຸນພຣະເຈົ້າທີ່ບຸກຄົນເຫລົ່ານີ້ ຍອມສລະຊີວິດຂອງຕົນໜີຈາກບ້ານເກີດເມືອງນອນ ໄປປະກາດຂ່າວປະເສີດແກ່ຄົນຕ່າງຊາດ ດ້ວຍຄວາມຍາກລໍາບາກ ມິຊຊັນນາຣີເຫລົ່ານີ້ບໍ່ພຽງແຕ່ນໍາເອົາຂ່າວປະເສີດຂອງພຣະເຢຊູຄຣິສໄປເຖິງປະຊາຊົນ ແຕ່ໄດ້ໃຫ້ການຊ່ວຍເຫລືອແລະນໍາຄວາມຈະເຣີນຫລາຍດ້ານໄປສູ່ປະເທດຈີນແລະປະເທດອື່ນ ໆ ຄືກັນ ນັບໄດ້ວ່າຄຣິສສາສນາໄດ້ນໍາເອົາຄວາມຮອດພົ້ນແລະນໍາຄວາມຈະເຣີນໄປສູ່ຊາດຕ່າງ ໆ ດັ່ງທີ່ຈາຣຶກໄວ້ໃນປວັດສາດທີ່ບໍ່ອາຈຈະລືມໄດ້

**ຄນະນິກາຍຕ່າງ ໆ ທີ່ເຂົ້າໄປປະກາດໃນປະເທດຈີນ**

| | |
|---|---|
| 1842 | American Baptist Missionary Union |
| | American Presbyterian Mission |
| | American Reformed Church Mission |
| 1843 | American Southern Baptist Mission |
| 1844 | Church Missionary Society |
| 1846 | Basel Missionary Society |
| 1847 | American Methodist Episcopal Mission |
| | English Presbyterian Mission |
| | Rhenish Mission |
| 1848 | American Southern Methodist Mission |
| 1852 | English Wesleyan Missionary Society |
| 1859 | English Baptist Misionary Society |

**ທ່ານ ສະມິທ** (Dr. A.H. Smith) ໄດ້ຂຽນບັນທຶກເຫດການໃນຣະຫວ່າງເວລາຂ້າງເທິງວ່າຄຣິສຕຽນໂປຣເຕັສເຕນໄດ້ເຂົ້າໄປປະກາດເຜີຍແຜ່ໃນປະເທດຈີນ ມີຕອນນຶ່ງທີ່ທ່ານກ່າວອ້າງອີງເຖິງມິຊຊັນນາຣີຈໍານວນຫລາຍວ່າໄດ້ເສັຍສລະຊີວິດຢ່າງແທ້ຈິງເພື່ອຂ່າວປະເສີດຂອງອົງພຣະເຢຊູຄຣິສ ມິຊຊັນນາຣີເຫລົ່ານີ້ໄດ້ນໍາເອົາຊາວຈີນມາເຖິງຄວາມຮອດພົ້ນຢ່າງຍາກລໍາບາກທີ່ສຸດ ທ່ານສມິທໄດ້ບັນທຶກໄວ້ວ່າຮອດເຖິງປີ 1860 ມິຊຊັ່ນນາຣີທີ່ເປັນຊາຍຈໍານວນ 214 ທ່ານ ແລະໃນຈໍານວນນີ້ເອງ 44 ທ່ານຕ້ອງເສັຽຊີວິດໃນຣະຫວ່າງການຮັບໃຊ້ ແຕ່ເຖິງຢ່າງນັ້ນແລ້ວກໍຕາມບໍ່ໄດ້ເຮັດໃຫ້ມິຊຊັ່ນນາຣີເຫລົ່ານີ້ຍ້ານກົວແຕ່ຢ່າງໃດ ຫລາຍຄົນທີ່ຄົນເມືອຢາມບ້ານເກີດເມືອງນອນຂອງຕົນກໍຍັງຄົງແຂງຂັນກັບຄືນໄປ

ຮັບໃຊ້ພຣະເຈົ້າໃນປະເທດຈີນຢ່າງບໍ່ທໍ້ຖອຍ  ຄວາມເສັຍສລະຂອງມິຊຊັ່ນນາຣີເຫລົ່ານີ້ໄດ້ປູພື້ນຖານອັນຖາວອນເຮັດໃຫ້ສາສນາຄຣິສໃນປະເທດຈີນມີຮາກຖານແຂງແຮງ  ແລະເປັນແບບຢ່າງແກ່ເຮົາຮອດເຖິງທຸກມື້ນີ້ ເພາະເຫດວ່າມິຊຊັ່ນນາຣີຣຸ່ນທຳອິດໄດ້ອຶດສ່າພຍາຍາມ ໄດ້ໃຊ້ຄວາມສາມາດ ຄວາມອົດທົນເປັນເຫດໃຫ້ພຣະຄັມພີຖືກແປອອກແລະປັບປຸງແກ້ໄຂຫລາຍເທື່ອ  ວັຈນານຸກົມຈີນໄດ້ຈັດທຳຂຶ້ນເພື່ອເປັນປໂຍດຕໍ່ມິຊຊັ່ນນາຣີຣຸ່ນຫລັງ ເພື່ອໃຊ້ຊ່ວຍຮຽນຮູ້ພາສາຈີນ ໜັງສືອະທິບາຍພຣະຄັມພີໄດ້ຖືກຂຽນຂຶ້ນ ເຈັ້ຽພຣະຄັມພີໄດ້ພິມອອກແຈກຍາຍແກ່ປະຊາຊົນຈີນ ຄຣິສຈັກໄດ້ປູກສ້າງຂຶ້ນ  ຄົນຈີນທີ່ເຊື່ອໄດ້ຖວາຍຕົວເປັນຜູ້ຮັບໃຊ້ໃນໂຮງຮຽນແລະໂຮງໝໍ ສະຖານສົງເຄາະ  ໄດ້ກໍ່ຕັ້ງຂຶ້ນເພື່ອເປັນປະໂຍດແກ່ຊາວຈີນ  ຜົນງານທີ່ກ້າວໜ້າ ດັ່ງນີ້ເປັນສິ່ງທີ່ໜ້າສັລເສີນຍ້ອງຍໍເຖິງຄວາມເສັຍສລະ  ຄວາມອົດທົນຂອງມິຊຊັ່ນນາຣີທີ່ຍອມຖວາຍຕົວຮັບໃຊ້ເພື່ອພຣະນາມຂອງອົງພຣະເຢຊູຄຣິສ

**ທ່ານຮັດສັນ ເທເລີຣ໌** (Hudson Taylor) ເປັນຜູ້ປ່າວປະກາດຂ່າວປະເສີດໃນແຜ່ນດິນຈີນ ປວັດຊີວິດຂອງທ່ານ ເປັນເຣື້ອງຣາວທີ່ໜ້າສົນໃຈສຳຫັບບຸກຄົນທັງຫລາຍ  ທີ່ຕ້ອງການຖວາຍຊີວິດໄປເປັນມິຊຊັ່ນນາຣີຫລືຜູ້ປ່າວປະກາດໃນປະເທດຈີນ ແລະປະເທດອື່ນ ໆ ແຖບເອເຊັຽ  ຜູ້ທີ່ໄດ້ອ່ານຊີວປວັດຂອງທ່ານຮັດສັນຈະໄດ້ຮັບການຊູໃຈ  ແລະສາມາດຕຽມຈິດໃຈໄວ້ໃຫ້ພ້ອມກ່ອນທີ່ຈະອອກໄປເປັນມິຊຊັ່ນນາຣີ




ທ່ານຮັດສັນເກີດໃນວັນທີ 21 ພຶສພາ(ເດືອນ 5) ຄ.ສ.1832 ເປັນບຸດຊາຍຂອງທ່ານ ເຈມສ໌ ເທເລີຣ໌ (James Taylor) ແລະນາງເບັທຕີ້ ເທເລີຣ໌(Betty Taylor) ຄອບຄົວຂອງທ່ານຕັ້ງແຕ່ສມັຍພໍ່ຕູ້ແມ່ຕູ້ ເປັນຜູ້ທີ່ມີຄວາມຮັກແພງໃນພຣະຄຣິສຫລາຍ ແລະໄດ້ຖວາຍຊີວິດຮັບໃຊ້ມາໂດຍຕລອດບໍ່ໄດ້ຂາດ  ພໍ່ຕູ້ແມ່ຕູ້ຂອງທ່ານຮັດສັນໄດ້ເຄີຍຕ້ອນຮັບເອົາທ່ານຈອນ ເວສເລ່(John Wesley) ຜູ້ປະຕິຮູບຄຣິສສາສນາໃນອັງກິດມາພັກອາສັຍຄ້າງຄືນຢູ່ໃນເຮືອນ ພໍ່ແມ່ຂອງທ່ານຮັດສັນເປັນຄົນແຂງແຮງໃນຄວາມເຊື່ອ ເປັນພໍ່ຄ້າແຕ່ກໍເທສນາຢູ່ໃນຄຣິສຈັກບໍ່ໄດ້ຂາດ  ພໍ່ຂອງທ່ານຮັດສັນມີຄວາມສົນໃຈເຣື້ອງການປະກາດຂ່າວປະເສີດໃນປະເທດຈີນ  ທ່ານໄດ້ອ່ານເຣື້ອງຣາວຂອງປະເທດຈີນຈາກໜັງສືຫລາຍເຫລັ້ມ  ແຕ່ທ່ານຮູ້ດີວ່າຕົນເອງບໍ່ມີໂອກາສທີ່ຈະໄດ້ເປັນມິຊຊັ່ນນາຣີໃນປະເທດຈີນດັ່ງທີ່ຕົນຕັ້ງຄວາມຫວັງໄວ້  ພໍ່ຂອງຮັດສັນຈຶ່ງໄດ້ອ້ອນວອນຢູ່ໃນໃຈວ່າ  ຫາກທ່ານມີລູກຊາຍກໍຈະອຸທິດຖວາຍລູກຊາຍເປັນຜູ້ປະ

ກາດໃນປະເທດຈີນ ແຕ່ວ່າທ່ານບໍ່ເຄີຍເລົ່າເຖິງເຣື່ອງຄວາມໃນໃຈນີ້ແກ່ລູກຊາຍຟັງຈົນກະທັ່ງ 7 ປີ ຫລັງຈາກທີ່ຣັດສັນໄດ້ເປັນຜູ້ປະກາດໃນປະເທດຈີນແລ້ວ ພຣະເຈົ້າໄດ້ຊົງນຳພາແຕ່ລະບາດກ້າວຈົນກະທັ້ງຄວາມຫວັງຂອງເຈມສ໌ ເທລີຣ໌ປະສົບຄວາມສຳເຣັດ

ທ່ານຣັດສັນ ເທລີຣ໌ ແຕ່ວັຍໜຸ່ມມາທ່ານເປັນເດັກທີ່ເຊື່ອຟັງພໍ່ແມ່ ແລະສົນໃຈຕໍ່ພຣະຄຳຂອງພຣະເຈົ້າທ່ານໄດ້ກັບໃຈບັງເກີດໃໝ່ໃນຄຣິສຈັກເມທໍດິສ ທ່ານຣັດສັນສົນໃຈຕ້ອງການໄປປະເທດຈີນໄດ້ເຣັດທຸກແນວ ເພື່ອຄວາມຫວັງນີ້ຈະພົບຄວາມສຳເຣັດ ແຕ່ດູເໝືອນວ່າຈະເປັນໄປບໍ່ໄດ້ ເພາະບໍ່ມີອົງການປະກາດຂ່າວປະເສີດທີ່ຈະໃຫ້ທຸນແກ່ທ່ານໃນການໄປເປັນມິຊຊັ່ນນາຣີຈີນ ແຕ່ວ່າທ່ານບໍ່ໝົດຫວັງທ່ານໃຊ້ເວລາທີ່ກຳລັງຄອຍທ່າໃຫ້ພຣະເຈົ້າເປີດໂອກາສແຕ່ທ່ານນັ້ນ ແຕ່ທ່ານເລົ່າຮຽນສຶກສາຈົນກະທັ້ງໄດ້ເປັນໝໍຜ່າຕັດໃນກຸງລອນດອນ ໃນຍາມທີ່ທ່ານຕ້ອງຕັດສິນໃຈເລືອກເອົາຣະຫວ່າງຄວາມຮັກ ການແຕ່ງງານ ແລະການຕັ້ງຖິ່ນຖານຢູ່ທີ່ບ້ານເກີດເມືອງນອນຂອງຕົນ ກັບການເປັນມິຊຊັ່ນນາຣີຮັບໃຊ້ພຣະເຈົ້າໃນປະເທດຈີນ ທ່ານໄດ້ຍອມເສັຽສລະບໍ່ເລືອກເອົາຄວາມຮັກແລະການຕັ້ງຖິ່ນຖານ ແຕ່ເລືອກເອົາການທີ່ຈະເປັນມິຊຊັ່ນນາຣີໃນປະເທດຈີນຫລາຍກວ່າ

ພາຍຫລັງ**ການກະບົດແຫ່ງໄຕ້ພິ່ງ** (Taiping Rebellion) ຣາວ ຄ.ສ. 1850-1865 ທ່ານຮົ່ນ ຊຸ່ຍທຽນ (Hung Siu-Tsuen) ຜູ້ເປັນຊາວຈີນຮັກກຣັ້ນ (Hakka) ທາງພາກໃຕ້ຂອງຈີນໄດ້ຊຸ້ຍ ແລະສະຖາປນາຕົນເອງເປັນຈັກກະພັດຈີນ ຈັກກະພັດຮົ່ນໄດ້ປະກາດຕົວເປັນຄຣິສຕຽນເພາະທ່ານໄດ້ຮັບນິມິດຈາກພຣະເຈົ້າທີ່ຈະສ້າງຣາຊອານາຈັກແຫ່ງສັນຕິສຸກ (Kingdom of Great Peace or Tai-Ping T'ien-Kuo) ຈັກກະພັດຮົ່ນໄດ້ປະກາດໃຫ້ເລີກການສູບຝິ່ນ ຫ້າມການກາບໄຫວ້ຮູບເຄົາຣົບ ແລະຖືເອົາວັນອາທິດເປັນວັນນມັສການພຣະເຈົ້າ ພ້ອມກັບຈັດພິມພຣະຄັມພີເປັນຕອນ ໆ ແລະສເນີແນະໃຫ້ປະຊາຊົນຖືຮັກສາຄຳອະທິຖານຂອງພຣະເຢຊູຄຣິສ ການປະກາດຂ່າວປະເສີດໃນປະເທດຈີນໄດ້ຣຸ່ງເຣືອງຂຶ້ນ ແລະປະຕູກໍໄດ້ໄຂອອກແກ່ຜູ້ທີ່ພ້ອມແລ້ວຈະຖວາຍຊີວິດເພື່ອຮັບໃຊ້ພຣະເຈົ້າໃນປະເທດຈີນ ຊຶ່ງຮວມເຖິງທ່ານຣັດສັນ ເທລີຣ໌ຜູ້ພ້ອມແລ້ວທີ່ຈະສະມັກເປັນມິຊຊັ່ນນາຣີໄປປະເທດຈີນ

ວັນທີ່ 4 ມິຖຸນາ (ເດືອນ 6) ຄ.ສ.1853 ທ່ານເບີຣ໌ດ (Bird) ຜູ້ເປັນເລຂາທິການຂອງສມາຄົມສົ່ງມິຊຊັ່ນນາຣີ ທ່ານກຳລັງຂຽນຈົດໝາຍຮຽກຕົວທ່ານຣັດສັນ ເທລີຣ໌ບໍ່ທັນແລ້ວ ສຽງເຄາະທີ່ປະຕູກໍດັງຂຶ້ນ ແມ່ນທ່ານຣັດສັນ ເທລີຣ໌ຜູ້ມາສະເນີຕົວວ່າພ້ອມແລ້ວທີ່ຈະໄປປະເທດຈີນ ທ່ານຣັດສັນແລະທ່ານເບີຣ໌ດຕ່າງຍອມຮັບວ່າ ແມ່ນການຊົງນຳຂອງພຣະເຈົ້າທີ່ເອີ້ນຜ່ານທ່ານທັງສອງ

ທ່ານຣັດສັນ ອາຍຸພຽງ 21 ປີ ໄດ້ລົງເຣືອວັນທີ່ 9 ກັນຍາ (ເດືອນ 9) ຄ.ສ.1853 ອອກຈາກອັງກິດ ແລະຕ້ອງໃຊ້ເວລາເດີນທາງເຖິງ 6 ເດືອນຈຶ່ງຈະຮອດເມືອງວູ່ຊູ້ງ (Woo Sung) ໃນວັນທີ 1 ມີນາ (ເດືອນ 3) ຄ.ສ.1854 ເມືອງນີ້ຢູ່ຫ່າງຈາກເມືອງຊ້ຽງໄຮ້ (Shanghai) ພຽງ 10 ໄມລ໌ ທ່ານຣັດສັນໄດ້ເລີ້ມຕົ້ນການປະກາດຂ່າວປະເສີດຢ່າງຍາກລຳບາກ ມີບັນຫາທາງດ້ານການເງິນ ເພາະວ່າທ່ານບໍ່ໄດ້ຮັບເງິນເດືອນເປັນປະຈຳ ລາງເທື່ອກໍບໍ່ມີເງິນພໍສຳລັບຄ່າເຊົ່າເຮືອນແລະກິນຢູ່ ແລະຕ້ອງເດີນທາງແຕ່ຜູ້ດຽວທົນທຸກຍາກລຳບາກຫລາຍປະການ ແຕ່ວ່າທ່ານບໍ່ຍອມທໍ້ຖອຍ ທ່ານເປັນພຍານວ່າພຣະຄຳຂອງພຣະເຈົ້າຈຳເປັນຕ້ອງໄດ້ຖືກປະກາດອອກໄປ ມິດໄວ້ບໍ່ໄດ້ ທຸກເທື່ອທີ່ທ່ານປະກາດພຣະຄຳຂອງພຣະເຈົ້າ ຄວາມຍິນດີກໍເກີດຂຶ້ນໃນຈິດໃຈຂອງທ່ານ ທ່ານນຸ່ງເຄື່ອງຊາວຈີນໄວ້ຜົມປຽຍຍາວແລະຮູ້ຈັກພາສາຈີນຢ່າງດີ ທ່ານໄດ້ພົບກັບສະຫາຍມິຊຊັ່ນນາຣີອີກຜູ້ນຶ່ງມີຊື່ວ່າ ວິລລຽມ ເບີນສ໌ (William Burnes) ທັງສອງທ່ານໄດ້ຮ່ວມກັນຮັບໃຊ້ພຣະເຈົ້າ ໂດຍທີ່ຕ່າງຄົນຕ່າງມີເຣືອແຈວໄປຕາມແມ່ນ້ຳໃນຊ້ຽງໄຮ້ ແລະພັກອາສັຍຢູ່ໃນເຣືອຄືບ້ານເປັນເວລານານເຖິງ 7 ເດືອນ ການປະກາດ

ຂອງທ່ານບໍ່ໄດ້ຮັບການຕ້ອນຮັບຈາກຊາວຈີນ ຫລາຍເທື່ອຊາວຈີນເອີ້ນທ່ານຮັດສັນແລະສະຫາຍວ່າ ຜີຝຮັ່ງ ຫມູ່ຕ່າງຊາດ ຫລືຫມາຜົມທອງ ຄວາມຍາກລຳບາກເຫລົ່ານີ້ບໍ່ໄດ້ເຮັດໃຫ້ທ່ານທໍ້ຖອຍ ເຖິງວ່າອາຍຸຍັງນ້ອຍຢູ່ ແຕ່ສຸຂພາບຂອງທ່ານເລີ້ມເສື່ອມໂທມ ເພາະອາຫານບໍ່ພຽງພໍ ຄວາມຮ້ອນຈັດໃນຫນ້າຮ້ອນ ແລະຂາດຄວາມອົບອຸ່ນໃນຫນ້າຫນາວ ແຕ່ທ່ານຮັດສັນໄດ້ຮັບໃຊ້ພຣະເຈົ້າຢ່າງສັດຊື່

ທ່ານຮັດສັນໄດ້ຮັບໃຊ້ພຣະເຈົ້າໄດ້ບໍ່ນານທີ່ຊົວເຖົາ (Swatow) ທາງຕອນໃຕ້ຂອງຈີນ ແລະ ໄດ້ຍ້າຍຂຶ້ນມາທາງນິງໂປ (Ningpo) ທ່ານໄດ້ແຕ່ງງານກັບມາເຣັຽ ໄດເອີ (Maria Dyer) ມີບຸດສາວນຶ່ງຄົນ ທ່ານແລະພັລຍາໄດ້ຮັບໃຊ້ພຣະເຈົ້າ ປະກາດເທສນາແລະຮັກສາຄົນເຈັບໃນໂຮງຫມໍ ຊາວຈີນຫລາຍຄົນໄດ້ຮັບເຊື່ອແລະກໍ່ຕັ້ງຄຣິສຈັກມີສມາຊິກ 30-40 ຄົນຢູ່ໃກ້ກັບໂຮງຫມໍຂອງທ່ານ ຄວາມເຊື່ອແລະຄວາມອຸດສາພຍາຍາມຂອງທ່ານໄດ້ເປັນແບບຢ່າງແກ່ຊາວຈີນຈຳນວນຫລາຍ ໂດຍສະເພາະຢ່າງຍິ່ງເຣື້ອງການເຊື່ອວາງໃຈໃນພຣະເຈົ້າກ່ຽວກັບການເງິນ ແລະສິ່ງຂອງທີ່ຈຳເປັນສຳລັບການປິ່ນປົວພະຍາດ ພຣະເຈົ້າໄດ້ຊົງນຳໃຫ້ມີຜູ້ຖວາຍເງິນຄຳມາສນັບສນຸນໄດ້ທັນກັບເວລາທີ່ກຳລັງຂາດແຄລນ ແມ່ນວ່າຫລາຍເທື່ອເບິ່ງຄືວ່າຂາດເງິນຄຳສຳລັບໃຊ້ຈ່າຍໃນພຣະຣາຊກິຈຂອງພຣະເຈົ້າ ແລະຂອງສ່ວນຕົວ ແຕ່ພຣະເຈົ້າກໍໄດ້ອວຍພຣະພອນໃຫ້ມີຜູ້ຖວາຍມາໃຊ້ທັນເວລາບໍ່ຂາດມື ມີເທື່ອນຶ່ງໂຮງຫມໍເກືອບຈະຕ້ອງຖືກປິດລົງ ເພາະວ່າຂາດຢາແລະເຄື່ອງໃຊ້ ເຮັດໃຫ້ນາຍຫມໍຜູ້ອື່ນຫນີຈາກໄປ ແຕ່ທ່ານຮັດສັນແລະສມາຊິກຄຣິສຕຽນຈີນໄດ້ຄຸກເຂົ່າອ້ອນວອນໃນຫລາຍວັນຕໍ່ມາ ທ່ານຮັດສັນໄດ້ຮັບຈົດຫມາຍຈາກອັງກິດວ່າມີຜູ້ນຶ່ງໄດ້ຮັບມໍຣະດົກຈາກບິດາ ແລະຕ້ອງການສົ່ງເງິນມາຊ່ວຍວຽກການຮັບໃຊ້ພຣະເຈົ້າໃນປະເທດຈີນ ໃນຈົດຫມາຍສະບັບນັ້ນໄດ້ຖາມວ່າ ມີທາງໃດແດ່ທີ່ທ່ານຈະນຳເງິນນີ້ໄປໃຊ້ໃຫ້ເປັນປໂຍດໄດ້ ທ່ານຮັດສັນດີໃຈຫລາຍ ພວກຄົນຈີນຕ່າງຮ້ອງວ່າໄອ້ ຍ່າ!! (Ai Ya!!) ດີໃຈແລະເປັນພຍານແກ່ຄົນເຈັບເຖິງການອັສຈັນວ່າຈະບໍ່ຕ້ອງປິດຖິ້ມໂຮງຫມໍນີ້ ຫລັງຈາກເຫດການນີ້ພຽງ 9 ເດືອນມີຄົນເຈັບ 16 ຄົນຮັບບັພຕິສມາແລະມີຄົນຈີນຫລາຍກວ່າ 30 ທ່ານໄດ້ເຂົ້າຮຽນພຣະຄັມພີດ້ວຍຄວາມສົນໃຈຢາກເປັນຄຣິສຕຽນ

ສຸຂພາບຂອງທ່ານຮັດສັນໄດ້ອ່ອນແອລົງເລີຍ ໆ ຈົນກະທັ່ງທ່ານຕ້ອງພາຄອບຄົວເມືອອັງກິດໃນເດືອນ ກໍຣະກະດາ (ເດືອນ 7) ຄ.ສ.1860 ຫລັງຈາກທີ່ທ່ານຢູ່ໃນປະເທດຈີນໄດ້ນານ 7 ປີ ການເມືອອັງກິດນີ້ເຮັດໃຫ້ຈຳເປັນຕ້ອງປິດໂຮງຫມໍ ແລະຍັງບໍ່ມີຫວັງວ່າທ່ານຈະໄດ້ຄືນມາເມືອງຈີນອີກ ເບິ່ງຄືວ່າຫມົດຫວັງ ແຕ່ວ່າຄຣິສຈັກຈີນທີ່ທ່ານກໍ່ຕັ້ງຂຶ້ນນັ້ນ ມີຄຣິສຕຽນຊາວຈີນເປັນຜູ້ນຳສືບຕໍ່ໄປ ທ່ານແລະພັລຍາຍັງຄົງມີຄວາມເຊື່ອວ່າພຣະເຈົ້າຈະຊົງນຳໃຫ້ທ່ານກັບຄືນປະເທດຈີນ

ຮັດສັນແລະຄອບຄົວໄດ້ອາສັຍຢູ່ໃນກຸງລອນດອນຮັກສາສຸຂພາບຂອງຕົນເອງ ທ່ານໄດ້ຄືນໄປຮຽນເປັນນາຍແພດຕໍ່ອີກຈົນສຳເຣັດ ຄ.ສ. 1862 ທ່ານເຫັນການຊົງນຳຈາກພຣະເຈົ້າທີ່ຈະກັບຄືນເມືອງຈີນໂດຍສະເພາະດິນແດນໃຈກາງປະເທດ ທ່ານໄດ້ເຊີນຊວນຜູ້ສົນໃຈໃຫ້ຮ່ວມງານກັບທ່ານໃນ ຄ.ສ. 1865 ທ່ານແລະຄອບຄົວພ້ອມອາສາສມັກອີກ 15 ທ່ານຮ່ວມເດີນທາງກັບໄປປ່າວປະກາດຂ່າວປະເສີດຂອງພຣະເຢຊູໃນປະເທດຈີນ

ການປ່າວປະກາດໃນໃຈກາງປະເທດຈີນໄດ້ເກີດຜົນຫລາຍແລະກໍ່ຕັ້ງຂຶ້ນເປັນອົງການປະກາດຂ່າວປະເສີດພາຍໃນປະເທດຈີນ ເປັນອົງການປະກາດຂ່າວປະເສີດໃນປະເທດຈີນອົງການແຮກ ແລະເປັນອົງການທີ່ໃຫຍ່ທີ່ສຸດຈົນເຖິງປັດຈຸບັນ (The China Inland Mission) ອົງການຂອງທ່ານບໍ່ໄດ້ຂຶ້ນກັບຄະນະນິກາຍໃດໂດຍກົງ ແລະເປັນອົງການອິສຣະທີ່ມີມິຊຊັນນາຣີຈາກຫລາຍ ໆ ບ່ອນເຂົ້າມາຮ່ວມງານກັນ ເປັນອົງການທີ່ຖືກເອີ້ນວ່າ "ການຮັບໃຊ້ໂດຍຄວາມເຊື່ອ" (Faith Mission) ຄືຜູ້ປະກາດຮັບໃຊ້ພຣະເຈົ້າໂດຍຄວາມເຊື່ອ ບໍ່ມີຜູ້ໃດຫລືອົງການໃດສັນຍາວ່າຈ້າງໃຫ້ເງິນເດືອນເປັນປະຈຳ

ຜູ້ຮັບໃຊ້ຕ້ອງອາສັຍການຖວາຍຈາກຫມູ່ສຫາຍຫລືແຫລ່ງອື່ນ ໆ ເພື່ອສນັບສນຸນວຽກງານຂອງຕົນ ການເຜີຍແຜ່ຂອງອົງການປະກາດຂ່າວປະເສີດພາຍໃນປະເທດຈີນໄດ້ຂຍາຍອອກໄປຢ່າງກວ້າງຂວາງ ໂດຍມີຜູ້ເຮັດວຽກສືບຕໍ່ມາຈາກທ່ານຮັດສັນ ໃນ ຄ.ສ. 1938 ມີຊຸ້ນນາຣີຊາວຕ່າງຊາດທີ່ຮ່ວມງານຢູ່ເຖິງ 1,363 ທ່ານ ມີນັກເທດແລະຜູ້ປະກາດຊາວຈີນເຖິງ 4,403 ທ່ານ ມີສມາຊິກຄຣິສຕຽນໃນຄຣິສຈັກຕ່າງ ໆ ທົ່ວປະເທດຈີນຂອງອົງການນີ້ເຖິງ 190,550 ຄົນ

ຈະເຫັນໄດ້ວ່າຄວາມເສັຽສລະຂອງທ່ານຮັດສັນ ເທເລີຣ໌ແລະຜູ້ນຳອື່ນ ໆ ໄດ້ຮັບໃຊ້ແລະປະກາດຂ່າວປະເສີດຈີນເກີດຜົນຫລາຍໃນປະເທດຈີນ ແລະເປັນພຣະພອນຕໍ່ ໆ ໄປຍັງປະເທດອື່ນ ໆ ໃນແຖບເອເຊັຽ ຈີນກະທັ່ງເທົ່າທຸກມື້ນີ້ ບໍ່ມີຜູ້ໃດທີ່ຈະທຳລາຍເມັດແຫ່ງພຣະຄຳຂອງພຣະເຈົ້າທີ່ໄດ້ຖືກຫວ່ານລົງໄປນັ້ນໃຫ້ສູນເສັຽໄປ ແມ່ນວ່າຣະບອບຄອມມິວນິສຕ໌ໄດ້ຄອບຄອງປະເທດຈີນ ແລະໄດ້ທຳລາຍຄຣິສຕຽນຫລາຍທີ່ສຸດ ຜູ້ນຳຫລາຍທ່ານຕ້ອງຖືກທໍຣະມານໃນຄຸກ ແຕ່ວ່າຄຣິສຈັກຂອງພຣະຄຣິສກໍຍັງມີຊີວິດຢູ່ບໍ່ຕາຍຈັກເທື່ອ ໃນປັດຈຸບັນນີ້ໄດ້ມີການຟື້ນຟູແລະເກີດຜົນຂຶ້ນຢ່າງຫລວງຫລາຍ ເມື່ອຣັຖບາລຈີນຄອມມິວນິສຕ໌ອນຸຍາດໃຫ້ຄຣິສຈັກມີສິດເປີດການນມັສການໄດ້ນັ້ນ ຄຣິສຕຽນໃນແຕ່ລະບ່ອນກໍໄດ້ນມັສການພຣະເຈົ້າຢ່າງເປີດເຜີຍ ແຕ່ກໍຍັງມີອີກຫລາຍບ່ອນທີ່ຄຣິສຕຽນບໍ່ສາມາດປະກາດຢ່າງເປີດເຜີຍໄດ້ ຊຶ່ງເຮົາທັງຫລາຍສົມຄວນຈະໄດ້ລະເລີກເຖິງ ແລະໄຫວ້ວອນຂໍການນຳພາຈາກພຣະເຈົ້າ ເພື່ອຄຣິສຈັກໃນປະເທດຈີນ ໃຫ້ມີການປະກາດຂ່າວປະເສີດແຫ່ງຄວາມຣອດພົ້ນຂອງພຣະເຢຊູຄຣິສອອກໄປຢ່າງທົ່ວເຖິງ



The Anglo -Chinese College at Malacca (Missionary sketches, January 1825)
ຮູບແຕ້ມຂອງ ວິທຍາລັຍແອງໂກຈີນ ທີ່ ມາລັກກາ ໂດຍມິຊຊັ່ນນາຣີໃນ ປີ ຄ.ສ. 1825

# ລຳດັບເຫດການຂອງຄຣິສສາສນາແລະປວັດສາດປະເທດຈີນ

## A BRIEF CHRONOLOGY
*Christianity and Chinese History*

| *Dynasties/Dates* | | *Events* |
|---|---|---|
| **SHANG (1766–1122 B.C.)** | | PREHISTORY<br>Mythical rulers. Beginning writing. Silk culture. |
| **CHOU (1122–400)** | | GOLDEN AGE OF ANTIQUITY<br>Confucius. Lao-tzu. Taoism. |
| **WARRING STATES (400–246)** | | CIVIL STRIFE<br>Mencius. |
| **CH'IN (246–206)** | | UNIFICATION OF ALL CHINA<br>Great Wall begun. Burning of Confucian classics. |
| **HAN (206 B.C.–A.D.220)** | | FIRST CHINESE EMPIRE<br>Triumph of Confucianism. Porcelain. Paper. Foreign trade. Literature. Empire extended. |
| **THREE KINGDOMS (220–617)** | | FEUDALISM<br>Nomadic invasions. Strife. Romantic literature. |
| | 400 | Introduction of Buddhism. |
| **T'ANG (617–907)** | | EMPIRE EXTENDED<br>Buddhism flourishes. Trade with the West. |
| | 635 | *Nestorian missionaries come to China.* |
| | 841 | Buddhism persecuted. Confucianism resurgent. |
| | 900 | *By end of the T'ang Dynasty traces of Christianity have all but disappeared.* |
| **FIVE DYNASTIES (907–960)** | | BARBARIAN ENCROACHMENTS<br>Civil Strife. |
| **SUNG (960–1270)** | | GOLDEN AGE OF CULTURE<br>First printed book. Painting. Foreign trade. Abacus. Footbinding introduced. |
| | 1206 | Genghis Khan unifies Mongol tribes. |
| | 1227 | Genghis Khan dies after having defeated the Chin. |
| **YUAN (MONGOL) (1271–1368)** | | CHINA CONQUERED BY MONGOLS<br>China culture prevails. Trade with the West. Paper money. Religious toleration. |
| | 1260–1294 | Kublai Khan. |
| | 1271–1292 | Marco Polo visits China. |
| | 1294 | *John of Montecorvino and Franciscans begin missionary work in Beijing (Peking).* |
| | 1368 | *All traces of Christianity disappear from China.* |
| MING (1368–1644) | | MONGOLS EXPELLED<br>Orderly government. Social stability. Examination system. Gentry class. |
| | 1601 | *Matteo Ricci and Jesuits arrive in Beijing.* |
| CH'ING (MANCHU) (1644-1911) | | CHINA CONQUERED BY MANCHUS<br>Confucianism supreme. Rapid rise in population. |
| | 1645–1742 | *The "Rites Controversy." Jesuit influence declines. Persecutions.* |
| | 1807 | *Robert Morrison, first Protestant missionary, arrives in Canton.* |
| | 1839–60 | "Opium Wars." "Unequal Treaties." |
| | 1844 | *Beginning of American Presbyterian mission work in Ningbo.* |
| | 1850–64 | Dynastic decline. Taiping Rebellion. |
| | 1865 | *Hudson Taylor founds China Inland Mission.* |
| | 1867 | *Begining of Presybterian, U.S. mission work in Hangzhou (Hangchow).* |
| | 1883–85 | Sino-French War. French take Indo-China. |
| | 1894–1895 | First Sino-Japanese War. Taiwan ceded to Japan. China loses Korea. |
| | 1900 | *The "Boxer Year." Thirty-thousand Chinese Christians, 235 missionaries lost their lives.* |
| REPUBLIC (1911–49) | | NATIONALISM<br>Modernization. Wars and civil strife. Economic woes. |
| | 1911 | Sun Yat-sen establishes the Republic. |
| | 1912–27 | Period of the warlords. |
| | 1919 | May Fourth student antiforeign riots. |
| | 1921 | Organization of the Chinese Communist party (CCP). |
| | 1922 | National Christian Council established. |
| | 1927 | *First General Assembly of the Church of Christ in China—eleven synods, 120,000 communicants.* Break between Kuomintang (KMT) and Communists. Chiang Kai-shek begins northern campaign against warlords to unite country. |
| | 1931–32 | Japan occupies Manchuria. |
| | 1934–35 | Mao Zedong (Mao Tse-tung) begins "The Long March" to Yanan (Yenan). |
| | 1937 | Outbreak of Sino-Japanese War |
| | 1941 | Japanese bomb Pearl Harbor. *Most missionaries in China interned, evacuated.* |
| | 1945 | Japan surrenders. |
| | 1946 | *Missionaries return and resume work.* |
| | 1946–49 | Civil war. Inflation, chaos, corruption. |
| PEOPLE'S REPUBLIC (1949–/) | | REVOLUTION<br>Social reform. Marxist ideology. Self-reliance. |
| | 1949 | October 1—proclamation of the establishment of the People's Republic of China (PRC) by Mao Zedong. |
| | 1950 | *Beginning of the Three-Self Patriotic Movement. Accusation meetings. Missionaries begin to leave.* The Korean conflict. |
| | 1952 | *Last PCUS missionaries, Dr. and Mrs. Frank W. Price, leave China.* |
| | 1956–57 | "Let a hundred flowers bloom" followed by antirightist campaign. |
| | 1958–60 | Great Leap Forward. |
| | 1960 | China and Russia break relationships. |
| | 1966–76 | The Great Proletarian Cultural Revolution. |
| | 1971 | Beginning of "thaw" in U.S.–China relations. PRC seated at the U.N. "Ping-pong diplomacy." |
| | 1972 | U.S. President Richard Nixon visits China. Shanghai Communique. |
| | 1975 | Chiang Kai-shek dies. |
| | 1976 | January: Zhou Enlai (Chou En-lai) dies. September: Mao Zedong dies. Hua Guofeng (Kuo-feng) appointed chairman and premier. October: "Gang of Four" arrested. |
| | 1977 | Deng Xiaoping (Teng Hsiao-ping) reappointed as vice-premier. The Four Modernizations. |
| | 1978 | "Billboard Democracy." U.S. President Jimmy Carter announces recognition of PRC. |
| | 1979 | *Mo En Church reopens. First public worship service in Shanghai in thirteen years. Churches across China begin to open. Bishop K. H. Ting leads first delegation of Christian leaders from PRC to visit U.S.* |
| | 1980 | *Formation of the Chinese Christian Council. Reopening of Nanjing Theological Seminary.* Hu Yaobang appointed Mao's successor. |
| | 1981 | *NCC delegation from U.S. invited to China in first official visit.* |
| | 1982 | Twelfth Party Congress adopts new constitution. |
| | 1984 | Agreement reached by Great Britain and China on the future of Hong Kong. Sweeping changes in urban policy move China toward a freer economy. |
| | 1985 | Forced retirements bring many changes in the senior ranks of the Chinese Communist Party leadership. *Amity Foundation established at Christian initiative.* |

ຈາກຕຳຣາຂອງທ່ານ G. Thompson Brown, Christianity in the People's Republic of China. Atlanta: John Knox Press, 1986.

ຮຽນວັນ Nov. 26, 97

# ບົດທີ 17

## ຂ່າວປະເສີດຂອງພຣະເຢຊູຄຣິສ ເຖິງປະເທດອິນເດັຽ

**ອິນເດັຽ** ເປັນປະເທດເກົ່າໂບຣານອີກປະເທດນຶ່ງໃນເອເຊັຽ ທີ່ອຸດົມດ້ວຍວັທນະທັມ ຮີດຄອງປະເພນີໂບຣານ ແລະມີສາສນາເກົ່າແກ່ທີ່ເກີດຂຶ້ນໃນປະເທດນີ້ຫຼາຍສາສນາ ຄືສາສນາຮິນດູ (Hindu) ສາສນາພາມ (Sikh) ສາສນາພຸດ (Buddhism) ສາສນາອນິມິດ (Animit) ສາສນາອື່ນ ໆ ທີ່ໄດ້ຮວມເຂົ້າມາພາຍຫຼັງ ຄື ສາສນາອິສລາມ (Moslem) ສາສນາເຈນ (Jain) ຮວມທັງສາສນາຄຣິສ ແລະສາສນາອື່ນ ໆ ອີກ ປະເທດອິນເດັຽປະກອບດ້ວຍຊົນຫຼາຍເຜົ່າ ຫຼາຍພາສາຕ່າງ ໆ ກັນຫຼາຍກວ່າ 200 ພາສາ ປະຊາຊົນມີສີຜິວແຕກຕ່າງກັນຕັ້ງແຕ່ຊາວອິນເດັຽຜິວຂາວຈົນເຖິງຊາວອິນເດັຽຜິວດຳ ມີຣະບົບແລະການແບ່ງຊົນຊັ້ນຢ່າງລະອຽດກວ່າປະເທດອື່ນ ໆ ທົ່ວໂລກ ອິນເດັຽມີລັດທິບູຊາເທວຮູປ ແລະຣັດທິເລິກລັບໂບຣານ (Mythology) ຂອງສາສນາເກົ່າແກ່ໂບຣານທີ່ຄົນປັດຈຸບັນຍັງຄົງສົນໃຈສຶກສາຫາຄວາມເຂົ້າໃຈຢູ່

ປະເທດອິນເດັຽມີອານາເຂດຕິດຕໍ່ກັບປະເທດເປີເຊັຽ ປະເທດປາກິສຖານ ປະເທດທິເບດ ປະເທດເນປານ ປະເທດຈີນ ແລະປະເທດພະມ້າ ໂດຍມີເກາະສີລັງກາຢູ່ທາງຕອນໃຕ້ ພາສາ ວັທນະທັມ ແລະສາສນາຂອງອິນເດັຽໄດ້ມີບົດບາດ ອິດທິພົນ ແລະແຜ່ຜາຍເຂົ້າໄປສູ່ປະເທດຮອບຂ້າງຕລອດຈົນເຖິງແຖບອິນໂດຈີນ (Indo-Chinese) ຄືປະເທດໄທ ປະເທດຂະເມ ປະເທດລາວ ແລະປະເທດມາເລເຊັຽ

### ຂ່າວປະເສີດຂອງພຣະເຢຊູຄຣິສເຂົ້າເຖິງປະເທດອິນເດັຽ

ຂ່າວປະເສີດຂອງພຣະຄຣິສໄດ້ເຂົ້າເຖິງອິນເດັຽມາດົນນານແລ້ວ ມີຜູ້ຕັ້ງຂໍ້ສັນນິຖານວ່າຄຣິສຈັກເຊັນໂທມັສ (St.Thomas) ໃນອິນເດັຽໄດ້ກໍ່ຕັ້ງຂຶ້ນໂດຍອັຄສາວົກໂທມາ ທີ່ໄດ້ເດີນທາງເຖິງອິນເດັຽໂດຍຜ່ານທາງປະເທດເປີເຊັຽໃນສັຕວັດທີ 1 ຫຼັງຈາກທີ່ພຣະຄຣິສໄດ້ສເດັດສູ່ສວັນແລ້ວ ຂໍ້ເທັດຈິງນີ້ຈະເປັນຢ່າງໃດນັ້ນ ນັກສຶກສາຕ້ອງທຳການສຶກສາຄົ້ນຄ້ວາຕໍ່ໄປ

ເປັນທີ່ເຊື່ອຖືໄດ້ວ່າ ຄຣິສສາສນາໄດ້ໄປເຖິງປະເທດອິນເດັຽໃນຮາວ ຄ.ສ.180-190 ໂດຍທ່ານເພນແທນັສ (Pantaenus) ແຫ່ງອາເລັກຊັນເດັຽ ໃນປະເທດອີຢິບ ໄດ້ມີຫຼັກຖານວ່າທ່ານໄດ້ນຳເອົາຫຼັກຄວາມເຊື່ອແບບຄຣິສຕຽນເຂົ້າໄປທາງເໜືອຂອງອັຟຣິກາເຖິງອາຣາເບັຽຈົນຮອດປະເທດອິນເດັຽ ແລະເກາະສີລັງກາ ຊຶ່ງໄດ້ກາຍເປັນປະເທດສີລັງກາໃນປັດຈຸບັນ

ປະມານ ຄ.ສ.1500 ປະເທດອິນເດັຽໄດ້ຕິດຕໍ່ຄ້າຂາຍກັບຊາວຢຸໂຣປ ໂດຍທີ່ຊາວໂປຕຸເກດໄດ້ເດີນເຮືອຮອດອິນເດັຽ ແລະມີເສັ້ນທາງຕິດຕໍ່ຄ້າຂາຍທີ່ເມືອງກົວ (Goa) ເຊື່ອວ່າຄົງໄດ້ມີຜູ້ເຂົ້າໄປເຜີຍແຜ່ສາສນາຄຣິສ ໂດຍອາສັຍການເດີນເຮືອຂອງຊາວຢຸໂຣປທີ່ໄປທຳການຄ້າຂາຍ

ຄ.ສ.1540 ທ່ານແຟນຊິສ ເອກຊາເວັຽ (Francis Xavier) ໄດ້ນຳພາເອົາມິຊຊັນນາຣີໄປປະກາດຂ່າວປະເສີດທີ່ກົວ (Goa) ໃນອິນເດັຽ ແລະເກີດຜົນຫຼາຍທີ່ສຸດ ມີຜູ້ຮັບເຊື່ອເປັນພັນຄົນ

ຄ.ສ.1614 ອັງກິດໄດ້ເຂົ້າມາຄ້າຂາຍໃນອິນເດັຽໂດຍບໍຣິສັດ ອັງກິດ-ອິນເດັຽຕາວັນອອກ ທີ່ເມືອງມາດຣາສ (Madras) ເມືອງກັນກາຕາ (Calcutta) ແລະເມືອງບອມເບ (Bombay) ໂດຍທີ່ປະເທດອັງກິດໄດ້ປຽບທາງການຄ້າ ແລະຂຍາຍອຳນາດທາງການຄ້າ ໃນທີ່ສຸດມີອຳນາດທາງການເມືອງໄດ້ຢຶດຄອງດິນແດນກວ້າງຂວາງຫຼາຍຂຶ້ນ ເປັນເຫດໃຫ້ເກີດການແຂ່ງຂັນ ເກີດຂໍ້ຂັດແຍ້ງຂຶ້ນກັບປະເທດຢຸໂຣບອື່ນ ໆ ທີ່ໄດ້ເຂົ້າມາຄ້າຂາຍຢູ່ກ່ອນ ແຕ່ວ່າໃນທີ່ສຸດພວກຮອນແລນ ໂປຕຸເກດ ແລະຝຣັ່ງເສດໄດ້ສູນເສັຽອຳນາດທາງການຄ້າ ປ່ອຍໃຫ້ອັງກິດມີອຳນາດ ແລະມີອິດທິພົນແຕ່ປະເທດດຽວ ໃນເມື່ອອັງກິດມີອຳນາດທາງການຄ້າ ໃນອິນເດັຽອຳນາດທາງການເມືອງກໍໄດ້ເຂົ້າມາພົວພັນນຳ ແລະຖືໂອກາດເຂົ້າຄອບຄອງດິນແດນຂອງປະເທດໃນເວລາທີ່ອິນເດັຽກຳລັງອ່ອນແອ ມີບັນຫາຫຼາຍດ້ານທີ່ອິນເດັຽບໍ່ມີຄວາມສາມາດປ້ອງກັນປະເທດໄວ້ໄດ້ ດັ່ງນັ້ນໃນ ຄ.ສ.1877 ພຣະນາງເຈົ້າວິກຕໍເລັຽແຫ່ງອັງກິດໄດ້ປະກາດຕົວເປັນຈັກກະພັດຍິງ ໄດ້ຢຶດການປົກຄອງດິນແດນ 2 ໃນ 5 ສ່ວນຂອງອິນເດັຽ ແຕ່ວ່າ 3 ສ່ວນທີ່ເຫຼືອນັ້ນປົກຄອງຮ່ວມກັນໂດຍເຈົ້າເມືອງຫຼືເຈົ້າຊີວິດອົງນ້ອຍຫຼາຍອົງທີ່ເປັນຊາວອິນເດັຽ

ຄວາມກ້າວໜ້າຂອງບໍຣິສັດອິນເດັຽຕາວັນອອກທີ່ທຳການຄ້າກັບປະເທດຕ່າງ ໆ ນັ້ນ ເປັນການເປີດໂອກາດໃຫ້ພວກມິຊຊັນນາຣີໄດ້ເດີນທາງເຂົ້າໄປປະກາດຂ່າວປະເສີດໃນອິນເດັຽ ໃນຕອນທຳອິດນັ້ນພວກອິນເດັຽຮູ້ສຶກວ່າພວກມິຊຊັນນາຣີບໍ່ໄດ້ແຕກຕ່າງໄປຈາກພວກຕ່າງຊາດທີ່ເຂົ້າມາເອົາປຽບ ແລະຢຶດຄອງອຳນາດ ແຕ່ວ່າໃນທີ່ສຸດຜົນງານອັນເສັຽສລະຂອງພວກມິຊຊັນນາຣີ ແລະຄວາມຕັ້ງໃຈແທ້ຈິງໃນການນຳເອົາຂ່າວປະເສີດແຫ່ງຄວາມຣອດພົ້ນມາເຖິງຊາວອິນເດັຽ ພ້ອມກັບນຳເອົາວິທຍາການໃໝ່ ໆ ເຊັ່ນດ້ານການພິມ ດ້ານການແພດ ໂຮງຮຽນ ແລະໂຮງໝໍ ຊຶ່ງພວກມິຊຊັ່ນນາຣີໄດ້ນຳເຂົ້າໄປເຖິງປະຊາຊົນອັນເປັນການຊ່ວຍໃຫ້ປະເທດອິນເດັຽໄດ້ ພັທນາປະເທດໃຫ້ກ້າວໜ້າມາຈົນເຖິງປັດຈຸບັນ ເຖິງແມ່ນວ່າອັງກິດໄດ້ຄອບຄອງອິນເດັຽ ແຕ່ວ່າປະຊາຊົນກໍມີເສຣີພາບໃນການເລືອກຖືສາສນາຕາມໃຈມັກ ແລະສາສນາຄຣິສໄດ້ຮັບການຮັບຮອງໃຫ້ເປັນສາສນາຂອງທາງຣາຊການກໍຕາມ

ຄ.ສ.1616 ບໍຣິສັດເດັນມາກ-ອິນເດັຽຕາວັນອອກ ໄດ້ເປີດການແລກປ່ຽນສິນຄ້າ ມີສູນກາງຢູ່ທີ່ທານກູບາ (Tranquebar) ແລະທີ່ເຊີຣັມໂປ (Serampore) ເຊື່ອວ່າໃນເວລານັ້ນໄດ້ມີມິຊຊັນນາຣີຂອງເດັ່ນມາກເຂົ້າໄປເຜີຍແຜ່ຄຣິສສາສນາຄືກັນ ແຕ່ບໍ່ໄດ້ມີການຈາຣຶກຜົນງານໄວ້ເປັນຫຼັກຖານ

## ຄຣິສຈັກໂປເທັສຕັນເຂົ້າໄປເຖິງປະເທດອິນເດັຽ

ຄຣິສສາສນາສາຍໂປເທສຕັນໄດ້ເຂົ້າໄປເຖິງອິນເດັຽນັ້ນ ເຊື່ອແນ່ວ່າໄດ້ມີຄວາມສືບເນື່ອງມາວ່າ ເຈົ້າຊີວິດແຫ່ງເດັນມາກຜູ້ໃຫ້ການສນັບສນູນດ້ານການເງິນແກ່ທ່ານ ລູດເຄນ (Lutkens) ຜູ້ຮ່ວມການປະຕິຣູບຄຣິສຈັກໃຫ້ກໍ່ຕັ້ງໂຮງຮຽນພຣະຄຣິສທັມຂຶ້ນໃນປະເທດເດັນມາກເພື່ອສິດສອນ ອົບຮົມ ແລະສົ່ງມິຊຊັນນາຣີຂອງຄຣິສຈັກຝ່າຍປະຕິຣູບໄປທີ່ວປະເທດເດັນມາກ ແລະໃຫ້ອອກໄປປະກາດຂ່າວປະເສີດຍັງປະເທດອື່ນ ໆ ທີ່ຢູ່ພາຍໃຕ້ການຄອບຄອງຂອງເດັນມາກ ມີສອງທ່ານທີ່ຈົບຈາກໂຮງຮຽນນີ້ຄື ທ່ານບາໂທໂລມິວ ຊີເກນບາກ (Bartholomew Ziegenbalg) ແລະທ່ານເຮນຣີ່ ພລຸທເຊົາ (Henry Plutschau) ໂດຍອົງການສົ່ງມິຊຊັນນາຣີເດນນິຊ-ຮອນເລ່ (Denish-Halle Mission) ໃນຣາວ ຄ.ສ.1706

ໃນຕອນທຳອິດນັ້ນ ບໍລິສັດອັງກິດ-ອິນເດັຽຕາວັນອອກບໍ່ຍອມອະນຸຍາດໃຫ້ມິຊຊັນນາຣີໂປເຕສແຕັນ ບໍ່ວ່າຈາກປະເທດໃດເຂົ້າໄປປະກາດໃນປະເທດອິນເດັຽ ດ້ວຍຢ້ານວ່າຈະເກີດການຂັດແຍ້ງກັບຄຣິສຈັກ ຄາໂທລິກ ແລະຢ້ານອີກວ່າພວກມິຊຊັນນາຣີຈະສັ່ງສອນປະຊາຊົນໃຫ້ແຂງຂໍ້ຕໍ່ການຄ້າຂາຍທີ່ອັງກິດກຳລັງ ໄດ້ຜົນປະໂຍດຢູ່ ຢ່າງໃດກໍຕາມ ຄຣິສຈັກໂປເຕສແຕັນໄດ້ພະຍາຍາມທຸກວິທີທາງ ຈົນກະທັ້ງມີມິຊຊັນນາຣີ ໂປເຕສແຕັນຈາກອັງກິດຈຳນວນຫຼາຍໄດ້ເຂົ້າໄປປະກາດໃນປະເທດອິນເດັຽ

**ທ່ານວິລລຽມ ແຄຣີ** (William Carey, ຄ.ສ.1761-1834)

ທ່ານວິລລຽມ ແຄຣີເປັນມິຊຊັນນາຣີຊາວອັງກິດ ທີ່ມີຊື່ສຽງ ທີ່ສ້າງປະວັດສາດອັນຍິ່ງໃຫຍ່ໃນການ ນຳເອົາຂ່າວປະເສີດເຂົ້າໄປປະກາດໃນປະເທດອິນເດັຽ ແລະມີຜົນສະທ້ອນໄປສູ່ປະເທດອື່ນ ໆ ອີກຫຼາຍ ປະເທດໃນແຖບເອເຊັຽຕາວັນອອກສຽງໃຕ້ (Southeast Asia)

ທ່ານວິລລຽມ ແຄຣີເກີດໃນ ຄ.ສ.1761 ທີ່ປະເທດອັງກິດ ຢູ່ທາງພາກເຫນືອຂອງແອມຕັນຊາຍ (North Amptonshire) ທ່ານເປັນນັກຮຽນດີເດັ່ນໃນໝູ່ບ້ານຂອງທ່ານ ແຕ່ວ່າຕໍ່ມາພາຍຫລັງທ່ານ ມີອາຊີພເປັນນາຍຊ່າງເຣັດເກີບທີ່ເມືອງແຮັກເກີຕັນ ຕັ້ງແຕ່ອາຍຸ 14 ປີ ເພື່ອຊ່ວຍເຫຼືອຄອບຄົວ ບິດາ ມານດາຂອງທ່ານເປັນຄຣິສຕຽນທີ່ຮັກພຣະເຈົ້າ ທ່ານວິລລຽມໃຫຍ່ຂຶ້ນແລະສັດຊື່ໃນຄຣິສຈັກບັບຕິສ ທ່ານ ສົນໃຈການຮັບໃຊ້ພຣະເຈົ້າ ແລະໄດ້ເລີ້ມຕົ້ນເທສນາຕັ້ງແຕ່ອາຍຸພຽງ 18 ປີ ທ່ານສຶກສາຫາຄວາມຮູ້ ດ້ວຍຕົວເອງ ດ້ວຍການອ່ານແລະການຮຽນຮູ້ພາສາລາຕິນ ພາສາກຣີກ ພາສາເຮັບຣາຍ ແລະພາສາ ຝຣັ່ງເສດ ທ່ານປາຖນາທີ່ຈະເປັນນັກເທດທີ່ດີທີ່ສຸດ ເພື່ອຮັບໃຊ້ພຣະເຈົ້າ

ວັນນຶ່ງທ່ານວິລລຽມໄດ້ອ່ານໜັງສືກ່ຽວກັບການເດີນເຮືອຮອບໂລກ ທ່ານມີຄວາມສົນໃຈຕໍ່ປະເທດ ທີ່ຢູ່ໃນດິນແດນອັນຫ່າງໄກ ຈິດໃຈຂອງທ່ານຮູ້ສຶກຜູກພັນ ແລະເມດຕາສົງສານຕໍ່ຄົນຕ່າງຊາດເຫຼົ່ານັ້ນທີ່ບໍ່ຮູ້ ຈັກພຣະເຈົ້າ ທ່ານຈຶ່ງໄດ້ເລີ້ມຕົ້ນເທສນາ ແລະສເນີແນະນຳຄວາມຄິດເຫັນຕໍ່ກອງປະຊຸມທີ່ ນອດຕິງແຮມ (Nottingham) ເຖິງເຣື່ອງ **ໜ້າທີ່ແລະຄວາມຮັບຜິດຊອບຂອງຄຣິສຕຽນຕໍ່ການປະກາດຂ່າວປະເສີດ ຕໍ່ປະເທດທັງຫຼາຍທີ່ຍັງບໍ່ຮູ້ຈັກກັບພຣະເຈົ້າ** (The duty of Christians to attempt the spread of the gospel among heathen nations) ຂໍ້ສະເນີຂອງທ່ານບໍ່ໄດ້ຮັບການ ສນັບສນູນ ຜູ້ນຳການປະຊຸມໃນເວລານັ້ນຄັດຄ້ານຄວາມຄິດຂອງທ່ານວິລລຽມວ່າ **"ຖ້າຫາກເປັນນ້ຳພຣະ ທັຍຂອງພຣະເຈົ້າທີ່ຈະປະກາດຂ່າວປະເສີດແກ່ຊາວຕ່າງຊາດແລ້ວ ພຣະເຈົ້າກໍຈະເຮັດເອງໂດຍບໍ່ຕ້ອງ ການຄວາມຊ່ວຍເຫຼືອຂອງເຈົ້າດອກ"** ແລ້ວທີ່ປະຊຸມໄດ້ສັ່ງໃຫ້ທ່ານວິລລຽມນັ່ງລົງ ແລະບໍ່ຕ້ອງເວົ້າຫຍັງ ອີກ ຫາກແຕ່ວ່າທ່ານວິຫລຽມບໍ່ໄດ້ທໍ້ຖອຍ ທ່ານໄດ້ພິມໜັງສືບົດຄວາມເຣື່ອງ ຄຳຖາມ-ຄຳຕອບ ເພື່ອ ຮຽກຮ້ອງໃຫ້ຄຣິສຕຽນສົນໃຈ ພ້ອມໃຫ້ເຫັນເຖິງພຣະປະສົງຂອງພຣະເຈົ້າ ແລະຄຳສັ່ງຂອງພຣະເຢຊູໃຫ້ ຄຣິສຕຽນອອກໄປປະກາດຂ່າວປະເສີດແກ່ມະນຸດທົ່ວໂລກ

ວັນທີ 31 ເດືອນ 5 ຄ.ສ.1792 ທ່ານວິລລຽມໄດ້ເທສນາປຸກໃຈຈາກພຣະທັມອິສຢາ 54:2 ວ່າ **ໃຫ້ເຮົາເຮັດການໃຫຍ່ເພື່ອພຣະເຈົ້າ ໃຫ້ເຮົາສະແຫວງຫາກິຈການອັນຍິ່ງໃຫຍ່ຈາກພຣະອົງ**

ການຟື້ນຟູໃນມື້ນັ້ນໄດ້ນຳພາໃຫ້ເກີດການກໍ່ຕັ້ງອົງການປະກາດຂ່າວປະເສີດບັບຕິສ ຂຶ້ນເປັນເທື່ອ ທຳອິດ (Baptist Missionary Society) ແລະໄດ້ຖືເອົາມື້ນີ້ເປັນວັນເປີດຍຸກສັກຣາດໃໝ່ ແຫ່ງການປະກາດຂ່າວປະເສີດແກ່ຊົນນາ ໆ ຊາດຂອງ ຄະນະບັບຕິສ ທ່ານວິນລຽມ ແຄຣີ ແລະສຫາຍ ໄດ້ກໍ່ຕັ້ງອົງການບັບຕິສນີ້ດ້ວຍຄວາມຍາກລຳບາກເປັນທີ່ສຸດ ບໍ່ມີຜູ້ສນັບສນູນດ້ານການເງິນ ແລະບໍ່ມີຜູ້ທີ່ຈະ

ຍອມຖວາຍຕົວອອກໄປຮັບໃຊ້ ໃນທີ່ສຸດທ່ານວິລລຣັ້ມໄດ້ສເນີຕົນເອງເປັນມິຊຊັນນາຣີຜູ້ທຳອິດທີ່ຈະອອກເດີນທາງໄປປະກາດໃນປະເທດອິນເດັຽ ທ່ານ ແລະຄອບຄົວໄດ້ໄປເຖິງກຸງກັນກາຕາ (Culcutta) ປະເທດອິນເດັຽໃນເດືອນ 6 ຄ.ສ.1793

ທ່ານວິລລຣັ້ມ ແຄຣີ່ ແລະພັລຍາໄດ້ຮັບໃຊ້ພຣະເຈົ້າດ້ວຍຄວາມຍາກລຳບາກຫຼາຍ ເພາະເຫດວ່າໄດ້ຮັບການຕໍ່ຕ້ານຈາກເຈົ້າໜ້າທີ່ຜູ້ມີອຳນາດໃນອິນເດັຽ ອີກທັງຄອບຄົວຂອງທ່ານບໍ່ລື້ງກັບອາກາດທີ່ຮ້ອນຫຼາຍໃນອິນເດັຽ ມີອາການເຈັບແລະເປັນພຍາດຢູ່ເລື້ອຍ ໆ ພ້ອມມີບັນຫາດ້ານການເງິນອີກ ໃນຖານະທີ່ທ່ານເປັນຜູ້ບຸກເບີກ ທ່ານເປັນມິຊຊັນນາຣີບັບຕິສຜູ້ທຳອິດ ທ່ານຕ້ອງເຮັດວຽກການຢ່າງໜັກເພື່ອກໍ່ຕັ້ງຄຣິສຈັກໃຫ້ເກີດຂຶ້ນ ອັນເປັນການຍາກລຳບາກຫຼາຍທີ່ສຸດ ເພາະວ່າຊາວອິນເດັຽນັບຖືສາສນາຮິນດູສາສນາອິສລາມ ແລະສາສນາພຣາມ ມີພິທີທາງສາສນາຫຼາຍແນວຍາກຕໍ່ການທີ່ຈະຮັບເອົາສາສນາໃໝ່ໄດ້ ໃນຣະຫວ່າງ 5 ປີແລກທ່ານຕ້ອງຊ່ວຍຕົວເອງໂດຍການເຮັດວຽກໃນໂຮງງານຍ້ອມສີ ໃນເວລາດຽວກັນກໍໄດ້ຮຽນຮູ້ຈັກພາສາອິນເດັຽຢ່າງເລີກຊຶ້ງ ທ່ານໄດ້ຈັດໃຫ້ມີການນມັສການພຣະເຈົ້າຖ້າມກາງໝູ່ຄົນງານໃນໂຮງງານ ຫຼາຍກຸ່ມດ້ວຍກັນ ທ່ານໃຊ້ຊີວິດຮ່ວມກັບຊາວບ້ານໃນຫຼາຍ ໆ ໝູ່ບ້ານຈົນເປັນທີ່ຮູ້ຈັກດີ ໃນເວລາດຽວກັນ ທ່ານກໍແປພຣະຄຳຂອງພຣະເຈົ້າໃຫ້ເປັນພາສາອິນເດັຽ

ທ່ານວິລລຣັ້ມ ແຄຣີ່ໄດ້ລາຍງານຂ່າວເຖິງຄວາມຍາກລຳບາກຫຼາຍແນວໃນການປະກາດຂ່າວປະເສີດ ແລະການກໍ່ຕັ້ງຄຣິສຈັກໃນປະເທດອິນເດັຽແກ່ຄຣິສຈັກບັບຕິສໃນປະເທດອັງກິດ ລາຍງານຂ່າວນີ້ໄດ້ປຸກໃຈໃຫ້ຄຣິສຈັກບັບຕິສໃນອັງກິດຕື່ນຕົວຢາກຊ່ວຍເຫຼືອ ແລະພ້ອມທີ່ຈະສົ່ງມິຊຊັນນາຣີຣຸ່ນໃໝ່ໄປເຕີມ ຫາກແຕ່ວ່າບໍຣິສັດອັງກິດ-ອິນເດັຽຕາວັນອອກບໍ່ຍອມອະນຸຍາດໃຫ້ພວກມິຊຊັນນາຣີຣຸ່ນໃໝ່ນີ້ເຂົ້າມາຕັ້ງຖິ່ນຖານໃນກຸງກັນກາຕ້າ ດັ່ງນັ້ນທ່ານວິລລຣັ້ມ ແຄຣີ່ ແລະມິຊຊັນນາຣີທີ່ເຂົ້າມາໃໝ່ນີ້ຈຳເປັນຕ້ອງຍ້າຍໄປຢູ່ທີ່ ເຊີຣັມໂປ (Serampore) ແລະຕັ້ງສຳນັກງານປະກາດຂ່າວປະເສີດເປັນການຖາວອນຢູ່ທີ່ນັ້ນ

ຄ.ສ.1799 ໂດຍຄວາມຊ່ວຍເຫຼືອຂອງທ່ານ ມາຊແມນ (Marshman) ແລະທ່ານວອດ (Ward) ທັງສອງທ່ານເປັນພໍ່ຄ້າມີຊື່ສຽງໃນເຊີຣັມໂປ ໄດ້ເປີດໂອກາດໃຫ້ທ່ານວິນລຣັ້ມ ແຄຣີ່ ສາມາດກໍ່ຕັ້ງງານການປະກາດຂ່າວປະເສີດຂຶ້ນໄດ້ຢ່າງໝັ້ນຄົງ

ຜົນງານທີ່ສຳຄັນທີ່ທ່ານວິນລຣັ້ມ ແຄຣີ່ ແລະມິຊຊັນນາຣີຄົນອື່ນ ໆ ໄດ້ເຮັດນັ້ນຄື ການກໍ່ຕັ້ງໂຮງຮຽນ ວິທຍາລັຍ ໂຮງພິມ ຈົນກະທັ້ງທ່ານວິນລຣັ້ມໄດ້ຮັບການຍ້ອງຍໍ ໃຫ້ໄດ້ຮັບກຽດຈາກຜູ້ວ່າຣາຊການຂອງເຊີຣັມໂປ ທ່ານຮຽນຮູ້ຈັກພາສາອິນເດັຽຫຼາຍ ໆ ພາສາ ຕົວຢ່າງ ພາສາເບັງກາລີ (Bengali) ພາສາມາຣາຕີ (Marathi) ພາສາສັນສະກິດ (Sansakrit) ທ່ານວິລລຣັ້ມໄດ້ແປພຣະຄັມພີອອກເຖິງ 35 ພາສາອິນເດັຽ ມີບາງພາສາທີ່ແປພຣະຄັມພີອອກທັງປຶ້ມ ແລະບາງພາສາແປພຣະຄັມພີອອກພຽງບາງຕອນ ທ່ານໄດ້ຂຽນໜັງສືກຽວກັບສາສນາຄຣິສຕຽນ ແລະໄດ້ຈັດພິມໜັງສືໄວຍາກອນ ແລະວັດຈະນານຸກົມອອກມາໃນພາສາສັນສະກິດ ພາສາເບັງກາລີ ພາສາມາລາຕີ ພາສາຕາລູກູ (Telugu) ແລະພາສາພຣາມ (Sikh) ໄດ້ສຳເຣັດ ນອກຈາກຜົນງານດັ່ງກ່າວແລ້ວ ທ່ານຍັງໄດ້ມີອິດທິພົນປຣັບແປງກົດໝາຍຂອງອິນເດັຽດັ່ງນີ້

ໃນ ຄ.ສ.1801 ຣັຖບານອິນເດັຽໄດ້ອອກກົດໝາຍຫ້າມການໂຍນເດັກນ້ອຍລົງໃນກອງໄຟເພື່ອເຜົາບູຊາຕໍ່ເທວະຣູບ

ໃນ ຄ.ສ.1829 ຍົກເລີກພິທີຝັງຍິງໝ້າຍ (ຍິງທີ່ຜົວຕາຍ) ໂດຍຝັງຍິງໝ້າຍທັ້ງເປັນໃນພິທີປົງສົບພ້ອມກັບສາມີທີ່ຕາຍແລ້ວ

ທ່ານວິລລຽມ ແຄຣີ ໄດ້ເທສນາສັ່ງສອນ ແລະດຳເນີນຊີວິດຄຣິສຕຽນຢ່າງສັດຊື່ ທ່ານໄດ້ພຍາຍາມຢ່າງທີ່ສຸດໃນການຕໍ່ສູ້ພິທີການເຜົາບູຊາເທວະຮູບດ້ວຍຊີວິດມະນຸດ ຄວາມພຍາຍາມຂອງທ່ານໄດ້ຮັບຜົນສຳເຣັດ ທ່ານຮັບໃຊ້ຢູ່ໃນປະເທດອິນເດັຽນານເຖິງ 41 ປີ ໄດ້ວາງຮາກຖານການປະກາດຂ່າວປະເສີດຈົນກະທັ້ງຄຣິສສາສນາເປັນສາສນານຶ່ງທີ່ເຂັ້ມແຂງໃນປະເທດອິນເດັຽ ແລະມີການສົ່ງເສີມພັທນາໃຫ້ເກີດຄວາມກ້າວໜ້າທັງທາງດ້ານສິນທັມ ກົດໝາຍ ແລະການສຶກສາອັນສູງສຸດ ທ່ານສິ້ນຊີວິດໃນປີ ຄ.ສ.1834 ມີອາຍຸໄດ້ 73 ປີ

**ທ່ານເຮັນຣີ່ ມາຕິນ** (Henry Martyn, ຄ.ສ.1781-1812)

ທ່ານເກີດໃນເມືອງຄອຣ໌ນວອລລ໌ (Cornwall) ທາງພາກໃຕ້ຂອງປະເທດອັງກິດໃນປີ 1781 ທ່ານເປັນນັກສຶກສາໃນມະຫາວິທຍາລັຍແຄມບຣິດ໌ຈ (Cambridge University) ທ່ານມີຄວາມສົນໃຈຊີວິດຝ່າຍວິນຍານຢ່າງລຶກຊຶ້ງ ແລະໄດ້ຖວາຍຕົວຮັບໃຊ້ພຣະເຈົ້າໂດຍການສະມັກເຂົ້າເປັນມິຊຊັ່ນນາຣີໄປປະເທດອິນເດັຽກັບອົງການສົ່ງມິຊຊັ່ນນາຣີຂອງຄຣິສຈັກອັງກິດ ແຕ່ເນື່ອງຈາກວ່າບໍຣິສັດອິນເດັຽຕະວັນອອກມີຂໍ້ຜູກມັດ ບໍ່ອນຸຍາດໃຫ້ຄຣິສຈັກອັງກິດສົ່ງມິຊຊັ່ນນາຣີເຂົ້າປະເທດອິນເດັຽ ດັ່ງນັ້ນແລ້ວທ່ານເຮັນຣີ່ ມາຕິນຈຶ່ງໄດ້ສະມັກເປັນສາສນາຈານປະຈຳກອງທະຫານອັງກິດ ແລະເດີນທາງໄປເຖິງປະເທດອິນເດັຽ ໃນ ຄ.ສ. 1806 ທ່ານເຮັນຣີ່ໄດ້ພົບກັບທ່ານວິລລຽມ ແຄຣີ ແລະມິຊຊັ່ນນາຣີທີ່ມາຢູ່ໃນປະເທດອິນເດັຽ ດ້ວຍເຫດນີ້ເອງທ່ານເຮັນຣີ່ໄດ້ ຊ່ວຍທຳການແປລພຣະຄັມພີ ແລະໜັງສືອື່ນ ໆ ພ້ອມເປັນສາສນາຈານໃນຄ້າຍທະຫານອັງກິດນຳ ທ່ານເຮັນຣີ່ຍັງໄດ້ໃຊ້ໂອກາສອອກປະກາດເທສນາຕາມໂຮງຮຽນຂອງຊາວຮິນດູ ແລະແກ່ພວກອິນເດັຽທີ່ນັບຖືສາສນາອິສລາມ ນອກຈາກນີ້ທ່ານຍັງໃຊ້ເວລາໃນການສຶກສາພາສາອາຣາບິກ ແລະເປີເຊັຽ ຈົນກະທັ່ງທ່ານສາມາດແປລພຣະຄັມພີໃໝ່ອອກເປັນພາສາເປີເຊັຽໄດ້ສຳເຣັດ ທ່ານເຮັນຣີ່ໄດ້ເດີນທາງໄປຢາມດິນແດນອາຣະເບັຽ ແລະປະເທດເປີເຊັຽ ເພື່ອກວດເບິ່ງດູວ່າ ພຣະຄັມພີທີ່ທ່ານແປອອກເປັນພາສາເປີເຊັຽນັ້ນຖືກຕ້ອງດີຫຼືບໍ່ ທ່ານອອກເດີນທາງຈາກກັນກາຕ້າໃນເດືອນ 1 ປີ ຄ.ສ. 1811 ແລະເຖິງເປີເຊັຽໃນເດືອນ 5 ປີດຽວກັນ ໃນຣະຫວ່າງທາງທີ່ທ່ານຕ້ອງອົດສາເດີນທາງຢ່າງຍາກລຳບາກທີ່ສຸດ ທ່ານຕ້ອງເດີນທາງຜ່ານທະເລຊາຍ ອັນແສນໄກ ແລະພົບກັບຄວາມທຸກຍາກແຕ່ຜູ້ດຽວ ຮ່າງກາຍຂອງທ່ານເລີ້ມອ່ອນແອ ເຖິງກະນັ້ນທ່ານກໍບໍ່ຍອມຍຸດຢັ້ງ ທ່ານໄດ້ເປັນພຍານກັບພວກມູນຫລ່າ (Mullahs) ແລະມີນັກສຶກສາຕິດຕາມຮຽນຈາກທ່ານ ທ່ານໄດ້ໃຊ້ເວລາຄັດລອກພຣະຄັມພີໃໝ່ອອກເປັນພາສາເປີເຊັຽຢ່າງສວຍງາມທີ່ສຸດ ເພື່ອທີ່ຈະນຳມອບໃຫ້ແກ່ເຈົ້າຊີວິດ ແລະເຈົ້າຟ້າຊາຍ ແຫ່ງເປີເຊັຽ ແຕ່ກ່ອນທີ່ທ່ານຈະໄດ້ມອບໃຫ້ເປັນຂອງຂວັນ ທ່ານໄດ້ເຈັບລົງຢ່າງໜັກ ແລະຕ້ອງເດີນທາງໄປກຸງຄອນສະແຕນຕິໂນເປີ້ລ ເພື່ອຫວັງວ່າຈະໄດ້ເດີນທາງຕໍ່ໄປໃຫ້ເຖິງປະເທດອັງກິດ ແຕ່ວ່າທ່ານຕ້ອງຕາຍໄປໃນຣະຫວ່າງທາງໃນວັນທີ່ 16 ເດືອນ 10 ປີ ຄ.ສ. 1812 ທີ່ໂທເຄທ (Tocat) ໃນປະເທດອາເມເນັຽປັດຈຸບັນ ຊຶ່ງຫລຸມຝັງສົບຂອງທ່ານຍັງຢູ່ທີ່ນັ້ນຈົນເທົ່າທຸກມື້ນີ້

ມີຄຳທີ່ທ່ານເຮັນຣີ່ໃຊ້ຂຽນໄວ້ ເມື່ອຕອນທີ່ທ່ານຮອດອິນເດັຽໄດ້ພຽງ 2 ມື້ ທ່ານຂຽນວ່າ **"ຂໍໃຫ້ຂ້າພະເຈົ້າເປັນດັ່ງເຄື່ອງບູຊາຂອງອົງພຣະຜູ້ເປັນເຈົ້າ"** ອັນເປັນຄຳຂວັນທີ່ມີຄວາມໝາຍລຶກຊຶ້ງທີ່ບໍ່ມີຂໍ້ຄວາມອື່ນໃດອີກທີ່ຈະບັນລະຍາຍເຖິງຄວາມຮັກ ແລະການຖວາຍຕົວຂອງທ່ານເພື່ອຮັບໃຊ້ພຣະເຈົ້າ ທ່ານໄດ້ອຸທິດຖວາຍວິນຍານຈິດຂອງທ່ານເພື່ອການຮັບໃຊ້ຢ່າງແທ້ຈິງ

**ທ່ານອະເລັກຊານເດີ ດັຟຟ໌** (Alexamder Duff, ຄ.ສ.1806-1878)

ທ່ານອະເລັກຊານເດີ ດັຟຟ໌ເປັນຊາວສະກັອຕເກີດໃນເມືອງເພີຊໄຊ (Perthshire) ຈົບການສຶກສາຈາກມະຫາວິທຍາລັຍເຊັນແອນດູສ໌ (St. Andrews University) ເປັນມິຊຊັ່ນນາຣີຜູ້ທໍາອິດຈາກຄຣິສຈັກສະກັອຕແລນ ທ່ານໄປຮອດກຸງກັນກາຕ້າອິນເດັຽໃນປີ ຄ.ສ. 1830 ໂດຍມີອາຍຸພຽງ 24 ປີ ທ່ານດັຟຟ໌ມີປະສົບການຄືກັບອາຈານໂປໂລ ຄືທ່ານພະຈົນພັຍກັບເຮືອແຕກເຖິງ 2 ເທື່ອ ທ່ານຍັງໄດ້ພະຈົນກັບການຕໍ່ຕ້ານ ແລະຖືກກີດກັນຈາກພວກມິຊຊັ່ນນາຣີຊາດອື່ນ ໆ ເພາະວ່າທ່ານເປັນຊາວສະກັອຕ ແລະອີກທັງຊາວອິນເດັຽກໍຕໍ່ຕ້ານທ່ານດັຟຟ໌ ແຕ່ວ່າທ່ານວິລລຽມ ແຄຣີໄດ້ໃຫ້ການຕ້ອນຮັບ ແລະໃຫ້ການສນັບສນຸນຈົນກະທັ່ງທ່ານດັຟຟ໌ສາມາດຕັ້ງໂຮງຮຽນຄຣິສຕຽນຂຶ້ນ ເພື່ອສອນນັກຮຽນຊາວອິນເດັຽ ໃນວັນເປີດໂຮງຮຽນຄຣິສຕຽນນີ້ ທ່ານໄດ້ຕັ້ງກົດຣະບຽບໃຫ້ນັກຮຽນ ອະທິຖານຕາມຢ່າງພຣະເຢຊູກ່ອນເຂົ້າຮຽນເປັນພາສາເບັງກາລີ ແລະພິມຂ່າວປະເສີດຂອງພຣະເຢຊູແຈກແກ່ນັກຮຽນທຸກຄົນໃຫ້ໄດ້ອ່ານ ໃນຕອນເລີ່ມຕົ້ນໂຮງຮຽນຄຣິສຕຽນນີ້ ພວກນັກຮຽນເກີດການຕໍ່ຕ້ານ ແຕ່ວ່າໃນທີ່ສຸດໂດຍຄວາມຕັ້ງໃຈຂອງທ່ານດັຟຟ໌ຂ່າວປະເສີດຂອງພຣະເຢຊູ ໄດ້ນໍາພາໃຫ້ມີນັກຮຽນກັບໃຈໃໝ່ຈາກການນັບຖືສາສນາຮິນດູ ມາເປັນຄຣິສຕຽນແລະມີນັກຮຽນຈໍານວນຫລາຍຖວາຍຕົວອອກໄປຮັບໃຊ້ປະກາດຂ່າວປະເສີດເພື່ອອົງພຣະເຢຊູຄຣິສ

**ທ່ານໝໍ ຈອນ ສະກັດເດີ** (John Scudder M.D., ຄ.ສ.1793-1855)

ທ່ານໝໍຈອນເປັນນາຍແພດມິຊຊັ່ນນາຣີອາເມຣິກັນ-ດັຊ ໄດ້ຈົບການສຶກສາຈາກວິທຍາລັຍໃນນິວເຈີຊີ້ (College of New Jersey, ຄ.ສ.1811) ແລະຈົບວິທຍາລັຍການແພດແລະການຜ່າຕັດໃນນິວຍອຄ (New York College of Physicians and Surgeons, ຄ.ສ.1813) ເປັນຜູ້ທໍາອິດເດີນທາງຈາກນິວຍອຣ໌ຄຮອດປະເທດອິນເດັຽ ໃນປີ ຄ.ສ. 1819 ຈາກການອ່ານເຈ້ຽໃບປີວທ່ານແລະພັລຍາໄດ້ຮັບການສນັບສນູນສິ່ງເສີມໂດຍ American Board of Commissioners for Foreign Missions ທ່ານໄດ້ຮັບໃຊ້ພຣະເຈົ້າລົງໄປເຖິງທາງໃຕ້ຂອງອິນເດັຽຄືປະເທດສີລັງກາໃນປັດຈຸບັນ ແລະມີຜົນງານທີ່ເກີດຜົນຫລາຍທີ່ເມືອງ ມາດຣາສ (Madras) ທ່ານຈອນ ສະກັດເດີເປັນນາຍແພດຮັກສາຜູ້ເຈັບເປັນພະຍາດ ເປັນນັກເທສ ເປັນນາຍຄຣູແລະເປັນນາຍພາສາໄປພ້ອມກັນໝົດທີດຽວ ທ່ານມີຊີວິດທີ່ສັດຊື່ໃນເຣື່ອງການອ້ອນວອນອະທິຖານບໍ່ຂາດ ແລະກະຕືຣືລົ້ນຕໍ່ການຮັບໃຊ້ພຣະເຈົ້າຈົນຮອດມື້ສຸດທ້າຍທີ່ທ່ານຕ້ອງຈາກໂລກນີ້ໄປ ມີຜູ້ສັນລະເສີນທ່ານວ່າ ບໍ່ມີເມືອງໃດທີ່ຢູ່ທາງໃຕ້ຂອງປະເທດອິນເດັຽທີ່ບໍ່ໄດ້ຮັບຟັງຂ່າວປະເສີດຈາກປາກຂອງທ່ານ ແລະລູກຫລານຂອງທ່ານຈອນ ສະກັດເດີໄດ້ຮັບໃຊ້ພຣະເຈົ້າຕາມແບບຢ່າງຂອງພໍ່ແລະແມ່ມາເຖິງ 4 ຊົ່ວອາຍຸຄົນ

ພາຍຫລັງຈາກມິຊຊັນນາຣີຫລາຍທ່ານຕາມທີ່ໄດ້ກ່າວມາແລ້ວນັ້ນ ມິຊຊັນນາຣີເຫລົ່ານີ້ມີຄວາມເສັຽສລະຢ່າງຫລວງຫລາຍກະທັ່ງຊີວິດຂອງຕົນເພື່ອເຜີຍແຜ່ຂ່າວປະເສີດໃນປະເທດອິນເດັຽ ໃນຣະຫວ່າງປີ ຄ.ສ. 1820 ແຕ່ນັ້ນມາມີອົງການມິຊຊັນນາຣີຈາກປະເທດຕ່າງ ໆ ຫລາຍປະເທດໄດ້ອາສາສະມັກເຂົ້າໄປປະກາດໃນປະເທດອິນເດັຽອີກຫລາຍອົງການດ້ວຍກັນ ຕົວຢ່າງ

1. ຄຣິສຈັກບັພຕິສແຫ່ງອັງກິດ (English Baptist)
2. ຄຣິສຈັກແຫ່ງສະກັອຕແລນດ໌ (Church of Scotland)
3. ຄຣິສຈັກມິຊຊັ່ນນາຣີໂຊໄຊຕີ້ (Church of Missionary Society)
4. ລອນດອນມິຊຊັ່ນນາຣີໂຊໄຊຕີ້ (London Missionary Society)
5. ກຸ່ມເວສເລ່ ມິຊຊັ່ນນາຣີໂຊໄຊຕີ້ (Wesleyan Missionary Society)
6. ກຸ່ມເຈເນຊິດອເມຣິກັນມິຊຊັ່ນນາຣີ (Genesis American Mission)
7. ຄຣິສຈັກອເມຣິກັນເພັຣ໌ສໄບທີຣຽນ (American Presbylerian Churches)
8. ຄຣິສຈັກອເມຣິກັນເມທໍດິສອະພິສຄະໂປລ (American Methodist Episcopal)
9. ຄຣິສຈັກອີແວນເຈລິເຄິລ ລູເທີແລນ (Evangelical Lutherand)
10. ຄຣິສຕຽນມິຊຊັ່ນນາຣີອະໄລແອນ (Christian and Missionary Alliance)

ນອກເຫນືອຈາກມິຊຊັ່ນນາຣີຄນະຕ່າງ ໆ ດັ່ງກ່າວມາແລ້ວນັ້ນຍັງມີຄນະນິກາຍອື່ນ ໆ ອີກຈຳນວນຫລາຍທີ່ບໍ່ໄດ້ເອີ້າເຖິງ ເພາະວ່າປະເທດອິນເດັຽເປັນປະເທດທີ່ໃຫຍ່ແລະມີປະຊາກອນເປັນອັນດັບສອງຂອງໂລກຣອງລົງມາຈາກປະເທດຈີນ ພວກຄຣິສຕຽນອັນເດັຽກໍມີຄວາມເຂັ້ມແຂງຫລາຍ ໄດ້ກໍ່ຕັ້ງຄຣິສຈັກຫລາຍ ໆ ແຫ່ງຢ່າງກວ້າງຂວາງ ແລະຜູ້ປະກາດຂ່າວປະເສີດຊາວອິນເດັຽໄດ້ກໍ່ຕັ້ງອົງການຂຶ້ນຢ່າງເຂັ້ມແຂງແຜ່ຂຍາຍໄປຮອດປະເທດສີລັງກາ ໄດ້ຕັ້ງຊື່ອົງການນີ້ວ່າ ສີລັງກາແລະອິນເດັຽ ເຈນເນຣັລມິຊຊັ່ນ ໃນປີ ຄ.ສ. 1893 (The Ceylon and India General Mission)

ຄວາມກ້າວຫນ້າຂອງການປະກາດຂ່າວປະເສີດ ໄດ້ຂຍາຍໄປຢ່າງບໍ່ຍຸດຢັ້ງເຖິງແມ່ນວ່າຈະມີບັນຫາຫລາຍແນວ ເພາະວ່າສາສນາດັ້ງເດີມອັນເຂັ້ມແຂງໃນອິນເດັຽ ວັທນະທັມ ຮີດຄອງ ການແບ່ງຊັ້ນວັນນະ ສິ່ງເຫລົ່ານີ້ ເປັນບັນຫາຂັດຂວາງການເຜີຍແຜ່ ແຕ່ວ່າຄຣິສຕຽນຜູ້ຈິງຮັກພັກດີຕໍ່ພຣະເຈົ້າຈະບໍ່ຍອມທໍ້ຖອຍ ແຕ່ຍ້ອນວ່າມີຄວາມເຂັ້ມແຂງແລະຕໍ່ສູ້ຢ່າງກ້າຫານ ຈົນກະທັ່ງມີການຈາລຶກໄວ້ໃນປວັດສາດວ່າ ໃນຣາວ ຄ.ສ.1878 ມີຊາວອິນເດັຽສອງພັນສອງຮ້ອຍຊາວສອງຄົນ (2,222 ຄົນ) ໄດ້ຮັບບັພຕິສມາໃນມື້ດຽວກັນທີ່ເມືອງ ອອນໂກລ (Ongole) ແລະໄດ້ເພີ້ມເຂົ້າມາອີກ 8 ພັນຄົນ ພາຍໃນເວລາພຽງທິກອາທິດອັນນີ້ເປັນຂໍ້ພິສູດໃຫ້ເຮົາໄດ້ເຫັນເຖິງການນຳພາຂອງພຣະເຈົ້າໃຫ້ເກີດຄວາມອົດສາພຍາຍາມ ໂດຍຄວາມສັດຊື່ຂອງຜູ້ເຊື່ອຊາວອິນເດັຽ ແລະມິຊຊັ່ນນາຣີທັງຫລາຍທີ່ອຸທິດເສັຽສລະເພື່ອຂ່າວປະເສີດ ແລະຄວາມຣອດພົ້ນແກ່ຊາວອິນເດັຽຢ່າງແທ້ຈິງ

**ຫລັກການປະກາດທີ່ເກີດຜົນ**

ມິຊຊັ່ນນາຣີທັງຫລາຍໄດ້ໃຊ້ວິທີການປະກາດຂ່າວປະເສີດຕາມຢ່າງທີ່ທ່ານວິລລຽມ ແຄຣີໄດ້ວາງພື້ນຖານເອົາໄວ້ ພວກນັກເທດໄດ້ອອກໄປເທສນາຕາມຕລາດເຊົ້າ ຫນ້າປະຕູວິຫານຂອງພວກທີ່ນັກນມັສການເທວຮູບຕາມບ່ອນງານບຸນແລະຕາມຫມູ່ບ້ານ ມີການຈັດຕັ້ງງານສັງຄົມສົງເຄາະໂດຍສະເພາະຢ່າງຍິ່ງແກ່ຜູ້ທີ່ເປັນໂຣຄຂີ້ທູດທີ່ຖືກສັງຄົມອິນເດັຽທອດຖິ້ມ ມີການເປີດໂຮງຫມໍເພື່ອຮັກສາຜູ້ເປັນພະຍາດອັນເປັນງານສຳຄັນທີ່ເປີດປະຕູໃຫ້ຊາວອິນເດັຽຍອມຮັບຟັງຂ່າວປະເສີດ ມີການກໍ່ຕັ້ງໂຮງຮຽນ ວິທຍາລັຍຄຣິສຕຽນ ແລະໂດຍສະເພາະຢ່າງຍິ່ງໂຮງຮຽນສັດຕຣີ ມີການກໍ່ຕັ້ງງານເພື່ອພວກແມ່ຍິງ ເພື່ອກູ້ຖານະທາງສັງຄົມຂອງແມ່ຍິງຊາວອິນເດັຽໃຫ້ດີຂຶ້ນ ເພາະເຫດວ່າແມ່ຍິງຊາວອິນເດັຽຈຳນວນຫລາຍທີ່ສຸດຖືກສົ່ງຫຼືຖືກຂາຍໃຫ້ເປັນຍິງນາງຣຳຕໍ່ເທວຮູບ ຫຼືເປັນຍິງແມ່ຈ້າງນອນນຳຊາຍເພື່ອຖວາຍບູຊາຕໍ່ເທວຮູບ

ໃນວິຫານວຽກຕ່າງ ໆ ເຫລົ່ານີ້ທີ່ຈະນຳພາໃຫ້ພວກແມ່ຍິງຫລຸດອອກຈາກຄວາມເຊື່ອເດີມເປັນວຽກທີ່ຍາກລຳບາກຫລາຍ ແລະເກີດຜົນຍາກທີ່ສຸດ ເພາະເຫດວ່າສັງຄົມຊາວອິນເດັຽໄດ້ຖືກັນມາແນວນີ້ເປັນພັນ ໆ ປີ ຍາກທີ່ຈະເກີດການປ່ຽນແປງ ໃນເວລາດຽວກັນມິຊຊັນນາຣີ ແລະຜູ້ຮັບໃຊ້ພຣະເຈົ້າຊາວອິນເດັຽທີ່ມີຄວາມຮູ້ຄວາມສາມາດກໍໄດ້ນັ່ງລົງແປພຣະຄັມພີ ແລະພິມພຣະຄຳຂອງພຣະເຈົ້າເປັນຕອນ ໆ ລົງໃນແຜ່ນເຈັ້ຽນ້ອຍ ໆ ອອກແຈກຢາຍ (Bible, Tract and Christian Literature) ວຽກງານສຳຄັນທີ່ເກີດຂຶ້ນນີ້ຍ້ອນເພາະວ່າຜູ້ຮັບໃຊ້ແຕ່ລະທ່ານຮູ້ຈັກຫນ້າທີ່ຂອງຕົນ ແລະຍອມເສັຽສລະແຮງງານ ຄວາມສາມາດຂອງຕົນຢ່າງສັດຊື່ ໂດຍບໍ່ມີຄວາມອິຈສາຍ້ານລິ້ນ ບໍ່ຂັດຂວາງຜູ້ອື່ນ ຫຼືບໍ່ເຫັນວ່າງານນຶ່ງສຳຄັນກວ່າອີກງານນຶ່ງ ແລະບໍ່ເຫັນແກ່ຊື່ສຽງຫຼືຄວາມສຳຄັນຂອງຕົນເອງ ແຕ່ວ່າໃຫ້ການເຄົາຣົບຍົກຍ່ອງນັບຖືກັນແລະກັນ ຕ່າງຄົນຕ່າງທຳງານທີ່ຕົນຖະນັດແລະຕາມທີ່ພຣະເຈົ້າປະທານໃຫ້ ເປັນຄວາມຈິງທີ່ບໍ່ມີຜູ້ໃດສາມາດເຮັດວຽກການງານໄດ້ທຸກແນວ ເພາະວ່າມະນຸດມີຄວາມຈຳກັດ ມີຄວາມສາມາດແລະຄວາມອິດອ່ອນທາງຮ່າງກາຍ ດັ່ງນັ້ນແລ້ວຄຣິສຕຽນສົມຄວນພິຈາຣະນາເບິ່ງດູຕົນເອງ ແລະຖວາຍຄວາມຖະນັດຄວາມສາມາດຂອງຕົນອັນເປັນຂອງປະທານຈາກພຣະເຈົ້າ ນຳເອົາອອກມາຮັບໃຊ້ພຣະເຈົ້າຢ່າງສັດຊື່ ໂດຍບໍ່ຕ້ອງແຍ່ງຊິງຫນ້າທີ່ກັນ ຫຼືໂຈມຕີຜູ້ອື່ນຍ້ອນຍ້ານເສັຍຫນ້າຫາກວ່າເຮົາມີໃຈບໍຣິສຸດຮັບໃຊ້ພຣະເຈົ້າແລ້ວ ພຣະເຈົ້າຈະປະທານພຣະພອນໃນເວລາອັນສົມຄວນ ແລະຈະໄດ້ຮັບການຍົກຍ້ອງວ່າເສັຽສລະເພື່ອພຣະເຢຊູຄຣິສອັນແທ້ຈິງ

**ອຳນາດຂອງຝ່າຍຜູ້ຕໍ່ຕ້ານສາສນາຄຣິສ**

ແມ່ນວ່າການເຜີຍແຜ່ປະກາດຂ່າວປະເສີດຈະກ້າວຫນ້າໄປໃນປະເທດອິນເດັຽ ແຕ່ວ່າອຳນາດຂອງຝ່າຍຕໍ່ຕ້ານກໍມີຫລາຍແນວຄືກັນ ດັ່ງຕົວຢ່າງຕໍ່ໄປນີ້

**1. ເຣື່ອງການແບ່ງຊົນຊັ້ນວັນນະ** ຣະບົບການແບ່ງຊັ້ນວັນນະໄດ້ມີມາແຕ່ໂບຮານແລະກໍ່ໃຫ້ເກີດການແຕກແຍກໃນສັງຄົມ ການຖືຕົວວ່າຕະກູລນຶ່ງດີເດັ່ນສູງກວ່າອີກຕະກູນນຶ່ງ ເກີດການດູຖູກດູຫມິ່ນ ແລະເອົາປຽບຊົນຊັ້ນວັນນະທີ່ຕ່ຳກວ່າ ພວກວັນນະຕ່ຳບໍ່ມີໂອກາດແລະບໍ່ມີຄວາມສະເມີພາບທາງສັງຄົມ ເມື່ອຊາວອິນເດັຽເຂົ້າມາເປັນຄຣິສຕຽນແລ້ວ ໄດ້ປ່ຽນແປງຊີວິດແລະໄດ້ທຳຕາມພຣະຄຳຂອງພຣະເຈົ້າ ໂດຍລົບລ້າງເອົາເຣື່ອງການຖືຊັ້ນວັນນະອອກໄປ ອັນເປັນສາເຫດໃຫ້ຊາວອິນເດັຽວັນນະສູງບໍ່ຍອມເຂົ້າມາເປັນຄຣິສຕຽນ ນອກນັ້ນຍັງມີບັນຫາອີກວ່າຊາວອິນເດັຽທີ່ມີວັນນະສູງກວ່າບໍ່ຍອມຖືພິທີຣະລຶກກັບພວກຄຣິສຕຽນຊັ້ນວັນນະທີ່ຕ່ຳກວ່າ ແລະຍັງເກີດການຂັດແຍ້ງກັນໃນຫມູ່ມິຊຊັນນາຣີອີກ ມີບາງພວກທີ່ຍອມອ່ອນຜ່ອນຕາມ ໄດ້ຕັ້ງຄຣິສຈັກຂອງຕົນແລະຖືຮັກສາເຣື່ອງຊັ້ນວັນນະຢູ່ຄືເກົ່າ ແຕ່ສ່ວນມິຊຊັນນາຣີທີ່ເຂັ້ມແຂງບໍ່ຍອມອ່ອນຂໍ້ໃນເຣື່ອງນີ້ຖືວ່າຜິດຄຳສອນຂອງພຣະຄັມພີ ກໍໄດ້ຕັ້ງຄຣິສຈັກໄປອີກແນວນຶ່ງ ດັ່ງນີ້ແລ້ວຄຣິສຕຽນກໍເກີດການຂັດແຍ້ງແລະແຕກແຍກກັນອອກໄປ ບັນຫາໃນເຣື່ອງນີ້ບໍ່ໄດ້ມີແຕ່ພຽງເລັກນ້ອຍແຕ່ກ່ຽວຂ້ອງໄປເຖິງຊີວິດປະຈຳວັນ ແລະການເປັນຢູ່ຂອງຊາວອິນເດັຽ ການກິນຢູ່ທຳມາຫາລ້ຽງຊີພ ການແຕ່ງງານ ການດູຖືກຢຽດຫຍາມ ແລະຄວາມບໍ່ເປັນທັມທາງສັງຄົມ ຄຣິສຕຽນໄດ້ພຍາຍາມຫາທາງແກ້ໄຂ ແລະຕໍ່ສູ້ເຣື່ອງຊັ້ນວັນນະ ແຕ່ວ່າພວກຮິນດູບໍ່ເຫັນນຳແລະປະນາມຄຣິສຕຽນວ່າເປັນພວກທຳລາຍຣະບົບສັງຄົມຂອງຊາວອິນເດັຽ

**2. ສາສນາຮິນດູ** ເປັນສາສນາທີ່ມີພຣະເຈົ້າອົງນ້ອຍ ໆ ເປັນພັນ ໆ ອົງອີກທັງມີຄຳສອນອັນຂາດສິນທັມ ການບູຊາຍັນຕໍ່ເທວຮູບທີ່ກ່ຽວຂ້ອງກັບຣາຄະຕັນຫາອັນຫນ້າຣັງກຽດ ມີຍິງແມ່ຈ້າງຕາມວິຫານ

ຊຶ່ງເປັນທີ່ສຳຣານໃຈຂອງຊາຍທີ່ນັບຖືສາສນາຮິນດູ ແຕ່ວ່າຄຣິສຕຽນສອນເຖິງພຣະເຈົ້າອົງດຽວ ຄວາມບໍຣິສຸດ ແລະການປະຖິ້ມຣາຄະຕັນຫາ ຈຶ່ງເປັນການຍາກທີ່ຜູ້ຊາຍອິນເດັຽຜູ້ນັບຖືສາສນາຮິນດູຈະຫັນມາຫາພຣະເຈົ້າ ສ່ວນພວກແມ່ຍິງແມ່ເຮືອນກໍບໍ່ມີສິດອັນໃດໃນການທີ່ຈະກ້າຕັດສິນໃຈຕິດຕາມພຣະເຈົ້າ ເພາະວ່າຕັ້ງແຕ່ສມັຍໂບລານມາຜູ້ຍິງອິນເດັຽບໍ່ມີສິດໃນຄອບຄົວແລະໃນສັງຄົມມາກ່ອນ

**3. ຊາວອິນເດັຽຫົວສມັຍໃໝ່** ເປັນພວກທີ່ມີການສຶກສາດີ ໄດ້ມອງເຫັນເຖິງຂໍ້ເສັຽຫາຍໃນສາສນາຮິນດູອັນເປັນສາສນາປະຈຳຊາດອິນເດັຽ ຊາວອິນເດັຽທີ່ມີການສຶກສາດີມີຫົວສມັຍໃໝ່ນີ້ເຫັນນຳກັບຄຳສອນອັນດີງາມຂອງຄຣິສຕຽນ ໄດ້ມີຂໍ້ຂຽນຍ່ອງຍໍສາສນາຄຣິສຕຽນ ແຕ່ວ່າພວກນີ້ມີຄວາມຮັກຊາດຫລາຍ ບໍ່ຍອມຫັນມາເປັນຄຣິສຕຽນ ໂດຍຖືວ່າ ຖ້າມາເປັນຄຣິສຕຽນແລ້ວຈະເປັນການນິຍົມ ແລະເປັນການຍອມຕົວຕໍ່ຊາວຕ່າງຊາດ ເພາະວ່າຊາວອິນເດັຽຫົວສມັຍໃໝ່ທີ່ມີການສຶກສາດີນີ້ ຕ້ອງການນຳພາໃຫ້ປະເທດຊາດເຂັ້ມແຂງເປັນອັນນຶ່ງອັນດຽວກັນໃຫ້ຫລຸດພົ້ນຈາກການເປັນເມືອງຂຶ້ນຂອງອັງກິດ ດັ່ງນັ້ນພວກນີ້ຈຶ່ງໄດ້ເກີດການປຸກໃຈ ເພື່ອໃຫ້ຊາວອິນເດັຽຫັນມາຮັກຊາດ ແລະໄດ້ທຳການປະຕິຮູບສາສນາຮິນດູ ອັນເປັນສາສນາຫລັກແຫ່ງການດຳເນີນຊີວິດຂອງຊາວອິນເດັຽ ໄດ້ປັບປຸງຖານະທາງສັງຄົມໃຫ້ດີຂຶ້ນເພື່ອນຳພາປະເທດອິນເດັຽເຂົ້າສູ່ຣະບົບໃໝ່ ກຸ່ມຫົວສມັຍໃໝ່ນີ້ໄດ້ມີອິດທິພົລນຳພາໃຫ້ປະເທດອິນເດັຽຫລຸດພົ້ນຈາກການເປັນເມືອງຂຶ້ນຂອງອັງກິດ ປະກາດຕົວເປັນປະເທດທີ່ມີອິສຣະພາບໃນປີ ຄ.ສ. 1947 ໂດຍຜູ້ນຳຄືມອຣັນດັສ ການດີ (Mohandas Gandhi 1869-1948) ທ່ານເປັນຜູ້ນຳທີ່ມີຊື່ສຽງໃນການປະຕິຮູບນີ້ດ້ວຍສັນຕິ ໂດຍບໍ່ມີເສິກຫຼືການທຳລາຍຊີວິດຊາວອິນເດັຽດ້ວຍກັນ ແຕ່ວ່າທ່ານມອຣັນດັສການດີ ຖືກລອບຍິງຕາຍໃນປີ 1948

ແມ່ນວ່າການປະຕິຮູບສາສນາຮິນດູ ແລະການປະກາດອິສຣະພາບຂອງປະເທດອິນເດັຽບໍ່ໄດ້ຂັດຂວາງໃຫ້ສາສນາຄຣິສປະກາດຂ່າວປະເສີດໃນອິນເດັຽກໍຈິງຢູ່ ແຕ່ວ່າຄວາມຮັກຊາດ ຮັກສາສນາປະຈຳຊາດຂອງຊາວອິນເດັຽມີຫລາຍຂຶ້ນ ຄວາມຄິດຂອງຊາວອິນເດັຽທີ່ຈະຫັນມາຍອມຮັບເອົາສາສນາຄຣິສກໍນ້ອຍຖອຍລົງ ເພາະຢ້ານຖືກຄົນອິນເດັຽດ້ວຍກັນປະນາມວ່າບໍ່ຮັກຊາດ ແຕ່ຫັນໄປນິຍົມຊາວຕ່າງຊາດ

ເຖິງວ່າການຕໍ່ຕ້ານຈະມີຫລາຍແນວຕາມທີ່ຍົກຕົວຢ່າງມາຂ້າງເທິງ ແຕ່ວ່າຄວາມເຊື່ອຂອງຄຣິສຕຽນໃນການປະກາດຂ່າວປະເສີດກໍບໍ່ໄດ້ຫຍຸດຍັ້ງ ອົງການສາສນາຄຣິສຈາກຫລາຍບ່ອນທົ່ວໂລກຍັງຄົງຕັ້ງເປົ້າໝາຍອັນສູງສຸດທີ່ຈະປະກາດຂ່າວປະເສີດຂອງພຣະເຢຊູຄຣິສຕໍ່ໄປ ໂດຍສະເພາະຢ່າງຍິ່ງແກ່ປະເທດອິນເດັຽ ອັນເປັນປະເທດທີ່ມີຄວາມຕ້ອງການຄວາມຣອດພົ້ນຈາກອົງພຣະຜູ້ເປັນເຈົ້າຫລາຍທີ່ສຸດ

# ບົດທີ 18

## ຂ່າວປະເສີດເຂົ້າເຖິງກູງຢ່າງກູ້ງ (ພະມ້າ) ມຸ່ງສູ່ປະເທດສະຍາມ (ໄທຍ)

### I. <u>ຂ່າວປະເສີດເຂົ້າເຖິງກູງຢ່າງກູ້ງ</u> (ປະເທດພະມ້າ)

ເຮົາໄດ້ສຶກສາມາແລ້ວວ່າ ຂ່າວປະເສີດຂອງພະເຢຊູຄຣິສໄດ້ຖືກນຳເຂົ້າໄປປ່າວປະກາດໃນປະເທດອິນເດັຽ ໂດຍມີມິຊຊັນນາຣີຜູ້ຍອມເສັຽສະລະຊີວິດແລະເຫື່ອແຮງ ເພື່ອໃຫ້ປະຊາຊົນທາງແທບເອເຊັຽໄດ້ຮັບຄວາມຣອດພົ້ນ ໃນຈຳນວນມິຊຊັນນາຣີຫລາຍໆທ່ານທີ່ກ່າວໄປແລ້ວນັ້ນຍັງມີອີກທ່ານນຶ່ງຊຶ່ງຈຳເປັນຕ້ອງໄດ້ກ່າວເຖິງໃນບົດນີ້ ເພາະວ່າທ່ານມີບົດບາດສຳຄັນໃນການນຳເອົາຂ່າວປະເສີດຂອງພຣະເຢຊູຄຣິສເຂົ້າໄປເຖິງກູງຢ່າງກູ້ງປະເທດພະມ້າ

**ທ່ານອະໂດນີຣັມ ຈັດສັນ** (Adoniram Judson) ເກີດໃນ ຄ.ສ. 1788 ຣັຖເມສຊາຈູເສດ ຈົບການສຶກສາຈາກມະຫາວິທະຍາລັຍ ບຣາວ (Brown University, ຄ.ສ.1807) ທ່ານມີບົດບາດແລະມີຄວາມສຳຄັນຢ່າງຫລວງຫລາຍ ແຕ່ເດີມນັ້ນທ່ານໄດ້ເດີນທາງໄປປະກາດໃນປະເທດອິນເດັຽ ແລະມີຄວາມຕັ້ງໃຈທີ່ຈະຕັ້ງກອງປະກາດຢູ່ໃນປະເທດອິນເດັຽ ແຕ່ເນື່ອງຈາກຄວາມຂັດຂ້ອງເຣື່ອງການເຂົ້າເມືອງ ໂດຍທີ່ບໍຣິສັດອິນເດັຽຕາເວັນອອກບໍ່ຍອມໃຫ້ຄວາມຮ່ວມມືກັບທ່ານ ເມື່ອເປັນດັ່ງນັ້ນແລ້ວທ່ານແລະຄອບຄົວຈຶ່ງມຸ້ງໜ້າສູ່ກູງຢ່າງກູ້ງປະເທດພະມ້າ

ຄວາມຈິງຮັກພັກດີຂອງທ່ານຈັດສັນທີ່ມີຕໍ່ພຣະເຢຊູຄຣິສ ແລະຍອມຖວາຍຊີວິດເພື່ອໄປຮັບໃຊ້ພຣະເຈົ້າໃນຕ່າງປະເທດນັ້ນ ເກີດຂຶ້ນເພາະເຫດວ່າທ່ານໄດ້ເຂົ້າຮ່ວມກຸ່ມອະທິຖານອ້ອນວອນກັບພວກນັກສຶກສາພຣະຄັມພີຫລາຍທ່ານໃນໂຮງຮຽນສຶກສາພຣະຄັມພີແອນໂດເວີ (Andover Theological Seminary) ໃນຣັຖເມສຊາຈູເສດ ອັນເປັນຣັຖທີ່ເປັນບ້ານເກີດຂອງທ່ານຈັດສັນ ໂດຍພລັງແຫ່ງການອະທິຖານໄຫວ້ວອນນີ້ເອງ ສະຫາຍຂອງທ່ານໄດ້ຮ່ວມກໍ່ຕັ້ງອົງການປະກາດຂ່າວປະເສີດຂຶ້ນ ມີນາມວ່າ American Board of Commissioners for Foreign Mission ທ່ານຈັດສັນໄດ້ເຂົ້າຮ່ວມອົງການນີ້ ພ້ອມກັບສະຫາຍອີກຜູ້ນຶ່ງຄື ທ່ານຊາມູເອລ ນິວເວລ ທັງສອງທ່ານພ້ອມຄອບຄົວ ໄດ້ສະມັກເຂົ້າເປັນມິຊຊັນນາຣີໄປປະກາດໃນປະເທດອິນເດັຽ ທ່ານຈັດສັນແລະສະຫາຍພ້ອມຄອບຄົວໄດ້ເດີນທາງເຖິງປະເທດອິນເດັຽໃນປີ ຄ.ສ. 1812 ແຕ່ຖືກສັ່ງຫ້າມເຂົ້າປະເທດອິນເດັຽໂດຍທີ່ບໍຣິສັດອິນເດັຽຕາເວັນອອກບໍ່ອານຸຍາດ ເພາະວ່າບໍ່ມັກທ່ານຈັດສັນທີ່ມາຈາກອາເມຣິກາ ເມື່ອເປັນດັ່ງນີ້ແລ້ວ ທ່ານຈັດສັນກໍບໍ່ມີຫົນທາງອື່ນອີກ ຈຶ່ງໄດ້ເດີນທາງລົງໃຕ້ມາທາງມະຫາສະມຸດອິນເດັຽແລະມາເຖິງ **ກູງຢ່າງກູ້ງ** (Rangoon) ປະເທດພະມ້າໃນເດືອນ 7 ປີ ຄ.ສ. 1813 ເຮົາຈະເຫັນໄດ້ວ່າການຊົງນຳພາຂອງພຣະເຈົ້ານັ້ນ ເໜືອກວ່າທີ່ມະນຸດຈະເຂົ້າໃຈໄດ້ ຫລາຍເທື່ອຄວາມຕັ້ງໃຈຂອງມະນຸດເຮົາບໍ່ສຳເຣັດ ແຕ່ພຣະເຈົ້າສາມາດນຳພາໃຫ້ເກີດຜົນໃນທາງທີ່ດີຕາມນ້ຳພຣະທັຍຂອງພຣະອົງ ແທນທີ່ວ່າທ່ານຈັດສັນຈະ

ໄດ້ເຂົ້າໄປປະກາດຍັງປະເທດອິນເດັຽ ແຕ່ວ່າພຣະເຈົ້າກັບຊົງນຳໃຫ້ທ່ານໄດ້ໄປເຖິງປະເທດພະມ້າ ຊຶ່ງເປັນປະເທດນ້ອຍ ໆ ທີ່ບໍ່ໄດ້ຮັບຄວາມສົນໃຈຫລາຍຈາກຄຣິສຕຽນຫລືມິຊຊັນນາຣີຕ່າງປະເທດ ດ້ວຍເຫດການອັນບໍ່ຄາດຄິດໄວ້ລ່ວງໜ້ານີ້ ຂ່າວປະເສີດຂອງພຣະເຢຊູຄຣິສໄດ້ຖືກນຳເຂົ້າສູ່ປະເທດພະມ້າ ຂ່າວແຫ່ງຄວາມຣອດພົ້ນນີ້ໄດ້ຖືກປະກາດຖ້າມກາງຊົນຫລາຍເຜົ່າຂອງປະເທດພະມ້າ ແລະໄດ້ເກີດຜົນຢ່າງຫລວງຫລາຍໃນເຜົ່າກະລຽງ (The Karen) ຄືວ່າຊົນເຜົ່າກະລຽງນີ້ມີຄຳສອນຈາກບັນພະບຸລຸດວ່າຈະມີນາຍຄຣູຄົນຜິວຂາວຖືເອົາປຶ້ມພຣະຄຳສັກສິດມາສັ່ງສອນ ແລະນຳເອົາຄວາມຣອດພົ້ນມາສູ່ຊົນເຜົ່າຂອງຕົນ ເມື່ອທ່ານຈັດສັນມາເຖິງແລ້ວ ຊົນຊາວກະລຽງກໍເປີດຫູເປີດຕາເປີດຈິດໃຈຂອງຕົນຕ້ອນຮັບເອົາຂ່າວປະເສີດແຫ່ງຄວາມຣອດພົ້ນນີ້ທັນທີ ໂດຍມີຜົນສະລູບໄດ້ວ່າເມື່ອທ່ານຈັດສັນຕາຍ ຜົນງານໄດ້ປາກົດເຖິງຄວາມຈະເຣີນຮຸ່ງເຮືອງ ຄືມີຄຣິສຕຽນເຖິງ 7 ພັນຄົນ ມີຄຣິສຈັກຕັ້ງຂຶ້ນເຖິງ 63 ຄຣິສຈັກແລະມີມິຊຊັນນາຣີພ້ອມຜູ້ປະກາດທີ່ເປັນຊາວພະມ້າຣວມແລ້ວ 163 ທ່ານ ທ່ານຈັດສັນໄດ້ແປພຣະຄັມພີເປັນພາສາພະມ້າສຳເຣັດແລະໄດ້ຈັດທຳວັຈນານຸກົມພະມ້າໄດ້ ປູພື້ນຖານຊີວິດຄຣິສຕຽນໃຫ້ແກ່ຊາວພະມ້າຢ່າງເລິກຊຶ້ງ ຜົນສຳເຣັດອັນນີ້ເກີດຂຶ້ນຈາກຊາວເຂົາເຜົ່າກະລຽງເປີດໃຈຕ້ອນຮັບຂ່າວປະເສີດແລະຕັ້ງໝັ້ນອົດທົນໃນການຮັບໃຊ້ພຣະເຈົ້າ

ຢ່າງໃດກໍຕາມເມື່ອຜູ້ຮັບໃຊ້ໄດ້ຮັບໃຊ້ພຣະເຈົ້າຢ່າງສັດຊື່ແທ້ຈິງ ຝ່າຍສັດຕຣູກໍພະຍາຍາມຫາທາງຂັດຂວາງຄືກັນ ເພື່ອບໍ່ໃຫ້ຂ່າວປະເສີດເກີດຜົນ ຄືໃນຣາວປີ ຄ ສ 1824 ໄດ້ເກີດເສິກສົງຄາມລະຫວ່າງພະມ້າກັບອັງກິດ ທ່ານຈັດສັນໄດ້ຖືກພວກອິດສາໃສ່ຮ້າຍວ່າເປັນໃສ້ເສິກຂອງອັງກິດ ທ່ານຈັດສັນຖືກຈັບຂັງຄຸກ ຖືກຂ້ຽນຕີ ຖືກມັດມືມັດຕີນ ແຂວນໄວ້ຄືສັດ ແລະຖືກຂັງໄວ້ໃນຄຸກທີ່ເນົ່າເໝັນເຕັມໄປດ້ວຍຍຸງແລະໜູເປັນເວລານານເຖິງ 2 ປີ ສ່ວນເມັຍຂອງທ່ານຈັດສັນຄືນາງແອນຈັດສັນໄດ້ພະຍາຍາມທຸກວິຖີທາງໃຫ້ທ່ານຈັດສັນພົ້ນຈາກຂໍ້ກ່າວຫາວ່າເປັນໃສ້ເສິກຂອງອັງກິດ ນາງໄດ້ພຍາຍາມດ້ວຍຄວາມທຸກຍາກຫລາຍທີ່ສຸດຈົນກະທັ້ງທ່ານຈັດສັນໄດ້ລຸດພົ້ນຈາກຄວາມທຸກທໍລະມານອອກຈາກຄຸກ ແຕ່ໜ້າສົງສານທີ່ສຸດທີ່ເມັຍຂອງທ່ານຕ້ອງຕາຍໄປໃນປີດຽວກັນນັ້ນ ເພາະວ່າສຸກຂະພາບຂອງນາງອ່ອນແອເປັນພະຍາດແລະບໍ່ມີຢາຫລືອາຫານພຽງພໍ ເມື່ອທ່ານຈັດສັນໄດ້ອອກຈາກຄຸກມາແລ້ວ ທ່ານຕ້ອງລໍຖ້າຈົນກວ່າໄດ້ຮັບໃບອະນຸຍາດໃຫ້ປະກາດຂ່າວປະເສີດໄດ້ອີກຈາກຣັຖບານພະມ້າ ໃນລະຫວ່າງເວລາອັນຍາວນານທີ່ລໍຄອຍໃບອະນຸຍາດນີ້ ທ່ານໄດ້ໃຊ້ເວລາຮຽນຮູ້ຈັກພາສາພະມ້າເປັນຢ່າງດີ ແລະໃຊ້ເວລານີ້ແປພະຄັມພີອອກເປັນພາສາພະມ້າຈົນສຳເຣັດໃນປີ ຄ.ສ. 1834 ພ້ອມກັນນັ້ນທ່ານໄດ້ໃຊ້ເວລາຂຽນບົດຮຽນຄຳສອນຄຣິສຕຽນທ່ານຕ້ອງຖືກຕໍ່ຕ້ານຈາກພວກທີ່ນັບຖືສາສນາພຸດທີ່ເຄັ່ງຂັດແລະມີອຳນາດທາງການເມືອງ ທີ່ໄດ້ພະຍາຍາມຂັບໄລ່ທ່ານໃຫ້ອອກຈາກເມືອງ ອີກທັ້ງພວກນັບຖືຜີກໍບໍ່ຍອມໃຫ້ທ່ານເຂົ້າຢ້ຽມຢາມຕາມໝູ່ບ້ານ ທ່ານຈັດສັນຕ້ອງພົບກັບຄວາມຍຸ້ງຍາກແລະໜ້າອັບອາຍ ແຕ່ວ່າທ່ານບໍ່ຍອມທໍ້ຖອຍຫລືໜີໄປທາງໃດ ທ່ານຍອມຢູ່ອົດທົນສູ້ ເພື່ອເຫັນແກ່ຂ່າວປະເສີດຂອງພຣະເຢຊູຄຣິສ ທີ່ຈະເປັນໂຄມໄຟສ່ອງສວ່າງໃຫ້ແກ່ຊີວິດຂອງຊາວພະມ້າ

ທ່ານຈັດສັນໄດ້ແຕ່ງງານເທື່ອທີ່ສອງ ກັບ ນາງຊາຣາ ຮອລບລອດແມນ (Sarah Hall Boardman) ໃນ ຄ.ສ. 1834 ແຕ່ວ່າເມັຍຜູ້ທີ່ສອງນີ້ກໍໄດ້ເສັຍຊີວິດອີກເນື່ອງຈາກການງານໜັກແລະຢູ່ຢ່າງທຸກຍາກ ຈຶ່ງໄດ້ເປັນພະຍາດແລະຕາຍໄປ ທ່ານຈັດສັນໄດ້ແຕ່ງງານເທື່ອທີ່ສາມກັບນາງເອມມາຣີ ຊັບບັກ ແລະໄດ້ຢູ່ກັບເມັຍຜູ້ທີ່ສາມນີ້ຢ່າງສງົບສຸກໄດ້ ສີ່ປີ ທ່ານຈັດສັນເລີ້ມມີສຸກຂະພາບອ່ອນແອເປັນພະຍາດແລະຖືກສົ່ງກັບຄືນອະເມຣິກາ ໃນຣະຫວ່າງການເດີນທາງກັບສູ່ອະເມຣິກາ ທ່ານໄດ້ເສັຍຊີວິດໃນເຮືອໃນ ຄ.ສ. 1850 ສົບຂອງທ່ານໄດ້ຖືກຖິ້ມລົງໃນທະເລອັນເປັນທີ່ຝັງສົບຂອງທ່ານຕລອດ

ໄປ ລວມອາຍຸຂອງທ່ານໄດ້ພຽງ 62 ປີ ລວມເວລາທີ່ທ່ານຮັບໃຊ້ໃນປະເທດພະມ້າໄດ້ 37 ປີ

## II. ຄຣິສສາສນາເຂົ້າສູ່ປະເທດສຍາມ (ໄທຍ)

ຄຣິສສາສນາໄດ້ເຂົ້າມາເຖິງປະເທດສຍາມຫລືທີ່ເອີ້ນກັນໃນປັດຈຸບັນວ່າປະເທດໄທຍນັ້ນ ຕາມທີ່ໄດ້ສືບຄົ້ນຈາກຕຳຣາປະຫວັດສາດໄທຍຫລາຍເຫລັ້ມ ອັນພໍຈະສລູບໄດ້ວ່າ ຄຣິສສາສນາເຂົ້າມາເຖິງປະເທດສຍາມໃນຣະຫວ່າງເວລາຂອງເຈົ້າຊີວິດສົມເດັຈຣາມາທິບໍດີທີ່ 2 ຄືໃນຮາວ ຄ.ສ. 1510 ໂດຍຝຣັ່ງຊາດໂປຣຕຸເກສ ເປັນປະເທດແຣກທີ່ໄດ້ເຂົ້າມາເຖິງປະເທດສຍາມ ຫລັງຈາກທີ່ໂປຕຸເກສໄດ້ຍຶດຄອງປະເທດອິນເດັຽບາງສ່ວນແລ້ວ ໄດ້ທຳການລ່ອງເຮືອສຳລວດ ຈົນກະທັ່ງພົບແຫລມມາລະກາ (ປະເທດມາເລເຊັຽໃນປັຈຈຸບັນ)

ແຕ່ເດີມນັ້ນແຫລມມະລະກາເປັນເມືອງຂຶ້ນຂອງໄທຍ ພວກມາລະຍູໄດ້ມີຄວາມຈົງຮັກພັກດີຕໍ່ເຈົ້າຊີວິດໄທຍຕັ້ງແຕ່ສມັຍພໍ່ຂຸນຣາມຄຳແຫງ ຈົນກະທັ່ງພວກອາຫຣັບທີ່ນັບຖືສາສນາອິສຣາມໄດ້ຍຶດເອົາດິນແດນສ່ວນນີ້ໄປ ເຮັດໃຫ້ພວກມາລາຍູຫັນໄປນັບຖືສາສນາອິສລາມແທນສາສນາພຸດ ເປັນເຫດໃຫ້ເກີດການແຂງຂໍ້ຕໍ່ສູ້ກັບໄທຍ ແລະພຍາຍາມແຍກຕົວອອກໄປເປັນອິສຣະຈາກການເປັນເມືອງຂຶ້ນຂອງໄທຍ

ເມື່ອຊາວໂປຣຕຸເກສເຂົ້າມາພົບດິນແດນແຫລມມະລະການີ້ ເຫັນວ່າເຫມາະສົມກັບການເປັນເມືອງທ່າເຮືອ ຄ້າຂາຍສະດວກຕໍ່ການເດີນເຮືອແລະການຂົນສົ່ງກັບປະເທດອື່ນ ໆ ທົ່ວໂລກ ພວກໂປຣຕຸເກສຮູ້ຈັກວ່າ ແຫລມມະລະການີ້ເຄີຍເປັນເມືອງຂຶ້ນຂອງໄທຍມາກ່ອນ ຈຶ່ງໄດ້ແຕ່ງທູດມາຈະເຣີນສັມພັນທະໄມຕຣີກັບໄທຍ ໂດຍມີຈຸດມຸ່ງຫມາຍຄື

1. ໄທຍຈະບໍ່ຂັດເຄືອງແຂງຂໍ້ ຕໍ່ສູ້ເອົາແຫລມມະລະກາຄືນ
2. ເພື່ອຂຍາຍເປັນອານາເຂດການຄ້າຂາຍຂອງຊາດໂປຣຕຸເກສ
3. ເພື່ອເຜີຍແຜ່ຄຣິສສາສນາ ນິກາຍຄາທໍລິກ

ຊາວໂປຣຕຸເກສບໍ່ໄດ້ສະແວງຫາເອົາປະເທດໄທຍໃຫ້ເປັນເມືອງຂຶ້ນ ແຕ່ຕັ້ງໃຈເຂົ້າມາເພື່ອການຄ້າຂາຍ ອີກທັ້ງໄດ້ທຳຄຸນປະໂຍດແກ່ປະເທດໄທຍຫລາຍແນວ ຄື ຊາວໂປຣຕຸເກສໄດ້ເຂົ້າຮັບຣາຊການໃນກອງທະຫານໄທຍ ສອນຄົນໄທຍໃຫ້ຮູ້ຈັກເຮັດປືນໄຟໄວ້ໃຊ້ຣົບກັບພວກພະມ້າ ນອກຈາກນີ້ຍັງໄດ້ຊ່ວຍສ້າງປ້ອມປືນປາການຕໍ່ສູ້ປືນໄຟຂອງພະມ້າ ຊຶ່ງຍັງປາກົດຢູ່ຈົນເຖິງທຸກມື້ນີ້ ຢູ່ທີ່ຈັງຫວັດສຸໂຂທັຍ ກຸງສີອຍຸທຍາ ແລະສະຫວັນຄະໂລກ ຕໍ່ມາໃນຮາວ ຄ.ສ.1534 ຊາວໂປຣຕຸເກສໄດ້ຊ່ວຍກອງທັພໄທຍຣົບຊນະພະມ້າ ຍຶດເອົາເມືອງຕຣານໃນຈັງຫວັດການຈະນະບຸຣີ ຄືນມາຈາກພະມ້າ ເຈົ້າຊີວິດພຣະຊັຍຣາຊາທິຣາຊໄດ້ພຣະຣາຊທານທີ່ດິນຣິມຝັ່ງແມ່ນ້ຳເຈົ້າພຣະຍາແກ່ທະຫານໂປຣຕຸເກສ 130 ຄອບຄົວ ໄດ້ປູກເຮືອນຢູ່ອາສັຍ ແລະປູກສ້າງໂບດຄາທໍລິກຂຶ້ນທີ່ນັ້ນ ຊຶ່ງຍັງຄົງປາກົດຢູ່ໃນປັຈຈຸບັນ ຣັຖບານໂປຣຕຸເກສໄດ້ສນັບສນຸນໃຫ້ທະຫານໂປຣຕຸເກສແຕ່ງງານກັບຍິງໄທຍ ເພື່ອເສຣີມສ້າງສັມພັນທະໄມຕຣີ ແລະເພື່ອເປັນການປະກາດສາສນາສາຍຄາທໍລິກ ທະຫານເຫລົ່ານີ້ໄດ້ເຂົ້າຮັບຣາຊການທະຫານໃນປະເທດໄທຍທີ່ເອີ້ນວ່າ **"ກົມຝຣັ່ງແມ່ນປືນໄຟ"**

ຄວາມສຳພັນອັນດີຣະຫວ່າງໄທຍກັບໂປຣຕຸເກສດຳເນີນມາເປັນຮ້ອຍປີ ແຕ່ວ່າການເຜີຍແຜ່ຄຣິສສາສນາສາຍຄາທໍລິກບໍ່ໄດ້ເກີດຜົນອັນໃດ ມາເມື່ອ ຄ.ສ. 1610 ທະຫານໂປຕຸເກສໄດ້ຫມິ່ນປະມາດເຈົ້າຊີວິດໄທຍ ໂດຍສາເຫດທີ່ວ່າຊາວໂປຣຕຸເກສຈັບເຮືອສິນຄ້າຂອງຊາວດັຊໃນນ່ານນ້ຳເຈົ້າພຣະ

ຍາ ຈຶ່ງເກີດເສິກທາງເຮືອລະຫວ່າງໄທຍກັບໂປຕຸເກສ ເມື່ອເກີດຜິດກັນດັ່ງນີ້ແລ້ວຄວາມສັມພັນກັບຊາວໂປຕຸເກສກໍລົດຖອຍລົງ ຊາວຢຸໂຣປຊາດອື່ນ ໆ ຄື ສະເປນ ຝຣັ່ງເສສ ແລະອັງກິດກໍເຂົ້າມາແທນທີ່ ປະເທດສະເປນບໍ່ໄດ້ມີສັມພັນທະພາບອັນດີຕໍ່ປະເທດໄທຍ ແຕ່ວ່າຫັນໄປເປັນພວກຂອງກັມພູຊາແລະຊ່ວຍຊາວຂະເມນທຳເສິກກັບໄທຍ ຍາມໃດທີ່ໄທຍກຳລັງເປັນເສິກກັບພະມ້າ ພວກຂະເມນກໍຈະຍົກທັພເຂົ້າຍຶດຫົວເມືອງຕາມຊາຍແດນໄທຍ ສົມເດັຈພຣະນະເຣສວນເຈົ້າຊີວິດໄທຍໄດ້ຍົກທັພໄປປຣາບປຣາມຍຶດເອົາຫົວເມືອງເຫລົ່ານັ້ນຄືນມາໄດ້ໃນ ຄ.ສ. 1594 ແລະບຸກຍຶດເອົາເມືອງລະແວກອັນເປັນເມືອງຫລວງຂອງກັມພູຊາ ຈັບເອົາພຣະຍາລະແວກແລະວົງຍາດທັງຫມົດຂ້າຖິ້ມຕໍ່ຫນ້າປະຊາຊົນ ເພື່ອເປັນການປະຈານບໍ່ໃຫ້ໃຜເອົາແບບຢ່າງອີກຕໍ່ໄປ ໃນຄັ້ງນັ້ນທ່ານ ດີໂກ ເບໂລໂຊ ທູຕຂອງສະເປນໄດ້ຂຽນຈົດຫມາຍຮ້ອງທຸກໄປເຖິງເຈົ້າຊີວິດສະເປນວ່າຄົນໄທຍໄດ້ເຂົ້າປົ້ນແລະນຳເອົາທ່ານໄປເປັນຊະເລີຍເສິກໃນໄທຍ ທ່ານໄດ້ພົບບາດຫລວງແລະຄຣິສຕັງຈຳນວນຫລາຍໃນປະເທດໄທຍ (ຄຳວ່າ "ຄຣິສຕັງ" ຄົນໄທຍໃຊ້ເອີ້ນສຳລັບຄົນທີ່ມີຄວາມເຊື່ອຕາມຄຣິສຈັກຄາທໍລິກຕາມ ອອກສຽງຕາມພາສາຝຣັ່ງ ສ່ວນຄຳວ່າ "ຄຣິສຕຽນ" ຄົນໄທຍໃຊ້ເອີ້ນສຳລັບຄົນທີ່ມີຄວາມເຊື່ອຕາມແບບໂປຣເຕັສຕັນ ອອກສຽງຕາມພາສາອັງກິດ ໃນປັດຈຸບັນມີຜູ້ໃຊ້ຄຳວ່າ ຄຣິສຕະຊົນ ສຳລັບທຸກຄົນທີ່ເຊື່ອໃນພຣະເຢຊູຄຣິສ ຄຳນີ້ເປັນຄຳແປຄວາມຂອງຄວາມຫມາຍເດີມ) ຈາກຈົດຫມາຍຮ້ອງທຸກຂອງທ່ານ ດີໂກ ເບໂລເຊ ນີ້ຍືນຍັນໃຫ້ເຫັນຈະແຈ້ງວ່າ ການປະກາດຂ່າວປະເສີດໃນປະເທດໄທຍໄດ້ເລີ້ມຕົ້ນມາຄົນນານຕັ້ງແຕ່ສມັຍສຸໂຂທັຍ

**ຄຣິສສາສນານິກາຍໂຣມັນຄາທໍລິກ**

ຄ.ສ. 1656-1688 ໃນສມັຍຂອງສົມເດັດພຣະນາຣາຍມະຫາຣາຊເຈົ້າຊີວິດໄທຍ ມີການຕິດຕໍ່ຄ້າຂາຍກັບຊາວຕ່າງປະເທດຢ່າງກວ້າງຂວາງ ຄື ປະເທດຮໍລັນດາ ອັງກິດ ແລະຝຣັ່ງເສດ ດັ່ງນັ້ນ ຄຣິສສາສນານິກາຍໂຣມັນຄາທໍລິກຈຶ່ງໄດ້ເຂົ້າມາເຜີຍແຜ່ຢ່າງຈິງຈັງໃນປະເທດສຍາມ

ມັຊຊັນນາຣີຜູ້ນຶ່ງມີນາມວ່າ ຄອນສະແຕນຕິນ ຟອລຄອນໄດ້ຮັບການຍົກຍ້ອງແລະໄວ້ວາງໃຈຈາກເຈົ້າຊີວິດໄທຍ ໃຫ້ມີຍົດສັກເປັນເຈົ້າພຣະຍາວິດຊາເຍນອັນເປັນຕຳແຫນ່ງຣາຊການໃນພຣະຄັງສິນຄ້າ ມີອຳນາດຕັດສິນໃຈກ່ຽວກັບການຕິດຕໍ່ຄ້າຂາຍລະຫວ່າງປະເທດໄທຍກັບຊາວຕ່າງປະເທດທົ່ວໂລກ ທ່ານຜູ້ນີ້ໄດ້ທຳປະໂຍດນຳເອົາຜົນກຳໄຣເຂົ້າສູ່ພຣະຄັງຂອງໄທຍຫລາຍທີ່ສຸດ ຈົນກະທັ່ງ ອັງກິດ ແລະຮໍລັນດາບໍ່ພໍໃຈຈຶ່ງເກີດແຂງຂໍ້

ຕາມຫນັງສືປະຊຸມພົງສາວດານ ສະບັບຫໍສະມຸດແຫ່ງຊາດໃນ ຄ.ສ. 1664 ພວກຮໍລັນດາເຫັນວ່າໄທຍກຳລັງເປັນເສິກກັບພະມ້າຈຶ່ງເອົາກອງທັພເຮືອມາປິດປາກນ້ຳໄທຍ ບັງຄັບໃຫ້ເຈົ້າຊີວິດໄທຍສົມເດັດພຣະນາຣາຍຕ້ອງຍອມທຳສັນຍາຕົກລົງວ່າຈະບໍ່ຄ້າຂາຍແຂ່ງທາງດ້ານຕະວັນອອກ ພວກອັງກິດກໍຖືໂອກາສຍຶດເອົາເມືອງຕະນາວສີ ແລະເມືອງມະຣິດ ຊຶ່ງເປັນເມືອງທ່າເຮືອທີ່ຢູ່ທາງຕອນໃຕ້ຂອງໄທຍໄປ ເມື່ອຮໍລັນດາ ແລະອັງກິດເກີດແຂງຂໍ້ຕໍ່ສູ້ກັບໄທຍແລ້ວ ເຈົ້າຊີວິດໄທຍຈຶ່ງຫັນໄປມີສັມພັນໄມຕຣີກັບປະເທດຝຣັ່ງເສດ ຄື ພຣະເຈົ້າຫລຸຍທີ່ 14 ເພື່ອເປັນກຳລັງເພີ້ມບໍ່ໃຫ້ອັງກິດແລະຮໍລັນດາມາຂົ່ມຂູ່ຄິດເອົາປຽບໄທຍ

ສັມພັນທະໄມຕຣີລະຫວ່າງໄທຍກັບຝຣັ່ງເສດໃນຍຸກນີ້ ເປັນໄປດ້ວຍດີໂດຍທີ່ຝຣັ່ງເສດໄດ້ສົ່ງທູຕແລະບາດຫລວງມິຊຊັນນາຣີຄາທໍລິກເຂົ້າມາໃນປະເທດໄທຍ ເຈົ້າຊີວິດໄທຍພຣະນາຣາຍມະຫາຣາຊໄດ້ຕ້ອນຮັບບາດຫລວງຂອງຄນະເຢຊູອິຕຈາກຝຣັ່ງເສດ ແລະເພິ່ງພາອາສັຍຄວາມສາມາດຂອງມິຊຊັນນາຣີ

ເຫລົ່ານີ້ຫລາຍປະການ ຕົວຢ່າງ ບາດຫລວງທໍມັສ ເປັນນາຍຊ່າງສຳເຣັດວິຊາການສ້າງປ້ອມປະການ ກໍ່ສ້າງປ້ອມປະການໄວ້ຫລາຍບ່ອນ ເພື່ອປ້ອງກັນການຈູ່ໂຈມຂອງຮໍລັນດາ ອີກທັ້ງໄດ້ອອກແບບພຣະຣາຊວັງທີ່ລົພບຸຣີ ເພື່ອໄວ້ເປັນນະຄອນຫລວງສຳຮອງຈາກກຸງສີອະຍຸທະຍາ

ສົມເດັດພຣະນາຣາຍມະຫາຣາຊເຈົ້າຊີວິດໄທຍໄດ້ພຣະຣາຊທານທີ່ດິນແລະເຄື່ອງກໍ່ສ້າງແກ່ພວກບາດຫລວງຝຣັ່ງເສດເພື່ອປູກສ້າງໂບດຄາທໍລິກ ພ້ອມອນຸຍາດໃຫ້ພວກບາດຫລວງສອນສາສນາຄຣິສໄດ້ຢ່າງເສຣີ ເຈົ້າຊີວິດໄທຍໄດ້ສົນໃຈຖາມຄຳຖາມ ແລະຮຽນຮູ້ຈັກຄວາມຈິງຂອງພຣະຄຣິສທັມຄັມພີ ແລະໄດ້ແຕ່ງທູດໄທຍນຳເອົາເຄື່ອງຣາຊບັນນາການໄປຖວາຍພຣະເຈົ້າຫລຸຍທີ່ 14 ໃນ ຄ.ສ.1681 ແຕ່ວ່າໂຊກຮ້າຍເກີດເຮືອແຕກໃນຣະຫວ່າງທາງ ຄນະທູດຊຸດທຳອິດນີ້ທັງຄົນໄທຍທັງສັພສິ່ງຂອງຈົມນ້ຳເສັຽໄປໝົດ ຕໍ່ມາໃນ ຄ.ສ.1684 ສົມເດັດພຣະນາຣາຍໄດ້ສົ່ງທູດຊຸດທີ່ສອງໄປຝຣັ່ງເສດອີກ ໂດຍມີຂຸນພິຊັຍວານິຊ ແລະຂຸນພິຊິຕມົນຕຣີ ຂ້າຣາຊການຜູ້ອື່ນອີກ 6 ທ່ານພ້ອມກັບບາດຫລວງ ວາເຊໄປເປັນນາຍແປພາສາ ຄນະທູດໄດ້ໄປຮອດຝຣັ່ງເສດ ແລະໄດ້ເຂົ້າພົບເສນາບໍດີຂອງຝຣັ່ງເສດໃນວັນທີ 27 ພຶສຈິ ຄ.ສ.1684 ຄືທ່ານມອງຊິເອີ ຄອລແບ ເດອຄັວຊີ ແລະທ່ານມອງຊິເອີ ເດອເຊງແລ ໂດຍມີບາດຫລວງວາເຊເປັນຜູ້ແປພາສາ ຕາມທີ່ປາກົດໃນໜັງສືປະຊຸມພົງສາວດານ ໜ້າທີ່ 55 ໄດ້ກ່າວອ້າງອີງເຖິງຈົດໝາຍຂອງທ່ານ ກາເຊຕເດອຝຣັນ ປະຈຳວັນທີ່ 25 ພຶສຈິກາ ຄ.ສ.1684 ວ່າ ຣາຊທູຕສຍາມໄດ້ມາປຣະເທດຝຣັ່ງເສດສຳຫຼັບຈັດການສະເພາະເຣື່ອງຄ້າຂາຍຢ່າງດຽວ ແຕ່ວ່ານາຍແປພາສາໄດ້ສລຸບຂໍ້ຄວາມແກ່ເສນາບໍດີຝຣັ່ງເສດວ່າ ເຈົ້າຊີວິດໄທຍບໍ່ໄດ້ຮັງກຽດຄຣິສສາສນາເລີຍຈັກນ້ອຍ ແລະຊົງສນັບສນຸນໃຫ້ຄົນໄທຍເຂົ້າຮີດ (ເຂົ້ານັບຖືສາສນາຄຣິສ) ອີກທັງມີຄວາມຫວັງວ່າ ສົມເດັຈພຣະນາຣາຍຈະກັບໃຈເປັນຄາທໍລິກ ດັ່ງນັ້ນພຣະເຈົ້າຫລຸຍທີ່ 14 ຈຶ່ງໄດ້ແຕ່ງທູຕ ແລະສານມາຂໍໃຫ້ເຈົ້າຊີວິດໄທຍກັບໃຈເປັນຄາທໍລິກ

ວັນທີ 18 ຕຸລາ ຄ.ສ.1685 ຣາຊທູຕຝຣັ່ງເສດໄດ້ນຳກ້ານເຊີນຊິ່ງເປັນສານຂອງພຣະເຈົ້າຫລຸຍທີ່ 14 ໃສ່ຫີບທອງຄຳຈະຂຶ້ນຖວາຍພຣະນາຣາຍ ແຕ່ນາຍພາສາຄືບາດຫລວງຄອນສະແຕນຕິນ ຟອລຄອລໄດ້ອ່ານສານກ່ອນທີ່ຈະນຳເຂົ້າເຝົ້າເຈົ້າຊີວິດໄທຍ ທ່ານເຫັນວ່າເປັນການຮຸນແຮງເກີນໄປ ແລະແປກໃຈທີ່ມີຄົນເຂົ້າໃຈວ່າເຈົ້າຊີວິດໄທຍຈະກັບໃຈເຂົ້າເປັນຄາທໍລິກ ເພາະວ່າໃນສານນັ້ນໄດ້ຂໍໃຫ້ພຣະນາຣາຍກັບໃຈເປັນຄາທໍລິກທັນທີ ທ່ານຟອລຄອລຈຶ່ງໄດ້ແປສານເສັຽໃໝ່ ຕາມໜັງສືປະຊຸມພົງສາວດານໜ້າທີ່ 82-83 ມີໃຈຄວາມດັ່ງນີ້

*"ເຮົາມີຄວາມເສັຽໃຈເປັນອັນມາກທີ່ໄດ້ຊາບວ່າ ຣາຊທູດທີ່ພຣະອົງຈັດສົ່ງມາຫາເຮົາເມື່ອປີ ຄ.ສ.1681 (ພ.ສ.2224) ໄດ້ຖືກອັບປາງສູນຫາຍໄປເສັຽແລ້ວ ເຮົາໄດ້ຊາບຈາກພວກບາດຫລວງມິຊຊັນນາຣີທີ່ໄດ້ກັບຈາກເມືອງໄທຍ ແລະໄດ້ຊາບຈາກຈົດໝາຍທີ່ເສນາບໍດີຂອງເຮົາ ໄດ້ຮັບຈາກຜູ້ທີ່ພຣະອົງຊົງມອບໝາຍການງານສຳຄັນ ໆ ນັ້ນ ວ່າພຣະອົງກໍຊົງປຣາຖນາຢາກເປັນພຣະຣາຊໄມຕຣີກັບເຮົາ ເຮົາມີຄວາມປະສົງຈະຕອບແທນພຣະຣາຊໄມຕຣີຂອງພຣະອົງ ຈຶ່ງໄດ້ຈັດໃຫ້ ເຊີວາລັຽ ເດອ ໂຊມອງຕ໌ ເປັນຣາຊທູຕຂອງເຮົາ ເພື່ອໄປເຝົ້າພຣະອົງ ເຮົາຈະມີຄວາມຍິນດີທີ່ຈະຄອຍຫາໂອກາດຂອບພຣະເດຊພຣະຄຸນໃນການທີ່ພຣະອົງຍັງຄົງປົກຄອງ ແລະບຳຣຸງພວກສັງຂະຣາຊແລະມິຊຊັນນາຣີອື່ນ ໆ ຊຶ່ງທຳໃຫ້ການສອນສາສນາຄຣິສຕຽນຕໍ່ໄພ່ຟ້າຂ້າແຜ່ນດິນຂອງພຣະອົງ ແລະການທີ່ຕົວເຮົາມີຄວາມນັບຖືພຣະອົງໂດຍສະເພາະ ຈຶ່ງກະທຳໃຫ້ເຮົາມີຄວາມປະສົງຢາກຈະໃຫ້ພຣະອົງໄດ້ຟັງຄຳສັ່ງສອນຂອງສັງຂະຣາຊອີກດ້ວຍ ເພື່ອຈະໄດ້ຊົງຊາບເຖິງຄວາມຈິງແຫ່ງກົດໝາຍຂອງພຣະເຈົ້າທີ່ແທ້ເພື່ອເປັນເຄື່ອງສະແດງຄວາມນັບຖືຂອງເຮົາ ແລະຣາຊທູຕກໍຈະໄດ້ທູລໃຫ້ຊົງຊາບ ວ່າເຮົາມີຄວາມປະສົງຢ່າງໃດ ສຳລັບໃຫ້ໄພ່ຟ້າຂ້າແຜ່ນດິນຂອງເຮົາໄດ້ຫາຜົນປໂຍດໃນທາງດ້ານການຄ້າຂາຍດ້ວຍ ໃນທີ່ສຸດເຮົາຂໍພຣະເປັນເຈົ້າໄດ້ໂປດເພີ່ມພູນພຣະກຽດຕິຍົດຂອງພຣະອົງດ້ວຍ"*

*ຂຽນທີ່ພຣະຣາຊວັງ ນະ ວັນທີ່ 21 ມິກຣາ ຄ.ສ.1685*

(ເຊັນ) ຫລຸຍສ໌
(ເຊັນ) ຄອລແບຕ໌

ທ່ານ ອ. ປະມວລວິທຍ໌ ຜູ້ແຕ່ງໜັງສື **"ໃບຣາຊສຳນັກພຣະນາຣາຍ"** ໄດ້ບັນທຶກຄຳຕອບຂອງພຣະນາຣາຍທີ່ມີຕໍ່ຣາຊທູຕຝຣັ່ງເສດວ່າ

> *"... ເຮົາແຈ້ງຢູ່ໃນໃຈວ່າ ພຣະເຈົ້າຫລຸຍສ໌ຊົງຮັກໃຄ່ຈະໃຫ້ສນິທສນົມເປັນອັນນຶ່ງອັນດຽວກັນ ຈຶ່ງຢາກໃຫ້ນັບຖືສາສນາຮ່ວມກັນ ແຕ່ການນັບຖືສາສນາບໍ່ໄດ້ຢູ່ໃນອຳນາດມະນຸດທີ່ຈະເລືອກເອົາເອງໄດ້ ເພາະຕ້ອງແລ້ວແຕ່ສັດທາທີ່ຈະເກີດຂຶ້ນໃນໃຈເປັນໃຫຍ່ ແຕ່ທີ່ພຣະເຈົ້າຫລຸຍສ໌ຊວນມານັ້ນກໍບໍ່ຂັດຂ້ອງເຮົາຈະຕັ້ງໃຈເປັນກາງ ຖ້າຫາກວ່າພຣະເຈົ້າບົນສວັນບັນດາລໃຫ້ຄວາມສັດທາເກີດຂຶ້ນໃນໃຈຂອງຂອງເຮົາເມື່ອໃດ ເຮົາຈະຍອມເຂົ້າຮີດຕາມດ້ວຍ..."*

ເຖິງແມ່ນວ່າ ຣາຊທູດຝຣັ່ງເສດບໍ່ສາມາດນຳໃຫ້ເຈົ້າຊີວິດໄທຍ ຄືສົມເດັດພຣະນາຣາຍກັບໃຈໄດ້ໃນທັນທີ ແຕ່ກໍມີຜົນດີເກີດຂຶ້ນຄື ເຮັດໃຫ້ການປະກາດຄຣິສສາສນາໃນປະເທດໄທຍເປັນໄປໂດຍອິສຣະໃນສມັຍຂອງພຣະນາຣາຍ ໄດ້ມີການເຊັນໜັງສືສັນຍາລົງນາມກັນທີ່ລົພບຸຣີ ໃນວັນທີ່ 10 ທັນວາ ຄ.ສ. 1685 ໂດຍອນຸຍາດໃຫ້ພວກບາດຫລວງທຳການປະກາດສັ່ງສອນ ປິ່ນປົວພະຍາດ ຈັດຕັ້ງໂຮງຮຽນ ແລະຢູ່ໃນການຄຸ້ມຄອງຂອງເຈົ້າຊີວິດ ແຕ່ມີຂໍ້ຫ້າມຄື ບໍ່ໃຫ້ມີການຄິດກະບົດຫລືຍຸຍົງໃຫ້ເກີດການທໍຣະຍົດແຂງຂໍ້ຕໍ່ຣັຖບາລໄທຍ ຄຣິສສາສນາໄດ້ເຜີຍແຜ່ອອກເປັນຫລາຍບ່ອນ ອີກທັງໄດ້ອນຸຍາດໃຫ້ຝຣັ່ງເສດທຳການຄ້າຂາຍໂດຍບໍ່ຕ້ອງເສັຽພາສີທັງຂາເຂົ້າແລະຂາອອກ ຫາກຄົນຝຣັ່ງເສດມີຄະດີຄວາມກໍໃຫ້ນາຍເຮືອຂອງບໍຣິສັດຝຣັ່ງເສດລົງໂທດຕາມກົດຣະບຽບຂໍ້ບັງຄັບຂອງບໍຣິສັດ ແຕ່ສ່ວນຊາວຝຣັ່ງເສດທີ່ຮັບຣາຊການໄທຍ ແລະຢູ່ໃຕ້ການປົກຄອງຂອງເຈົ້າຊີວິດໄທຍກໍຕ້ອງຂຶ້ນສານໄທຍແລະຢູ່ໃຕ້ການປົກຄອງຂອງເຈົ້າຊີວິດໄທຍ ສັນຍາອີກສະບັບນຶ່ງໄດ້ຍົກເມືອງສົງຂລາໃຫ້ຢູ່ພາຍໃຕ້ການດູແລຂອງຝຣັ່ງເສດ ມີສິດເຮັດທຸກຢ່າງໄດ້ ຫລັງຈາກນີ້ຍັງມີໜັງສືສັນຍາໄດ້ທຳຂຶ້ນອີກຫລາຍສະບັບ ແຕ່ວ່າໄທຍຕົກເປັນຝ່າຍເສັຽປຽບທັງການຄ້າແລະການເມືອງ

**ການຂົ່ມເຫງຄຣິສຈັກຄາທໍລິກ**

ເມື່ອສົມເດັດພຣະນາຣາຍສິ້ນພຣະຊົນແລ້ວ ພຣະເພທຣາຊາໄດ້ຂຶ້ນຄອງຣາຊໄດ້ທຳການປາບປາມພວກຝຣັ່ງເສດແລະຊາວຢຸໂຣປອື່ນ ໆ ເພາະເຫັນວ່າມີອຳນາດເໜືອໄທຍຫລາຍເກີນໄປ ໄດ້ຈັບພວກຄາທໍລິກຂັງຄຸກເກືອບໝົດ ບໍ່ວ່າເປັນຊາດໃດ ເຫລືອໄວ້ແຕ່ຮໍລັນດາ ແລະອນຸຍາດໃຫ້ຮໍລັນດາສາມາດຄ້າຂາຍໃນປະເທດໄທຍໄດ້ ພວກຄາທໍລິກໄດ້ຮັບການຂົ່ມເຫັງຍ້ອນເພາະເຫດການທາງການເມືອງເນື່ອງຈາກພວກບາດຫລວງໄດ້ເປັນນາຍແປພາສາທາງການທູຕ ແລະກຽ່ວພັນຮັບຣາຊການທາງດ້ານການເມືອງພ້ອມກັບສາສນາ ເຈົ້າຊີວິດໄທຍອົງຕໍ່ ໆ ມາເຫັນວ່າໄທຍເສັຽປຽບດ້ານການເມືອງຫລາຍ ແລະອາດຈະເປັນອັນຕະລາຍຕໍ່ການສູນເສັຽປະເທດຊາດຈຶ່ງໄດ້ທຳການປຣາບປຣາມພວກຄາທໍລິກ ໂດຍບໍ່ໄດ້ແຍກອອກວ່າເປັນດ້ານການເມືອງຫລື້ດ້ານສາສນາ

ການຂົ່ມເຫັງຄັ້ງໃຫຽ່ໄດ້ເກີດຂຶ້ນຄືວ່າ ນາຍເຕັງ ຜູ້ມີເຊື້ອຊາດຈີນ ມານດາໄດ້ຍົກໃຫ້ແກ່ບາດຫລວງລ້ຽງດູມາແຕ່ອາຍຸ 8 ປີ ແລະໄດ້ເຂົ້າຮຽນໃນໂຮງຮຽນຄຣິສສາສນາມານານ 10 ປີ ຕໍ່ມາໄດ້ເຂົ້າພິທີບວດເປັນບາດຫລວງ ແຕ່ວ່າຍາດຂອງນາຍເຕັງໄດ້ຮ້ອງຮຽນຂໍນາຍເຕັງຄືນຕໍ່ທາງຣາຊການ ແຕ່ວ່ານາຍເຕັງບໍ່ຍອມອອກຈາກການບວດ ແລະໂຕ້ຖຽງເຣື່ອງຂອງສາສນາເປັນທັມດາ ທາງຣາຊການໄດ້ສັ່ງລົງໂທດຄຽ້ນນາຍເຕັງ 2-3 ທີ ແລະສັ່ງໃຫ້ຖອດເສື້ອຄຸມສີດຳ ພ້ອມປຽບໄມ້ກາງແຂນ

ໃຫ້ຂາບໄຫວ້ພຣະພຸດທະຮູບ ແລະບວດເປັນພຣະພິຊຸກສາມະເນນຄອງຜ້າເຫລືອງ ຊຶ່ງນາຍເຕັງຈຳເປັນຕ້ອງເຮັດຕາມ ແລະທາງຣາຊການຍັງໄດ້ພົບໜັງສືບາງເຫລັ້ມທີ່ຂຽນເຖິງສາສນາພຸດໂດຍພວກບາດຫລວງ ເຮັດໃຫ້ເກີດຄວາມບໍ່ພໍໃຈ ຈົນກະທັ່ງພວກບັນດາພຣະມະຫາເຖຣະໄດ້ຂໍຮ້ອງໃຫ້ທາງຣາຊການໄທຍທຳລາຍລ້າງຄຣິສສາສນາໃຫ້ສິ້ນຈາກແຜ່ນດິນໄທຍ

ໃນ ຄ.ສ. 1730 ພຣະເຈົ້າທ້າຍສຣະ ເຈົ້າຊີວິດໄທຍໄດ້ອອກພຣະຣາຊໂອງການໃຫ້ທຳການສອບສວນບາດຫລວງຄາທໍລິກ 3 ທ່ານ ວ່າໄດ້ເຮັດຜິດຫລອກລວງປະຊາຊົນໃຫ້ເຂົ້າຮີດຖືສາສນາຄາທໍລິກ ແລະເພາະເຫດວ່າບາດຫລວງບາງອົງໄດ້ມີຂໍ້ຂຽນອອກເປັນພາສາໄທຍແລະພາສາບາລີພາດພິງໝິ່ນສາສນາພຸດ ເພື່ອເປັນການລົງໂທດແລະບໍ່ໃຫ້ພວກບາດຫລວງເຮັດຜິດອີກ ຈຶ່ງໄດ້ອອກພຣະຣາຊໂອງການ 4 ປະການ ຄື

1. ຫ້າມຂຽນໜັງສືສອນຄຣິສສາສນາອອກເປັນພາສາໄທຍ ຫລືພາສາບາລີ
2. ຫ້າມປະກາດສາສນາແກ່ຄົນໄທຍ ມອນ ແລະລາວໃນປະເທດໄທຍ
3. ຫ້າມຊັກຊວນ ຄົນໄທຍ ມອນ ແລະລາວເປັນຄາທໍລິກ
4. ຫ້າມຕິຕຽນດູໝິ່ນສາສນາຂອງໄທຍ

ຫາກວ່າຜູ້ໃດຝ່າຝືນບໍ່ກະທຳຕາມຈະມີໂທດເຖິງປະຫານຊີວິດ ຫາກວ່າຄົນໄທຍ ມອນ ລາວເຂົ້າເປັນຄາທໍລິກຈະຖືກປະຫານຊີວິດຄືກັນ ຄຳປະກາດນີ້ໄດ້ຖືກຈາຣຶກໄວ້ໃນແຜ່ນຫີນ ຊຶ່ງພວກບາດຫລວງເອີ້ນວ່າ "ຫີນແຫ່ງຄວາມອັປຍົສ" ແລະຖືກນຳໄປປັກໄວ້ໜ້າປະຕູວິຫານນັກບຸນໂຍເຊຟທີ່ກຸງສີອາຍຸທະຍາແລະຍ້າຍໄປປັກໄວ້ອີກຫລາຍເມືອງ ການປະກາດຄຣິສສາສນາຈຶ່ງຊົບເຊົາລົງບໍ່ເກີດຜົນໃນໝູ່ຄົນໄທຍ ບໍ່ມີໃຜກ້າສະແດງຕົວຢ່າງເປີດເຜີຍວ່າໄດ້ກັບໃຈໃໝ່ ການບັພຕິສມາມີແຕ່ກັບເດັກນ້ອຍທີ່ໃກ້ຈະຕາຍ ມີເຈົ້າພນັກງານແລະທຫານຄອຍຈັບພວກຖືສາສນາຄຣິສຢູ່ເລີຍ ໆ

ການຂົ່ມເຫັງໄດ້ເປັນຢູ່ນານຈົນເຖິງຣາຊການພຣະເຈົ້າຕາກສິນ ຫລັງຈາກເສັຽກຸງສີອາຍຸທະຍາແກ່ພະມ້າ ພະມ້າໄດ້ເຜົາບ້ານເຮືອນ ຣາຊວັງ ວັດໄທຍ ວັດຄາທໍລິກຈົນເກືອບໝົດ ເມື່ອພຣະເຈົ້າຕາກສິນມະຫາຣາຊກູ້ເອົາເມືອງຄືນຈາກພະມ້າແລ້ວ ພວກບາດຫລວງໄດ້ເຮັດຄຸນງາມຄວາມດີຊ່ວຍເຫລືອຈົນເປັນທີ່ພໍພຣະທັຍ ພຣະເຈົ້າຕາກສິນໄດ້ພຣະຣາຊທານເງິນ 20 ດອລລ່າ ເຮືອລຳນຶ່ງແລະທີ່ດິນສຳລັບປູກສ້າງວິຫານຂອງຄາທໍລິກ ອີກທັງກ່າວຍ້ອງຍໍວ່າ "ພວກເຂົ້າຮີດບໍ່ປົ້ນສະດົມ ເປັນຄົນສັດຊື່ ກ້າຫານພັກດີ ທັງຄຣິສສາສນາກໍເປັນສາສນາອັນເກົ່າແກ່ທີ່ສຸດໃນໂລກ ສາສນາຄຣິສຕຽນເປັນສາສນາທີ່ດີ ທຸກສິ່ງຂອງເຂົາກໍດີໝົດ ກຣະທັ່ງເຈັ້ຽທີ່ເຂົາໃຊ້ກໍດີຫລາຍ" ດັ່ງນັ້ນເມື່ອບາດຫລວງເປັນຄົນດີຈຶ່ງຖືກຮຽກໃຫ້ໄປຮັບຣາຊການ ແຕ່ມາພາຍຫລັງມີບັນຫາອີກວ່າ ພາດຫລວງຫລາຍອົງບໍ່ສາມາດເຮັດພິທີສາບານຕົນຕໍ່ເຈົ້າຊີວິດໄທຍ ຄື "ພິທີຖືນ້ຳພິພັທສັຕຍາ" ອັນເປັນການດື່ມນ້ຳມົນທີ່ພຣະສົງໄດ້ສວດແລະກະທຳໝາຍສຳຄັນໄວ້ ແລ້ວຈຸ່ມສັຕຣາວຸທຂອງເຈົ້າແຜ່ນດິນລົງໄປ ຕາມຮີດຄອງຜູ້ຮັບຣາຊການຕ້ອງດື່ມ ເພື່ອສາບານຕົນວ່າບໍ່ຄິດກະບົດຕໍ່ເຈົ້າຊີວິດໄທຍ ຜູ້ໃດກະບົດຈະຕາຍເນື່ອງດ້ວຍນ້ຳສາບານນັ້ນ ເມື່ອພວກບາດຫລວງປະຕິເສດບໍ່ຍອມເຮັດ ເພາະຜິດບັນຍັດຂອງພຣະເຈົ້າ ຈຶ່ງຂໍອນຸຍາດໃຫ້ເຮັດຕາມພິທີສາສນາຄຣິສ ພຣະເຈົ້າຕາກສິນບໍ່ຍອມຕອບເຫັນນຳ ຫລັງຈາກນັ້ນພຽງປີດຽວ ຄືວັນທີ 13 ຕຸລາ ຄ.ສ. 1774 ໄດ້ອອກພຣະຣາຊໂອງການຫ້າມຄົນໄທຍ ມອນ ເຂົ້າຮີດຖືສາສນາຄຣິສ ຫລືສາສນາມະຫະມັດອີກຕໍ່ໄປ ໂດຍຄາດໂທດເຖິງປະຫານຊີວິດ ການຂົ່ມເຫັງໄດ້ເກີດຂຶ້ນຮຸນແຮງອີກຄັ້ງໂດຍພວກບາດຫລວງຖືກໂທດ ໂບຍຕີແລະຖືກຈຳຄຸກຢ່າງທາຣຸນ ພວກບາດຫລວງທີ່ເຫລືອຢູ່ໄດ້ຫລົບໜີອອກນອກປະເທດໄທຍ ຈົນກະທັ່ງເກືອບຈະບໍ່ມີຄຣິສຕຽນຫລົງເຫລືອຢູ່ໃນປະເທດໄທຍ

## III. ຄຣິສສາສນານິກາຍໂປຣເທັສເຕັນເຂົ້າສູ່ປະເທດໄທຍ

ໃນສມັຍຂອງເຈົ້າຊີວິດໄທຍ ສົມເດັດພຣະນັ່ງເກລ້າເຈົ້າຢູ່ຫົວ ແຫ່ງຣາຊວົງຈັກຣີ ມີມິຊຊັນນາຣີໂປເທັສເຕັນຫລາຍຄນະເຂົ້າມາເຜີຍແຜ່ຂ່າວປະເສີດໃນປະເທດໄທຍ ຫາກແຕ່ວ່າການເຜີຍແຜ່ຂ່າວປະເສີດບໍ່ເກີດຜົນ ອີກທັງຕົວມິຊຊັນນາຣີເອງແລະລູກເມັຽຂອງເພິ່ນເກີດເຈັບ ເປັນພຍາດເມືອງຮ້ອນຕາຍໄປຫລາຍ ໆ ຄົນ ໃນທີ່ສຸດພວກມິຊຊັນນາຣີທີ່ເຫລືອຢູ່ຈໍາເປັນຕ້ອງພາກັນກັບເມືອບ້ານເກີດເມືອງນອນຂອງຕົນເພື່ອຮັກສາຕົວ

ໃນຣາວ ຄ.ສ. 1818 ຄນະບັບຕິສໂດຍເມັຽຂອງທ່ານຈັດສັນ ຄື ນາງແອນ ຈັດສັນ ໄດ້ສົນໃຈຊາວໄທຍໃນເມືອງມະລະແຫມ່ງປະເທດພະມ້າ ຊຶ່ງເປັນຊະເລີຍເສິກທີ່ຖືກພະມ້າກວາດຕ້ອນເອົາໄປຕັ້ງແຕ່ສມັຍເສັຽກຸງສີອະຍຸທະຍາ ນາງແອນໄດ້ຮຽນພາສາໄທຍແລ້ວແປຫນັງສື ຄໍາຖາມ-ຄໍາຕອບເຣື່ອງຄຣິສສາສນາຂອງທ່ານຈັດສັນຈາກພາສາພະມ້າເປັນພາສາໄທຍ ແລະໄດ້ສົ່ງໄປພິມເປັນຄັ້ງແຣກທີ່ເມືອງເຊຣັມໂປ ປະເທດອິນເດັຽ ຊຶ່ງຕໍ່ມາແທ່ນພິມອັນນີ້ຖືກສົ່ງມາທີ່ສິງຄໂປຣ໌ ແລະທ່ານຫມອບຣັດເລໄດ້ໄປຊື້ເອົາມາໄວ້ທີ່ກຸງເທພຯ ຕັ້ງເປັນໂຮງພິມໄທຍບ່ອນແຣກໃນປີ ຄ.ສ. 1835

**ມິຊຊັນນາຣີຣຸ່ນຕໍ່ມາທີ່ສ້າງຜົນງານໄວ້ໃນປະເທດໄທຍ**

ຄ.ສ. 1828 ໄດ້ມີມິຊຊັນນາຣີຣຸ່ນໃຫມ່ຈາກອັງກິດ ຄນະມິຊຊັນນາຣີລອນດອນ (London Missionary Society) ຄືທ່ານຫມໍ ກຸສລາຟ ພ້ອມ ຄອບຄົວແລະສາສນາຈານ ທອມລິນ ພ້ອມຄອບຄົວ ໄດ້ມາຮອດປະເທດໄທຍໃນວັນທີ່ 23 ສິງຫາ ຄ.ສ. 1828 ພວກຂ້າຣາຊການ ເຈົ້ານາຍໄທຍບໍ່ສົນໃຈຕ້ອນຮັບທ່ານ ເພາະຍ້ານວ່າພວກນີ້ຈະມາເຜີຍແຜ່ນໍາຄົນໄທຍໄປນິຍົມວັທນະທັມຕະວັນຕົກເກີດການເຜີຍແຜ່ອໍານາຈຫາທາງກໍາເອົາດິນແດນໄວ້ເປັນເມືອງຂຶ້ນ ດ້ວຍເຫດນີ້ ເຮັດໃຫ້ຄົນໄທຍບໍ່ສົນໃຈຕ້ອນຮັບຂ່າວປະເສີດ ດັ່ງນັ້ນທ່ານຫມໍກຸສລາຟຈຶ່ງໄດ້ຫັນໄປປະກາດແກ່ຄົນຈີນ ສັ່ງສອນແຈກເຈັ້ຽພຣະຄັມພີຈີນພ້ອມກັບຍາຮັກສາພຍາດ ມີຊາວຈີນມາຫາເພື່ອຮັກສາໂຣຄໄຂ້ຈັບສັ່ນ ໂຣຄອະຫິວາແລະໂຣຄຝີດາສເປັນຈໍານວນມາກ ພາຍຫລັງມີຄົນໄທຍມາຮັບຢານໍາ ທ່ານຫມໍຈຶ່ງໄດ້ຈ້າງ ທ່າວ ຄິງ ຊາວຈີນ ແລະທ່າວຮັນ ຊາວພະມ້າມາແປພຣະຄັມພີ ໂດຍທ່າວຄິງອ່ານພຣະຄັມພີພາສາຈີນແປເປັນໄທຍອອກຈາກປາກ ແລ້ວນາຍຮັນຂຽນອອກເປັນພາສາໄທຍ ໃນຣາວ 6 ເດືອນກໍໄດ້ພຣະທັມຂ່າວປະເສີດ 4 ເຫລັ້ມ ແລະພຣະທັມໂຣມ ວັຈນານຸກົມຈາກພາສາອັງກິດເປັນພາສາໄທຍ ຕັ້ງແຕ່ຕົວອັກສອນ A ຮອດຕົວ R ທ່ານຫມໍໄດ້ຂຽນເຈັ້ຽບົດຄວາມເຣື່ອງ **ທັສນະຂອງສາສນາຄຣິສ** ແລະສົ່ງໄປພິມທີ່ສິງຄໂປຣ໌ ໂດຍໃຊ້ແທ່ນພິມພາສາໄທຍ ທີ່ນາງ ແອນຈັດສັນໄດ້ເຄີຍໃຊ້ພິມມາແຕ່ກ່ອນ

ທ່ານຫມໍກຸສລາຟໄດ້ແຕ່ງງານກັບ ນາງມາເຣັຽ ນີແວລ ທັ້ງສອງໄດ້ຮັບໃຊ້ພຣະເຈົ້າຢ່າງເຂັ້ມແຂງທີ່ສຸດ ແລະສາມາດແປພຣະຄັມພີພາກພັນທະສັນຍາໃຫມ່ທັງເຫລັ້ມເປັນພາສາໄທຍ ແຕ່ຍັງບໍ່ສູ້ສົມບູນປານໃດ ແລະຍັງໄດ້ແປບາງຕອນອອກເປັນພາສາຂະເມ ແລະພາສາລາວໄປພ້ອມກັນ

ຄ.ສ. 1831 ນີ້ຫລັງຈາກທີ່ທ່ານຫມໍກຸສລາຟ ໄປປະເທດຈີນແລ້ວ ມີມິຊຊັນນາຣີຈາກຄນະອເມຣິກັນບອຣ໌ດ ເອ ບີ ຊີ ເອັຟ ເອມ ເຂົ້າມາຮ່ວມງານການເຜີຍແຜ່ຂ່າວປະເສີດ ຄື ທ່ານຫມໍອາບີລ ທ່ານໄດ້ແຈກຢາ ແລະສັ່ງສອນພຣະຄໍາກັບຊາວຈີນໂດຍການຊ່ວຍເຫລືອຂອງທ່າວບຸນຕີ່ ແລະມີການນມັສ

ການນ້ອຍ ໆ ໃນເຊົ້າວັນອາທິດ ໃນປີນັ້ນເກີດນໍ້າຖ້ວມຫລາຍທີ່ກຸງເທພຯ ຕົວທ່ານຫມໍເອງປ່ວຍບໍ່ເຊົາ ເລຍຕ້ອງຕັດສິນໃຈກັບຄືນອະເມຣິກາໃນວັນທີ່ 25 ພືສພາ ຄ.ສ. 1833

ຄ.ສ. 1834 ໄດ້ມີມິຊຊັນນາຣີມາອີກ 2 ຄອບຄົວ ຄື ຄອບຄົວຂອງທ່ານໂຣບິນສັນ ຜູ້ປະກາດຂ່າວປະເສີດກັບຄົນໄທຍ ແລະຄອບຄົວຂອງທ່ານ ຈອນຫ໌ສັນຜູ້ປະກາດຂ່າວເສີດແກ່ຊາວຈີນຮັກກ້ຽນ (Hakka) ທັງສອງຄອບຄົວພົບກັບຄວາມທຸກຍາກຫລາຍແນວ ຖືກຂັບໄລ່ອອກຈາກເຮືອນທີ່ເຊົ່າຢູ່ ໂດຍບໍ່ແມ່ນຄວາມຜິດຂອງທ່ານ ຄືວ່າພໍ່ຄ້າຊາວອັງກິດຜູ້ນຶ່ງໄດ້ເອົາປືນໄປຍິງນົກພິຣາບໃນເຂດວັດ ພຣະພິຊຸສາມເນນໃນວັດຄຽດຫລາຍ ແລະມີຄົນໄທຍເຂົ້າຣຸມທຳຮ້າຍຊາວອັງກິດນັ້ນ ເຮັດໃຫ້ພໍ່ຄ້າຊາວອັງກິດຟ້ອງຮ້ອງປັບໄຫມຣັຖບານໄທຍເປັນຜົນໃຫ້ເກີດ ຄວາມຕຶງຄຽດ ແລະເປັນຜົນຮ້າຍຕໍ່ມິຊຊັນນາຣີ ເຮັດໃຫ້ບໍ່ໄດ້ຮັບອນຸຍາດໃຫ້ເຊົ່າທີ່ດິນຄອບຄົວໂຣບິນສັນຕ້ອງຍ້າຍໄປຢູ່ນຳຊາວໂປຕຸເກສ ແຕ່ຄອບຄົວຈອນສັນຕ້ອງໄປຢູ່ເຮືອນແພລອຍຢູ່ຫນ້າວິຫານຂັ້ງຕາຄຣູສຂອງໂຣມັນຄາທໍລິກໃນກຸງເທພ ຄ.ສ.1836 ທ່ານໂຣບິນສັນໄດ້ຈັດພິມຫນັງສືຊຸດແຣກໃນສະຍາມ ໂດຍແທ່ນພິມທີ່ຊື້ມາຈາກສິງຄໂປຣ໌ທີ່ນາງແອນຈັດສັນ ເຄີຍໃຊ້ພິມທີ່ເຊຣັມໂປ ໂດຍພິມຄຳອະທິຖານສັ້ນ ໆ ເພງສັນລະເສີນ 3 ບົດແລະບັນຍັດ 10 ປະການພ້ອມຄຳອະທິຖານ

ທ່ານໂຣບິນສັນ ເສັຽຊີວິດໃນ ຄ.ສ.1845 ໃນຣະຫວ່າງເດີນທາງກັບອເມຣິກາ ແຕ່ວ່າທ່ານຈອນສັນ ໄດ້ໃຫ້ບັພຕິມາ ຄຣູຈີນຜູ້ນຶ່ງ ໃນປີ ຄ.ສ.1844 ທ່ານຈອນສັນໄດ້ໃຫ້ບັພຕິສມາແກ່ຄຣູຈີນຜູ້ທີ່ສອງຊື່ ກີເອັງ ກົວຍຊຽນ ຜູ້ນີ້ມີຄວາມຮູ້ດີແລະໄດ້ເປັນຄຣູໃຫຍ່ໂຮງຮຽນຄຣິສຕຽນຈີນແຫ່ງແຣກໃນປະເທດໄທຍ ຫລັງຈາກທີ່ເມັຽທ່ານຈອນສັນເປັນພຍາດຕາຍ ທ່ານຈອນສັນໄດ້ຍ້າຍໄປຢູ່ປະເທດຈີນ

ປີ ຄ.ສ.1840 ມິຊຊັນນາຣີຈາກອເມຣິກາພ້ອມຄອບຄົວ ຄື ທ່ານເຈສສີ ຄາສແວລຈາກຄນະເພຣສໄບທີຣຽນ ທ່ານໄດ້ຮັບເຊີນໂດຍໄປສອນພາສາອັງກິດແລະວິຊາວິທຍາສາສຖວາຍແກ່ເຈົ້າຟ້າມົງກຸດ (ຣັຊກາລທີ່ 6) ຊຶ່ງກຳລັງບວດຢູ່ທີ່ວັດບໍວອນນິເວສນ໌ ໄດ້ສຶກສາຢູ່ນຳປີຫົກເດືອນເກີດມິຕພາບອັນດີເມື່ອທ່ານຄາສແວລ ເສັຽຊີວິດໃນ ຄ.ສ.1848 ເຈົ້າຟ້າມຸງກຸດໄດ້ສະເດັດໄປໃນງານສົພ ພຣະຣາຊທານຜ້າໄຫມແລະເງິນ 1,500 ດອລລ່າ ແກ່ເມັຽທ່ານຄາສແວລ

**ມິຊຊັນນາຣີຕົວຢ່າງທີ່ມີຜົນງານຄົນສຳຄັນໃນປະເທດໄທຍ**

**ທ່ານຫມໍ ແດນ ບີຊ ບຣັດເລ່** (Dan Beach Bradley) ຈາກຄນະເພຣສໄບທີຣຽນມາເຖິງປະເທດໄທຍໃນວັນທີ 18 ກໍຣະກະດາ ຄ.ສ.1835 ໃຊ້ເວລາເດີນທາງເຮືອ 1 ປີຈາກບອສຕັນ ທ່ານຫມໍບຣັດເລ່ໄດ້ສ້າງຜົນງານດັ່ງນີ້

1. ຕັ້ງໂຮງພິມແຫ່ງແຣກໃນປະເທດໄທຍ ໂດຍຊື້ແທ່ນພິມທີ່ເຮັດດ້ວຍໄມ້ແລະຫີນຈາກສິງຄໂປຣ໌ ພ້ອມກັບຕົວພິມເກົ່າທີ່ຈັດທຳໃນເຊຣັມໂປ ອິນເດັຽ ເອົາມາໄວ້ໃນກຸງເທພຯ ເຄື່ອງພິມນີ້ເປັນຈຸດເລີ້ມຕົ້ນແຫ່ງການພິມຫນັງສືໃນປະຫວັດສາດໄທຍ ແລະໄດ້ພັທນາໃຫ້ຮຸ່ງເຮືອງມາເຖິງປັຈຈຸບັນ

2. ເປັນນາຍຫມໍທີ່ເຮັດການຖ່າຍໂລຫິຕເປັນເທື່ອທຳອິຕໃນເອເຊັຽ ແລະໄດ້ທຳການຜ່າຕັດແຂນຂອງພຣະພິຊຸ ຕາມແບບແຜນການຜ່າຕັດປັຈຈຸບັນ

3. ເຮັດເຊຣຸ່ມ ເພາະເຊື້ອປລູກຝີ ປ້ອງກັນໄຂ້ທໍຣະພິສ (ຝີດາສ) ແລະວັກຊີນຊິດປ້ອງກັນໂຣຄອະຫິວາ

4. ເປີດສຳນັກຫນັງສືພິມສະບັບທຳອິຕມີນາມວ່າ **"ບາງກອກກາລັນເດອຣ໌"** ໄດ້ລົງຂ່າວທາງການເມືອງອັນເປັນປະໂຍດຫລາຍທີ່ສຸດໃນການສືບຄົ້ນປະຫວັດສາສຊາດໄທຍ ແລະໄດ້ສອນພາສາອັງກິດ

ແກ່ຄົນໄທຍທາງໜັງສືພິມ

5. ສົ່ງເສີມໂຮງຮຽນແພດ ໂດຍຈັດທໍາວັຈນານຸກົມໄທຍໃຫ້ກ້າວໜ້າເພື່ອເອົາໄວ້ໃຊ້ພັທນາດ້ານການສຶກສາ

ນອກເໜືອຈາກຜົລງານທີ່ສ້າງຄວາມກ້າວໜ້າໃຫ້ແກ່ປະເທດໄທຍ ດັ່ງທີ່ໄດ້ກ່າວມາແລ້ວ ທ່ານໝໍບຣັດເລ ຍັງໄດ້ເຮັດຫລາຍແນວໃນການຊ່ວຍເຫລືອພັທນາປະເທດໄທຍທັງການເມືອງ ການປົກຄອງ ແລະການຄ້າຂາຍ ທ່ານໝໍໄດ້ຕັ້ງສຖານອານາມັຍທີ່ວັດເກາະ ຮັກສາຄົນເຈັບທັງໄທຍແລະຈີນປະມານວັນລະຮ້ອຍຄົນ ໄດ້ແຈກເຈັ້ຽພຣະຄັມພີໄປນໍາຢາ ສອນໃຫ້ຄົນເຈັບອ້ອນວອນພຣະເຈົ້າກ່ອນທີ່ຈະກິນຢາ ເຈົ້າຊີວິດໄທຍເອີ້ນທ່ານໄປຮັກສາພວກທາສແລະຊະເລີຍທີ່ເຈັບເປັນໂຣຄຝີດາສ ແລະອະຫິວາ ແລະໃຫ້ພວກແພດຫລວງມາຮຽນຮູ້ຈັກວິທີປລູກຝີ ຈົນກະທັ່ງປີ ຄ.ສ. 1839 ເຈົ້າຊີວິດໄທຍໄດ້ພຣະຣາຊທານເງິນຣາງວັລໃຫ້ຫລາຍພັນບາທ ເຮັດໃຫ້ການເຜີຍແຜ່ຄຣິສສາສນາສະດວກຂຶ້ນອີກນ້ອຍນຶ່ງ ຫລັງຈາກທີ່ເມັຽຜູ້ແຮກຂອງທ່ານໝໍຕາຍໄປດ້ວຍໂຣຄປອດແຫ້ງ ທ່ານໝໍບຣັດເລ ພ້ອມບຸດ 3 ຄົນໄດ້ເດີນທາງກັບອເມຣິກາອັນເປັນເວລາ ທີ່ອເມຣິກັນບອຣດ໌ມິຊຊັນນາຣີປິດງານການເຜີຍແຜ່ໃນປະເທດໄທຍເພາະສາເຫດດັ່ງນີ້

(1) ການເຜີຍແຜ່ໃນປະເທດໄທຍບໍ່ເກີດຜົນ

(2) ມິຊຊັນນາຣີທີ່ມາໄດ້ເຈັບຕາຍໄປ ຫລາຍສິບຄົນ

(3) ຕ້ອງການສົ່ງມິຊຊັນນາຣີໄປປະເທດຈີນ ເພາະວ່າການເຜີຍແຜ່ເກີດຜົນຫລາຍກວ່າ

ທ່ານໝໍບຣັດເລ ໄດ້ກັບມາປະເທດໄທຍ ເທື່ອທີ່ 2 ພ້ອມກັບເມັຽຄົນໃໝ່ທີ່ໄດ້ຊ່ວຍທ່ານເລັ່ຍຣາຍເງິນ ແລະຈັດຕັ້ງເປັນສມາຄົມອເມຣິກັນ ມິຊຊັນນາຣີ ເມື່ອທ່ານມາເຖິງກຸງເທພ ທ່ານໄດ້ຮັບອນຸຍາດໃຫ້ເຊົ່າທີ່ດິນບົນຝັ່ງຊ້າຍຂອງແມ່ນ້ຳເຈົ້າພຣະຍາ ແລະໄດ້ຢູ່ທີ່ນັ້ນດົນນານຈົນຮອດເຖິງຣຸ້ນລູກ ທ່ານມາຢູ່ໃນປະເທດໄທຍໄດ້ 34 ປີ ໄດ້ກັບອະເມຣິກາພຽງເທື່ອດຽວ ທ່ານມີຊື່ສຽງດີເປັນທີ່ຮູ້ຈັກຂອງຊາວຕ່າງຊາດທີ່ເດີນທາງເຮືອຄ້າຂາຍນໍາປະເທດໄທຍ ທ່ານໄດ້ຊ່ວຍເຫລືອຣັຖບາລໄທຍພັທນາປະເທດຫລາຍແນວ ທ່ານພິມຄໍາປະກາດແຮກເຣື້ອງຫ້າມສູບຝິ່ນ ທ່ານພິມປຶ້ມວັນຄດີໄທຍໜັງສືພິມຂອງທ່ານໄດ້ໃຫ້ປະໂຍດໃນການສືບຄົ້ນກຽ່ວກັບເຣື້ອງຣາວປວັດສາດໄທຍ ທ່ານໄດ້ເທສນາສັ່ງສອນຜູ້ເຈັບປ່ວຍ ແປແລະຂຽນພຣະຄັມພີ ເຮືອນຂອງທ່ານໃຊ້ເປັນທີ່ນມັສການ ແລະອ້ອນວອນ ທ່ານສິ້ນຊີວິດໃນປະເທດໄທຍປີ ຄ.ສ. 1873 ຜົນງານຂອງທ່ານໄດ້ຖືກຈາຣຶກໄວ້ໃນໜັງສືປວັດສາດໄທຍທີ່ຄົນໄທຍບໍ່ອາຈຈະລືມໄດ້

**ຜົນງານສໍາຄັນຂອງຄນະເພຣສໄບທີຣຽນ**

ຄຣິສສາສນາສາຍໂປຣເທັສເຕັນຫລາຍ ໆ ຄນະໄດ້ມາເຖິງປະເທດໄທຍກ່ອນ ຄນະເພຣສໄບທີຣຽນ ມິຊຊັນນາຣີເຫລົ່ານັ້ນໄດ້ບຸກເບີກທາງແລະໃຫ້ຄວາມຊ່ວຍເຫລືອ ຮ່ວມມືຕໍ່ກັນແລະກັນມາໂດຍຕລອດ ຜົນງານສໍາຄັນຂອງທ່ານໝໍບຣັດເລໄດ້ວາງຮາກຖານໄວ້ຈົນກະທັ່ງເປັນທີ່ຮູ້ຈັກ ໄດ້ຮັບການຍ້ອງຍໍ ແລະເປັນທີ່ໄວ້ວາງໃຈຂອງຣັຖບາລໄທຍ ແລະຖືກຈາຣຶກໄວ້ໃນປະວັດສາດໄທຍ

ມິຊຊັນນາຣີເພຣສໄບທີຣຽນຣຸ່ນຕໍ່ ໆ ມາໄດ້ຖວາຍຊີວິດເຂົ້າມາຮັບໃຊ້ໃນປະເທດໄທຍ ໄດ້ເລີ້ມກໍ່ຕັ້ງຄຣິສຈັກເພຣສໄບທີຣຽນທີ່ 1 ກຸງເທພທີ່ສໍາເຫຣ່ ໃນເດືອນສິງຫາ ຄ.ສ. 1849 ແຕ່ວ່າສມາຊິກຂອງຄຣິສຈັກມີແຕ່ຄອບຄົວຂອງພວກມິຊຊັນນາຣີເທົ່ານັ້ນ ແລະພາຍຫລັງທ່ານ ກີເອງ ກ໊ວຍຊຽນ

ໄດ້ເຂົ້າມາເປັນສມາຊິກນຳ ຈະເຫັນໄດ້ວ່າມິຊຊັນນາຣີຫລາຍທ່ານໄດ້ເສັຽສລະເຫື່ອແຮງປະກາດເປັນເວລາກວ່າສິບປີ ແຕ່ກໍບໍ່ໄດ້ເກີດຜົນ ຈົນກະທັ່ງ ຄ.ສ.1860 ຈຶ່ງມີຄົນໄທຍຜູ້ແຮກຄື ທ້າວຊື່ນ ທີ່ຮັບບັບຕິສມາແລະເຂົ້າເປັນສມາຊິກຂອງຄຣິສຈັກເພຣສໄບທຣຽນທີ່ 1 ກຸງເທພຯ

ວຽກງານຂອງມິຊຊັນນາຣີໄດ້ເປັນທີ່ຍອມຮັບໃນລະດັບຣັຖບານ ການເມືອງ ຈົນຮອດເຈົ້າຊີວິດໄທຍນັ້ນ ແມ່ນດ້ານການສຶກສາ ວິທຍາການແຜນໃໝ່ ດ້ານການແພດ ການພິມ ແລະການຊ່ວຍເຫລືອຂອງເຫລົ່າມິຊຊັນນາຣີທີ່ມີຕໍ່ຣັຖບານໄທຍໃນດ້ານການທູຕ ຊ່ວຍເຫລືອເຈຣາຈາເຣັດສົນທິສັນຍາກັບຕ່າງປະເທດ ເຣັດໃຫ້ປະເທດໄທຍບໍ່ຕ້ອງເສັຽປຽບທາງດ້ານການເມືອງ ແລະການຄ້າຂາຍ ແຕ່ສ່ວນດ້ານການປະກາດຂ່າວປະເສີດຂອງພຣະເຢຊູຄຣິສນັ້ນໄດ້ເກີດຜົລຢ່າງຊ້າ ໆ ຈະເຫັນໄດ້ວ່າມິຊຊັນນາຣີໄດ້ເຂົ້າມາປະເທດໄທຍຕັ້ງແຕ່ ຄ.ສ.1828 ເປັນເວລາກວ່າ 20 ປີ ນັ້ນສາມາດນຳຄົນໄທຍມາຮັບເຊື່ອແທ້ຈິງບໍ່ເຖິງສິບຄົນ ສ່ວນຫລາຍທີ່ມາຮັບເຊື່ອນັ້ນ ເປັນຊາວຈີນຜູ້ລີ້ພັຍຈາກຈີນແຜ່ນດິນໃຫຍ່ ທີ່ມີພື້ນຖານການເປັນຄຣິສຕຽນມາແຕ່ປະເທດຈີນ

ແຕ່ເຖິງກະນັ້ນມິຊຊັນນາຣີກໍບໍ່ໄດ້ທໍ້ຖອຍ ແມ່ນວ່າຄອບຄົວຂອງມິຊຊັນນາຣີຫລາຍຄົນຕ້ອງຕາຍໄປດ້ວຍພະຍາດເມືອງຮ້ອນ ແລະການປະກາດກໍຖືກຂັດຂວາງຍ້ອນອິດທິພົນທາງການເມືອງ ທີ່ປະເທດຕະວັນຕົກເຂົ້າມາເອົາປຽບທາງການຄ້າເຣັດໃຫ້ມິຊຊັນນາຣີຖືກເພ່ງເລັງໄປໃນທາງທີ່ບໍ່ດີນຳ ທັງ ໆ ທີ່ມິຊຊັນນາຣີເຫລົ່ານີ້ໄດ້ພຍາຍາມສ້າງຄຸນຄວາມດີໃຫ້ແກ່ປະເທດໄທຍຫລາຍທີ່ສຸດ

ຄນະເພຣສໄບທີຣຽນໄດ້ພຍາຍາມຮັບໃຊ້ພຣະເຈົ້າຢ່າງຊື່ສັດຈົນຮອດປັຈຈຸບັນ ໃນຕອນເລີ້ມແຮກໄດ້ຈັດຕັ້ງອົງການສຳຄັນຂຶ້ນສອງໜ່ວຍງານຄື

1. ໜ່ວຍງານປະກາດຂ່າວປະເສີດສຍາມເພຣສໄບເທີຣີ
   (Presbytery of the Siam Mission)
2. ໜ່ວຍງານປະກາດຂ່າວປະເສີດລາວເພຣສໄບເທີຣີ
   (Presbytery of the Laos Mission) ຈະໄດ້ກ່າວເຖິງໃນບົດຕໍ່ໄປ

ໜ່ວຍງານປະກາດຂ່າວປະເສີດສຍາມເພຣສໄບທີຣຽນ ໄດ້ມີວຽກການຮັບໃຊ້ພຣະເຈົ້າໃນອານາເຂດພາກກາງ ພາກໃຕ້ ແລະມີສູນກາງໃນກຸງເທພຯ ຊຶ່ງພໍຈະສລຸບຜົນງານໄດ້ດັ່ງນີ້

1) **ກຸງເທພຯ** ໄດ້ກໍ່ຕັ້ງໂຮງຮຽນແລະຄຣິສຈັກຕ່າງ ໆ ດັ່ງນີ້

- ຄ.ສ.1874 ກໍ່ໃຫ້ເກີດໂຮງຮຽນກຸລສັຕຣີວັງຫລັງ ແລະໄດ້ພັທນາເປັນໂຮງຮຽນວັທນາວິທຍາລັຍ ອັນເປັນໂຮງຮຽນສັຕຣີແຫ່ງແຮກໃນປະເທດໄທຍ
- ຄ.ສ.1887 ກໍ່ເກີດໂຮງຮຽນເບເຣ ເມັມໂມຣຽລ
- ຄ.ສ.1888-1890 ກໍ່ໃຫ້ເກີດໂຮງຮຽນກຸງເທພຄຣິສຕຽນວິທຍາລັຍ ອັນເປັນຜົນຂອງການພັທນາມາຈາກໂຮງຮຽນຈີນສຳເຫຣ່
- ຄ.ສ. 1849 ກໍ່ຕັ້ງຄຣິສຈັກເພຣສໄບທີຣຽນທີ່ 1 ຫຼືທີ່ເອີ້ນໃນປັຈຈບັນວ່າຄຣິສຈັກທີ່ 1 ສຳເຫຣ່
- ຄ.ສ.1878 ກໍ່ຕັ້ງຄຣິສຈັກທີ່ 2 ຖນົນພຣະຣາມສີ່ ສາມຍ່ານ
- ຄ.ສ.1896 ກໍ່ຕັ້ງຄຣິສຈັກທີ່ 3 ຖນົນຣາຊວົງ ເປັນຄຣິສຈັກຈີນ
- ຄ.ສ.1904 ກໍ່ຕັ້ງຄຣິສຈັກທີ່ 4 ສືບສັມພັນທະວົງ
- ຄ.ສ.1922 ກໍ່ຕັ້ງຄຣິສຈັກທີ່ 5 ຄື ຄຣິສຈັກວັທນາ ຖນົນສຸຂຸມວິທ
- ຄ.ສ.1932 ກໍ່ຕັ້ງຄຣິສຈັກທີ່ 6 ຄື ຄຣິສຈັກຈີນສາທອນ ຖນົນສາທອນໃຕ້ ແລະໄດ້

ແຕກຄຣິສຈັກອອກໄປເປັນອີກຄຣິສຈັກນຶ່ງ ຄື ຄຣິສຈັກສະພານເຫລືອງ ຖນົນພຣະຣາມສີ່

2) **ເພັຊບຸຣີ** ຄ.ສ.1861 ຄອບຄົວສາສນາຈານແມກກີລວາຣີ ແລະຄອບຄົວ ແບຄຟາແລນ ໄດ້ໄປປະກາດຂ່າວປະເສີດທີ່ຈັງຫວັດເພັຊບຸຣີ ແລະເກີດຜົນດັ່ງນີ້

- ຄ.ສ.1863 ກໍ່ຕັ້ງກອງປະຊຸມ ແລະພັທນາເປັນຄຣິສຈັກພົມົລທັມໃນປັຈຈຸບັນ
- ຄ.ສ.1865 ກໍ່ຕັ້ງໂຮງຮຽນສອນງານຝີມືແກ່ສັຕຣີແຫ່ງແຣກແລະຕໍ່ມາໄດ້ພັທນາເປັນໂຮງຮຽນອຣຸນປະດິສ
- ຄ.ສ.1874 ໄດ້ຈັດຕັ້ງຄຣິສຈັກ ທີ່ຕຳບົລບາງກະບູນ ອັນເປັນຄຣິສຊົນບົທແຫ່ງແຣກໃນຈັງຫວັດເພັຊບຸຣີ
- ຄ.ສ.1881 ກໍ່ຕັ້ງໂຮງຮຽນພຍາບາລອເມຣິກັນເພຣສໄບທີຣຽນ ອັນເປັນໂຮງໝໍຕາມແບບແຜນການສມັຍໃຫມ່ແຫ່ງແຣກໃນປະເທດໄທຍ ຊຶ່ງກໍ່ຕັ້ງຂຶ້ນ 8 ປີກ່ອນໂຮງພຍາບາລສີຣິຣາຊ

3) **ອະຍຸທຍາ** ຄ.ສ. 1872 ໄດ້ຂຍາຍວຽກການປະກາດໄປເຖິງອະຍຸທຍາ ຊຶ່ງເກີດຜົລພຽງເລັກນ້ອຍ

4) **ຣາຊບຸຣີ** ຄ.ສ.1889 ໄດ້ຂຍາຍວຽກງານການປະກາດຈາກເພັຊບຸຣີເຖິງຣາຊບຸຣີ ການປະກາດເປັນຜົລດີ ແລະກໍ່ຕັ້ງໂຮງຮຽນສຸຣິວົງ

5) **ພິສນຸໂລກ** ຄ.ສ.1899 ທ່ານສາສນາຈານ ບຸນຕ໋ອນ ບຸນອິຕ ຜູ້ເປັນລູກຂອງຄຣູ ກີເອ້ງ ກ໋ອຍຊຽນ ໄດ້ກໍ່ຕັ້ງວຽກງານດ້ານການແພທ ແຕ່ສ່ວນພັລຍາຂອງທ່ານບຸນຕ໋ອນ ຄື ນາງກິມຮ໊ອກ ໄດ້ກໍ່ຕັ້ງໂຮງຮຽນສັຕຣີພາຍຫລັງໄດ້ພັທນາເປັນໂຮງຮຽນຜດຸງນາຣີ

6) **ນະຄອນສີທັມຣາຊ** ສມາຊິກຄຣິສຕຽນຈາກເພັຊບຸຣີໄດ້ມາເລີ້ມຕົ້ນງານການປະກາດຄື ທ່ານເກີດ ແມ່ເມກ ແລະທ້າວລອດ

- ຄ.ສ.1895 ກໍ່ຕັ້ງຄຣິສຈັກ ແລະອາຄານຮຽນ ພາຍຫລັງໄດ້ເປັນໂຮງຮຽນຊາຍ ແລະໂຮງຮຽນຍິງ
- ຄ.ສ.1922 ໄດ້ເປີດໂຮງໝໍປົວໂຣຄຂີ້ທູດ (ໂຣຄເຣື້ອນ)

7) **ຕຣັງ** ຄ.ສ.1910 ໄດ້ກໍ່ຕັ້ງວຽກງານທີ່ຕຳບົລທັບທ່ຽງ ໂດຍມີຜູ້ປະກາດຊາວຈີນ ຄື ຄຣູຕຸ້ນ ແລະຄຣູຊ່ວງ ໄດ້ຊ່ວຍງານດ້ານການແພທ ທ່ານຫລວງເພັຊສີງຄາມ ໄດ້ມາຮັບເຊື່ອ ແລະກໍ່ຕັ້ງຄຣິສຈັກຂຶ້ນໃນປີ ຄ.ສ. 1915 ແລະໄດ້ຂຍາຍງານໄປເຖິງຫ້ວຍຍອດ ກັນຕັງ ແລະພູເກັຕ

ຜົນງານທີ່ໄດ້ສລູບໂດຍຍໍ້ນີ້ ມິຊຊັນນາຣີແລະຜູ້ປະກາດທ້ອງຖິ່ນໃນປະເທດໄທຍໄດ້ຮ່ວມກັນວາງຣາກຖານແກ່ຄຣິສຈັກເພຣສໄບທີຣຽນຈົນເຖິງປັຈຈຸບັນ ໃນຣະຍະເວລາດຽວກັນມິຊຊັນນາຣີໂປຣເທັສຕັນຄນະອື່ນ ໆ ກໍທຳການປະກາດຂ່າວປະເສີດໃນປະເທດໄທຍໃນເຂຕອື່ນ ໆ ຈະເຫັນໄດ້ວ່າຜູ້ຮັບໃຊ້ຕ່າງໄດ້ໃຫ້ຄວາມຊ່ວຍເຫລືອແລະຮ່ວມມືຕໍ່ກັນແລະກັນ ຕັ້ງແຕ່ເຣີ່ມຕົ້ນທີ່ເຂົ້າມາໃນປະເທດໄທຍ ສິ່ງເຫລົ່ານີ້ສົມຄວນເປັນບົດຮຽນແກ່ເຮົາທຸກຄົນທີ່ເປັນຜູ້ຮັບໃຊ້ບໍ່ວ່າຢູ່ບ່ອນໃດ ຄວາມຮ່ວມມື ຮ່ວມໃຈກັນຕໍ່ສູ້ອົດທົນເພື່ອຂ່າວປະເສີດຂອງພຣະເຢຊູຄຣິສ ແລະການນຳຄວາມຣອດພົ້ນໄປສູ່ປະຊາຊົນ ໂດຍບໍ່ອິດສາຢ້ານລົ່ມທຳລາຍລ້າງກັນເອງ ຊີງການເປັນໃຫຽ່ ມັກເອົາອຳນາຈໃສ່ຕົນເອງ ດັ່ງນັ້ນຈຶ່ງຂໍຝາກບົດຮຽນປວັດສາດນີ້ໄວ້ສອນໃຈເຮົາທຸກຄົນ

ໃນປັຈຈຸບັນນີ້ຄຣິສຈັກໂປຣເທັສເຕນໃນປະເທດໄທຍເປັນອົງການທີ່ໄດ້ຮັບການຮັບຮອງຈາກຣັຖບາລໄທຍ ຢູ່ພາຍໃຕ້ການປົກຄອງດູແລຂອງກົມສາສນາ ກະຊວງສຶກສາທິການ ມີອົງການໃຫຍ່ທີ່ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍ ແລະໄດ້ຮັບການຍອມຮັບຮອງຈາກຣັຖບາລຢູ່ 3 ອົງການ

1. **ສະພາຄຣິສຈັກໃນປະເທດໄທຍ** (Church of Christ in Thailand) ໄດ້ກໍ່ຕັ້ງໃນປີ ຄ.ສ. 1934 ເມື່ອຕົ້ນເດີມນັ້ນໄດ້ກໍ່ຕັ້ງເປັນ **"ສຍາມຄຣິສສພາ"** (National Christian Council of Siam) ໃນປີ ຄ.ສ. 1930 ໄດ້ຂະຍາຍວຽກງານແລະໄດ້ມີຄນະນິກາຍຕ່າງ ໆ ເຂົ້າຮ່ວມ ຈຶ່ງໄດ້ກາຍເປັນສະພາຄຣິສຈັກໃນປະເທດໄທຍ ການດຳເນີນວຽກງານໄດ້ຕົກໃນມືຂອງຄຣິສຕຽນຜູ້ນຳຄົນໄທຍ ໃນປີ ຄ.ສ.1957 ຄນະນິກາຍທີ່ເຂົ້າຮ່ວມສ່ວນຫລາຍເປັນກຸ່ມຄນະນິກາຍຈາກອະເມຣິກາ ແລະປະເທດອື່ນ ໆ ໄດ້ແກ່

1) ຄນະທັມການອະເມຣິກາເພຣສໄບທີຣຽນ
   (American Presbyterian Mission)
2) ຄນະສາວົກຂອງພຣະຄຣິສ ອະເມຣິກາ)
   (America Disciples of Christ)
3) ຄນະທັມການອະເມຣິກັນບັພຕິສ
   (American Baptist Missions)
4) ສະພາຄຣິສຈັກຮ່ວມຂອງຍີ່ປຸ່ນ ແລະຟີລິປິນ
   (Japanes and Filipino United Church of Chirst)
5) ຄນະທັມການເກາຫລີ
   (Korean Presbyterian Mission)
6) ສະພາຄຣິສຈັກອິນເດັຽໃຕ້
   (Church of Chirst of South India)

ສະພາຄຣິສຈັກໃນປະເທດໄທຍມີທັງຄຣິສຈັກໄທຍ ແລະຈີນ ແບ່ງອອກເປັນສິບສອງພາກ (ບໍ່ແມ່ນຕາມພູມິພາກ ແຕ່ຕາມກຸ່ມຂອງພາສາ ແລະຄນະຫລາຍກວ່າ) ມີຄຣິສຈັກໃນພາກຕ່າງ ໆ ທົ່ວປະເທດ ໂຮງຮຽນແລະໂຮງໝໍຫລາຍແຫ່ງ ມີວິທຍາລັຍພຣະຄຣິສທັມພາຍັພ ທີ່ໄດ້ຮັບຮອງວິທະຍະຖານະຈາກມຫາວິທຍາລັຍຊຽງໃໝ່ ແລະຍັງມີວິທຍາລັຍພຣະຄຣິສທັມອື່ນ ໆ ໃນກຸງເທພໆ ມີສຳນັກພິມຊື່ ສຸຣິຍະບັນ

2. **ສຫະກິຈຄຣິສຕຽນແຫ່ງປະເທດໄທຍ** (Evangelical Fellowship of Thailand ໄດ້ກໍ່ຕັ້ງປີ ຄ.ສ.1974) ປະກອບດ້ວຍກຸ່ມຄນະທີ່ມີການເນັ້ນໃນການປະກາດຂ່າວປະເສີດເປັນຫລັກໃນການປະຕິບັດການຮັບໃຊ້ຕາມພັນທະກິຈຂອງພຣະເຈົ້າ(ເອີ້ນວ່າ Evangelical) ອົງການນີ້ປະກອບດ້ວຍຄນະນິກາຍຕ່າງ ໆ ດັ່ງນີ້

1) Chirstian and Missionary Allance ໄດ້ເລີ້ມວຽກງານໃນປີ ຄ.ສ.1929
2) Oversea Mission Fellowship ໄດ້ເລີ້ມວຽກງານໃນປີ ຄ.ສ.1951
3) ຄນະນິກາຍອື່ນ ໆ ອີກ ເຊັ່ນ Pentecostal Churches ແລະຄນະນ້ອຍອີກຫລາຍ ໆ ຄນະ ມີໂຮງຮຽນພຣະຄຣິສທັມທີ່ເປັນງານຮ່ວມກັນຮ້ອງວ່າ ວິທຍາລັຍພຣະຄຣິສທັມກຸງເທພ ແຕ່ລະຄນະໄດ້ເປີດຄຣິສຈັກຂອງຕົນເອງໃນແຕ່ລະຈັງຫວັດແຕກຕ່າງກັນອອກໄປ ສຳນັກພິມທີ່ຄຣິສຕຽນຮູ້ຈັກກັນດີຄື ກະນິກບັນນາສານ ແລະຍັງມີໂຮງຮຽນປະຖົມຫລາຍບ່ອນ ແລະໂຮງໝໍປິ່ນປົວພະຍາດຂີ້ທູດ ທີ່ມີຊື່ສຽງ

3. **ຄນະເຊົ້າເທີນບັພຕິສແຫ່ງປະເທດໄທຍ** (Southern Baptist in Thailand)

ເປັນອົງການສຸດທ້າຍທີ່ໄດ້ຮັບການຮັບຮອງຈາກຣັຖບານ ມີໂຮງຮຽນຄຣິສສາສນາສາດ ທີ່ກຸງເທພ ໂຮງໝໍທີ່ມີຊື່ສຽງທີ່ບາງຄລ້າ ມີສູນໂສດທີ່ຜະລິດໜັງຄຣິສຕຽນສຳຫັບຊາວໄທຍ ແລະມີຄຣິສຈັກຢູ່ໃນຈັງຫວັດຕ່າງ ໆ ສ່ວນຫລາຍເປັນພາກໃຕ້ຂອງປະເທດໄທຍ ອົງການນີ້ໄດ້ຮັບການຍອມຮັບໃຫ້ເປັນອົງການທາງສາສນາຈາກຣັຖບານໄທຍໂດຍຕົວເອງ (ບໍ່ມີຄນະອື່ນຮ່ວມດ້ວຍ)

ກຸ່ມຄຣິສຈັກຫລືຄນະນິກາຍໂປຣເທັສເຕັນໃດ ໆ ຕ້ອງການຈະຈັດຕັ້ງອົງການ ທາງກົມສາສນາຈະມີຂໍ້ສະເນີໃຫ້ພຍາຍາມເຂົ້າຮ່ວມໃນອົງການນຶ່ງອົງການໃດໃນສາມອົງການທີ່ໄດ້ກ່າວມາແລ້ວ ຈຶ່ງຈະໄດ້ຮັບການຍອມຮັບຢ່າງຖືກຕ້ອງຕາມກົດໝາຍໄດ້

ໃນປີ ຄ.ສ. 1978 ຄຣິສຈັກໂປຣເທັສເຕັນໄດ້ຈັດມີການສລອງ 150 ປີ ການສລອງນີ້ເປັນຣະດັບຊາດທີ່ທຸກອົງການໄດ້ໃຫ້ຄວາມຮ່ວມມືເປັນເທື່ອທຳອິດໃນປະວັດສາດ ມີການເທສນາປ່າວປະກາດໃນພາກຕ່າງ ໆ ໂດຍພ້ອມພຽງກັນ ໜ່ວຍການແລະອົງການຂອງຣັຖບານໄດ້ໃຫ້ຄວາມສນັບສນູນການສລອງນຳພາໃຫ້ຄຣິສຈັກຄນະຕ່າງ ໆ ເກີດມີຄວາມເຂົ້າອົກເຂົ້າໃຈກັນຫລາຍກວ່າເດີມ ແລະໃຫ້ຄວາມຮ່ວມມືກັນໃນການປ່າວປະກາດຂ່າວປະເສີດຂອງພຣະເຢຊູຄຣິສ ໃນປັດຈຸບັນນີ້ມີອົງການຄຣິສຈັກເກີດຂຶ້ນຫລາຍກວ່າເກົ່າ ແລະເຮົາໄດ້ເຫັນຄຣິສຈັກໃຫມ່ເກີດຂຶ້ນຫລາຍແຫ່ງ ເຮົາໄດ້ຍິນໄດ້ຟັງເຖິງຄຳພຍານຂອງຄົນທຸກຣະດັບທີ່ມາເປັນຄຣິສຕຽນ ຈະເປັນປະຊາຊົນທັມດາ ຂ້າຣາຊການ ນາຍທຫານ ແລະນັກທຸຣະກິຈ ສັຣເສີນພຣະເຈົ້າ ຂໍໃຫ້ຂ່າວປະເສີດຂອງພຣະອົງເປັນຄວາມຣອດພົ້ນຂອງປວງຊົນຊາວໄທຍຕລອດໄປ ອາເມນ

ສະຫງວນລິກຂະສິດ Copyright©Thira Siengsukon
In compliance with copyright restrictions, no portion of these materials may be reproduced in any form without written permission of the writer.

ດີ 2/28/98

# ບົດທີ 19

## ຂ່າວປະເສີດຂອງພຣະເຢຊູຄຣິສ ມຸ່ງສູ່ຣາຊອານາຈັກລາວ

ຣາຊອານາຈັກລາວ ດິນແດນທີ່ອຸດົມສົມບູນດ້ວຍພືດພັນອາຫານມາແຕ່ສະມັຍໂບຮານ ປະກອບດ້ວຍປະຊາກອນຫລາຍໝູ່ເຫລົ່າເຜົ່າພັນແລະຫລາຍພາສາ ເມື່ອຣວມເຂົ້າກັນແລ້ວນັບໄດ້ວ່າມີປະຊາຊົນປະມານ ສາມ ລ້ານປາຍຄົນ

ຣາຊອານາຈັກລາວເປັນປະເທດນຶ່ງໃນຫລາຍ ໆ ປະເທດ ທີ່ຕັ້ງຢູ່ບໍຣິເວນແຫລມອິນໂດຈີນ (Indochina) ຫລືທີ່ເອີ້ນກັນວ່າ ຕາວັນອອກສຽງໃຕ້ຂອງທະວີບເອເຊັຍ (Southeast Asia) ຣາຊອານາຈັກລາວມີຊາຍແດນທາງຕອນໃຕ້ຕິດກັບປະເທດຂະເມນ ທາງຕາວັນຕົກຕິດກັບປະເທດໄທຍ ຕາວັນຕົກສຽງເໜືອຕິດກັບປະເທດພະມ້າ ຊາຍແດນພາກເໜືອແມ່ນຕິດກັບປະເທດຈີນແລະປະເທດວຽດນາມ ໂດຍມີເມືອງເອກ ຄືນະຄອນວຽງຈັນ ຢູ່ທາງດ້ານຕາວັນອອກຂອງຣາຊອານາຈັກລາວແລະເມືອງ ຫລວງພຣະບາງທາງພາກເໜືອ ພົລເມືອງໃນຣາຊອານາຈັກລາວໄດ້ແບ່ງອອກດັ່ງນີ້

| | | | |
|---|---|---|---|
| ⍏ ເຜົ່າລາວ (Lao) | ມີ | 50 | ສ່ວນ |
| ⍏ ເຜົ່າມົ້ງ ແມ້ນ ໂຮ (Hmong Man Ho) | ມີ | 25 | ສ່ວນ |
| ⍏ ເຜົ່າຂ້າ (Kha) | ມີ | 15 | ສ່ວນ |
| ⍏ ເຜົ່າໄທດຳ ໄທເໜືອ (Tai Dam, Tai Neua) | ມີ | 5 | ສ່ວນ |

ນອກເໜືອຈາກນີ້ຍັງມີຊົນເຜົ່າພາສາອື່ນໆ ທີ່ອາສັຍຢູ່ໃນຣາຊອານາຈັກລາວຕົວຢ່າງເຜົ່າໂລໂລຈາກພະມ້າ (Lolo of Tibe Burma ) ມີ ຄົນຈີນ ຄົນວຽດນາມ ອິນເດັຍ ເປັນຕົ້ນ

ໂດຍລັກສະນະການຢູ່ອາໄສໃນທີ່ສູງແລະທີ່ຮາບພຽງຂອງຊົນເຜົ່າຕ່າງ ໆ ກັນນັ້ນ ຈຶ່ງມັກເອີ້ນຊື່ຕາມລັກສະນະພູມີປະເທດວ່າ ເຜົ່າລາວເທິງ ເຜົ່າລາວລຸ່ມ ເຜົ່າລາວລຸ່ມນັ້ນແມ່ນຄົນລາວພື້ນເມືອງ ສ່ວນລາວເທິງນັ້ນເປັນເຜົ່າທີ່ອາໄສຕາມພູສູງຕົວຢ່າງ ຊາວມົ້ງ ຊາວຂ້າ ເປັນຕົ້ນ ດ້ວຍເຫດວ່າມີຫລາຍກຸ່ມຫລາຍພາສານີ້ເອງ ການຕິດຕໍ່ກັນແລະການເສີມສ້າງພັທນາປະເທດຈຶ່ງເປັນໄປໄດ້ຍາກ ອີກທັງແຕ່ລະເຜົ່າແຕ່ລະພາສາຍັງຄົງຖືປະເພນີຮີດຄອງຂອງຕົນເອງ ຍາກຕໍ່ການຫລໍ່ຫລອມໃຫ້ມີຄວາມກົມກຽວເປັນອັນນຶ່ງອັນດຽວກັນ ເຖິງຢ່າງໃດກໍຕາມຄວາມເປັນຢູ່ຂອງແຕ່ລະຄອບຄົວກໍບໍ່ໄດ້ລຳບາກ ເພາະວ່າສະພາບພູມີອາກາດໄດ້ອຳນວຍໃຫ້ສາມາດປູກເຂົ້າໃນນາ ມີປາໃນໜອງ ໝູ ເປັດ ໄກ່ ງົວ ຄວາຍ ກໍຫາລ້ຽງໄດ້ຫາກມີຜູ້ຄົນສົນໃຈທຳມາຫາກິນດຸໝັ່ນພຽນກໍ່ສາດທີ່ຈະມີຢູ່ມີກິນໄດ້ດີ

ດິນແດນທັງໝົດຂອງຣາຊອານາຈັກລາວນີ້ມີຂອບເຂດກວ້າງປະມານ 91,400 ຕາຣາງໄມລ໌ ຊຶ່ງປຽບໄດ້ພໍປະມານໃຫຍ່ເທົ່າກັບ ຣັຖແດນຊັສ ມີອາກາດຊຸ່ມຊື່ນແລະມີແມ່ນໍ້າຂອງ ປຽບດັ່ງສາຍເລືອດທີ່ໃຫ້ການຫລໍ່ລ້ຽງ ຣາຊອານາຈັກລາວ

ປະຊາຊົນລາວແລະປະຊາຊົນທາງແຖບຕາວັນອອກສຽງເໜືອຂອງໄທຍ ທີ່ເອີນວ່າອີສານແລະທາງແຖບເໜືອຄືແຖບຊຽງໃໝ່ ຂຶ້ນໄປນັ້ນຕ້ອງນັບວ່າ ມີສີລປະຮີດຄອງປະເພນີແລະຄວາມເປັນຢູ່ທີ່ໃກ້ຄຽງກັນ ທັງທາງດ້ານພາສາແລະຊີວິດການເປັນຢູ່ ແຕ່ເດີມນັ້ນດິນແດນທາງຕາວັນອອກສຽງເໜືອແລະ

ທາງເໜືອຂອງປະເທດໄທຍນັ້ນ ແມ່ນຣາຊອານາຈັກລ້ານຊ້າງ (The Old Lao Kingdom of Lane Xang = The Land of Million Elephants) ຕາມປະຫວັດສາດລາວໄດ້ບັນທຶກໄວ້ນັ້ນຄືໃນ ຄ.ສ 729-750 ເຈົ້າຊີວິດ ຂູນບໍລົມຣາຊາທິຣາຊ ມີລູກຊາຍ 7 ຄົນ ຄອບຄອງດິນແດນຣາຊອານາຈັກລາວອັນກວ້າງຂວາງ ລູກຊາຍຜູ້ນຶ່ງມີນາມວ່າ ຂູນລໍ ໄດ້ເປັນເຈົ້າຊີວິດອົງທໍາອິດປົກຄອງຜືນແຜ່ນດິນລ້ານຊ້າງ ເຊື່ອວ່າ ເມືອງຊຽງທອງ ຫລືທີ່ເອີ້ນວ່າ ເມືອງຫລວງພຣະບາງ ນັ້ນ ໄດ້ຖືກກໍ່ສ້າງຂຶ້ນໃນປີ ຄ.ສ. 757 ອັນເປັນເວລາທີ່ເຈົ້າຊີວິດ ຂູນລໍ ຍັງຄົງຄອງຣາຊຢູ່

ຄ.ສ.1353 ຣາຊອານາຈັກລາວໄດ້ເປັນທີ່ຮູ້ຈັກຂອງໂລກສາກົນ ໂດຍເຈົ້າຟ້າງູ່ມໄດ້ສະຖາປະນາຕົນເອງເປັນເຈົ້າຊີວິດ ແລະໄດ້ຖືກນັບວ່າເປັນບິດາແຫ່ງປະເທດລາວຂອງຍຸກສາກົນນີ້ ເຈົ້າຟ້າງູ່ມຟື້ນຟູເມືອງຫລວງພຣະບາງ ແລະໄດ້ສະຖາປະນາໃຫ້ສາສນາພຸດເປັນສາສນາປະຈໍາຊາດລາວ ໂດຍການສະນັບສະນູນຂອງຣາຊສໍານັກຣາຊວົງຂະເມນ ຂໍ້ອ້າງອິງນີ້ໄດ້ຄັດເປັນພາບໄວ້ທີ່ຝາກໍາແພງໄວ້ເຖິງເຊື້ອສາຍເຈົ້າຊີວິດຂອງລາວຈົນຮອດປີ ຄ.ສ.1975 ນັ້ນ ແມ່ນເຊື້ອສາຍຂອງເຈົ້າຟ້າງູ່ມ ໃນລະຫວ່າງຄວາມຮຸ່ງເຮືອງຂອງຣາຊອານາຈັກລາວໂດຍເຈົ້າຟ້າງູ່ມນີ້ ຕາມປະຫວັດສາດພົບວ່າມີດິນແດນກວ້າງໃຫຍ່ຄອບຄູມເຖິງພາກອີສານ ແລະພາກເໜືອຂອງໄທຍ ຮອດອານາເຂດຍູນານ ແລະທາງຕອນໃຕ້ຂອງປະເທດຈົນຮອມເຖິງຊາຍແດນຂອງພະມ້າແລະຊາຍແດນຂອງປະເທດວຽດນາມດ້ວຍ ດິນແດນທັງຫມົດນີ້ໄດ້ຢູ່ໃນການປົກຄອງຂອງພຣະເຈົ້າຟ້າງູ່ມ ແຕ່ວ່າຕ້ອງສູນເສັຍດິນແດນເຫລົ່ານີ້ໄປ ເມື່ອພຣະເຈົ້າຟ້າງູ່ມສິ້ນຊີວິດລົງ ແລະເປັນຄວາມຈິງວ່າຕລອດປະຫວັດສາດຫລັງຈາກນັ້ນມາ ຣາຊອານາຈັກລາວຕ້ອງເຮັດເສິກສູ້ຮົບປ້ອງກັນຕົນເອງຈາກປະເທດໃກ້ຄຽງຮອບທິດເຖິງ 6 ປະເທດ ຈົນເຖິງ ຄ.ສ.1893 ຝຣັ່ງເສດໄດ້ເຂົ້າປົກຄອງຣາຊອານາຈັກລາວ ເຮັດໃຫ້ປະເທດຮອບຂ້າງຢຸດການບຽດບຽນແຍ່ງຊີງເອົາດິນແດນໄປຈາກຣາຊອານາຈັກລາວ

ໃນເດືອນ 10 ຄ.ສ.1954 ຣາຊອານາຈັກລາວໄດ້ປະກາດເປັນເອກຣາຊມີອິສະລະພາບລຸດພົ້ນຈາກການປົກຄອງຂອງຝຣັ່ງເສດ ແລະໃນອີກ 2-3 ປີຕໍ່ມາ ໄດ້ສະຖາປະນາຣັຖທັມມະນູນເປັນປະເທດປະຊາທິປະໄຕຍ ໂດຍມີເຈົ້າຊີວິດຜູ້ສືບເຊື້ອສາຍຣາຊວົງມາ ແຕ່ເຈົ້າຊີວິດອົງກ່ອນໄດ້ຂຶ້ນຄອງຣາຊ ອິສຣະພາບແລະຄວາມສະງົບສຸກຂອງຣາຊອານາຈັກລາວດໍາເນີນໄປບໍ່ດົນນານປານໃດ ໄດ້ເກີດມີພັກການເມືອງສາມພັກທີ່ຂັດແຍ້ງແຍ່ງຊີງອໍານາດກັນ ຄືພັກການເມືອງຝ່າຍຊ້າຍທີ່ນິຍົມຣະບອບຄອມມິວນິສໄດ້ກໍ່ຕົວຂຶ້ນ ໂດຍຮັບການສະນັບສະນູນດ້ານການເງິນແລະອາວູດອຸປະກອນສົງຄາມ ຕລອດຈົນແຜນການຮົບຈາກວຽດນາມເໜືອ ພວກທີ່ນິຍົມຣະບອບຄອມມິວນິສໄດ້ເອີ້ນຕົນເອງວ່າ ປະເທດລາວ (The Pathet Lao) ໄດ້ທໍາການກໍ່ກວນຄວາມສະງົບສຸກຂອງປະເທດ ໃນຂນະທີ່ຝ່າຍຣັຖບາລທີ່ປົກຄອງຢູ່ເປັນພັກການເມືອງຝ່າຍຂວາແລະພັກການເມືອງທີ່ເປັນກາງ (Neutralist) ໂດຍມີເຈົ້າສຸວັນນະພູມາ (Prince Souvanna Phouma) ດໍາລົງຕໍາແໜ່ງນາຍົກຣັຖມົນຕຣີໃນເວລານັ້ນ ການແຊກຊຶມຂອງຝ່າຍຊ້າຍໄດ້ສ້າງຄວາມບໍ່ສະງົບຫລາຍຂຶ້ນ ແຕ່ວ່າປະຊາຊົນສ່ວນຫລາຍນັ້ນເປັນກາງບໍ່ຮູ້ຈັກການເມືອງ ຈົນເຖິງ ຄ.ສ. 1973 ໂດຍການບຸກລຸກຂອງວຽດນາມເໜືອໄດ້ຍຶດຄອງເອົາດິນແດນບາງສ່ວນທາງຕອນເໜືອຂອງປະເທດລາວ ເຮັດໃຫ້ຂາດການຕິດຕໍ່ໄປຈົນເຖິງ ຄ.ສ.1975 ເມື່ອວຽດນາມໃຕ້ຄືນະຄອນໄຊງ່ອນຖືກປົດປ່ອຍເສັຍແກ່ວຽດນາມເໜືອ ໂດຍພວກຄອມມິວນິສວຽດນາມເໜືອໄດ້ເຂົ້າບຸກຍຶດຄອງ ເມື່ອວຽດນາມໃຕ້ຕ້ອງສູນເສັຽແກ່ວຽນນາມເໜືອ ອັນເປັນເຫດໃຫ້ປະເທດຂະເມນແລະຣາຊອານາຈັກລາວຕ້ອງຖືກຍຶດຄອງໄປພ້ອມກັນ ຣາຊອານາຈັກລາວໄດ້ຕັ້ງນາມໃຫມ່ວ່າ "ປະເທດລາວ" ໂດຍການນໍາພາຂອງເຈົ້າສຸພານຸວົງ ຊຶ່ງໄດ້ຮັບການສະນັບສະນູນຈາກຝ່າຍວຽດນາມເໜືອ ແລະເປັນທີ່ຮູ້ຈັກຂອງໂລກສາກົນປັດຈຸບັນ

ວ່າ "ປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ" (Lao People's Democratic Republic, French: Republique Democratique Pupulaire Lao)

### ຂ່າວປະເສີດເຂົ້າສູ່ຣາຊອານາຈັກລາວ

ຜູ້ຂຽນຕ້ອງຍອມຮັບວ່າ ໃນການສືບຄົ້ນຄວ້າເຣື່ອງລາວປະຫວັດສາດການເຜີຍແຜ່ຄຣິສສາສນາທີ່ເຂົ້າສູ່ຣາຊອານາຈັກລາວນັ້ນເປັນການຍາກລຳບາກທີ່ສຸດ ເພາະວ່າບໍ່ມີຜູ້ຂຽນເຖິງປະຫວັດດັ່ງເດີມ ໃນເຣື່ອງນີ້ທີ່ໃດ ທີ່ຂຽນໄວ້ບາງອັນກໍຂາດຕອນບໍ່ຕໍ່ເນື່ອງກັນແລະບໍ່ສາມາດຫາໄດ້ທີ່ເປັນພາສາລາວ ດັ່ງນັ້ນການຄົ້ນຄວ້າຈຶ່ງຫາໄດ້ພຽງໃນພາສາອັງກິດ 2-3 ສບັບ ໜັງສືເຫລົ່ານີ້ບໍ່ມີການຈາລຶກເຣື່ອງຣາວຍ້ອນຫລັງໄປໃນປະຫວັດສາດຍາວນານ ມີແຕ່ເຣື່ອງລາວໃນສມັຍບໍ່ນານນີ້ເອງ ດັ່ງນີ້ແລ້ວຫາກຜູ້ອ່ານມີຂໍ້ສະເນີແນະປະການໃດ ຜູ້ຂຽນຍິນດີທີ່ຈະຮັບຟັງແລະເມື່ອພິຈາລະນາເຫັນສົມຄວນແລ້ວກໍຈະນຳມາເພີ້ມເຕີມແລະແກ້ໄຂລົງໃນບົດຮຽນສະບັບນີ້

### ການປະກາດເຜີຍແຜ່ສາສນາຄຣິສຂອງນິກາຍຄາທໍລິກ (The Catholic Mission)

ເຣື່ອງລາວກ່ອນ ຄ.ສ 1630 ນັ້ນ ຜູ້ຂຽນຍັງບໍ່ສາມາດສືບຄົ້ນໄດ້ວ່າມີເຫດການອັນໃດທີ່ໄດ້ເກີດຂຶ້ນ ແຕ່ຈາກຄວາມພະຍາຍາມຄົ້ນຫາປະຫວັດສາດວ່າ ຄຣິສສາສນາໄດ້ເຂົ້າໄປເຖິງຣາຊອານາຈັກລາວນັ້ນ ທ່ານເຈີໂຣ ແອນເດີສັນ (Gerald H. Anderson) ໄດ້ຂຽນໃນໜັງສືຂອງທ່ານວ່າ ໃນຣາວ ຄ.ສ.1630 ນັ້ນ ໄດ້ມີມິສຊັນນາຣີຄາທໍລິກຜູ້ນຶ່ງເຂົ້າມານະຄອນວຽງຈັນເປັນເວລາ 2-3 ທິດ ແຕ່ວ່າບໍ່ໄດ້ເກີດຜົນອັນໃດ ແລະບໍ່ມີການດຳເນີນວຽກງານຕໍ່ເນື່ອງໄປ ຫລັງຈາກນັ້ນມີອີກຫລາຍກູ່ມເຂົ້າມາສຳລວດກວດກາເບິ່ງແລ້ວກໍຈາກໄປຄືກັນ ໂດຍບໍ່ມີການບາກບັ່ນພະຍາຍາມທີ່ຈະກໍ່ຕັ້ງວຽກການປະກາດປະເສີດໃນປະເທດລາວ ຈົນກະທັ່ງມາໃນຣາວ ຄ.ສ 1642 ໄດ້ມີມິສຊັນນາຣີຈາກຄນະເຢຊູອິດ ມີນາມວ່າ ຈິນ ເດີເລເລັຽ (Jean Deleria) ໄດ້ເດີນທາງຈາກປະເທດຂະເມນມູ່ງສູ່ຣາຊອານາຈັກລາວ ເພື່ອທຳການປະກາດເຜີຍແຜ່ຂ່າວປະເສີດຂອງພຣະເຢຊູຄຣິສ ມິສຊັນນາລີຜູ້ນັ້ນມີຄວາມສາມາດຫລາຍ ແລະໄດ້ຮັບການຮັບຕ້ອນ ລ້ຽງຮັບຮອງຈາກເຈົ້າຊີວິດລາວ ທ່ານຈິນເດີເລເລັຽໄດ້ອາໄສຢູ່ໃນປະເທດລາວເຖິງ 5 ປີ ໄດ້ເຮັດຄູນງາມຄວາມດີຫລາຍປະການ ແຕ່ເປັນທີ່ໜ້າເສັຍດາຍວ່າມີກູ່ມທີ່ອິດສາຢ້ານລົ່ນ ໄດ້ທຳລາຍຊື່ສຽງຂອງທ່ານລົບລ້າງຜົນງານ ທີ່ທ່ານເສັຍສະລະເຫື່ອແຮງອິດສາພະຍາຍາມຊ່ວຍເຫລືອແກ່ປະຊາຊົນລາວ ຜົນສຸດທ້າຍທ່ານຕ້ອງອອກຈາກຣາຊອານາຈັກລາວດ້ວຍຄວາມເສົ້າເສັຍໃຈຫລາຍ ແຕ່ວ່າອົງການຄາທໍລິກບໍ່ໄດ້ເສັຍຄວາມຕັ້ງໃຈ ຍັງໄດ້ພະຍາຍາມນຳເອົາຂ່າວປະເສີດເຂົ້າມາສູ່ຣາຊອານາຈັກລາວຕໍ່ໄປອີກ ໂດຍອາໄສມິສຊັນນາຣີຄາທໍລິກຈາກທາງພາກອີສານຂອງປະເທດໄທຍ ໄດ້ເຂົ້າມາຫລາຍຄັ້ງຫລາຍເທື່ອຕັ້ງແຕ່ ຄ.ສ.1683 ເຖິງ 1866 ອັນເປັນຣະຍະເວລານານຫລາຍກວ່າ 180 ປີ ແຕ່ວ່າບໍ່ມີຜູ້ສົນໃຈຮັບເອົາຂ່າວປະເສີດ ແລະບໍ່ໄດ້ເກີດໝາກຜົນໃຫ້ໄດ້ສົມກັບຄວາມຕັ້ງໃຈ ມາໃນປີ ຄ.ສ.1878 ເປັນປີທຳອິດທີ່ເກີດມີການກໍ່ຕັ້ງອົງການປະກາດຂ່າວປະເສີດຂຶ້ນຢ່າງເປັນທາງການ ຢູ່ທາງພາກຕາວັນອອກສ່ຽງເໜືອຂອງຣາຊອານາຈັກລາວ ໂດຍມີມິສຊັນນາຣີຄາທໍລິກໄດ້ອິດສາພະຍາຍາມທຸກວິຖີທາງ ແຕ່ເຖິງຢ່າງນັ້ນກໍບໍ່ມີຜົນອັນໃດເກີດຂຶ້ນອີກ ບໍ່ພຽງເທົ່ານັ້ນມາໃນປີ ຄ.ສ.1884

ຄູນພໍ່ຂອງຄາທໍລິກ (ນັກບວດຄາທໍລິກ) ໄດ້ຖືກຂ້າຕາຍເຖິງ 12 ຄົນ ແລະຕໍ່ມາອີກ 5 ປີ ຄູນພໍ່ຖືກຂ້າຕາຍອີກ 5 ຄົນ ດັ່ງນັ້ນວຽກງານຕອນທຳອິດນີ້ຈຶ່ງໄດ້ມິດຫາຍໄປໃນທີ່ສຸດ

ຄ.ສ 1940 ອົງການສາສນາຄຣິສນິກາຍຄາທໍລິກໄດ້ຕັ້ງຕົ້ນເປົ້າໝາຍແລະຄວາມພະຍາຍາມໃໝ່ ມີມິສຊັນນາຣີຄາທໍລິກເດີນທາງຈາກບາງກອກ (Bangkok) ແລະຈາກອຸບົລຣາຊທານີທີ່ຢູ່ທາງພາກອີສານຂອງໄທຍໄດ້ຂ້າມທາງຕອນໃຕ້ແມ່ນ້ຳຂອງເຂົ້າໄປເລີ້ມຕົ້ນປະກາດຂ່າວປະເສີດລຽບໄປຕາມແຄມຝັ່ງນ້ຳຂອງ ດຳເນີນໄປຢ່າງຊ້າ ໆ ເຖິງແມ່ນວ່າຈະມີຄວາມຍາກລຳບາກແລະເສັຍຫາຍຫລາຍປະການ ມີສຊັນນາຣີເກີດເຈັບເປັນນຳໂຣຄເມືອງຮ້ອນ ອີກທັງບໍ່ເກີດໝາກຜົນເທົ່າທີ່ຄວນ ແຕ່ພົບວ່າຕາມຫລັກຖານທີ່ໄດ້ບັນທຶກໄວ້ໃນໜັງສືທີ່ມີຊື່ວ່າ (La Mission Catholique Lao) ພົບວ່າໃນປີ ຄ.ສ 1967 ມີລາຍການສະຖິຕິດັ່ງນີ້

| | | | | |
|---|---|---|---|---|
| ສະມາຊິກຄຣິສຈັກຄາທໍລິກໃນຣາຊອານາຈັກລາວ | | ມີຈຳນວນ | 31,978 | ຄົນ |
| ມີຄູນພໍ່ທີ່ເປັນມິສຊັນນາຣີ | | ປະມານ | 100 | ທ່ານ |
| ມີນັກທຸລະການ | | | 9 | ທ່ານ |
| ມີນາງຊີ | ໃນ 3 ໂບດ | ຈຳນວນ | 188 | ຄົນ |
| ທຸກວັນອາທິດຈະມີຄູນພໍ່ເທສນາສັ່ງສອນ ທົ່ວຣາຊອານາຈັກລາວ | | | 80-100 | ທ່ານ |
| ເປີດໂຮງຮຽນ | ລະດັບປະຖົມຕົ້ນ | | 27 | ໂຮງຮຽນ |
| | ລະດັບປະຖົມຕອນກາງ | | 3 | ໂຮງຮຽນ |
| | ມີນາຍຄູສອນຕາມໂຮງຮຽນ | | 255 | ທ່ານ |
| | ມີນັກຮຽນຮວມແລ້ວປະມານສິບພັນກວ່າຄົນ | | | |

ຈະເຫັນໄດ້ວ່າຄວາມອົດສາພະຍາຍາມແລະຄວາມເສັຍສະລະຂອງມິສຊັນນາຣີເຫລົ່ານີ້ ຕ້ອງລົງທູນແລະເຫື່ອແຮງເປັນຈຳນວນຫລາຍແລະເປັນເວລານານກວ່າຈະໄດ້ເຫັນຜົລຕາມສະຖິຕິທີ່ໄດ້ເຫັນມາ ນອກຈາກນີ້ແລ້ວຍັງມີມິສຊັນນາຣີ 4-5 ທ່ານໄດ້ເຮັດວຽກນຳຜູ້ເປັນໂຣຄເຮື້ອນ (Lepers) ຜູ້ເປັນພະຍາດຂີ້ທູດ ພ້ອມກັນມິສຊັນນາຣີອີກຈຳນວນຫລາຍທ່ານ ໄດ້ພະຍາຍາມແນະນຳຊ່ວຍໃຫ້ຊາວພູຫລາຍ ໆ ເຜົ່າ ໃຫ້ເຂົາເຈົ້າໄດ້ຮູ້ຈັກປູກພືດພັນແນວປູກໃໝ່ ໆ ເພື່ອໃຫ້ມີລາຍໄດ້ທົດແທນການປູກຝິ່ນ ໃຫ້ເຂົາເຈົ້າຮູ້ຈັກການຕິດຕໍ່ຄ້າຂາຍແລກປ່ຽນສິນຄ້າກັບລາວລຸ່ມທີ່ຢູ່ໃນເມືອງ

ວຽກງານການປະກາດຂ່າວປະເສີດໄດ້ດຳເນີນຕິດຕໍ່ກັນໄປ ແຕ່ມີບາງຄັ້ງເກີດການຂາດເຂີນຍ້ອນເສິກສົງຄາມແລະການເມືອງ ຢ່າງໃດກໍຕາມໝາກຜົນແຫ່ງຂ່າວປະເສີດກໍເກີດຂຶ້ນ ເຖິງແມ່ນວ່າບໍ່ຫລາຍແຕ່ຄວາມພະຍາຍາມຂອງມິສຊັນນາຣີຄາທໍລິກກໍບໍ່ໄດ້ຢຸດຢັ້ງພໍໜ້ອຍ ຍັງໄດ້ເກີດມີ ຄອນແວນຊັນ (Convents, ກອງປະຊຸມຫລວງ) ອີກ 2 ແຫ່ງ ແລະໄດ້ມີສະຖານລ້ຽງເດັກນ້ອຍກຳພ້າອີກ 2 ແຫ່ງ ທັງມີໂຮງຮຽນສອນພຣະຄັມພີ (Seminary) 2 ໂຮງຮຽນ ເພື່ອຝຶກຝົນອົບຮົມຄຣິສຕຽນລາວ ທີ່ຍອມເສັຍສະລະຖວາຍຕົນອອກໄປເປັນຜູ້ຮັບໃຊ້ພຣະເຈົ້າ ນອກເໜືອຈາກນີ້ຍັງມີມິສຊັນນາຣີຊາວຕ່າງຊາດເດີນທາງໄປສອນຕາມທີ່ຕ່າງ ໆ ໃນຊົນບົດຕາມເຜົ່າພາສາຕ່າງກັນອອກໄປ ຕົວຢ່າງ ຊົນເຜົ່າມົ້ງ ເຜົ່າຂະມຸ ເຜົ່າຢ້າວ ເຜົ່າໄທດຳ ແລະຄົນລາວພື້ນເມືອງໃຫ້ມີຄວາມເຂົ້າໃຈໃນພຣະເຈົ້າຢ່າງແທ້ຈິງ ພ້ອມທີ່ຈະເສັຍສະລະອອກໄປເປັນຜູ້ຮັບໃຊ້ພຣະເຈົ້າກັບຊົນເຜົ່າຂອງຕົນເອງ ຢ່າງໃດກໍຕາມອີງຕາມໜັງສືດັ່ງກ່າວມາແລ້ວຂ້າງເທິງ ໄດ້ບັນທຶກໄວ້ວ່າມີຊາວລາວແທ້ ໆ ແຕ່ພຽງ 10 ທ່ານ ທີ່ໄດ້ຮັບການສະຖາປະນາໃຫ້ເປັນສາສນາຈານ (ຄູນພໍ່ຂອງຄາທໍລິກ)

**ການເຜີຍແຜ່ສາສນາຄຣິສນິກາຍໂປຣເທັສເຕນ** (The Protestant Mission)

ຄ.ສ.1902 ທ່ານ ຈີ.ຄອນເທສ (G. Contesse) ພ້ອມພັລຍາເປັນມິສຊັນນາຣີຈາກຄນະພີ່ນ້ອງ (Brethen) ເດີນທາງຈາກປະເທດສວິສເຊີແລນມາເຖິງຣາຊອານາຈັກລາວ ແລະໄດ້ລ່ອງເຮືອໄປຕາມແມ່ນ້ຳຂອງ ທ່ານໄດ້ກໍ່ຕັ້ງໜ່ວຍງານການປະກາດຂ່າວປະເສີດເປັນບ່ອນທຳອິດທີ່ເມືອງສອງຄອນ (SongKhone) ແຂວງສະວັນນະເຂດ (Savonna Khet) ພ້ອມກັບຄົນລາວພື້ນເມືອງ ທ່ານໄດ້ອອກຢ້ຽມຢາມແລະປະກາດຂ່າວປະເສີດຂຍາຍກວ້າງອອກໄປ ເຖິງເຂດຊົນນະບົດເຖິງເຜົ່າລາວເທິງພ້ອມກັບເຜົ່າອື່ນ ໆ ທີ່ຢູ່ໃກ້ຄຽງ

ໃນປີຕໍ່ມາ ຄ.ສ.1903 ໄດ້ມີມິສຊັນນາຣີໂປຣເທັສເຕນອີກຄອບຄົວນຶ່ງຄື ທ່ານວິລລິສ (Willys) ໄດ້ມາເປັນແຮງໜູນນຳກັນ ທ່ານໄດ້ເປີດສະຖານທີ່ຮັກສາພະຍາບານຄົນເຈັບ ທີ່ເມືອງສອງຄອນ ແຂວງສະວັນນະເຂດ ຕໍ່ມາໃນປີ ຄ.ສ 1905 ໄດ້ມີຄົນລາວຕັດສິນໃຈຮັບເຊື່ອຜູ້ທຳອິດຄື ທ່ານທິດພັນ (Tit Pan) ທ່ານຜູ້ນີ້ໄດ້ຕິດຕາມຮັບໃຊ້ພຣະເຈົ້ານຳກັນກັບມິສຊັນນາຣີ ຫລັງຈາກນັ້ນບໍ່ດົນມີມິສຊັນນາຣີຄອບຄົວທີ່ 3 ກໍໄດ້ມາຊ່ວຍແຮງອີກ

ຄ.ສ.1908 ທ່ານຈີ. ຄອນເທສ ພ້ອມພັລຍາໄດ້ເສັຽຊີວິດດ້ວຍໂຣຄອະຫິວາລະບາດ ເປັນເຫດໃຫ້ມິສຊັນນາລີຄອບຄົວອື່ນ ໆ ພາກັນຍ້າຍໜີຈາກໄປ ເພື່ອໃຫ້ພົ້ນຈາກໂຣຄລະບາດເປັນເວລາຫລາຍເດືອນແລະໄດ້ກັບຄືນມາຕັ້ງຕົ້ນກັນໃໝ່ອີກຈົນເຖິງປີ ຄ.ສ 1920 ໄດ້ເກີດໂຣຄລະບາດຄັ້ງໃຫຍ່ອີກມິສຊັນນາຣີອີກ 2 ທ່ານໄດ້ເສັຽຊີວິດໄປ ເຖິງຢ່າງໃດກໍຕາມພວກມິສຊັນນາຣີກໍບໍ່ໄດ້ທໍ້ຖອຍຫລືໝົດກຳລັງໃຈໄດ້ມີມິສຊັນນາລີຈາກປະເທດສະວິສເຊີແລນເດີນທາງເຂົ້າມາເພີ້ມອີກ ຮວມແລ້ວທັງໝົດປະມານ 10 ທ່ານ ໄດ້ອົດສາພະຍາຍາມຕັ້ງຕົ້ນຮຽນພາສາລາວແລະພາສາຂອງເຜົ່າອື່ນ ໆ ພ້ອມທັງຕ້ອງປັບຕົວກັບຊີວິດການເປັນຢູ່ ອາຫານການກິນ ການດຳລົງຊີວິດປະຈຳວັນໃຫ້ລຶ້ງເຄີຍກັບສິ່ງແວດລ້ອມ ມິມິສຊັນນາຣີຫລາຍທ່ານຕ້ອງຫ່າງໄກຈາກຍາດຕິພີ່ນ້ອງ ພໍ່ແມ່ຄອບຄົວຂອງຕົນ ມາຍັງປະເທດທີ່ຕົນເອງບໍ່ເຄີຍຮູ້ຈັກມາຮັບໃຊ້ເພື່ອເຫັນແກ່ພຣະນາມຂອງພຣະເຢຊູຄຣິສ ແມ່ນວ່າການໄປປະກາດເຜີຍແຜ່ຂ່າວປະເສີດນີ້ຕ້ອງປະສົບກັບຄວາມທຸກຍາກກັນດານຫລາຍ ແລະຕ້ອງໄດ້ຜ່ານຜ່າອຸປະສັກຕ່າງ ໆ ນາ ໆ ປະການກໍຕາມ ມິສຊັນນາຣີທຸກທ່ານຍອມເສັຍສະລະຢ່າງແທ້ຈິງ ມິສຊັນນາຣີຫລາຍທ່ານໄດ້ຕາຍໄປຕໍ່ໜ້າຕໍ່ຕາ ແຕ່ມິສຊັນນາຣີທີ່ເຫລືອຢູ່ກໍບໍ່ໄດ້ທໍ້ຖອຍ ຍັງຄົງຮັກແລະສັດຊື່ຕໍ່ອົງພຣະຜູ້ເປັນເຈົ້າຢູ່ບໍ່ຂາດ ຄວາມພະຍາຍາມເຫລົ່ານີ້ ເຮັດໃຫ້ພຣະຄຣິສທັມຄັມພີພາກພັທະສັນຍາໃໝ່ໄດ້ຖືກແປອອກ ແລະຈັດພິມອອກເປັນພາສາລາວສຳເຣັດໃນປີ ຄ.ສ.1926 ດ້ວຍເຫດນີ້ເອງການປະກາດສາສນາຄຣິສກໍສະດວກຫລາຍກວ່າເກົ່າ ເພາະວ່າມີພຣະຄັມພີເປັນປື້ມໄວ້ສັ່ງສອນອ້າງອີງ

ຄ.ສ.1952 ໄດ້ມີການສະລອງຄົບຮອບ 50 ປີຂອງອົງການປະກາດຈາກປະເທດສວິສເຊີແລນໄດ້ລາຍງານວ່າໄດ້ມີຜູ້ຮັບບັພຕິສະມາຈຳນວນທັງໝົດ 452 ຄົນ ຊຶ່ງໃນຈຳນວນທັງໝົດນີ້ລວມທັງຄົນລາວ ຄົນຈີນ ຄົນວຽດນາມແລະຊົນເຜົ່າຕ່າງ ໆ ຈະເຫັນໄດ້ວ່າຈາກການຮັບໃຊ້ວຽກງານເປັນເວລານານເຖິງ 50 ປີ ມີການລົງທຶນແລະເຫື່ອແຮງຢ່າງຫລວງຫລາຍ ແຕ່ເມື່ອທຽບກັບໝາກຜົນທີ່ໄດ້ນັ້ນນັບວ່າເກີດຜົນແຕ່ພຽງເລັກນ້ອຍ ຕັ້ງແຕ່ ຄ.ສ.1928 ເປັນຕົ້ນມາໄດ້ມີມິສຊັນນາຣີໂປຣເທັສເຕນຈາກນິກາຍຕ່າງ ໆ ເຂົ້າມາຍັງຣາຊອານາຈັກລາວໄດ້ທຳການປະກາດຂ່າວປະເສີດຮ່ວມກັບມິສຊັນນາຣີຊາວສວິສຕົວຢ່າງ ດັ່ງນີ້

ຄນະ ຊີ.ເອມ.ເອ.(C.M.A.: Christian and Mission Alliance) ໄດ້ທຳຂໍ້ຕົກລົງກັບມິສຊັນນາລີຊາວສວິສ ຊຶ່ງໄດ້ເຂົ້າມາຢູ່ໃນຣາຊອານາຈັກລາວກ່ອນຜູ້ອື່ນ ວ່າຄນະຊີເອມເອຈະຂຶ້ນໄປປະກາດຢູ່ທາງພາກເໜືອຂອງຣາຊອານາຈັກລາວ ແຕ່ສ່ວນມິສຊັນນາລີຄົນສວິສຈະປະກາດຂ່າວປະເສີດທາງພາກໃຕ້

ຄ.ສ.1929 ຄນະຊີເອມເອ ໄດ້ຕັ້ງອົງການຢູ່ທີ່ ເມືອງຫລວງພຣະບາງ

ຄ.ສ.1931 ຄນະຊີເອມເອໄດ້ຂຍາຍງານລົງມາເຖິງນະຄອນວຽງຈັນ

ຄ.ສ.1939 ຄນະຊີເອມເອ ໄດ້ຂຍາຍງານໄປເຖິງເມືອງຊຽງຂວາງ

ເຖິງແມ່ນວ່າຄນະຊີເອມເອໄດ້ຂຍາຍງານໄປຫລາຍບ່ອນ ແຕ່ໝາກຜົນຝ່າຍວິນຍານທີ່ເກີດຂຶ້ນຖ້າມກາງຊາວລາວລຸ່ມທີ່ເປັນຊາວພື້ນເມືອງນັ້ນເປັນໄປຢ່າງຊ້າ ໆ ສ່ວນຫລາຍທີ່ເກີດຜົນແມ່ນຊົນເຜົ່າມົ້ງທີ່ຕ້ອນຮັບເອົາຂ່າວປະເສີດ

ສົງຄາມໂລກຄັ້ງທີ່ 2 ໄດ້ເຮັດໃຫ້ ມິສຊັນນາຣີທັງຫລາຍຖືກສົ່ງຄືນປະເທດຂອງຕົນ ຊາວຕ່າງຊາດອື່ນ ໆ ທີ່ເປັນພໍ່ຄ້າກໍຕ້ອງອອກຈາກຣາຊອານາຈັກລາວຄືກັນ ດັ່ງນັ້ນຄຣິສຕຽນລາວຈຳນວນຫລາຍຮ້ອຍຄົນ ຈຶ່ງຖືກປະຖິ້ມໄວ້ໂດຍບໍ່ມີຜູ້ນຳພາຈົນກະທັ່ງຫລັງສົງຄາມໂລກຄັ້ງທີ່ 2 ຄນະຊີເອມເອໄດ້ເຂົ້າມາຈັດຕັ້ງແລະຟື້ນຟູວຽກງານໃໝ່ອີກ ໂດຍຕັ້ງກອງປະກາດຂ່າວປະເສີດທີ່ເມືອງໄຊຍະບູລີ (Sayaboury) ທີ່ບ້ານຫ້ວຍຊາຍ (Ban Houei Sai) ໃນເວລານັ້ນສະພາບການເມືອງນັບວ່າມີຄວາມໝັ້ນຄົງດີ ແຕ່ແທ້ຈິງຄົນລາວເອງໄດ້ເກີດການແຕກແຍກອອກເປັນ 3 ພັກການເມືອງຕ່າງພາກັນຕໍ່ຕ້ານອຳນາດກັນ ເພື່ອຍຶດຄອງຣາຊອານາຈັກລາວ

ຄນະຊີເອມເອ ໄດ້ປະສົບບັນຫາຫລາຍປະການ ແຕ່ກໍໄດ້ອົດສາພະຍາຍາມໃນການຈັດຕັ້ງງານໃຫ້ເປັນຕົ້ນ ເປັນໜ່ວຍ ດັ່ງທີ່ໃນ ຄ.ສ.1967 ສາມາດນັບຈຳນວນໄດ້ດັ່ງນີ້

| | | |
|---|---|---|
| ມີມິສຊັນນາລີ | 29 | ທ່ານ |
| ມີຄຣິສຈັກທາງພາກເໜືອ | 65 | ຄຣິສຈັກ |
| ມີສະມາຊິກທີ່ໄດ້ຮັບບັບພຕິສະມາ | 3,380 | ຄົນ |
| ມີສາສນາຈານແລະຜູ້ປະກາດຊາວທ້ອງຖິ່ນ | 26 | ທ່ານ |

ນອກຈາກຄນະຊີເອມເອແລ້ວຍັງມີຄນະອື່ນ ໆ ອີກຕົວຢ່າງຄນະໂອ.ເອມ.ເອຟ.(O.M.F.= Overseas Mission Fellowship) ມີມິສຊັນນາຣີຫລາຍທ່ານຈາກຄນະນີ້ ໄດ້ເດີນທາງຈາກປະເທດຈີນ ເນື່ອງຈາກວ່າປະເທດຈີນໄດ້ປິດເພາະຄອມມິວນິສເຂົ້າຍຶດຄອງ ເປັນເຫດໃຫ້ມິສຊັນນາຣີໂອເອມເອຟ ຕ້ອງອອກຈາກປະເທດຈີນແລະເຂົ້າມາຍັງຣາຊອານາຈັກລາວຕັ້ງໜ່ວຍງານການປະກາດກັບຊາວຈີນແລະຊາວເຂົາ ທີ່ສາມາດປາກພາສາຈີນໄດ້ ນອກຈາກນີ້ຍັງມີຄນະເຝຣນຣິຟລອມ (French Reformed) ໄດ້ຈັດຕັ້ງໜ່ວຍງານການປະກາດຂ່າວປະເສີດທີ່ນະຄອນວຽງຈັນ ສ່ວນຫລາຍກ່ຽວຂ້ອງກັບຊາວຕ່າງຊາດແລະຜູ້ທີ່ເຂົ້າໃຈໃນພາສາຝຣັ່ງເສດ ຊຶ່ງມີສະມາຊິກແຕ່ພຽງສາມສິບປາຍຄົນເທົ່ານັ້ນ

ສຳຫລັບຄນະແບພຕິສພາກໃຕ້ (Southern Baptist) ຫາໄດ້ເຂົ້າໄປໃນຣາຊອານາຈັກລາວໄດ້ບໍ່ດົນ ແລະເກີດໝາກຜົນແຕ່ພຽງເລັກນ້ອຍ ກໍຕ້ອງອອກຈາກຣາຊອານາຈັກລາວ ພ້ອມ ໆ ກັບຄນະອື່ນ ໆ ຍ້ອນເພາະອຳນາດການປົກຄອງຢູ່ໃນກຳມືຂອງຄອມມິວນິສ ໃນ ຄ.ສ 1975

ຄວາມຕັ້ງໃຈອັນໝັ້ນຄົງຂອງມິສຊັນນາຣີຫລາຍທ່ານ ຈາກຫລາຍຄນະນິກາຍຕ່າງ ໆ ທີ່ໄດ້ນຳ

ເອົາຂ່າວປະເສີດເຜີຍແຜ່ແກ່ພີ່ນ້ອງຊາວລາວນັ້ນ ຖ້າແມ່ນມານັບຈຳນວນຫມາກຜົນທີ່ເກີດຂຶ້ນນັ້ນກໍບໍ່ມີຫລາຍປານໃດ ແຕ່ນ້ຳໃຈຄວາມເສັຍສະລະ ຄວາມຮັກ ຄວາມສັດຊື່ ທີ່ມີໃນອົງພຣະຜູ້ເປັນເຈົ້ານັ້ນມີຢູ່ຫລວງຫລາຍ ມິສຊັນນາຣີທຸກຝ່າຍໄດ້ຮ່ວມມືກັນ ເພື່ອຈະນຳເອົາຄົນທັງຫລາຍເຂົ້າມາຮັບຄວາມພົ້ນໃນອົງພຣະເຢຊູຄຣິສ ແຕ່ກໍຫນ້າເສົ້າໃຈທີ່ທຸກຝ່າຍຕ້ອງອອກຈາກປະເທດລາວໃນປີ ຄ.ສ. 1975 ຍ້ອນການປ່ຽນແປງດ້ານການເມືອງ ຜູ້ຂຽນເຊື່ອວ່າ ຕາມຄວາມຕັ້ງໃຈອັນດີທີ່ມີມາແຕ່ເດີມນັ້ນ ຍັງມີຄວາມຫວັງໃນອານາຄົດທີ່ບໍ່ສິ້ນສຸດເທື່ອ ໂດຍຄວາມຮັກ ຄວາມເຊື່ອ ແລະຄວາມຫວັງທີ່ມີຢູ່ພຣະເຈົ້າຈະຊົງເປີດທາງອານາຄົດ ເພື່ອວ່າພີ່ນ້ອງຊາວລາວທັງປະເທດຈະໄດ້ຮັບຂ່າວປະເສີດອັນແທ້ຈິງນີ້ຢ່າງທົ່ວເຖິງ ແນ່ນອນໂດຍການຊົງນຳຂອງອົງພຣະຜູ້ເປັນເຈົ້າ ອາເມນ

**ບັນຫາແລະອຸປະສັກ**

ບັນຫາແລະສິ່ງຂັດຂວາງຄວາມຈະເລີນກ້າວຫນ້າຂອງການປະກາດຂ່າວປະເສີດໃນຣາຊອານາຈັກລາວນັ້ນ ອາດຈະເວົ້າໄດ້ວ່າບໍ່ແຕກຕ່າງຫຍັງກັບບັນຫາທີ່ເກີດຂຶ້ນໃນປະເທດອື່ນ ໆ ແຖບເອເຊັຍ ເຖິງຢ່າງໃດກໍຕາມ ຈາກການສຶກສາເຖິງບັນຫາເຫລົ່ານັ້ນພໍສະລຸບໄດ້ວ່າ ການປະກາດບໍ່ເກີດຜົນຍ້ອນບັນຫາດັ່ງຕໍ່ໄປນີ້

1. ບັນຫາຊົນຫລາຍເຜົ່າຫລາຍພາສາ ຊົນຫລາຍກຸ່ມໃຊ້ພາສາຕ່າງກັນມີຮີດຄອງປະເພນີແລະຄວາມເຊື່ອຖືແຕກຕ່າງກັນ ຍາກທີ່ຈະດຳເນີນຫລືວາງແຜນງານການປະກາດການຮັບໃຊ້ໃຫ້ສອດຄ້ອງເປັນອັນນຶ່ງອັນດຽວກັນ

2. ບັນຫາຊົນຫລາຍກຸ່ມບໍ່ຮູ້ຈັກອ່ານຫລືຂຽນພາສາລາວ ດັ່ງນັ້ນຈຶ່ງເປັນການຍາກໃນການຂຽນບົດຮຽນ ຫລືແປພຣະຄັມພີໃຫ້ທົ່ວເຖິງກັບຄົນທຸກພາສາ ໃຫ້ຮູ້ຈັກພຣະຄຳຂອງພຣະເຈົ້າ

3. ຊາວລາວລຸ່ມຫລືລາວພື້ນເມືອງ ບໍ່ສົນໃຈນຳສາສນາຄຣິສ ເຮັດໃຫ້ຂາດຜູ້ນຳທ້ອງຖິ່ນ ຜູ້ນຳຄຣິສຕຽນທີ່ເຂົ້າໃຈສາສນາຄຣິສຢ່າງແທ້ຈິງມີຈຳນວນນ້ອຍ ເຮັດໃຫ້ຄຣິສຈັກຂາດກຳລັງປ່າວປະກາດຂ່າວປະເສີດຂອງພຣະເຢຊູຄຣິສ

4. ຕຳຣາ ບົດຮຽນ ຫລືຂໍ້ຂຽນຄຣິສຕຽນທີ່ເປັນພາສາລາບໍ່ມີຫລາຍ ເຮັດໃຫ້ບໍ່ສາມາດສນັບສນຸນຫລືໃຫ້ການອົບຮົມຜູ້ນຳທ້ອງຖິ່ນຢ່າງພຽງພໍ

5. ການວາງແຜນງານປະກາດຕໍ່ຊົນເຜົ່າຕ່າງ ໆ ທີ່ເອີ້ນວ່າລາວເທີງຫລືລາວສູງນັ້ນ ມີຄວາມແຕກຕ່າງຫລາຍກວ່າຊາວລາວລຸ່ມ ການເຜີຍແຜ່ຕໍ່ຊົນເຜົ່າທີ່ອາໄສຕາມເທີງພູນັ້ນ ເປັນແບບປະກາດແລະນຳພາທັງກຸ່ມທັງເຜົ່າຫລືທັງຫມູ່ບ້ານໃຫ້ເຊື່ອ ຊຶ່ງແຕ່ລະບຸກຄົນອາດບໍ່ມີຄວາມເຂົ້າໃຈໃນຂ່າວປະເສີດຢ່າງຊັດແຈ້ງ ສ່ວນການເຜີຍແຜ່ຕໍ່ລາວລຸ່ມນັ້ນເປັນໄປຕາມສ່ວນບຸກຄົນຫລືຄອບຄົວເທົ່ານັ້ນ

6. ສາສນາພຸດແລະສາສນາພາມ ໄດ້ຮັບການຍອມຮັບຢ່າງເປັນທາງການຈາກຣັຖບານ ແລະຈະເລີນເຕີບໃຫຍ່ຢູ່ໃນຣາຊອານາຈັກລາວກວ່າພັນປີ ຍາກທີ່ປະຊາຊົນຈະປະຖິ້ມມາເຊື່ອຖືສາສນາໃຫມ່ທີ່ຍັງບໍ່ທັນຮູ້ຈັກກັນຫລາຍຫລືບໍ່ມີຄວາມເຂົ້າໃຈດີ

7. ອຸປະສັກປະການນຶ່ງຂອງຄຣິສຈັກຄາທໍລິກໃນການເຜີຍແຜ່ຄຣິສສາສນາຄື ການໃຊ້ຊື່ຕຳແຫນ່ງຂອງພຣະຫລືນັກບວດຄາທໍລິກໃນພາສາລາວຕາມສາສນາພຸດ ເຮັດໃຫ້ບໍ່ເຫັນເຖິງຄວາມແຕກຕ່າງແລະຈຸດເດີນຂອງສາສນາຄຣິສ

8. ມີພຣະຄາທໍລິກ (ຄຸນພໍ່) ເປັນຊາວຕ່າງຊາດຫລາຍກວ່ານັກບວດຄາທໍລິທີ່ເປັນຊາວພື້ນເມືອງ

ພວກຄູບພໍ່ເປັນມິສຊັນນາຣີມາຈາກທາງຢູໂຣບ ເປັນເຫດໃຫ້ຊາວບ້ານໄດ້ຊາລືເຣື່ອງທີ່ເປັນຄວາມບໍ່ຈິງ ແລະເຮັດໃຫ້ປະຊາຊົນມີຄວາມຢ້ານກົວ ບໍ່ກ້າເຂົ້າມານັບຖື

9. ຜູ້ກັບໃຈມາເຊື່ອໃນນິກາຍຄາທໍລິກຜູ້ທຳອິດເປັນຊາວວຽດນາມ ຊຶ່ງຄົນລາວບໍ່ມັກ ບໍ່ຢາກຕິດຕາມເປັນລູກສິດ

10. ຄ.ສ. 1940-1945 ໄດ້ເກີດເສິກວຽດນາມເຫນືອ ຕັ້ງແຕ່ນັ້ນມາ ຜູ້ນິຍົມຄອມມິວນິສມີການປະຊຸມລັບທາງການເມືອງ ເຮັດໃຫ້ຄຣິສຕຽນບໍ່ສາມາດອອກປັຽມຢາມ ແລະບໍ່ສາມາດຈັດການປະຊຸມກັນຕາມເຮືອນຂອງຜູ້ເຊື່ອ ຢ້ານວ່າຈະເກີດຄວາມເຂົ້າໃຈຜິດ

ສະຫງວນລິກຂະສິດ Copyright©Thira Siengsukon
In compliance with copyright restrictions, no portion of these materials may be reproduced in any form without written permission of the writer.

ສົ່ງ 3-16-98

# ບົດທີ 20

## ຂ່າວປະເສີດແຫ່ງຄວາມຫວັງ
## ຈາກອາເມຣິກາເຖິງຣາຊອານາຈັກລາວ

**ຄວາມຫວັງຫຍັງແດ່**

ຄວາມຫວັງແຫ່ງຂ່າວປະເສີດຂອງພຣະເຢຊູຄຣິສ ທີ່ຈະນຳເອົາຄວາມຣອດພົ້ນມາສູ່ປະຊາຊົນພີ່ນ້ອງລາວ ຈາກການສຶກສາຄົ້ນຄວ້າປວັດສາສຄຣິສສາສນາທີ່ຜ່ານມານັ້ນ ການປະກາດຂ່າວປະເສີດເຣື່ອງພຣະເຢຊູຄຣິສຕໍ່ພີ່ນ້ອງທີ່ວຣາຊອານາຈັກລາວນັບຕັ້ງແຕ່ສມັຍໂບຮານສືບມາເຖິງປັດຈຸບັນ ພົບວ່າມີຫມາກຜົນຝ່າຍວິນຍານເກີດຂຶ້ນມາແຕ່ພຽງນ້ອຍດຽວ ແມ່ນຄວາມຈິງທີ່ວ່າ ຄຣິສສາສນາບໍ່ໄດ້ເກີດຜົນຫລາຍປານໃດໃນປະເທດອື່ນ ໆ ທາງແຖບເອເຊັຽຄືກັນ ແຕ່ເມື່ອເກີດການສົມທຽບກັນແລ້ວ ຄຣິສສາສນາໃນຣາຊອານາຈັກລາວຍັງຢູ່ລຸນຫລັງກວ່າຫມູ່ໃນທຸກ ໆ ດ້ານ ແລະເກີດຜົນຊ້າກວ່າປະເທດອື່ນ ໆ ທີ່ຢູ່ອ້ອມແອ້ມເຂດອາຊີອາຄະເນ (Southeast Asia) ຄວາມຈິງໃນຂໍ້ນີ້ບໍ່ມີຈຸດປະສົງທີ່ຈະແຕ່ແຜ່ເພື່ອຕິຕຽນຫລືດູຫມິ່ນກັນເອງ ແຕ່ວ່າເມື່ອເຮົາໄດ້ພິຈາຣະນາເຖິງຈຸດອ່ອນຈາກປວັດສາດແລ້ວ ເຮົາກໍສົມຊ່ວຍກັນພັດທະນາໃຫ້ເຂັ້ມແຂງຍິ່ງຂຶ້ນ ເພື່ອອານາຈັກຂອງພຣະເຈົ້າຈະໄດ້ພັດທະນາຖາວອນຍິ່ງຂຶ້ນ

ແຕ່ເດີມມາ ອົງການຄຣິສສາສນາຝ່າຍຄາທໍລິກແລະຝ່າຍໂປຣເທສເຕັນໄດ້ພຍາຍາມຫລາຍແນວເພື່ອນຳເອົາຄວາມຫວັງແຫ່ງຂ່າວປະເສີດຂອງພຣະເຢຊູຄຣິສເຂົ້າເຖິງພີ່ນ້ອງລາວ ແຕ່ກໍບໍ່ໄດ້ປະສົບຜົນສຳເຣັດຕາມທີ່ສົມຄວນຈະເກີດ ໂດຍສະເພາະຢ່າງຍິ່ງຣັຖບາລປັດຈຸບັນ ຄືສາທາຣະນະຣັຖປະຊາຊົນລາວ ມີນະໂຍບາຍບໍ່ຍອມໃຫ້ມີການເຜີຍແຜ່ຄຣິສສາສນາຢ່າງອິສຣະ ຄືກັນກັບຊາດຄອມມິວນິສອື່ນ ໆ ດັ່ງນີ້ແລ້ວເບິ່ງຄືວ່າ ປະຊາຊົນຄົນລາວມີຄວາມຫວັງບໍ່ຫລາຍປານໃດຕໍ່ການໄດ້ຍິນຂ່າວປະເສີດຂອງພຣະຄຣິສ

**ພຣະເຈົ້າມີແຜນການ ຄວາມຫວັງທີ່ບໍ່ສິ້ນສຸດ**

ມີຜູ້ກ່າວວ່າ ດ້ວຍເຫດທີ່ຄຣິສສາສນາບໍ່ເກີດຜົນໃນຣາຊອານາຈັກລາວມາເປັນເວລາຮ້ອຍ ໆ ປີ ປະຊາຊົນມີຈິດໃຈປົກຫນາມືນຊາຕໍ່ຂ່າວປະເສີດ ດັ່ງນັ້ນພຣະເຈົ້າຊຶ່ງໄດ້ນຳເອົາປະຊາຊົນຄົນລາວເປັນຈຳນວນຫລາຍອອກຈາກຣາຊອານາຈັກລາວ ເພື່ອຫລາຍ ໆ ຄົນຈະໄດ້ຕື່ນຕົວເມື່ອໄດ້ຍິນຂ່າວປະເສີດແລະເກີດກັບໃຈບັງເກີດໃຫມ່ ແລະມີຄວາມຕັ້ງໃຈໃຫມ່ ມີຄວາມຫວັງໃຫມ່ໃນການຟື້ນຟູຄຣິສສາສນາໃນຈິດໃຈຂອງພີ່ນ້ອງຄົນລາວ ເມື່ອເຮົາເບິ່ງດູສພາບການທີ່ເກີດຂຶ້ນ ຈະເຫັນໄດ້ວ່າພີ່ນ້ອງລາວຈຳນວນຮ້ອຍຈຳນວນພັນໄດ້ກັບໃຈບັງເກີດໃຫມ່ ເລີ້ມຕັ້ງແຕ່ໃນສູນອົພຍົບໃນປະເທດໄທຍ ຜູ້ຮັບໃຊ້ຂອງພຣະເຈົ້າໄດ້ຫວ່ານເມັດແຫ່ງພຣະຄຳຂອງພຣະເຈົ້າໄວ້ ແລະເມື່ອມາເຖິງປະເທດທີ່ສາມ ຄື ອາເມຣິກາແລະການາດາ ໂດຍການຊົງນຳຂອງພຣະເຈົ້າ ພ້ອມກັບຄວາມຮັກຂອງພີ່ນ້ອງຄຣິສຕຽນຊາວຕ່າງຊາດ ທີ່ໄດ້

ໃຫ້ການສນັບສນຸນທັງໃນດ້ານເງິນທຸນແລະເຫື່ອແຮງ ກໍ່ໃຫ້ເກີດຫມາກຜົນຈຳນວນຫລວງຫລາຍໃນເວລາພຽງສິບຫລືຊາວປີ ພີ່ນ້ອງຄຣິສຕຽນລາວໃນອາເມຣິກາແລະການາດາບໍ່ໄດ້ຫມົດຫວັງ ເຖິງແມ່ນວ່າອີງຕາມສຖານະການບ້ານເມືອງກົດຫມາຍໃນເມືອງລາວຍັງບໍ່ທັນເປີດກວ້າງ ຍັງບໍ່ອນຸຍາດໃຫ້ມີຊຸຊັ່ນນາຣີ (ສາສນາທູດ) ເຂົ້າໄປທຳການປະກາດຢ່າງເສຣີ ແຕ່ມີຜູ້ນຳຫລາຍທ່ານໄດ້ພຍາຍາມເອົາຂ່າວປະເສີດແຫ່ງພຣະເຢຊູຄຣິສກັບຄືນສູ່ປະເທດລາວອີກ ໂດຍພີ່ນ້ອງຄຣິສຕຽນລາວທີ່ຈະເຣີນເຕີບໃຫຍ່ໃນດ້ານຄວາມເຊື່ອແລະເກີດຫມາກຜົນຝ່າຍວິນຍານໃນຕ່າງແດນ

ຄວາມເປັນໄປໄດ້ໃນອານາຄົດນັ້ນ ບໍ່ມີໃຜສາມາດຮູ້ລ່ວງຫນ້າໄດ້ ນອກຈາກຝາກຄວາມໄຫວ້ວອນໄວ້ກັບອົງພຣະຜູ້ເປັນເຈົ້າ ທີ່ຈະນຳເອົາ **ຂ່າວປະເສີດແຫ່ງຄວາມຫວັງຈາກອາເມຣິກາໄປຮອດນະຄອນວຽງຈັນ** ສິ່ງທີ່ຮູ້ແນ່ນອນຄືວ່າ ພີ່ນ້ອງຄຣິສຕຽນລາວໃນອາເມຣິກາໄດ້ພຍາຍາມຢ່າງຍິ່ງທີ່ຈະຕຽມຕົວຮັບການຝຶກແອບໄວ້ໃຫ້ພ້ອມ ຄືກັບທະຫານຂອງພຣະຄຣິສ ຜູ້ນຳຄຣິສຕຽນຫລາຍຝ່າຍຕ່າງສະແວງຫານ້ຳພຣະທັຍຂອງພຣະເຈົ້າ ແລະການຊົງນຳພາຂອງພຣະອົງ ມອງຫາຊ່ອງທາງໃນອານາຄົດເພື່ອຈະນຳເອົາຄວາມຫວັງແຫ່ງຂ່າວປະເສີດກັບເມືອປະເທດລາວ ໂດຍພີ່ນ້ອງຄຣິສຕຽນລາວທີ່ຢູ່ໃນອາເມຣິກາ ເພື່ອປະຊາຊົນລາວຈະໄດ້ມາເຖິງຄວາມຣອດພົ້ນ

**ຄຣິສຈັກລາວທີ່ເກີດຂຶ້ນໃນອເມຣິກາ**

ຕັ້ງແຕ່ປີ ຄ.ສ. 1975 ເມືອງວຽດນາມເຫນືອໄດ້ເຂົ້າບຸກຍຶດວຽດນາມໃຕ້ຮວມໄປເຖິງປະເທດກັມພູຊາ ແລະຣາຊອານາຈັກລາວ ປະຊາຊົນຈຳນວນລ້ານ ໆ ຈາກແຫລມອິນໂດຈີນ (Indo Chinese) ຈຳເປັນຕ້ອງຫລົບຫນີອອກຈາກປະເທດບ້ານເກີດເມືອງນອນຂອງຕົນ ເພື່ອຫນີຈາກການຂົ່ມເຫັງແລະພັຍການເມືອງ ເພື່ອສະແວງຫາເສຣີພາບອັນເປັນສິ່ງທີ່ມະນຸດທຸກຄົນຕ້ອງການ ພີ່ນ້ອງປະຊາຊົນລາວຄືກັນ ໄດ້ຫລົບຫນີຂ້າມແມ່ນ້ຳຂອງຂຶ້ນຝັ່ງໄທຍເຂົ້າໄປໃນສູນອົພຍົບທີ່ທາງສະຫະປະຊາຊາດ (United Nations) ໄດ້ຈັດຕຽມໄວ້ ປະຊາຊົນທັງລາວແລະຊາວກັມພູຊາຮວມໄປເຖິງວຽດນາມຕ່າງມີຄວາມຫວັງແລະໂອກາດທີ່ຈະໄດ້ເດີນທາງອອກຈາກສູນອົພຍົບ ເພື່ອໄປຕັ້ງຖິ່ນຖານໃຫມ່ໃນປະເທດທີ່ສາມຄື ຝຣັ່ງເສດ ອອສເຕຣລັຽ ຄານາດາ ອາເມຣິກາ ແລະປະເທດອື່ນ ໆ ອີກຫລາຍປະເທດທີ່ໄດ້ຍື່ນມືເຂົ້າມາຊ່ວຍເຫລືອຊາວອົພຍົພອິນໂດຈີນ

ເມື່ອພີ່ນ້ອງລາວມາຕົກໃນປະເທດທີ່ສາມໂດຍສະເພາະທີ່ເຮົາຈະກ່າວເຖິງໃນອເມຣິການັ້ນ ຄຣິສຈັກແລະອົງການຄຣິສຕຽນຫລາຍຄນະຫລາຍນິກາຍໄດ້ຍື່ນມືໃຫ້ຄວາມຊ່ວຍເຫລືອຢ່າງວ່ອງໄວ ຣັຖບານອເມຣິກາໄດ້ໃຫ້ເງິນຕັ້ງຖິ່ນຖານແກ່ທຸກຄອບຄົວ ອົງການຄຣິສຈັກຄາທໍລິກແລະໂປເທັສເຕັນໄດ້ໃຫ້ການຊ່ວຍເຫລືອທາງດ້ານອາຫານ ການຢູ່ການກິນ ຊ່ວຍຊອກຫາງານໃຫ້ ແຕ່ສິ່ງສຳຄັນທີ່ສຸດແມ່ນ ຄວາມຮັກຂອງພຣະເຈົ້າທີ່ມາຈາກຊາວຕ່າງຊາດຕ່າງພາສານຳມາມອບໃຫ້ແກ່ພີ່ນ້ອງປະຊາຊົນລາວຊຶ່ງເປັນຜູ້ອົພຍົພໃນເວລານັ້ນ ພີ່ນ້ອງຄຣິສຕຽນຊຶ່ງເປັນຊາວອເມຣິກາຫລາຍ ໆ ທ່ານ ໄດ້ເປັນຜູ້ອຸປຖັມອຸ້ມຊູ (Sponsor) ເອົາຄອບຄົວຂອງຄົນລາວເຂົ້າມາໃນຄຣິສຈັກ ຈັດສຖານທີ່ໃຫ້ໄດ້ນມັສການພຣະເຈົ້າແລະໃຫ້ຄວາມຊ່ວຍເຫລືອທຸກແບບ ເກື້ອກູນສົ່ງເສີມເພື່ອໃຫ້ພີ່ນ້ອງອິນໂດຈີນໄດ້ຮັບຂ່າວປະເສີດໃນພຣະເຢຊູຄຣິສ

ໃນຕອນປີທຳອິດຄື ຣາວ ຄ.ສ. 1980-1990 ໃນເວລາສິບປີແຣກ ຄຣິສຈັກລາວໄດ້ເກີດຂຶ້ນທົ່ວປະເທດອເມຣິກາຢ່າງວ່ອງໄວ ມີຄົນຈຳນວນພັນ ໆ ໄດ້ເຂົ້າຮັບບັພຕິສມາ ແຕ່ສ່ວນຫລາຍເກີດຂຶ້ນ

ຍ້ອນເຫັນເຖິງບຸນຄຸນ ຫຼືຄວາມຮັກຂອງພີ່ນ້ອງຄຣິສຕຽນຊາວຕ່າງຊາດທີ່ໃຫ້ຄວາມຊ່ວຍເຫລືອ ຫລາຍກວ່າຄວາມເຂົ້າໃຈໃນສາສນາຄຣິສ ແລະບໍ່ມີຄວາມເຂົ້າໃຈໃນເຣື້ອງການຖິ້ມໃຈເກົ່າເອົາໃຈໃຫມ່ ປະຖິ້ມບາບ ຢ່າງໃດກໍຕາມເຫດການເຫລົ່ານີ້ເກີດຂຶ້ນກົງກັບພຣະທັມລູກາ 8:4-8 ເຣື້ອງຜູ້ຫວ່ານເມັດພືດ ພືດໄດ້ງອກເກີດຈາກເມັດທີ່ຫວ່ານລົງໄປຢ່າງໄວ ແລະມີຈຳນວນຫລາຍ ແຕ່ວ່າເມັດພືຊທີ່ຈະຫຍັ່ງຮາກເລິກ ແລະຈະເຣີນເຕີບໃຫຽ່ຈົນເປັນຕົ້ນນັ້ນມີຈຳນວນນ້ອຍ ໃນຈຳນວນທີ່ເກີດເປັນຕົ້ນແລ້ວກໍຍັງມີສ່ວນນຶ່ງທີ່ບໍ່ເກີດຫມາກຜົນອີກ ແຕ່ຄວາມຫວັງຂອງພຣະເຈົ້າບໍ່ໄດ້ສູນສິ້ນ ໃນປວັດສາສຂອງຄຣິສສາສນານັ້ນເຮົາພົບຢູ່ສເມີວ່າ ເຖິງແມ່ນວ່າຜູ້ທີ່ເກີດຫມາກຜົນຝ່າຍຈິດວິນຍານແທ້ຈິງຈະມີຈຳນວນນ້ອຍ ແຕ່ວ່າພຣະເຈົ້າສາມາດໃຊ້ຜູ້ເຊື່ອຈຳນວນນ້ອຍທີ່ຍອມເສັຽສລະ ແລະສັດຊື່ຕໍ່ພຣະອົງໃຫ້ເກີດຜົນຫລາຍໃນອານາຄົດໄດ້ ຊຶ່ງເປັນຄວາມຫວັງອັນສູງສຸດຂອງຜູ້ນຳຄຣິສຕຽນລາວຫລາຍທ່ານ ທີ່ທຸ່ມເທເວລາກຳລັງເຫື່ອແຮງ ແລະເງິນຄຳຂອງຕົວອອກຮັບໃຊ້ພຣະເຈົ້າໃນປັດຈຸບັນ ແລະໃນອານາຄົດເພື່ອໃຫ້ຂ່າວປະເສີດຂອງພຣະເຢຊູຄຣິສກັບຄືນສູ່ພີ່ນ້ອງຂອງຕົນໃນປະເທດລາວ

## ປວັດສາດຂອງລາວຊາວເທີນບັບຕິສສັມພັນ

(Lao Southern Baptist Fellowship; LSBF)

ໂດຍ **ທ່ານ ດຣ. ບຸນຈັນ ວົງສຸຣິທຣ໌**

**ຄຳນຳ**

ການເປັນມາຂອງ "ລາວຊາວເທີນບັບຕິສສັມພັນ" ມີຄວາມຫຍຸ້ງຍາກສັບສົນສົມຄວນ ເພາະເປັນການເລີ້ມດ້ວຍການເພິ່ງຄົນອື່ນເປັນຜູ້ອຸປຖັມໃຫ້ຄວາມແນະນຳ ແລະອື່ນ ໆ ດັ່ງນັ້ນ ມັນຈຶ່ງເປັນຂອງທັມມະດາ ເວລາກໍ່ບ້ານສ້າງເຮືອນໃຫມ່ ຈະປັດຈາກບັນຫາເຫລົ່ານັ້ນກໍເປັນໄປໄດ້ຍາກ ເມື່ອເຂົ້າມາຕັ້ງຖິ່ນຖານໃນປະເທດໃຫມ່ ພວກເຮົາຂາດຄວາມຮູ້ ຊັບສິນ ແລະແຮງງານ ຄວາມຈະເຣີນກ້າວຫນ້າຍ່ອມຄືບໄປຢ່າງຊ້າ ໆ

ນີ້ເປັນຄັ້ງແຮກທີ່ ພວກເຮົາໄດ້ພາກັນຫວນຄືນຄິດເຖິງຄວາມສຳຄັນຂອງຊີວິດຊາວລາວ ຄຣິສຕຽນອົພຍົພ ແລະປະວັດສາດຂອງຄຣິສຈັກລາວໃນຕ່າງປະເທດ ຍ້ອນການເປັນຫ່ວງເຖິງອາດີດແລະອານາຄົດຂ້າພະເຈົ້າຈຶ່ງໄດ້ໃຊ້ເວລາຈົດມຮັ້ນປະວັດອັນສຳຄັນນີ້ໄວ້ ເພື່ອເຕືອນສະຕິວ່າເຮົາມາຈາກໃສ ແລະເຮົາແມ່ນໃຜ ເພື່ອຄົນຮຸ່ນຫລັງຈະໄດ້ສຶກສາຮ່ຳຮຽນເກັບເອົາໄປໃຊ້ ແລະເພື່ອປັບປຸງແກ້ໄຂໃຫ້ດີຂຶ້ນ ຫລີລີກເວັ້ນຈາກການກະທຳຄວາມຜິດຊ້ຳເກົ່າ

ປະວັດອັນສັ້ນ ໆ ນີ້ ໄດ້ຖືກຂຽນຂຶ້ນດ້ວຍຄວາມຊົງຈຳ ສອບຖາມກັບບາງຄົນຜູ້ມີຄວາມຮູ້ໃນເຣື້ອງນີ້ດີ ແລະອ້າງເຖິງເອກກະສານບາງຢ່າງທີ່ຂ້າພະເຈົ້າໄດ້ເກັບກຳໄດ້ ໃນເມື່ອເປັນດັ່ງນີ້ ຄວາມຜິດພາດຄົງຫລີກເວັ້ນບໍ່ໄດ້ ຫວັງວ່າທ່ານຜູ້ອ່ານຜູ້ມີຄວາມຮູ້ດີຈະໃຫ້ຄວາມອະພັຍ ແລະສົ່ງຄວາມຕິຊົມໄປໃຫ້ຂ້າພະເຈົ້າ ເພື່ອປະກອບສ່ວນໃຫ້ປະວັດສາດຖືກຕ້ອງຄົບບໍຣິບູນ ແລະເປັນມາດຕະຖານດີ ພ້ອມກັນນີ້ ໃຫ້ພວກເຮົາອົດສາເອົາໄປໃຊ້ສຶກສາແລະປັບປຸງແກ້ໄຂໃນອານາຄົດ

**ຜູ້ອຸປະຖຳ**

ລາວຊາວເຕີນບັບຕິສສຳພັນ ໄດ້ເກີດຂຶ້ນດ້ວຍການສະໜັບສະໜູນຈາກພະແນກ Language Devision of Home Mission Board, SBC ເປັນເວລາຫລາຍປີ ອົງການ Home Mission Board ເປັນອົງການທີ່ຮັບຜິດຊອບການປະກາດພາຍໃນປະເທດຢູ່ສະຫະຣັດອາເມຣິກາແລະການາດາ ເລີ້ມຕົ້ນປີ ຄ.ສ. 1975 ຄົນລາວໄດ້ພາກັນອົບພະຍົບຈາກບ້ານເກີດເມືອງນອນໄປຢູ່ປະເທດໄທຍ ຫລາຍຄົນກໍໄດ້ມາຕັ້ງຖິ່ນຖານໃນປະເທດທີ່ສາມ ຄືຝຣັ່ງເສດ ໂອສຕາລີ ຍີ່ປຸ່ນ ເຢັຽລະມັນ ສະຫະຣັດອາເມຣິກາ ແລະປະເທດອື່ນ ໆ ໃນເມື່ອພວກສາສນາທູດຊາວຕ່າງດ້າວ ບໍ່ສາມາດທີ່ຈະກັບໄປປະກາດໃນປະເທດລາວ ເພາະປະຕູໄດ້ອັດດ້ວຍການຢຶດອຳນາດຂອງພວກຄອມມິວນິສ ໃນເມື່ອມີການຈັບກຸມພວກຂ້າຣາຊການເຈົ້ານາຍ ນັກປຣາດ ອາຈານ ພ້ອມດ້ວຍເຈົ້າແຜ່ນດິນໄປສຳມະນາລົງໂທດ ໃນເມື່ອຄົນຂາດສິດທີ່ຈຳເປັນເຊັ່ນ ການປາກເວົ້າ ເດີນທາງໄປມາ ຄ້າຂາຍແລະອື່ນ ໆ ແລ້ວ ຄົນທີ່ມີໂອກາດໂດຍສະເພາະຜູ້ຢູ່ໃກ້ຊາຍແດນໄທຍນັບເປັນແສນ ໆ ຄົນໄດ້ພາກັນຍອມຈາກບ້ານເກີດເມືອງນອນກາຍເປັນອົບພະຍົບມາຢູ່ສູນ ໃນທີ່ສຸດກໍມີໂອກາດມາຕັ້ງຊີວິດໃໝ່ໃນປະເທດສະຫາຣັດອະເມຣິກາ ທາງອົງການຮັບຜິດຊອບປະກາດພາຍໃນປະເທດຂອງຄນະບັບຕິສກໍໄດ້ສົນໃຈໃນການປະກາດຂ່າວປະເສີດຂອງອົງພຣະເຢຊູຄຣິສໃຫ້ຄົນລາວແລະມົ້ງ ຜູ້ມາຕັ້ງຊີວິດໃໝ່ໃນປະເທດສະຫະຣັດອາເມຣິການີ້ ຈຶ່ງໄດ້ໃຫ້ມີການຈັດຕັ້ງກອງປະຊຸມຄຣິສຕຽນຂຶ້ນ

**ທີ່ປຶກສາຄົນລາວ**

ໃນເມື່ອປະຕູຂອງການປະກາດໄດ້ເກີດຕໍ່ໜ້າຕໍ່ຕາພວກຄຣິສຕຽນ ທີ່ມີຊື່ເອີ້ນວ່າ **"ບັບຕິສໃຕ້"** (Southern Baptist) ເຂົາເຈົ້າກໍພະຍາຍາມຊອກຫາຫົນທາງປະກາດຕໍ່ຄົນລາວເຮົາ ເຂົາເຈົ້າໄດ້ເຂົ້າໃຈດີວ່າ ການປະກາດຈະໄດ້ຜົນດີທີ່ສຸດນັ້ນຕ້ອງເປັນຄົນທີ່ຮູ້ຈັກປະເພນີ ເຄົາຣົບທຳນຽມ ແລະຮູ້ພາສາຂອງຄົນທີ່ເຂົາເຈົ້າຈະປະກາດຕໍ່ນັ້ນ ໃນທີ່ສຸດພຣະເຈົ້າກໍໄດ້ປະທານໃຫ້ເຂົາເຈົ້າຮູ້ຈັກ ອາຈານລາວຄົນນຶ່ງ ຜູ້ມີການສຶກສາດີ ມີປະສົບການໃນການຮັບໃຊ້ພຣະເຈົ້າມາແຕ່ປະເທດລາວ ແລະປະເທດສະຫະຣັດອາເມຣິກາ ຄົນນັ້ນກໍແມ່ນສາສນາຈານ ໂຢຊ່ວຍ ວ່າງ ທີ່ເຄີຍເປັນສິດຍາພິບາລປະຈຳຄຣິສຈັກລາວ ຢູ່ເມືອງ Louisville, Kentucky ແລະຄຣິສຈັກລາວ-ມົ້ງຢູ່ເມືອງ Desmois, Iowa ເປັນເວລາຫລາຍປີໃນເວລານັ້ນ

ໃນປີ ຄ.ສ. 1979 Dr. Osca Romo ຜູ້ເປັນຫົວໜ້າພະແນກພາສາຕ່າງ ໆ ຂອງອົງການ Home Mission Board, SBC ໄດ້ເຊີນເອົາ ອາຈານໂຢຊວຍ ວ່າງຜູ້ມີຄຸນນະວຸດທິ ແລະປະສົບການດີໃນທຸກດ້ານໄປຮ່ວມໜ້າທີ່ການ ຖານະເປັນຜູ້ປຶກສາ ຕິດຕໍ່ຮ່ວມປະສານງານລະຫວ່າງຄຣິສຈັກລາວ-ມົ້ງ ແລະອົງການ Home Mission Board ເຫັນໄດ້ວ່າຄຣິສຈັກລາວແລະມົ້ງກໍໄດ້ແຜ່ຂະຍາຍຕົວເປັນຈຳນວນຫລາຍ ເຖິງ 120 ຄຣິສຈັກດ້ວຍກັນ ຈາກການນຳພາຂອງທ່ານອາຈານໂຢຊ່ວຍ ວ່າງ **ຖ້າຈະປຽບທັບສມັຍກ່ອນແລ້ວ ເຫັນວ່າຄຣິສຈັກລາວໃນປະເທດສະຫາຣັດອາເມຣິກາມີຫລາຍກວ່າຄຣິສຈັກ** ໃນປະເທດລາວ ກ່ອນປີ ຄ.ສ.1975

ອາຈານໂຢຊວຍ ວ່າງ ກໍໄດ້ເອົາໃຈໃສ່ໃນການນຳພາລໍ່ລ້ຽງຄຣິສຈັກລາວ-ມົ້ງຢ່າງໜ້າສັຣເສີນທຸກ ໆ ປີ ເພິ່ນກໍໄດ້ນຳເອົາຄຣິສຕຽນທົ່ວທຸກແຫ່ງພາຍໃນປະເທດແລະການາດາ ມາເຕົ້າໂຮມກັນຝຶກຝົນ

ຕົນເອງໃຫ້ເປັນຜູ້ຮັບໃຊ້ທີ່ດີຂອງອົງພຣະຜູ້ເປັນເຈົ້າຂອງພວກເຮົາ ເພິ່ນໄດ້ໃຊ້ໂຮງຮຽນມະຫາວິທະຍາລັຍບັບຕິສທີ່ຣັດ Missouri ເປັນບ່ອນປະຊຸມເປັນເວລາຫລາຍປີ ອາຈານໂຢຊວຍ ວ່າງ ໄດ້ໃຫ້ຄວາມແນະນຳແກ່ຄຣິສຈັກລາວ-ມົ້ງ ຕັ້ງແຕ່ເລີ້ມຕົ້ນຈົນເຖິງປັດຈຸບັນ ບໍ່ພຽງແຕ່ເທົ່ານັ້ນ ຄອບຄົວຂອງອາຈານໂຢຊວຍໂດຍສະເພາະແລ້ວ ແມ່ນພັນຣຍາຂອງເພິ່ນເປັນຄູ່ສະນັບສະນູນທ່ານອາຈານເປັນປະຈຳໃນການຈັດກອງປະຊຸມສຶກສາຜູ້ນຳແຕ່ລະປີຈົນເຖິງເວລາມີການປຣັບແປງສະຖານະການໃນການນຳພາ

ທ່ານອາຈານ ໂຢຊວຍ ວ່າງເປັນຜູ້ນຳທີ່ດີ ມີຄວາມຊຳນານໃນການນຳພາ ໃນຣະຍະທີ່ເພິ່ນເປັນຜູ້ຮັບຜິດຊອບ ເພິ່ນໄດ້ຊັກຊວນເອົາ ຜູ້ນຳໜຸ່ມນ້ອຍ ມີຄຸນນະວຸດທິຈາກຫລາຍ ໆ ຄຣິສຈັກ ມາເປັນຜູ້ຊ່ວຍທັງຄົນລາວ-ໄທຍ ແລະຄົນອະເມຣິກັນເຂົ້າຮ່ວມໃນການວາງແຜນ ອອກຄວາມຄິດເຫັນ ເພື່ອຊ່ວຍໃຫ້ກອງປະຊຸມໄດ້ຜົນດີຂຶ້ນ ແຕ່ຫົວທີເຫັນວ່າມີການຮ່ວມໄມ້ຮ່ວມມືດີສົມຄວນ ຕໍ່ມາພລັງຂອງການຕິດຕໍ່ຮ່ວມມືນັ້ນຊ້າລົງ ຊ້ຳບໍ່ພໍທາງອົງການຂອງ Home Mission Board ຜູ້ເປັນທີ່ເພິ່ງຕັ້ງແຕ່ເລີ້ມຕົ້ນກໍໄດ້ມີການປະຕິຮູບ ໃນເມື່ອມີປະທານ HMB, SBC ຄົນໃໝ່ເຂົ້າມາຮັບໜ້າທີ່ການ ມີຕຳແໜ່ງຫລາຍບ່ອນກໍໄດ້ສັບຊ້ອນ ຖືກດັດແປງແລະຊັບສິນທີ່ເຂົາເຄີຍສົ່ງເສີມ ລຊບສ ນັ້ນກໍຂາດໄປ ເພາະຍັງມີຫລາຍ ໆ ຊາດທີ່ເຂົາເຈົ້າຈະຕ້ອງຊ່ວຍທາງດ້ານຊັບສິນ

**ກຳເນີດຂອງລາວບັພຕິສສັມພັນ** (Lao Southern Baptist Fellowship)

ມີຜູ້ນຳຫລາຍ ໆ ທ່ານຜູ້ມີຄວາມຮັກເປັນຫ່ວງເປັນໄຍນຳອານາຄົດຂອງຄຣິສຈັກລາວ-ມົ້ງທົ່ວທັງປະເທດ ໄດ້ປຶກສາຊອກທາງທີ່ຈະຮັກສາສິ່ງເສີມສິ່ງທີ່ບັນພະບູຣຸດທີ່ອາຈານໂຢຊວຍ ວາງໄດ້ສ້າງໄວ້ແລ້ວໃຫ້ຈະເຣີນມີອາຍຸສືບຕໍ່ໄປ ຫລາຍທ່ານໄດ້ອອກຄວາມຄິດເຫັນວ່າ ຈຳເປັນຕ້ອງຈັດຕັ້ງໃຫ້ມີອັນໃດອັນນຶ່ງເກີດຂຶ້ນ ຊຶ່ງຄົນລາວເຮົາຮັບຜິດຊອບທາງດ້ານປົກຄອງແລະຊັບສິນ ແຕ່ຍັງຮ່ວມງານຢ່າງໃກ້ຊິດກັບຜູ້ອຸປັຖັມອົງການນີ້ ຕ້ອງເລືອກເອົາປະທານແລະຄນະບໍຣິຫານ ເພື່ອຈະໄດ້ຮັບຜິດຊອບໃນເຣື່ອງນີ້ ເພື່ອຊ່ວຍແບ່ງເບົາພາລະອັນເຫລືອກຳລັງທີ່ອາຈານໂຢຊວຍ ວາງຮັບຜິດຊອບ ພາລະດັ່ງກ່າວນີ້ເປັນວຽກທີ່ອາສາສະມັກໂດຍບໍ່ໄດ້ຮັບຄ່າຈ້າງເງິນເດືອນແຕ່ຢ່າງໃດເລີຍ ໃນທີ່ສຸດ ລຊບສ ກໍໄດ້ເກີດຂຶ້ນເປັນຄວາມຈິງຕາມຄວາມນຳພາຂອງພຣະເຈົ້າ ແລະຜູ້ນຳຫລາຍຄົນພາຍໃນອົງການ ລຊບສ ບໍ່ແມ່ນທຸກຄົນເຫັນດີສນັບສໜູນໃຫ້ມີ ລຊບສ ເກີດຂຶ້ນ ເພາະຫລາຍຄົນກໍຢ້ານຂັດແຍ່ງກັບຄວາມຄິດເຫັນຂອງຜູ້ນຳອາວຸດໂສແລະອົງການທີ່ໃຫ້ຄວາມອູ້ມຊູມາແລ້ວ

ຫລັງຈາກ ລຊບສ ໄດ້ເກີດຂຶ້ນແລ້ວ ທາງອົງການ Home Mission Board ກໍຍັງໄດ້ໃຫ້ຄວາມສະນັບສະໜູນ ແລະຮ່ວມມືເພື່ອໃຫ້ອົງການທີ່ຫາກໍ່ຕັ້ງຂຶ້ນໃໝ່ນັ້ນ ກ້າວໜ້າໄປຕາມພຣະປະສົງຂອງພຣະເຈົ້າ ຜູ້ນຳຄຣິສຈັກຜູ້ເປັນສະມາຊິກກໍໄດ້ພ້ອມກັນເລືອກປະທານຄົນທຳອິດເປັນຜູ້ນຳພາປະກອບສ່ວນໂດຍການນຳພາຂອງອົງພຣະວິນຍານບໍຣິສຸດ ໜ້າທີ່ປະທານນັ້ນໄດ້ຕົກຖືກ ອາຈານອິນຕາ ຈັນທະວົງສຸກ ຜູ້ເປັນສິດຍາພິບານປະຈຳຄຣິສຈັກລາວທີ່ຣັຖຄາລີຟໍເນັຽ ທ່ານເປັນປະທານຄົນທຳອິດຂອງ ລຊບສໃນກອງປະຊູມຫລວງທີ່ໂຮງຮຽນມະຫາວິທະຍາລັຍບັພຕິສ ໃນປີ ຄ.ສ. 1988 ທີ່ຣັຖ Missouri ໃນສມັຍຂອງທ່ານ ອາຈານໂຢຊວຍ ວ່າງ ທ່ານໄດ້ຈັດກອງປະຊຸມຜູ້ນຳຢູ່ໂຮງຮຽນມະຫາວິທະຍາລັຍບັພຕິສນີ້ເປັນເວລາຫລາຍ ໆ ປີຕິດຕໍ່ກັນ ຖ້າຈະເວົ້າແລ້ວສະຖາບັນແຫ່ງນັ້ນເປັນບ່ອນໃຫ້ກຳເນີດຂອງລຊບສ ໃນເມື່ອທ່ານ ອາຈານອິນຕາ ຈັນທະວົງສຸກ ໄດ້ຮັບໜ້າທີ່ແລ້ວ ທ່ານບໍ່ໄດ້ລັ່ງເລໃຈໃນການປະຕິບັດຮັບໃຊ້ ທ່ານກໍໄດ້ປະກອບເອົາຄນະກັມມະການບໍຣິຫານອີກຫລາຍທ່ານ ເພື່ອໃຫ້ການຮ່ວມ

ງານອີງການໃຫມ່ນີ້ໄດ້ຖືກອຸ້ມຊູຈາກຄຣິສຈັກລາວຫລາຍ ໆ ບ່ອນໂດຍສິ່ງປັດໃຈຊັບສິນໄປຊ່ວຍ ແຕ່ລະເດືອນຕາມຄວາມສາມາດ ເພື່ອວຽກງານຂອງພຣະເຈົ້າ ຍ້ອນຄວາມອຸ້ມຊູຈາກຄຣິສຈັກຕ່າງ ໆ ລຊບສຈຶ່ງມີຊີວິດຢູ່ໄດ້ມາເຖິງປັດຈຸບັນນີ້

**ຄນະກັມມະການຊຸດທີ່ນຶ່ງ** (ເລືອກ ປີ ຄ.ສ. 1988)

| | |
|---|---|
| ປະທານ | ອາຈານ ອິນຕາ ຈັນທະວົງສຸກ |
| ຮອງປະທານ | ອາຈານ ບຸນຈັນ ວົງສຸຣິທຣ໌ |
| ເລຂາ | 1. ອາຈານ ອຸດອນ ທິຣະກູລ |
| | 2. ອາຈານ ທອງຄູນ ອິນທະພົມ |
| ນາຍຄັງ | ອາຈານ ພູວົງ ຜາງນີວົງ |
| ນາຍຄັງຊ່ວຍ | ອາຈານ ບຸນເຮືອງ ພົງພາພັນ |
| ວາງແຜນ | ອາຈານ ສັນຕິ ຮຸ່ງປັນຍາຊັຍ |
| ພະແນກສຶກສາ | ອາຈານ ທິຣະ ສຽງສຸຄົນທ໌ |
| ພະແນກຊາວຫນຸ່ມ | ອາຈານ ທຸມພັນ ວົງສຸຣິທຣ໌ |
| ພະແນກສັຕຣີ/ລ້ຽງທະບຽນ | ຍານາງ ບົວສີ ມໍຣະດີ |
| ພະແນກວາຣະສານ | ອາຈານ ເຊື່ອມ ສີສີງຄາມ |
| ພະແນກຫາຣາຍໄດ້ | ອາຈານ ບຸນໂຮມ ພົມມະຈັນ |
| ພະແນກໃຫ້ຄວາມແນະນຳ | ອາຈານ ທອງຄູນ ອິນທະພົມ |
| ຜູ້ຊ່ວຍ | ອາຈານ ກິຄຳ ແກ້ວພົມສະຫວ່າງ |
| ທີ່ປຶກສາ | ອາຈານ ໂຢຊວຍ ວ່າງ |

<u>**ຫມາຍເຫດ**</u> ນ້ຳເບີ 1 ແມ່ນຄົນຮັບຫນ້າທີ່ກ່ອນ ນ້ຳເບີ 2 ເປັນຄົນຮັບຫນ້າທີ່ແທນເມື່ອມີການລາອອກ

**ກອງປະຊຸມຄັ້ງແຮກຂອງລາວບັພຕິສສັມພັນ**

ໃນເມື່ອຫນ້າທີ່ຮັບຜິດຊອບຕົກມາເປັນຂອງພວກເຮົາຊາວລາວຄຣິສຕຽນ ປະທານແລະຄນະບໍຣິຫານກໍບໍ່ໄດ້ລັ່ງເລໃຈໃຫ້ເສັຽເວລາ ພວກເພິ່ນກໍໄດ້ລົງມືເຮັດວຽກທີ່ມອບໃຫ້ໂລດ ພວກເພິ່ນເອົາໃຈໃສ່ວາງແຜນຊອກຫາວິທີທາງ ເພື່ອຈະໃຫ້ພາຣະທີ່ໄດ້ຮັບນັ້ນກ້າວຫນ້າເປັນທີ່ພຣະເຈົ້າຊົງພໍພຣະທັຍ ບັນຫາໃຫຍ່ທີ່ສຸດທີ່ຄນະກັມມະການໄດ້ປະເຊີນນັ້ນກໍແມ່ນທາງດ້ານຊັບສິນທີ່ຈະເອົາມາໃຊ້ໃນການແລນວຽກ ແຕ່ຢ່າງໃດກໍຕາມພວກເພິ່ນບໍ່ໄດ້ທໍ້ຖອຍໃຈ ໃນທີ່ສຸດສະມາຊິກຈາກຫລາຍ ໆ ຄຣິສຈັກແລະທາງອົງການ Home Mission Board ກໍໄດ້ສິ່ງຊັບສິນທີ່ຕ້ອງການນັ້ນໄປສົມທົບເປັນຕົ້ນທຸນໃນການກໍ່ຕັ້ງແລະບໍຣິຫານ

ໃນປີ ຄ.ສ.1989 ຄນະກັມມະການໄດ້ເຫັນດີໃຫ້ຈັດກອງປະຊຸມ ຮອບປະຖົມມະເລີກຂຶ້ນ ທີ່ຣັຖໂອກລາໂຮມາ ຊຶ່ງພວກເຮົາໄດ້ເລືອກເອົາຕາມຄວາມສາມາດແລະຊັພທີ່ມີ ດັ່ງນັ້ນກອງປະຊຸມຄັ້ງແຮກຈຶ່ງເກີດຂຶ້ນທີ່ສູນປະຊຸມຂອງພວກອິນເດັຽແດງ ມີຄົນຫລາຍ ໆ ຄົນຈາກຫລາຍຣັຖເຂົ້າສ່ວມປະຊຸມໃນຄັ້ງນັ້ນ ເຖິງແມ່ນມີຫລາຍຄົນທີ່ຫລົງທາງເພາະສະຖານທີ່ດັ່ງກ່າວເປັນບ່ອນຊອກຫລີກ ແລະໄກຈາກໃນເມືອງ ແຕ່ເປັນບ່ອນເຮັດໃຫ້ພວກເຮົາທີ່ເປັນຊາວອົພຍົພຄິດເຖິງເບື້ອງຫລັງຫລາຍ ເພາະບ່ອນດັ່ງກ່າວຄ້າຍ ໆ

ຄືສູນອົພຍົພມີບ່ອນອາບນ້ຳ ຫ້ອງຖ່າຍ ຢູ່ຂ້າງນອກ ເຖິງຈະມີສຽງຈົ່ມຈາກສະມາຊິກບາງຄົນກໍຕາມ ວ່າສະຖານທີ່ບໍ່ເປັນທີ່ເຫມາະສົມ ແຕ່ພຣະເຈົ້າກໍໄດ້ອວຍພຣະພອນໃຫ້ຄົນທີ່ໄປຮ່ວມໃນຄັ້ງນັ້ນຫລາຍທາງ ດ້ານຈິດວິນຍານແລະຮ່າງກາຍ ທຳໃຫ້ ລຊບສ ກໍ່ຮ້າງສ້າງໂຕມາໄດ້ ເພາະຫລັງຈາກກອງປະຊຸມປີນັ້ນ ພວກເຮົາມີຊັພສິນເຫລືອຢູ່ຄັງພໍສົມຄວນຫລັງຈາກຈ່າຍຄ່າໃຊ້ຈ່າຍທຸກຢ່າງແລ້ວ ຕໍ່ນັ້ນມາ ລຊບສ ກໍຕັ້ງໂຕໄດ້ສາມາດຈັດກອງປະຊຸມໃນທີ່ເຫມາະສົມຕາມຄວາມຕ້ອງການຂອງສະມາຊິກໃນປີຕໍ່ໄປ

ໃນປີ ຄ.ສ. 1990 ຄນະກັມມະການມີໂອກາດໄດ້ແກ້ໂຕ ໂດຍຈັດກອງປະຊຸມຢູ່ບ່ອນສະດວກສະບາຍ ທຸກຄົນເຫັນວ່າໂຮງຮຽນເປັນບ່ອນເຫມາະສົມທີ່ສຸດ ດັ່ງນັ້ນຄນະກັມມະການຈຶ່ງປຶກສາຕົກລົງກັນໃຫ້ ອາຈານໂຢຊວຍ ວ່າງໄປຕິດຕໍ່ກັບມະຫາວິທະຍາລັຍຕ່າງ ໆ ຕາມຣັຖໃກ້ຄຽງໃນພາກກາງຂອງປະເທດ ສະຫະຣັດ ທີ່ສຸດກໍເຫັນວ່າ ໂຮງຮຽນມະຫາວິທະຍາລັຍ Ouachita Baptist University ທີ່ຣັດອາຄັນຊໍໄດ້ເຂົ້າລຳດັບ ສະຖາບັນບ່ອນນີ້ເປັນບ່ອນສວຍງາມແລະເຫມາະສົມແທ້ ໆ ເພາະມີຫ້ອງຮຽນ ບ່ອນນອນ ຫ້ອງກິນເຂົ້າ ຕາມຄວາມປາຖນາ ສະດວກ ສບາຍ ບໍ່ມີໃຜຕໍ່ວ່າແຕ່ຢ່າງໃດ

ໃນປີ ຄ.ສ. 1991 ກອງປະຊຸມກໍໄດ້ຫວນຄືນມາຈັດຂຶ້ນອີກໃນຣັຖໂອກລາໂຮມາ ຣັຖນີ້ເປັນຣັຖສູນລ້ຽງຕໍ່ ລຊບສ ເຫດຜົນທີ່ກັບຄືນມາຈັດກອງປະຊຸມຫລວງທີ່ຣັຖໂອກລາໂຮມາ ເພາະມັນໃກ້ສຳລັບການເດີນທາງຂອງສະມາຊິກຜູ້ເຂົ້າຮ່ວມເພາະສະມາຊິກສ່ວນຫລາຍອາສັຍຢູ່ຣັຖໃກ້ຄຽງ ແລະສະຖາບັນແຫ່ງນັ້ນກໍເປັນໂຮງຮຽນ ມະຫາວິທຍາລັຍ ຍັງມີຊື່ອີກວ່າ Okalahoma University ທີ່ເມືອງ Shawnee ປີ ຄ.ສ. 1991 ກໍເປັນປີແຫ່ງການເລືອກຕັ້ງເອົາຄນະກັມມະການບໍຣິຫານຊູດໃຫມ່ອີງຕາມກົດລະບຽບພາຍໃນ ດັ່ງນັ້ນ ການເລືອກຕັ້ງກໍໄດ້ມີຂຶ້ນຕາມຄວາມຄິດຫມາຍຊຶ່ງມີຜົນສະລູບດັ່ງຕໍ່ໄປນີ້

| | |
|---|---|
| ປະທານ | ອາຈານ ບຸນຈັນ ວົງສຸຣິທຣ໌ |
| ຮອງປະທານ | ອາຈານ ອິນຕາ ຈັນທະວົງສຸກ |
| ເລຂາ | 1. ອາຈານ ທອງຄູນ ອິນທະພົມ |
| | 2. ອາຈານ ໄພສານ ສົມສິດ |
| ນາຍຄັງ | 1. ອາຈານ ພູວົງ ຜາງນິວົງ |
| | 2. ຍານາງ ສຸພິດ ອິນທະພົມ |
| ຜູ້ຊວຍນາຍຄັງ | ອາຈານ ບຸນເຮັ້ງ ພົງພາພັນ |
| ພະແນກສຶກສາ | 1. ອາຈານ ທີຣະ ສຽງສຸຄົນທ໌ |
| | 2. ອາຈານ ບົວໂຮມ ແກ້ວເມືອງຄູນ |
| ພະແນກຄົນຫນຸ່ມ | ອາຈານຫູມພັນ ວົງສຸຣິທຣ໌ |
| ພະແນກສັຕຣີ/ລົງທະບຽນ | ຍານາງ ບົວສີ ແສງມະນີ |
| ພະແນກຫາລາຍໄດ້ | 1. ອາຈານ ພູວົງ ຜາງນິວົງ |
| | 2. ອາຈານ ບຸນໂຮມ ວົງພຣະຈັນ |
| ພະແນກບູຣຸດ | ອາຈານ ວັທນະ ສິນບັນດິດ |
| ພະແນກປ່າວປະກາດ | 1. ອາຈານພູວົງ ຜາງນິວົງ |
| | 2. ອາຈານ ສິດນີ ຄານ |
| ພະແນກປະຊາສັມພັນ | ອາຈານ ນ້ອຍ ຝານິວົງ |
| ຜູ້ຊ່ວຍ | ອາຈານ ເຊື່ອມ ສີສົງຄາມ |

ທີ່ປຶກສາ ອາຈານ ໂຢຊວຍ ວາງ

ອາຈານ ເດວິດ ວໍເຣັນ

**ໝາຍເຫດ** ບາງພະແນກໄດ້ຖືກຕັດອອກ ແລະແບ່ງເອົາໜ້າທີ່ແລະພາລະນັ້ນໃຫ້ເປັນວຽກຂອງ ຄນະກັມມະການທຸກຄົນ

ຣັຖໂອກລາໂຮມາໄດ້ກາຍເປັນສູນກາງເພື່ອຈັດກອງປະຊຸມຫລວງ ເລີ້ມຈາກປີ ຄ.ສ. 1991-1994 ທຸກ ໆ ປີມີຄົນເຂົ້າຮ່ວມຈາກຣັຖຕ່າງ ໆ ຢ່າງຫລວງຫລາຍທັງລາວແລະຄົນຕ່າງຊາດລະຫວ່າງ 200-250 ຄົນ ຈຸດປະສົງທີ່ຈັດກອງປະຊຸມຫລວງກໍບໍ່ເປັນພຽງຫາເວລາໃຫ້ຜູ້ນຳ ແລະສະມາຊິກມີໂອກາດພົບປະສາມັກຄີທຳມກັນເທົ່ານັ້ນ ແຕ່ຍັງຈັດໃຫ້ມີຫ້ອງຮຽນ ສຳມະນາ ສຳລັບຄົນທຸກ ໆ ປະເພດ ທັງນ້ອຍໜຸ່ມ ເຖົ້າແກ່ ເຖິງ ສິດຍາພິບາລ ອາຈານ ຊຶ່ງສອນໂດຍອາຈານຄົນລາວເຮົາແລະແຂກຕ່າງປະເທດທີ່ຖືກເຊີນ ທຸກ ໆ ຄັ້ງຍັງມີການຟື້ນຟູຈິດໃຈໂດຍນັກເທສທີ່ດີ ແລະສຽງເພງຈາກຄນະຄົນໜຸ່ມຈາກຫລາຍຄຣິສຈັກ ເຫັນວ່າທຸກ ໆ ຄັ້ງກໍໄດ້ຜົນດີຫລາຍແລະເປັນທີ່ນິຍົມຊົມຊອບຖ້າມກາງພີ່ນ້ອງຊາວລາວແລະຜູ້ເຂົ້າຮ່ວມ

ລາຍໄດ້ທີ່ເກັບໄດ້ຈາກກອງປະຊຸມກໍເຫັນວ່າເຫລືອລາຍຈ່າຍ ສິ່ງເຫລົ່ານີ້ເຫັນວ່າເປັນພຣະພອນຈາກອົງພຣະຜູ້ເປັນເຈົ້າຢ່າງແທ້ຈິງ ເວລາທວນຄິດຄືນຫລັງຫລາຍຄົນຄິດວ່າ ອົງການ ລຊບສ ຄົງຈະລົ້ມເລີກໄປຫລັງຈາກຂາດການສະນັບສະໜູນຈາກ Home Mission Board ແຕ່ເຫັນວ່າກົງກັນຂ້າມນີ້ເປັນຄັ້ງແຮກໃນປະຫວັດສາດ ທີ່ພວກເຮົາຊາວລາວອົພຍົພສາມາດປົກຄອງ ດຳເນີນວຽກງານທີ່ພຣະເຈົ້າໄດ້ມອບໃຫ້ດ້ວຍໃຊ້ຊັບສິນຂອງຕົນເອງ ແນ່ນອນຖ້າປາສຈາກຄວາມຮ່ວມໄມ້ຮ່ວມມືຂອງຜູ້ນຳສິດຍາພິບາລ ອາຈານ ພ້ອມກັບສລະເຮື່ອແຮງແລະຊັພສິນແລ້ວ ອົງການ ລຊບສ ຄົງເວົ້າກລົ້ມໄປນານແລ້ວ ພຣະເຈົ້າໄດ້ຊາບເຖິງຄວາມຕ້ອງການຂອງພວກເຮົາ ພຣະອົງບໍ່ພຽງອວຍພອນໃຫ້ມີຊັພສິນເທົ່ານັ້ນ ພຣະອົງຍັງປະທານໃຫ້ມີຜູ້ນຳທີ່ດີ ຮັກພຣະອົງແລະຍັງໄດ້ຮັບການສຶກສາຈາກໂຮງຮຽນພຣະຄັມພີຢ່າງເປັນທາງການ ແລະກໍຍັງມີຫລາຍຄົນກຳລັງສຶກສາຝຶກຝົນຕົນເອງເພື່ອຕຽມໂຕຮັບໃຊ້ໃນວຽກງານອັນສຳຄັນນີ້

**ບັນຫາ**

ໃນເມື່ອມີຫລາຍຄົນຫລາຍຄວາມນຶກຄິດເຮັດວຽກຮ່ວມກັນ ຄວາມຂັດແຍ່ງມັນກໍເກີດຂຶ້ນເປັນຂອງທັມມະດາເຊັ່ນດຽວກັນ ອົງການ ລຊບສ ທີ່ຫາໄດ້ຕັ້ງຂຶ້ນໃໝ່ກໍໄດ້ພົບກັບບັນຫາຫລາຍສົມຄວນເຖິງປານນັ້ນ ຄນະກັມມະການກໍບໍ່ໄດ້ຍອມແພ້ປ່ອຍໃຫ້ບັນຫາເປັນສິ່ງຖ່ວງດຶງຄວາມກ້າວໜ້າໄດ້ເລີຍ ໃນທີ່ສຸດພຣະເຈົ້າໄດ້ປ່ຽນບັນຫາເຫລົ່ານັ້ນມາເປັນພຣະພອນໂດຍຢ່າງໜ້າສັຣເສີນ ໃນເມື່ອມີຄົນນຶ່ງລາອອກຈາກໜ້າທີ່ໂດຍເຫດຜົນຕ່າງ ໆ ພຣະເຈົ້າກໍຫາຄົນທີ່ມີຄວາມສາມາດມາແທນເຮັດວຽກຢ່າງໜ້າອັສຈັນ

ຈຸດປະສົງສ່ວນໃຫຍ່ຂອງ ອົງການ ລຊບສ ເກີດຂຶ້ນມາເພື່ອຈະທ້ອນໂຮມເອົາຜູ້ນຳທີ່ສັງກັດຢູ່ເຄືອບັພຕິສ ພາກໃຕ້ເປັນອັນນຶ່ງອັນດຽວກັນ ຝຶກຊ້ອມ ສຶກສາ ຮ່ວມໄມ້ຮ່ວມມື ເພື່ອໃຫ້ເປັນຜູ້ຮັບໃຊ້ຂອງພຣະເຈົ້າ ໃຫ້ດີຂຶ້ນໃນຄຣິສຈັກທ້ອງຖິ່ນແລະບ່ອນອື່ນ ໆ ແຕ່ຄວາມຫວັງອັນດີນີ້ກໍຍັງບໍ່ມີຜົຈິງເປັນເຫດໃຫ້ພີ່ນ້ອງຜູ້ນຳທີ່ຢູ່ຫ່າງໄກບໍ່ສາມາດເຂົ້າຮ່ວມປະຊຸມໄດ້ ເຂົາເຈົ້າຈຶ່ງຈັດຕັ້ງກອງປະຊຸມອີກບ່ອນນຶ່ງ ຊຶ່ງຈຸດປະສົງຄືຂອງ ລຊບສ ແຕ່ເປັນເອກກະສານ ນີ້ເຫັນວ່າເປັນບັນຫາ ເພາະທັງສອງກໍຢາກເປັນຕົວແທນຂອງຄົນລາວ ໃນເມື່ອມີອົງການຂອງຄນະບັບຕິສ ເຊັ່ນ Home Mission Board,

SBC ແລະອົງການອື່ນ ໆ ທີ່ຕ້ອງການພວກເຮົາເຂົ້າຮ່ວມປະຊຸມ ແຕ່ເຫັນວ່າອົງການອື່ນ ໆ ໄດ້ຕິດຕໍ່ຫາ ລຊບສ ເພາະເຂົາເຈົ້າຖືວ່າພວກເຮົາເປັນອົງການເກີດຂຶ້ນກ່ອນ ອີກອັນນຶ່ງມັນກໍເປັນການດີທີ່ມີການແຕກຫນໍ່ອອກແນວ ເພາະທໍາໃຫ້ອົງການແລະສາຂາຂອງບັພຕິສລາວພາຍໃນປະເທດໄດ້ແຜ່ກວ້າງອອກໄປຕໍ່ສາຍຕາພີ່ນ້ອງ ຄຣິສຕຽນ ແລະພີ່ນ້ອງຊາວລາວຜູ້ຍັງບໍ່ມີໂອກາດໄດ້ຮູ້ຈັກພຣະເຈົ້າຂອງພວກເຮົາ

**ຂໍໃຫ້ພຣະເຈົ້າອວຍພອນທ່ານຜູ້ອ່ານເທີນ**

# ສະຫະພັນຄຣິສຈັກລາວ

(Lao Conference of Churches; LCC)

[ຂໍ້ມູລຮຽບຮຽງຈາກ History of Lao Christian from Lao to America, 1991 by John C. Kounthapanya]

ປີ ຄ.ສ.1981 ທີ່ເມືອງຮັດສັນ ຣັຖມິຊິແກນ (Hudson, Michigan) ຜູ້ນໍາຄຣິສຕຽນຈາກຫລາຍຄຣິສຈັກຫລາຍຄນະນິກາຍໄດ້ເຕົ້າຮວມກັນເພື່ອພິຈາຣະນາເຖິງການຂຍາຍຕົວຂອງຄຣິສຈັກ ແລະ ປັນຫາຕ່າງ ໆ ທີ່ຄຣິສຈັກລາວໃນອເມຣິກາກໍາລັງຜະເຊີນຢູ່ ໄດ້ພົບວ່າຄຣິສຈັກລາວທັງສາມກຸ່ມຄື ພີ່ນ້ອງລາວລຸ່ມ (Lao Low-Lander) ພີ່ນ້ອງລາວສູງ (Lao-Hmong High-Lander) ພີ່ນ້ອງລາວເທິງ (Lao-Kamu or Mid-Lander) ທັງສາມກຸ່ມໄດ້ມີການຈັດຕັ້ງຄຣິສຈັກຂອງຕົນເອງ ແລະ ນມັສການພຣະເຈົ້າໃນພາສາທີ່ຕົນຖນັດ ຊຶ່ງຕ່າງຝ່າຍຕ່າງເຮັດວຽກງານຂອງພຣະເຈົ້າ ເປັນການຍາກທີ່ທັງສາມກຸ່ມຈະເຂົ້າມາຮວມຕົວເພື່ອສົ່ງເສີມແລະສາມັກຄີທັມຮ່ວມກັນ ແຕ່ລະກຸ່ມໄດ້ພົບກັບປັນຫາແລະອຸປສັກຄືກັນ ການເກີດຫມາກຜົນທາງຝ່າຍວິນຍານນ້ອຍລົງໄປທຸກມື້ ການຕໍ່ຕ້ານຈາກຜູ້ທີ່ບໍ່ເຊື່ອມີຫລາຍຂຶ້ນ ດັ່ງນັ້ນເມື່ອເບິ່ງດູອານາຄົດ ຈະເຫັນວ່າຄຣິສຈັກລາວໃນອເມຣິກາແລະຄານາດາກໍາລັງປະສົບກັບປັນຫາຄວາມທໍ້ຖອຍ ຜູ້ນໍາຄຣິສຕຽນຫລາຍທ່ານໄດ້ຕື່ນຕົວ ແລະມອງເຫັນວ່າສົມຄວນທີ່ຄຣິສຈັກຕ່າງ ໆ ທີ່ອເມຣິກາຄານາດາບໍ່ວ່າຈະເປັນຄນະຫລືນິກາຍໃດ ຮວມຕົວເຂົ້າດ້ວຍກັນເພື່ອຮ່ວມມືສາມັກຄີທັມກັນແກ້ປັນຫາ ແລະສນັບສນຸນອຸ້ມຊູໃຫ້ຄຣິສຈັກລາວໃນອເມຣິກາສາມາດຍືນຫຍັດປະກາດຂ່າວປະເສີດຂອງພຣະເຢຊູຄຣິສດ້ວຍຄວາມເຂັ້ມແຂງໂດຍການຊົງນໍາຂອງພຣະວິນຍານບໍຣິສຸດ

ດັ່ງນັ້ນໃນປີຕໍ່ມາ ຄື ເດືອນ 7 ວັນທີ່ 30 ປີ ຄ.ສ. 1982 ການປະຊຸມຫລວງຂອງສະຫະພັນຄຣິສຈັກລາວຈຶ່ງໄດ້ເກີດຂຶ້ນ ໂດຍມີຜູ້ແທນຈາກຄຣິສຈັກຈໍານວນ 28 ທ່ານຈາກ 13 ຄນະນິກາຍໄດ້ຕົກລົງເຫັນພ້ອມເຖິງປັນຫາຄວາມຕ້ອງການແລະຄວາມຈໍາເປັນທີ່ຕ້ອງສົ່ງເສີມກັນແລະກັນພາຍໃຕ້ພຣະເຈົ້າອົງດຽວກັນ ຄວາມເຊື່ອດຽວກັນ ແລະບັພຕິສມາອັນດຽວກັນ ຕ່າງເຫັນພ້ອມວ່າ "ດັ່ງນັ້ນຄວາມເຊື່ອເກີດຂຶ້ນໄດ້ກໍເພາະການໄດ້ຍິນ ແລະການໄດ້ຍິນເກີດຂຶ້ນໄດ້ກໍເພາະການປະກາດເຣື່ອງພຣະຄຣິສ" (ຣມ 10:17) ແລະສົມຄວນທີ່ພີ່ນ້ອງລາວຈະໄດ້ຮັບຟັງຂ່າວປະເສີດ ແລະນມັສການພຣະເຈົ້າໃນພາສາທີ່ຕົວເຂົ້າໃຈໄດ້ ດັ່ງນັ້ນ ສະຫະພັນຄຣິສຈັກລາວ (LCC) ຈຶ່ງເກີດຂຶ້ນເພື່ອເປັນອົງການທີ່ສນັບສນຸນວຽກ

ງານການຮັບໃຊ້ພຣະເຈົ້າໃຫ້ເກີດຜົນໃນສຫະຣັຖອເມຣິກາແລະຄານາດາ ແລະໃນອານາຄົດເຖິງພີ່ນ້ອງ
ໃນປະເທດລາວ

ການປະຊຸມປະຈໍາປີ ສລຸບໄດ້ດັ່ງນີ້

ຄັ້ງທີ່ 1 ເຈົ້າພາບໄດ້ແກ່ Lao Baptist Church ແລະ Greenleaf Ave. Baptist Church, Whittier, California, July 24-30, 1982

ຄັ້ງທີ່ 2 ເຈົ້າພາບໄດ້ແກ່ Laotian Church of Christ ແລະ Eben-ezer Memnonite Church, Clearbrook, B.C., Canada, July 24-30, 1983

ຄັ້ງທີ່ 3 ເຈົ້າພາບໄດ້ແກ່ Lao Christian Fellowship ແລະ United Mennoite Church, St. Catharines, Ontario, Canada, July 24-29, 1984

ຄັ້ງທີ່ 4 ເຈົ້າພາບໄດ້ແກ່ Lao Alliance Church ແລະ the Christian & Missionary Alliance, Stockton, California

ຄັ້ງທີ່ 5 ເຈົ້າພາບໄດ້ແກ່ Lao Christian Church ແລະ Elmbrook Church, Waukesha, Wisconsin, July 21&26, 1986

ຄັ້ງທີ່ 6 ເຈົ້າພາບໄດ້ແກ່ Slate Hill Mennonite Chruch, Harrisburg, Pennsylvania, July 20-25, 1987

ຄັ້ງທີ່ 7 ເຈົ້າພາບໄດ້ແກ່ Des Moines Mennonite Church, August 1-5, 1988

ຄັ້ງທີ່ 8 ເຈົ້າພາຍໄດ້ແກ່ LCC ແລະ World Vision Inc. Montbellio, California, July 5-8, 1989

ຄັ້ງທີ່ 9 ເຈົ້າພາບໄດ້ແກ່ Lao Community Chruch and Nie Kirk Christian Reformed, Holland, Michigan, July 9-14, 1990

ຄັ້ງທີ່ 10 ສລອງຄົບຮອບສິບປີຂອງ LCC ເຈົ້າພາບໄດ້ແກ່ First Lao Presbyterian ແລະ Presbytery of New Covenant of Houston Texas, July 14-20, 1991 in Livingston, Texas

ໂດຍມີຄນະນິກາຍທີ່ເຂົ້າຮ່ວມດັ່ງນີ້

1. Southern Baptist Convention
2. Christian and Mission Alliance
3. Mennonites
4. American Baptist
5. Independent Baptist
6. Presyterian
7. United Metodist
8. Church of Nazarene
9. Assembly of God

10. Christian Church
11. Christian Reformed
12. Brethen Evangelical
13. Free Evangelical
14. Lutheran & Bible Chapel
15. Slvation Army

## ຄວາມຫວັງພຽງນ້ອຍຣໍຄອຍໃຫ້ສຳເຣັດ

ຄຣິສຈັກລາວໃນອເມຣິກາໄດ້ເກີດຂຶ້ນມານານເກືອບເຂົ້າຊາວປີ ຄວາມຫວັງທີ່ຈະເຫັນການຈະເຣີນເຕີບໃຫຍ່ທັງໃນດ້ານໝາກຜົນຝ່າຍວິນຍານ ແລະການຊູກຍູ້ອຸ້ມຊູດ້ານອຸປກອນການສອນ ປຶ້ມຮຽນ ຂໍ້ຮຽນມີພຽງເລັກນ້ອຍ ເຖິງແມ່ນວ່າຜູ້ນຳໄດ້ລົງທຶນລົງແຮງຫລາຍ ຜົນທີ່ເກີດຍັງມີຈຳນວນນ້ອຍ ເຖິງວ່າມີຄຣິສຈັກເກີດຂຶ້ນໃນຫລາຍເມືອງຫລາຍຣັຖ ແຕ່ວ່າຄຣິສຈັກເຫລົ່ານັ້ນກໍກຳລັງລົດນ້ອຍຖອຍລົງໄປ ບາງບ່ອນກໍສລາຍຫາຍໄປ ບາງບ່ອນກໍຢູ່ກັບທີ່ບໍ່ສາມາດຂຍາຍຕົວໄດ້ ບາງບ່ອນກໍແຕກແຍກເພາະຜູ້ນຳເກີດການເຫັນແກ່ຕົວຍ້ານລື່ນ ບາງບ່ອນກໍເກີດການທໍ້ຖອຍ ເກີດການຕຳໜິຕິວ່າຜິດຖຽງກັນ ເຣັດໃຫ້ຜູ້ນຳຄຣິສຕຽນທີ່ດີຫລາຍ ໆ ທ່ານເກີດຄວາມຊອກຊໍ້າໃຈແລະໝົດກຳລັງ ສິ່ງທີ່ຜູ້ຂຽນໄດ້ບັນທຶກໄວ້ນີ້ກໍເພື່ອເຕືອນໃຈຄຣິສຕຽນທັງຫລາຍໃຫ້ຄິດເບິ່ງຣະວັງໄວ້ ການທີ່ຈະເຣັດໃຫ້ແຕກຫັກເສັຽຫາຍເປັນເຣື່ອງງ່າຍ ແຕ່ການທີ່ຈະເສີມສ້າງກັນນັ້ນກໍປະເສີດເລີດກວ່າຫລາຍ ແມ່ນຫລືບໍ່?

ວຽກງານການຮັບໃຊ້ມີຫລາຍວຽກຫລາຍແນວ ມີຫົນທາງທີ່ຈະສົ່ງເສີມໃຫ້ມັນເກີດຂຶ້ນໄດ້ ຫາກເຮົາຍອມຟັງກັນແລະກັນ ແລະເຫັນໃນສ່ວນດີຂອງຜູ້ອື່ນສເມີ ພຣະມຫາບັນຊາຂອງພຣະເຢຊູກ່າວວ່າ "ເຫດສະນັ້ນພວກທ່ານຈົ່ງໄປ ຈົ່ງເຣັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ສັ່ງສອນເຂົາໃຫ້ຖືຮັກສາສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫລະ ເຮົາຢູ່ກັບທ່ານທັງຫລາຍທຸກ ໆ ວັນຈົນໝົດກັບ" (ມທ 28:19-20) ແທ້ຈິງຄຳສັ່ງຂອອງພຣະເຢຊູ ກຳລັງເລີ້ມຕົ້ນໃນທ້າມກາງພີ່ນ້ອງຄຣິສຕຽນລາວ ມີຫລາຍ ໆ ທ່ານທີ່ກຳລັງອຶດສາພາຍາຍາມອົບຣົມຝຶກຝົນຕົນເອງ ເພື່ອຕຽມຊີວິດຂອງຕົນໃຫ້ພ້ອມໃນການຮັບໃຊ້ພຣະເຈົ້າ ເພື່ອວ່າວັນນຶ່ງໃນອານາຄົດ ເມື່ອພຣະເຈົ້າໄດ້ເອີ້ນແລ້ວ ຄົນເຫລົ່ານີ້ຈະພ້ອມອອກເສິກເພື່ອພຣະຄຣິສ ຊຶ່ງບໍ່ແມ່ນການຖືດາບ ຖືປືນ ແຕ່ຈະຖືເອົາພຣະຄຳຂອງພຣະເຈົ້າເຂົ້າບຸກເບີກຂຍາຍຣາຊອານາຈັກ ແລະແຜ່ນດິນຂອງພຣະເຈົ້າ **ອັນນີ້ເປັນຄວາມຫວັງທີ່ພີ່ນ້ອງຄຣິສຕຽນລາວຄວນມີໄວ້ ອັນເປັນຄວາມຫວັງແຫ່ງຂ່າວປະເສີດຂອງພຣະເຢຊູຄຣິສຈາກອເມຣິກາສູ່ປະເທດລາວ**

**ຂໍພຣະເຈົ້າອວຍພອນທຸກທ່ານທີ່ເສັຽສລະຊີວິດຮັບໃຊ້ໃນພຣະນາມພຣະເຢຊູຄຣິສ**

ນິນພັນ ສຽງສຸລິນທ໌
June 5, 1995